ບົດລາຍງານການພັດທະນາມະນຸດແຫ່ງຊາດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
2022



# ໄວໜຸ່ມເປັນຜູ້ຂັບເຄື່ອນການພັດທະນາ ທີ່ຍືນຍົງ

ເທິງໜ້າປົກຂອງບົດລາຍງານການພັດທະນາມະນຸດແຫ່ງຊາດ (NHDR) ສະບັບທີ 6 ແມ່ນ ນາງ ວິໄລວັນ ແກ້ວອຳພອນ. ວິໄລວັນ ອາຍຸ 20 ປີ, ຈົບການສຶກສາ ສາຂາບັນຊີ ຈາກວິທະຍາໄລເຕັກນິກ-ວິຊາຊີບ ຫຼວງພະບາງ. ປັດຈຸບັນ ວິໄລວັນ ເປັນອາສາສະໝັກສອນເດັກນ້ອຍຢູ່ພາກເໜືອຂອງລາວ ພາຍໃຕ້ໂຄງການ ສຽງແຫ່ງການໃຫ້ຄວາມຫວັງ ຫຼື Keep Helping Each Other. ວຽກງານຂອງ ວິໄລວັນ ແມ່ນກ່ຽວກັບການຊ່ວຍເຫຼືອເດັກຢູ່ເຂດຫ່າງໄກສອກຫຼີກໃນດ້ານການສຶກສາ, ໂດຍຜ່ານການສະໜອງອຸປະກອນການຮຽນ, ເຄື່ອງນຸ່ງຫົ່ມ ແລະ ການຖ່າຍທອດຄວາມຮູ້ໃນຫຼາຍໆຫົວຂໍ້. ນອກຈາກນັ້ນ, ວິໄລວັນ ຍັງເຮັດວຽກເສີມໃຫ້ກັບທຸລະກິດການທ່ອງທ່ຽວຂະໜາດນ້ອຍໃນທ້ອງຖິ່ນ. ໃນອະນາຄົດ, ວິໄລວັນມີຄວາມມຸ່ງໝັ້ນທີ່ຈະເຮັດວຽກກັບອົງການຈັດຕັ້ງດ້ານການພັດທະນາ. ວິໄລວັນ ເປັນຕົວແທນໃຫ້ແກ່ໄວໜຸ່ມເປັນລ້ານຄົນທີ່ພ້ອມຈະຂັບເຄື່ອນການພັດທະນາທີ່ຍືນຍົງໃນ ສປປ ລາວ.

ສະຫງວນລິຂະສິດ Copyright 2022 ໂດຍ:

ກະຊວງແຜນການ ແລະ ການລົງທຶນ
ຖະໜົນ ສຸພານຸວົງ, ບ້ານສີຖານເໜືອ
ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ/ແຟັກ: + 856 21 254 827

ອົງການສະຫະປະຊາດ ເພື່ອການພັດທະນາ
ຖະໜົນລ້ານຊ້າງ
ລະຫັດໄປສະນີ 345 ນະຄອນຫຼວງວຽງຈັນ, ສປປ ລາວ
ອີເມວ: info.la@undp.org
ໂທ: +856 (0) 21 267 777
ແຟັກ: +856 (0) 21 267 799

ຂໍສະຫງວນລິຂະສິດ. ເນື້ອໃນຈາກເອກະສານສະບັບນີ້ບໍ່ວ່າຈະເປັນພາກສ່ວນໃດ ກໍບໍ່ສາມາດນຳໄປຕີພິມຊໍ້າ, ເກັບຮັກສາໄວ້ໃນລະບົບທີ່ສາມາດຮຽກກັບຄືນຂໍ້ມູນໄດ້ ແລະ ຫ້າມສົ່ງຕໍ່ໃນຮູບແບບໃດກໍ່ຕາມ, ບໍ່ວ່າຈະເປັນທາງເອເລັກໂຕຣນິກ, ກົນໄກເຄື່ອງຈັກ, ການເຮັດສຳເນົາ, ການບັນທຶກ ຫຼື ອື່ນໆໂດຍບໍ່ໄດ້ຮັບອະນຸຍາດລ່ວງໜ້າ.

ບົດລາຍງານການພັດທະນາມະນຸດແຫ່ງຊາດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
2022

# ໄວໜຸ່ມເປັນຜູ້ຂັບເຄື່ອນ ການພັດທະນາ ທີ່ຍືນຍົງ

**ບົດລາຍງານການພັດທະນາມະນຸດແຫ່ງຊາດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ 2022**
**ໄວໜຸ່ມເປັນຜູ້ຂັບເຄື່ອນການພັດທະນາທີ່ຍືນຍົງ**
**ທີມງານນັກຄົ້ນຄວ້າ, ຜູ້ຂຽນ ແລະ ຊ່ຽວຊານດ້ານສະຖິຕິ**

**ນັກຂຽນ**
Dr. Catherine Phuong
ທ່ານ ກໍຣະກົດ ຕັນເສຣີ
ທ່ານ ນາງ ມະນີເພັດ ເພັງສະຫວັດດີ
ທ່ານ ນາງ Olga Nilova
ທ່ານ ນາງ Raniya Sobir
Dr. Roshni Menon
ທ່ານ Sean O'Connell
ທ່ານ ປອ. ວິຣິຍະສັກ ສີສຸພັນທອງ

**ບັນນາທິການດ້ານວິຊາການ**
ທ່ານ Gretchen Luchsinger

**ຊ່ຽວຊານດ້ານຂໍ້ມູນ ແລະ ສະຖິຕິ**
Dr. Milorad Kovacevic
ທ່ານ ປອ. ວິຣິຍະສັກ ສີສຸພັນທອງ
ທ່ານ ປອ. ບຸນມີ ອິນທະເກສອນ

**ເກັບກຳຂໍ້ມູນ**
The Method Research
Indochina Research Company

**ຜູ້ປະກອບສ່ວນເພີ່ມເຕີມ**
ທ່ານ Ahmed Elbasyouny
ທ່ານ ນາງ ຈັນທອນ ຄູນທະພັນ
ທ່ານ ນາງ ທິບສະຫວັນ ແສງພະຈັນ
ທ່ານ ສິນທະວີ ມາລາວົງ

**ຜູ້ຊີ້ນຳໂຄງການ**
ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່, ຮອງລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ

**ການນຳພາໂຄງການ ແລະ ການຄຸ້ມຄອງ**
ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່, ຮອງລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ
ທ່ານ ນາງ  Ricarda Rieger, ຜູ້ຕາງໜ້າອົງການ ສະຫະປະຊາຊາດ ເພື່ອການພັດທະນາ
ທ່ານ ປອ. ສິດທິຣິດ ຣາຊະພົນ, ຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ

**ບໍລິຫານ ແລະ ປະສານງານໂຄງການ**
ທ່ານ ບຸນນະພົນ ແສງຄຳຢອງ

**ອົງການສະຫະປະຊາຊາດ ເພື່ອການພັດທະນາ**
ທ່ານ ນາງ  Ricarda Rieger, ຜູ້ຕາງໜ້າອົງການ ສະຫະປະຊາຊາດ ເພື່ອການພັດທະນາ
Dr. Catherine Phuong, ຮອງຜູ້ຕາງໜ້າອົງການ ສະຫະປະຊາຊາດ ເພື່ອການພັດທະນາ
Dr. Bishwa Tiwari (ພະນັກງານບໍານານຊ່ຽວຊານໂຄງການ, ຫ້ອງການພາກພື້ນປະຈຳບາງກອກ)
ທ່ານ ນາງ Devika Iyer (ຊ່ຽວຊານດ້ານນະໂຍບາຍຂັ້ນພາກພື້ນ, ຫ້ອງການພາກພື້ນປະຈຳບາງກອກ)
ທ່ານ Beniam Gebrezghi (ຊ່ຽວຊານດ້ານສັງຄົມພົນລະເຮືອນ ແລະ ໄວໜຸ່ມ, ຫ້ອງການພາກພື້ນປະຈຳບາງກອກ)
ທ່ານ Sean O'Connell (ອະດີດຫົວໜ້າຫ້ອງການປົກຄອງ, ອົງການສະຫະປະຊາຊາດ ເພື່ອການພັດທະນາປະຈຳ ສປປ ລາວ)
ທ່ານ ນາງ Raniya Sobir (ນັກເສດຖະສາດEconomist)
ທ່ານ ນາງ Olga Nilova (ຊ່ຽວຊານດ້ານສິດທິມະນຸດ)
ທ່ານ ນາງ ມະນີເພັດ ເພັງສະຫວັດດີ (ອະດີດຫົວໜ້າດ້ານການສໍາ)
ທ່ານ ກໍຣະກົດ ຕັນເສຣີ (ຫົວໜ້າດ້ານການທົດລອງ)
ທ່ານ Jon Hall- ວິຊາການບົດລາຍງານພັດທະນາມະນຸດແຫ່ງຊາດ HDRO

**ສະຖາບັນຄົ້ນຄວ້າວິໄຈການພັດທະນາ, ກະຊວງແຜນການ ແລະ ການລົງທຶນ**
ທ່ານ ນ. ສີສະຫວັນ ດີດາຣາວົງ, ຮອງຫົວໜ້າສະຖາບັນ
ທ່ານ ປອ. ທະນົງໄຊ ສຸກຄຳທັດ, ຮອງຫົວໜ້າສະຖາບັນ
ທ່ານ ສຸພິດດ ດາຣາຈັນທຣາ, ທີ່ປຶກສາອາວຸໂສ
ທ່ານ ນ. ບຸບຜາວັນ ແກ້ວມີໄຊ, ຫົວໜ້າພະແນກ
ທ່ານ ບຸນນະພົນ ແສງຄຳຢອງ, ຮອງຫົວໜ້າພະແນກ
ທ່ານ ພັດທະນາ ເພັດໄຊສີ, ວິຊາການ
ທ່ານ ສີພອນໄຊ ມະນີວົງ, ວິຊາການ
ທ່ານ ນ. ນິພາລັກ ອຸ່ນອາລົມ, ວິຊາການ
ທ່ານ ຈິດປະສົງ ວັນທອງທິບ, ວິຊາການ
ທ່ານ ສົມເດດ ຂັນຕິວົງ, ວິຊາການ

**ຜູ້ຮັບຜິດຊອບຝ່າຍການຜະລິດ ແລະ ການເຜີຍແຜ່**
ທ່ານ ກໍຣະກົດ ຕັນເສຣີ

**ຜູ້ຮັບຜິດຊອບດ້ານສື່ມວນຊົນ**
ທ່ານ ນາງ ອັກສອນທິບ ສົມວໍຣະຈິດ
ທ່ານ ນາງ ສິນສະຫວັນ ສອນປະເສີດ

**ການອອກແບບ ແລະ ຈັດພິມ**
ທ່ານ ນາງ Johanna Works



# ບົດຂອບໃຈ

ການສ້າງບົດລາຍງານການພັດທະນາມະນຸດແຫ່ງຊາດ ປີ 2022 ສຳລັບ ສປປ ລາວ ແມ່ນຄວາມພະຍາຍາມຮ່ວມກັນຂອງພະນັກງານຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP), ທີ່ປຶກສາຈາກພາຍນອກ ແລະ ຜູ້ຝຶກງານທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າໃນທຸກຂັ້ນຕອນ. ບົດລາຍງານດັ່ງກ່າວນີ້ຍັງເປັນຜົນງານຂອງການຮ່ວມມືຢ່າງກວ້າງຂວາງກັບສະຖາບັນຄົ້ນຄວ້າວິໄຈການພັດທະນາ, ກະຊວງແຜນການ ແລະ ການລົງທຶນ ຂອງລັດຖະບານແຫ່ງ ສປປ ລາວ. ພວກເຮົາຂໍສະແດງຄວາມຂອບໃຈເປັນຢ່າງສູງຕໍ່ຜູ້ທີ່ເຂົ້າຮ່ວມ ແລະ ປະກອບສ່ວນໃນຫຼາຍວິທີທາງຈົນນັບບໍ່ຖ້ວນ, ລວມທັງພະນັກງານຂອງ UNDP ແລະ ສະຖາບັນຄົ້ນຄວ້າວິໄຈການພັດທະນາທຸກຄົນ, ທີ່ໄດ້ປະກອບຄຳຄິດເຫັນ, ແນວຄວາມຄິດ, ຄຳແນະນຳ ແລະ ການສະໜັບສະໜູນຕໍ່ຂະບວນການສ້າງບົດລາຍງານສະບັບນີ້, ລວມທັງທີ່ປຶກສາຈາກພາຍນອກ ແລະ ຜູ້ທີ່ໄດ້ປະກອບສ່ວນອີກຫຼາຍໆທ່ານ, ໂດຍສະເພາະໄວໜຸ່ມ ທີ່ພວກເຮົາໄດ້ປຶກສາຫາລື ແລະ ສົນທະນານຳກ່ຽວກັບບັນຫາສຳຄັນທີ່ສົ່ງຜົນກະທົບຕໍ່ໄວໜຸ່ມໃນ ສປປ ລາວ. ພວກເຮົາຂໍຂອບໃຈເປັນຢ່າງສູງ ຕໍ່ທຸກໆຄົນທີ່ ໄດ້ມີສ່ວນຮ່ວມໃນບົດລາຍງານສະບັບນີ້.

ຂໍຂອບໃຈເປັນພິເສດເຖິງຜູ້ຂຽນ Dr. Catherine Phuong, ທ່ານ ກໍຣະກົດ ຕັນເສຣີ, ທ່ານ ນາງ ມະນີເພັດ ເພັງສະຫວັດດີ, ທ່ານ ນາງ Olga Nilova, ທ່ານ ນາງ Raniya Sobir, Dr. Roshni Menon, ທ່ານ Sean O'Connell ແລະ ທ່ານ ວິຣິຍະສັກ ສີສຸພັນທອງ ແລະ ທີ່ປຶກສາດ້ານວິຊາການ ທ່ານ Jonathan Hall ແລະ Dr. Milorad Kovacevic ຜູ້ທີ່ປະກອບສ່ວນເພີ່ມເຕີມ ປະກອບມີ ທ່ານ  Ahmed Elbasyouny, ທ່ານ ນາງ ຈັນທອນ ຄູນທະພັນ ແລະ ທ່ານ ນາງ ທິບສະຫວັນ ແສງພະຈັນ ແລະ ທ່ານ ສິນທະວີ ມາລາວົງ. ນອກຈາກນັ້ນ, ຍັງມີ ທ່ານ Gretchen Luchsinger, ບັນນາທິການດ້ານວິຊາການ ທີ່ໃຫ້ການສະໜັບສະໜູນທີ່ເປັນປະໂຫຍດ ໃນດ້ານການປັບປຸງ, ສະຫຼູບ ແລະ ສັງລວມບົດລາຍງານເຂົ້າກັນໃຫ້ເປັນສະບັບດຽວ.

ຂໍຂອບໃຈຕໍ່ບັນດາສະມາຊິກຂອງທີມງານ UNDP ປະຈຳ ສປປ ລາວ ແລະ ຫ້ອງການພາກພື້ນປະຈຳນະຄອນບາງກອກ ທີ່ໄດ້ປະກອບສ່ວນເຂົ້າໃນການກຳນົດທິດທາງຍຸດທະສາດໂດຍລວມຂອງບົດລາຍງານ ແລະ ຂໍ້ໂຕ້ແຍ່ງຫຼັກ ພ້ອມທັງເຂົ້າຮ່ວມການສົນທະນາພາຍໃນເພື່ອປະກອບຄຳຄິດເຫັນຕໍ່ກັບຮ່າງບົດລາຍງານເບື້ອງຕົ້ນ ການໃຫ້ຄຳແນະນຳ, ຕິດຕາມ ແລະ ວິເຄາະແມ່ນໄດ້ຮັບການຊ່ວຍເຫຼືອ ຈາກບັນດາສະມາຊິກຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ, ພາຍໃຕ້ການນຳພາຂອງ ທ່ານ ປອ. ສິດທິຣິດ ຣາຊະພົນ, ຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາພວກເຮົາຂໍຂອບໃຈ ຫ້ອງການ ແລະ ພະນັກງານທຸກທ່ານທີ່ໄດ້ຈັດກອງປະຊຸມເຖິງ ຫ້າຄັ້ງ ເພື່ອຂໍຄຳຄິດເຫັນ ແລະ ຄຳຕຳນິຕິຊົມ ຕໍ່ຮ່າງບົດລາຍງານເຊິ່ງບໍ່ແມ່ນພຽງແຕ່ຈາກບັນດາກະຊວງກ່ຽວຂ້ອງຂອງ ລັດຖະບານ (ທັງລະດັບຊາດ ແລະ ທ້ອງຖິ່ນ) ເທົ່ານັ້ນ, ແຕ່ຍັງມາຈາກຜູ້ສະໜັບສະໜູນໄວໜຸ່ມ ເຊັ່ນ ສູນກາງໄວໜຸ່ມລາວ, ສະຫະພັນແມ່ຍິງລາວ ແລະ ອົງການຈັດຕັ້ງທາງສັງຄົມຈຳນວນໜຶ່ງ. ຄຳເຫັນທີ່ໄດ້ ຈາກການສົນທະນາໃນກອງປະຊຸມເຫຼົ່ານີ້ ມີຄຸນຄ່າຢ່າງຫຼວງຫຼາຍຕໍ່ຂະບວນການສຳເລັດຮ່າງສຸດທ້າຍຂອງບົດລາຍງານ.ສຸດທ້າຍນີ້, ຂໍສະແດງຄຳຂອບໃຈຕໍ່ພາກສ່ວນພາຍນອກອົງການ UNDP ທີ່ໄດ້ສະຫຼະເວລາເພື່ອປະກອບ ຄຳຄິດຄຳເຫັນໃສ່ຮ່າງບົດລາຍງານ ຫຼື ໄດ້ແລກປ່ຽນທັດສະນະລະຫວ່າງການສຳພາດ ແລະ ສົນທະນາກ່ຽວກັບບັນຫາສຳຄັນທີ່ມີຜົນກະທົບຕໍ່ໄວໜຸ່ມໃນ ສປປ ລາວ. ຫຼາຍຄົນໃນນີ້ເປັນໄວໜຸ່ມ ຫຼື ຜູ້ຊ່ຽວຊານ ໃນສາຂາຕ່າງໆທີ່ໄດ້ເຮັດວຽກຢ່າງບໍ່ອິດເມື່ອຍໃນການປັບປຸງຊີວິດ ແລະ ຊີວິດການເປັນຢູ່ຂອງໄວໜຸ່ມ.

ພວກເຮົາຂໍຂອບໃຈ ອົງການເຄືອຂ່າຍສະຫະປະຊາຊາດ ແລະ ເພື່ອນຮ່ວມງານອື່ນໆ ທີ່ໄດ້ປະກອບສ່ວນ: ທ່ານ Tej Ram Jat (ອົງການສະຫະປະຊາຊາດ ກອງທຶນປະຊາກອນ UNFPA), ທ່ານ ສີວົງໄຊ ຈັງປີຕິກຸນ (UNFPA), ທ່ານ ນາງ ເຂັມພອນ ເຜົາຄຳແກ້ວ (ອົງການແຮງງານສາກົນ, ILO), ທ່ານ ນາງ ວຽງປະສິດ ທິບພາສຸດາ (ILO), ທ່ານ ນາງ Makiko Matsumoto (ILO), ທ່ານ ແກ້ວວັນໄລ ພັນທະວົງ (ILO), ທ່ານ ວົງຕະວັນ ໄຊຍະວົງ (ILO), ທ່ານ ນາງ ອານຸສອນ ຊໍແສງອິນ  (ILO), ທ່ານ Leotes Helin (ກອງທຶນເດັກນ້ອຍຂອງສະຫະປະຊາຊາດ, UNICEF), ທ່ານ Beate Dastel (UNICEF), ທ່ານ ນາງ Maryam Abdu (UNICEF), ທ່ານ Yali Zhang  (UNICEF), ທ່ານ ນາງ Wipawee Silpitaksakul (UNICEF), ທ່ານ ນາງ ອຳໄພວັນ ຈັນມະນີ (UNICEF), ທ່ານ ນາງ Yu Lee Park (ອົງການອະນາໄມໂລກ, WHO), ທ່ານ ດວງແກ້ວ ທໍຈຶງເລຍຈີ (WHO), ທ່ານ Roland Dilipkumar (WHO), ທ່ານ Sia Kondeh (ອົງການສາກົນເພື່ອການເຄື່ອນຍ້າຍ, IOM), ທ່ານ ທອງແດງ ສີລາຄຸນ (ໂຄງການຮ່ວມຂອງສະຫະປະຊາຊາດກ່ຽວກັບ HIV/AIDS, UNAIDS), ທ່ານ ບົງ ວົງພະສຸກ (CARE International), ທ່ານ Erlend Falch (ອົງການສະຫະປະຊາຊາດກ່ຽວກັບຢາເສບຕິດ ແລະ ອາດຊະຍາກຳ, UNODC).

# ບົດນຳ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ເປັນປະເທດທີ່ມີຊີວິດຊີວາ ແລະ ມີຄວາມຫຼາກຫຼາຍທາງດ້ານຊົນເຜົ່າ  ແລະ ພູມສັນຖານ ຕັ້ງຢູ່ຈຸດຍຸດທະສາດລຳແມ່ນ້ຳຂອງ ຢູ່ໃຈກາງຂອງອາຊີຕາເວັນອອກສຽງໃຕ້. 30 ປີທີ່ຜ່ານມາ, ປະເທດລາວໄດ້ຮັບການພັດທະນາຢ່າງຕັ້ງໜ້າ, ຫຼຸດຜ່ອນຄວາມທຸກຍາກ, ຫຼຸດຜ່ອນການຂາດສານອາຫານ, ປັບປຸງການເຂົ້າເຖິງການສຶກສາ ແລະ ປັບປຸງທາງດ້ານສາທາລະນະສຸກ. ອັດຕາຄວາມທຸກຍາກຫຼຸດລົງຈາກ 33,5 ສ່ວນຮ້ອຍ ໃນສົກປີ 2002-2003 ເປັນ 18,6 ສ່ວນຮ້ອຍ ໃນສົກປີ 2018-2019, ສ່ວນໜຶ່ງແມ່ນມີຜົນມາຈາກການເຕີບໂຕຢ່າງ ວ່ອງໄວຂອງລວມຍອດຜະລິດຕະພັນພາຍໃນ (GDP) ເຊິ່ງສະເລ່ຍແລ້ວປະມານ 7,3 ສ່ວນຮ້ອຍ ຕໍ່ປີ.

ສປປ ລາວ ເປັນໜຶ່ງໃນປະເທດທີ່ມີຂະບວນການພັດທະນາຕົວເມືອງທີ່ໄວທີ່ສຸດໃນພາກພື້ນ. ປະຊາກອນລາວຄາດວ່າຈະເພີ່ມຂຶ້ນຈາກ 7,42 ລ້ານຄົນ ໃນປັດຈຸບັນເປັນ 8,1 ລ້ານຄົນ ພາຍໃນປີ 2030. ເກືອບໜຶ່ງສ່ວນສາມຂອງປະຊາກອນແມ່ນມີອາຍຸລະຫວ່າງ 10 ຫາ 24 ປີ, ເຊິ່ງເຮັດໃຫ້ ສປປ ລາວ ເປັນໜຶ່ງໃນບັນດາປະເທດທີ່ມີປະຊາກອນໜຸ່ມນ້ອຍທີ່ສຸດໃນອາຊີຕາເວັນອອກສຽງໃຕ້. ໃນອີກຫຼາຍປີຂ້າງໜ້າ, ປະຊາກອນເຊິ່ງຢູ່ໃນໄວເຮັດວຽກ ແມ່ນຈະເຖິງໄວຜູ້ສູງອາຍຸ ແລະ ຜູ້ອາຍຸນ້ອຍ ເຊິ່ງເປັນໄວຜູ້ທີ່ຕ້ອງການເພິ່ງອາໄສຄາດວ່າຈະມີອັດຕາສ່ວນສູງ, ສະນັ້ນ ຕອນນີ້ຖືເປັນໂອກາດອັນພິເສດໃນ ການເກັບກ່ຽວຜົນປະໂຫຍດຈາກການຫັນປ່ຽນດ້ານປະຊາກອນ ແລະ ໃນຂະບວນການດັ່ງກ່າວ ຈະເຮັດໃຫ້ມີການຫັນປ່ຽນປະເທດຢ່າງເລິກເຊິ່ງ ແລະ ມີການປັບປຸງດ້ານຊີວິດການເປັນຢູ່ດີຂຶ້ນກວ່າເກົ່າອີກ.

ເຖິງຢ່າງໃດກໍຕາມ, ການລົງທຶນໃສ່ການຫັນປ່ຽນທາງດ້ານປະຊາກອນ ແມ່ນຮຽກຮ້ອງໃຫ້ມີການລົງທຶນໃນໄວໜຸ່ມ. ໃນນັ້ນລວມທັງການສ້າງນະໂຍບາຍຢ່າງຮອບດ້ານທີ່ສົ່ງເສີມການສຶກສາທີ່ມີຄຸນນະພາບສູງ, ຊຸກຍູ້ການສ້າງວຽກເຮັດງານທຳໃຫ້ແກ່ໄວໜຸ່ມນອກຈາກຂະແໜງກະສິກຳ, ປັບປຸງດ້ານສາທາລະນະສຸກ ແລະ ສ້າງສະພາບແວດລ້ອມທີ່ຊຸກຍູ້ໃຫ້ມີການເພີ່ມທະວີການມີສ່ວນຮ່ວມ ແລະ ການເຂົ້າຮ່ວມເພື່ອຮັບປະກັນບໍ່ໃຫ້ໄວໜຸ່ມ ໂດຍສະເພາະແມ່ນຜູ້ມາຈາກກຸ່ມຊົນເຜົ່າ, ຜູ້ຢູ່ຫ່າງໄກສອກຫຼີກ ແລະ ຊຸມຊົນໃນເຂດຊົນນະບົດ ຖືກປະໄວ້ຂ້າງຫຼັງD ຖ້າຍຸດທະສາດຫຼັກບໍ່ຖືກ ກຳນົດ ແລະ ນຳໃຊ້ຢ່າງເດັດຂາດ, ຮອບຄອບ, ວ່ອງໄວ ແລະ ມີປະສິດທິຜົນເທົ່າທີ່ຈະເປັນໄປໄດ້, ໂອກາດໃນການປັບປຸງຊີວິດການເປັນຢູ່ຂອງຄົນທັງໝົດໃນປະເທດອາດຈະສູນເສຍໄປ.

ການຫັນປ່ຽນໄປສູ່ການພັດທະນາທ່າແຮງຂອງໄວໜຸ່ມແມ່ນມີຄວາມສຳຄັນຢ່າງໃຫຍ່ຫຼວງໃນສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ການຟື້ນຕົວຂອງເສດຖະກິດໃນຕໍ່ໜ້າ. ເຊັ່ນດຽວກັບ ບັນດາປະເທດໃນທົ່ວໂລກ, ການແຜ່ລະບາດຂອງພະຍາດດັ່ງກ່າວໃນ ສປປ ລາວ ໄດ້ສ້າງຄວາມເດືອດຮ້ອນທາງດ້ານເສດຖະກິດຢ່າງບໍ່ເຄີຍມີມາກ່ອນ, ໂດຍມີການສູນເສຍວຽກເຮັດງານທຳໃນຫຼາຍຂະແໜງອຸດສາຫະກຳທີ່ສຳຄັນ ລວມທັງຂະແໜງການທ່ອງທ່ຽວ, ການຄ້າຂາຍຍ່ອຍ, ການຂົນສົ່ງ ແລະ ການໂຮງແຮມ. ບັນຫານີ້ອາດຈະເປັນສິ່ງທ້າທາຍທີ່ສຳຄັນຕໍ່ຄວາມຄືບໜ້າໃນການຫຼຸດຜ່ອນຄວາມທຸກຍາກຂອງທົດສະວັດທີ່ຜ່ານມາ. ການພັດທະນາມະນຸດທີ່ສຸມໃສ່ປະຊາກອນກຸ່ມໃຫຍ່ທີ່ສຸດໃນປະເທດ ກໍຄືເດັກນ້ອຍ ແລະ ໄວໜຸ່ມ ແມ່ນມີຄວາມສຳຄັນຕໍ່ການຟື້ນຟູປະເທດໃນໄລຍະຍາວ ແລະ ຄວາມກ້າວໜ້າຢ່າງຕໍ່ເນື່ອງໃນທົ່ວປະເທດ.

ຕໍ່ກັບສະພາບການຫຍຸ້ງຍາກດັ່ງກ່າວ, ລັດຖະບານແຫ່ງ ສປປ ລາວ ໄດ້ມີການຮ່ວມມືມາແຕ່ດົນນານກັບໂຄງການພັດທະນາຂອງອົງການສະຫະປະຊາຊາດ (UNDP), ລວມທັງການສ້າງບົດລາຍງານການພັດທະນາມະນຸດແຫ່ງຊາດ ໂດຍສຸມໃສ່ການລະດົມການດຳເນີນການຕໍ່ບັນຫາທີ່ສຳຄັນຂອງການພັດທະນາແບບຍືນຍົງ. ຜ່ານມາໄດ້ມີການສ້າງ ແລະ ເຜີຍແຜ່ບົດລາຍງານການພັດທະນາມະນຸດແຫ່ງຊາດຂອງ ສປປ ລາວ ແລ້ວ 5 ສະບັບ, ບົດລາຍງານສະບັບຫຼ້າສຸດນີ້ຈະເນັ້ນໃສ່ບັນຫາທີ່ພົ້ນເດັ່ນຂອງໄວໜຸ່ມ, ໂດຍສະເພາະດ້ານແນວທາງ ແລະ ຍຸດທະສາດທີ່ຈຳເປັນເພື່ອຮັບປະກັນວ່າເຂົາເຈົ້າສາມາດບັນລຸຄວາມມຸ່ງມາດປາດຖະໜາຂອງເຂົາເຈົ້າ ແລະ ປະກອບສ່ວນເຂົ້າໃນການພັດທະນາປະເທດ. ການກະກຽມບົດລາຍງານສະບັບນີ້ - ນັບຕັ້ງແຕ່ການກຳນົດຫົວຂໍ້ໄປເຖິງການສະຫຼຸບ - ໄດ້ອີງໃສ່ຜົນການປຶກສາຫາລືຢ່າງກວ້າງຂວາງ. ຄະນະທີ່ປຶກສາແຫ່ງຊາດແມ່ນປະກອບດ້ວຍຜູ້ຕາງໜ້າຈາກບັນດາກະຊວງ, ມະຫາວິທະຍາໄລ ແລະ ສະຖາບັນຄົ້ນຄວ້າຕ່າງໆ ທີ່ໄດ້ໃຫ້ການຊີ້ນຳຕະຫຼອດຂະບວນການ, ສ້າງຄວາມເປັນເຈົ້າຂອງຊາດຢ່າງເຂັ້ມແຂງ.

ອີກສິ່ງໜຶ່ງທີ່ສຳຄັນ, ບົດລາຍງານສະບັບດັ່ງກ່າວ ໄດ້ຍົກໃຫ້ເຫັນເຖິງຄວາມຈຳເປັນອັນສຳຄັນຂອງ



ສປປ ລາວ ໃນການພັດທະນານະໂຍບາຍທີ່ມີເປົ້າໝາຍເພື່ອແນໃສ່ປັບປຸງໂອກາດຂອງໄວໜຸ່ມ ໃນການໄດ້ຮັບຈ້າງງານທີ່ມີຄຸນນະພາບ ກໍ່ຄືການສຶກສາ ແລະ ການພັດທະນາສີມືແຮງງານ; ປັບປຸງຜົນໄດ້ຮັບດ້ານສາທາລະນະສຸກໃຫ້ດີຂຶ້ນໂດຍຜ່ານການຫຼຸດຜ່ອນຄວາມສ່ຽງດ້ານສຸຂະພາບທີ່ມີຜົນກະທົບໂດຍສະເພາະເຖິງເດັກນ້ອຍ ແລະ ໄວໜຸ່ມ ພ້ອມທັງສ້າງສະພາບແວດລ້ອມທີ່ເອື້ອອຳນວຍການເຂົ້າມາມີສ່ວນພົວພັນ ແລະ ມີສ່ວນຮ່ວມຂອງໄວໜຸ່ມໃຫ້ຫຼາຍຂຶ້ນໃນການຕັດສິນໃຈບັນຫາທີ່ມີຜົນກະທົບຕໍ່ເຂົາເຈົ້າເອງ. ບົດລາຍງານນີ້ ຍັງຮຽກຮ້ອງໃຫ້ມີການຈັດສັນຊັບພະຍາກອນເພີ່ມເຕີມ ເພື່ອຕອບສະໜອງຄວາມຈຳເປັນ ແລະ ຄວາມຕ້ອງການຂອງໄວໜຸ່ມ, ໂດຍສະເພາະແມ່ນກຸ່ມຄົນທີ່ດ້ອຍໂອກາດ ທັງນີ້ກໍເພື່ອຫຼຸດຜ່ອນຄວາມບໍ່ເທົ່າທຽມກັນ, ຫຼຸດຜ່ອນຄວາມທຸກຍາກທີ່ຮ້າຍແຮງ ແລະ ເພີ່ມທະວີຄວາມສະເໝີພາບລະຫວ່າງຍິງ-ຊາຍ. ພ້ອມນັ້ນການຮັບປະກັນການແຈກຢາຍຊັບພະຍາກອນໃຫ້ມີຄວາມສະເໝີພາບກວ່າເກົ່າ ຈະເປັນກຸນແຈສຳຄັນໃນການພັດທະນາມະນຸດທີ່ຍືນຍົງ.

ທາງເລືອກດ້ານນະໂຍບາຍທີ່ສະຫນັບສະຫນູນການແກ້ໄຂບັນຫາເຫຼົ່ານີ້ແມ່ນແນເປົ້າໝາຍໃສ່ໄວຫນຸ່ມໂດຍສະເພາະ ເຊິ່ງມີຈຸດປະສົງເພື່ອໃຫ້ສາມາດນຳໄປປະຕິບັດຕົວຈິງໄດ້, ໂດຍມີຕັ້ງແຕ່ການລົງທຶນດ້ານການສຶກສາ ແລະ ການຝຶກອົບຮົມທີ່ເໝາະສົມ ເພື່ອຫຼຸດຜ່ອນບັນຫາ “ເຫຼືອບໍ່ພໍ” ລະຫວ່າງທັກສະ ແລະ ຄວາມມຸ່ງມາດປາດຖະໜາຂອງໄວໜຸ່ມ ກັບຄວາມຕ້ອງການຂອງຕະຫຼາດແຮງງານ ໄປຈົນເຖິງການພັດທະນາໂຄງການບໍລິການດ້ານການຈ້າງງານໃຫ້ມີຄວາມຮອບດ້ານກວ່າເກົ່າ ລວມທັງການຈັດຕັ້ງກົນໄກຢ່າງເປັນທາງການສຳລັບການມີສ່ວນຮ່ວມຂອງປະຊາກອນໜຸ່ມໃນຂະແໜງການ, ນະໂຍບາຍ ແລະ ໂຄງການຂອງລັດ, ເຮັດໃຫ້ໄວໜຸ່ມຍິ່ງເປັນບຸລິມະສິດຂອງວາລະການພັດທະນາດ້ານສຸຂະພາບ ແລະ ຍົກລະດັບການບໍລິການສຸຂະພາບຈິດໃຫ້ໄວໜຸ່ມ.ເຖິງແມ່ນວ່າການຊ່ວຍເຫຼືອເຫຼົ່ານີ້ ເປັນພຽງພາບລວມຂອງຂໍ້ສະເຫນີແນະທັງໝົດທີ່ນຳສະເໜີຢູ່ໃນແຕ່ລະພາກ ແລະ ຫົວຂໍ້ຂອງບົດລາຍງານ, ການຊ່ວຍເຫຼືອດັ່ງກ່າວລ້ວນແຕ່ຖືກອອກແບບເພື່ອຮັບປະກັນໃຫ້ ສປປ ລາວ ສາມາດເກັບກ່ຽວຜົນປະໂຫຍດຈາກທ່າແຮງດ້ານປະຊາ ກອນໃນອະນາຄົດ. ກະຊວງແຜນການ ແລະ ການລົງທຶນ ແລະ ອົງການ UNDP ມີຄວາມໝັ້ນໃຈວ່າບັນດາຂໍ້ສະເໜີແນະທີ່ນຳມາສະເໜີໃນບົດລາຍງານສະບັບນີ້ ຈະປະກອບສ່ວນອັນສຳຄັນເຂົ້າໃນການຈັດ ຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.ເຖິງເວລາແລ້ວ ທີ່ ສປປ ລາວ ຈະຕ້ອງຫັນເອົາໄວໜຸ່ມເປັນໃຈກາງໃນຂະບວນການພັດທະນາ ແລະ ເຮັດວຽກຮ່ວມກັບເຂົາເຈົ້າ ເພື່ອບັນລຸທ່າແຮງສູງສຸດ ໃນຖານະທີ່ເຂົາເຈົ້າເປັນຕົວຂັບເຄື່ອນການພັດທະ ນາທີ່ຍືນຍົງ. ພວກເຮົາໝັ້ນໃຈວ່າບົດລາຍງານສະບັບນີ້ຈະສະໜອງທິດທາງໃຫ້ພວກເຮົາຕະຫຼອດການເດີນ ທາງນີ້.



ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່,
ຮອງລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ



ທ່ານ ນາງ Ricarda Rieger,
ຜູ້ຕາງໜ້າອົງການ ສະຫະປະຊາຊາດ ເພື່ອການພັດທະນາ


10 REDUCED INEQUALITIES
8 ມີວຽກເຮັດງານທຳທີ່ມີ ຄຸນຄ່າ & ເສດຖະກິດ ມີການເຕີບໂຕ
13 CLIMATE ACTION
3 GOOD HEALTH AND WELL-BEING
4 ມີການສຶກສາ ທີ່ມີຄຸນນະພາບ
I'M OK

## LIST OF ACRONYMS

**ADB**
Asian Development Bank
**ASEAN**
**Association of Southeast Asian Nations**
**Asian-NARCO**
ASEAN-Narcotics Cooperation Center
**CRC**
Committee on the Rights of the Child
**CSOs**
Civil Society Organizations
**FDI**
Foreign Direct Investment
**GDI**
Gross Domestic Income
**GDP**
Gross Domestic Product
**GII**
Gender Inequality Index
**GGGI**
Global Green Growth Institute
**GNI**
Gross National Income
**HDI**
Human Development Index
**IFC**
International Finance Cooperation
**IHDI**
Inequality-adjusted Human Development Index
**ILO**
International Labor Organization
**IMF**
International Monetary Fund
**IMR**
Infant mortality rate
**IOM**
International Organization for Migration
**Lao PDR**
Lao People's Democratic Republic
**LECS**
Lao Expenditure and Consumption Survey
**LFS**
Labor Force Survey
**LGBTQI+**
Lesbian, gay, bisexual, transexual, queer, intersex plus
**LNCCI**
Lao National Chamber of Commerce and Industry
**LSB**
Lao Statistics Bureau
**LSIS**
Lao Social Indicator Survey
**LYU**
Lao People's Revolutionary Youth Union
**MoH**
Ministry of Health
**MPI**
Ministry of Planning and Investment
**MTC**
Ministry of Technology and Communications
**NCAW**
National Commission for the Advancement of Women
**NGOs**
Non-governmental organizations
**NHDR**
National Human Development Report
**NEET**
Not in education, employment, or training
**OHCHR**
Office of High Commissioner for Human Rights
**OECD**
Organization for Economic Cooperation and Development
**PTBUL**
Proud To Be Us Laos
**SDGs**
Sustainable Development Goals
**SMEs**
Small and Medium Enterprises
**STEM**
Science, Technology, Engineering and Math
**TVET**
Technical and Vocational Education and Training
**UHC**
Universal health coverage
**UN**
United Nations
**UNAIDS**
Joint United Nations Programme on HIV/AIDS
**UNECA**
United Nations Economic Commission for Africa
**UNPY**
United Nations Programme on Youth
**UNODC**
United Nations Office on Drugs and Crime
**UNDESA**
United Nations Department of Economic and Social Affairs
**UNDP**
United Nations Development Programme
**UNESCO**
United Nations Educational, Scientific and Cultural Organization
**UNICEF**
United Nations Children's Fund
**UNEVOC**
International Centre for Technical and Vocational Education and Training
**UNFPA**
United Nations Population Fund
**UNGA**
United Nations General Assembly
**UNSDG**
United Nations Sustainable Development Group
**UNV**
United Nations Volunteers
**USAID**
United States Agency for International Development
**UXO**
Unexploded Ordnance
**WHO**
World Health Organization

## ສາລະບານ


ບົດຂອບໃຈ 5
ບົດນຳ 6

**ບົດທີ 1** **13**
**ພາກສະເໜີ**

1.1 ໄລຍະເວລາຂອງການຫັນປ່ຽນທາງດ້ານປະຊາກອນ 16
1.2 ຄຳນຶງເຖິງຜົນສຳເລັດ 20
1.3 ວິທີການ ແລະ ໂຄງຮ່າງຂອງບົດລາຍງານ 33

**ບົດທີ 2** **40**
**ການສ້າງວຽກເຮັດງານທຳທີ່ມີຄຸນຄ່າສູງ ແລະ ລາຍຮັບທີ່ເໝາະສົມ**

2.1 ໄລຍະເວລາຂອງການຫັນປ່ຽນທາງດ້ານປະຊາກອນ 42
2.2 ການຈ້າງງານ ແລະ ການພັດທະນາມະນຸດ 45
2.3 ທ່າອ່ຽງດ້ານເສດຖະກິດ ແລະ ຕະຫຼາດແຮງງານທີ່ມີຜົນກະທົບຕໍ່ໄວໜຸ່ມ 54
2.4 ສິ່ງທ້າທາຍ 57
2.5 ໂອກາດ 64
2.6 ຂໍ້ສະເໜີແນະ 72
2.7 ບົດສະຫຼຸບ 75

**ບົດທີ 3** **78**
**ການສຶກສາ ແລະ ການພັດທະນາສີມືແຮງງານ**

3.1 ການສຶກສາ ແລະ ການພັດທະນາມະນຸດ 79
3.2 ທ່າອ່ຽງຂອງການສຶກສາ ແລະ ການພັດທະນາສີມືແຮງງານໃນ ສປປ ລາວ 81
3.3 ນິຕິກຳ, ນະໂຍບາຍ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ 92
3.4 ສິ່ງທ້າທາຍ 95
3.5 ໂອກາດ 103
3.6 ຂໍ້ສະເໜີແນະ 104
3.7 ບົດສະຫຼຸບ 108

**ບົດທີ 4** **111**
**ສຸຂະພາບ, ການເປັນຢູ່ທີ່ດີ ແລະ ຄວາມປອດໄພ**

4.1 ສຸຂະພາບ ແລະ ການພັດທະນາມະນຸດ 114

4.2 ທ່າອ່ຽງດ້ານສຸຂະພາບ, ການເປັນຢູ່ທີ່ດີ ແລະ ຄວາມປອດໄພ 116
4.3 ນິຕິກໍາ, ນະໂຍບາຍ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ 129
4.4 ຂໍ້ສະເໜີແນະ 136
4.5 ບົດສະຫຼຸບ 140

## ບົດທີ 5 144
## ການພັດທະນາມະນຸດ ແລະ ການສ້າງຄວາມ ເຂັ້ມແຂງໃຫ້ໄວໜຸ່ມ

5.1 ການມີສ່ວນຮ່ວມຂອງໄວໜຸ່ມ ໃນການພັດທະນາມະນຸດ 146
5.2 ທ່າອ່ຽງການມີສ່ວນຮ່ວມຂອງໄວໜຸ່ມ ແລະ ການສ້າງຄວາມເຂັ້ມແຂງໃຫ້ໄວໜຸ່ມ 148
5.3 ນິຕິກໍາ, ນະໂຍບາຍ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ 152
5.4 ທັດສະນະຂອງໄວໜຸ່ມຕໍ່ການມີສ່ວນຮ່ວມ 155
5.5 ສິ່ງກີດຂວາງຕໍ່ການມີສ່ວນຮ່ວມ 160
5.6 ຂໍ້ສະເໜີແນະ 163
5.7 ບົດສະຫຼຸບ 167

## ບົດທີ 6 171
## ໃຫ້ໄວໜຸ່ມເປັນຜູ້ຂັບ ເຄື່ອນການພັດທະນາ ມະນຸດທີ່ຍືນຍົງ

6.1 ການພາດໂອກາດໝູນໃຊ້ຄວາມໄດ້ປຽບທາງດ້ານປະຊາກອນ 172
6.2 ຂໍ້ສະເໜີແນະຫຼັກ 175

## ເອກະສານຊ້ອນທ້າຍ 185

ເອກະສານຊ້ອນທ້າຍ #1 186
ເອກະສານຊ້ອນທ້າຍ #2 188
ເອກະສານຊ້ອນທ້າຍ #3 192
ເອກະສານຊ້ອນທ້າຍ #4 195








## ກ່ອງເນື້ອໃນ 1.1: ສະພາບການທາງດ້ານປະຊາກອນ ແລະ ທາງດ້ານການເມືອງ

ສປປ ລາວ ເປັນປະເທດທີ່ມີລາຍຮັບປານກາງ, ບໍ່ມີຊາຍແດນຕິດກັບທະເລ, ມີຫຼາຍ ຊົນເຜົ່າ ປະຊາກອນທັງໝົດມີ 7.42 ລ້ານຄົນ ແລະ ລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ (2017 PPP) ແມ່ນ 7.700 ໂດລາສະຫະລັດ ໃນປີ 2021 (UNDP, 2022b). ປະມານສອງສ່ວນສາມ ຂອງປະຊາຊົນແມ່ນອາໄສຢູ່ໃນເຂດ ຊົນນະບົດ, ໃນເຂດກະສິກຳທີ່ມີຄວາມຫນາແຫນ້ນຂອງປະຊາກອນຕ່ຳ. ຢ່າງໃດກໍຕາມ, ປະເທດລາວກຳລັງພັດທະນາເປັນຕົວເມືອງຢ່າງໄວວາ. ປະຊາກອນໃນຕົວເມືອງເພີ່ມຂຶ້ນຈາກ 22 ສ່ວນຮ້ອຍ ໃນປີ 2000 ເປັນ 36 ສ່ວນຮ້ອຍ ໃນປີ 2020 (UNDESA, 2019).

ສປປ ລາວ ມີຊົນເຜົ່າທີ່ໄດ້ຖືກຮັບຮູ້ຢ່າງເປັນທາງການຈຳນວນ 50 ຊົນເຜົ່າ ເຊິ່ງແບ່ງອອກເປັນ 4 ກຸ່ມໃຫຍ່ຄື: ລາວ-ໄຕ, ມອນ-ຂະແມ, ມົ້ງ-ມຽນ ແລະ ຈີນ-ຕິເບດ.

ສປປ ລາວ ມີພັກປະຊາຊົນປະຕິວັດລາວເປັນອົງການຈັດຕັ້ງການເມືອງສູງສຸດ ມີໜ້າທີ່ໃນການນຳພາປະຊາຊົນລາວບັນດາເຜົ່າໃນການປະຕິບັດ 2 ໜ້າທີ່ຍຸດທະສາດຄື ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເຊິ່ງມີຄະນະບໍລິຫານງານສູນກາງພັກແຕ່ລະສະໄໝ ເປັນຜູ້ຄົ້ນຄວ້າ, ກຳນົດແນວທາງການເມືອງຂອງພັກ. ພ້ອມນັ້ນ, ນຳພາ, ຊຸກຍູ້ ແລະ ຕິດຕາມຈັດຕັ້ງຜັນຂະຫຍາຍບັນດາມະຕິກອງປະຊຸມໃຫ່ຍຂອງພັກໄດ້ວາງອອກ. ກອງປະຊຸມໃຫ່ຍຜູ້ແທນທົ່ວປະເທດຂອງພັກຈັດຂຶ້ນໃນທຸກໆ 5 ປີ ເຊິ່ງໃນກອງປະຊຸມໃຫ່ຍຄັ້ງທີ XI ຂອງພັກ ໄດ້ມີການຄັດເລືອກເອົາຄະນະບໍລິຫານງານຂອງພັກຊຸດໃໝ່, ຮັບຮອງເອົາບົດລາຍງານການເມືອງຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ IX (2021 – 2025). ພາຍຫຼັງກອງປະຊຸມໃຫ່ຍຂອງພັກໄດ້ສຳເລັດແລ້ວ ກໍ່ຍັງໄດ້ມີການເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ເພື່ອຮັບຮອງເອົາສະມາຊິກສະພາແຫ່ງຊາດຊຸດໃໝ່, ຮັບຮອງເອົາແຜນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX (2021 – 2025) ແລະ ຮັບຮອງເອົາຄະນະລັດຖະບານຊຸດໃໝ່.

ເຊິ່ງໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX ນັ້ນ ໄດ້ກຳເອົາ 6 ເປົ້າໝາຍ ແລະ 26 ແຜນວຽກຈຸດສຸມ ໃນນັ້ນ, ລວມມີການຮັກສາສະຖຽນລະພາບການເຕີບໂຕເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ; ກໍ່ສ້າງຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ເພື່ອຕອບສະໜອງກັບຄວາມຕ້ອງການຂອງການພັດທະນາ ແລະ ນຳພາປະເທດຊາດໃຫ້ມີການຫັນປ່ຽນຢ່າງໂລ່ງລ່ຽນ ເພື່ອຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາຂອງ ສປປ ລາວ (ສະຫະປະຊາຊາດ, 2020).



# ບົດທີ 1: ພາກສະເໜີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວເປັນປະເທດຫນຶ່ງທີ່ມີປະຊາກອນທີ່ອາຍຸນ້ອຍທີ່ສຸດໃນອາຊີຕາເວັນອອກສຽງໃຕ້. ປະຊາຊົນ ຫຼາຍກວ່າເຄິ່ງຫນຶ່ງ, ອັດຕາສ່ວນ 51,2 ສ່ວນຮ້ອຍ, ແມ່ນມີອາຍຸຕ່ຳກວ່າ 25 ປີ (UNDESA, 2019).ໃນສະພາບທີ່ມີການຫັນປ່ຽນດ້ານ ປະຊາກອນຄືໃນປັດຈຸບັນ, ສປປ ລາວ ຈະພົບກັບໂອກາດອັນໃຫຍ່ຫຼວງໃນການພັດທະນາມະນຸດຢ່າງຮີບດ່ວນ ແລະ ຍືນຍົງ, ແຕ່ໂອກາດ ດັ່ງກ່າວມີພຽງແຕ່ປະມານ 2 ທົດສະວັດເທົ່ານັ້ນບົນພື້ນຖານທີ່ມີການລົງທຶນທີ່ຖືກຕ້ອງໃນເດັກນ້ອຍ ແລະ ໄວໜຸ່ມ ຜູ້ເຊິ່ງເປັນຊັບສິນທີ່ໃຫຍ່ຫຼວງທີ່ສຸດຂອງຊາດ.

ບົດລາຍງານການພັດທະນາມະນຸດແຫ່ງຊາດຄັ້ງທີ 6 ນີ້ ຈະສຶກສາວ່າເດັກນ້ອຍ ແລະ ໄວໜຸ່ມ[1]ສາມາດໄດ້ຮັບຜົນປະໂຫຍດຈາກການເຂົ້າໄປມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນການພັດທະນາຂອງປະເທດໃນຊຸມປີຕໍ່ໜ້າໄດ້ດ້ວຍວິທີໃດ. ບັນຫານີ້ເປັນສິ່ງສຳຄັນສຳລັບໄວໜຸ່ມ ແລະ ປະເທດຊາດ ໂດຍລວມ ເນື່ອງຈາກຈະຕ້ອງຮັບມືກັບຜົນກະທົບ ທີ່ເກີດຂຶ້ນກະທັນຫັນ ໃນຂະນະດຽວກັນກໍ່ຕ້ອງພະຍາຍາມສ້າງຄວາມເຂັ້ມແຂງ ແລະ ເສີມຂະຫຍາຍຄວາມຄືບໜ້າທີ່ມີໃນເມື່ອກ່ອນ. ບົດລາຍງານຍັງໄດ້ສະເໜີຜົນການຄົ້ນຄວ້າໃນປະຈຸບັນກ່ຽວກັບເດັກນ້ອຍ ແລະ ໄວໜຸ່ມ, ໂດຍມີລາຍລະອຽດກ່ຽວກັບປັດໃຈຂັບເຄື່ອນການເປັນຢູ່ທີ່ດີ ແລະ ອຸປະສັກຕໍ່ຄວາມກ້າວໜ້າຂອງເຂົາເຈົ້າ. ພ້ອມນັ້ນ ກໍ່ໄດ້ກຳນົດວຽກທີ່ສຳຄັນທີ່ຕ້ອງຈັດຕັ້ງປະຕິບັດ ດຽວນີ້, ເພື່ອສາມາດຮັບປະກັນໃຫ້ໄວຫນຸ່ມມີບົດບາດທີ່ເໝາະສົມ ໃນການພັດທະນາໃນທົດສະວັດທີ່ຈະມາເຖິງ.

ວຽກເຫຼົ່ານີ້ ແນໃສ່ປັບປຸງໂຄງລ່າງດ້ານການສຶກສາ, ວຽກເຮັດງານທຳ, ການດູແລສຸຂະພາບ ແລະ ການມີສ່ວນຮ່ວມ ລວມທັງເພີ່ມທະວີຄວາມພະຍາຍາມໃນການເຂົ້າເຖິງໄວໜຸ່ມທີ່ດ້ອຍໂອກາດໂດຍສະເພາະ ເຊັ່ນ:ໄວໜຸ່ມໃນເຂດຊົນນະບົດ ແລະ ມີພື້ນຖານເສດຖະກິດ-ສັງຄົມທີ່ທຸກຍາກ ກໍ່ຄືຜູ້ທີ່ຢູ່ລຸ່ມຫຼື ໃກ້ເສັ້ນຄວາມທຸກຍາກ, ກຸ່ມຊົນເຜົ່າ,ໄວໜຸ່ມທີ່ມີຄວາມພິການ, ກຸ່ມຄົນທີ່ມີຄວາມຫຼາກຫຼາຍທາງເພດ LGBTQI+ (ເລສບຽນ, ເກ,ຄົນທີ່ມັກທັງສອງເພດ, ຄົນຂ້າມເພດ, ຄົນບໍ່ລະ ບຸເພດ, ຄົນທີ່ມີອະໄວຍະວະເພດຮ່ວມ), ໄວໜຸ່ມ ຍິງ ແລະ ໄວໜຸ່ມເຄື່ອນຍ້າຍ.ໂດຍຜ່ານການຊ່ວຍເຫຼືອທາງດ້ານການສຶກສາ,ເສດຖະກິດ, ສັງຄົມ ແລະ ສາທາລະນະສຸກທີ່ມີຄຸນນະພາບສູງ, ເດັກນ້ອຍ ແລະ ໄວຫນຸ່ມ ຈະສາມາດຈະເລີນເຕີບໂຕ ແລະ ຮັບບົດບາດຂອງ ການເປັນຜູ້ໃຫຍ່ໄດ້ຢ່າງມີປະສິດທິພາບ, ພັດທະນາທັກສະທີ່ກົງກັບຄວາມຕ້ອງການຂອງຕະຫຼາດ ແລະ ການຈ້າງງານ, ມີສ່ວນຮ່ວມໃນຊຸມຊົນຂອງ ພວກເຂົາຫຼາຍຂຶ້ນ ແລະ ມີການປະພຶດທີ່ດີໃນໄລ ຍະຍາວເຊິ່ງເປັນປະໂຫຍດຕໍ່ພວກເຂົາ, ຄອບຄົວ ຂອງພວກເຂົາ ແລະ ປະເທດຊາດ ຂອງພວກເຂົາ. ການທີ່ຄົນເຮົາມີຄວາມສາມາດຫຼາຍຂຶ້ນກວ່າເກົ່າ ໂດຍຜ່ານການສະສົມຂີດຄວາມສາມາດຕະຫຼອດໄລຍະທີ່ຍັງເປັນເດັກນ້ອຍ ແລະ ໄວໜຸ່ມ ແລະ ໄລຍະຂອງການຫັນປ່ຽນໄປສູ່ການເປັນຜູ້ໃຫຍ່ນັ້ນ ແມ່ນມີຄວາມເປັນໄປໄດ້ສູງທີ່ຈະທຳລາຍວົງຈອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ ພ້ອມທັງສ້າງສັງຄົມທີ່ມີຄວາມຈະເລີນຮຸ່ງເຮືອງ ແລະ ສົມບູນ. ໃນທາງກົງກັນຂ້າມ, ຖ້າຄວາມສາມາດຂອງຄົນຍັງບໍ່ເຂັ້ມແຂງ ເປັນຕົ້ນໃນກຸ່ມເດັກນ້ອຍທີ່ດ້ອຍໂອກາດ, ບໍ່ໄດ້ເຂົ້າໂຮງຮຽນ ຫຼື ປະລະການຮຽນ, ວົງຈອນຂອງຄວາມທຸກຍາກ ກໍຈະຍັງສືບຕໍ່ຕະຫຼອດໄປ ແລະ ຈະສືບຕໍ່ເປັນວົງຈອນ.ຢູ່ໃນບ່ອນເຮັດວຽກ, ເດັກນ້ອຍເຫຼົ່ານີ້ຈະໄດເຮັດວຽກທີ່ຢູ່ຂັ້ນຕ່ຳທີ່ສຸດ ແລະ ໄດ້ຮັບຄ່າ ແຮງຕ່ຳທີ່ສຸດ. ເມື່ອເຂົາເຈົ້າໃຫຍ່ມາ ແລະ ມີລູກ, ຄວາມທຸກຍາກກໍຈະສືບຕໍ່ໄປເຖິງຄົນຮຸ່ນຕໍ່ໄປ (Hall, 2015).

ບົດລາຍງານສະບັບນີ້ ເນັ້ນໃສ່ໄວໜຸ່ມ ແລະ ການພັດທະນາແບບຍືນຍົງ ເຊິ່ງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ຂອງລັດຖະບານ (ກະຊວງແຜນການ ແລະ ການລົງທຶນ, 2021a), ເຊິ່ງໄດ້ກຳນົດໃຫ້ ໄວໜຸ່ມເປັນໜຶ່ງໃນສາມຕົວຂັບເຄື່ອນສຳຄັນຂອງການພັດທະນາໃນໄລຍະ 2021-2025,ຄຽງຄູ່ໄປກັບຊັບພະຍາກອນທຳມະຊາດ ແລະ ທີ່ຕັ້ງຍຸດທະສາດ. ແຜນການດັ່ງກ່າວໄດ້ລະບຸວ່າ:

**"ປະເທດລາວມີໂອກາດທີ່ດີ ທີ່ຈະໄດ້ຮັບຜົນປະໂຫຍດຈາກການມີປະຊາກອນໄວຫນຸ່ມທີ່ມີຄວາມສົດໃສລວມທັງແຮງງານເຄື່ອນຍ້າຍທີ່ສາມາດປະກອບສ່ວນເຂົ້າໃນການພັດທະນາເພື່ອຊຸກຍູ້ໃຫ້ມີການເຕີບໂຕຢ່າງໄວວາ. ເພື່ອບັນລຸໄດ້ຕາມຈຸດປະສົງດັ່ງກ່າວ, ຮຽກຮ້ອງໃຫ້ມີການລົງທຶນຢ່າງມີປະສິດທິຜົນໃນຂະແໜງສາທາລະນະສຸກ ແລະ ຂະແໜງການສຶກສາໃນທຸກລະດັບ ທັງໃນດ້ານປະລິມານ ແລະ ຄຸນນະພາບເພື່ອສ້າງກາລະໂອກາດ ແລະ ການລົງທຶນທີ່ມີຈຸດສຸມ ແລະ ມີປະສິດທິຜົນເພື່ອຮັບປະກັນຜົນປະໂຫຍດສູງສຸດ."**

ບົດລາຍງານການພັດທະນາມະນຸດແຫ່ງຊາດສະບັບນີ້ ໄດ້ໃຊ້ວິທີການທາງດ້ານແນວຄວາມຄິດ

1 ສຳລັບຈຸດປະສົງທາງສະຖິຕິ, ອົງການສະຫະປະຊາຊາດກຳນົດເອົາ ເຢົາວະຊົນ ໝາຍເຖິງບຸກຄົນທີ່ມີອາຍຸ ແຕ່ 10 ຫາ 19 ປີ ແລະ ໄວໜຸ່ມ ໝາຍເຖິງບຸກຄົນທີ່ມີອາຍຸ ແຕ່ 15 ຫາ 24 ປີ.

(conceptual approach) ຜ່ານການຕັ້ງຄຳຖາມທີ່ວ່າ: ເປັນຫຍັງຕ້ອງແມ່ນໄວໜຸ່ມ? ເປັນຫຍັງຕ້ອງເລີ່ມຕອນນີ້? ແລະ ເປັນຫຍັງຕ້ອງແມ່ນການພັດທະນາມະນຸດ? ຄຳຕອບຂອງຄຳ ຖາມທຳອິດ ສາມາດເຫັນໄດ້ຈາກປະຊາກອນໄວໜຸ່ມຈຳນວນຫລາຍຂອງ ສປປ ລາວ ແລະ ການຫັນປ່ຽນທາງດ້ານປະຊາກອນທີ່ກຳລັງຈະເກີດຂຶ້ນ. ຄຳຖາມທີສອງ ສະທ້ອນໃຫ້ເຫັນເຖິງຄວາມຮີບດ່ວນຂອງການຈັດລຳດັບຄວາມສຳຄັນຂອງການລົງທຶນໃນເຍົາວະຊົນ ແລະ ໄວໜຸ່ມບົດພື້ນຖານຂອງຄວາມໄດ້ປຽບທາງດ້ານປະຊາກອນ ແລະ ບັນຫາທີ່ຈຳກັດຄວາມໄດ້ປຽບດັ່ງກ່າວ. ສ່ວນຄຳຖາມທີສາມແມ່ນເນັ້ນໄປເຖິງວິທີການພັດທະນາມະນຸດທີ່ສຸມໃສ່ຄວາມສາມາດທີ່ຈຳ ເປັນສຳລັບເຍົາວະຊົນ ແລະ ໄວໜຸ່ມ ແລະ ອະນາຄົດຂອງ ສປປ ລາວ ໂດຍລວມ.

## 1.1. ໄລຍະເວລາຂອງການຫັນປ່ຽນທາງດ້ານປະຊາກອນ

ເຖິງວ່າ ສປປ ລາວ ຈະປະເຊີນກັບສິ່ງທ້າທາຍຫຼາຍຢ່າງກໍ່ຕາມ, ແຕ່ກໍ່ໄດ້ກ້າວເຂົ້າສູ່ໄລຍະຫັນປ່ຽນທາງດ້ານປະຊາກອນ (ຮູບ 1.1) ທີ່ເປີດໂອກາດໃຫ້ມີການຟື້ນຕົວຈາກວິກິດການທີ່ເກີດຂຶ້ນໃນໄລຍະຜ່ານມາ ແລະ ພັດທະນາມະນຸດໃຫ້ມີຄວາມກ້າວໜ້າ.

### ຮູບ 1.1: ການຫັນປ່ຽນທາງດ້ານປະຊາກອນຂອງ ສປປ ລາວ ແລະ ໄລຍະເວລາຂອງຄວາມໄດ້ປຽບດ້ານປະຊາກອນ

ແຫຼ່ງຂໍ້ມູນ: ການຄິດໄລ່ຂອງ UNDP ໂດຍໃຊ້ຂໍ້ມູນຈາກພະແນກປະຊາກອນຂອງສະຫະປະຊາຊາດ.




ປັດຈຸບັນ, ສປປ ລາວ ພວມຢູ່ໃນໄລຍະການຫັນປ່ຽນທາງດ້ານປະຊາກອນ ໂດຍມີອັດຕາສ່ວນການເພິ່ງພາອາໄສທີ່ຫຼຸດລົງ. ໃນລະຫວ່າງປີ 2015 ຫາ 2030, ປະຊາກອນໃນໄວເຮັດວຽກຈະເພີ່ມຂຶ້ນຈາກ 4,1 ລ້ານຄົນເປັນ 5,5 ລ້ານຄົນ (MPI ແລະ UNFPA, 2020). ສປປ ລາວ ມີໂອກາດປ່ຽນ ການຫັນປ່ຽນດ້ານປະຊາກອນເປັນ 'ຜົນປະໂຫຍດດ້ານປະຊາກອນ' ເຊິ່ງປະຊາກອນໃນໄວເຮັດວຽກສາມາດມີສ່ວນຮ່ວມເພີ່ມຂຶ້ນຢ່າງມີປະສິດທິຜົນໃນດ້ານເສດຖະກິດ ແລະ ຊຸກຍູ້ການເຕີບໂຕຂອງເສດຖະກິດ ແລະ ການພັດທະນາແບບຍືນຍົງໄດ້ຢ່າງກວ້າງຂວາງ.

ໂດຍທົ່ວໄປແລ້ວ, ຜົນປະໂຫຍດດັ່ງກ່າວນີ້ ເປັນດັ່ງໂອກາດຄັ້ງສຳຄັນອັນໜຶ່ງດຽວໃນຊີວິດ ເນື່ອງຈາກໂອກາດທາງປະຊາກອນແມ່ນມີຂອບເຂດດ້ານເວລາ. ອີງຕາມຂໍ້ມູນດ້ານປະຊາກອນ ແລະ ຂໍ້ມູນຈາກການສຳຫຼວດຄົວເຮືອນຂອງ ສປປ ລາວ, ໂອກາດດັ່ງກ່າວໄດ້ເລີ່ມຂະຫຍາຍອອກຕັ້ງແຕ່ປີ 2015 ເປັນຕົ້ນມາ ເນື່ອງຈາກມີປະຊາກອນໃນເກນອາຍຸເຮັດວຽກຫຼາຍຂຶ້ນ,ແຕ່ໂອກາດນີ້ ຈະເລີ່ມແຄບລົງຕັ້ງແຕ່ປີ 2040 ເປັນຕົ້ນໄປໃນການຮັບປະກັນຜົນປະໂຫຍດທາງດ້ານປະຊາກອນຢ່າງແທ້ຈິງແມ່ນຮຽກຮ້ອງໃຫ້ມີໂຄງການ ແລະ ການລົງທຶນຈາກຫຼາຍພາກສ່ວນ ແລະ ໃນຫຼາຍດ້ານເພື່ອສົ່ງເສີມທາງດ້ານສຸຂະພາບ, ການສຶກສາ, ທັກສະ ແລະ ການຈ້າງງານຂອງຜູ້ທີ່ກ້າວເຂົ້າສູ່ກຸ່ມປະຊາກອນໃນໄວເຮັດວຽກ.

ໄລຍະຂອງຄວາມໄດ້ປຽບທາງດ້ານປະຊາກອນທີ່ມີຢູ່ໃນໃນປັດຈຸບັນນີ້ ແມ່ນມີແຕ່ພຽງແຕ່ສອງທົດສະວັດຂ້າງຫນ້າເທົ່ານັ້ນ. ບົດລາຍງານສະບັບນີ້ ໄດ້ເນັ້ນໜັກເຖິງຄວາມຈຳເປັນໃນການປະຕິ ບັດງານໃນປະຈຸບັນ ເພື່ອຮັບປະກັນໃຫ້ ສປປ ລາວ ບໍ່ພາດໂອກາດທາງດ້ານປະຊາກອນ ເພາະຖ້າສູນເສຍໂອກາດນີ້ມັນຈະສົ່ງຜົນໃຫ້ເກີດຄວາມເສຍຫາຍດ້ານສະຫວັດດີການ ແລະ ການພັດທະນາແລະ ອາດຈະກໍ່ໃຫ້ເກີດຄວາມບໍ່ສະຫງົບໃນສັງຄົມ. ຄວາມບໍ່ສະຫງົບການເມືອງທີ່ຜ່ານມາໃນປະເທດອີຣ່ານ, ສີລັງກາ ແລະ ສະພາບ Arab Spring, ເຊິ່ງໄດ້ລະເບີດຂຶ້ນໃນທົ່ວໂລກອາຣັບໃນປີ 2011, ໄດ້ຢັ່ງຮາກຂອງຄວາມແຕກແຍກທາງ ເສດຖະກິດຈົນເຖິງການກີດກັນຊາວຫນຸ່ມ ບໍ່ໃຫ້ສາມາດບັນລຸເປົ້າໝາຍຕາມຄວາມຄາດຫວັງ.

ຮູບທີ 1.1

ການບັນລຸຜົນປະໂຫຍດທາງດ້ານປະຊາກອນຕ້ອງໃຊ້ວິທີການຫຼາຍດ້ານທີ່ສອດຄ່ອງກັບການພັດທະນາມະນຸດ. ການລົງທຶນໃນດ້ານການສຶກສາ,ສຸຂະພາບ ແລະ ທັກສະທີ່ມີຄຸນນະພາບແລະ ສ້າງວຽກເຮັດງານທຳທີ່ມີມູນຄ່າສູງໂດຍຜ່ານການຫັນ





ປ່ຽນທາງເສດຖະກິດ. ການລົງທຶນດ້ານການພັດທະນາມະນຸດທີ່ໄດ້ຮັບການເສີມຂະຫຍາຍໄດ້ເຮັດໃຫ້ປະເທດຕ່າງໆສາມາດເກັບກ່ຽວຜົນປະໂຫຍດທາງດ້ານປະຊາກອນ. ຕົວຢ່າງ: ຢູ່ໃນສາທາລະນະລັດເກົາຫຼີ, ອັດຕາສ່ວນການເພິ່ງພາອາໄສຂອງເດັກຢູ່ລະຫວ່າງ 74 ສ່ວນຮ້ອຍ ເຖິງ 81 ສ່ວນຮ້ອຍ ໃນຊຸມປີ 1960 ແຕ່ຫຼັງຈາກນັ້ນອັດຕາສ່ວນດັ່ງກ່າວໄດ້ຫຼຸດລົງຢ່າງຕໍ່ເນື່ອງເປັນ 22 ສ່ວນຮ້ອຍໃນປີ 2011 (UNDP, 2014).ການເຕີບໂຕຂອງເສດຖະກິດ ແມ່ນເລີ່ມຂຶ້ນໃນກາງຊຸມປີ 1960 ເຊິ່ງເກີດຂຶ້ນ ພາຍຫຼັງມີການລົງທຶນຂະໜາດໃຫຍ່ໃນຂະແໜງການສຶກສາ. ໃນປີ 1945, ປະຊາກອນສ່ວນໃຫຍ່ ບໍ່ໄດ້ເຂົ້າໂຮງຮຽນ; ໜ້ອຍກວ່າ 5 ສ່ວນຮ້ອຍ ໄດ້ຮັບການສຶກສາຊັ້ນມັດທະຍົມ ຫຼືຊັ້ນສູງ.ແຕ່ໃນປີ 1960, ການເຂົ້າຮຽນຊັ້ນປະຖົມໄດ້ເພີ່ມ ຂຶ້ນສາມເທົ່າ, ໂດຍມີ 96 ສ່ວນຮ້ອຍຂອງເດັກນ້ອຍໃນເກນອາຍຸຮຽນຢູ່ໃນຊັ້ນຮຽນປໍ 1 ຫາ ປໍ 6 (UNDP, 2014). ການເຂົ້າຮຽນຊັ້ນມັດທະຍົມເພີ່ມຂຶ້ນຫຼາຍກວ່າ 8 ເທົ່າ ແລະ ການສຶກສາຊັ້ນສູງເພີ່ມຂຶ້ນ 10 ເທົ່າ. ຮອດຕົ້ນຊຸມປີ 1990, ອັດຕາການຮຽນຈົບມັດທະຍົມປາຍແມ່ນ 90 ສ່ວນຮ້ອຍ. ການປະຕິວັດດ້ານການສຶກສານີ້ໄດ້ສືບຕໍ່ໄປເຖິງວ່າຈະພົບກັບໄລຍະຂອງຄວາມບໍ່ໝັ້ນຄົງທາງການເມືອງ, ຄວາມທຸກຍາກ ແລະ ສົງຄາມ.

ຕົວຢ່າງອີກອັນຫນຶ່ງແມ່ນຈາກປະເທດຈີນ.ໃນຊຸມປີ 1960, ອັດຕາສ່ວນການເພິ່ງພາອາ ໄສເດັກແມ່ນສູງກວ່າ 70 ສ່ວນຮ້ອຍ ແຕ່ເລີ່ມ ຫຼຸດລົງໃນກາງຊຸມປີ 1970, ກ່ອນເກີດການປະຕິຮູບດ້ານການຕະຫຼາດໃນປີ 1978, ແລະ ໃນປີ 2011 ອັດຕາສ່ວນດັ່ງກ່າວໄດ້ຫຼຸດລົງເຖິງ 26 ສ່ວນຮ້ອຍ (UNDP, 2014). ໃນປີ 1982, ເຊິ່ງເປັນປີທຳອິດທີ່ມີຂໍ້ມູນ, ການຮູ້ຫນັງສືຂອງແມ່ຍິງທີ່ເປັນຜູ້ໃຫຍ່ແມ່ນກວມ 51 ສ່ວນຮ້ອຍ, ແຕ່ໃນປີ 2000, ແມ່ນ 87 ສ່ວນຮ້ອຍ ແລະ ໃນປີ 2010 ແມ່ນມີຫຼາຍກວ່າ 91 ສ່ວນຮ້ອຍ. ໃນປີ 1997, ເຊິ່ງເປັນປີຫຼ້າສຸດທີ່ມີຂໍ້ມູນ, ອັດຕາການສຳເລັດການສຶກສາຊັ້ນປະຖົມ ໂດຍລວມ ແມ່ນກວມເອົາ 94 ສ່ວນຮ້ອຍ  ແລະ ສຳລັບ ແມ່ຍິງມີອັດຕາສ່ວນ 92 ສ່ວນຮ້ອຍ (UNDP, 2014). ການເຂົ້າຮຽນຊັ້ນປະຖົມສຳລັບທຸກຄົນ ສຳເລັດປະມານປີ 2007. ສະນັ້ນ, ຜົນສຳເລັດເຫຼົ່າ ນີ້ທີ່ສ່ອງແສງໃຫ້ເຫັນໃນການຂະຫຍາຍຕົວຂອງ ຂະແໜງການຜະລິດໃນໄລຍະສອງທົດສະວັດທີ່ຜ່ານມາບໍ່ແມ່ນເປັນຜົນມາຈາກການເຕີບໃຫຍ່ຂອງກຳລັງແຮງງານເທົ່ານັ້ນ,ແຕ່ຍັງມາຈາກການສຶກສາ ແລະ ການຜະລິດອີກດ້ວຍ.

### ເປັນຫຍັງຈຶ່ງໃຊ້ວິທີການການພັດທະນາມະນຸດກັບໄວໜຸ່ມ?

**ການມີສ່ວນຮ່ວມ ແລະ ການປະກອບສ່ວນຂອງໄວໜຸ່ມ ແມ່ນຈຳເປັນໃນການບັນລຸຈຸດປະສົງໃນການພັດທະນາມະນຸດທີ່ຍືນຍົງ. ເຖິງຢ່າງນັ້ນກໍຕາມ, ໂອກາດຂອງໄວໜຸ່ມໃນການປະກອບສ່ວນທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ແມ່ນຍັງຕໍ່າ ຫຼື ບໍ່ມີເລີຍ. ຫ້ອງການບົດລາຍງານການພັດທະນາມະນຸດ UNDP**

ການຕັດສິນໃຈໃຫ້ບົດລາຍງານການພັດທະນາມະນຸດແຫ່ງຊາດສະບັບນີ້ ສຸມໃສ່ໄວໜຸ່ມ ແມ່ນເກີດຂຶ້ນຈາກການຮັບຮູ້ເຖິງຄວາມຈຳເປັນອັນຮີບດ່ວນໃນການລົງທຶນໃສ່ໄວໜຸ່ມໃນບໍລິບົດ ທີ່ກວ້າງຂຶ້ນຂອງການພັດທະນາມະນຸດ, ໂດຍສະເພາະແມ່ນໃນສະພາບຂອງຄວາມບໍ່ໝັ້ນຄົງທາງເສດຖະກິດ, ຜົນກະທົບສະສົມ ແລະ ຄວາມບໍ່ແນ່ນອນທີ່ເກີດຂຶ້ນໃໝ່. ໃນນັ້ນ, ສາມາດ ສັງລວມໄດ້ສອງມິຕິທີ່ມີຄວາມສຳຄັນສະເພາະ. ມິຕິທຳອິດແມ່ນການຮັບຮູ້ເຖິງສິດ ແລະ ທ່າແຮງຂອງເຍົາວະຊົນ ແລະ ໄວໜຸ່ມ. ມິຕິທີສອງແມ່ນຕິດພັນ ກັບການຮັບປະກັນໃຫ້ເຂົາເຈົ້າມີຄວາມສາມາດທີ່ແທດເໝາະ ເພື່ອກອບໂກຍເອົາຜົນປະໂຫຍດສູງ ສຸດດ້ານປະຊາກອນທີ່ກຳລັງມີການຫັນປ່ຽນ.

ທິດທາງດ້ານການພັດທະນາມະນຸດ ແມ່ນການສະແດງເຖິງການຫັນປ່ຽນທີ່ເປັນແບບແຜນ ຈາກການຖືເອົາການພັດທະນາເສດຖະກິດເປັນອັນດັບໜຶ່ງໄປສູ່ການຖືເອົາຄົນເປັນສິ່ງສຳຄັນເໜືອສິ່ງອື່ນໃດ. ໃນເມື່ອກ່ອນ, ການເຕີບໂຕທາງດ້ານເສດຖະກິດທີ່ວັດແທກດ້ວຍ GDP ໄດ້ຖືວ່າແທດເໝາະທີ່ສຸດໃນການພັດທະນາທີ່ດີທີ່ສຸດ. ທິດທາງທີ່ເລັ່ງໃສ່ການສ້າງລາຍຮັບດັ່ງກ່າວນີ້ ໄດ້ເຮັດໃຫ້ສາມາດຮັບເອົາເງິນຕາເຂົ້າມາພາຍຫຼັງສົງຄາມໂລກຄັ້ງທີ 2 ໃນຂະນະທີ່ການກໍ່ສ້າງເສດຖະກິດທີ່ເຂັ້ມແຂງຖືກວາງໃຫ້ເປັນເປົ້າຫມາຍສູງສຸດຮ່ວມກັບການສ້າງຄວາມຈະເລີນຮຸ່ງເຮືອງ ແລະ ສັນຕິພາບໃນແຕ່ລະໄລຍະ. ເມື່ອເວລາຜ່ານໄປ, ການເຕີບໂຕທາງດ້ານເສດຖະກິດກາຍເປັນຕົວແທນທີ່ບໍ່ສົມບູນແບບຂອງສະຫວັດດີການ ຍ້ອນວ່າມັນຍັງບໍ່ສາມາດຕອບຄຳຖາມທີ່ງ່າຍດາຍແຕ່ສຳຄັນທີ່ວ່າ ໃນການວັດແທກດ້ວຍ GDP ນີ້ມັນເຮັດໃຫ້ຊີວິດຂອງມະນຸດໃຫ້ດີຂຶ້ນ ຫຼື ບໍ ແລະ ປະເທດຕ່າງໆກຳລັງວັດແທກໃນສິ່ງທີ່ຖືກຕ້ອງແລ້ວ ຫຼື ບໍ.

ໃນດ້ານຫຼັກການ, ການພັດທະນາມະນຸດແມ່ນຕິດພັນກັບ "ການຂະຫຍາຍທາງເລືອກຂອງປະຊາຊົນ" (UNDP, 1990). ການພັດທະນາມະນຸດ ເຮັດໃຫ້ເກີດສະຫວັດດີການ ແລະ ເສລີພາບໃຫ້ແກ່ມະນຸດ, ໂດຍສະເພາະ, ສິດເສລີພາບ ໃນການໃຊ້ທ່າ ແຮງຢ່າງເຕັມສ່ວນຂອງຊີວິດມະນຸດທຸກຄົນ ທັງໃນປັດຈຸບັນ ແລະ ອະນາຄົດ, ເຊິ່ງເປັນເປົ້າຫມາຍ ສູງສຸດຂອງຄວາມພະຍາຍາມ ໃນການພັດທະນາ. ໃນຂະບວນການດັ່ງກ່າວ, ປະຊາຊົນຄວນສ້າງຄວາມສາມາດເພື່ອປັບປຸງຊີວິດການເປັນຢູ່ ແລະ ຊຸມຊົນຂອງຕົນ. ດັ່ງທີ່ Amartya Sen ຜູ້ທີ່ໄດ້ຮັບລາງວັນໂນແບລ ແລະ ເປັນນັກເສດຖະສາດໄດ້ກ່າວໄວ້ວ່າ: "ປະຊາຊົນຕ້ອງຖືກເຫັນວ່າມີສ່ວນຮ່ວມຢ່າງຫ້າວຫັນໃນການກໍານົດສະຕາກໍາຂອງຕົນເອງບົນພື້ນຖານການໄດ້ຮັບໂອກາດ ບໍ່ພຽງແຕ່ເປັນຜູ້ຮັບຜົນຈາກໂຄງການພັດທະນາ ທີ່ສະຫຼາດແບບແກມໂກງ" (Sen, 1999). ການພັດທະນາຕົວແທນຕົນເອງ ແລະ ການຂະຫຍາຍທາງເລືອກຂອງໄວໜຸ່ມຄວນໄປຄຽງຄູ່ກັນ." ຫຼື ສໍາລັບຜູ້ທີ່ຈະເປັນຕົວແທນຕົນເອງ, ພວກເຂົາຕ້ອງຮັບຮູ້ສິດທິຂອງເຂົາເຈົ້າໃນການສຶກສາ, ການເຮັດວຽກທີ່ເຫມາະສົມ, ການເຂົ້າສັງຄົມ ແລະ ການສະແດງອອກ ແລະ ມີສິດເສລີພາບໃນການຕັດສິນໃຈທີ່ມີຄວາມຫມາຍກ່ຽວກັບຊີວິດຂອງເຂົາເຈົ້າ (Alkire and Deneulin, 2009). ໃນ ສປປລາວ, ການທີ່ສາມາດປະຕິບັດຕາມສິດທິທາງດ້ານສັງຄົມ, ເສດຖະກິດ ແລະ ສິດທິອື່ນໆຂອງທັງເຍົາວະຊົນ ແລະ ໄວໜຸ່ມໄດ້ ເທົ່າກັບວ່າສາມາດເຮັດໃຫ້ສິດທິຂອງປະຊາກອນ ເຖິງເຄິ່ງໜຶ່ງເປັນຈິງ.




ປະຊາຊົນ ຫຼາຍກວ່າ ເຄິ່ງຫນຶ່ງ ແມ່ນມີ ອາຍຸຕໍ່າກວ່າ 25 ປີ

ການສຶກສາເບິ່ງບັນຫາຂອງໄວຫນຸ່ມຈາກທັດສະນະຂອງການພັດທະນາມະນຸດ ແມ່ນມີຄວາມສໍາຄັນເປັນພິເສດ ຍ້ອນສາມເຫດຜົນຫຼັກ. ເຫດຜົນທີໜຶ່ງ, ໄວໜຸ່ມໄດ້ຮັບຜົນກະທົບແບບບໍ່ສົມສ່ວນຈາກວິກິດດ້ານສັງຄົມ, ເສດຖະກິດ ແລະ ດິນຟ້າອາກາດ. ຕົວຢ່າງ ວິກິດການທາງດ້ານການເງິນໂລກປີ 2008 ໄດ້ຂະຫຍາຍຊ່ອງຫວ່າງດ້ານຄວາມຮັ່ງມີລະຫວ່າງຄົນຮຸ່ນຫນຸ່ມ ແລະ ຄົນຮຸ່ນເກົ່າ ແລະ ສ້າງສະຖິຕິການວ່າງງານຂອງໄວຫນຸ່ມທີ່ສູງ (Junankar, 2015).ຜົນກະທົບຈາກບັນຫານີ້ສືບຕໍ່ເປັນເງົາຕິດຕາມມາເປັນເວລາຫຼາຍພັນປີຕໍ່ການມີວຽກເຮັດງານທໍາຂອງຄົນ ເຖິງແມ່ນວ່າເສດຖະກິດຈະໄດ້ຮັບການປັບປຸງດີຂຶ້ນກໍຕາມ (Better Markets, 2015). ເນື່ອງຈາກໄວໜຸ່ມໄດ້ຮັບຜົນກະທົບຫຼາຍຂຶ້ນໃນໄລຍະຍາວ, ການສ້າງຄວາມສາມາດໃນການຟື້ນຕົວໃຫ້ແກ່ເຂົາເຈົ້າແມ່ນກຸນແຈສໍາຄັນໂດຍເນັ້ນໃສ່ "ວິທີການໃດກໍໄດ້ໃນການຮັບປະກັນ ແລະ ເຮັດໃຫ້ການພັດທະນາມະນຸດມີຄວາມຍືນຍົງ," ດັ່ງທີ່ບົດລາຍງານການພັດທະນາມະນຸດໂລກປີ 2014 ໄດ້ເນັ້ນໜັກໄວ້ (UNDP, 2014).

ເຫດຜົນທີສອງ, ການພັດທະນາມະນຸດ ແມ່ນມີຄວາມອ່ອນໄຫວຕໍ່ກັບເສັ້ນທາງທີ່ໄວຫນຸ່ມຜ່ານ. ໄວໜຸ່ມແມ່ນໄວທີ່ຢູ່ໃນໄລຍະຂ້າມຜ່ານຈາກເດັກນ້ອຍໄປເປັນຜູ້ໃຫຍ່. ສະນັ້ນ,ໃນໄລຍະການຂ້າມຜ່ານນີ້, ຖ້າຫາກວ່າປັດໄຈອື່ນໆຄືງທີ່, ການບັນລຸດ້ານການສຶກສາຂອງເຂົາເຈົ້າ ຈະໝາຍເຖິງການມີສຸຂະພາບທີ່ດີຂຶ້ນ, ມີໂອກາດເຮັດວຽກທີ່ດີຂຶ້ນ ແລະ ມີລາຍຮັບເພີ່ມຂຶ້ນ. ນີ້ກໍ່ໝາຍເຖິງວ່າ ໄວໜຸ່ມຈະໄດ້ຮັບໂອກາດຫຼາຍຂຶ້ນໃນການອອກຄວາມຄິດເຫັນຢ່າງມີຄວາມໝາຍ ແລະ ຂັບເຄື່ອນການປ່ຽນແປງຕົນເອງ ແລະ ສັງຄົມ. ຜົນກະທົບແບບເກາະກ່າຍກັນ (cascade effect) ຄືດັ່ງກ່າວນີ້ຍັງມີຜົນກະທົບໃນທິດທາງກົງກັນຂ້າມ, ທັງພາຍໃນ ແລະ ລະຫວ່າງຮຸ່ນຄົນ. ການລະດົມການລົງທຶນດ້ານສາທາລະນະສຸກ, ການສຶກສາ, ການພັດທະນາທັກສະ ແລະ ຄວາມສາມາດອື່ນໆສໍາລັບໄວໜຸ່ມ ຈະສາມາດທໍາລາຍວົງຈອນຄວາມທຸກຍາກໄດ້ໂດຍການຂະຫຍາຍທາງເລືອກ ແລະ ໂອກາດໃຫ້ແກ່ໄວໜຸ່ມ.

ສາເຫດສຸດທ້າຍ, ການພັດທະນາມະນຸດແມ່ນມີຄວາມສໍາຄັນໃນການແກ້ໄຂສິ່ງທ້າທາຍຂອງໄວຫນຸ່ມ ຍ້ອນມັນປຽບດັ່ງເປັນການວາງທິດທາງໃນອະນາຄົດ. ໄວໜຸ່ມແມ່ນ 1 ສ່ວນ 5 ຂອງປະຊາກອນໂລກ ແລະ ຈະມີເວລາຢູ່ໃນໂລກນີ້ດົນທີ່ສຸດ. ທຸກໆນະໂຍບາຍຈະສົ່ງຜົນກະທົບຕໍ່ພວກເຂົາໃນໄລຍະໜຶ່ງຂອງຊີວິດພວກເຂົາ ດັ່ງນັ້ນພວກເຂົາຄວນຈະເປັນໃຈກາງຂອງການອອກແບບນະໂຍບາຍເຫຼົ່ານີ້ ແລະ ການຕັດສິນໃຈກ່ຽວກັບປັດຈຸບັນ ແລະ ອະນາຄົດຂອງພວກເຂົາ. ວິທີການພັດທະນາມະນຸດ ແມ່ນເນັ້ນໜັກໃສ່ໄວໜຸ່ມເປັນໂຕແທນໃຫ້ຕົນເອງໂດຍມີຈຸດປະສົງເພື່ອໃຫ້ໄວໜຸ່ມສາມາດກໍານົດ ແລະ ເປັນຜູ້ນໍານະໂຍບາຍ ແລະ ແຜນງານທີ່ເນັ້ນໃສ່ໄວໜຸ່ມ.

ທັງຢູ່ໃນ ສປປ ລາວ ແລະ ໃນທົ່ວໂລກ, ມີພຽງແຕ່ ວິທີການທີ່ແນໃສ່ອະນາຄົດ, ຖືເອົາຄົນເປັນໃຈກາງຂອງການພັດທະນາມະນຸດ, ຍົກສູງດ້ານການເປັນຕົວແທນຕົນເອງ ແລະ ຄວາມສາມາດຟື້ນຕົວຂອງໄວໜຸ່ມ ພ້ອມທັງຄໍານຶງເຖິງທຸກປັດໄຈທີ່ສົ່ງຜົນກະທົບຕໍ່ຊີວິດຂອງໄວໜຸ່ມເທົ່ານັ້ນ ທີ່ຈະສາມາດຊ່ວຍແກ້ໄຂອຸປະສັກທາງດ້ານໂຄງສ້າງທີ່ໄວໜຸ່ມພວມປະເຊີນໃນທຸກມື້ນີ້ໄດ້. ຖ້າໄວຫນຸ່ມສາມາດໃຊ້ຄວາມສາມາດຂອງເຂົາເຈົ້າໄດ້ຢ່າງເຕັມທີ່ ແລະ ໄດ້ຮັບການປົກປ້ອງຈາກຄວາມສ່ຽງ, ເຂົາເຈົ້າຈະສາມາດກໍານົດອະນາຄົດຂອງເຂົາເຈົ້າເອງ. ສະນັ້ນ, ຈຶ່ງມີ ສີ່ ດ້ານທີ່ສໍາຄັນພິເສດ ຕໍ່ການວິເຄາະການພັດທະນາມະນຸດໃນບົດລາຍງານນີ້ ກໍ່ຄື: ຄວາມສະເຫມີພາບ, ປະສິດທິພາບ, ການມີສ່ວນຮ່ວມ ແລະ ຄວາມຍືນຍົງ.





"ປະຊາຊົນຕ້ອງຖືກເຫັນວ່າ ມີສ່ວນຮ່ວມຢ່າງຫ້າວຫັນໃນການກໍານົດສະຕາກໍາຂອງຕົນເອງບົນພື້ນຖານການໄດ້ຮັບໂອກາດ ບໍ່ພຽງແຕ່ເປັນຜູ້ຮັບຜົນຈາກໂຄງການພັດທະນາທີ່ສະຫຼາດແບບແກມໂກງ."
– Amartya Sen



©UNFPA Laos

***ຄວາມສະເໝີພາບ*** ແມ່ນຮາກຖານ ຢູ່ໃນແນວຄວາມຄິດຂອງຄວາມຍຸຕິທຳ, ຄວາມທ່ຽງທຳ ແລະ ຄວາມເປັນທຳ, ແລະ ຂຶ້ນກັບຄວາມຍຸຕິທຳທີ່ສະໜອງໃຫ້ລະຫວ່າງກຸ່ມຄົນຢ່າງເທົ່າທຽມ. ເພື່ອບັນລຸໄດ້ຕາມຈຸດປະສົງດັ່ງກ່າວ ອາດຈະຮຽກຮ້ອງໃຫ້ມີການດຳເນີນການຢ່າງໜັກແໜ້ນ ຫຼື ມີມາດຕະການພິເສດເພື່ອຮັບປະກັນໃຫ້ຜູ້ທີ່ໄດ້ຮັບໂອກາດບໍ່ເທົ່າທຽມກັບຄົນອື່ນ ບົນພື້ນຖານຢ່າງໃດຢ່າງໜຶ່ງ ຫຼື ປະສົມປະສານລະຫວ່າງ ຄວາມພິການ, ຊົນເຜົ່າ, ເພດ, ຄວາມທຸກຍາກ ຫຼື ປັດໄຈອື່ນໆ, ໃຫ້ເຂົາເຈົ້າມີຄວາມອາດສາມາດຄືກັນ.

***ປະສິດທິພາບ*** ຫມາຍເຖິງວິທີການທີ່ມີຄ່າໃຊ້ຈ່າຍ ຫນ້ອຍໃນການຂະຫຍາຍຄວາມອາດສາມາດສຳລັບທຸກຄົນ ໂດຍຜ່ານການນຳໃຊ້ຊັບພະຍາກອນມະນຸດ, ວັດຖຸ, ສິ່ງແວດລ້ອມ ແລະ ສະຖາບັນໃຫ້ເກີດປະໂຫຍດສູງສຸດ.

***ການມີສ່ວນຮ່ວມ*** ແລະ ການສ້າງຄວາມເຂັ້ມແຂງ ໝາຍເຖິງປະຊາຊົນມີອິດສະຫຼະພາບ ແລະ ເປັນຕົວແທນຕົນເອງໃນການຕັດສິນໃຈທີ່ສົ່ງຜົນກະທົບຕໍ່ເຂົາເຈົ້າ, ໃຫ້ຜູ້ອື່ນຮັບຜິດຊອບຕໍ່ໜ້າທີ່ຮັບຜິດຊອບຂອງເຂົາເຈົ້າ ແລະ ມີອິດທິພົນ ແລະ ນຳພາຂະບວນການພັດທະນາ; ຊ່ວຍເສີມສ້າງ ການມີສ່ວນຮ່ວມໃນໂຄງການ, ນະໂຍບາຍ ແລະ ກິດຈະກຳທີ່ປະຊາຊົນສາມາດບັນລຸເປົ້າຫມາຍທີ່ເຂົາເຈົ້າໃຫ້ຄວາມສຳຄັນ.

ສຸດທ້າຍ, ***ຄວາມຍືນຍົງ*** ແມ່ນການຖືເອົາຄວາມສຳຄັນຂອງການບັນລຸເປົ້າໝາຍການພັດທະນາ ທີ່ຕອບສະໜອງຄວາມຕ້ອງການໃນປັດຈຸບັນ ໂດຍບໍ່ບັ່ນທອນຄວາມອາດສາມາດຂອງຄົນຮຸ່ນຫຼັງໃນການກະທຳສິ່ງດຽວກັນ. ໂດຍລວມແລ້ວ ຄວາມຍືນຍົງຫມາຍເຖິງການປະຕິບັດຕາມຈຸດປະສົງຂອງການພັດທະນາຂອງມະນຸດໂດຍບໍ່ເຮັດໃຫ້ຊັບພະຍາກອນທຳມະຊາດໝົດໄປ ແຕ່ກໍ່ຍັງມີຄວາມໝາຍອື່ນນອກຈາກນີ້. ຄວາມຍືນຍົງອາດຫມາຍເຖິງຄວາມຍືນຍົງທາງດ້ານການເງິນ ເຊັ່ນ: ການບໍ່ດຳເນີນໂຄງການ ທີ່ນຳໄປສູ່ກັບດັກຫນີ້ສິນ ຫຼື ຄວາມບໍ່ສະຖຽນລະພາບທາງດ້ານເສດຖະກິດ ຫຼື ມີຜົນກະທົບຕໍ່ຄວາມຍືນຍົງທາງດ້ານສັງຄົມ ເປັນຕົ້ນ ການຫຼີກລ່ຽງການກະທຳບາງຢ່າງທີ່ສົ່ງຜົນໃຫ້ມີຄວາມແຕກໂຕນຫຼາຍຂຶ້ນ ແລະ ເຮັດໃຫ້ຄົນກຸ່ມໃດກຸ່ມໜຶ່ງທຸກຍາກລົງ.

# 1.2 ຄຳນຶງເຖິງຜົນສຳເລັດ

ເພື່ອໃຫ້ເຂົ້າໃຈເຖິງສະພາບການພັດທະນາມະນຸດ ແລະ ສະຫວັດດີການຂອງເຍົາວະຊົນ ແລະ ໄວໜຸ່ມ ໃນ ສປປ ລາວ, ພວກເຮົາຕ້ອງຄົ້ນຄວ້າເບິ່ງສະພາບເສດຖະກິດ ແລະ ການພັດທະນາມະນຸດໂດຍລວມຂອງປະເທດກ່ອນ. ສາມທົດສະວັດທີ່ຜ່ານມາ ໄດ້ມີການເຕີບໂຕທາງດ້ານເສດຖະກິດ ແລະ ມີການພັດທະນາເສດຖະກິດ-ສັງຄົມຢ່າງໄວວາ. ແຕ່ໃນຊຸມປີມໍ່ໆມານີ້, ໄດ້ມີສິ່ງທີ່ໜ້າເປັນຫ່ວງເພີ່ມຂຶ້ນຕໍ່ກັບຄວາມຄືບໜ້າທີ່ຊ້າລົງ, ໂດຍສະເພາະແມ່ນ ຜົນກະທົບທີ່ບໍ່ເຄີຍມີມາກ່ອນຈາກການລະບາດຂອງພະຍາດໂຄວິດ-19 ໃນປັດຈຸບັນ.

## ຜົນໄດ້ຮັບທີ່ຫຼາກຫຼາຍຈາກປະສິດທິພາບທາງດ້ານເສດຖະກິດ

ອັດຕາການເຕີບໂຕ GDP ສະເລ່ຍຕໍ່ປີຂອງ ສປປ ລາວ ແມ່ນ 7 ສ່ວນຮ້ອຍ ໃນໄລຍະ 2009 ຫາ 2019 ສ່ວນໃຫຍ່ແມ່ນເນື່ອງຈາກ ການລົງທຶນຈາກຕ່າງປະເທດໃນຂະແໜງພະ ລັງງານໄຟຟ້ານ້ຳຕົກ ແລະ ບໍ່ແຮ່, ມີການເປີດ ເສດຖະກິດ ແລະ ການເຊື່ອມໂຍງກັບພາກພື້ນ ເທື່ອລະກ້າວ (ສະຫະປະຊາຊາດ, 2021). ໂດຍອີງໃສ່ເສັ້ນຄວາມທຸກຍາກແຫ່ງຊາດ ເຫັນວ່າຄວາມທຸກຍາກໄດ້ຫຼຸດລົງ ຈາກ 33.5 ສ່ວນຮ້ອຍ ໃນປີ 2002-2003 ເປັນ 18.6 ສ່ວນຮ້ອຍ ໃນປີ 2018-2019 (ສູນສະຖິຕິແຫ່ງຊາດ ແລະ ທະນາຄານໂລກ, 2020).

ໃນປີ 2026, ສປປ ລາວ ຄາດວ່າຈະຫຼຸດພົ້ນຈາກການເປັນປະເທດດ້ອຍພັດທະນາ. ໃນກອງປະຊຸມທົບທວນສາມປີ ໃນປີ 2018 ທີ່ໄດ້ຈັດຂຶ້ນໂດຍຄະນະກຳມາທິການເພື່ອການພັດທະນາຂອງສະຫະປະຊາຊາດ ເພື່ອປະເມີນສະຖານະພາບຂອງລາວ, ສປປ ລາວ ສາມາດບັນລຸ 2 ໃນ 3 ເງື່ອນໄຂຂອງການຫຼຸດພົ້ນເປັນຄັ້ງທຳອິດ. ເງື່ອນໄຂທີໜຶ່ງແມ່ນລວມຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ ແລະ ເງື່ອນໄຂທີສອງ ແມ່ນດັດຊະນີຊັບສິນ ມະນຸດທີ່ກວມເອົາຄວາມຄືບໜ້າໃນດ້ານການສຶກສາ ແລະ ສາທາລະນະສຸກ. ໃນການທົບທວນສາມປີ ໃນປີ 2021, ສປປ ລາວ ໄດ້ບັນລຸເງື່ອນ ໄຂການຫຼຸດພົ້ນທັງ 3 ເງື່ອນໄຂເປັນທີ່ສຳເລັດ ໂດຍ ສາມາດປະຕິບັດໄດ້ດີໃນເງື່ອນໄຂດ້ານດັດຊະນີຄວາມສ່ຽງທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມ ເຊິ່ງໄດ້ມີການປະເມີນການເພິ່ງພາອາໄສຕໍ່ກະສິກຳ ແລະ ຄວາມສ່ຽງຕໍ່ໄພທຳມະຊາດ. ໃນຕົ້ນປີ 2021, ຄະນະກຳມະການນະໂຍບາຍການພັດທະນາ ໄດ້ປະກາດໃຫ້ ສປປ ລາວ ຫຼຸດພົ້ນ ໂດຍມີການຂະຫຍາຍໄລຍະເວລາອອກເປັນ 5 ປີ ເພື່ອກະກຽມຫຼຸດພົ້ນຢ່າງສົມບູນ ເຊິ່ງສະທ້ອນໃຫ້ເຫັນເຖິງຜົນກະທົບທີ່ຮຸນແຮງ ແລະ ຕໍ່ເນື່ອງຂອງພະຍາດໂຄວິດ-19 (ສະມັດຊາໃຫຍ່ສະຫະປະຊາຊາດ, 2021).

ຮູບແບບການເຕີບໂຕຂອງ ສປປ ລາວ ມີຄວາມສ່ຽງຫຼາຍດ້ານ. ການເຕີບໂຕແມ່ນອີງໃສ່ການຂະຫຍາຍຕົວຂອງຂະແໜງການທີ່ໃຊ້ທຶນຫຼາຍ ເຊັ່ນ: ການຂຸດຄົ້ນບໍ່ແຮ່ ແລະ ພະລັງງານນ້ຳຕົກ ແລະ ໂຄງລ່າງພື້ນຖານທີ່ກ່ຽວຂ້ອງອື່ນໆ. ຄວາມສ່ຽງດ້ານການເງິນລວມເຖິງການລະດົມລາຍຮັບຕ່ຳ (ຕົ້ນຕໍແມ່ນມາຈາກການຍົກເວັ້ນອາກອນໃຫ້ນັກລົງທຶນລາຍໃຫຍ່) ແລະ ໜີ້ສິນສະສົມ ເນື່ອງຈາກການກູ້ຢືມຈາກພາຍນອກເພື່ອສະໜອງທຶນໃຫ້ແກ່ໂຄງການກໍ່ສ້າງພື້ນຖານໂຄງລ່າງສ່ວນໃຫຍ່, ໂດຍສະເພາະໃນຂະແໜງໄຟຟ້ານ້ຳຕົກ. ນອກຈາກນັ້ນ, ການເຕີບໂຕທາງດ້ານເສດຖະກິດ ຍັງຂຶ້ນກັບການປ່ຽນແປງຂອງລາຄາບໍ່ແຮ່ ແລະ ໄຟຟ້າ ແລ ສະພາບດິນຟ້າອາກາດ (Warr, Rasphone and Menon, 2015). ການຫັນປ່ຽນດ້ານໂຄງສ້າງແມ່ນຊັກຊ້າ. ສ່ວນແບ່ງກະສິກຳໃນ GDP ຫຼຸດລົງຈາກ 17 ສ່ວນຮ້ອຍ ໃນປີ 2016 ເປັນ 15 ສ່ວນຮ້ອຍ ໃນປີ 2020; ອຸດສາຫະກຳເພີ່ມຂຶ້ນຈາກ 29 ສ່ວນຮ້ອຍ ເປັນ 32ສ່ວນຮ້ອຍ ແລະ ການບໍລິການຍັງຄົງຢູ່ທີ່ປະມານ 42 ສ່ວນຮ້ອຍ ໃນໄລຍະດຽວກັນ (ສະຫະປະຊາຊາດ, 2021; IMF, 2019).




**ຂະແໜງການບໍລິການກວມເອົາ 26 ສ່ວນຮ້ອຍຂອງການຈ້າງງານ, ເພີ່ມຂຶ້ນຈາກ 19 ສ່ວນຮ້ອຍ ໃນປີ 2008,**

ເຖິງວ່າຈະມີອັດຕາການເຕີບໂຕຢ່າງຫຼວງຫຼາຍ, ແຕ່ກໍບໍ່ໄດ້ສ້າງວຽກເຮັດງານທຳຫຼາຍເທົ່າທີ່ຄວນ. ກະສິກຳຍັງຄົງເປັນຂະແໜງຈ້າງງານທີ່ໃຫຍ່ທີ່ສຸດ ກວມ 61 ສ່ວນຮ້ອຍ ຂອງກຳລັງແຮງງານທັງຫມົດ (ຫຼຸດລົງຈາກ 74 ສ່ວນຮ້ອຍ ໃນປີ 2008). ຂະແໜງການບໍລິການກວມເອົາ 26 ສ່ວນຮ້ອຍ ຂອງການຈ້າງງານ, ເພີ່ມຂຶ້ນຈາກ 19 ສ່ວນຮ້ອຍ ໃນປີ 2008, ແລະ ອຸດສາຫະກຳກວມເອົາສ່ວນທີ່ເຫຼືອ 13 ສ່ວນຮ້ອຍ (IMF, 2019). ຄວາມພະຍາຍາມລະດົມການລົງທຶນໂດຍກົງຈາກຕ່າງປະເທດເພື່ອການຜະລິດໄດ້ປະເຊີນກັບສິ່ງກີດຂວາງ ເຊັ່ນ: ປະສິດທິພາບແຮງງານຕ່ຳ, ການເຂົ້າເຖິງວັດຖຸດິບທີ່ຈຳກັດ ແລະ ສະພາບແວດລ້ອມການດຳເນີນທຸລະກິດທີ່ບໍ່ສະດວກ. ຂະແໜງອຸດສາຫະກຳຕົ້ນຕໍປະກອບດ້ວຍໄຟຟ້າ, ບໍ່ແຮ່ ແລະ ທຸລະກິດກໍ່ສ້າງ/ໂຄງລ່າງພື້ນຖານ ແລະ ຂະແໜງການຜະລິດມີໃນອັດຕາສ່ວນນ້ອຍ. ການບໍລິການ, ການທ່ອງທ່ຽວ ແລະ ກິດຈະກຳທີ່ກ່ຽວຂ້ອງ ແມ່ນຂະແໜງການທີ່ມີທ່າແຮງ ແລະ ຂະຫຍາຍຕົວແຕ່ໄດ້ຮັບຜົນກະທົບຢ່າງຮ້າຍແຮງຈາກ COVID-19 (IMF, 2019). ສິ່ງທ້າທາຍເຫຼົ່ານີ້ໄດ້ສະທ້ອນໃຫ້ເຫັນຢູ່ໃນບົດລາຍງານການພັດທະນາມະນຸດແຫ່ງຊາດຄັ້ງທີ 4 ຂອງ ສປປ ລາວ ໃນຫົວຂໍ້ ການຈ້າງງານ ແລະ ຊີວິດການເປັນຢູ່ ທີ່ໄດ້ພິມເຜີຍແຜ່ຫຼາຍກວ່າ 10 ປີທີ່ຜ່ານມາເຊິ່ງໄດ້ໃຫ້ຂໍ້ມູນວ່າ:

> **“ແຮງງານຫຼາຍກວ່າ 75 ສ່ວນຮ້ອຍສືບຕໍ່ດຳລົງຊີວິດເປັນຊາວກະສິກອນ ເຊິ່ງນີ້ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ການເຕີບໂຕທາງດ້ານເສດຖະກິດບໍ່ໄດ້ສ້າງວຽກເຮັດງານທຳ. ປະສິດທິພາບແຮງງານໃນຂົງເຂດກະສິກຳ ແມ່ນໜ້ອຍກວ່າຂົງເຂດທີ່ບໍ່ແມ່ນກະສິກຳ 4-10 ເທົ່າ, ສະນັ້ນມາດຕະຖານຊີວິດການເປັນຢູ່ໃນຊົນນະບົດຍັງຕ່ຳກວ່າຕົວເມືອງ. ອັດຕາສ່ວນຊັບພະຍາກອນທຳມະຊາດຕໍ່ປະຊາກອນທີ່ຫຼຸດລົງ ໄດ້ເຮັດໃຫ້ຊີວິດການເປັນຢູ່ໃນຊົນນະບົດເຄັ່ງຕຶງຕື່ມອີກ. ຢ່າງໃດກໍຕາມ, ອັດຕາຄວາມທຸກຍາກໄດ້ຫຼຸດລົງ ແຕ່ບໍ່ແມ່ນຍ້ອນການຈ້າງງານ. ຂະແໜງການທີ່ເຕີບໂຕສູງ ແລະ ໃຫ້ຜົນຜະລິດສູງຍັງບໍ່ທັນໄດ້ສ້າງການຈ້າງງານຫຼາຍ (UNDP, 2009, ໜ້າ 23).”**

ຄວາມກັງວົນອີກອັນຫນຶ່ງແມ່ນການເຕີບໂຕຍັງບໍ່ທັນກວມເອົາທຸກພາກສ່ວນ. ໃນຂະນະທີ່ຄວາມທຸກຍາກຫຼຸດລົງ, ຄວາມບໍ່ສະເຫມີພາບດ້ານລາຍຮັບໄດ້ເພີ່ມຂຶ້ນ. ຕາມການວັດແທກໂດຍດັດຊະນີ Gini, ຄວາມບໍ່ສະເໝີພາບໄດ້ເພີ່ມຂຶ້ນຈາກ 36,0 ໃນສົກປີ 2012-2013 ເປັນ 38,8 ໃນສົກປີ 2018-2019 (ສູນສະຖິຕິແຫ່ງຊາດ ແລະ ທະນາຄານໂລກ, 2020). ໃນໄລຍະນີ້,ການເຕີບໂຕຂອງລາຍຮັບຂອງປະຊາຊົນກຸ່ມລຸ່ມ 40 ສ່ວນຮ້ອຍ ແມ່ນມີ 2.1 ສ່ວນຮ້ອຍ, ເຊິ່ງຕ່ຳກວ່າອັດຕາການເຕີບໂຕສະເລ່ຍທີ່ເທົ່າກັບ 3.28 ສ່ວນຮ້ອຍ. ອັດຕາຊ່ອງຫວ່າງທາງດ້ານລາຍຮັບນີ້ ໄດ້ຊີ້ໃຫ້ເຫັນວ່າ ການເຕີບໂຕບໍ່ສູງພໍທີ່ຈະສາມາດການປິດຊ່ອງຫວ່າງທາງດ້ານລາຍໄດ້ສຳລັບຜູ້ທີ່ທຸກຍາກທີ່ສຸດ (ADB, 2017)

ຊັບພະຍາກອນທຳມະຊາດຂອງລາວ ແມ່ນແຫຼ່ງຄວາມຮັ່ງມີທີ່ສຳຄັນ ແລະ ສຳຄັນຕໍ່ເສດຖະກິດ, ການສະຫນອງສິນຄ້າ ແລະ ການບໍລິການທີ່ຈຳເປັນເພື່ອຫຼຸດຜ່ອນຄວາມທຸກຍາກ, ຮັບປະກັນດ້ານຊີວິດການເປັນຢູ່ ແລະ ການສົ່ງເສີມການເຕີບໂຕແບບຍືນຍົງ. ລະບົບນິເວດປ່າໄດ້ສະໜັບສະໜູນໃຫ້ແກ່ຂະແໜງເສດຖະກິດທີ່ສຳຄັນ ລວມທັງຂະແໜງພະລັງງານ, ກະສິກຳ ແລະ ການທ່ອງທ່ຽວ. ການເຕີບໂຕຂອງເສດຖະກິດຢ່າງຫຼວງຫຼາຍໃນທົດສະວັດທີ່ຜ່ານມາ ໄດ້ປະກອບສ່ວນເຮັດໃຫ້ຊັບພະຍາກອນທຳມະຊາດທີ່ຂະແໜງການເຫຼົ່ານີ້ນຳໃຊ້ມີການເຊື່ອມໂຊມ ແລະ ການຫຼຸດລົງ.

## ທ່າອ່ຽງຂອງການພັດທະນາມະນຸດ

ດັດຊະນີການພັດທະນາມະນຸດ (HDI) ວັດແທກສາມມາດຖານທີ່ສຳຄັນຂອງການພັດທະນາມະນຸດ ຄື: ການມີຊີວິດຍືນຍາວ ແລະ ສຸຂະພາບດີ (ວັດແທກໂດຍ ຄາດຄະເນອາຍຸຍືນສະເລ່ຍນະເວລາເກີດ), ຄວາມຮູ້ (ວັດແທກໂດຍ ຈຳນວນປີການຮຽນສະເລ່ຍຂອງເດັກນ້ອຍໃນເກນອາຍຸເຂົ້າໂຮງຮຽນ ແລະ ຈຳນວນປີການຮຽນສະເລ່ຍຂອງຂອງຜູ້ໃຫຍ່ທີ່ມີອາຍຸ 25 ປີຂຶ້ນໄປ) ແລະ ມາດຕະຖານການດຳລົງຊີວິດທີ່ເໝາະສົມ (ວັດແທກໂດຍ GNI ຕໍ່ຫົວຄົນປັບປຸງສຳລັບ PPP). ມາດຕະການ HDI ໄດ້ຖືກກຳນົດໄວ້ດັ່ງນີ້ (UNDP, 2020c):

— **ຄາດຄະເນອາຍຸຍືນສະເລ່ຍນະເວລາເກີດ:** ຈຳນວນປີທີ່ຄາດວ່າເດັກເກີດໃໝ່ຈະມີຊີວິດຢູ່ໄດ້ ຖ້າຮູບແບບອັດ ຕາການຕາຍສະເພາະອາຍຸນະເວລາເກີດແມ່ນຍັງຄື ເກົ່າຕະຫຼອດຊີວິດຂອງເດັກ.

— **ຄາດຄະເນຈຳນວນປີການຮຽນ:** ຈຳນວນປີທີ່ ເດັກໃນເກນອາຍຸເຂົ້າໂຮງຮຽນຄາດວ່າຈະໄດ້ຮັບການສຶກສາ ຖ້າຮູບແບບອັດຕາການເຂົ້າຮຽນໃນ ເກນອາຍຸຍັງຄືເກົ່າຢູ່ຕະຫຼອດຊີວິດຂອງເດັກ.

— **ຈຳນວນປີການຮຽນສະເລ່ຍ:** ຈຳນວນປີການຮຽນສະເລ່ຍສຳລັບຜູ້ທີ່ມີອາຍຸ 25 ປີຂຶ້ນໄປ, ເຊິ່ງຄິດໄລ່ຈາກລະດັບການສຶກສາທີ່ນຳໃຊ້ໄລຍະເວລາການສຶກສາທີ່ເປັນທາງການໃນແຕ່ລະຊັ້ນ.

— **GNI ຕໍ່ຫົວຄົນ:** ລາຍໄດ້ລວມຂອງເສດຖະກິດທີ່ເກີດຈາກການຜະລິດ ແລະ ການເປັນເຈົ້າຂອງປັດໄຈການຜະລິດ, ຫັກລາຍໄດ້ທີ່ຈ່າຍສຳລັບການນຳໃຊ້ປັດໄຈການຜະລິດໃນສ່ວນທີ່ເຫຼືອຂອງໂລກຫານໃຫ້ຈຳນວນປະຊາກອນໄວກາງຄົນເຊິ່ງປ່ຽນເປັນເງິນໂດລາໂດຍໃຊ້ ອັດຕາ PPP.

ສປປ ລາວ ໄດ້ຮັບຜົນປະໂຫຍດອັນໃຫຍ່ຫຼວງໃນການພັດທະນາມະນຸດໃນໄລຍະສາມທົດສະວັດທີ່ຜ່ານມາ (ຮູບ 1.2). ລະຫວ່າງປີ 1990 ຫາ 2021, ຄ່າ HDI ຂອງລາວເພີ່ມຂຶ້ນຈາກ 0,405 ເປັນ 0,607, ເພີ່ມຂຶ້ນ 49,9 ສ່ວນຮ້ອຍ. ນັບຕັ້ງແຕ່ປີ 1990, ຄາດຄະເນອາຍຸຍືນສະເລ່ຍນະເວລາເກີດໄດ້ເພີ່ມຂຶ້ນ 14,35 ປີ. ໃນລະຫວ່າງປີ 1990 ຫາ 2021, ຄາດຄະເນປີການຮຽນເພີ່ມຂຶ້ນ 2,28 ປີ ແລະ ຈຳນວນປີການຮຽນສະເລ່ຍເພີ່ມຂຶ້ນ 3,55 ປີ. GNI ຕໍ່ຫົວຄົນ (2017 PPP) ເພີ່ມຂຶ້ນເກືອບສາມເທົ່າ (296,1 ສ່ວນຮ້ອຍ) ເຊິ່ງຕົກເປັນ 7.699,58 ໂດລາ.

ຮູບ 1.2

ອີງຕາມບົດລາຍງານການພັດທະນາມະນຸດຂອງໂລກສະບັບຫຼ້າສຸດທີ່ອອກເຜີຍແຜ່ໃນປີ 2022, ເປັນຄັ້ງທຳອິດທີ່ມູນຄ່າ HDI ໂລກຫຼຸດລົງ ເນື່ອງຈາກການແຜ່ລະບາດຂອງພະຍາດ ໂຄວິດ-19 ເຮັດໃຫ້ຄ່າດັດຊະນີດັ່ງກ່າວກັບຄືນໄປເທົ່າກັບຄ່າໃນປີ 2015. 90 ສ່ວນຮ້ອຍ ຂອງບັນດາປະເທດເຫັນວ່າຄ່າ HDI ຂອງເຂົາເຈົ້າຫຼຸດລົງໃນປີ 2020 ຫຼື 2021 ຕໍ່າຫຼາຍກວ່າຕົວເລກຢູ່ໃນໄລຍະການປ່ຽນແປງຫຼັງຈາກວິກິດການການເງິນໂລກປີ 2008-2009 (UNDP, 2022b). ເກືອບທຸກປະເທດໄດ້ເຫັນການພັດທະນາມະນຸດທີ່ຫຼຸດໜ້ອຍຖອຍລົງໃນປີທຳອິດຂອງການແຜ່ລະບາດຂອງພະຍາດໂຄວິດ-19. ບັນດາປະເທດທີ່ HDI ຢູ່ໃນລະດັບຕໍ່າ, ປານກາງ ແລະ ສູງສ່ວນໃຫຍ່ ເຫັນວ່າມີການຫຼຸດລົງຢ່າງຕໍ່ເນື່ອງໃນປີທີສອງຂອງການລະບາດ (UNDP, 2022b) ເຊັ່ນດຽວກັບ ສປປ ລາວ (ຮູບ 1.2). ຄ່າ HDI ປີ 2021 ສຳລັບ ສປປ ລາວ ແມ່ນ 0,607, ເຊິ່ງຈັດໃຫ້ຢູ່ໃນໝວດການພັດທະນາມະນຸດລະດັບກາງ ແລະ ຈັດຢູ່ໃນອັນດັບ 140 ໃນ 189 ປະເທດ ແລະ ໃນພາກພື້ນ (UNDP, 2022b).

ຕາຕະລາງ 1.1

ຕາຕະລາງ 1.1 ສະໜອງລາຍລະອຽດກ່ຽວກັບທ່າອ່ຽງ HDI (2019-2021) ສຳລັບ ສປປ ລາວ, ເຊິ່ງສະແດງໃຫ້ເຫັນເຖິງຜົນກະທົບຂອງການແຜ່ລະບາດຂອງພະຍາດ ໂຄວິດ-19. ຄາດຄະເນອາຍຸຍືນສະເລ່ຍນະເວລາເກີດຫຼຸດລົງໃນປີ 2021, ສະແດງເຖິງຄວາມສ່ຽງດ້ານສຸຂະພາບໂດຍທາງກົງ ແລະ ທາງອ້ອມ ແລະ ຜົນກະທົບຕໍ່ການເສຍຊີວິດ. ການຫຼຸດລົງຂອງອາຍຸຍືນສະເລ່ຍທີ່ຫຼຸດລົງ 0,4 ປີ ແມ່ນບໍ່ເຄີຍມີມາກ່ອນ, ເຊິ່ງເປັນຄັ້ງທຳອິດໃນຮອບ 32 ປີ. ອາຍຸຍືນສະເລ່ຍໃນປີ 2021 ໃນປັດຈຸບັນຢູ່ໃນລະດັບດຽວກັນກັບສົກປີ 2010-2011. ຄາດຄະເນປີທີ່ການຮຽນຫຼຸດລົງມາເປັນ 10,1 ໃນປີ 2020 ໃນ ສປປ ລາວ, ເຊິ່ງໄດ້ຫຼຸດລົງ ນັບຕັ້ງແຕ່ປີ 2015. ຈຳນວນປີການຮຽນສະເລ່ຍຍັງຄົງຢູ່ໃນລະດັບດຽວກັນກັບປີ 2019. GNI ຕໍ່ຫົວຄົນເພີ່ມຂຶ້ນທາງດ້ານມູນຄ່າ ແຕ່ອັດຕາການເພີ່ມຂຶ້ນແມ່ນຊ້າລົງຫຼາຍສຳລັບປີ 2020 ແລະ 2021.

GNI ຕໍ່ຫົວຄົນເພີ່ມຂຶ້ນເກືອບວ່າຢ່າງຕໍ່ເນື່ອງໃນໄລຍະ 30 ປີທີ່ຜ່ານມາ, ຍົກເວັ້ນໃນປີ 2006, ໃນອັດຕາສະເລ່ຍ 4,74 ສ່ວນຮ້ອຍ ຕໍ່ປີ. ສຳລັບສົກປີ 2019-2020 ແລະ 2020-2021, ອັດຕາດັ່ງກ່າວເພີ່ມຂຶ້ນ 1,7 ສ່ວນຮ້ອຍ ແລະ 0,63 ສ່ວນຮ້ອຍ ຕາມລຳດັບ, ເຊິ່ງຊີ້ໃຫ້ເຫັນເຖິງຄວາມຄືບໜ້າທີ່ຊ້າລົງຍ້ອນການແຜ່ລະບາດຂອງພະຍາດຕໍ່ເສດຖະກິດ.

**ຮູບ 1.2: ທ່າອ່ຽງຂອງຄ່າ HDI ຂອງ ສປປ ລາວ, 1990 2021**

ແຫຼ່ງຂໍ້ມູນ: UNDP, 2022b.




**ຕາຕະລາງ 1.1: ຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ-19 ຕໍ່ດ້ານຕ່າງໆຂອງ ໃນ ສປປ ລາວ**

ແຫຼ່ງຂໍ້ມູນ: UNDP, 2022.

| | 2019 | 2020 | 2021 |
|---|---|---|---|
| ຄ່າ HDI | 0,610 | 0,608 (-0,002) | 0,607 (-0,001) |
| ຄາດຄະເນອາຍຸຍືນສະເລ່ຍນະເວລາເກີດ | 68,1 | 68,5 (+0,4) | 68,1 (-0,4) |
| ຄາດຄະເນປີການຮຽນຄາດຄະເນອາຍຸຍືນສະເລ່ຍນະເວລາເກີດ | 10,5 | 10,1 (-0,4) | 10,1 |
| ຈຳນວນປີການຮຽນສະເລ່ຍ | 5,4 | 5,4 | 5,4 |
| GNI ຕໍ່ຫົວຄົນ, ໂດລາ (ຄົງທີ່ 2017 PPP) | 7.519 | 7.652 (+133) | 7.700 (+48) |

## ຄວາມເສຍຫາຍຂອງຄວາມບໍ່ສະເໝີພາບ

ດັດຊະນີການພັດທະນາມະນຸດທີ່ປັບປຸງດ້ານຄວາມບໍ່ສະເໝີພາບ (IHDI) ຄຳນຶງເຖິງຄວາມບໍ່ສະເໝີພາບໂດຍການ 'ຫຼຸດ' ຄ່າສະເລ່ຍຂອງແຕ່ລະດ້ານຂອງ HDI ຕາມລະດັບຄວາມບໍ່ສະເໝີພາບຂອງມັນ. ສຳລັບ ສປປ ລາວ, ການເຮັດແບບນີ້ເຮັດໃຫ້ HDI ຫຼຸດລົງຈາກ 0,607 ເປັນ 0,459, ເຊິ່ງສະທ້ອນໃຫ້ເຫັນເຖິງການສູນເສຍ 24,4% ເນື່ອງຈາກຄວາມບໍ່ສະເໝີພາບທາງດ້ານການແຈກຢາຍລາຍຮັບ, ສາທາລະນະສຸກ ແລະ ການສຶກສາ. ຄວາມເສຍຫາຍເນື່ອງຈາກຄວາມບໍ່ສະເໝີພາບກັນນີ້ແມ່ນເທົ່າກັບບັນຫາປະເທດພັດທະນາມະນຸດລະດັບປານກາງອື່ນໆໂດຍສະເລ່ຍ (ຕາຕະລາງ 1.2). ແຕ່ໃນຂະນະທີ່ຄ່າ HDI ສຳລັບ ສປປ ລາວ (0,607) ແມ່ນສູງກວ່າຂອງປະເທດກຳປູເຈຍ (0,593), ແຕ່ IHDI ຂອງກຳປູເຈຍ (0,479) ພັດປະຕິບັດໄດ້ດີກວ່າ ສປປ ລາວ (0,459). ອັນນີ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນທີ່ຕ້ອງຄວາມພະຍາຍາມເພີ່ມເຕີມເພື່ອຫຼຸດຜ່ອນຄວາມບໍ່ສະເຫມີພາບຂອງຄາດຄະເນອາຍຸຍືນສະເລ່ຍນະໄລຍະເກີດ ແລະ ໃນດ້ານການສຶກສາ, ເຊິ່ງ ສປປ ລາວ ປະຕິບັດໄດ້ຕໍ່າກວ່າບັນດາປະເທດທີ່ມີ HDI ລະດັບປານກາງອື່ນໆ.

ຕາຕະລາງ 1.1

ດັດຊະນີການພັດທະນາຍິງ-ຊາຍ (GDI) ໄດ້ລົງເລິກເຖິງຄວາມບໍ່ສະເຫມີພາບລະຫວ່າງຍິງ-ຊາຍ" ໃນດ້ານສຸຂະພາບ (ວັດແທກຕາມຄາດຄະເນອາຍຸຍືນສະເລ່ຍຂອງເພດຍິງ ແລະ ເພດຊາຍນະເວລາເກີດ), ການສຶກສາ (ວັດແທກຕາມ ຄາດຄະເນຈຳນວນປີການຮຽນສຳລັບເດັກນ້ອຍ ແລະ ຈຳນວນປີການຮຽນສະເລ່ຍສຳລັບຜູ້ໃຫຍ່ທີ່ມີອາຍຸ 25 ປີຂຶ້ນໄປ ແບ່ງຕາມເພດຍິງ ແລະ ເພດຊາຍ) ແລະ ໃຜມີບົດບາດຫຼາຍກວ່າກັນໃນການຄຸ້ມຄອງຊັບພະຍາກອນທາງເສດຖະກິດ (ວັດແທກໂດຍຄາດຄະເນ GNI ຕໍ່ຫົວຄົນແບ່ງຕາມເພດຍິງ ແລະ ເພດຊາຍ). ໃນປີ 2021 ຄ່າ HDI ສຳລັບແມ່ຍິງໃນ ສປປ ລາວ ແມ່ນ 0,591, ທຽບກັບ 0,623 ສຳລັບຜູ້ຊາຍ, ສິ່ງຜົນໃຫ້ຄ່າ GDI ລວມກາຍເປັນ 0,949. ອັດຕາສ່ວນທີ່ໃກ້ກັບ 1 ໝາຍເຖິງຊ່ອງຫວ່າງລະຫວ່າງເພດຍິງ ແລະ ເພດຊາຍໃນດ້ານການພັດທະນາມະນຸດໜ້ອຍລົງ. ບັນຫານີ້ເຮັດໃຫ້ ສປປ ລາວ ຢູ່ໃນກຸ່ມປະເທດທີ່ມີຄວາມສະເໝີພາບໃນລະດັບປານກາງ (ກຸ່ມ 3).

## ຕາຕະລາງ 1.2: ການຈັດຕັ້ງປະຕິບັດ IHDI

ແຫຼ່ງຂໍ້ມູນ: UNDP, 2022.

| | ຄ່າ IHDI | ຄວາມບໍ່ສະເໝີພາບຂອງອາຍຸຍືນສະເລ່ຍໃນໄລຍະ ເກີດໃໝ່ (%) | ຄວາມບໍ່ສະເໝີພາບດ້ານການສຶກສາ (%) | ຄວາມບໍ່ສະເໝີພາບດ້ານລາຍຮັບ(%) |
|---|---|---|---|---|
| ສປປ ລາວ | 0,459 | 20,6 | 31,3 | 20,6 |
| ກຳປູເຈຍ | 0,479 | 15,4 | 27,3 | 14,3 |
| ປາປົວນິວກີນີ | 0,397 | 20,9 | 35,7 | 28,9 |
| ຄ່າກາງຂອງ HDI | 0,475 | 17,8 | 26,3 | 26,4 |

GDI ແມ່ນລົງເລິກລະດັບຄວາມແຕກໂຕນທາງດ້ານລາຍຮັບລະຫວ່າງເພດຍິງ ແລະ ເພດຊາຍ. ໃນປີ 2021, ຕໍ່ຫົວຄົນ (2017) ສໍາລັບເພດຍິງແມ່ນ 6.757 ໂດລາ, ສໍາລັບເພດຊາຍແມ່ນ 8.627 ໂດລາ. ຕາຕະລາງ 1.3 ໄດ້ຊີ້ໃຫ້ເຫັນວ່າ ເດັກຍິງມີຈໍານວນຄາດຄະເນປີການຮຽນ ແລະ ຈໍານວນປີການຮຽນສະເລ່ຍໜ້ອຍ ກວ່າເດັກຊາຍ. ອາຍຸຍືນສະເລ່ຍແມ່ນຕົວຊີ້ວັດດຽວທີ່ແມ່ຍິງດີກວ່າຜູ້ຊາຍ, ແຕ່ກໍ່ເປັນແນວໂນ້ມທົ່ວໄປໃນເກືອບທຸກໆສັງຄົມ. ສໍາລັບຄ່າ , ສປປ ລາວ ປະຕິບັດໄດ້ດີກວ່າ ກໍາປູເຈຍ ແລະ ບັນດາປະເທດ ລະດັບປານກາງອື່ນໆ.

ຕາຕະລາງ 1.3

ດັດຊະນີຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ (GII) ໄດ້ເຜີຍໃຫ້ຮູ້ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ຕື່ມອີກໂດຍການລົງເລິກດ້ານສຸຂະພາບຈະເລີນພັນ, ບົດບາດ ແລະ ກິດຈະກໍາທາງເສດຖະກິດ ແລະ ສະທ້ອນໃຫ້ເຫັນເຖິງຜົນເສຍຫາຍຕໍ່ການພັດທະນາມະນຸດຍ້ອນຄວາມບໍ່ສະເໝີພາບລະຫວ່າງຍິງ ແລະ ຊາຍ. ສຸຂະພາບຈະເລີນພັນແມ່ນວັດແທກໂດຍອັດຕາການຕາຍຂອງແມ່ ແລະ ອັດຕາການເກີດຂອງເດັກນ້ອຍ; ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງວັດແທກໂດຍສ່ວນແບ່ງຂອງແມ່ຍິງໃນຕໍາແໜ່ງໃນສະພາ ແລະ ການບັນລຸການສຶກສາຊັ້ນມັດທະຍົມ ແລະ ຊັ້ນສູງຂອງແຕ່ລະເພດ ແລະ ກິດຈະກໍາທາງເສດຖະກິດໂດຍການວັດແທກອັດຕາການມີສ່ວນຮ່ວມໃນຕະຫຼາດແຮງງານຂອງແມ່ຍິງ ແລະ ຜູ້ຊາຍ. ສປປ ລາວ ມີຄ່າ GII ປີ 2021 ຢູ່ທີ່ 0,478, ເຊິ່ງຈັດຢູ່ໃນອັນດັບທີ 120 ຈາກທັງໝົດ 162 ປະເທດ. ເມື່ອປຽບທຽບກັບປະເທດທີ່ການພັດທະນາມະນຸດຢູ່ໃນປານກາງ, ໂດຍທົ່ວໄປແລ້ວຖືວ່າ ສປປ ລາວ ປະຕິບັດດັດຊະນີນີ້ໄດ້ຕໍ່າກວ່າ.

ໃນດ້ານການມີສ່ວນຮ່ວມທາງດ້ານການເມືອງ ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ, ແມ່ຍິງກວມຕໍາແໜ່ງໃນສະພາແຫ່ງຊາດ 21,95 ສ່ວນຮ້ອຍ, ຕໍ່າກວ່າອັດຕາສະເລ່ຍຂອງທົ່ວໂລກເຊິ່ງແມ່ນ 25,9 ສ່ວນຮ້ອຍ ແລະ ສູງກວ່າບັນດາປະເທດທີ່ການພັດທະນາມະນຸດຢູ່ໃນໃນລະດັບປານກາງໂດຍສະເລ່ຍ 21,0 ສ່ວນຮ້ອຍ ແຕ່ສູງກວ່າບັນດາປະເທດໃກ້ຄຽງທີ່ສໍາຄັນ ເຊັ່ນ ໄທ 13,9 ສ່ວນຮ້ອຍ. ແນວໃດກໍຕາມ, ຕົວແທນເພດຍິງທີ່ມີຕໍາແໜ່ງໃນສະພາແຫ່ງຊາດໃນປັດຈຸບັນ ຍັງຕໍ່າກວ່າຕົວແທນໃນສະພາແຫ່ງຊາດ ໄລຍະ 2015-2020 ເຊິ່ງແມ່ນ 27,5 ສ່ວນຮ້ອຍ. ສະນັ້ນ, ຈຶ່ງຍັງມີຫຼາຍດ້ານ ໃນການເລັ່ງການມີສ່ວນຮ່ວມຂອງແມ່ຍິງໃນຕໍາແໜ່ງຕັດສິນໃຈໃນ ລະດັບຕ່າງໆ.

ເຖິງແມ່ນວ່າຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍໃນການສຶກສາຈະແຄບລົງ, ຕາຕະລາງ 1.4 ສະແດງໃຫ້ເຫັນວ່າມີ 37,7 ສ່ວນຮ້ອຍ ຂອງປະຊາກອນຍິງທີ່ມີການສຶກສາໃນລະ ດັບມັດທະຍົມຕອນຕົ້ນ ທຽບກັບ 47,7 ສ່ວນຮ້ອຍ ຂອງປະຊາກອນເພດຊາຍ. ໂດຍທົ່ວໄປແລ້ວ ຊ່ອງຫວ່າງທາງດ້ານການສຶກສາຈະຂະຫຍາຍອອກໄປຕື່ມໃນຊັ້ນມັດທະຍົມສຶກສາ. ແມ່ຍິງ ແລະ ເດັກຍິງ ຈໍານວນຫຼວງຫຼາຍຍັງຂາດການສຶກສາຊັ້ນມັດທະຍົມດ້ວຍເຫດຜົນຫຼາຍຢ່າງ, ລວມທັງການແຕ່ງງານກ່ອນໄວອັນຄວນ, ໂຮງຮຽນຢູ່ຫ່າງໄກ, ບັນທັດຖານທາງສັງຄົມ ແລະ ຄວາມຄາດຫວັງຕໍ່ ເດັກຍິງທີ່ຈະຕ້ອງຢູ່ເຮືອນເພື່ອຊ່ວຍວຽກແມ່ຂອງ ເຂົາເຈົ້າ (UN, 2021).

ອັດຕາການມີສ່ວນຮ່ວມໃນກໍາລັງແຮງງານແມ່ນໃກ້ຄຽງກັບຄວາມສະເໝີພາບ, ລະດັບການມີສ່ວນຮ່ວມຂອງເພດຍິງແມ່ນ 74,8ສ່ວນຮ້ອຍ ແລະ ເພດຊາຍ 78,1 ສ່ວນຮ້ອຍ. ເມື່ອສົມທຽບກັບບັນດາປະເທດທີ່ການພັດທະນາມະນຸດຢູ່ໃນລະດັບປານກາງ ແລະ ບັນດາປະເທດໃນອາຊີຕາເວັນອອກ ແລະ ປາຊີຟິກ ໂດຍສະເລ່ຍແລ້ວ ສປປ ລາວ ມີຄວາມບໍ່ສະເໝີພາບຍິງ-ຊາຍ ໃນການມີ





## ຕາຕະລາງ 1.3: ການຈັດຕັ້ງປະຕິບັດ GDI

ແຫຼ່ງຂໍ້ມູນ: UNDP, 2022.

| | ອັດຕາສ່ວນ ຍ/ຊ | ຄ່າ HDI | | ອາຍຸຍືນສະເລ່ຍໄລຍະເກີດໃໝ່ (ປີ) | | ຈໍານວນປີທີ່ຄາດວ່າຈະໄດ້ຮັບການສຶກສາ | | ຈໍານວນປີການສຶກສາສະເລ່ຍ (ປີ) | | GNI ຕໍ່ຫົວຄົນ (2017 PPP$) | |
|---|---|---|---|---|---|---|---|---|---|---|---|
| | ຄ່າ GDI | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ |
| ສປປ ລາວ | 0,949 | 0,591 | 0,623 | 70,1 | 66,2 | 9,9 | 10,3 | 5 | 5,8 | 6.757 | 8.627 |
| ກໍາປູເຈຍ | 0,926 | 0,57 | 0,615 | 72,3 | 66,8 | 11 | 11,9 | 4,4 | 5,9 | 3.464 | 4.706 |
| ຄ່າກາງຂອງ HDI | 0,93 | 0,599 | 0,644 | 69,5 | 64,2 | 11,9 | 11,9 | 6,7 | 7,6 | 4.217 | 7.735 |



**ສໍາລັບທຸກໆ 100.000 ຄົນທີ່ ເກີດມີຊີວິດ, ແມ່ຍິງ 185 ຄົນ ເສຍຊີວິດ ຍ້ອນສາເຫດ ທີ່ຕິດພັນກັບ ການຖືພາ.**

ສ່ວນຮ່ວມຢູ່ໃນກໍາລັງແຮງງານ. ແຕ່ດັ່ງທີ່ສະແດງຢູ່ໃນຕາຕະລາງ 1.3, ແມ່ຍິງມີລາຍຮັບໜ້ອຍກວ່າຜູ້ຊາຍຢ່າງຫຼວງຫຼາຍ, ເພາະວ່າພວກເຂົາເປັນກຸ່ມຄົນຕົ້ນຕໍທີ່ເຮັດວຽກທີ່ບໍ່ເປັນທາງການ ເຊິ່ງມີລາຍໄດ້ຕໍ່າ. ໃນປີ 2017, ແມ່ຍິງໃນເຂດຊົນນະບົດເຖິງ 91,3 ສ່ວນຮ້ອຍ ແລະ 70,7 ສ່ວນຮ້ອຍຢູ່ໃນຕົວເມືອງໄດ້ຖືກຈ້າງງານນອກລະບົບ (LSB, 2017). ເຫດຜົນໜຶ່ງທີ່ເຮັດໃຫ້ແມ່ຍິງດ້ອຍໂອກາດບໍ່ສາມາດເຂົ້າເຖິງວຽກເຮັດງານທໍາ ແລະ ຄ່າແຮງງານທີ່ເໝາະສົມ ແມ່ນຍ້ອນພວກເຂົາຫຼາຍຄົນບໍ່ໄດ້ຈົບການສຶກສາຊັ້ນມັດທະຍົມ ຫຼື ຊັ້ນສູງ.

GII ສະແດງໃຫ້ເຫັນເຖິງການປະຕິບັດທີ່ບໍ່ທັນໄດ້ດີຂອງ ສປປ ລາວ ກ່ຽວກັບຕົວຊີ້ວັດທີ່ສໍາຄັນດ້ານສາທາລະນະສຸກຂອງແມ່ຍິງ, ລວມທັງອັດຕາການຕາຍຂອງແມ່ ແລະ ການເກີດຂອງໄວໜຸ່ມ. ສໍາລັບທຸກໆ 100.000 ຄົນທີ່ ເກີດມີຊີວິດ, ແມ່ຍິງ 185 ຄົນ ເສຍຊີວິດຍ້ອນສາເຫດທີ່ຕິດພັນກັບການຖືພາ. ອັດຕາການເກີດໃນໄວໜຸ່ມຂອງ ສປປ ລາວ ແມ່ນເດັກນ້ອຍເກີດ 73,2 ຄົນ ຕໍ່ ແມ່ຍິງ 1.000 ຄົນ ທີ່ມີອາຍຸ 15-19 ປີ, ສູງກວ່າອັດຕາສະເລ່ຍຂອງບັນດາປະເທດທີ່ການພັດທະນາມະນຸດຢູ່ລະດັບປານກາງ ແລະ ອັດຕາສະເລ່ຍຂອງພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ. ອັດຕາການຕາຍຂອງແມ່ສູງ ສະແດງເຖິງຊ່ອງຫວ່າງຂອງການບໍລິການດ້ານສຸຂະພາບຈະເລີນພັນເຊັ່ນ: ໄລຍະທາງທີ່ຫ່າງໄກຈາກສະຖານທີ່ບໍລິການດ້ານສາທາລະນະສຸກ ແລະ ການບໍລິການຄຸນນະພາບຍັງບໍ່ທັນໄດ້ດີ. ການຖືພາໃນໄວໜຸ່ມເປັນສາເຫດຂອງອັດຕາການຕາຍຂອງແມ່ກໍ່ຄືອັດຕາການຕາຍຂອງເດັກເກີດໃໝ່ ແລະ ອັດຕາເດັກນ້ອຍທີ່ລວງສູງບໍ່ໄດ້ມາດຕະຖານ (WHO, 2018).

ຕາຕະລາງ 1.4

## ທ່າອ່ຽງ HDI ຂອງຂັ້ນແຂວງ

ບົດລາຍງານການພັດທະນາມະນຸດແຫ່ງຊາດທີ່ຜ່ານມາໄດ້ຄິດໄລ່ຄ່າ HDI ສໍາລັບແຂວງໃນໄລຍະ 2001-2003 ແລະ 2011-2013. ວຽກງານເຫຼົ່ານີ້ໄດ້ວັດແທກຄວາມແຕກຕ່າງລະຫວ່າງແຂວງໃນການພັດທະນາມະນຸດ ແລະການຈັດຕັ້ງປະຕິບັດຢູ່ຂັ້ນແຂວງໃນໄລຍະຜ່ານມາ. ບົດລາຍງານນີ້ພະຍາຍາມສະໜອງຂໍ້ມູນຫຼ້າສຸດກ່ຽວກັບບາງແນວໂນ້ມທີ່ໄດ້ກໍານົດໄວ້ໃນບົດລາຍງານກ່ອນໜ້ານີ້.

ບົດລາຍງານໃນປັດຈຸບັນໄດ້ປັບປຸງວິທີການສໍາລັບການຄາດຄະເນ HDI ສໍາລັບຂັ້ນແຂວງ. ໃນການຄິດໄລ່ທີ່ຜ່ານມາ, ການແກ້ໄຂຂໍ້ຈໍາກັດດ້ານຂໍ້ມູນໃນລະດັບແຂວງຈໍາເປັນຕ້ອງມີການບ່ຽງເບນເຖິງສອງຄັ້ງຈາກວິທີການລວມ. ທໍາອິດ, ເນື່ອງຈາກການຄິດໄລ່ GDP/GNI ບໍ່ໄດ້ເຮັດເປັນແຕ່ລະແຂວງ, ບົດລາຍງານນີ້ໄດ້ນໍາໃຊ້ລະດັບການຊົມໃຊ້ສະເລ່ຍຈາກການສໍາຫຼວດລາຍຈ່າຍ ແລະ ການຊົມໃຊ້ຄົວເຮືອນລາວຫຼ້າສຸດ. ອັນທີສອງ, ໃນບົດລາຍງານກ່ອນໜ້ານີ້, ຂໍ້ມູນກ່ຽວກັບຄາດຄະເນອາຍຸຍືນສະເລ່ຍນະເວລາເກີດແບ່ງຕາມແຕ່ລະແຂວງແມ່ນບໍ່ສາມາດນໍາໃຊ້ໄດ້, ສະນັ້ນ ຈຶ່ງໄດ້ນໍາໃຊ້ອັດຕາການຕາຍຂອງເດັກອ່ອນ (1-IMR) ຈາກການສໍາຫຼວດປະຊາກອນ ປີ 2005 ແລະ ການສໍາຫຼວດດັດຊະນີໝາຍສັງຄົມລາວປີ 2011/2012. ສໍາລັບບົດລາຍງານສະບັບປັດຈຸບັນແມ່ນມີຂໍ້ມູນກ່ຽວກັບອາຍຸຍືນສະເລ່ຍໃນລະດັບແຂວງ ແລະ ສາມາດນໍາໃຊ້ຂໍ້ມູນໄດ້. ໃນການຄິດໄລ່ທີ່ຜ່ານມາ, ມີພຽງແຕ່ອັດຕາສ່ວນການເຂົ້າຮຽນສຸດທິເທົ່ານັ້ນທີ່ຖືກນໍາໃຊ້ເປັນຕົວຊີ້ວັດເພື່ອສະທ້ອນໃຫ້ເຫັນດ້ານຄວາມຮູ້ໄດ້ດີຂຶ້ນ. ການຄິດໄລ່ຂອງບົດລາຍງານນີ້ປະກອບມີອັດຕາສ່ວນການສໍາເລັດການສຶກສາຊັ້ນມັດທະຍົມຕອນຕົ້ນ ຍ້ອນວ່າການສຶກສາແມ່ນເປັນພາກບັງຄັບຈົນເຖິງຊັ້ນມັດທະ

## ຕາຕະລາງ 1.4: ການຈັດຕັ້ງປະຕິບັດ GII

ແຫຼ່ງຂໍ້ມູນ: UNDP, 2020b.

| | | ອັດຕາການຕາຍຂອງແມ່ | ອັດຕາສ່ວນຂອງແມ່ຍິງມີຕຳແໜ່ງໃນສະພາ (%) | ອັດຕາສ່ວນຜູ້ທີ່ມີການສຶກສາຢ່າງໜ້ອຍໃນຊັ້ນມັດທະຍົມ (%) | | ອັດຕາການປະກອບສ່ວນຢູ່ໃນກຳລັງແຮງ (%) | |
|---|---|---|---|---|---|---|---|
| | ຄ່າ GII | | | ຍິງ | ຊາຍ | ຍິງ | ຊາຍ |
| ສປປ ລາວ | 0,478 | 185 | 22 | 37,7 | 47,7 | 74,8 | 78,1 |
| ກຳປູເຈຍ | 0,461 | 160 | 19,8 | 18,3 | 31,7 | 74 | 85,9 |
| ຄ່າກາງຂອງ HDI | 0,479 | 198 | 21 | 46,1 | 52,8 | 49,9 | 71,3 |

ຍົມ (ເບິ່ງເອກະສານຊ້ອນທ້າຍ #4 ສຳລັບສະຖິຕິລະອຽດ). ດ້ວຍການປັບປຸງວິທີການເຫຼົ່ານີ້, ຄ່າ HDI ລະດັບແຂວງຂອງບົດລາຍງານນີ້ບໍ່ສາມາດປຽບທຽບກັບປີທີ່ຜ່ານມາຍ້ອນເຫດຜົນດ້ານວິຊາການ.

ຮູບ 1.3 ສະແດງຄ່າ ສຳລັບທັງໝົດ 18 ແຂວງຂອງ ສປປ ລາວ. ຄ່າສູງສຸດແມ່ນນະຄອນຫຼວງວຽງຈັນ. ຄ່າຕ່ຳສຸດແມ່ນ ແຂວງຜົ້ງສາລີ, ເຊກອງ, ອັດຕະປື ແລະ ສາລະວັນ.

ຮູບທີ 1.3

ຄວາມແຕກຕ່າງຂັ້ນແຂວງດ້ານ HDI ສະແດງໃຫ້ເຫັນເຖິງການແບ່ງຕົວເມືອງ ແລະ ຊົນນະບົດໃນດ້ານຄວາມທຸກຍາກ, ໂອກາດດ້ານລາຍຮັບ, ການເຂົ້າເຖິງ ແລະ ຄຸນນະພາບຂອງການສຶກສາ ແລະ ການບໍລິການດ້ານສາທາລະນະສຸກ. ຕາຕະລາງ 1.5 ສະແດງໃຫ້ເຫັນວ່າ ນະຄອນຫຼວງວຽງຈັນ ປະຕິບັດຕົວຊີ້ບອກຂອງ HDI ທັງໝົດ 3 ຕົວໄດ້ຢ່າງມີຄວາມຄືບໜ້າຫຼາຍເມື່ອທຽບຄຽງກັບບັນດາແຂວງອື່ນໆ. ແຂວງທີ່ມີເຂດຕົວເມືອງຂ້ອນຂ້າງໃຫຍ່ເຊັ່ນ: ຊຽງຂວາງໃນພາກກາງ ແລະ ຈຳປາສັກໃນພາກໃຕ້ຂອງປະເທດສະແດງໃຫ້ເຫັນປະສິດທິພາບໃນການຈັດຕັ້ງປະຕິບັດ HDI ຂ້ອນຂ້າງດີກວ່າບັນດາແຂວງສ່ວນໃຫຍ່ອື່ນໆ. ຄວາມທຸກຍາກໃນເຂດຊົນນະບົດແມ່ນສູງກວ່າຕົວເມືອງສາມເທົ່າ; ຊຸມຊົນໃນຊົນນະບົດກວມອັດຕາສ່ວນປະມານ 90 ສ່ວນຮ້ອຍ ຂອງປະຊາຊົນທີ່ທຸກຍາກ.

ໃນດ້ານລາຍໄດ້ແຫ່ງຊາດ (GNI ຕໍ່ຫົວຄົນ, 2017 PPP), ນອກຈາກນະຄອນຫຼວງວຽງຈັນແລ້ວ, ແຂວງຫຼວງນ້ຳທາ, ສະຫວັນນະເຂດ ແລະ ອຸດົມໄຊ ສາມາດຈັດຕັ້ງປະຕິບັດໄດ້ສູງສຸດ. ບັນດາແຂວງທີ່ມີຜົນສຳເລັດສູງໄດ້ຮັບຜົນປະໂຫຍດຈາກການລົງທຶນຂອງບັນດາປະເທດໃກ້ຄຽງ, ການເຕີບໂຕຂອງການທ່ອງທ່ຽວ ຫຼື ການເຕີບໂຕດ້ານການຄ້າ ແລະ ອຸດສາຫະກຳໃນເຂດເສດຖະກິດພິເສດ. ບັນດາແຂວງເຫຼົ່ານີ້ຍັງເປັນແຫຼ່ງສົ່ງອອກຕົ້ນຕໍຂອງຢາງພາລາ. ກົງກັນຂ້າມ, ແຂວງພາກໃຕ້ (ສາລະວັນ, ເຊກອງ ແລະ ອັດຕະປື) ມີຄວາມທຸກຍາກທີ່ສຸດ ແລະ ເສດຖະກິດຍັງດ້ອຍພັດທະນາ ເຊິ່ງສະແດງເຖິງການຈັດຕັ້ງປະຕິບັດຍັງຕ່ຳ.

ໃນດ້ານຄາດຄະເນອາຍຸຍືນສະເລ່ຍນະເວລາເກີດ, ແຂວງວຽງຈັນ, ແຂວງຈຳປາສັກ ແລະ ແຂວງສະຫວັນນະເຂດ ສາມາດປະຕິບັດໄດ້ດີ ຍ້ອນຄວາມພ້ອມ ແລະ ຄວາມຫຼາກຫຼາຍຂອງການບໍລິການ, ຊັບພະຍາກອນ ແລະ ພື້ນຖານໂຄງລ່າງດ້ານສາທາລະນະສຸກ. ຄຽງຄູ່ກັນນັ້ນ, ອາຍຸຍືນສະເລ່ຍແມ່ນ 62,8 ປີ, ເຊິ່ງບັນດາແຂວງພາກເໜືອທີ່ມີພູມສັນຖານເປັນພູດອຍ ແລະ ຊົນນະບົດເປັນສ່ວນໃຫຍ່, ມີຊີວິດການເປັນຢູ່ທີ່ທຸກຍາກທີ່ສຸດ (ອຸດົມໄຊ, ຜົ້ງສາລີ, ຫຼວງນ້ຳທາ), ຍ້ອນການເຂົ້າເຖິງການບໍລິການດ້ານສາທາລະນະສຸກທີ່ຈຳກັດ.

ຈຳນວນປີການຮຽນສະເລ່ຍສະແດງໃຫ້ເຫັນລະດັບການສຶກສາຂອງປະຊາກອນຜູ້ໃຫຍ່, ເຊິ່ງວັດແທກຈຳນວນປີການຮຽນໂດຍສະເລ່ຍທີ່ປະຊາຊົນອາຍຸ 25 ປີຂຶ້ນໄປໄດ້ຮັບ. ບັນດາແຂວງພາກກາງມີຈຳນວນປີການຮຽນສະເລ່ຍຫຼາຍກວ່າໝູ່. ປີການຮຽນສະເລ່ຍຕ່ຳສຸດແມ່ນຢູ່ແຂວງ ຜົ້ງສາລີ, ຫຼວງນ້ຳທາ ແລະ ອຸດົມໄຊ. ຂໍ້ມູນນີ້ອາດສະແດງໃຫ້ເຫັນວ່າການຈ້າງງານຂອງປະຊາກອນໃນແຂວງເຫຼົ່ານີ້ມີໜ້ອຍກວ່າແຂວງອື່ນໆ. ແຕ່ມັນບໍ່ໄດ້ສະທ້ອນເຖິງການບັນລຸການສຶກສາໃນປັດຈຸບັນ, ເຊິ່ງສະແດງໃຫ້ເຫັນໂດຍຕົວຊີ້ວັດກ່ຽວກັບອັດຕາການຮຽນຈົບຊັ້ນປະຖົມ ແລະ ມັດທະຍົມຕົ້ນ. ອັດຕາການເຂົ້າຮຽນຊັ້ນປະຖົມແມ່ນໃກ້ກັບ 100 ສ່ວນຮ້ອຍ ໃນຫລາຍແຂວງ. ອັດຕາການຮຽນຈົບຊັ້ນມັດທະຍົມຕອນຕົ້ນແມ່ນຕ່ຳທີ່ສຸດຢູ່ແຂວງ ຜົ້ງສາລີ, ສະຫວັນນະເຂດ, ສາລະວັນ ແລະ ເຊກອງ.

ເມື່ອສົມທຽບດ້ານສາທາລະນະສຸກ, ການສຶກສາ





ແລະ ອັດຕາຄວາມທຸກຍາກໃນແຕ່ລະແຂວງ ເຫັນໄດ້ວ່າ ການປະຕິບັດຕົວຊີ້ບອກໃດໜຶ່ງບໍ່ໄດ້ດີນັ້ນໄດ້ສົ່ງຜົນກະທົບຕໍ່ຕົວຊີ້ບອກອື່ນໆ. ຕົວຢ່າງແຂວງພາກເໜືອ ເຊັ່ນ: ຜົ້ງສາລີ ແລະ ອຸດົມໄຊ ແລະ ແຂວງພາກໃຕ້ ເຊັ່ນ: ສາລະວັນ ແລະ ເຊກອງ ທີ່ມີປະຊາກອນທຸກຍາກຫຼາຍແລ້ວ ຍັງປະຕິບັດບໍ່ໄດ້ດີໃນດ້ານອັດຕາການເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນ ແລະ ເດັກນ້ອຍຂາດສານອາຫານ ໂດຍວັດແທກຈາກອັດຕາສ່ວນຂອງເດັກນ້ອຍທີ່ລວງສູງບໍ່ໄດ້ມາດຕະຖານມີສູງ. ແຂວງເຫຼົ່ານີ້ຍັງມີອັດຕາການເກີດໃນໄວໜຸ່ມສູງ, ຄາດຄະເນສະເລ່ຍປະມານ 10 ສ່ວນຮ້ອຍ.

ຕາຕະລາງ 1.5

ຄວາມບໍ່ສະເໝີພາບຍັງມີຢ່າງຫຼວງຫຼາຍ ບໍ່ພຽງແຕ່ລະຫວ່າງຊົນນະບົດ ແລະ ຕົວເມືອງ ແລະ ໃນບັນດາເຂດພູມສາດຕ່າງກັນເທົ່ານັ້ນ, ແຕ່ຍັງມີຄວາມບໍ່ສະເໝີພາບລະຫວ່າງບັນດາຊົນເຜົ່າອີກດ້ວຍ. ໂດຍລວມມີປະມານ 34 ສ່ວນຮ້ອຍຂອງປະຊາກອນ, ກຸ່ມຄົນເຫຼົ່ານີ້ສ່ວນຫຼາຍອາໄສຢູ່ໃນເຂດຫ່າງໄກສອກຫຼີກ ແລະ ອີງໃສ່ສະພາບແວດລ້ອມທຳມະຊາດໃນການດຳລົງຊີວິດ. ໂດຍສະເລ່ຍແລ້ວ, ພວກເຂົາເຫຼົ່ານີ້ມີທ່າອ່ຽງທີ່ຈະມີລາຍຮັບໜ້ອຍ, ເຊິ່ງຖືກຈັດຢູ່ໃນກຸ່ມຄົນທຸກຍາກ ຫຼື ທຸກຍາກຫຼາຍ ແລະ ການເຂົ້າເຖິງການບໍລິການຕົ້ນຕໍ ເຊັ່ນ: ສາທາລະນະສຸກ ແລະ ການສຶກສາ ແມ່ນມີຈຳກັດ. ຕົວຢ່າງ: ໄວໜຸ່ມຊາຍຂອງຊົນເຜົ່າລາວ-ໄຕ ສ່ວນໃຫຍ່ມີອັດຕາການຮູ້ໜັງສື 84 ສ່ວນຮ້ອຍ ທຽບກັບ 63 ສ່ວນຮ້ອຍ ຂອງໄວໜຸ່ມເພດຊາຍຈາກຊົນເຜົ່າມອນ-ຂະແມ, ແລະ ຄວາມແຕກໂຕນນີ້ຍັງກວ້າງອອກໄປອີກເມື່ອສົມທຽບລະຫວ່າງເພດ. ຕົວຢ່າງ: ແມ່ຍິງລາວ-ໄຕ ມີອັດຕາການຮູ້ໜັງສືຕ່ຳກວ່າຜູ້ຊາຍລາວ-ໄຕບໍ່ຫຼາຍ ເຊິ່ງມີອັດຕາເຖິງ 81 ສ່ວນຮ້ອຍ,ອັດຕາການຮູ້ໜັງສືຂອງແມ່ຍິງຈາກຊົນເຜົ່າ ມອນ-ຂະແມ ແມ່ນຕ່ຳກວ່າຜູ້ຊາຍມອນ-ຂະແມເຖິງ 45 ສ່ວນຮ້ອຍ (ກະຊວງສາທາລະນະສຸກ, 2015; ກະຊວງສຶກສາທິການ ແລະ ກິລາ, 2014).

ການວິເຄາະ HDI ຊີ້ໃຫ້ເຫັນວ່າ ການແກ້ໄຂບັນຫາການພັດທະນາໃດໆກໍ່ຕາມ ທີ່ແຍກກັນປະຕິບັດມັກຈະບໍ່ປະສົບຜົນສຳເລັດ. ການປະສານງານແມ່ນມີຄວາມຈຳເປັນເພື່ອປ່ຽນແປງສະຖານະການຂອງບຸກຄົນ ໃນຄອບຄົວ, ໃນສະຖານທີ່ເຮັດວຽກ ແລະ ໃນໂຮງຮຽນ. ການທຳລາຍວົງຈອນຂອງຄວາມທຸກຍາກ ແມ່ນເລີ່ມຕົ້ນດ້ວຍການສ້າງຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມໃນປະຈຸບັນ, ສະໜັບສະໜູນການສຶກສາ ແລະ ການພັດທະນາສີມືແຮງງານ, ເພີ່ມທະວີຄວາມພ້ອມໃນຕະຫຼາດແຮງງານ. ການລົງທຶນໃສ່ສຸຂະພາບ ແລະ ຄວາມສາມາດຂອງໄວໜຸ່ມແມ່ນຈຳເປັນ ແລະ ບໍ່ພຽງແຕ່ຮັບຟັງຄຳເວົ້າຂອງເຂົາເຈົ້າເທົ່ານັ້ນ, ແຕ່ຍັງຕ້ອງເຮັດຕາມຄຳເວົ້າຂອງເຂົາເຈົ້າອີກດ້ວຍ.

## ຮູບ 1.3: ການຄາດຄະເນ HDI ແບ່ງຕາມແຂວງ, 2021

ແຫຼ່ງຂໍ້ມູນ: ການຄິດໄລ່ຂອງ UNDP



## ຕາຕະລາງ 1.5: ການຈັດຕັ້ງປະຕິບັດຕົວຊີ້ບອກຂອງ HDI ດ້ານສາທາລະນະສຸກ, ການສຶກສາ ແລະ ລາຍໄດ້ແບ່ງຕາມແຂວງ, 2021

ແຫຼ່ງຂໍ້ມູນ:ການຄິດໄລ່ຂອງ UNDP

| | | ດັດຊະນີການຮຽນ | | | ດັດຊະນີGNI | ດັດຊະນີອາຍຸຍືນສະເລ່ຍ |
|---|---|---|---|---|---|---|
| ແຂວງ | ຄ່າ HDI | ຈ/ນ ປີການຮຽນສະເລ່ຍ (ປີ) | ອັດຕາເຂົ້າຮຽນຊັ້ນປະຖົມ | ອັດຕາເຂົ້າຮຽນຊັ້ນມັດທະຍົມ | GNI ຕໍ່ຫົວຄົນ (2017 PPP$) | ອາຍຸຍືນສະເລ່ຍໃນໄລຍະເກີດໃໝ່ (ປີ) |
| **ສປປ ລາວ** | 0,631 | 5,4 | 98,8 | 65,1 | 7740 | 66,7 |
| ນະຄອນຫຼວງ | 0,741 | 8,4 | 100,4 | 72 | 12.393.80 | 72,4 |
| **ພາກເໜືອ** | 0,595 | 4,3 | 98,9 | 65,4 | 7350.3 | 62,8 |
| ຜົ້ງສາລີ | 0,563 | 3,3 | 97,2 | 58,2 | 7.703.10 | 60,9 |
| ຫຼວງນໍ້າທາ | 0,608 | 3,9 | 98 | 72,6 | 10.447.60 | 61,4 |
| ອຸດົມໄຊ | 0,58 | 3,8 | 99 | 63,9 | 8.360.80 | 59,6 |
| ບໍ່ແກ້ວ | 0,588 | 4,1 | 99,6 | 60,9 | 6.576.30 | 63,6 |
| ຫຼວງພະບາງ | 0,599 | 4,8 | 100 | 61,8 | 6.037.10 | 64,5 |
| ຫົວພັນ | 0,592 | 4,5 | 99,1 | 66,6 | 6.599.10 | 61,8 |
| ໄຊຍະບູລີ | 0,637 | 5,9 | 99,5 | 73,5 | 5.727.90 | 67,5 |
| ພາກກາງ | 0,626 | 5,4 | 98,3 | 65 | 7.108.9 | 67 |
| ຊຽງຂວາງ | 0,645 | 5,9 | 99,1 | 70.4 | 7.800.10 | 66,5 |
| ວຽງຈັນ | 0,662 | 6,0 | 100,2 | 67,7 | 8.335.90 | 69,7 |
| ບໍລິຄໍາໄຊ | 0,625 | 5,4 | 99,7 | 61,5 | 6.302.70 | 68 |
| ຄໍາມ່ວນ | 0,585 | 4,9 | 96,2 | 63,2 | 5.249.80 | 63,7 |
| ສະຫວັນນະເຂດ | 0,623 | 4,6 | 98,7 | 57,6 | 8.420.90 | 68,7 |
| ໄຊສົມບູນ | 0,616 | 5,4 | 96,1 | 69,3 | 6.543.80 | 65,2 |
| ພາກໃຕ້ | 0,588 | 4,6 | 98 | 57,6 | 5.654.70 | 65,525 |
| ສາລະວັນ | 0,576 | 4,0 | 99,1 | 54,1 | 4.638.80 | 67,3 |
| ເຊກອງ | 0,568 | 4,4 | 97,1 | 56,8 | 5.570.50 | 62,1 |
| ຈໍາປາສັກ | 0,633 | 5,4 | 98,1 | 61,2 | 6.950.90 | 69,6 |
| ອັດຕະປື | 0,576 | 4,5 | 97,6 | 58,4 | 5.458.50 | 63,1 |





## ຄວາມສ່ຽງທີ່ຕິດພັນກັບການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ການພັດທະນາມະນຸດທີ່ຖືດຖອຍ ມີຜົນກະທົບຢ່າງໜັກໜ່ວງຕໍ່ໄວໜຸ່ມ

ຄວາມຮີບດ່ວນທີ່ຕ້ອງລົງມືປະຕິບັດນະຕອນນີ້ ຍິ່ງມີຄວາມສໍາຄັນຫຼາຍຂຶ້ນ ເນື່ອງຈາກວິກິດຫຼາຍຢ່າງທີ່ປະເທດລາວໄດ້ປະສົບໃນຊຸມປີມໍ່ໆມານີ້, ລວມທັງຈາກໄພພິບັດທໍາມະຊາດໃນປີ 2018 ແລະ 2019, ການແຜ່ລະບາດຂອງພະຍາດ COVID-19 ແລະ ຜົນກະທົບຈາກຄວາມຂັດແຍ່ງໃນປະເທດອູແກຣນໃນບໍ່ດົນມານີ້. ຄວາມເສຍຫາຍເຫຼົ່ານີ້ ເຮັດໃຫ້ຜົນສໍາເລັດໃນການພັດທະນາມະນຸດທີ່ຍາດມາໄດ້ດ້ວຍຄວາມຍາກລໍາບາກນັ້ນຖືດຖອຍລົງ ແລະ ເປັນໄພຂົ່ມຂູ່ຕໍ່ການລົງທຶນຫຼາຍຂະແໜງການທີ່ສໍາຄັນໃນດ້ານທີ່ຈໍາເປັນຄືສາທາລະນະສຸກ, ສຶກສາ ແລະ ການພັດທະນາທັກສະເພື່ອຫັນປ່ຽນການປ່ຽນແປງທາງດ້ານປະຊາກອນໄປສູ່ຜົນປະໂຫຍດ.

ການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ເຮັດໃຫ້ການພັດທະນາມະນຸດໃນທົ່ວໂລກ ແລະ ຢູ່ ສປປ ລາວ ຖືດຖອຍລົງ, ສ່ວນໜຶ່ງແມ່ນຍ້ອນຄວາມສ່ຽງດ້ານສຸຂະພາບ, ການເສຍຊີວິດ, ການປິດໂຮງຮຽນ ແລະ ສະພາບເສດຖະກິດໂລກທີ່ຖືດຖອຍຢ່າງຮ້າຍແຮງ. ຮູບ 1.4 ສະແດງເຖິງຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ-19 ສາມຮອບ ທີ່ ສປປ ລາວ ໄດ້ປະເຊີນ.

ຮູບທີ 1.4

ການເຕີບໂຕທີ່ຊັກຊ້າ ແລະ ການປ່ຽນແປງວິຖີຊີວິດການເປັນຢູ່ ອາດຈະເຮັດໃຫ້ອັດຕາຄວາມທຸກຍາກ (ວັດແທກໄດ້ 3,20 ໂດລາຕໍ່ມື້, 2011 PPP) ເພີ່ມຂຶ້ນໃນລະດັບໜ້ອຍຫຼາຍ 1,7 ສ່ວນຮ້ອຍ ໃນປີ 2020 ເມື່ອປຽບທຽບກັບສະຖານະການທີ່ບໍ່ມີໂຄວິດ-19. ອັດຕາການຫວ່າງງານທີ່ເພີ່ມຂຶ້ນ ແລະ ລາຍຮັບທີ່ຫຼຸດລົງໄດ້ເຮັດໃຫ້ເດັກນ້ອຍ ແລະ ໄວໜຸ່ມຫຼາຍຄົນຈາກຄອບຄົວທີ່ມີລາຍໄດ້ຕໍ່າ ແລະ ຄອບຄົວທີ່ທຸກຍາກມີຄວາມສ່ຽງຕໍ່ຄວາມບໍ່ໝັ້ນຄົງດ້ານອາຫານ ແລະ ການຂາດສານອາຫານ. ໃນການສໍາຫຼວດ 1.200 ຄົວເຮືອນ, ມີ 48,9 ສ່ວນຮ້ອຍ ຂອງຄອບຄົວກ່າວວ່າເຂົາເຈົ້າໄດ້ຕັດຄ່າໃຊ້ຈ່າຍອາຫານ ຫຼື ຫຼຸດຜ່ອນການບໍລິໂພກອາຫານ; 15,2 ສ່ວນຮ້ອຍບໍ່ສາມາດຈ່າຍຄ່າອາຫານຈໍາເປັນພື້ນຖານໄດ້. ໃນບັນດາ 232 ຄົນທີ່ໄດ້ກູ້ຢືມເງິນພາຍຫຼັງທີ່ມີໂລກລະບາດເລີ່ມຕົ້ນໃນປີ 2020, 78 ສ່ວນຮ້ອຍລະບຸວ່າຈຸດປະສົງຕົ້ນຕໍຂອງການກູ້ຢືມເງິນແມ່ນເພື່ອຊື້ອາຫານ (UN, 2020).

ກະຊວງສຶກສາທິການ ແລະ ກິລາ ໄດ້ນໍາໃຊ້ຊ່ອງທາງດິຈິຕອນເພື່ອຖ່າຍທອດເນື້ອໃນ ແລະ ຮັກສາຄວາມຕໍ່ເນື່ອງດ້ານການສຶກສາ ແຕ່ມີເດັກນ້ອຍພຽງແຕ່ 16,5 ສ່ວນຮ້ອຍ ເທົ່ານັ້ນທີ່ສາມາດເຂົ້າເຖິງການຮຽນຮູ້ທາງອິນເຕີເນັດ. ຄອບຄົວຈໍານວນຫຼາຍອາດຈະໃຫ້ເດັກນ້ອຍອອກໂຮງຮຽນເນື່ອງຈາກຄ່າໃຊ້ຈ່າຍໃນການເຂົ້າໂຮງຮຽນສູງກວ່າທຽບກັບໃຫ້ເດັກນ້ອຍເຮັດກິດຈະກໍາເພື່ອສ້າງລາຍ

## ຮູບ 1.4: ກໍລະນີຜູ້ຕິດເຊື້ອໂຄວິດ-19 ນັບແຕ່ວັນ 24 ມີນາ 2020 ຫາ 22 ມິຖຸນາ 2022 ຕໍ່ລ້ານຄົນໃນ ສປປ ລາວ.

ແຫຼ່ງຂໍ້ມູນ: ການຄິດໄລ່ຂອງ UNDP ຕາມເວັບໄຊທ໌ http://github.com/owid/covid-19-data/free/master/public/data






**ຫົກສິບຫ້າສ່ວນຮ້ອຍຂອງຄົວເຮືອນໄດ້ລາຍງານວ່າພວກເຂົາໄດ້ຫຼຸດການໃຊ້ຈ່າຍໃນການສຶກສາ ແລະ ສຸຂະພາບ ເພື່ອຮັບມືກັບໄພເງິນເຟີ້**

ຮັບ ຫຼື ຖ້າແມ່ນເດັກຍິງກໍໃຫ້ແຕ່ງງານ. ຜົນກະທົບທາງລົບຈາກທີ່ການສຶກສາຖືກລົບກວນໂດຍທົ່ວໄປແມ່ນຮ້າຍແຮງຫຼາຍສໍາລັບນັກຮຽນທີ່ດ້ອຍໂອກາດ ແລະ ຄອບຄົວຂອງເຂົາເຈົ້າ, ເຖິງແມ່ນວ່າມີຂໍ້ມູນຈໍານວນຫນ້ອຍກ່ຽວກັບໄວໜຸ່ມທີ່ມີຄວາມສ່ຽງ ແລະ ໄດ້ຮັບຜົນກະທົບຫຼາຍທີ່ສຸດ, ເປັນຕົ້ນເດັກນ້ອຍທີ່ບໍ່ເຂົ້າໂຮງຮຽນ, ຄົນທີ່ມີຄວາມພິການ, ເດັກນ້ອຍທີ່ມີຄວາມສ່ຽງຕໍ່ຄວາມຮຸນແຮງ ແລະ ຜູ້ຖືກກົດດັນໃຫ້ເປັນແຮງງານເດັກ. ຄວາມກົດດັນທີ່ມີຢູ່ແລ້ວທີ່ກ່ຽວຂ້ອງກັບຄວາມທຸກຍາກແມ່ນໄດ້ເຮັດໃຫ້ໄວຫນຸ່ມຍິງຫຼາຍຄົນ, ສ່ວນໃຫຍ່ແມ່ນຢູ່ໃນເຂດຊົນນະບົດ, ອອກຈາກໂຮງຮຽນ ແລະ ເຂົ້າຮ່ວມໃນກິດຈະກໍາທາງເພດ, ການແຕ່ງງານ ແລະ ການຖືພາ ເຖິງແມ່ນວ່າສະພາບດັ່ງກ່າວແມ່ນມີ ກ່ອນມີການລະບາດຂອງພະຍາດໂຄວິດ-19 ແລ້ວກໍ່ຕາມ (MPI, 2021b) ແຕ່ແນວໂນ້ມຂອງສະພາບດັ່ງກ່າວອາດຈະເພີ່ມຂຶ້ນໃນໄລຍະທີ່ມີວິກິດການ.

ສິ່ງທ້າທາຍທາງດ້ານຈິດໃຈໄດ້ເພີ່ມທະວີຂຶ້ນໃນທຸກກຸ່ມປະຊາກອນ ເນື່ອງຈາກການລະບາດຂອງພະຍາດໂຄວິດ-19. ຜົນໄດ້ຮັບຈາກການສົນທະນາ ແລະ ການສໍາພາດກຸ່ມ ສໍາລັບບົດລາຍງານນີ້ຊີ້ໃຫ້ເຫັນວ່າໄວໜຸ່ມແມ່ນຢູ່ພາຍໃຕ້ຄວາມກົດດັນທາງດ້ານຈິດໃຈຢ່າງຮຸນແຮງຈາກການປະຕິບັດການຮັກສາໄລຍະຫ່າງ ແລະ ຕົກຢູ່ໃນສະພາບທີ່ຈະສູນເສຍອົງປະກອບດ້ານສັງຄົມ ແລະ ຈິດໃຈທີ່ສໍາຄັນຕໍ່ການພັດທະນາເຂົາເຈົ້າ. ພວກເຂົາມີຄວາມອ່ອນໄຫວໂດຍສະເພາະຕໍ່ສິ່ງທີ່ຂັດຂວາງການສຶກສາ ແລະ ການເຮັດວຽກຂອງເຂົາເຈົ້າ. ຄວາມກົດດັນໃນໄລຍະສັ້ນ ແລະ ຄວາມໂດດດ່ຽວອາດເຮັດໃຫ້ບາງຄົນມີພຶດຕິກໍາທີ່ມີຄວາມສ່ຽງ ແລະ ນໍາໃຊ້ສານເສບຕິດ. ບັນຫາສຸຂະພາບຈິດໃນໄລຍະຍາວອາດຈະປະກອບມີພະຍາດຊຶມເສົ້າຊໍາເຮື້ອ (MPI ແລະ UNICEF, 2021)

## ຄວາມສ່ຽງທັບຊ້ອນ ໄດ້ກາຍເປັນໄພຂົ່ມຂູ່ຕໍ່ອະນາຄົດຂອງໄວໜຸ່ມ

ຕໍ່ກັບວິກິດການຮ້າຍແຮງມັນຮຽກຮ້ອງໃຫ້ມີການເອົາໃຈໃສ່ຢ່າງແທ້ຈິງກ່ຽວກັບຊັບສິນທີ່ມີຄຸນຄ່າທີ່ສຸດຂອງປະເທດ, ຫນຶ່ງໃນນັ້ນແມ່ນປະຊາກອນທີ່ກວມອັດຕາສ່ວນຫຼາຍກວ່າໝູ່ນັ້ນກໍ່ຄືເຍົາວະຊົນ ແລະ ໄວຫນຸ່ມ. ສປປ ລາວ ມີຄວາມອ່ອນແອສູງຕໍ່ຄວາມສ່ຽງຫຼາຍດ້ານ ລວມທັງຄວາມສ່ຽງຈາກສະພາບອາກາດ ແລະ ໄພພິບັດທໍາມະຊາດແມ່ນແຕ່ກ່ອນການລະບາດຂອງພະຍາດ.

ບົດລາຍງານການພັດທະນາມະນຸດໂລກສະບັບຫຼ້າສຸດ ປີ 2021-2022 ໄດ້ຊີ້ໃຫ້ເຫັນເຖິງຄວາມເປັນຈິງແບບໃຫມ່ຂອງ "ຄວາມສະຫຼັບຊັບຊ້ອນທີ່ບໍ່ແນ່ນອນ" ທີ່ທົ່ວໂລກກໍາລັງປະເຊີນຫນ້າ. ອັນນີ້ແມ່ນມາຈາກການປ່ຽນແປງຂອງໂລກທີ່ອັນຕະລາຍທີ່ເອີ້ນວ່າວ່າ Anthropocene, ການຫັນປ່ຽນຂອງສັງຄົມ ແລະ ການເພີ່ມຂຶ້ນຂອງສັງຄົມທີ່ເອີ້ນວ່າ Polarization. ບົດລາຍງານໄດ້ເຊື່ອມໂຍງຄວາມສະຫຼັບຊັບຊ້ອນທີ່ບໍ່ແນ່ນອນນີ້ກັບຄວາມບໍ່ຫມັ້ນຄົງຂອງມະນຸດທີ່ເພີ່ມຂຶ້ນ, ທີ່ເຮັດໃຫ້ປະຊາຊົນມີຄວາມຮູ້ສຶກບໍ່ປອດໄພ ແລະ ບໍ່ໝັ້ນຄົງໃນຊີວິດ (UNDP, 2022b). ບົດລາຍງານສະບັບດັ່ງກ່າວໄດ້ລວມເອົາບົດລາຍງານພິເສດ 2022 ກ່ຽວກັບຄວາມປອດໄພຂອງມະນຸດ, ເຊິ່ງສະແດງໃຫ້ເຫັນວ່າຄວາມຮູ້ສຶກປອດໄພ ແລະ ຄວາມຫມັ້ນຄົງຂອງປະຊາຊົນແມ່ນຢູ່ໃນລະດັບຕໍ່າໃນເກືອບທຸກປະເທດ ລວມທັງປະເທດທີ່ຮັ່ງມີທີ່ສຸດ, ເຖິງແມ່ນວ່າຈະປະສົບຜົນສໍາເລັດໃນການພັດທະນາຫຼາຍປີກໍ່ຕາມ (UNDP, 2022a). ໃນສະພາບການດັ່ງກ່າວ, ການຕອບສະຫນອງຄວາມຕ້ອງການ ແລະ ສະຫວັດດີການຂອງເຍົາວະຊົນ ແລະ ໄວຫນຸ່ມ ແລະ ການຮັບປະກັນຄວາມປອດໄພຂອງເຂົາເຈົ້າຈຶ່ງມີຄວາມຈໍາເປັນຫຼາຍກວ່າເກົ່າ.

ປັດຈຸບັນ, ສປປ ລາວ ພວມປະສົບກັບວິກິດການເສດຖະກິດຄັ້ງໃຫຍ່ທີ່ສຸດນັບຕັ້ງແຕ່ປີ 1999. ການເຕີບໂຕຂອງ GDP ໃນປີ 2020 ແມ່ນຊັກຊ້າທີ່ສຸດນັບຕັ້ງແຕ່ປີ 1988. ຄັງສໍາຮອງເງິນຕາຕ່າງປະເທດຍັງຕໍ່າ (ທະນາຄານແຫ່ງ ສປປ ລາວ, 2022), ເນື່ອງຈາກກະແສການສົ່ງເງິນ ແລະ ລາຍຮັບຈາກການທ່ອງທ່ຽວທີ່ຂາດຫາຍໄປ ແລະ ພັນທະດ້ານໜີ້ສາທາລະນະທີ່ຄົບກໍານົດຊໍາລະ. ການເກັບລາຍຮັບຍິ່ງຫຍຸ້ງຍາກຫຼາຍຂຶ້ນໃນຂະນະທີ່ໜີ້ສິນທີ່ໄດ້ຮັບການຄໍ້າປະກັນຈາກລັດ ແລະ ໜີ້ສາທາລະນະໄດ້ເພີ່ມຂຶ້ນຈາກ 69 ສ່ວນຮ້ອຍ ຂອງ GDP ໃນປີ 2019 ເປັນ 88 ສ່ວນຮ້ອຍ ໃນປີ 2021 (ທະນາຄານໂລກ, 2022a). ການຊໍາລະຫນີ້ສິນໄລຍະສັ້ນແມ່ນຄາດຄະເນຢູ່ທີ່ປະມານ 1,1 ຕື້ໂດລາຕໍ່ປີແຕ່ປີ 2022-2025. ການຂາດເຂີນເງິນຕາຕ່າງປະເທດຢ່າງຕໍ່ເນື່ອງເຮັດໃຫ້ເງິນກີບສູນເສຍຄ່າໄປ 62 ສ່ວນຮ້ອຍ ລະຫວ່າງເດືອນສິງຫາ 2021 ຫາເດືອນສິງຫາ 2022. ອັດຕາເງິນເຟີ້ເພີ່ມຂຶ້ນຈາກ 6,3 ສ່ວນຮ້ອຍ ໃນເດືອນມັງກອນ 2022 ເປັນ 30 ສ່ວນຮ້ອຍ ໃນເດືອນສິງຫາ 2022 (ປີຕໍ່ປີ) (ທະນາຄານແຫ່ງ ສປປ ລາວ, 2022) .

ຮູບ 1.5

ຄວາມສ່ຽງດ້ານເສດຖະກິດມະຫາພາກເຫຼົ່ານີ້ໄດ້ເປັນອຸປະສັກໃຫ້ແກ່ການລົງທຶນຂອງລັດຖະບານໃນດ້ານການສຶກສາ, ສາທາລະນະສຸກ ແລະ ການຈ້າງງານ. ໃນປີ 2019 ລັດຖະບານໄດ້ໃຊ້ຈ່າຍໃນການຊໍາລະໜີ້ສິນຫຼາຍກວ່າ 5 ເທົ່າ (27,9%) ດ້ານສາທາລະນະສຸກ (4,9%), ຄວາມແຕກໂຕນສູງທີ່ສຸດເປັນອັນດັບ 7 ຂອງໂລກ ແລະ










ຊ່ອງຫວ່າງໄດ້ຂະຫຍາຍອອກໄປເລື້ອຍໆ (Barney and Souksakon, 2021). ການຊໍາລະດອກເບ້ຍແມ່ນສູງກວ່າການໃຊ້ຈ່າຍຂອງລັດຖະບານລວມໃນການສຶກສາ ແລະ ສາທາລະນະສຸກ ໃນປີ 2022 (ຮູບ 1.5). ການຖືກກະທົບຕໍ່ພື້ນທີ່ງົບປະມານໄດ້ກາຍເປັນໄພຂົ່ມຂູ່ຕໍ່ການລົງທຶນດ້ານການພັດທະນາມະນຸດທີ່ສໍາຄັນທີ່ ສປປ ລາວ ຕ້ອງການໃນຕອນນີ້ເພື່ອຮັບປະກັນຜົນປະໂຫຍດທາງດ້ານປະຊາກອນ.

ອັດຕາເງິນເຟີ້ ແລະ ຄ່າຄອງຊີບທີ່ສູງໄດ້ເຮັດໃຫ້ເກີດກົນລະຍຸດໃນການຮັບມືຂອງລະດັບຄົວເຮືອນເຊິ່ງເຮັດໃຫ້ການລົງທຶນຂອງຄົວເຮືອນຫຼຸດລົງຕື່ມອີກໃນດ້ານໂພຊະນາການ, ສຸຂະພາບ ແລະ ການສຶກສາ. ຫົກສິບຫ້າສ່ວນຮ້ອຍຂອງຄົວເຮືອນໄດ້ລາຍງານວ່າພວກເຂົາໄດ້ຫຼຸດການໃຊ້ຈ່າຍໃນການສຶກສາ ແລະ ສຸຂະພາບເພື່ອຮັບມືກັບໄພເງິນເຟີ້ (ທະນາຄານໂລກ, 2022b). ໃນຂະນະທີ່ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານໂດຍລວມເບິ່ງຄືວ່າຈະຫຼຸດລົງ, ສ່ວນແບ່ງຂອງຄົວເຮືອນທີ່ປະສົບກັບຄວາມບໍ່ໝັ້ນຄົງດ້ານອາຫານຢ່າງຮ້າຍແຮງໄດ້ເພີ່ມຂຶ້ນເຖິງ 23 ສ່ວນຮ້ອຍ ໃນເດືອນເມສາ ແລະ ເດືອນພຶດສະພາ 2022.

ຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດແມ່ນເປັນທົ່ວໂລກ ແຕ່ຜົນກະທົບແມ່ນມີບໍ່ເທົ່າກັນ. ປະຊາຊົນໃນປະເທດທີ່ທຸກຍາກທີ່ສຸດ, ໂດຍສະເພາະເຍົາວະຊົນ ແລະ ໄວໜຸ່ມ ຢູ່ໃນຈຸດທີ່ສູນເສຍຫຼາຍທີ່ສຸດ. ຄົນຮຸ່ນໜຸ່ມຈະໄດ້ຮັບອາກາດທີ່ຮ້ອນຫຼາຍກວ່າຄົນຮຸ່ນກ່ອນ 4 ຫາ 7 ເທົ່າ (UNDP, 2022b). ໃນສະພາບການທີ່ບໍ່ແນ່ນອນ ແລະ ການກະທົບຈາກພາຍນອກດັ່ງກ່າວ, ການຕອບສະໜອງຄວາມຕ້ອງການ ແລະ ຄວາມສະຫວັດດີການໃຫ້ແກ່ເຍົາວະຊົນ ແລະ ໄວໜຸ່ມ ແລະ ການຮັບປະກັນຄວາມປອດໄພແມ່ນຮີບດ່ວນຫຼາຍກວ່າແຕ່ກ່ອນ.

## 1.3 ວິທີການ ແລະ ໂຄງຮ່າງຂອງບົດລາຍງານ

ບົດລາຍງານການພັດທະນາມະນຸດແຫ່ງຊາດສະບັບນີ້ໄດ້ສະໜັບສະໜູນການຟື້ນຟູ ແລະ ການເລັ່ງລັດການພັດທະນາລະດັບຊາດ ແລະ ສາກົນ ພາຍຫຼັງວິກິດການ ລວມທັງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ IX ໄລຍະ 2021-2025 ແລະ ເປົ້າໝາຍການພັດທະນາແບບຍືນຍົງຮອດປີ 2030 ແລະ 18 ເປົ້າໝາຍການພັດທະນາແບບຍືນຍົງ. ບົດລາຍງານຈະຄົ້ນຄ້ວາຫຼາຍຄໍາຖາມກ່ຽວກັບເຍົາວະຊົນ ແລະ ໄວໜຸ່ມໃນ ສປປ ລາວ ດັ່ງນີ້

— **ປັດຈຸບັນໄວໜຸ່ມລາວ ມີກາລະໂອກາດອັນໃດແດ່** ແລະ ຄວາມມຸ່ງຫວັງຂອງເຂົາເຈົ້າແມ່ນຫຍັງ? ພວກເຂົາໃຊ້ປະໂຫຍດຈາກໂອກາດ

**ຮູບ 1.5: ການໃຊ້ຈ່າຍທາງສັງຄົມ ແລະ ດອກເບ້ຍເປັນເປີເຊັນຂອງ**

ແຫຼ່ງຂໍ້ມູນ: ທະນາຄານໂລກ, 2022a.






**ໃນຂະນະທີ່ຄວາມບໍ່ຫມັ້ນຄົງດ້ານສະບຽງອາຫານໂດຍລວມເບິ່ງຄືວ່າຈະຫຼຸດລົງ, ສ່ວນແບ່ງຂອງຄົວເຮືອນທີ່ປະສົບກັບຄວາມບໍ່ຫມັ້ນຄົງດ້ານອາຫານຢ່າງຮ້າຍແຮງໄດ້ເພີ່ມຂຶ້ນເຖິງ 23 ສ່ວນຮ້ອຍໃນເດືອນເມສາ ແລະ ເດືອນພຶດສະພາ 2022.**

ເຫຼົ່ານີ້ແນວໃດ ແລະ ໄດ້ໃຊ້ການບໍລິການທີ່ສຳຄັນເຊັ່ນ: ດ້ານສຶກສາ ແລະສາທາລະນະສຸກຄືແນວໃດ?

— **ໄວໜຸ່ມກຸ່ມໃດ** ທີ່ມັກຈະຖືກປະໄວ້ຂ້າງຫຼັງຢູ່ເລື້ອຍໆ?

— **ສະຖາບັນ ແລະ ນະໂຍບາຍສາທາລະນະ** ສາມາດສະໜັບສະໜູນໄວໜຸ່ມໃຫ້ດີຂຶ້ນໄດ້ຄືແນວໃດ ແລະ ສາມາດຮັບປະກັນໃຫ້ເຂົາເຈົ້ານຳໃຊ້

— ແລະ ສຸດທ້າຍ, **ການຊຸກຍູ້ ແລະ ການລົງທຶນປະເພດໃດແດ່ທີ່ຕ້ອງເຮັດຢ່າງຮີບດ່ວນ** ເພື່ອຮັບປະກັນວ່າກາລະໂອກາດເຫຼົ່ານີ້ສາມາດຕອບສະໜອງຕາມຄວາມມຸ່ງມາດປາດຖະໜາຂອງເຍົາວະຊົນ ແລະ ໄວໜຸ່ມ ພ້ອມທັງນຳພາພວກເຂົາໃຫ້ບັນລຸຄວາມມຸ່ງມາດປາດຖະໜາຂອງເຂົ້າເຈົ້າ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຊີວິດຂອງເຂົາເຈົ້າ ແລະ ໃນຂະນະດຽວກັນກໍໃຫ້ເຂົາເຈົ້າສາມາດປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍການພັດທະນາປະເທດຊາດ?

ການຄົ້ນຄວ້າຂອງບົດລາຍງານສະບັບນີ້ໄດ້ເກັບກຳທັງຂໍ້ມູນ ແລະ ຂ່າວສານຂັ້ນໜຶ່ງ ແລະ ຂັ້ນສອງການທົບທວນເອກະສານປະກອບມີການວິເຄາະໂຄງຮ່າງຂອງຂໍ້ມູນຈາກເອກະສານ ແລະ ນະໂຍບາຍທີ່ມີຢູ່. ການວິເຄາະຂໍ້ມູນຂັ້ນສອງໄດ້ນຳໃຊ້ຊຸດຂໍ້ມູນການສຳຫຼວດສະຖິຕິທີ່ສຳຄັນຫລ້າສຸດລວມທັງການສຳຫຼວດປະຊາກອນ ແລະ ທີ່ຢູ່ອາໄສປີ 2015, ການສຳຫຼວດດັດຊະນີໝາຍສັງຄົມລາວປີ 2017, ການສຳຫຼວດລາຍຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນລາວ ແລະ ການສຳຫຼວດກຳລັງແຮງງານປີ 2018-2019. ການເກັບກຳຂໍ້ມູນຂັ້ນໜຶ່ງລວມມີ:

— **ການສຳຫຼວດດ້ານປະລິມານ 2 ຄັ້ງ:** ຄັ້ງທີໜຶ່ງ ແມ່ນໄດ້ດຳເນີນຜ່ານທາງອິນເຕີເນັດໃນທົ່ວປະເທດ ແລະ ຄັ້ງທີສອງ ແມ່ນໄດ້ສຳຫຼວດຄືນໃນ 6 ແຂວງຄື: ອຸດົມໄຊ, ຫຼວງພະບາງ, ແຂວງວຽງຈັນ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ. ການສຳຫຼວດໄດ້ດຳເນີນຂຶ້ນຕັ້ງແຕ່ເດືອນກຸມພາ ຫາ ເດືອນເມສາ 2022 (ເບິ່ງເອກະສານຊ້ອນທ້າຍ 1 ສຳລັບເຄື່ອງມືການສຳຫຼວດ). ການສຳຫຼວດເຫຼົ່ານີ້ໄດ້ສັງລວມຂໍ້ມູນຄວາມຮັບຮູ້ຂອງໄວໜຸ່ມຍິງ ແລະ ຊາຍກ່ຽວກັບເສັ້ນທາງການພັດທະນາຢູ່ ສປປ ລາວ ໂດຍສະເພາະດ້ານການສຶກສາ, ການຈ້າງງານ, ການມີສ່ວນຮ່ວມ, ສາທາລະນະສຸກ ແລະ ສະຫວັດດີການສັງຄົມ. ປະມານ 6.790 ຄົນ ທີ່ມີອາຍຸລະຫວ່າງ 15-24 ປີ ໄດ້ຕອບຄຳຖາມສຳຫຼວດ, ເຊິ່ງໄດ້ຖືກອອກແບບໂດຍມີການປຶກສາຫາລືກັບສະຖາບັນຄົ້ນຄວ້າການພັດທະນາພາຍໃນກະຊວງແຜນການ ແລະ ການລົງທຶນ. ມີ ສີ່ ຂະບວນການຄັດເລືອກກຸ່ມເປົ້າໝາຍແບບສຸ່ມທີ່ຖືກນຳໃຊ້ເຂົ້າໃນການສຳຫຼວດເຊັ່ນ: ການສຸ່ມແຂວງໃນເຂດແຄວ້ນ, ເມືອງໃນແຂວງ, ບ້ານໃນເມືອງ ແລະ ຄົວເຮືອນ ແລະ ຜູ້ຕອບແບບສອບຖາມ. ຫຼັງຈາກການສຳຫຼວດສຳເລັດແລ້ວ, ໄດ້ມີການປຶກສາຫາລືກັບພາກສ່ວນກ່ຽວຂ້ອງຂອງລັດໃນເດືອນມິຖຸນາ 2022 ເຊິ່ງໄດ້ກວດກາຄວາມຖືກຕ້ອງຂອງຂໍ້ມູນສຳລັບບົດລາຍງານ.

— **ການສົນທະນາກຸ່ມ:** ມີການແບ່ງເປັນ 20 ກຸ່ມໃນກອງປະຊຸມໃນ ເດືອນ ທັນວາ 2021, ເຊິ່ງມີຜູ້ເຂົ້າຮ່ວມ 100 ຄົນທີ່ມີພື້ນຖານແຕກຕ່າງກັນ. ການສົນທະນາແມ່ນເປັນແບບເຄິ່ງເປີດ (semi-structure) ແລະ ນຳໃຊ້ຄູ່ມືການແບ່ງກຸ່ມສົນທະນາ (ເອກະສານຊ້ອນທ້າຍ 2).

— **ການສຳພາດ ພາກສ່ວນກ່ຽວຂ້ອງທີ່ສຳຄັນ:** ມີການສຳພາດບັນດາສະມາຄົມທີ່ບໍ່ຫວັງຜົນກຳໄລ ແລະ ຜູ້ຊ່ຽວຊານທີ່ສຳຄັນທີ່ເຮັດວຽກກ່ຽວກັບບັນຫາຊາວຫນຸ່ມ ແລະ ການພັດທະນາ, ລວມທັງອົງການ UNFPA, UNICEF, WHO, ILO, IOM ແລະ UNODC.

— **ການຈັດເວທີສົນທະນາ:** ມີສອງກອງປະຊຸມປຶກສາຫາລືກ່ຽວກັບຫົວຂໍ້ການຈ້າງງານຂອງໄວໜຸ່ມ (7 ກໍລະກົດ 2022) ແລະ ການມີສ່ວນຮ່ວມຂອງໄວໜຸ່ມ (12 ສິງຫາ 2022) ທີ່ໄດ້ຖືກຈັດຂຶ້ນໂດຍມີຜູ້ຕາງໜ້າຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ອົງການ UNICEF, ພາກເອກະຊົນ, ຜູ້ປະກອບການ, ສະຖາບັນລາວ-ອົດສະຕຣາລີ ແລະ ໄວໜຸ່ມທີ່ມີພື້ນຖານແຕກຕ່າງກັນ ຫຼາຍກວ່າ 200 ຄົນໄດ້ເຂົ້າຮ່ວມທັງດ້ວຍຕົນເອງ ແລະ ທາງອອນລາຍ.

— **ການປຶກສາຫາລືກັບພາກສ່ວນກ່ຽວຂ້ອງຫຼັກ:** ກອງປະຊຸມປຶກສາຫາລືລະຫວ່າງ 5 ພາກສ່ວນກ່ຽວຂ້ອງຫຼັກໄດ້ຖືກຈັດຂຶ້ນໃນລະຫວ່າງ ເດືອນ ທັນວາ 2021 ຫາ ກັນຍາ 2022. ເຊິ່ງໄດ້ຈັດຂຶ້ນຮ່ວມກັບສະຖາບັນຄົ້ນຄວ້າການພັດທະນາ ທີ່ ກະຊວງແຜນການ ແລະ ການລົງທຶນ, ກອງປະຊຸມດັ່ງກ່າວໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມກວດສອບຜົນການຄົ້ນຄວ້າ, ການວິເຄາະ ແລະ ຂໍ້ສະເໜີແນະທີ່ສຳຄັນໃນແຕ່ລະພາກຂອງບົດລາຍງານ. ເຂົ້າຮ່ວມມີຜູ້ຕາງໜ້າຈາກກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ສູນກາງຊາວໜຸ່ມລາວ, ສະຫະພັນແມ່ຍິງລາວ ແລະ ອື່ນໆ.

ສະຖາບັນຄົ້ນຄວ້ານະໂຍບາຍການພັດທະນາ ແລະ UNDP ໄດ້ຮ່ວມມືກັນພັດທະນາບົດລາຍງານ. ຄະນະຊີ້ນຳລະຫວ່າງກະຊວງ ເຊິ່ງໄດ້ຖືກສ້າງຕັ້ງຂຶ້ນພາຍໃຕ້ລັດຖະດຳລັດສະບັບເລກທີ 201/ນຍ, ລົງວັນທີ 30 ກໍລະກົດ 2021 ໄດ້ຊີ້ນຳການຄົ້ນຄວ້າ, ວິເຄາະສະຖິຕິ, ກວດສອບຄວາມຖືກຕ້ອງ ແລະ ສັງລວມຜົນການຄົ້ນພົບທີ່ສຳຄັນ (ເບິ່ງເອກະສານຊ້ອນທ້າຍ 3 ກ່ຽວກັບບົດບາດ ແລະ ອົງປະກອບຂອງຄະນະກຳມາທິການ). ຈຸດປະສານງານໃນສະຖາບັນຄົ້ນຄວ້າການພັດທະນາ, ຫ້ອງການ UNDP ປະຈຳພາກພື້ນທີ່ບາງກອກ ແລະ ຫ້ອງການລາຍງານການພັດທະນາມະນຸດຂອງ UNDP ໄດ້ທົບທວນບົດລາຍງານດັ່ງກ່າວຮ່ວມກັນ.

## ແຜນໃນຕໍ່ໜ້າມີຫຍັງແດ່?

ບົດລາຍງານການພັດທະນາມະນຸດແຫ່ງຊາດສະບັບນີ້ໄດ້ນຳໃຊ້ວິທີການຫຼາຍດ້ານຕໍ່ກັບໄວໜຸ່ມ ແລະ ຄວາມກັງວົນຂອງເຂົາເຈົ້າ, ແລະ ນະໂຍບາຍທີ່ສຳຄັນສຳລັບໄວໜຸ່ມເພື່ອຊຸກຍູ້ການພັດທະນາແບບຍືນຍົງ. ພາກຕໍ່ໄປຈະພິຈາລະນາ 4 ດ້ານທີ່ສຳຄັນຄື: ການຈ້າງງານ ແລະ ການສ້າງວຽກເຮັດງານທຳທີ່ມີມູນຄ່າສູງ, ການສຶກສາ, ສຸຂະພາບ ແລະ ສະຫວັດດີການ, ການມີສ່ວນຮ່ວມ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມ. ໃນຂະນະທີ່ແຕ່ລະດ້ານແມ່ນຈະຖືກວິເຄາະໃນພາກໃຜລາວ, ບັນຫາທັງຫມົດເຫຼົ່ານີ້ແມ່ນມີພົວພັນກັນຢ່າງສະໜິດແໜ້ນ, ເຊິ່ງບົດລາຍງານໄດ້ຊີ້ໃຫ້ເຫັນການພົວພັນກັນດັ່ງກ່າວຢ່າງຈະແຈ້ງ. ພາກສຸດທ້າຍແມ່ນພາກສະຫຼຸບ ແລະ ໃຫ້ຂໍ້ສະເໜີແນະຕົ້ນຕໍ.

ຕໍ່ຈາກບົດສະເໜີ ແມ່ນ**ບົດທີ 2** ທີ່ໄດ້ທົບທວນຄືນບັນດາກົດຫມາຍ ແລະ ນະໂຍບາຍການຈ້າງງານຂອງໄວຫນຸ່ມທີ່ມີຢູ່ແລ້ວ ແລະ ກຳນົດຊ່ອງຫວ່າງ ແລະ ແນວໂນ້ມຂອງການຈ້າງງານຂອງໄວຫນຸ່ມ. ພ້ອມນັ້ນ ຍັງຄົ້ນຄວ້າຕື່ມກ່ຽວກັບອຸປະສັກຕາມແຕ່ລະຂະແໜງການ ພ້ອມທັງ ສິ່ງທ້າທາຍ ແລະ ກາລະໂອກາດທີ່ກ່ຽວຂ້ອງ. ໃນຂະນະທີ່ການວ່າງງານຂອງໄວຫນຸ່ມໄດ້ເພີ່ມຂຶ້ນໃນຊຸມປີມໍ່ໆມານີ້, ພາກນີ້ສະເໜີໃຫ້ແນະສຳລັບການດຳເນີນການອັນຮີບດ່ວນເພື່ອຮັບປະກັນວ່າຈຳນວນໄວຫນຸ່ມທີ່ເຂົ້າສູ່ຕະຫຼາດວຽກເຮັດງານທຳຈະມີທັກສະທີ່ເຫມາະສົມເພື່ອຊອກຫາວຽກເຮັດງານທຳທີ່ເຫມາະສົມ ແລະ ຊຸກຍູ້ຄວາມຫຼາກຫຼາຍທາງດ້ານເສດຖະກິດຂອງປະເທດໄປສູ່ເສດຖະກິດສີຂຽວ ແລະ ເສດຖະກິດທີ່ອີງໃສ່ເຕັກໂນໂລຢີດີຈີຕອນນັບມື້ຫຼາຍຂຶ້ນ. ວຽກງານທີ່ຕ້ອງປະຕິບັດໃນອະນາຄົດແມ່ນຫົວຂໍ້ສຳຄັນທີ່ຄວນຈະໄດ້ຮັບການກ່າວເຖິງທັນທີທັນໃດພ້ອມກັບຂອບເຂດການຂະຫຍາຍອອກໄປເປັນຜູ້ປະກອບການຂອງໄວຫນຸ່ມ.

**ບົດທີ 3** ນຳໃຊ້ຂໍ້ມູນແບບແຍກຍ່ອຍເພື່ອຊີ້ໃຫ້ເຫັນສິ່ງທ້າທາຍໃນການສຶກສາ, ກໍ່ຄືດ້ານການເຂົ້າເຖິງ ແລະ ດ້ານຄຸນນະພາບ. ບົດນີ້ ສະເໜີໃຫ້ແກ້ໄຂສິ່ງທ້າທາຍເຫຼົ່ານີ້ຢ່າງຮີບດ່ວນເພື່ອໃຫ້ໄວໜຸ່ມສາມາດຊອກຫາວຽກເຮັດງານທຳທີ່ເໝາະສົມ ແລະ ປະກອບສ່ວນເຂົ້າໃນວາລະການພັດທະນາແບບຍືນຍົງຂອງປະເທດຕື່ມອີກ. ບົດນີ້ໃຫ້ຂໍ້ສະເໜີແນະດ້ານການຮັບປະກັນໃຫ້ການສຶກສາສອດຄ່ອງຄວາມຕ້ອງການຂອງຕະຫຼາດແຮງງານ, ເຊິ່ງເນັ້ນເຖິງຜົນປະໂຫຍດຂອງການສຶກສາຕໍ່ສັງຄົມ ແລະ ການມີສ່ວນຮ່ວມຂອງພາກເອກະຊົນໃນດ້ານການເງິນໃນການສຶກສາ, ໄປຄຽງຄູ່ກັບມາດຕະການສະເພາະເພື່ອແກ້ໄຂ ແລະ ສະກັດກັ້ນຄວາມບໍ່ສະເໝີພາບດ້ານການສຶກສາສຳລັບກຸ່ມຄົນດ້ອຍໂອກາດ.

ການຕອບສະໜອງຄວາມຕ້ອງການດ້ານສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີການຂອງຊາວໜຸ່ມ ແມ່ນເປັນຈຳເປັນໃນການເຮັດໃຫ້ເຂົາເຈົ້າມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນສັງຄົມ ແລະ ເສດຖະກິດ. **ບົດທີ 4** ໄດ້ທົບທວນບັນຫາເຫຼົ່ານີ້ ແລະ ວິເຄາະວ່າເຖິງວ່າຈະມີການປະຕິຮູບ ແລະ ປັບປຸງຂະແໜງສາທາລະນະສຸກຢ່າງຫຼວງຫຼາຍນັບແຕ່ຊຸມປີ 1990 ເປັນຕົ້ນມາ, ສຸຂະພາບຈິດ, ສິດທິຂອງໄວໜຸ່ມດ້ານສຸຂະພາບທາງເພດ, ສຸຂະພາບຈະເລີນພັນ ແລະ ການຕິດຢາເສບຕິດ ຍັງຄົງເປັນບັນຫາສຳຄັນຂອງໄວໜຸ່ມລາວ, ຈຶ່ງຮຽກຮ້ອງມີການຮ່ວມມືກັນລະຫວ່າງພາກສ່ວນຕ່າງໆຕໍ່ບັນຫານີ້ໃຫ້ຫຼາຍຂຶ້ນ.

**ບົດທີ 5** ໄດ້ຍົກໃຫ້ເຫັນການເຊື່ອມໂຍງທີ່ເຂັ້ມແຂງລະຫວ່າງການມີສ່ວນຮ່ວມຂອງໄວຫນຸ່ມ ແລະ ການພັດທະນາມະນຸດ. ໃນ ສປປ ລາວ ກໍຄືໃນຫຼາຍປະເທດຂອງໂລກ, ໄວໜຸ່ມຍັງຖືກຍົກເວັ້ນຈາກຂະບວນການທາງດ້ານການເມືອງ. ເພື່ອເຮັດໃຫ້ເຂົາເຈົ້າກາຍເປັນຜູ້ຂັບເຄື່ອນການພັດທະນາທີ່ຍືນຍົງ, ໄວໜຸ່ມລາວຕ້ອງການໂອກາດໃນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຕັດສິນໃຈທີ່ມີຜົນກະທົບຕໍ່ຊີວິດຂອງເຂົາເຈົ້າ ແລະ ພື້ນຖານຂອງປະເທດ.

ເພື່ອຮັບປະກັນໃຫ້ມີການເປັນຜູ້ນຳ ແລະ ການເຂົ້າຮ່ວມຢ່າງມີຄວາມໝາຍທັງດ້ານການເມືອງ ແລະ ດ້ານພົນລະເມືອງ, ຈຶ່ງຮຽກຮ້ອງໃຫ້ຍົກເລີກບັນດາສິ່ງກີດຂວາງດ້ານກົດໝາຍທີ່ເປັນອຸປະສັກໃຫ້ແກ່ການມີສ່ວນຮ່ວມຂອງໄວໜຸ່ມ, ສ້າງກົນໄກສຳລັບສ້າງຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມ, ສົ່ງເສີມບັນດາກິດຈະກຳລິເລີ່ມດ້ານການເສີມສ້າງທັກສະການເປັນຜູ້ນຳໃຫ້ແກ່ໄວໜຸ່ມ, ສ້າງຄວາມສາມາດຜູ້ນຳໃນອະນາຄົດ ແລະ ປ່ຽນແປງທັດສະນະກ່ຽວກັບການມີສ່ວນຮ່ວມຂອງໄວໜຸ່ມ ທັງໃນບັນດາໄວໜຸ່ມ ແລະ ໃນທົ່ວສັງຄົມ.

ໃນການຮັບປະກັນຜົນປະໂຫຍດຈາກທ່າແຮງດ້ານປະຊາກອນ, **ບົດທີ 6** ຮຽກຮ້ອງໃຫ້ມີການນຳໃຊ້

ວິທີການແບບກວມລວມເພື່ອແກ້ໄຂສິ່ງທ້າທາຍທັງໝົດທີ່ໄວໜຸ່ມພວມປະເຊີນໜ້າຢູ່ໃນຄອບຄົວ, ຊຸມຊົນ, ໂຮງຮຽນ, ບ່ອນເຮັດວຽກ ແລະ ສະຖານທີ່ອື່ນໆ. ບົດນີ້ແມ່ນເນັ້ນໃສ່ການເຂົ້າໄປຊຸກຍູ້ທີ່ທັນເວລາ ແລະ ສະຫຼຸບຂໍ້ສະເໜີແນະ ທີ່ສຳຄັນຈາກແຕ່ລະພາກ, ສະໜັບສະໜູນການເຊື່ອມສານນະໂຍບາຍ ແລະ ແຜນງານສຳລັບໄວໜຸ່ມ ໂດຍການເຊື້ອເຊີນໄວໜຸ່ມແລະ ແມ່ຍິງມາໃຫ້ທັດສະນະຂອງເຂົາເຈົ້າຢ່າງຕໍ່ເນື່ອງ.

ທຸກບົດໃນບົດລາຍງານສະບັບນີ້ ແມ່ນຄຳນຶງເຖິງບັນຫາບົດບາດຍິງ-ຊາຍ, ເນັ້ນໃສ່ຄວາມຕ້ອງການສະເພາະ ແລະ ສິ່ງທ້າທາຍຂອງໄວໜຸ່ມຍິງ. ຕະຫຼອດບົດລາຍງານນີ້ ຈະເຫັນໄດ້ເຖິງຄວາມພະຍາຍາມຄົ້ນຄວ້າເບິ່ງສະຖານະການສະເພາະຂອງໄວໜຸ່ມທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດ, ເຊັ່ນ: ຄົນທີ່ມີຄວາມພິການ, ຄົນທີ່ດຳລົງຊີວິດຢູ່ເຂດຊົນນະບົດຫ່າງໄກສອກຫຼີກ, ຄົນຈາກບັນດາຊົນເຜົ່າ, ກຸ່ມຄົນທີ່ມີຄວາມຫຼາກຫຼາຍທາງເພດ (LGBT-QI+) ແລະ ອື່ນໆ. ນອກນັ້ນກໍຍັງມີບັນຫາອື່ນໆທີ່ຕິດພັນກັບຫຼາຍຂະແໜງການເຊັ່ນ ບັນຫາສິ່ງແວດລ້ອມ ແລະ ການຫັນເປັນດີຈີຕອນ.





1 ພາກສະເໜີ



2 ການສ້າງວຽກເຮັດງານທຳ ທີ່ມີຄຸນຄ່າສູງ ແລະ ລາຍຮັບ ທີ່ເໝາະສົມ



3 ການສຶກສາ ແລະ ການ ພັດທະນາສີມືແຮງງານ



4 ສຸຂະພາບ, ການເປັນຢູ່ທີ່ດີ ແລະ ຄວາມປອດໄພ



5 ການພັດທະນາມະນຸດ ແລະ ການສ້າງຄວາມ ເຂັ້ມແຂງໃຫ້ໄວໜຸ່ມ



6 ບົດສະຫຼຸບ

# ເອກະສານອ້າງອີງ


ADB (Asian Development Bank). 2017. Lao PDR: Accelerating Structural Transformation for Inclusive Growth: Country Diagnostic Study. Manila. https://www.adb.org/sites/default/files/publication/378726/lao-pdr-accelerating-structural-transformation.pdf

———. 2022. Asian Development Outlook 22: Mobilizing Taxes for Development. https://www.adb.org/publications/asian-development-outlook-2022

Alkire, S., and S. Deneulin. 2009. "The Human Development and Capability Approach." In S. Deneulin and L. Shahani, eds., An Introduction to the Human Development and Capability Approach: Freedom and Agency. Routledge.

Better Markets. 2015. The Cost of the Crisis: $20 Trillion and Counting. Washington, DC. https://bettermarkets.org/wp-content/uploads/2021/07/Better-Markets-Cost-of-the-Crisis_1.pdf

Bank of Lao. 2022. Annual Economic Report 2021. https://www.bol.gov.la/en/fileupload/30-06-2022_1656606603.pdf

Barney, K., and K. Souksakoun. 2021. "Credit Crunch: Chinese Infrastructure Lending and Lao Sovereign Debt." Asia and the Pacific Policy Studies 8(1): 94-113.

Hall, J. 2015. Developing Humans—Human Development: Young Voices; New Ideas. New York: UNDP. https://hdr.undp.org/content/developing-humans-human-development-young-voices-new-ideas\

IMF (International Monetary Fund). 2019. Lao People's Democratic Republic: Staff Report for the 2019 Article IV Consultation. Washington, DC. https://www.imf.org/en/Publications/CR/Issues/2019/08/08/Lao-Peoples-Democratic-Republic-2019-Article-IV-Consultation-Press-Release-Staff-Report-48577

Junankar, P.N.R. 2015. "The Impact of the Global Financial Crisis on Youth Unemployment." In Economics of the Labour Market. Palgrave Macmillan.

LSB (Lao Statistics Bureau). 2016. Results of the Population and Housing Census 2015. https://lao.unfpa.org/en/publications/results-population-and-housing-census-2015-english-version

———. 2017. Labour Force Survey. Vientiane https://www.ilo.org/surveyLib/index.php/catalog/7627/related-materials

———. 2018. Lao Social Indicator Survey II (2017): Summary Survey Findings Report and Statistical Snapshots. https://www.unicef.org/eap/sites/unicef.org.eap/files/2018-06/Summary%20Survey%20Findings%20Report%20an%20statistical%20snapshots%20of%20Lao%20Social%20Indicator%20Survey%20II.pdf

LSB (Lao Statistics Bureau) and World Bank. 2020. Poverty Profile in Lao PDR: Poverty Report for the Lao Expenditure and Consumption Survey 2018-2019. https://thedocs.worldbank.org/en/doc/923031603135932002-0070022020/original/LaoPDRPovertyProfileReportENG.pdf

LYU (Lao People's Revolutionary Youth Union). 2021. Lao Youth and Adolescent Development Strategy 2021-2030. Vientiane.

Macroeconomic Research Institute, Lao Academy of Social and Economic Sciences (LASES), United Nations Lao PDR, October 2022. Joint Programme High-Frequency Data - Issue 1: Vulnerable Groups: https://laopdr.un.org/en/205715-joint-programme-high-frequency-data-bulletin-1-vulnerable-groups"

Ministry of Education and Sports. 2014. Ethnic Groups Development Plan for the Second Global Partnership for Education Project. Vientiane. https://ewsdata.rightsindevelopment.org/files/documents/30/WB-P149130_QLhfieV.pdf

Ministry of Finance 2022 - https://www.mof.gov.la/wp-content/uploads/2021/05/Public-Debt-Bulletin-2020-English-version_Final.pdf

Ministry of Health. 2015. Indigenous Peoples Planning Framework: Ethnic Group Development Plan—Lao PDR: Health Sector Governance Program. Vientiane. https://www.adb.org/sites/default/files/project-document/161134/47137-003-ipdp-01.pdf

MPI (Ministry of Planning and Investment). 2021a. Ninth Five-Year National Socio-Economic Development Plan (2021-2025). Vientiane. https://laofab.org/document/download/4870

———. 2021b. Covid-19 Risks and Vulnerabilities in Lao PDR. https://www.unicef.org/laos/media/4951/file/COVID-19%20RISKS%20AND%20VULNERABILITIES%20IN%20LAO%20PDR.pdf

MPI (Ministry of Planning and Investment) and UNFPA (United Nations Population Fund). 2020. Window of Opportunity for Realizing a Demographic Dividend. https://lao.unfpa.org/sites/default/files/pub-pdf/dd_brief_eng.pdf

MPI (Ministry of Planning and Investment) and UNICEF (United Nations Children' Fund). 2021. Impact of Covid-19 on Adolescent Well-being and Mental Health. https://www.unicef.org/laos/media/4816/file/IMPACT%20OF%20COVID-19%20ON%20ADOLESCENT%20WELLBEING%20AND%20MENTAL%20HEALTH.pdf

Sen, A. 1999. Development as Freedom. Oxford University Press.

United Nations. 2020. Lao PDR Socio-Economic Response Framework to Covid-19. Vientiane. https://unsdg.un.org/sites/default/files/2020-10/LAO_Socioeconomic-Response-Plan_2020.pdf

———. 2021. UN Common Country Analysis for the UN Sustainable Development Cooperation Framework 2022-2016 and the 2030 Agenda: Lao People's Democratic Republic. Vientiane. https://laopdr.un.org/sites/default/files/2022-02/CCA%2012072021.pdf

United Nations General Assembly. 2021. Graduation of Bangladesh, the Lao People's Democratic Republic and Nepal from the least developed country category. Resolution A/76/L.6/Rev.1. https://documents-dds-ny.un.org/doc/UNDOC/LTD/N21/332/88/PDF/N2133288.pdf?OpenElement

UNDESA (United Nations Department of Economic and Social Affairs). 2019. The 2019 Revision of the World Population Prospects. https://population.un.org/wpp/

UNDP (United Nations Development Programme). 1990. Human Development Report. New York. https://hdr.undp.org/content/human-development-report-1990

———.2009. The Fourth National Human Development Report of Lao PDR: Employment and Livelihood. Vientiane. https://hdr.undp.org/system/files/documents//laonhdr2009enpdf.pdf

———. 2014. Human Development Report 2014: Sustaining Human Progress: Reducing Vulnerabilities and Building Resilience. New York. https://hdr.undp.org/content/human-development-report-2014

———. 2020a. Human Development Report 2020: The Next Frontier: Human Development and the Anthropocene. New York. https://hdr.undp.org/sites/default/files/Country-Profiles/LAO.pdf

———. 2020b. Projected Impacts of Covid-19 on the 2020 Human Development Index in Cambodia and its Neighbours (Policy Brief). Phnom Penh. https://www.undp.org/cambodia/publications/projected-impacts-covid-19-2020-human-development-index-cambodia-and-its-neighbors

———. 2020c. 2020 Technical Note 1 (Human Development Report). New York. https://hdr.undp.org/system/files/documents//technical-notes-calculating-human-development-indices.pdf

———. 2022a. Special Report on Human Security. New York. https://hdr.undp.org/content/2022-special-report-human-security

———. 2022b. 2021/2022 Human Development Report: Uncertain Times, Unsettled Lives: Shaping our Future in a Transforming World. New York. https://hdr.undp.org/system/files/documents/global-report-document/hdr2021-22pdf_1.pdf

UNESCO (United Nations Educational, Scientific and Cultural Organization) and UNICEF (United Nations Children's Fund). 2021. Lao PDR Case Study: Situation Analysis on the Effects of and Responses to COVID-19 on the Education Sector in Asia. https://unesdoc.unesco.org/ark:/48223/pf0000379513

United Nations Lao PDR. 2022. Macroeconomic Research Institute, Lao Academy of Social and Economic Sciences (LASES), United Nations Lao PDR, October 2022. Joint Programme High-Frequency Data - Issue 1: Vulnerable Groups: https://laopdr.un.org/en/205715-joint-programme-high-frequency-data-bulletin-1-vulnerable-groups

SAID (United States Agency for International Development). 2021. Final Report: USAID/Lao PDR COVID-19 Assessment. Vientiane. https://pdf.usaid.gov/pdf_docs/PA00XS7K.pdf

Warr, P., S. Rasphone and J. Menon. 2015. Two Decades of Rising Inequality and Declining Poverty in the Lao People's Democratic Republic. ADB Economics Working Paper Series, No. 461. https://www.adb.org/sites/default/files/publication/176031/ewp-461.pdf

World Bank. 2011. World Development Report 2011: Conflict, Security, and Development. Washington, DC. https://openknowledge.worldbank.org/handle/10986/4389

———. 2022a. Lao PDR Economic Monitor: Restoring Macroeconomic Stability to Support Recovery. Bangkok. https://pubdocs.worldbank.org/en/273661652363898384/Lao-Economic-Monitor-April-2022-final

———. 2022b. Monitoring Household Welfare in Lao PDR: Results Snapshot from a Rapid Monitoring Phone Survey of Households (Report no. 5). https://thedocs.worldbank.org/en/doc/0540059f3dbe2a7bac78b780c428eba4-0070062022/original/WBLaoPDRSurveyBriefC19ImpactHHr5.pdf

WHO (World Health Organization). 2018. Maternal Mortality (fact sheet). Geneva. https://apps.who.int/iris/bitstream/handle/10665/112318/WHO_RHR_14.06_eng.pdf




# ບົດທີ #2 ການສ້າງວຽກເຮັດງານທຳທີ່ມີຄຸນຄ່າສູງ ແລະ ລາຍຮັບທີ່ເໝາະສົມ

ການຈ້າງງານຂອງໄວໜຸ່ມແມ່ນມີຄວາມສຳຄັນທາງດ້ານເສດຖະກິດ ແລະ ການພັດທະນາມະນຸດ. ວຽກງານທີ່ມີຄຸນຄ່າ ບໍ່ພຽງແຕ່ສ້າງລາຍຮັບເທົ່ານັ້ນ ແຕ່ມັນຍັງເຮັດໃຫ້ຜູ້ເຮັດວຽກຮູ້ສຶກມີກຽດສັກສີ ໃນຖານະມະນຸດຜູ້ໜຶ່ງທັງຊ່ວຍ ສ້າງສິດທິ ແລະ ຄວາມອາດສາມາດສ່ວນບຸກຄົນ ແລະ ເປັນເຄື່ອງມືໃຫ້ແກ່ໄວໜຸ່ມໃນການກຳນົດທິດທາງຊີວິດຂອງຕົນເອງ ແລະ ຊຸມຊົນຂອງເຂົາເຈົ້າອີກດ້ວຍ. ອີງຕາມຫຼັກການການພັດທະນາມະນຸດ ໃຫ້ຮູ້ວ່າການແກ້ໄຂບັນຫາທີ່ກ່ຽວຂ້ອງກັບ ການຫວ່າງງານຂອງໄວໜຸ່ມ ບໍ່ໄດ້ກ່ຽວຂ້ອງແຕ່ ກັບການຫຼຸດຜ່ອນອັດຕາການຫວ່າງງານ ແລະ ການ ສ້າງວຽກເຮັດງານທຳໃຫ້ຫຼາຍຂຶ້ນເທົ່ານັ້ນ, ແຕ່ຄວນຈະໃຫ້ຄວາມສຳຄັນກັບການຈັບຄູ່ ໂອກາດການເຮັດວຽກກັບຄວາມມຸ່ງມາດປາຖະໜາດ້ານອາຊີບ ແລະ ທັບມ້າງສິ່ງກີດຂວາງທັງໝົດໃນການຫັນປ່ຽນຈາກການສຶກສາ ໄປສູ່ການຈ້າງງານ. ອົງປະກອບເຫຼົ່ານີ້ຍັງເປັນພື້ນຖານໃນການເກັບກ່ຽວ ຄວາມໄດ້ປຽບທີ່ເກີດຈາກການປ່ຽນແປງໂຄງສ້າງ ດ້ານອາຍຸຂອງປະຊາກອນຂອງປະເທດ ແລະ ປັບປຸງບົດບາດຂອງໄວໜຸ່ມໃຫ້ເໝາະສົມໃນການຂັບເຄື່ອນການພັດທະນາຂອງ ສປປ ລາວ ໃນອະນາຄົດ.

ຕະຫຼາດແຮງງານບໍ່ນິຍົມຈ້າງງານໄວໜຸ່ມ.ໃນເກືອບທຸກປະເທດ, ໄວໜຸ່ມແມ່ນຖືກຈ້າງງານໜ້ອຍກວ່າຜູ້ໃຫຍ່ ເຖິງແມ່ນວ່າໃນໄລຍະທີ່ເສດຖະກິດກຳລັງຂະຫຍາຍຕົວກໍ່ຕາມ. ຢູ່ໃນ ສປປ ລາວ, ໄວໜຸ່ມມີແນວໂນ້ມທີ່ຈະຫວ່າງງານ ແລະ ຂາດວຽກເຮັດງານທຳ ແລະ ເສຍວຽກເຮັດ ເນື່ອງຈາກວ່າເຂົາເຈົ້າຍັງບໍ່ມີຄວາມໝັ້ນຄົງໃນອາຊີບ.ໃນທົ່ວໂລກ,ໄວໜຸ່ມສ່ວນໃຫຍ່ເຮັດວຽກຢູ່ໃນຂະແໜງການທີ່ມີຄວາມສ່ຽງດ້ານເສດຖະກິດທີ່ໄດ້ຮັບຜົນກະທົບຢ່າງໜັກໜ່ວງໃນໄລຍະທີ່ເສດຖະກິດຕົກຕໍ່າ.

ບົດນີ້ ເວົ້າກ່ຽວກັບຜົນກະທົບຂອງການແຜ່ລະບາດຂອງພະຍາດ ແລະ ຄວາມສ່ຽງຂອງສະພາບເສດຖະກິດຕົກຕໍ່າໃນປັດຈຸບັນ ແລະ ຄວາມບໍ່ແນ່ນອນໃນທົ່ວໂລກຕໍ່ຄວາມໝັ້ນຄົງທາງເສດຖະກິດຂອງໄວໜຸ່ມ. ຄວາມບໍ່ແນ່ນອນທີ່ກ່ຽວພັນກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ແລະ ການຫັນປ່ຽນທາງເຕັກໂນໂລຢີ ໄດ້ປ່ຽນແປງຮູບແບບຂອງການເຮັດວຽກ. ວຽກ ແລະ ທັກສະທີ່ຈຳເປັນສຳລັບການເຮັດວຽກຈະແຕກຕ່າງຈາກຕະຫຼາດໃນປັດຈຸບັນຢ່າງຫຼວງຫຼາຍ ທັງທາງດ້ານລັກສະນະ ແລະ ຂະໜາດ ເຊິ່ງອາດຈະເຮັດໃຫ້ໄວໜຸ່ມຫວ່າງງານເພີ່ມຂຶ້ນ ແລະ ຊ່ອງວ່າງທາງດ້ານທັກສະຂອງໄວໜຸ່ມໃນຮຸ່ນຕໍ່ໄປ ກໍຈະເພີ່ມຂຶ້ນອີກ. ການແກ້ໄຂຄວາມກັງວົນດັ່ງກ່າວ ຄວນເລີ່ມຕົ້ນຕັ້ງແຕ່ຕອນນີ້ ແລະ ເຮັດໃຫ້ໄວໜຸ່ມເປັນຫົວໃຈຂອງການຟື້ນຟູຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງມີຄວາມຍືນຍົງ ແລະ ເຕັມໄປດ້ວຍວຽກເຮັດງານທຳ. ຕ້ອງຄຳນຶງເຖິງຄວາມມຸ່ງມາດປາຖະໜາຂອງໄວໜຸ່ມເອງ ເພາະວ່າໄວໜຸ່ມສ່ວນຫຼາຍແມ່ນກຳລັງຊອກ ຫາອາຊີບທີ່ແຕກຕ່າງຈາກອາຊີບດັ່ງເດີມທີ່ພໍ່ແມ່ຂອງເຂົາເຈົ້າເຄີຍເຮັດຜ່ານມາ ພວກເຂົາມັກວຽກ ທີ່ຂັບເຄື່ອນດ້ວຍເຕັກໂນໂລຊີ ທີ່ມີຄວາມຄ່ອງຕົວ ແລະ ໃຫ້ຜົນຕອບແທນທາງການເງິນທີ່ຫຼາຍ ກວ່າ, ຕົວຢ່າງເຊັ່ນ: ວຽກໃນຂະແໜງການທຸລະ ກິດອອນລາຍ, ການເປັນຜູ້ປະກອບການ ແລະ ການສ້າງເນື້ອຫາ (content creation).

ຢູ່ ສປປ ລາວ, ອັດຕາສ່ວນຂອງໄວໜຸ່ມທີ່ ຫວ່າງງານໄດ້ເພີ່ມຂຶ້ນໃນຊຸມປີຜ່ານມາ. ໃນຊຸມປີຕໍ່ໜ້ານີ້ ໃນທຸກໆປີ ຄາດວ່າ ຈະມີໄວໜຸ່ມເຖິງ 80.000 ຄົນ ຈະເຂົ້າສູ່ຕະຫຼາດແຮງງານ ເຊິ່ງວ່າສິ່ງທ້າທາຍທີ່ສຳຄັນ ແລະ ຮີບດ່ວນແມ່ນການຈັດຫາງານໃຫ້ແກ່ໄວໜຸ່ມທຸກຄົນ ໂດຍສະເພາະແມ່ນວຽກທີ່ມີຄຸນນະພາບຕາມເປົ້າໝາຍ ແລະ ທັກສະຂອງເຂົາເຈົ້າ (ກະຊວງແຜນການ ແລະ ການລົງທຶນ ແລະ ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ, 2020)

ບົດນີ້ໄດ້ຄົ້ນຄວ້າລົງເລິກກ່ຽວກັບຕະຫຼາດແຮງງານ ແລະ ສິ່ງທ້າທາຍທີ່ກ່ຽວຂ້ອງກັບການເປັນຜູ້ປະກອບການ ແລະ ໂອກາດຂອງໄວໜຸ່ມທີ່ຕິດ ພັນກັບເສັ້ນທາງການເຕີບໂຕໂດຍລວມຂອງ ສປປ ລາວ. ຜົນກະທົບຈາກພາຍນອກ ເຊັ່ນ: ໄພພິບັດທາງທຳມະຊາດ, ໂລກລະບາດ, ຄວາມຂັດແຍ່ງຢູ່ປະເທດອູແກຣນ ແລະ ຄວາມເປັນຈິງແບບໃໝ່ ແລະ ຄວາມບໍ່ແນ່ນອນໃນທົ່ວໂລກທີ່ເພີ່ມຂຶ້ນ ເຮັດໃຫ້ຄວາມທ້າທາຍທີ່ມີຢູ່ແລ້ວໃນ ຕະຫຼາດແຮງງານຍິ່ງເພີ່ມທະວີຄວາມຮຸນແຮງຂຶ້ນອີກ ເຊິ່ງຫຼາຍຫົວຂໍ້ກໍໄດ້ຖືກກ່າວເຖິງແລ້ວໃນບົດລາຍງານການພັດທະນາມະນຸດແຫ່ງຊາດ ຄັ້ງທີ 4 ຂອງ ສປປ ລາວ ໃນປີ 2009.

ບົດນີ້ກ່າວວ່າ ການມີສ່ວນຮ່ວມໃນຕະຫຼາດແຮງງານທີ່ມີປະສິດທິພາບຂອງໄວໜຸ່ມແມ່ນກ່ຽວພັນສະໜິດແໜ້ນກັບການສຶກສາທີ່ມີຄຸນນະພາບແລະ

ການຮັກສາສຸຂະພາບ. ແຕ່ໂອກາດດ້ານການສຶກສາ ແລະ ການພັດທະນາສີມືແຮງງານໃນປັດຈຸບັນ ຍັງບໍ່ໄດ້ກະກຽມໃຫ້ໄວໜຸ່ມມີຄວາມ ພ້ອມສຳລັບຕະຫຼາດແຮງງານ. ຄວາມລົ້ມເຫຼວໃນ ການແກ້ໄຂບັນຫາສຸຂະພາບຈິດໃນປະຊາກອນທີ່ເປັນເດັກນ້ອຍ, ເຍົາວະຊົນ ແລະ ໄວໜຸ່ມ ແມ່ນບັນຫາດ້ານສຸຂະພາບທີ່ເກີດຂຶ້ນໃໝ່ ທີ່ສາມາດຕັດໂອກາດການຈ້າງງານໃນອະນາຄົດ. ໂດຍສະ ເພາະໃນສະພາບເສດຖະກິດທໃຊ້ທັກສະດ້ານສະໝອງ ເຊັ່ນ: ຄວາມສະຫຼາດທາງດ້ານອາລົມ, ຄວາມຄິດສ້າງສັນ, ຄວາມຍືດຫຍຸ່ນທາງຄວາມຄິດ,ການຄວບຄຸມຕົນເອງ ຫຼື ການຄິດຢ່າງມີລະບົບ ສຳຄັນຫຼາຍກວ່າທັກສະການໃຊ້ແຮງງານ, ສຸຂະພາບຈິດມີຄວາມສຳຄັນຫຼາຍຕໍ່ກັບການຈະເລີນ ເຕີບໂຕ (ອີງການສະຫະປະຊາຊາດເພື່ອການ ພັດທະນາ, 2022b). ບົດນີ້ສະແດງໃຫ້ເຫັນວ່າ ຄວາມບໍ່ໝັ້ນຄົງທາງດ້ານລາຍຮັບຂອງໄວໜຸ່ມທີ່ເພີ່ມຂຶ້ນ ຈະມີຜົນກະທົບດ້ານສຸຂະພາບ ແລະ ຄວາມກົດດັນຂອງໄວໜຸ່ມ, ແລະ ຄວາມກົດດັນນີ້ ກໍ່ຈະສົ່ງຜົນກະທົບຕໍ່ທັງສຸຂະພາບຈິດ ແລະ ສຸຂະພາບກາຍຂອງໄວໜຸ່ມ.

ບົດນີ້ຍັງເນັ້ນຕື່ມວ່າ ເຖິງຈະມີຄວາມທ້າທາຍ ໃຫຍ່ຫຼວງທີ່ກະທົບຕໍ່ໄວໜຸ່ມ ແຕ່ກໍຍັງມີໂອກາດ ໃນຕົວມັນເອງ ກໍຄືຍັງສາມາດສ້າງວຽກເຮັດງານທຳ ແລະ ລາຍຮັບທີ່ມີມູນຄ່າສູງໄດ້ ໂດຍຜ່ານການຫັນປ່ຽນທາງດ້ານເຕັກໂນໂລຢີ ແລະ ການຫັນປ່ຽນທີ່ເປັນມິດກັບສິ່ງແວດລ້ອມ ຫຼື ເອີ້ນວ່າ ການຫັນປ່ຽນສີຂຽວ ເຊິ່ງມັນສາມາດຊຸກຍູ້ໃຫ້ເສດຖະກິດຟື້ນຕົວຄືນໃໝ່ ແລະ ເປັນເສັ້ນທາງທີ່ມີການແຂ່ງຂັນທາງດ້ານເສດຖະກິດ ແລະ ມີຄວາມຍືນຍົງ. ຄວາມລົ້ມເຫຼວໃນການ ແກ້ໄຂສິ່ງທ້າທາຍສຳລັບໄວໜຸ່ມ ອາດຈະສົ່ງຜົນ ກະທົບຕໍ່ໄວໜຸ່ມ ແລະ ສັງຄົມໂດຍລວມ ເຊິ່ງອາດຈະພາດໂອກາດທີ່ຈະໄດ້ຮັບຈາກຄວາມໄດ້ປຽບທີ່ ເກີດຈາກການປ່ຽນແປງໂຄງສ້າງດ້ານອາຍຸຂອງປະຊາກອນຂອງປະເທດ.

# 2.1 ການຈ້າງງານ ແລະ ການພັດທະນາມະນຸດ

ວຽກເຮັດງານທຳທີ່ມີຄຸນນະພາບສູງທີ່ມີຢູ່ເປັນສ່ວນສຳຄັນໃນການຊຸກຍູ້ການຂະຫຍາຍຕົວໂດຍລວມ ແລະ ການສະສົມທຶນມະນຸດໃນໄລຍະຍາວ ທັງຊ່ວຍຮັບປະກັນສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈ ມີຄວາມສຳຄັນຕໍ່ໄວໜຸ່ມ ທີ່ຈະດຳລົງຊີວິດຢ່າງມີປະສິດທິພາບ ແລະມີຄວາມໝາຍໄປຈົນເຂົາເຈົ້າເຕີບໃຫຍ່ຂຶ້ນ. ຜົນກະທົບໄລຍະຍາວຂອງການມີຊີວິດທີ່ດີ ມີຄວາມໝາຍ ຫຼາຍກວ່າການສ້າງລາຍຮັບ ແລະ ການໄດ້ຮັບຜົນ ປະໂຫຍດທາງດ້ານວັດຖຸ ເພາະມັນຊ່ວຍໃຫ້ມະນຸດ ມີສ່ວນຮ່ວມໃນສັງຄົມຢ່າງມີຄວາມສະເໝີພາບ ກັນຫຼາຍຂຶ້ນ, ໃຫ້ຄວາມປອດໄພ, ຄວາມມຸ່ງຫວັງ ແລະ ກຽດສັກສີ, ພ້ອມທັງສົ່ງເສີມຄວາມສາມັກຄີ ແລະ ການມີສ່ວນຮ່ວມທາງສັງຄົມເພີ່ມຂຶ້ນ.

ໃນທາງກົງກັນຂ້າມ, ໄວໜຸ່ມທີ່ໃຊ້ເວລາໃນການຊອກຫາວຽກເຮັດງານທຳທີ່ເໝາະສົມຫຼາຍມີແນວໂນ້ມທີ່ຈະສະສົມທັກສະໄດ້ໜ້ອຍກວ່າຜູ້ທີ່ເລີ່ມຮຽນຮູ້ວຽກຕັ້ງແຕ່ອາຍຸຍັງນ້ອຍ. ການຫຼຸດລົງຂອງທຶນມະນຸດຢ່າງຕໍ່ເນື່ອງ ນຳໄປສູ່ ການມີລາຍໄດ້ຕໍ່າຕະຫຼອດໄລຍະການເຮັດວຽກ. ການຫວ່າງງານໃນໄລຍະຍາວ ຫຼື ການຈ້າງງານບໍ່ພຽງພໍ ຈະບັ່ນທອນທັກສະ ແລະ ຄວາມຄຸ້ນເຄີຍໃນການເຮັດວຽກ ເຊິ່ງຈະນຳໄປສູ່ການເສື່ອມລາຄາຂອງທັກສະ, ເຮັດໃຫ້ ລາຍຮັບຫຼຸດລົງ ແລະ ບາງຄັ້ງກໍເຖິງຂັ້ນອອກຈາກວຽກງານ.

ການຫວ່າງງານໄລຍະຍາວເປັນສິ່ງຂັດຂວາງການຫັນປ່ຽນທີ່ມີຜົນສຳເລັດຈາກໄວໜຸ່ມ ໄປສູ່ການເປັນຜູ້ໃຫຍ່ ແລະ ມີຜົນກະທົບຕໍ່ການພັດທະນາມະນຸດໃນຫຼາຍມິຕິ ຕົວຢ່າງ: ເຮັດໃຫ້ເກີດຄວາມກົດດັນ, ຄວາມກັງວົນ, ຊຶມເສົ້າ ແລະ ຄວາມເຈັບປ່ວຍທົ່ວໄປ ແລະ ເຮັດໃຫ້ອາຍຸໄຂຫຼຸດລົງ. ການມີລາຍຮັບຕໍ່າຢ່າງຕໍ່ເນື່ອງຍັງກ່ຽວຂ້ອງກັບສຸຂະພາບກາຍ ແລະ ສຸຂະພາບຈິດອີກດ້ວຍໂດຍສະ ເພາະໃນເວລາທີ່ຮູ້ສຶກຂາດເຂີນ ຫຼື

## ກ່ອງເນື້ອໃນ 2.1 ການຈ້າງງານຂອງໄວໜຸ່ມ ແລະເປົ້າໝາຍການພັດທະນາແບບຍືນຍົງ

ວາລະການພັດທະນາແບບຍືນຍົງ ປີ 2030 ໄດ້ລະບຸຢ່າງຈະແຈ້ງວ່າ: “ການຫວ່າງງານ,ໂດຍສະເພາະການຫວ່າງງານຂອງໄວໜຸ່ມເປັນບັນຫາທີ່ສຳຄັນ.” ວາລະດັ່ງກ່າວໄດ້ ແຍກໄວໜຸ່ມອອກເປັນກຸ່ມຍ່ອຍສະເພາະສຳລັບແຕ່ລະປະເດັນ ແລະ ໄດ້ອ້າງອີງເຖິງໄວໜຸ່ມໃນຫຼາຍເປົ້າໝາຍຂອງການພັດທະນາແບບຍືນຍົງ.

ທີ່ມີຄວາມສຳຄັນເປັນພິເສດແມ່ນເປົ້າໝາຍການພັດທະນາແບບຍືນຍົງ ທີ 4.4 (ເພີ່ມທັກສະການຈ້າງງານຂອງໄວໜຸ່ມ), 8.5 (ບັນລຸການຈ້າງງານຢ່າງເຕັມທີ່ ແລະ ມີປະສິດຕິພາບ), 8.6 (ຫຼຸດຜ່ອນຈຳນວນໄວໜຸ່ມທີ່ - ບໍ່ມີວຽກເຮັດງານທຳ, ບໍ່ໄດ້ຮັບການສຶກສາ ຫຼື ການຝຶກອົບຮົມ) ແລະ 8.b (ພັດທະນາຍຸດທະສາດລະດັບໂລກສຳລັບການຈ້າງການຂອງໄວໜຸ່ມ).ເປົ້າໝາຍການພັດທະນາແບບຍືນຍົງ ທີ 8 ເນັ້ນກ່ຽວກັບ "ການຂະຫຍາຍຕົວທາງດ້ານເສດຖະກິດທີ່ມີຄວາມຕໍ່ເນື່ອງ, ມີສ່ວນຮ່ວມ ແລະ ມີຄວາມຍືນຍົງ.ການຈ້າງງານເຕັມທີ່ ແລະ ມີປະສິດທິຜົນ ແລະ ວຽກງານທີ່ເໝາະສົມສຳລັບ ໝົດທຸກຄົນ".



ບໍ່ພຽງພໍ ເມື່ອທຽບໃສ່ກັບຄົນອື່ນໆໃນຊຸມຊົນ (ອີງການສະຫະປະຊາຊາດ ເພື່ອການພັດທະນາ, 2022b). ປະຊາຊົນທີ່ມີລາຍຮັບໃນຂັ້ນຕໍ່າສຸດໄດ້ຮັບຄວາມເດືອດຮ້ອນທາງດ້ານຈິດໃຈ ປະມານ 1,5 - 3 ເທົ່າ ເມື່ອທຽບກັບຄົນທີ່ຢູ່ກຸ່ມລາຍຮັບທີ່ສູງກວ່າ ແລະ ມີທ່າອ່ຽງທີ່ຈະປະສົບກັບອາດຊະຍາກຳຄວາມຮຸນແຮງ ແລະ ເຫດການທີ່ກະທົບທາງດ້ານຈິດໃຈ (ອີງການສະຫະປະຊາຊາດ ເພື່ອການພັດທະນາ, 2022b).

ອັດຕາການພັດທະນາມະນຸດລະດັບບຸກຄົນທີ່ຖອຍຫຼັງ ແມ່ນມີສູງຂຶ້ນ ແລະ ຈະສົ່ງຜົນກະທົບທາງລົບຕໍ່ການຜະລິດແຫ່ງຊາດ ແລະ ການເຕີບໂຕຂອງເສດຖະກິດ. ການຂ້າມຜ່ານຈາກໂຮງຮຽນໄປສູ່ການເຮັດວຽກທີ່ຫຍຸ້ງຍາກ ອາດສົ່ງຜົນກະທົບທາງລົບຕໍ່ຄວາມສາມັກຄີໃນສັງຄົມ ແລະ ຈະເຮັດໃຫ້ເກີດຄວາມຄວາມຮຸນແຮງ. ໄວໜຸ່ມທີ່ວ່າງງານມີຄວາມສ່ຽງທີ່ຈະກາຍເປັນສະມາຊິກກຸ່ມກ້ອນນັກເລງ, ໃຊ້ຢາເສບຕິດ, ມີສ່ວນຮ່ວມໃນກິດຈະກຳທີ່ມີໂທດທາງອາຍາ ແລະ ຄວາມຮຸນແຮງຕໍ່ຕ້ານລັດຖະບານ (Cramer, 2011), ເຊິ່ງຈະນຳໄປສູ່ວົງຈອນຄວາມທຸກຍາກ ແລະ ຄວາມບໍ່ສະຫງົບ (ILO, 2022 a). ເມື່ອນຳມາລວມກັນ ຈະເຫັນວ່າ ຄ່າໃຊ້ຈ່າຍ ກໍຄືຄວາມເສຍຫາຍຂອງການຫວ່າງງານຂອງ ໄວໜຸ່ມໃນດ້ານເສດຖະກິດ, ສັງຄົມ ແລະ ການພັດທະນາມະນຸດແມ່ນສູງຫຼາຍ.

ການພັດທະນາມະນຸດສຳລັບໄວໜຸ່ມ ແມ່ນການສ້າງຄວາມອາດສາມາດຂອງມະນຸດ ແລະ ການເລືອກໃຊ້ຄວາມອາດສາມາດໂດຍອີງຕາມທາງເລືອກຂອງເຂົາເຈົ້າເອງ. ການພັດທະນາຄວາມສາມາດຂອງເຂົາເຈົ້າຈະຊ່ວຍຄວບຄຸມ ຄວາມໄດ້ປຽບທີ່ເກີດຈາກການປ່ຽນແປງ ໂຄງສ້າງດ້ານອາຍຸຂອງປະຊາກອນຂອງປະເທດ, ເພີ່ມທະວີການເຕີບໂຕທາງດ້ານເສດຖະກິດ, ສົ່ງເສີມຄວາມອາດສາມາດຂອງໄວໜຸ່ມ. ແຕ່ແນວໃດກໍຕາມ ສິ່ງເຫຼົ່ານີ້ຕ້ອງການສິ່ງແວດລ້ອມທີ່ເອື້ອອຳນວຍ ເຊິ່ງລັດຖະບານ ຕ້ອງເປັນຜູ້ສ້າງຂຶ້ນ ເຊັ່ນ: ສະພາບແວດລ້ອມ ທີ່ໄວໜຸ່ມສາມາດພັດທະນາຄວາມສາມາດ, ສາມາດສ້າງທາງເລືອກໃຫ້ຕົນເອງ ແລະ ຊອກຫາວຽກງານທີ່ເຂົາເຈົ້າຕ້ອງການ. ຖ້າຫາກໄດ້ຮັບຄຳແນະນຳທີ່ຖືກຕ້ອງ ການຂະຫຍາຍຕົວດ້ານການຈ້າງງານ ໂດຍສະເພາະການຈ້າງງານ ສຳລັບໄວໜຸ່ມ ຈະມີຜົນກະທົບອັນໃຫຍ່ຫຼວງ ຕໍ່ການປັບປຸງມາດຕະຖານການດຳລົງຊີວິດ ແລະ ເຮັດໃຫ້ເກີດມີຄວາມຄິດສ້າງສັນ ແລະ ນະວັດຕະກຳຂອງມະນຸດ ໃນຂະນະດຽວກັນກໍຮັບປະກັນວ່າປະຊາຊົນຈະສາມາດບັນລຸຄວາມປາຖະໜາຂອງເຂົາເຈົ້າ.

ແນ່ນອນວ່າບໍ່ແມ່ນວຽກງານທຸກປະເພດທີ່ຊ່ວຍສົ່ງເສີມການພັດທະນາມະນຸດ. ວຽກງານທີ່ຂູດຮີດ ເຊັ່ນ: ການໃຊ້ແຮງງານເດັກ ແລະ ການຄ້າມະນຸດ ເປັນການກົດຂີ່ສິດທິ ແລະ ກຽດສັກສີຂອງຄວາມເປັນມະນຸດເຮັດໃຫ້ເກີດຜົນເສຍຫາຍຕະຫຼອດຊີວິດຕໍ່ການພັດທະນາທາງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມ. ການເຮັດວຽກຢູ່ໃນສະພາບທີ່ເປັນອັນຕະລາຍໂດຍບໍ່ມີມາດຕະການຄວາມປອດໄພ, ສິດທິແຮງງານ ຫຼື ການປົກປ້ອງທາງສັງຄົມ ກໍເປັນອັນຕະລາຍຕໍ່ການພັດທະນາມະນຸດເຊັ່ນກັນ (ອີງການສະຫະປະຊາຊາດ ເພື່ອການພັດທະນາ, 2015) ໃນລະດັບພື້ນຖານ, ຄຸນນະພາບຂອງວຽກ ມີຄວາມສຳຄັນຕໍ່ການພັດທະນາ. ດັ່ງນັ້ນ, ຄວນດຳເນີນບາງຂະບວນການທີ່ມີຄວາມສະເພາະເຈາະຈົງ ທີ່ຈະນຳໄປສູ່ໂອກາດໃນການເຮັດວຽກ ເຊັ່ນ: ໃນເວລາທີ່ໄວໜຸ່ມຍ້າຍຖິ່ນຖານບໍ່ວ່າ ຈາກພາຍໃນ ຫຼື ພາຍນອກ ເພື່ອໄປເຮັດວຽກແມ່ນຕ້ອງມີຄວາມປອດໄພ. ການເຄື່ອນຍ້າຍ ທີ່ບໍ່ປົກກະຕິ ແລະ ການຈ້າງງານທີ່ບໍ່ເປັນທຳ ເປັນອັນຕະລາຍຕໍ່ສະຫວັດດີການ, ສິດທິ ແລະ ການພັດທະນາ ໃນທາງກົງກັນຂ້າມ ວຽກງານທີ່ດີຈະມີສິດທິ, ການປົກປ້ອງ, ການມີສ່ວນຮ່ວມ ແລະ ການເປັນຕົວແທນ.

ປັດໄຈ 3 ປະການທີ່ກຳນົດຄຸນນະພາບ ຂອງການຈ້າງງານ ມີຄື: ລາຍຮັບທີ່ດີ, ຄວາມໝັ້ນຄົງຂອງຕະຫຼາດແຮງງານ ແລະ ສະພາບແວດລ້ອມການເຮັດວຽກທີ່ດີ (OECD, 2016). ໃນທຳນອງດຽວກັນ, ວຽກງານທີ່ເໝາະສົມແມ່ນ “ວຽກທີ່ມີໝາກຜົນ ສຳລັບແມ່ຍິງ ແລະ ຜູ້ຊາຍພາຍໃຕ້ເງື່ອນໄຂ ຂອງການມີເສລີພາບ, ຄວາມສະເໝີພາບ, ຄວາມໝັ້ນຄົງ ແລະ ກຽດສັກສີຂອງມະນຸດ” (ILO, 2008). ວຽກງານທີ່ເໝາະສົມແມ່ນວຽກທີ່ສ້າງລາຍຮັບທີ່ຍຸດຕິທຳ, ຮັບປະກັນຄວາມປອດໄພ ແລະ ການປົກປ້ອງທາງສັງຄົມໃຫ້ແກ່ຜູ້ເຮັດວຽກ, ມີໂອກາດ ໃນການພັດທະນາຕົນເອງ, ມີອິດສະຫຼະ ໃນການສະແດງຄຳຄິດຄຳເຫັນ, ຄວາມກັງວົນແລະ ການຈັດລະບຽບ, ພ້ອມທັງ ຮັບປະກັນໂອກາດ ແລະ ການປະ ຕິບັດທີ່ເທົ່າທຽມກັນ (ILO, 2008). ອົງການ ສະຫະປະຊາຊາດໄດ້ກຳນົດວຽກງານທີ່ເໝາະສົມໄວ້ໃນວາລະການພັດທະນາແບບຍືນຍົງ ປີ 2030 ເປົ້າໝາຍທີ 8 ວ່າດ້ວຍວຽກທີ່ເໝາະສົມ ແລະ ການເຕີບໂຕຂອງເສດຖະກິດ (ກ່ອງເນື້ອໃນ 2.1).




"ວຽກງານທີ່ເໝາະສົມແມ່ນວຽກທີ່ສ້າງລາຍຮັບທີ່ຍຸດຕິທຳ, ຮັບປະກັນຄວາມປອດໄພ ແລະ ການປົກປ້ອງທາງສັງຄົມໃຫ້ແກ່ຜູ້ເຮັດວຽກ, ມີໂອກາດໃນການພັດທະນາຕົນເອງ, ມີອິດສະຫຼະໃນການສະແດງຄຳຄິດຄຳເຫັນ, ຄວາມກັງວົນ ແລະ ການຈັດລະບຽບ, ພ້ອມທັງຮັບປະກັນໂອກາດ ແລະ ການປະຕິບັດທີ່ເທົ່າທຽມກັນ."

ໃນຊຸມປີຕໍ່ໜ້ານີ້ ຄາດວ່າທຸກໆປີ ຈະມີໄວໜຸ່ມເຖິງ **80.000** ຄົນເຂົ້າສູ່ຕະຫຼາດແຮງງານ

## 2.2 ທ່າອ່ຽງດ້ານເສດຖະກິດ ແລະ ຕະຫຼາດແຮງງານທີ່ມີຜົນກະທົບຕໍ່ໄວໜຸ່ມ

### ການເພີ່ມຂຶ້ນຂອງຈຳນວນຄົນຫວ່າງງານ ຂອງ ສປປ ລາວ ແລະ ການຂະຫຍາຍຕົວຂອງເສດຖະກິດທີ່ໃຊ້ທຶນຮອນສູງ

ເຖິງວ່າເສດຖະກິດຂອງ ສປປ ລາວ ຈະຂະຫຍາຍຕົວ ໃນ 2 ທົດສະວັດທີ່ຜ່ານມາ, ດ້ວຍອັດຕາການເຕີບໂຕສະເລ່ຍ 7 ສ່ວນຮ້ອຍ ຈົນເຖິງປີ 2019, ແຕ່ສ່ວນຫຼາຍແມ່ນມາຈາກຂະແໜງຊັບພະຍາກອນທຳມະຊາດ ເຊັ່ນ: ບໍ່ແຮ່ ແລະ ພະລັງງານໄຟຟ້ານ້ຳຕົກ. ເນື່ອງຈາກວ່າພາກສ່ວນນີ້ແມ່ນຂະແໜງການທີ່ຕ້ອງໃຊ້ທຶນຮອນສູງ, ເຖິງຈະມີການຂະຫຍາຍຕົວ ແຕ່ມັນກໍບໍ່ໄດ້ສ້າງວຽກເຮັດງານທຳຫຼາຍເທົ່າທີ່ຄວນ. ພາກສ່ວນທີ່ຊຸກຍູ້ໃຫ້ເສດຖະກິດເຕີບໂຕ ເຊັ່ນ: ການຂຸດຄົ້ນບໍ່ແຮ່ ແລະ ພະລັງງານໄຟຟ້ານ້ຳຕົກ ໄດ້ປະກອບສ່ວນ ເຮັດໃຫ້ເກີດການຈ້າງງານ ພຽງແຕ່ 1 ສ່ວນຮ້ອຍ ເທົ່ານັ້ນ. ບົດລາຍງານການພັດທະນາມະນຸດແຫ່ງຊາດປີ 2009 ໄດ້ອ້າງເຖິງຈຸດນີ້ໂດຍໃຫ້ຂໍ້ສັງເກດວ່າ ອຸດສາຫະກຳ (ລວມທັງການຂຸດຄົ້ນບໍ່ແຮ່ ແລະ ໄຟຟ້ານ້ຳຕົກ) ໄດ້ກາຍເປັນຕົວປະກອບສ່ວນສຸດທິ (net contributor) ທີ່ໃຫຍ່ທີ່ສຸດ ໃນການເຕີບໂຕທາງດ້ານເສດຖະກິດ ແຕ່ມີສ່ວນແບ່ງການຈ້າງງານພຽງແຕ່ 4,8 ສ່ວນຮ້ອຍ. ບົດລາຍງານປີ 2009 ໄດ້ເນັ້ນໜັກຕື່ມອີກວ່າ ການລົງທຶນ ໃນຂະແໜງບໍ່ແຮ່ ແລະ ໄຟຟ້ານ້ຳຕົກໃນລະດັບສູງ (61 ສ່ວນຮ້ອຍ ຂອງການລົງທຶນທັງໝົດໃນໂຄງການຂະໜາດໃຫຍ່ ສຳລັບປີ 2003-2007) ເຮັດໃຫ້ຂະແໜງການເຫຼົ່ານີ້ຂະຫຍາຍຕົວຢ່າງໄວວາ ແຕ່ບໍ່ໄດ້ສ້າງໃຫ້ມີວຽກເຮັດງານທຳຫຼາຍເທົ່າທີ່ຄວນ.

ກ່ອງເນື້ອໃນ 2.2

ໃນລະຫວ່າງຊຸມປີ 1990 ແລະ ຊ່ວງຕົ້ນຂອງສະຫັດສະວັດໃໝ່, ໄດ້ມີການຂະຫຍາຍຕົວຢ່າງໄວວາໃນຂະແໜງການທີ່ໃຊ້ແຮງງານເປັນຫຼັກ ເຊັ່ນ: ການຜະລິດເຄື່ອງນຸ່ງຫົ່ມ, ການປຸງແຕ່ງໄມ້, ການເຮັດເຟີນີເຈີ ແລະ ການປຸງແຕ່ງສະບຽງອາຫານ. ຫຼັງຈາກນັ້ນເຮັດໃຫ້ການຂະຫຍາຍຕົວຊ້າລົງ (ກ່ອງເນື້ອໃນ 2 .2). ໃນ 20 ປີຜ່ານມາ, ສ່ວນແບ່ງຂອງຂະແໜງອຸດສາຫະກຳໃນ GDP ແມ່ນຢູ່ທີ່ 9 ສ່ວນຮ້ອຍ (ທະນາຄານພັດທະນາອາຊີ, 2019). ຂະແໜງການດັ່ງກ່າວ ໄດ້ຈ້າງແຮງງານ ປະມານ 220.000 ຄົນ ໃນນັ້ນ 64 ສ່ວນຮ້ອຍ ເປັນເພດຍິງ ເຊິ່ງສ່ວນໃຫຍ່ເປັນທຸລະກິດກ່ຽວກັບ ອາຫານ, ເຄື່ອງດື່ມ ແລະ ຢາສູບ; ແຜ່ນແພ, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງໜັງ; ແລະ ຢາງພາລາ, ຢາງປຼາສຕິກ ແລະ ແຮ່ທາດທີ່ບໍ່ແມ່ນໂລຫະ (ທະນາຄານພັດທະນາອາຊີ, 2019).

ຄວາມສາມາດໃນການແຂ່ງຂັນຂອງກຸ່ມທຸລະກິດດ້ານການຜະລິດ ຫຼຸດລົງຢ່າງຕໍ່ເນື່ອງ ແລະຕົ້ນທຶນແຮງງານຕໍ່ຫົວໜ່ວຍກໍເພີ່ມສູງຂຶ້ນຢ່າງ ຫຼວງຫຼາຍ. ຕັ້ງແຕ່ປີ 2009-2018 ຄ່າແຮງງານໂດຍສະເລ່ຍຕໍ່ຫົວຄົນໄດ້ເພີ່ມຂຶ້ນເຖິງສອງເທົ່າຈາກ $708 ເປັນ $1.444 ເຊິ່ງການເພີ່ມຂຶ້ນນີ້ແມ່ນມີຜົນມາຈາກການເພີ່ມຂຶ້ນຂອງການຈ້າງງານພາກລັດ ແລະ ຄ່າຈ້າງທີ່ສູງໃນຂະແໜງຊັບພະຍາກອນ ເຮັດໃຫ້ຄ່າຈ້າງຂັ້ນຕ່ຳເພີ່ມສູງຂຶ້ນ ນັ້ນໝາຍຄວາມວ່າຄ່າແຮງທີ່ເພີ່ມຂຶ້ນບໍ່ໄດ້ມາຈາກການປັບປຸງລະດັບສີມືແຮງງານ (ທະນາຄານໂລກ, 2022). ໃນລະຫວ່າງປີ 2008 – 2018 ທັກສະຂອງແຮງງານໃນຂະແໜງການຜະລິດບໍ່ຄ່ອຍ ໄດ້ຮັບການປັບປຸງເລີຍ. ໃນຄວາມເປັນຈິງ, ອັດຕາສ່ວນຂອງແຮງງານທີ່ຮຽນຈົບມັດທະຍົມ ຫຼື ຊັ້ນສູງ ໄດ້ຫຼຸດລົງຈາກ 45ສ່ວນຮ້ອຍ ໃນປີ 2008 ເປັນ 37 ສ່ວນຮ້ອຍ ໃນປີ 2018 ສິ່ງຜົນໃຫ້ພາກສ່ວນທຸລະກິດຕິດຢູ່ໃນວົງຈອນເກົ່າໆທີ່ບໍ່ມີຫຍັງດີຂຶ້ນ.ສາເຫດໜຶ່ງແມ່ນຫົວໜ່ວຍທຸລະກິດເຫຼົ່ານີ້ບໍ່ສາມາດຈ້າງແຮງງານທີ່ມີຝີມືທີ່ຄ່າແຮງສູງໄດ້ ເນື່ອງຈາກຜົນປະກອບການຕ່ຳ, ໃນທາງກົງກັນຂ້າມ ຖ້າບໍ່ມີແຮງງານທີ່ມີທັກສະ ໂດຍສະເພາະແມ່ນຜູ້ທີ່ຢູ່ໃນຕຳແໜ່ງຜູ້ຈັດການ ຜົນປະກອບການກໍຈະບໍ່ດີຂຶ້ນ (ທະນາຄານໂລກ, 2022)

ເພື່ອດຶງດູດການລົງທຶນໂດຍກົງຈາກຕ່າງປະເທດໃຫ້ແກ່ບັນດາຂະແໜງການອື່ນ ນອກເໜືອຈາກຂະແໜງຊັບພະຍາກອນ ເຊັ່ນ: ຂະແໜງ ກະສິກຳ, ອຸດສາຫະກຳການຜະລິດ, ງານຝີມື ແລະ ການບໍລິການລັດຖະບານໄດ້ນຳ ໃຊ້ນະໂຍບາຍຕ່າງໆ ເຊັ່ນ: ເຂດເສດຖະກິດພິເສດທີ່ສະໜອງພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກດ້ານການຄ້າ ແລະ ແຮງຈູງໃຈດ້ານພາສີທີ່ເອື້ອອຳ ນວຍຕໍ່ອຸດສາຫະກຳບາງປະເພດ (ທະນາຄານໂລກ. 2022). ການປະກອບສ່ວນຂອງເຂດຕ່າງໆຕໍ່ກັບການຈ້າງງານແມ່ນຫຼຸດລົງ ຈາກ 56 ສ່ວນຮ້ອຍ ໃນປີ 2009 ເປັນ 38 ສ່ວນຮ້ອຍ ໃນປີ 2018. ແນວໃດກໍຕາມ ເຖິງແມ່ນພາກສ່ວນການລົງທຶນຂອງເອກະຊົນ ຈະສ້າງຕຳແໜ່ງງານ ຫຼາຍກວ່າ 15.000 ຕຳແໜ່ງ, ໃນນັ້ນ ໜ້ອຍກວ່າເຄິ່ງໜຶ່ງ (6.800 ຕຳແໜ່ງ) ແມ່ນສຳລັບແຮງງານທ້ອງຖິ່ນ (ທະນາຄານພັດທະນາອາຊີ, 2019). ບໍລິສັດການຜະລິດ ສ່ວນໃຫຍ່ແມ່ນປະເຊີນກັບ ຂໍ້ຈຳກັດຫຼາຍດ້ານ ເຊັ່ນ: ສະພາບ

## ກ່ອງເນື້ອໃນ 2.2: ສາເຫດທີ່ພາໃຫ້ ອຸດສາຫະກຳການຜະລິດຊ້າລົງ

ແຫຼ່ງຂໍ້ມູນ: UNDP ແລະ MPI, 2009.

1. ການສົ່ງອອກເຄື່ອງນຸ່ງຫົ່ມຕ້ອງປະເຊີນກັບການແຂ່ງຂັນທີ່ເປີດກວ້າງ ເມື່ອລະບົບໂຄຕ້າໝົດອາຍຸ. ຜົນຜະລິດຕໍ່າ ແຕ່ຕົ້ນທຶນຜັດສູງ (ໂດຍສະເພາະຕົ້ນທຶນທີ່ເກີດຈາກການຂົນສົ່ງ ແລະ ຄວາມຊັກຊ້າ) ດັ່ງນັ້ນ, ຜູ້ຜະລິດຈຶ່ງເຫັນວ່າເປັນການຍາກທີ່ຈະແຂ່ງຂັນໃນຕະຫຼາດເສລີ.

2. ອຸດສາຫະກຳປຸງແຕ່ງໄມ້ໃນປະເທດເພື່ອນບ້ານສາມາດທຽບກັບອຸດສາຫະກຳປຸງແຕ່ງໄມ້ຢູ່ໃນລາວ ທັງທາງດ້ານຄຸນນະພາບ ແລະ ລາຄາ, ໄມ້ທີ່ມີຄຸນນະພາບ ກໍບໍ່ໄດ້ຊອກງ່າຍຄືເມື່ອກ່ອນ.

3. ອຸດສາຫະກຳປຸງແຕ່ງອາຫານປະເຊີນກັບການສະໜອງວັດຖຸດິບທີ່ບໍ່ໜ້າເຊື່ອຖື.

4. ການເຂົ້າສູ່ຕະຫຼາດຂະໜາດໃຫຍ່ແມ່ນມີຄວາມຫຍຸ້ງຍາກ.

5. ທຸກຂະແໜງການປະເຊີນກັບການຂາດແຄນແຮງງານທີ່ມີຄຸນນະພາບ ແລະ ໃນການດຳເນີນທຸລະກິດຍັງມີຄວາມຫຍຸ້ງຍາກດ້ານຂັ້ນຕອນ ແລະ ກົດໝາຍອີກດ້ວຍ.

ແວດລ້ອມທາງທຸລະກິດທີ່ບໍ່ເອື້ອອຳນວຍ ແລະ ແຮງງານຂາດທັກສະ ຫຼື ມີທັກສະບໍ່ພຽງພໍກັບຄວາມຕ້ອງການ (ທະນາຄານໂລກ, 2017).

ຂົງເຂດອຸດສາຫະກຳອື່ນໆ ເຊັ່ນ: ການກໍ່ສ້າງ, ການຂຸດຄົ້ນບໍ່ແຮ່ ແລະ ໄຟຟ້າ, ອາຍແກັສ, ອາຍນ້ຳ ແລະ ເຄື່ອງປັບອາກາດ. ຂະແໜງການກໍ່ສ້າງຈ້າງງານຫຼາຍກວ່າ 200.000 ຄົນ ແລະ ກຳລັງເຕີບໂຕ (ທະນາຄານພັດທະນາອາຊີ, 2019). ຄາດວ່າຈະຍັງຄົງຮອງຮັບແຮງງານ ຈຳນວນຫຼາຍທີ່ເຄື່ອນຍ້າຍມາຈາກເຂດຊົນນະບົດ.ແຕ່ບັນດາຫົວໜ່ວຍທຸລະກິດກໍຍັງພົບກັບບັນຫາໃນການຊອກຫາພະນັກງານໃໝ່ທີ່ມີຄວາມຊຳນານ ລະດັບກາງ".ແຮງງານເຄື່ອນຍ້າຍສາກົນ ທີ່ມີປະມານ 200.000 ຄົນ ທີ່ເຂົ້າມາເຮັດ ວຽກຢ່າງເປັນທາງການຢູ່ປະເທດລາວ ແມ່ນ ເຮັດວຽກຢູ່ໃນຂະແໜງໄຟຟ້າ, ອາຍແກັສ, ອາຍນ້ຳ ແລະ ເຄື່ອງປັບອາກາດປະມານ 35.000 ຄົນ ແລະ ສ່ວນຫຼາຍເປັນນັກວິຊາການທີ່ມີທັກສະສູງກວ່າ.

ຂະແໜງບໍລິການ ລວມມີ ການທ່ອງທ່ຽວ,ໄອຊີທີ, ການເງິນ ແລະ ປະກັນໄພ ແລະ ການຂາຍສົ່ງ ແລະ ຂາຍຍ່ອຍ. ສ່ວນແບ່ງການຈ້າງງານຂອງຂະແໜງການນີ້ ເພີ່ມຂຶ້ນຈາກ 43 ສ່ວນຮ້ອຍ ໃນປີ 2002 ເປັນ 54 ສ່ວນຮ້ອຍ ໃນປີ 2019 ເຊິ່ງເປັນການເຕີບໂຕລະດັບກາງ. ຂະແໜງການທ່ອງທ່ຽວໃຊ້ແຮງງານປະມານ 42.000 ຄົນ ແລະ ມີທ່າແຮງຫຼາຍທີ່ສຸດທີ່ຈະຮອງຮັບແຮງງານທີ່ຍົກຍ້າຍມາຈາກຊົນນະບົດ. ຄົນເຮັດວຽກໃນຂະແໜງການນີ້ສ່ວນໃຫຍ່ ເປັນແມ່ຍິງ ເຊິ່ງກວມເອົາເຖິງ 63 ສ່ວນຮ້ອຍ ຂອງຈຳນວນແຮງງານທັງໝົດ.ຂະແໜງໄອຊີທີ ເປັນອຸດສາຫະກຳໃໝ່ ທີ່ຈ້າງແຮງງານທີ່ມີທັກສະ ປະມານ 10.500 ຄົນ ເຊິ່ງມັກຈະຄັດເລືອກ ແຮງງານໂດຍກົງຈາກມະຫາວິທະຍາໄລພາຍໃນປະເທດ; ໃນນັ້ນ 53 ສ່ວນຮ້ອຍ ແມ່ນມີອາຍຸ 18-29 ປີ (ທະນາຄານພັດທະນາອາຊີ, 2019). ສ່ວນຂະແໜງການເງິນ ແລະ ປະກັນໄພ ເປັນຂະແໜງການຂະໜາດນ້ອຍ ແຕ່ເປັນຂະແໜງທີ່ພົ້ນເດັ່ນ ມີແຮງງານປະມານ 7.500 ຄົນ ແລະ ເກືອບ 60 ສ່ວນຮ້ອຍ ເປັນເພດຍິງ.

ຂະແໜງການຄ້າຂາຍຍົກ ແລະ ຂາຍຍ່ອຍ ເຊິ່ງກວມເອົາ ການໃຫ້ບໍລິການ ແລະ ສ້ອມແປງລົດໃຫຍ່ ແລະ ລົດຈັກ ເປັນຂະແໜງການບໍລິການທີ່ໃຫຍ່ທີ່ສຸດ, ມີຄົນງານເກືອບ 200.000 ຄົນ, ໃນນັ້ນ 60 ສ່ວນຮ້ອຍ ແມ່ນ ເພດຍິງ. ຕໍ່ມາແມ່ນຂະແໜງກະສິກຳ ເຊິ່ງເປັນຂະແໜງການທີ່ຕ້ອງການວຸດທິການສຶກສາ ຕໍ່າທີ່ສຸດ. ຈຳນວນຄົນທີ່ເປັນເຈົ້າຂອງທຸລະກິດແມ່ນມີຫຼາຍ ເຊິ່ງດຳເນີນທຸລະກິດແບບສ່ວນບຸກຄົນ ຫຼື ແບບເປັນຄູ່ຮ່ວມງານ ໂດຍທີ່ບໍ່ມີພະນັກງານທີ່ໄດ້ຮັບຄ່າຈ້າງ. ຮ້ານຂາຍເຄື່ອງຍ່ອຍສ່ວນຫຼາຍກໍດຳເນີນການໂດຍສະມາຊິກໃນຄອບຄົວຂອງຕົນເອງທີ່ບໍ່ຄ່ອຍໄດ້ຮັບຄ່າຈ້າງ (ທະນາຄານພັດທະນາອາຊີ, 2019). ໄວໜຸ່ມທີ່ອອກຈາກໂຮງຮຽນກ່ອນຈະຮຽນຈົບຊອກຫາວຽກເຮັດງານທຳໃນຂະແໜງນີ້ ເຊິ່ງກໍຍັງຖືວ່າເປັນແຮງງານນອກລະບົບ.

### ຕົວຊີ້ວັດທີ່ສຳຄັນຂອງຕະຫຼາດແຮງງານ

ຂໍ້ມູນຫຼ້າສຸດຂອງຕົວຊີ້ວັດຕະຫຼາດແຮງງານທີ່ສຳຄັນ ໃນ ສປປ ລາວ ແມ່ນມາຈາກການສຳຫຼວດແຮງງານແຫ່ງຊາດ ປີ 2017. ຂໍ້ມູນເຫຼົ່ານີ້ສະແດງໃຫ້ເຫັນຈຳນວນປະຊາກອນທີ່ຢູ່ໃນອາຍຸການເຮັດວຽກທັງຫມົດ (ອາຍຸລະຫວ່າງ 15-64 ປີ) ມີຈຳນວນ 4,7 ລ້ານ (ເປັນຍິງ 2,4 ລ້ານ).ໃນນັ້ນອາຍຸ 15-24 ປີ ມີຈຳນວນ 1,3 ລ້ານຄົນ (LSB, 2018). ປະຊາກອນໃນໄວ ເຮັດວຽກກວມເອົາ 69 ສ່ວນຮ້ອຍ ຂອງປະຊາກອນທັງຫມົດເຊິ່ງຊີ້ໃຫ້ເຫັນເຖິງທ່າແຮງທີ່ເກີດຈາກການປ່ຽນແປງໂຄງສ້າງດ້ານອາຍຸຂອງປະຊາກອນ ຂອງປະເທດ.





ຕາຕະລາງ 2.1 ສະແດງໃຫ້ເຫັນອັດຕາການມີສ່ວນຮ່ວມຂອງກຳລັງແຮງງານ ຊຶ່ງໝາຍຄວາມວ່າຈຳນວນຄົນໃນກຳລັງແຮງງານທີ່ກຳລັງເຮັດວຽກ ຫຼື ຫວ່າງງານ ແລະ ກຳລັງຊອກຫາວຽກເຮັດງານທຳຢ່າງຕັ້ງໜ້າ ໂດຍຄິດໄລ່ເປັນອັດຕາສ່ວນຂອງປະຊາກອນໃນໄວເຮັດວຽກ. ຕາຕະລາງປຽບທຽບຂໍ້ມູນທີ່ເຜີຍແຜ່ໂດຍລັດຖະບານ ສປປ ລາວ ແລະ ຖານຂໍ້ມູນ ILOSTAT ຂອງ ILO, ເຊິ່ງນຳ ໃຊ້ຂໍ້ມູນການສຳຫຼວດກຳລັງແຮງງານແຕ່ປີ 2017. ຖານຂໍ້ມູນໄດ້ຄາດຄະເນສ່ວນຮ້ອຍໂດຍນຳໃຊ້ມາດຕະຖານສາກົນ. ມັນສະແດງໃຫ້ເຫັນວ່າອັດຕາການມີສ່ວນຮ່ວມຂອງກຳລັງແຮງງານທັງຫມົດແມ່ນ 59,4ສ່ວນຮ້ອຍ ໂດຍລວມແລ້ວການມີສ່ວນຮ່ວມຂອງຜູ້ຊາຍ ຈະຫຼາຍກວ່າແມ່ຍິງດ້ວຍອັດຕາສ່ວນ ຜູ້ຊາຍ 63,6 ສ່ວນຮ້ອຍ ຕໍ່ແມ່ຍິງ 56,1 ສ່ວນຮ້ອຍ. ລັດຖະບານ ສປປ ລາວຊີ້ໃຫ້ເຫັນວ່າອັດຕາການມີສ່ວນຮ່ວມຂອງກຳລັງແຮງງານແມ່ນຕໍ່າກວ່າຫຼາຍ ຢູ່ທີ່ 40,8 ສ່ວນຮ້ອຍເນື່ອງຈາກວ່າລັດຖະບານໄດ້ຍົກເລີກຄຳນິຍາມຂອງ ຜູ້ທີ່ເຮັດທຸລະກິດສ່ວນຕົວ ຫຼື ອາຊີບອິດສະຫຼະ ຈຳນວນ 2,5 ລ້ານຄົນ ໃນຂະນະທີ່ສາກົນ ຍັງກວມເອົາອາຊີບນີ້ຢູ່. ຜູ້ທີ່ເຮັດທຸລະກິດສ່ວນຕົວ ຫຼື ອາຊີບອິດສະຫຼະ ມີທຸລະກິດຂອງຕົນເອງ ຫຼື ເຮັດທຸລະກິດຮ່ວມກັບຫຸ້ນສ່ວນ ແຕ່ບໍ່ມີພະນັກງານທີ່ໄດ້ຮັບເງິນຄ່າຈ້າງ. ທັງສອງແຫຼ່ງຂໍ້ມູນສະແດງໃຫ້ເຫັນວ່າອັດຕາການມີສ່ວນຮ່ວມຂອງແຮງງານເພດຊາຍ ສູງກວ່າເພດຍິງ. ລັດຖະບານລາຍງານວ່າອັດຕາການມີສ່ວນຮ່ວມຂອງກຳລັງແຮງງານຢູ່ໃນຕົວເມືອງ (53,8ສ່ວນຮ້ອຍ) ສູງກວ່າໃນເຂດຊົນນະບົດ (34,6 ສ່ວນຮ້ອຍ).

ຕາຕະລາງ 2.1

ຕາຕະລາງ 2.2 ຊີ້ໃຫ້ເຫັນວ່າທັງສອງແຫຼ່ງຂໍ້ມູນພົບວ່າອັດຕາການມີສ່ວນຮ່ວມຂອງແຮງງານໄວໜຸ່ມຕໍ່າກວ່າກຸ່ມຜູ້ທີ່ມີອາຍຸໃນໄວເຮັດວຽກ. ສິ່ງນີ້ຊີ້ໃຫ້ເຫັນວ່າໂອກາດການຈ້າງງານສຳລັບໄວໜຸ່ມແມ່ນມີໜ້ອຍ ຍ້ອນຂາດການສຶກສາ, ທັກສະ ແລະ ປະສົບການ. ເຊັ່ນດຽວກັນກັບຂໍ້ມູນທີ່ໄດ້ລາຍງານຂ້າງເທິງ, ອັດຕາການມີສ່ວນຮ່ວມຂອງແຮງງານໄວໜຸ່ມແມ່ນສູງກວ່າຫຼາຍໃນ ILOSTAT ຍ້ອນວ່າມັນກວມເອົາຜູ້ທີ່ເຮັດທຸລະກິດສ່ວນຕົວ ຫຼື ອາຊີບອິດສະຫຼະເຂົ້ານຳ. ຂໍ້ມູນນີ້ຍັງຊີ້ໃຫ້ເຫັນອີກວ່າການເຮັດທຸລະກິດສ່ວນຕົວມີອັດຕາສ່ວນສູງໃນກຸ່ມໄວໜຸ່ມ.

ຕາຕະລາງ 2.2

ໂອກາດໃນການຈ້າງງານແຕກຕ່າງກັນຢ່າງຫຼວງຫຼາຍລະຫວ່າງ ຕົວເມືອງ, ຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ແລະ ລະຫວ່າງໄວໜຸ່ມຍິງ ແລະ ໄວໜຸ່ມຊາຍ. ອີງຕາມການຄາດຄະເນຂອງລັດຖະບານ, ອັດຕາຄົນຫວ່າງງານໃນປະເທດ ຫຼື ສ່ວນແບ່ງໃນກຳລັງແຮງງານທັງໝົດ ຂອງຜູ້ທີ່ບໍ່ມີວຽກເຮັດງານທຳໃນ 7 ວັນທີ່ຜ່ານມາ ແລະ ຜູ້ທີ່ກຳລັງຊອກວຽກ ແມ່ນມີ 9,4ສ່ວນຮ້ອຍ. ອັດຕາທີ່ສອດຄ່ອງກັນສຳລັບໄວໜຸ່ມອາຍຸ 15-24 ປີ ແມ່ນສູງກວ່າຫຼາຍນີ້ ແລະ ຢູ່ທີ່ 18,2 ສ່ວນຮ້ອຍ ເຊິ່ງຊີ້ໃຫ້ເຫັນເຖິງຂໍ້ເສຍຫຼາຍປະການທີ່ໄວໜຸ່ມຕ້ອງປະເຊີນ. ຕາຕະລາງ 2.3 ປຽບທຽບອັດຕາການຫວ່າງງານຂອງໄວໜຸ່ມທີ່ເຜີຍແຜ່ໂດຍລັດຖະບານ ແລະ ILOSTAT, ໂດຍມີຕົວເລກແຕກຕ່າງກັນຫຼາຍ. ຖານຂໍ້ມູນຂອງອົງການ ILO ສະແດງໃຫ້ເຫັນອັດຕາການຫວ່າງງານທີ່ຕໍ່າລົງຫຼາຍ ເນື່ອງຈາກປັດໃຈທີ່ກ່ຽວກັບຜູ້ທີ່ເຮັດທຸລະກິດສ່ວນຕົວ ຫຼື ອາຊີບອິດສະຫຼະ ທີ່ໄດ້ກ່າວໄປແລ້ວຂ້າງເທິງ.

ຕາຕະລາງ 2.3

ເນື່ອງຈາກວ່າຈຳນວນກຳລັງແຮງງານສ່ວນໃຫຍ່ປະກອບອາຊີບໃນຂະແໜງກະສິກຳ, ການຜັນແປຂອງລະດູການ ແລະ ຄວາມບໍ່ແນ່ນອນຂອງທຸລະກິດນອກລະບົບ ຈຶ່ງເປັນລັກສະນະທີ່ສຳຄັນຂອງຕະຫຼາດແຮງງານ. ອີງຕາມການຄາດຄະເນ

### ຕາຕະລາງ 2.1: ຂໍ້ມູນອັດຕາການມີສ່ວນຮ່ວມຂອງກຳລັງແຮງງານຈາກການສຳຫຼວດແຮງງານປີ 2017

ແຫຼ່ງຂໍ້ມູນ: LSB, 2018 ແລະ ILO, 2022b.

| | ການຄິດໄລ່ຂອງລັດຖະບານ | | ຖານຂໍ້ມູນ ILO | |
|---|---|---|---|---|
| | ອັດຕາການມີສ່ວນຮ່ວມຂອງແຮງງານ (ສ່ວນຮ້ອຍ) | ກຳລັງແຮງງານ (ລ້ານ) | ອັດຕາການເຂົ້າຮ່ວມຂອງແຮງງານ (ສ່ວນຮ້ອຍ) | ກຳລັງແຮງງານ (ພັນ) |
| ທັງສອງເພດ | 40,8 | 1,9 | 59,4 | 2844 |
| ແມ່ຍິງ | 36,5 | - | 56,1 | 1363 |
| ຜູ້ຊາຍ | 45,2 | - | 63,6 | 1481 |

## ຕາຕະລາງ 2.2: ອັດຕາການມີສ່ວນຮ່ວມຂອງແຮງງານໄວໜຸ່ມອາຍຸ 15-24 ປີ ອີງຕາມການສຳຫຼວດແຮງງານ ປີ 2017

ແຫຼ່ງຂໍ້ມູນ: LSB, 2018 ແລະ ILO, 2022b.

| | ການຄິດໄລ່ຂອງລັດຖະບານ | ຖານຂໍ້ມູນ ILO | |
|---|---|---|---|
| | ອັດຕາການມີສ່ວນຮ່ວມຂອງແຮງງານໄວໜຸ່ມ (ສ່ວນຮ້ອຍ) | ອັດຕາການມີສ່ວນຮ່ວມຂອງແຮງງານໄວໜຸ່ມ (ສ່ວນຮ້ອຍ) | ປະຊາກອນໄວໜຸ່ມ (ພັນ) |
| ທັງສອງເພດ | 28,4 | 49,4 | 635 |
| ແມ່ຍິງ | 27,3 | 49,5 | 327 |
| ຜູ້ຊາຍ | 29,5 | 49,4 | 308 |

35 ສ່ວນຮ້ອຍຂອງການຈ້າງງານທັງຫມົດແມ່ນຢູ່ໃນຂະແໜງການທີ່ບໍ່ເປັນທາງການ ຫຼືນອກລະບົບ ໃນຂະນະທີ່ຂະແໜງການທີ່ເປັນທາງການ ກວມເອົາພຽງ 27 ສ່ວນຮ້ອຍ (LSB, 2018). ເມື່ອລວມເອົາການຈ້າງງານທີ່ບໍ່ເປັນທາງການ (ທັງໃນລະບົບ ແລະ ໃນຄົວເຮືອນ), ອັດຕາການຈ້າງງານທີ່ບໍ່ເປັນທາງການ ທັງໝົດແມ່ນ 83 ສ່ວນຮ້ອຍ. ຕົວເລກນີ້ແມ່ນສູງກວ່າສຳລັບແມ່ຍິງ ແລະ ໃນເຂດຊົນນະບົດ. ກຸ່ມເດັກນ້ອຍ ແລະ ຜູ້ເຖົ້າ (ອາຍຸ 60 ປີຂຶ້ນໄປ) ມັກຈະໄດ້ຮັບຜົນກະທົບຈາກຄວາມບໍ່ເປັນທາງການ (LSB, 2018).

ຖານຂໍ້ມູນຂອງອົງການ ILO ສະແດງໃຫ້ເຫັນວ່າ ໃນ ສປປ ລາວ ອັດຕາສ່ວນຂອງໄວໜຸ່ມ ຈຳນວນຫຼາຍ ເຖິງ 25,8 ສ່ວນຮ້ອຍ ບໍ່ໄດ້ຢູ່ໃນການສຶກສາ, ການຈ້າງງານ ຫຼື ການຝຶກອົບຮົມ (not in education, employment or training ຫຼື ເອີ້ນວ່າ NEET) ຕົວເລກແມ່ນສູງກວ່າສຳລັບໄວໜຸ່ມຍິງ (27,9ສ່ວນຮ້ອຍ) ເມື່ອທຽບກັບໄວໜຸ່ມຊາຍ (23,6 ສ່ວນຮ້ອຍ). ນີ້ແມ່ນອັດຕາທີ່ສູງທີ່ສຸດເມື່ອທຽບກັບທຸກປະ ເທດໃນອາຊີຕາເວັນອອກສຽງໃຕ້ (ຮູບ 2.1). ຖືເປັນບັນຫາທີ່ສຳຄັນ ຍ້ອນວ່າມັນສະທ້ອນເຖິງສິ່ງທ້າທາຍດ້ານໂຄງສ້າງໃນຕະຫຼາດແຮງງານ ແລະ ການສຶກສາ ເຊັ່ນ: ການປະລະການຮຽນ, ການຂາດແຮງຈູງໃຈ ແລະ ໂອກາດໃນການພັດທະນາທັກສະທີ່ກ່ຽວຂ້ອງ ແລະ ການຂາດແຄນວຽກເຮັດງານທຳທີ່ມີຄຸນນະພາບ. ປັດໄຈເຫຼົ່ານີ້ເຮັດໃຫ້ໄວໜຸ່ມເກີດຄວາມທໍ້ຖອຍ.

## ຕາຕະລາງ 2.3: ອັດຕາການຫວ່າງງານຂອງໄວໜຸ່ມອາຍຸ 15-24 ປີ ອີງຕາມການສຳຫຼວດແຮງງານໃນປີ 2017

ແຫຼ່ງຂໍ້ມູນ: LSB, 2018 ແລະ ILO, 2022b..

| ການສຳຫວດແຮງງານ | ການຄິດໄລ່ຂອງລັດຖະບານS | ຖານຂໍ້ມູນ ILO |
|---|---|---|
| | ອັດຕາສ່ວນການຫວ່າງງານຂອງໄວໜຸ່ມ (ສ່ວນຮ້ອຍ) | ອັດຕາສ່ວນການຫວ່າງງານຂອງໄວໜຸ່ມ (ສ່ວນຮ້ອຍ) |
| ທັງສອງເພດ | 12,9 | 5,9 |
| ແມ່ຍິງ | 11,2 | 5,4 |
| ຜູ້ຊາຍ | 14,41 | 6,5 |

ຮູບທີ 2.1

ການເຄື່ອນຍ້າຍຖິ່ນຖານແມ່ນປັດໄຈສຳຄັນຂອງຕະຫຼາດແຮງງານລາວ. ແຮງງານເຄື່ອນຍ້າຍ ກວມເອົາປະມານ 8ສ່ວນຮ້ອຍ ຂອງປະຊາ ກອນທີ່ເຮັດວຽກ (ລັດຖະບານ ສປປ ລາວ, 2018). ການສົ່ງເງິນກັບບ້ານ ຖືເປັນສ່ວນສຳຄັນຂອງລາຍຮັບຄົວເຮືອນ.ຂໍ້ມູນຈາກການສົນທະນາກຸ່ມ ຊີ້ໃຫ້ເຫັນວ່າຜູ້ເຂົ້າຮ່ວມຮູ້ສຶກວ່າ: "ໂອກາດໃນການເຮັດວຽກຂອງໄວໜຸ່ມຢູ່ ສປປ ລາວ ແມ່ນມີໜ້ອຍກວ່າປະເທດເພື່ອນບ້ານ ໂດຍສະເພາະແມ່ນ ຫວຽດນາມ ແລະ ໄທ ເນື່ອງຈາກວ່າປະເທດເຫຼົ່ານີ້ມີໂຮງງານ ແລະ ບໍລິສັດຫຼາຍກວ່າ ຈຶ່ງເຮັດໃຫ້ມີໂອກາດໃນການຈ້າງງານທີ່ດີກວ່າ. ເນື່ອງຈາກວ່າ ປະເທດເຫຼົ່ານີ້ມີລັກສະນະວັດທະນະທຳຄ້າຍຄືກັບຢູ່ລາວ, ຊາວໜຸ່ມຈຳນວນຫຼາຍຈຶ່ງຍ້າຍໄປເຮັດວຽກຢູ່ພຸ້ນ."[3]

ແຮງງານລາວປະມານ 940.000 ຄົນ ອາໄສຢູ່ໃນປະເທດໄທ ຕັ້ງແຕ່ກາງປີ 2020 (UNDESA, 2020). ຫຼາຍກວ່າ 80 ສ່ວນຮ້ອຍ ຂອງແຮງງານເຄື່ອນຍ້າຍແມ່ນໄວໜຸ່ມ, ສ່ວນຫຼາຍແມ່ນເຮັດວຽກເປັນແມ່ບ້ານ, ກໍ່ສ້າງ, ຢູ່ໂຮງງານການຜະລິດ, ກະສິກຳ ແລະ ການບັນເທີງ.ໂດຍສະເລ່ຍ ແຮງງານລາວອາໄສຢູ່ປະເທດໄທປະມານ 2 ປີ. ເງິນເດືອນສະເລ່ຍຂອງ ເຂົາເຈົ້າຢູ່ລະຫວ່າງ $300 ຫາ $399 ຕໍ່ເດືອນ (IOM, 2020; IOM ແລະ





"

### ລີມິງ ຍາງ

**ອາຍຸ 22 ປີ, ນັກຮຽນຊົນເຜົ່າມົ້ງຈາກເມືອງຊຳເໜືອ ແຂວງຫົວພັນ**

'ປັດຈຸບັນ, ອັດຕາການວ່າງງານສຳລັບໄວໜຸ່ມລາວແມ່ນສູງ. ຂ້ອຍຄິດວ່າມັນເກີດຈາກ 3 ສາເຫດ ຄື: ຂາດຄວາມຮູ້ ແລະ ທັກສະທີ່ຕະຫຼາດແຮງງານຕ້ອງການ, ຄ່າແຮງງານຕໍ່າ, ແລະ ຂາດໂອກາດຢູ່ເຂດຊົນນະບົດ ເນື່ອງຈາກໂອກາດການຈ້າງງານ ແມ່ນສຸມຢູ່ໃນຕົວເມືອງໃຫຍ່.

ຂ້ອຍມີຄວາມມຸ່ງໝັ້ນທີ່ຈະເປັນຜູ້ປະກອບການ ເພື່ອສ້າງວຽກເຮັດງານທຳໃຫ້ແກ່ໄວໜຸ່ມລາວ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ແລະ ພັດທະນາຊັບພະຍາກອນມະນຸດ, ໂດຍສະເພາະແມ່ນໄວໜຸ່ມລາວ ເພາະວ່າຊາວໜຸ່ມແມ່ນສ່ວນໜຶ່ງຂອງກຳລັງແຮງງານທີ່ຊຸກຍູ້ເສດຖະກິດຂອງປະເທດ. ຄຽງຄູ່ກັບການສ້າງວຽກເຮັດງານທຳ ແລະ ການພັດທະນາຊັບພະຍາກອນມະນຸດ, ຂ້ອຍຢາກສ້າງພື້ນທີ່ ຫຼື ເວທີທີ່ໄວໜຸ່ມລາວສາມາດຝຶກຝົນຕົນເອງໄດ້ ໂດຍສະເພາະໃນເຂດຊົນນະບົດ ແລະ ຕົວເມືອງນ້ອຍ.
— ກ່າວໂດຍ ລີມິງ ນັກຮຽນຈາກເມືອງຊຳເໜືອ ແຂວງຫົວພັນ.'

## ຮູບທີ 2.1: ອັດຕາສ່ວນຂອງໄວໜຸ່ມອາຍຸ 15-24 ປີ ທີ່ບໍ່ໄດ້ຢູ່ໃນ ການສຶກສາ, ການຈ້າງງານຫຼື ການຝຶກອົບຮົມ (NEET) ໃນບັນ ດາປະເທດອາຊີຕາເວັນອອກສຽງໃຕ້ ຄິດໄລ່ເປັນສ່ວນຮ້ອຍ

ແຫຼ່ງຂໍ້ມູນ: ILO, 2022. ຂໍ້ມູນມາຈາກການສໍາຫຼວດແຮງງານແຫ່ງຊາດ ປີ 2020 ຍົກເວັ້ນປະເທດກໍາປູເຈຍ ແລະ ອິນໂດເນເຊຍ (ທີ່ສໍາຫຼວດປີ 2019) ແລະ ສປປ ລາວ (ສໍາຫຼວດປີ 2017).




ILO, 2017). ໃນຂະ ນະທີ່ເງິນເດືອນສະເລ່ຍຢູ່ລາວ ແມ່ນ $110 ແຕ່ຄ່າແຮງງານຂັ້ນຕໍ່າຢູ່ປະເທດໄທສູງກວ່າສອງເທົ່າ (ILO, 2022c). ລາຍຮັບທີ່ຫຼາຍກວ່ານີ້ ອາດຈະເປັນສາເຫດຫຼັກຂອງການເຄື່ອນຍ້າຍແຮງງານ. ໃນຈໍານວນແຮງງານເຄື່ອນຍ້າຍຈາກ ສປປ ລາວ 56 ສ່ວນຮ້ອຍ ແມ່ນເປັນເພດຍິງ ເຊິ່ງສ່ວນໃຫຍ່ແມ່ນເຮັດວຽກເປັນແມ່ບ້ານຜ່ານຊ່ອງທາງທີ່ບໍ່ເປັນທາງການ (ILO, 2022c).ແຮງງານເຄື່ອນຍ້າຍທີ່ຖືກກົດໝາຍ ຈ່າຍເງິນປະມານ $543 ໃນການຈັດຫາງານ ໃນຂະນະທີ່ແຮງ ງານທີ່ຊອກວຽກຜ່ານຊ່ອງທາງອື່ນ ຈ່າຍພຽງແຕ່ $401 (ILO, 2020c).

3 ຄໍາເວົ້າດັ່ງກ່າວແມ່ນຄໍາຄິດເຫັນຂອງໄວໜຸ່ມທີ່ເຂົ້າຮ່ວມການສົນທະນາກຸ່ມ ເຊິ່ງອາດຈະບໍ່ກົງກັບສະພາບຄວາມເປັນຈິງກໍໄດ້ ຍ້ອນວ່າມີແຮງງານເຄື່ອນຍ້າຍຈາກປະເທດຫວຽດນາມເຂົ້າມາລາວຫຼາຍກວ່າ ຈາກລາວໄປຫວຽດນາມ.

ສິ່ງທ້າທາຍຫຼາຍຢ່າງຈໍາກັດຄວາມເຂັ້ມແຂງທາງດ້ານເສດຖະກິດຂອງແມ່ຍິງ. ປະການທໍາອິດ ໄວໜຸ່ມຍິງ ແລະ ເດັກຍິງ ປະເຊີນກັບຂໍ້ຈໍາກັດ ໃນການເຄື່ອນຍ້າຍ ຍ້ອນລະບົບຂົນສົ່ງສາທາລະນະບໍ່ມີຄວາມປອດໄພ, ຂໍ້ຈໍາກັດທາງສັງຄົມ ແລະ ບໍ່ມີຍານພາຫະນະເປັນຂອງຕົນເອງ. ສິ່ງດັ່ງກ່າວຈໍາກັດໂອກາດດ້ານການສຶກສາ ແລະ ວຽກເຮັດງານທໍາ ແລະ ຍັງຈໍາກັດທາງເລືອກໃນການເຂົ້າເຖິງຕະຫຼາດ ແລະ ການຂະຫຍາຍທຸລະກິດອີກດ້ວຍ. ປະການຕໍ່ມາ ຄວາມເຊື່ອແບບເໝົາລວມບົນພື້ນຖານທາງເພດ ເຮັດໃຫ້ນາຍຈ້າງຄິດວ່າພະນັກງານຍິງຖ້າຖືພາຈະເຮັດໃຫ້ມີຄ່າໃຊ້ຈ່າຍ ເພີ່ມຂຶ້ນ ຫຼື ເບິ່ງວ່າແມ່ຍິງເປັນແຮງງານທີ່ບໍ່ໜ້າເຊື່ອຖືປານໃດ. ປະການສຸດທ້າຍ, ບໍ່ມີແມ່ຍິງໃນບົດບາດການເປັນຜູ້ນໍາ ເຮັດໃຫ້ແມ່ຍິງ ບໍ່ໄດ້ສະແດງຄວາມສາມາດໃນການເປັນຕົວແບບ,ໃນການນໍາພາຂະບວນການຕ່າງໆທີ່ຈະນໍາໄປສູ່ການປ່ຽນແປງທີ່ສໍາຄັນໃນຊຸມຊົນ ກໍຄືສັງຄົມ. ໃນພາກພື້ນອາຊີຕາເວັນອອກສຽງໃຕ້, ແມ່ຍິງຍັງບໍ່ໄດ້ສະແດງອອກທາງດ້ານການເມືອງ ແລະ ເສດຖະກິດ (ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ອົງການຢູນິເຊັບ, 2021)

### ທ່າອ່ຽງດ້ານລະບົບນິເວດຂອງທຸລະກິດຂະໜາດນ້ອຍ

ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນ ສປປ ລາວ ກວມເອົາປະມານ 99 ສ່ວນຮ້ອຍ ຂອງວິສາຫະກິດທີ່ຈົດທະບຽນທັງໝົດ ເຊິ່ງມີ ສ່ວນແບ່ງໃນ GDP ໂດຍລວມແມ່ນໜ້ອຍກວ່າ ຢູ່ທີ່ປະມານ ຕໍ່າກວ່າ 20 ສ່ວນຮ້ອຍ ແລະ ເມື່ອທຽບ ກັບປະເທດໄທ 40 ສ່ວນຮ້ອຍ ແລະ ຟີລິບປິນ 32 ສ່ວນຮ້ອຍ ຈຶ່ງເຫັນໄດ້ວ່າ ພາກສ່ວນນີ້ ຢູ່ ສປປ ລາວ ຍັງມີທ່າແຮງທີ່ຈະຂະຫຍາຍຕົວໄດ້ອີກ. ວິສາຫະກິດຂະໜາດນ້ອຍ ແລະ ກາງ ສ່ວນໃຫຍ່ມີພະນັກງານໜ້ອຍກວ່າຫ້າ ຄົນ (ທະນາຄານພັດທະນາອາຊີ ແລະ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, 2022).

ຈຸນລະວິສາຫະກິດ ວິສາຫະກິດຂະໜາດນ້ອຍ ກວມເອົາສ່ວນໃຫຍ່ໃນໂຄງສ້າງທຸລະກິດຂອງ ເສດຖະກິດ. ໃນປີ 2020, ຈຸນລະວິສາຫະກິດກວມເອົາ 94,2 ສ່ວນຮ້ອຍ ຂອງວິສາຫະກິດທັງໝົດ, ຮອງລົງມາແມ່ນວິສາຫະກິດຂະໜາດ ນ້ອຍ 4,9 ສ່ວນຮ້ອຍ, ວິສາຫະກິດຂະໜາດກາງ 0,7 ສ່ວນຮ້ອຍ ແລະ ວິສາຫະກິດຂະໜາດໃຫຍ່ 0,2 ສ່ວນຮ້ອຍ (ທະນາຄານພັດທະນາອາຊີ ແລະ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, 2022). ປະມານໜຶ່ງສ່ວນສາມຂອງຈຸນລະວິສາ ຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນແມ່ຍິງເປັນເຈົ້າຂອງ ຫຼື ເປັນຜູ້ດໍາເນີນທຸລະ ກິດ (IFC, 2018). ທຸລະກິດທີ່ແມ່ຍິງເປັນເຈົ້າ ຂອງສ່ວນຫຼາຍແມ່ນຈຸນລະວິສາຫະກິດເຊິ່ງມີຂະໜາດນ້ອຍກວ່າ, ຈ້າງແຮງງານໜ້ອຍກວ່າ ແລະ ລາຍຮັບກໍໜ້ອຍກວ່າທຸລະກິດທີ່ຜູ້ຊາຍເປັນເຈົ້າຂອງ ເຖິງ 2,5 ເທົ່າ (IFC, 2018). ວິສາຫະ ກິດເພື່ອສັງຄົມດໍາເນີນທຸລະກິດໃນຫຼາຍຂົງເຂດເຊັ່ນ: ຫັດຖະກໍາ, ແຜ່ນແພ ແລະ ການທ່ອງທ່ຽວ, ສະໜອງການຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ສ່ວນໃຫຍ່ແມ່ນເຮັດ ວຽກກັບໄວໜຸ່ມ (UNDESA, 2020).

ໄວໜຸ່ມສາມາດມີບົດບາດສໍາຄັນໃນການຂັບເຄື່ອນສະພາບແວດລ້ອມຂອງທຸລະກິດ. ເຂົາເຈົ້າ ອາດຈະມີເຄືອຂ່າຍ, ມີຄວາມຄິດສ້າງສັນ, ມີຂໍ້ມູນ ແລະ ສາມາດຊັກຈູງຄົນອື່ນໄດ້ຫຼາຍກວ່າຄົນຮຸ່ນກ່ອນ. ພວກເຂົາຕອບສະໜອງຕໍ່ສິ່ງທ້າທາຍໃໝ່ໃນປັດຈຸບັນດ້ວຍການນໍາໃຊ້ວິທີການທີ່ສ້າງສັນ, ສະເໜີແນວຄິດໃໝ່ໆ ແລະ ຂັບເຄື່ອນການພັດທະນາມະນຸດເພື່ອຕົນເອງ ແລະ ຊຸມຊົນ. ຄໍາຄິດ ເຫັນຂອງໄວໜຸ່ມຈາກການສົນທະນາກຸ່ມຊີ້ໃຫ້ ເຫັນວ່າ





ເນື່ອງຈາກສະພາບເສດຖະກິດຂອງປະ ເທດລາວກໍາລັງພັດທະນາ ແລະ ຂະຫຍາຍຕົວ,ໄວໜຸ່ມຈໍານວນຫຼາຍຈຶ່ງສົນໃຈທີ່ຈະກໍ່ຕັ້ງທຸລະກິດຂອງຕົນເອງ (ເປັນຕົວແທນຂາຍອະສັງຫາລິ ມະຊັບ, ຮ້ານອາຫານ ແລະ ທຸລະກິດສະຕາດອັບ ແລະ ອື່ນໆ) ເຊິ່ງພວກເຂົາເຊື່ອວ່າຈະເຮັດໃຫ້ມີອິດສະຫຼະ ແລະ ຈະມີເວລາໃນການເບິ່ງແຍງຄອບຄົວຫຼາຍຂຶ້ນ.

ຮູບທີ 2.2 ສະແດງໃຫ້ເຫັນການເຂົ້າເຖິງການເງິນຂອງໄວໜຸ່ມໃນ ສປປ ລາວ ເມື່ອທຽບກັບປະເທດອື່ນໆໃນອາຊີຕາເວັນອອກສຽງໃຕ້. ການມີບັນຊີທະນາຄານເປັນປະຕູໄຂສູ່ການເລີ່ມຕົ້ນທຸລະກິດ ແລະ ການເຂົ້າເຖິງການເງິນ. ອັດຕາສ່ວນຂອງໄວໜຸ່ມທີ່ມີບັນຊີເງິນຝາກຢູ່ສະຖາບັນການເງິນ ຫຼື ຜູ້ໃຫ້ບໍລິການດ້ານການເງິນຜ່ານມືຖື ໃນ ສປປ ລາວ ແມ່ນຕໍ່າ ເມື່ອທຽບກັບຫຼາຍປະເທດໃນພາກພື້ນ, ເຊິ່ງຊີ້ໃຫ້ເຫັນວ່າການເຂົ້າເຖິງການເງິນ ແລະ ຄວາມຮູ້ດ້ານການເງິນແມ່ນບໍ່ຫຼາຍ.

ຮູບທີ 2.2

ຜູ້ມີບົດບາດສໍາຄັນໃນການເປັນຜູ້ປະກອບການ

## ຮູບທີ 2.2: ການເປັນເຈົ້າຂອງບັນຊີຢູ່ສະຖາບັນການເງິນ ຫຼື ຜູ້ໃຫ້ບໍລິການດ້ານການເງິນຜ່ານມືຖື, ສ່ວນຮ້ອຍຂອງໄວໜຸ່ມ ອາຍຸ 15-24 ປີ, ປີ 2018

ແຫຼ່ງຂໍ້ມູນ: ທະນາຄານໂລກ, ຕົວຊີ້ວັດການພັດທະນາໂລກ World Development Indicators. ເຂົ້າໃຊ້ໃນເດືອນກໍລະກົດ 2022.




ແມ່ນສະມາຄົມນັກທຸລະກິດໜຸ່ມລາວ ສ້າງຕັ້ງ ຂຶ້ນພາຍໃຕ້ການອຸປະຖໍາຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໃນປີ 2005, ເປັນອົງການບໍ່ສະແຫວງຫາຜົນກໍາໄລ ທີ່ຂັບເຄື່ອນ ໂດຍອາສາສະໝັກໃນການສະໜັບສະໜູນໄວ ໜຸ່ມໃນດ້ານທຸລະກິດ ແລະ ຊ່ວຍພັດທະນາປະເທດຊາດ ໂດຍແນໃສ່ເຈົ້າຂອງທຸລະກິດ ທີ່ມີອາຍຸ 45 ປີລົງມາ, ໃຫ້ສະມາຊິກມີໂອກາດທີ່ ຈະຮຽນຮູ້ຈາກປະສົບການຂອງກັນ ແລະ ກັນ, ໃຫ້ຄໍາປຶກສາເຊິ່ງກັນ ແລະ ກັນ ໃນການຂະຫຍາຍ ທຸລະກິດ. ເປັນການສ້າງຊຸມຊົນເພື່ອເພີ່ມໂອກາດທີ່ຈະປະສົບຜົນສໍາເລັດທາງທຸລະກິດໃຫ້ແກ່ຜູ້ປະ ກອບການໄວໜຸ່ມໃນທົ່ວປະເທດລາວ (UNDESA, 2020).

### ພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບຕໍ່ການມີສ່ວນຮ່ວມດ້ານເສດຖະກິດຂອງໄວໜຸ່ມ

ການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ເກີດຜົນກະທົບທາງດ້ານເສດຖະກິດທີ່ໃຫຍ່ທີ່ສຸດທີ່ ສປປ ລາວ ໄດ້ປະສົບມາ. ດັ່ງທີ່ໄດ້ຍົກໃຫ້ເຫັນໃນບົດທີ 1, ການເຕີບໂຕຂອງ ໃນປີ 2020 ແມ່ນຊ້າທີ່ສຸດນັບແຕ່ປີ 1988. ນອກເຫນືອຈາກສິ່ງທ້າທາຍດ້ານງົບປະມານ ທີ່ຍັງສືບຕໍ່ເຮັດໃຫ້ເສດຖະກິດບໍ່ມີສະຖຽນລະພາບໃນສະພາບທີ່ມີການປ່ຽນແປງຂອງເສດຖະກິດໂລກດັ່ງໃນປັດຈຸບັນ, ໂລກລະບາດໂຄວິດ-19 ໄດ້ສົ່ງຜົນກະທົບຢ່າງກວ້າງຂວາງຕໍ່ ການຈ້າງງານ ແລະ ທຸລະກິດຍ້ອນມາດຕະການປິດປະເທດ ແລະ ມາດຕະການອື່ນໆ. ເຖິງວ່າຈະ ມີການຟື້ນຕົວໄວໃນຕົ້ນປີ 2021 ຍ້ອນວ່າຜູ້ທີ່ຫວ່າງງານສາມາດເຮັດວຽກໃນຂະແໜງກະສິກໍາຍ້ອນມີການຊຸກຍູ້ການສົ່ງອອກ ແຕ່ວ່າການແຜ່ລະບາດ ຄັ້ງທີສອງຂອງເຊື້ອພະຍາດໄດ້ເຮັດໃຫ້ການຈ້າງງານຫຼຸດລົງ ໃນທ້າຍປີ 2021.ອັດຕາການຫວ່າງງານ ເພີ່ມຂຶ້ນເປັນປະມານ 25 ສ່ວນຮ້ອຍໃນປີ 2021 ເນື່ອງຈາກພະຍາດລະບາດໂຄວິດ-19 (ທະນາຄານໂລກ, 2021b)

ໃນລະຫວ່າງ ເດືອນມີນາ ຫາ ເມສາ ປີ 2021 ແຮງງານເຄື່ອນຍ້າຍຂອງລາວ ຫຼາຍກວ່າ 280.000 ຄົນ ກັບມາຈາກປະເທດໄທ (UNSDG, 2021), ສ່ວນໃຫຍ່ມີທັກສະຕໍ່າ ແລະ ຮຽນຈົບພຽງແຕ່ມັດທະຍົມຕົ້ນເທົ່ານັ້ນ. ການຄາດຄະເນທີ່ບໍ່ເປັນທາງການລະບຸວ່າຕົວເລກນີ້ອາດຈະສູງເຖິງ 400.000 ຄົນ. ມີລາຍງານວ່າແຮງງານເຄື່ອນຍ້າຍຈໍານວນຫຼາຍຕ້ອງການກັບຄືນໄປເຮັດວຽກຢູ່ປະເທດໄທອີກ. ເຫດຜົນຕົ້ນຕໍໃນການຊອກວຽກເຮັດງານທໍາຢູ່ຕ່າງປະເທດ ມີຄ່າແຮງງານທີ່ສູງກວ່າ, ຊີວິດການເປັນຢູ່ທີ່ດີກວ່າ ແລະ ໄດ້ຢູ່ກັບຄອບຄົວ ແລະ ໝູ່ເພື່ອນທີ່ອາໄສຢູ່ປະເທດໄທ (UNSDG, 2021). ເມື່ອດ່ານຊາຍແດນເປີດຄືນໃໝ່ ໃນເດືອນພຶດສະພາ ປີ




**ການຈ້າງງານຂອງ ໄວໜຸ່ມ ໃນທົ່ວໂລກ ຫຼຸດລົງ 8,7 ສ່ວນຮ້ອຍ ໃນປີ 2020**

2022 ແລະ ເກີດວິກິດການນ້ຳມັນເຊື້ອໄຟພ້ອມກັບຄ່າເງິນກີບຂອງລາວທີ່ຕົກຕ່ຳລົງເມື່ອທຽບໃສ່ກັບບາດໄທ ແຮງງານເຄື່ອນຍ້າຍຈຳນວນໜຶ່ງກໍເລີ່ມກັບໄປເຮັດວຽກຢູ່ໄທ.

ແຮງງານທີ່ເຮັດວຽກນອກລະບົບໃນຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ເປັນກຸ່ມທີ່ປະເຊີນກັບຄວາມທ້າທາຍຂອງການລະບາດຂອງພະຍາດ COVID-19 ຫຼາຍທີ່ສຸດ. ພວກເຂົາບໍ່ຄ່ອຍໄດ້ຮັບການປົກປ້ອງທາງສັງຄົມຂັ້ນພື້ນຖານໃນຂະນະທີ່ຕ້ອງປະເຊີນກັບແຮງກົດດັນຈາກການດຳເນີນທຸລະ ກິດ ແລະ ລາຍຮັບຂອງເຈົ້າຂອງທຸລະກິດ ແລະ ລາຍຮັບຂອງຕົນເອງທີ່ຫຼຸດລົງ. ບໍລິສັດຂະໜາດໃຫຍ່ມີຄວາມຕ້ອງການສິນຄ້າ ແລະ ບໍລິການທີ່ຫຼຸດລົງ ລວມໄປເຖິງ ຄວາມຕ້ອງການການບໍລິການຢູ່ພາຍໃນປະເທດທີ່ຫຼຸດລົງ ໄດ້ເຮັດໃຫ້ຈຸນລະວິສາຫະກິດ, ຂະໜາດນ້ອຍ ແລະ ຂະໜາດກາງຫຼາຍແຫ່ງ ຕ້ອງປະເຊີນກັບຄວາມທ້າທາຍ. ຜົນຈາກການສຳຫຼວດຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ຢູ່ 6 ແຂວງ ໃນເດືອນມິຖຸນາ ປີ 2020 ທີ່ຜ່ານມາ ໄດ້ສະແດງໃຫ້ເຫັນວ່າ ໃນບໍລິສັດຈຳນວນ 350 ແຫ່ງທີ່ເຂົ້າຮ່ວມການສຳຫຼວດ ມີເຖິງ 95 ສ່ວນຮ້ອຍ ໄດ້ຮັບຜົນກະທົບທາງລົບ. ມາດຕະການປິດເມືອງ (lockdown) ເຮັດໃຫ້ການຂາຍຂອງວິສາຫະກິດ ຫຼຸດລົງເຖິງ 81 ສ່ວນຮ້ອຍ ແລະ ຜົນກະທົບຫຼັກອື່ນໆໄດ້ແກ່: ບໍ່ມີລູກຄ້າ (66 ສ່ວນຮ້ອຍ) ແລະ ຂາດການສະ ໜອງວັດຖຸດິບ (41ສ່ວນຮ້ອຍ).

ໃນຂະນະດຽວກັນ ການທີ່ທຸລະກິດ ໃນລະບົບປິດຕົວລົງ ຫຼື ຫຼຸດການດຳເນີນງານລົງ ອາດເຮັດໃຫ້ເກີດການຫວ່າງງານ ຫຼື ຕົກງານເພີ່ມຂຶ້ນ ເຊິ່ງພວກເຂົາຍັງຕ້ອງການລາຍຮັບ ແລະ ອາດຈະເຮັດໃຫ້ເກີດການຫັນໄປສູ່ການຫາລາຍຮັບດ້ວຍການເປັນເຈົ້າຂອງທຸລະກິດຈຸລະພາກນອກລະບົບ. ໃນຂະນະທີ່ທຸລະກິດສ່ວນໃຫຍ່ໄດ້ເລີ່ມກັບຄືນມາດຳເນີນງານ, ອັດຕາເງິນເຟີ້ຕັ້ງແຕ່ຕົ້ນປີ ແລະ ຄວາມຂັດແຍ່ງຢູ່ປະເທດອູແກຣນທີ່ຮ້າຍແຮງຂຶ້ນນັ້ນ ກໍກຳລັງສົ່ງຜົນກະທົບຕໍ່ຫົວໜ່ວຍທຸລະກິດທັງໝົດໃນ ສປປ ລາວ ໃນລະດັບທີ່ແຕກຕ່າງກັນ ໂດຍສະເພາະແມ່ນອັດຕາຂອງຜົນກຳໄລ. ປະມານ 95 ສ່ວນຮ້ອຍຂອງຫົວໜ່ວຍທຸລະກິດລາຍງານຜົນກະທົບທາງລົບຈາກການເພີ່ມຂຶ້ນຂອງລາຄານ້ຳມັນເຊື້ອໄຟ ແລະ ສິນຄ້າອື່ນໆ (ທະນາຄານໂລກ, 2022).

ສຳລັບກຸ່ມຄົນທີ່ດ້ອຍໂອກາດໃນຕະຫຼາດແຮງງານຢູ່ແລ້ວ ເຊັ່ນ: ຊາວໜຸ່ມ, ແມ່ຍິງ, ຜູ້ສູງອາຍຸ ແລະ ແຮງງານເຄື່ອນຍ້າຍແມ່ນຈະໄດ້ຮັບຜົນກະທົບຫຼາຍກວ່າເກົ່າຈາກການແຜ່ລະບາດຂອງພະຍາດໂຄວິດ-19. ການຈ້າງງານຂອງໄວໜຸ່ມໃນທົ່ວໂລກຫຼຸດລົງ 8,7 ສ່ວນຮ້ອຍ ໃນປີ 2020 ໃນຂະນະທີ່ການຈ້າງງານຂອງຜູ້ໃຫຍ່ຫຼຸດລົງ 3,7 ສ່ວນຮ້ອຍ (Barford, Coutts ແລະ Sahai, 2021). ໃນປີ 2020 ພຽງປີດຽວ, ວິກິດການດັ່ງກ່າວເຮັດໃຫ້ການຈ້າງງານໄວໜຸ່ມໃນອາຊີ ແລະ ປາຊີຟິກ ຫຼຸດລົງເຖິງ 17 ລ້ານຕຳແໜ່ງງານ (ILO, 2020b). ຍ້ອນມີປະສົບການ ແລະ ທັກສະໜ້ອຍກວ່າຜູ້ໃຫຍ່ ໄວໜຸ່ມຈຶ່ງຕ້ອງປະ ເຊີນກັບອຸປະສັກໃນການເຂົ້າເຖິງຕະຫຼາດແຮງງານ ແລະ ມີຄວາມຫຍຸ້ງຍາກທີ່ຈະຮັກສາຕຳແໜ່ງງານທີ່ໝັ້ນຄົງຂອງຕົນເອງ. ພະນັກງານອາຍຸນ້ອຍມັກຈະເປັນກຸ່ມທຳອິດທີ່ຕົກວຽກ ແລະ ຕ້ອງຍ້າຍໄປເຮັດວຽກຢູ່ບ່ອນທີ່ບໍ່ປອດໄພ ຫຼື ບາງຄົນກໍບໍ່ສາມາດຊອກວຽກໃໝ່ໄດ້. ປະກົດການດັ່ງກ່າວເຮັດໃຫ້ເກີດມີຄວາມບໍ່ເປັນ ລະບົບ ການຫວ່າງງານ ແລະ ຄວາມບໍ່ໝັ້ນຄົງ ໃນວຽກງານຫຼາຍຂຶ້ນ (Barford, Coutts ແລະ Sahai, 2021).

ໃນທົ່ວໂລກ, ຂະແໜງການທີ່ໄວໜຸ່ມເຮັດວຽກຢູ່ຫຼາຍທີ່ສຸດ ແມ່ນ: ການຂາຍຍ່ອຍ ແລະ ການບໍລິການ ເຊິ່ງວ່າເປັນຂະແໜງທີ່ໄດ້ຮັບຜົນກະທົບໜັກທີ່ສຸດ. ວຽກສ່ວນໃຫຍ່ທີ່ໄວໜຸ່ມເຮັດໃນຂະແໜງການເຫຼົ່ານີ້ບໍ່ສາມາດເຮັດຜ່ານ ທາງອອນລາຍໄດ້ (UNDP, 2022a). ຢູ່ ສປປ ລາວ, ຫຼັງຈາກບໍ່ມີນັກທ່ອງທ່ຽວຈາກ ຕ່າງປະເທດ, ບັນດາຣີສອດ, ບໍລິສັດທ່ອງທ່ຽວ ແລະ ຜູ້ປະກອບການອື່ນໆ ລ້ວນແຕ່ພະຍາຍາມແນເປົ້າໝາຍໃສ່ນັກທ່ອງທ່ຽວພາຍໃນປະເທດ ແລະ ກຸ່ມຄົນທີ່ໄປທ່ຽວໃນຊ່ວງວັນພັກເສົາ-ອາທິດ. ໃນປີ 2021,ໂດຍສະເລ່ຍແລ້ວ, ຜູ້ປະກອບການທ່ອງທ່ຽວ ແລະ ໂຮງແຮມຢຸດຈ້າງ ພະນັກງານ ປະມານ 42 ສ່ວນຮ້ອຍ ແລະ ມີຈຳນວນໜຶ່ງກໍຢຸດຈ້າງພະນັງງານເຖິງ 80 ສ່ວນຮ້ອຍ (ທະນາຄານໂລກ, 2021a). ໃນບັນດາຂະແໜງ ແລະ ເຂດເສດຖະກິດພິເສດທີ່ກ່ຽວຂ້ອງກັບການທ່ອງທ່ຽວຍິ່ງໄດ້ຮັບຜົນກະທົບຮຸນແຮງກວ່າ. ການສູນເສຍວຽກເຮັດງານທຳເຮັດໃຫ້ໄວໜຸ່ມຫຼາຍຄົນຂາດປະສົບການ ແລະ ຂາດໂອກາດໃນການສະສົມຄວາມສາມາດເພື່ອທີ່ຈະເລື່ອນຕຳແໜ່ງໃນສາຍອາຊີບຂອງຕົນ.

ຮູບ 2.3

ການລະບາດຂອງພະຍາດ COVID-19 ເຮັດໃຫ້ເກີດການປະຕິວັດ ໃນການນຳໃຊ້ເຕັກໂນໂລຢີດິຈິຕອນເພື່ອການຮຽນຮູ້ ແລະ ການດຳລົງຊີວິດ, ໃນສະພາບ ການທີ່ພົ້ນເດັ່ນຂຶ້ນຂອງເສດຖະກິດອາຊີບອິດສະຫຼະ (gig economy) ແລະ ການເຮັດວຽກແບບອອນລາຍຈາກທາງໄກ. ແນວໃດກໍຕາມ ຄວາມບໍ່ສະເໝີພາບໃນການສຶກສາ ແລະ ການເຂົ້າເຖິງເຕັກໂນໂລຢີດິຈິຕອນ ແລະ ທັກສະດິຈິຕອນ ນຳໄປສູ່ຜົນລັບທີ່ບໍ່ເທົ່າທຽມກັນ (ຮູບ 2.3). ການແຜ່ລະບາດຂອງພະຍາດດັ່ງກ່າວໄດ້ເຜີຍໃຫ້ເຫັນເຖິງການຈຳແນກທາງເພດທາງ





## ກ່ອງເນື້ອໃນ 2.3: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX

**ຜົນໄດ້ຮັບທີ 3**
— ເພີ່ມທະວີຄວາມຜາສຸກຂອງປະຊາຊົນ

**ຜົນໄດ້ຮັບທີ 4**
— ຊຸກຍູ້ ແລະ ພັດທະນາໄວໜຸ່ມ ເພື່ອຍົກສູງແຫຼ່ງທຶນມະນຸດ ແລະ ການມີສ່ວນຮ່ວມໃນກຳລັງແຮງ

**ເປົ້າໝາຍຫຼັກ ແລະ ຕົວຊີ້ວັດ**
— ຈັດຕັ້ງການຝຶກອົບຮົມວິຊາຊີບ ແລະ ສ້າງວຽກເຮັດງານທຳໃຫ້ໄວໜຸ່ມ ໂດຍສະເພາະໄວໜຸ່ມໃນເຂດຊົນນະບົດຫ່າງໄກສອກຫຼີກ ຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດໃນຂະແໜງສ້ອມແປງລົດຈັກ ແລະ ລົດໃຫຍ່, ຊ່າງໄຟຟ້າ,ຊ່າງເຊື່ອມ, ຕັດຫຍິບ, ຊ່າງເສີມສວຍ, ກະສິກຳ ແລະ ລ້ຽງສັດ ໃຫ້ມີວຽກເຮັດງານທຳເພີ່ມຂຶ້ນ20 ສ່ວນຮ້ອຍໃນແຕ່ລະປີ (ຈັດຂຶ້ນຜ່ານສູນກາງໄວໜຸ່ມປະຊາຊົນປະຕິວັດລາວ).
— ຈັດຝຶກອົບຮົມດ້ານວິຊາການໃຫ້ແກ່ໄວໜຸ່ມ ແລະ ບຸກຄະລາກອນໃນທົ່ວປະເທດ ປີລະ 1 ຄັ້ງ.

ຂົງເຂດບູລິມະສິດເພີ່ມເຕີມ ລວມມີ ການເຮັດໃຫ້ໄວໜຸ່ມໃນເຂດຫ່າງໄກສອກຫຼີກ ແລະ ຊຸມຊົນຊົນນະບົດ ມີວຽກເຮັດງານທຳ ແລະ ປັບປຸງທັກສະໃນການດຳເນີນທຸລະກິດເພື່ສ້າງລາຍຮັບໃຫ້ແກ່ຄອບຄົວ, ສົ່ງເສີມໂອກາດໃນອາຊີບ ແລະ ສ້າງວຽກເຮັດງານທຳໃຫ້ ຫຼາຍຂຶ້ນໃນຂະແໜງການທີ່ເປັນທາງການ

ແຫຼ່ງຂໍ້ມູນ: MPI, 2021a.

ດ້ານດິຈິຕອນ ໂດຍຢືນຢັນວ່າແມ່ຍິງ ແລະ ເດັກຍິງມີທັກສະດ້ານດິຈິຕອນໜ້ອຍ ເຊິ່ງເປັນອຸປະສັກຕໍ່ຄວາມສາມາດໃນການໃຊ້ປະໂຫຍດຈາກເຕັກໂນໂລຢີ (UNDP, 2022a).

ໃນ ສປປ ລາວ ການມີສ່ວນຮ່ວມດ້ານໄອຊີທີຂອງໄວໜຸ່ມ ອາຍຸ 15-24 ປີ ໃນເຂດຊົນນະບົດ ແລະ ຕົວເມືອງມີຄວາມແຕກຕ່າງກັນຢ່າງຊັດເຈນ, ໂດຍສະເພາະໃນກຸ່ມທີ່ມີລະດັບການສຶກສາແຕກຕ່າງກັນ.ໂດຍລວມແລ້ວມີພຽງແຕ່ສ່ວນນ້ອຍເທົ່ານັ້ນທີ່ມີສ່ວນຮ່ວມໃນກິດຈະກຳດ້ານໄອຊີທີ, ກຸ່ມທີ່ມີສ່ວນຮ່ວມຫຼາຍສຸດແມ່ນກຸ່ມ ທີ່ກຳລັງຮຽນຈົບມັດທະຍົມ ແລະ ຊັ້ນສູງ. ການມີສ່ວນຮ່ວມຂອງແມ່ຍິງແມ່ນຕ່ຳກວ່າຜູ້ຊາຍ (ຮູບ 2.4). ໃນປີ 2017, ສາມສ່ວນສີ່ຂອງໄວໜຸ່ມຍິງ (75-77 ສ່ວນຮ້ອຍ) ມີໂທລະສັບມືຖືເປັນຂອງຕົນເອງ ເມື່ອທຽບກັບໄວໜຸ່ມຊາຍ ແມ່ນສູງກວ່າເລັກນ້ອຍ (76-84 ສ່ວນຮ້ອຍ) (ລັດຖະບານ ສປປ ລາວ, 2018). ແນວໃດກໍຕາມ ບໍ່ມີຄວາມແຕກຕ່າງລະຫວ່າງເພດຍິງ ແລະ ເພດຊາຍ ໃນການນຳໃຊ້ອິນເຕີເນັດ. ໄວໜຸ່ມຍິງ ອາຍຸ 15-19 ປີ ປະມານ 47 ສ່ວນຮ້ອຍ ແລະ ໄວໜຸ່ມຍິງອາຍຸ 20-24 ປີ ປະມານ 40ສ່ວນຮ້ອຍ ໄດ້ນຳໃຊ້ອິນເຕີເນັດ ໃນ 3 ເດືອນຜ່ານມາ, ສຳລັບໄວໜຸ່ມຊາຍແມ່ນປະມານ 42ສ່ວນຮ້ອຍ ສຳລັບກຸ່ມອາຍຸ 15-19 ປີ ແລະ 39 ສ່ວນຮ້ອຍ ສຳລັບກຸ່ມອາຍຸ 20-24 ປີ.

ຮູບທີ 2.4

### ຮູບທີ 2.3: ການແບ່ງປັນດ້ານດິຈິຕອນລະຫວ່າງປະເທດທີ່ມີລາຍໄດ້ສູງ ແລະ ຕ່ຳ

ແຫຼ່ງຂໍ້ມູນ: UNDP, 2022a.




## 2.3 ການນຳໃຊ້ນະໂຍບາຍ ແລະ ກົດໝາຍ

### ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ

ແຜນພັດທະນາແຫ່ງຊາດໄລຍະກາງຂອງລັດຖະບານໄດ້ຮັບຮູ້ຄວາມສາມາດດ້ານເສດຖະກິດສັງຄົມຂອງໄວໜຸ່ມ ໂດຍຖືເອົາໄວໜຸ່ມເປັນຊັບສິນຂອງຊາດ. ແຜນການດັ່ງກ່າວຮຽກຮ້ອງໃຫ້ "ພັດທະນາ ແລະ ນຳໃຊ້ປະຊາກອນທີ່ມີຢູ່ຢ່າງຄົບຖ້ວນ ໃຫ້ໄດ້ຮັບຜົນປະໂຫຍດສູງສຸດ ດ້ວຍການລົງທຶນພັດທະນາໄວໜຸ່ມໃຫ້ມີຄວາມຮູ້ ແລະ ຄວາມສາມາດ; ຍົກສູງຄວາມສາມາດ ແລະ ລະດັບສີມືແຮງງານຂອງໄວໜຸ່ມໃຫ້ກາຍເປັນກຳລັງແຮງງານທີ່ມີຄວາມສາມາດບົ່ມຊ້ອນໃນຂະບວນການຜະລິດຕ່າງໆ ແລະ ສາມາດປະກອບສ່ວນເຂົ້າໃນການພັດທະນາປະເທດຊາດໃນອະນາຄົດ" ໃນຈຳນວນຜົນໄດ້ຮັບທັງ 6 ຂໍ້ ໃນແຜນການ 5 ປີ, ໝາກຜົນທີ 3 ກ່ຽວກັບ"ການເພີ່ມທະວີຄວາມຜາສຸກຂອງປະຊາຊົນ" ເປັນກິດຈະກຳສະເພາະໄວໜຸ່ມ (ກ່ອງ 2,3). ແຜນການດັ່ງກ່າວໄດ້ສະເໜີນະໂຍບາຍລວມ ເພື່ອຊຸກຍູ້ວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ຂະໜາດກາງໂດຍລວມ ແລະ ຊຸກຍູ້ການສ້າງວຽກເຮັດງານທຳ.

### ກົດໝາຍປົກປ້ອງ ແລະ ຊ່ວຍເຫຼືອແຮງງານໄວໜຸ່ມ

ໃນປີ 2013, ສະພາແຫ່ງຊາດໄດ້ປັບປຸງ ກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ວັນທີ 24 ທັນວາ 2013, ປະກາດໃຊ້ໃນປີ 2014. ກົດໝາຍດັ່ງກ່າວໄດ້ກຳນົດຢ່າງຈະແຈ້ງ ກ່ຽວກັບ ແຮງງານໄວໜຸ່ມ ວ່າ "ພະນັກງານອາຍຸລະຫວ່າງ 12 ຫາຕ່ຳກວ່າ 18 ປີ" ແລະ ແຮງງານເດັກ ແມ່ນ "ແຮງງານໄວໜຸ່ມທີ່ບໍ່ໄດ້ຮັບອະນຸຍາດໃຫ້ເຮັດວຽກຢູ່ບ່ອນເຮັດວຽກ ຫຼື ຂະແໜງການ ທີ່ເປັນອັນຕະລາຍ, ການເຮັດວຽກລ່ວງເວລາ ຫຼື ເຮັດວຽກໜັກ, ລວມທັງເດັກນ້ອຍອາຍຸຕ່ຳກວ່າ 12 ປີ ເຮັດວຽກດ້ານເສດຖະກິດ." ກົດໝາຍດັ່ງກ່າວໃຫ້ການປົກປ້ອງຫຼາຍລະດັບແກ່ລູກຈ້າງໃນລະບົບ ເຊັ່ນ: ການຈ່າຍເງິນຊົດເຊີຍ. ກົດໝາຍນີ້ໄດ້ການ ລາປ່ວຍຂອງພະນັກງານໝົດທຸກຄົນ ແລະ ການ ຈ່າຍຄ່າຈ້າງ ຫຼື ເງິນເດືອນຢ່າງຕໍ່ເນື່ອງໃນກໍລະນີ  ທີ່ພະນັກງານໄດ້ຮັບບາດເຈັບ ແລະ ຕິດພະຍາດຈາກການເຮັດວຽກ ພ້ອມທັງກຳນົດນະໂຍບາຍ ການເກີດລູກ ແລະ ເງິນຊ່ວຍເຫຼືອການເກີດລູກ.





### ຮູບທີ 2.4: ສ່ວນຮ້ອຍ ຂອງເຍົາວະຊົນ ແລະ ໄວໜຸ່ມ ອາຍຸ 15-24 ປີ ເຮັດກິດຈະກຳ  ຢ່າງນ້ອຍໜຶ່ງກິດຈະກຳ ໃນສາມເດືອນທີ່ຜ່ານມາ

ແຫຼ່ງຂໍ້ມູນ: LSB, 2017.






ສຳລັບພະນັກງານໃນລະບົບ, ກົດໝາຍວ່າດ້ວຍປະກັນສັງຄົມ ປີ 2013 ກວມເອົາເງິນອຸດໜູນການຫວ່າງງານ, ການລາພັກ ແລະ ເງິນອຸດໜູນການເຈັບປ່ວຍຂອງສະມາຊິກກອງທຶນປະກັນສັງຄົມ ແລະ ຄຸ້ມຄອງຜົນປະໂຫຍດຖ້າກຳລັງ ແຮງງານຂາດວຽກຍ້ອນເງື່ອນໄຂທີ່ກ່ຽວພັນ ຫຼື ບໍ່ກ່ຽວພັນ ກັບການເຮັດວຽກ (ຫຼັງຈາກສິ້ນສຸດການຈ່າຍຄ່າຈ້າງ). ແຮງງານທີ່ບໍ່ໄດ້ຢູ່ໃນລະບົບ ເສດຖະກິດມີສິດເຂົ້າຮ່ວມໂຄງການປະກັນສັງຄົມ ທີ່ປະກອບສ່ວນພາຍໃຕ້ກອງທຶນປະກັນສັງຄົມ ແຫ່ງຊາດຕາມຄວາມສະໝັກໃຈ ໂດຍມີຊຸດຜົນ ປະໂຫຍດບໍ່ລວມເອົາການບາດ ເຈັບຈາກການເຮັດວຽກ ແລະ ເງິນອຸດໜູນຫວ່າງງານ. ໄວໜຸ່ມທີ່ປະກອບສ່ວນເຂົ້າໃນກອງທຶນປະ ກັນສັງຄົມແມ່ນມີສິດໄດ້ຮັບຜົນປະໂຫຍດປະກັນສັງຄົມ. ຢ່າງໃດກໍຕາມ, ຈຳນວນສະມາຊິກສະຫມັກໃຈທີ່ລົງທະບຽນຍັງຕໍ່າຫຼາຍ ແລະ ການຂະຫຍາຍການຄຸ້ມຄອງຍັງຄົງເປັນສິ່ງທ້າທາຍ. ກົດໝາຍດັ່ງກ່າວໄດ້ຮັບການຮັບຮອງ ຄຽງຄູ່ກັບດຳລັດວ່າດ້ວຍການເພີ່ມຄ່າຈ້າງຂັ້ນຕໍ່າໃຫ້ແກ່ປະຊາຊົນທີ່ເຮັດວຽກໃນຫົວໜ່ວຍທຸລະກິດ, ຂະແໜງການຜະລິດ ແລະ ການບໍລິການ ຈາກ 626.000 ກີບ ຫຼື ປະມານ 70 ໂດລາຕໍ່ເດືອນ ເປັນ 1.100.000 ກີບ ຫຼື ປະມານ 120 ໂດລາ.

ກົດໝາຍສະບັບເລກທີ 011/ສພຊ/2011 ກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ຄຳນິຍາມໃໝ່ສຳລັບບໍລິສັດເຫຼົ່ານີ້ ໃນຂະນະທີ່ກຳນົດກອບການສົ່ງເສີມການເຄື່ອນໄຫວ ແລະ ສ້າງຕັ້ງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ. ດຳລັດ ສະບັບເລກທີ 25/ລຖບ/2017 ວ່າດ້ວຍການແບ່ງປະເພດວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບມີການຈັດປະເພດຂະແໜງການ. ດຳລັດດັ່ງກ່າວບໍ່ມີມາດຕະການສະເພາະເພື່ອຊຸກຍູ້ການປະກອບການຊາວໜຸ່ມ.

### ນະໂຍບາຍແນໃສ່ເຍົາວະຊົນ ແລະ ໄວໜຸ່ມ

ຍຸດທະສາດການພັດທະນາເຍົາວະຊົນ ແລະ ໄວໜຸ່ມລາວ ປີ 2021-2030, ພັດທະນາໂດຍສູນກາງຊາວໜຸ່ມປະຊາຊົນປະຕິບັດລາວ ແລະ ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ ທີ່ໄດ້ຖືກຮັບຮອງເອົາ ໂດຍສຳນັກງານນາຍົກລັດຖະມົນຕີ, ໄດ້ໃຫ້ທິດຊີ້ນຳຍຸດທະສາດໃນການປັບປຸງຄວາມສາມາດດ້ານການຈ້າງງານ ແລະ ຜູ້ປະກອບການຂອງໄວໜຸ່ມ ສ່ວນຫົວຂໍ້ອື່ນໆທີ່ຈະໄດ້ກ່າວເຖິງໃນບົດຕໍ່ໄປ ໃນບົດລາຍງານສະບັບນີ້:

— ຊຸກຍູ້ການຝຶກອົບຮົມຍົກລະດັບສີມືແຮງງານເພື່ອສ້າງຄວາມສາມາດແຂ່ງຂັນ ແລະ ເຊື່ອມຈອດກັບມາດຕະຖານແຫ່ງຊາດ ແລະ ການຈ້າງງານທີ່ມີຄຸນນະພາບ ໂດຍຜ່ານການລົງທຶນຂອງລັດ ແລະ ເອກະຊົນ ເພື່ອສົ່ງເສີມການເຂົ້າເຖິງຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ .
— ດຳເນີນການປະເມີນຄວາມຕ້ອງການຂອງຕະຫຼາດພາຍໃນປະເທດແລະຄວາມຕ້ອງການຂອງປະເທດເພື່ອນບ້ານ ເຊັ່ນ:ປະເທດໄທ ທີ່ໄວໜຸ່ມລາວສ່ວນໃຫຍ່ເຄື່ອນຍ້າຍໄປ, ແລະ ອອກແບບການຝຶກອົບຮົມທັກສະສະເພາະດ້ານໃຫ້ແທດເໝາະກັບຄວາມຕ້ອງການ.
— ເພີ່ມທະວີການລົງທຶນໃນຂະແໜງກະສິກຳ, ປ່າໄມ້ ແລະ ການປະມົງ ເພື່ອສ້າງວຽກງານທີ່ເໝາະສົມຢູ່ເຂດຊົນນະບົດ ແລະ ປັບປຸງມາດຕະຖານຊີວິດການເປັນຢູ່ຂອງຊາວໜຸ່ມ ແລະ ພ້ອມກັນນັ້ນກໍຊຸກຍູ້ຂະແໜງການທີ່ພົ້ນເດັ່ນຄື ICT ແລະ ການ ທ່ອງທ່ຽວໃຫ້ແກ່ຊາວໜຸ່ມ.
— ຈັດຕັ້ງໂຄງການສ້າງຄວາມຮັບຮູ້ໃຫ້ແກ່ມະຫາຊົນ ກ່ຽວກັບສິດ ແລະ ຄວາມຊອບທຳທີ່ເຍົາວະຊົນ ແລະ ໄວໜຸ່ມຄວນໄດ້ຮັບທີ່ກ່ຽວພັນການເຄື່ອນຍ້າຍ ແລະ ການຈ້າງງານ ເພື່ອຮັບປະກັນການເຄື່ອນຍ້າຍທີ່ປອດໄພ.
— ເຜີຍແຜ່ຄວາມຮູ້ກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ ແລະ ຜົນກະທົບຕໍ່ຊີວິດການເປັນຢູ່ໂດຍສະເພາະທາງດ້ານກະສິກຳ ແລະ ການປະມົງ.
— ຊຸກຍູ້ໃຫ້ໄວໜຸ່ມສ້າງຕັ້ງວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍອຳນວຍຄວາມສະດວກໃນການເຂົ້າເຖິງດ້ານການເງິນ ແລະ ການຕະຫຼາດ ແລະ ທັກສະການຄຸ້ມຄອງ.
— ສ້າງແຜນທີ່ບ້ານ ແລະ ກຸ່ມບ້ານທີ່ມີໄວໜຸ່ມຈຳນວນຫຼາຍຍ້າຍຖິ່ນຖານ ເພື່ອຈັດຕັ້ງປະຕິບັດໂຄງການ ປູກຈິດສຳນຶກມະຫາຊົນ. ແຄມເປນຄວນສຸມໃສ່ການແກ້ໄຂບັນຫາຕ່າງໆເຊັ່ນ: ການຄ້າແຮງງານ , ການຄ້າທາງເພດ ແລະ ການຄ້າມະນຸດເພື່ອການແຕ່ງງານ.
— ພັດທະນາຫຼັກສູດການສຶກສາ ແລະ ຝຶກອົບຮົມເຕັກນິກ-ວິຊາຊີບ (TVET) ທີ່ຂັບເຄື່ອນໂດຍຕະຫຼາດ ແລະ ນຳໃຊ້ຄວາມຮູ້ທ້ອງຖິ່ນເພື່ອໃຊ້ປະໂຫຍດຈາກຕະຫຼາດສະເພາະກຸ່ມທີ່ດຶງດູດການບໍລິການ ແລະ ການຈັດຫາງານ.
— ໃນທຸກຂະແໜງການ, ຊຸກຍູ້ການສ້າງວຽກເຮັດງານທຳທີ່ມີສີຂຽວ, ສະອາດ ແລະ ຕ້ານການປ່ຽນແປງຂອງດິນຟ້າອາກາດ.
— ສົ່ງເສີມການຈ້າງງານໂດຍການສ້າງລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ລວມທັງການພັດທະນາທັກສະແຮງງານ.

ບາດກ້າວທຳອິດຂອງການຈັດຕັ້ງປະຕິບັດແມ່ນຍຸດທະສາດການພັດທະນາເຍົາວະຊົນ ແລະ ໄວໜຸ່ມລາວ ປີ 2021-2030 ໄດ້ຖືກເຜີຍແຜ່ໃນລະດັບຊາດ ແລະ ທັງໝົດ 18 ແຂວງ. ພະນັກງານຈາກບັນດາກະຊວງ, ຂະແໜງການທີ່ສຳຄັນ ແລະ ພາກສ່ວນກ່ຽວຂ້ອງ ໄດ້ຮັບຊາບກ່ຽວກັບຍຸດທະສາດ ແລະ ຊຸກຍູ້ການເຊື່ອມສານບຸລິມະສິດເຂົ້າໃນບັນດາໂຄງການທີ່ກ່ຽວຂ້ອງ. ໜ່ວຍງານການຈັດຕັ້ງປະຕິບັດ ແລະ ການປະສານງານສຳລັບຍຸດທະສາດແມ່ນຖືກສ້າງຕັ້ງຂຶ້ນ ພາຍໃຕ້ການນຳພາຂອງສູນກາງໄວໜຸ່ມປະຊາຊົນປະຕິວັດລາວ.

ກິດຈະກຳໃໝ່ໆຫຼາຍກິດຈະກຳກໍໄດ້ເລີ່ມຂຶ້ນແລ້ວພາຍໃຕ້ຍຸດທະສາດນີ້ ເຊັ່ນ: ສະຖານທີ່ໃຫ້ບໍລິການອິນເຕີເນັດ ທີ່ສູນ IT ຂອງສູນກາງໄວ ໜຸ່ມປະຊາຊົນປະຕິວັດລາວ ເປັນບ່ອນທີ່ໄວໜຸ່ມສາມາດແລກປ່ຽນຂໍ້ມູນຂ່າວສານທາງດ້ານເຕັກໂນໂລຢີ ແລະ ອະນາຄົດຂອງການເຮັດວຽກ. ກິດຈະກຳ ລິເລີ່ມພາຍໃຕ້ການຮ່ວມມືຂອງລັດຖະບານ ແລະ ເອກະຊົນ ເຊິ່ງແມ່ນໂຮງແຮມຄລາວພາຊາ ພ້ອມດ້ວຍອົງການອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນຈັດຕັ້ງຂຶ້ນ ແມ່ນການຝຶກອົບຮົມໄວ ໜຸ່ມຍິງກ່ຽວກັບທັກສະທາງດ້ານວິຊາຊີບ ແລະ ຄວາມຮູ້ດ້ານການເງິນທີ່ກ່ຽວຂ້ອງກັບການປຸງແຕ່ງສະບຽງອາຫານ. ອົງການ ILO ແລະ ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ ກຳລັງເລີ່ມ ໂຄງການການຈ້າງງານໃນເຂດຊົນນະບົດ ທີ່ແນໃສ່ ຜູ້ຊາຍ, ແມ່ຍິງ, ໄວໜຸ່ມ, ແຮງງານເຄື່ອນຍ້າຍ ທີ່ກັບຄືນມາ, ກຸ່ມຄົນຫຼາກຫຼາຍທາງເພດ LGBTQI+ ແລະ ຄົນທີ່ມີຄວາມພິການ.

## 2.4 ສິ່ງທ້າທາຍ

### ວິກິດການດ້ານການສຶກສາ ແລະ ດ້ານທັກສະ?

ຕາຕະລາງ 2.4

ລະດັບການສຶກສາທີ່ຈຳກັດເຮັດໃຫ້ເກີດຄວາມເສຍປຽບໃນການເຂົ້າເຮັດວຽກຢູ່ຕະຫຼາດແຮງງານໃນລະບົບ.

**"ສປປ ລາວ ຍັງບໍ່ທັນສາມາດສ້າງກຳລັງແຮງງານທີ່ມີຄຸນນະພາບໄດ້ເນື່ອງຈາກວ່າມີຄວາມແຕກຕ່າງ ລະຫວ່າງເຂດຊົນນະບົດ ແລະ ຕົວເມືອງໃນການເຂົ້າເຖິງການສຶກສາ ແລະ ໂອກາດ ແລະ ການພັດທະນາ ທັກສະຕ່າງໆ." ຜູ້ຕາງໜ້າລະດັບສູງ ຈາກພາກລັດທີ່ເຂົ້າຮ່ວມກອງປະຊຸມຫຼາຍຝ່າຍ ທີ່ຈັດຂຶ້ນເພື່ອກະກຽມບົດ ລາຍງານສະບັບນີ້**

ມີການພົວພັນກັນຢ່າງສະໜິດແໜ້ນລະຫວ່າງການສຶກສາ ແລະ ການມີສ່ວນຮ່ວມຂອງກຳລັງແຮງງານ (ຕາຕະລາງ 2,4). ຍິ່ງໄດ້ຮັບການສຶກສາໃນລະດັບທີ່ສູງຂຶ້ນ (ທາງວິຊາການ ຫຼື ວິຊາຊີບ) ຍິ່ງເຮັດໃຫ້ອັດຕາການມີສ່ວນຮ່ວມສູງຂຶ້ນ. ການສຶກສາຊັ້ນສູງຊ່ວຍໃຫ້ໄວໜຸ່ມເຂົ້າສູ່ຕະຫຼາດແຮງງານໃນລະບົບ, ໃນຂະນະທີ່ ຜູ້ທີ່ມີການສຶກສາຕໍ່າກວ່າຈະໄດ້ເຮັດວຽກນອກລະບົບ ແລະ ປະກອບອາຊີບອິດສະຫຼະ. ໂດຍລວມແລ້ວ ປະຊາກອນໃນໄວເຮັດວຽກແມ່ນໄດ້ຮັບການສຶກສາທີ່ຕໍ່າ ໂດຍປະມານກວ່າເຄິ່ງໜຶ່ງ (53,7 ສ່ວນຮ້ອຍ) ບໍ່ໄດ້ເຂົ້າຮຽນ ຫຼື ຮຽນບໍ່ຈົບຊັ້ນປະຖົມ, ມີພຽງແຕ່ 7,6 ສ່ວນຮ້ອຍ ຂອງປະຊາກອນໃນໄວເຮັດວຽກຮຽນວິຊາຊີບ, ສ່ວນຜູ້ທີ່ໄດ້ໃບປະກາດຈົບຈາກວິທະຍາໄລວິຊາຊີບ ໄດ້ມີສ່ວນຮ່ວມໃນກຳລັງແຮງງານ ເຖິງ 70 ສ່ວນຮ້ອຍ.

ການໄດ້ຮັບການສຶກສາໃນລະດັບຕໍ່າແມ່ນມີຄວາມກ່ຽວຂ້ອງກັບການເຂົ້າເຖິງ ແລະ ຄຸນນະພາບທີ່ຈຳກັດຂອງການສຶກສາ, ອັດຕາການປະລະການຮຽນສູງ, ອັດຕາການລອດເຫຼືອຕໍ່າ ໃນຊັ້ນມັດທະຍົມປາຍ. ການປະລະການຮຽນໃນຊັ້ນປະຖົມແມ່ນມີສາເຫດມາຈາກຄວາມຈຳກັດຂອງການສຶກສາຊັ້ນປະຖົມ ໂດຍສະເພາະແມ່ນໃນເຂດຊົນນະບົດ. ອັດຕາປະລະການຮຽນທີ່ສູງໃນຊັ້ນມັດທະຍົມ ຊີ້ໃຫ້ເຫັນອັດຕາສ່ວນການໃຊ້ແຮງງານເດັກ, ການແຕ່ງງານກ່ອນໄວອັນຄວນ ແລະ ປັດໄຈດ້ານເສດຖະກິດສັງຄົມ ທີ່ນຳໄປສູ່ທ່າອ່ຽງດັ່ງກ່າວ. ການສຶກສາທີ່ຈຳກັດຍັງມີຜົນຕໍ່ການລົງທະບຽນເຂົ້າຝຶກອົບຮົມໃນອະນາຄົດຂອງເຍົາວະຊົນ ແລະ ໄວໜຸ່ມອີກດ້ວຍ ເຊັ່ນ: ການຝຶກອົບຮົມວິຊາຊີບ ເຊິ່ງອັດຕາການເຂົ້າຮຽນກໍຍັງຕໍ່າ.

ກ່ອງເນື້ອໃນ 2.4

### ການສຶກສາ ແລະ ການຝຶກອົບຮົມວິຊາຊີບບໍ່ມີຄຸນນະພາບ ແລະ ບໍ່ຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ

ຮູບທີ 2.5

ໂຮງຮຽນ ແລະ ຫຼັກສູດການຮຽນບໍ່ໄດ້ກະກຽມໄວໜຸ່ມໃນການເຂົ້າເຮັດວຽກດັ່ງທີ່ມີການບັນທຶກໄວ້ຢ່າງກວ້າງຂວາງໃນ ສປປ ລາວ. ໃນການຄົ້ນຄວ້າຫົວຂໍ້ດຽວກັນ, ທັງໄວໜຸ່ມ ແລະ ຄູສອນໄດ້ເນັ້ນໃຫ້ເຫັນວ່າ ການຝຶກອົບຮົມທັກສະດ້ານອາລົມແມ່ນຍັງບໍ່ທັນພຽງພໍ ຢູ່ໃນໂຮງຮຽນ ນອກຈາກນັ້ນ ອຸປະກອນການຮຽນ-ການຮຽນ ແລະ ອຸປະກອນໃນຫ້ອງຮຽນກໍລ້າສະໄໝ. ຫຼັກສູດກໍບໍ່ສອດຄ່ອງກັບຕະຫຼາດແຮງງານ ແລະ ບໍ່ໄດ້ສອນທັກສະທີ່ຈຳເປັນເພື່ອໃຫ້ສາມາດແຂ່ງຂັນກັບຄົນອື່ນໃນເວລາສະໝັກວຽກ (ອົງການສະຫະປະຊາຊາດ ເພື່ອການພັດທະນາ, 2021a, ເບິ່ງຮູບ 2.5). ຄວາມຄິດເຫັນຈາກຜູ້ເຂົ້າຮ່ວມໃນການສົນທະນາກຸ່ມຊີ້ໃຫ້ເຫັນວ່າ ການສຶກສາໃນລະບົບບໍ່ໄດ້ກະກຽມເຂົາເຈົ້າສຳລັບຕະຫຼາດແຮງງານ ເນື່ອງຈາກວ່າມັນແມ່ນ "ທິດສະດີຫຼາຍເກີນໄປ" ແລະ "ບໍ່ໄດ້ໃຊ້ທັກສະເປັນຫຼັກ" ສະພາບການດັ່ງກ່າວນີ້ໄດ້ບີບບັງຄັບໃຫ້ໄວໜຸ່ມທີ່ຮຽນຈົບໃໝ່ຕ້ອງໃຊ້ເວລາຫຼັກ

ຈາກທີ່ຮຽນຈົບແລ້ວເພື່ອຮຽນເພີ່ມພາສາອັງກິດ ແລະ ທັກສະອື່ນໆທີ່ນາຍຈ້າງຕ້ອງການ. ຜູ້ເຂົ້າຮ່ວມໃນການສົນທະນາກຸ່ມໄດ້ເວົ້າຕື່ມວ່າ ຜູ້ທີ່ໄດຮັບທຶນການສຶກສາລາວ-ອົດສະຕຣາລີສຳລັບຮຽນພາຍໃນປະເທດ (LANS) ມີແນວໂນ້ມທີ່ຈະຊອກຫາວຽກເຮັດງານທຳໄດ້ ເພາະວ່າພວກເຂົາໄດ້ຮຽນທັກສະດ້ານໄອທີ ແລະ ພາສາອັງກິດ. ຄຳຄິດເຫັນຂອງຕົວແທນຈາກລັດຖະບານໃນກອງປະຊຸມຫຼາຍຝ່າຍເພື່ອກວດສອບຄວາມຖືກຕ້ອງຂອງຂໍ້ມູນສຳລັບບົດລາຍງານສະບັບນີ້ ກໍໄດ້ຮັບຊາບ ແລະ ຍອມຮັບວ່າມີຊ່ອງຫວ່າງທີ່ຄ້າຍຄືກັນນີ້ແທ້.

ສິ່ງທ້າທາຍທີ່ກ່ຽວຂ້ອງກັບການສຶກສາສາຍວິຊາຊີບ ລວມມີ: ການລົງທຶນໃສ່ການສຶກສາສາຍອາຊີບຍັງມີຕ່ຳ, ນັກຮຽນ ແລະ ຄົນໃນສັງຄົມໂດຍລວມແລ້ວ ບໍ່ທັນເຂົ້າໃຈຄຸນຄ່າຂອງການຮຽນສາຍນີ້, ຂາດການເຊື່ອມໂຍງລະຫວ່າງການຮຽນວິຊາຊີບ ກັບ ຄວາມຕ້ອງການພາກອຸດສາຫະກຳ ແລະ ຕະຫຼາດແຮງງານການຝຶກອົບຮົມທີ່ມີຄຸນນະພາບຕ່ຳຍ້ອນອຸປະກອນການຝຶກອົບຮົມບໍ່ພຽງພໍ, ແລະ ພື້ນຖານໂຄງລ່າງ, ເຄື່ອງຈັກ ແລະ ອຸປະກອນ ແລະ ຄູສອນ ຍັງບໍ່ທັນພຽງພໍ (UNESCO ແລະ UNEVOC, 2020). ບັນຫາສຳຄັນອີກອັນໜຶ່ງແມ່ນພາກເອກະຊົນບໍ່ມີສ່ວນຮ່ວມໃນການປັບປຸງຫຼັກສູດ, ຄຸນນະພາບຂອງຄູສອນ ແລະ ການຮຽນ-ການສອນວິຊາຊີບ ໃຫ້ສອດຄ່ອງກັບມາດຕະຖານ ແລະ ຄວາມຕ້ອງການຂອງນາຍຈ້າງ. ກ່ອງເນື້ອໃນ 2.4 ສະແດງຂັ້ນຕອນເພື່ອປັບປຸງການຝຶກອົບຮົມສາຍວິຊາຊີບ ທີ່ສະເໜີຢູ່ໃນໃນບົດລາຍງານການພັດທະນາມະນຸດແຫ່ງຊາດປີ 2009. ການປະຕິຮູບຫຼາຍຢ່າງທີ່ສະເໜີໄປ ຍັງບໍ່ທັນໄດ້ຮັບການແກ້ໄຂ. ຂັ້ນຕອນທີ 6 ຮຽກຮ້ອງໃຫ້ມີການເພີ່ມຄວາມສາມາດໃນການໃຫ້ຄຳປຶກສາຂອງພາກເອກະຊົນໃຫ້ຢູ່ໃນລະດັບທີ່ເໝາະສົມ ເຊິ່ງເປັນສ່ວນຫນຶ່ງຂອງການປະຕິຮູບການຝຶກອົບຮົມວິຊາຊີບ.

ໃນ ສປປ ລາວ ມີການຫວ່າງງານທີ່ບໍ່ເປັນໄປຕາມລະດູການເພີ່ມຂຶ້ນໃນກຸ່ມແຮງງານທີ່ມີທັກສະລວມທັງຜູ້ທີ່ຮຽນຈົບມັດທະ ຍົມ ຫຼື ວິຊາຊີບ, ແລະ ຍິ່ງໄປກວ່ານັ້ນແມ່ນກຸ່ມ ແຮງງານທີ່ມີການສຶກສາຊັ້ນສູງ ແລະ ໄວໜຸ່ມທີ່ໄດ້ຮັບການຝຶກອົບຮົມວິຊາຊີບ (ທະນາຄານໂລກ, 2022). ເຊິ່ງເປັນຜົນກະທົບຈາກຕະຫຼາດແຮງງານບໍ່ສາມາດຮອງຮັບແຮງງານທີ່ມີຄຸນນະພາບໄດ້, ນອກຈາກນີ້ກໍແມ່ນໄວໜຸ່ມທີ່ຈົບການສຶກສາຊັ້ນມັດທະຍົມ, ວິຊາຊີບ ແລະ ຊັ້ນສູງ ຍັງບໍ່ທັນສາມາດດຶງດູດຄວາມສົນໃຈຂອງນາຍຈ້າງໄດ້ເທື່ອ ໂດຍສະເພາະໃນພາກເອກະຊົນ ເຊິ່ງສາເຫດກໍຄື ຄຸນນະພາບການສຶກສາຕ່ຳ ແລະ ປະສົບການເຮັດວຽກທີ່ຈຳກັດ.ສິ່ງຜົນໃຫ້ໄວໜຸ່ມບໍ່ສາມາດບັນລຸຄວາມມຸ່ງຫວັງ ດ້ານອາຊີບເຖິງວ່າຈະໄດ້ຮັບການສຶກສາຊັ້ນ ສູງກໍຕາມ ດ້ວຍເຫດນັ້ນ ຈຶ່ງອາດຈະເຮັດໃຫ້  ເກີດຄວາມທໍ້ຖອຍ ແລະ ຄວາມກົດດັນທາງຈິດໃຈ. ບົດລາຍງານການພັດທະນາມະນຸດ ທົ່ວໂລກສະບັບຫຼ້າສຸດ ປີ 2021/2022 ໄດ້ກ່າວເຖິງແນວຄວາມຄິດຂອງ 'ຄວາມບໍ່ ສອດຄ່ອງຂອງສະຖານະ ຫຼື ພາສາອັງກິດເອີ້ນວ່າ status incongruence' ທີ່ເຊື່ອມໂຍງກັບຜູ້ທີ່ໄດ້ຮັບການສຶກສາສູງ ແຕ່ໄດ້ເຮັດວຽກໃຊ້ແຮງງານ ແລະ ວຽກທີ່ ໃຊ້ທັກສະຕ່ຳເຊິ່ງມັນສົ່ງຜົນຕໍ່ຄວາມບໍ່ສະບາຍ ທາງດ້ານອາລົມຮູ້ສຶກອັບອາຍ ແລະ ເກີດຄວາມ ວິຕົກກັງວົນ (ອົງການສະຫະປະຊາຊາດ ເພື່ອການພັດທະນາ,

## ຕາຕະລາງ 2.4: ປະຊາກອນໃນອາຍຸການເຮັດວຽກ ແບ່ງຕາມການມີສ່ວນຮ່ວມຂອງແຮງງານ ແລະ ລະດັບການສຶກສາ

ແຫຼ່ງຂໍ້ມູນ: LSB, 2017.

| ລະດັບການສຶກສາ | ສ່ວນແບ່ງປະຊາກອນໃນອາຍຸການເຮັດວຽກ ສ່ວນຮ້ອຍ | ອັດຕາການມີສ່ວນຮ່ວມຂອງແຮງງານ, ສ່ວນຮ້ອຍ |
|---|---|---|
| ບໍ່ໄດ້ລົງທະບຽນ | 20,0 | 19,0 |
| ຕ່ຳກວ່າຊັ້ນປະຖົມ | 33,7 | 41,1 |
| ໂຮງຮຽນປະຖົມ | 18,3 | 45,5 |
| ມັດທະຍົມຕົ້ນ | 12,9 | 42,5 |
| ມັດທະຍົມປາຍ | 4,4 | 32,7 |
| ວິຊາຊີບຊັ້ນຕົ້ນ | 1,0 | 68,6 |
| ວິຊາຊີບຊັ້ນກາງ | 2,8 | 70,6 |
| ວິຊາຊີບຊັ້ນສູງ | 3,8 | 73,6 |
| ມະຫາວິທະຍາໄລ ແລະ ສູງກວ່າ | 3,1 | 77,2 |
| ທັງໝົດ | **100** | **40,8** |



## ກ່ອງ 2.4: ຂັ້ນຕອນການປັບປຸງການສຶກສາ ແລະ ຝຶກອົບຮົມເຕັກນິກ-ວິຊາຊີບ (TVET) ທີ່ໄດ້ສະເໜີໃນບົດລາຍງານການພັດທະນາມະນຸດແຫ່ງຊາດ 2009 ຂອງ ສປປ ລາວ.

1. ຍົກລະດັບຄຸນນະພາບການຮຽນ-ການສອນ.
2. ປັບປຸງຫຼັກສູດໃຫ້ເປັນບົດທີ່ມີຄວາມຕໍ່ເນື່ອງ. ແນະນຳໃຫ້ມີການສອນພາສາອັງກິດ ເນື່ອງຈາກວ່າບົດຮຽນ ແລະ ແຫຼ່ງຄວາມຮູ້ ສ່ວນຫຼາຍແມ່ນມີແຕ່ເປັນພາສາອັງກິດ.
3. ເນັ້ນໃສ່ການຝຶກອົບຮົມພາກປະຕິບັດ, ເຊິ່ງຮຽກຮ້ອງໃຫ້ມີການກໍ່ສ້າງອຸປະກອນ ແລະ ຫ້ອງທົດລອງເພີ່ມເຕີມ ແລະ ໃຫ້ມີປຶ້ມໃນຫ້ອງສະໝຸດຫຼາຍຂຶ້ນ.
4. ການປ່ຽນແປງຂັ້ນຕອນການຮັບນັກຮຽນໃຫ້ມີຄວາມຍຸຕິທຳຫຼາຍຂຶ້ນ
5. ລິເລີ່ມການຮ່ວມມືກັບສະຖາບັນອື່ນໆໃນຕ່າງປະເທດ ເພື່ອແລກປ່ຽນ ແລະ ປັບປຸງວິຊາການ.
6. ເຮັດໃຫ້ພາກເອກະຊົນມາມີສ່ວນຮ່ວມເພື່ອຍົກລະດັບຄວາມສາມາດໃນການໃຫ້ຄຳປຶກສາໃນລະດັບທີ່ເໝາະສົມ.
7. ເພີ່ມຈຸດລົງທະບຽນຮັບນັກຮຽນເຂົ້າຮຽນວິຊາຊີບ ຮັບນັກຮຽນຜູ້ທີ່ຈົບການສຶກສາຊັ້ນທີ່ບໍ່ສູງຫຼາຍ ເຊັ່ນ: ຮັບນັກຮຽນທີ່ຈົບຈາກຊັ້ນ ມໍຕົ້ນ ໃຫ້ເຂົ້າຮຽນ ຫຼືອາດຈະພິຈາລະນາໃຫ້ນັກຮຽນທີ່ຈົບຊັ້ນ ປໍ 1 ຫຼື ມໍ 1 ໃຫ້ສາມາດເຂົ້າຮຽນວິຊາຊີບບາງສາຂາໄດ້.
8. ປັບການຮຽນ-ການສອນໃຫ້ມີຄວາມໂຢ່ນຍານຫຼາຍຂຶ້ນ ເຊັ່ນ: ມີການສອນພາກຄ່ຳ ຫຼື ພາກວັນເສົາ-ອາທິດ.
9. ຍົກລະດັບໃຫ້ໂຮງຮຽນບາງແຫ່ງໃຫ້ກາຍເປັນວິທະຍາໄລທີ່ສາມາດມອບໃບປະກາດວິຊາຊີບໃຫ້ແກ່ຮຽນໄດ້ ເຊິ່ງຈະກາຍເປັນແຫຼ່ງຄວາມຮູ້ດ້ານວິຊາການໃນປະເທດ ເຊິ່ງຈະຊ່ວຍການປັບປຸງ ແລະ ພັດທະນາລະບົບການສຶກສາ ແລະ ຝຶກອົບຮົມເຕັກນິກ-ວິຊາຊີບ (TVET).

ແຫຼ່ງຂໍ້ມູນ: UNDP, 2009.




Source: UNDP 2009.

## ຮູບທີ 2.5: ຊ່ອງຫວ່າງໃນຫຼັກສູດຂອງໂຮງຮຽນ

ແຫຼ່ງຂໍ້ມູນ: UNDP, 2021a.




2022b). ອີງຕາມບົດລາຍງານດັ່ງກ່າວ 'ຄວາມບໍ່ສອດຄ່ອງຂອງສະຖານະ' ໄດ້ເພີ່ມຂຶ້ນ ແລະ ຄາດວ່າຈະເພີ່ມຂຶ້ນຫຼາຍກວ່າເກົ່າ.

### ການປັບຕົວເຂົ້າກັບອະນາຄົດທາງດ້ານທັກສະ ແລະ ອະນາຄົດດ້ານການເຮັດວຽກ

ໂລກຂອງການເຮັດວຽກແມ່ນມີການປ່ຽນແປງທ່າມກາງຄວາມກ້າວໜ້າຂອງເຕັກໂນໂລຢີດິຈິຕອນ ແລະ ຄວາມຕ້ອງການໃໝ່ ເພື່ອຫັນໄປສູ່ເສດຖະກິດສີຂຽວ.ການແຜ່ລະບາດຂອງພະຍາດໄດ້ຊີ້ໃຫ້ເຫັນເຖິງຄວາມຮີບດ່ວນຂອງທິດທາງໃໝ່ນີ້. ແນວໃດກໍຕາມ, ການສຳຫຼວດຄວາມພ້ອມດ້ານຊັບພະຍາກອນມະນຸດ ທີ່ມີຜູ້ເຂົ້າຮ່ວມຈຳນວນ 60 ຄົນ ຈາກຂະແໜງການສຶກສາ ໃນ ສປປ ລາວ, ມີພຽງ 32 ສ່ວນຮ້ອຍ ເທົ່ານັ້ນ ທີ່ເຫັນວ່າມີຄວາມສຳຄັນທີ່ຈະຕ້ອງປັບປຸງແຜນງານພັດທະນາຊັບພະຍາກອນມະນຸດໃຫ້ທັນສະໄໝ (ອາຊຽນ, 2021) ແລະ ມີພຽງແຕ່ປະມານ 8 ສ່ວນຮ້ອຍ ທີ່ເວົ້າວ່າມີຄວາມທັນສະໄໝແລ້ວ.

ໃນການສຶກສາກ່ຽວກັບ 4 ຂະແໜງການຍ່ອຍຂອງການສຶກສາ ໄດ້ແກ່ ການສຶກສາສາຍສາມັນ, ວິຊາຊີບ, ການສຶກສາຊັ້ນສູງ ແລະ ການສຶກສາຂອງຄູ ໄດ້ປະເມີນວ່າ "ທັກສະໃນອະນາຄົດ" ໄດ້ຖືກລວມເຂົ້າໃນຫຼັກສູດ ຫຼື ບໍ່. ກ່ຽວກັບ ທັກສະໄອຊີທີ ແລະ ດິຈິຕອນ ມີພຽງແຕ່ປະມານ 7 ສ່ວນຮ້ອຍ ຂອງຜູ້ຕອບຈາກພາກສ່ວນວິຊາຊີບ 270 ຄົນ, 13 ສ່ວນຮ້ອຍ ຂອງຜູ້ຕອບ 16 ຄົນຈາກພາກສ່ວນການສຶກສາສາມັນ, 10 ສ່ວນຮ້ອຍຂອງຜູ້ຕອບຈາກພາກສ່ວນການສຶກສາຊັ້ນສູງ 49 ຄົນ ແລະ 17 ສ່ວນຮ້ອຍ ຂອງ ຜູ້ຕອບຈາກພາກສ່ວນການສຶກສາຂອງຄູ 29 ຄົນ ຕົວເລກເຫຼົ່ານີ້ໄດ້ຊີ້ບອກຄະແນນທີ່ສູງຫຼາຍ (ອາຊຽນ, 2021).

ກ່ຽວກັບທັກສະວິທະຍາສາດ, ເຕັກໂນໂລຢີ, ວິສະວະກຳ ແລະ ຄະນິດສາດ ຫຼື ພາສາອັງກິດເອີ້ນວ່າ science, technology, engineering and math ແລະ ຕົວຫຍໍ້ ແມ່ນ STEM, ມີພຽງແຕ່ 3 ສ່ວນຮ້ອຍ ຂອງຜູ້ ຕອບຈາກພາກສ່ວນວິຊາຊີບ, 6 ສ່ວນຮ້ອຍ ຂອງຜູ້ຕອບຈາກພາກສ່ວນການສຶກສາສາມັນ, 4 ສ່ວນຮ້ອຍຂອງຜູ້ຕອບຈາກພາກສ່ວນການສຶກສາຊັ້ນສູງ ແລະ 3 ສ່ວນຮ້ອຍ ຂອງຜູ້ຕອບ ຈາກພາກສ່ວນການສຶກສາຂອງຄູ ເຊິ່ງກໍໄດ້ຊີ້ບອກ ຄະແນນທີ່ສູງຫຼາຍການໃຫ້ຄະແນນນີ້ບົ່ງບອກ ເຖິງຄວາມຈຳເປັນອັນຮີບດ່ວນ ແລະ ສຳຄັນ ໃນການລວມເອົາ 'ທັກສະໃນອະນາຄົດ'1 ເຂົ້າໃນຫຼັກສູດ, ສື່ການຮຽນ-ການສອນ ແລະ ການສຶກສາສາຍວິຊາຊີບ ແລະ ການສຶກສາຊັ້ນສູງ. ການພັດທະນາຊັບພະຍາກອນມະນຸດໃນດ້ານ ICT ເປັນສິ່ງສຳຄັນ. ອີງຕາມຍຸດທະສາດເສດຖະກິດດິຈິຕອນ ຂອງ ສປປ ລາວ, ມາຮອດປັດ ຈຸບັນ, ແຮງງານທີ່ເຮັດວຽກດ້ານໄອຊີທີ ມີພຽງ 0.3ສ່ວນຮ້ອຍ ຂອງກຳລັງແຮງງານທັງໝົດ ໃນທົ່ວປະເທດ (ກະຊວງເຕັກໂນໂລຢີ ແລະ ການສື່ສານ, 2021).

ການຫັນປ່ຽນຂອງ ສປປ ລາວ ໄປສູ່ເສດຖະກິດດິຈິຕອນທີ່ມີກາກບອນຕ່ຳ ຮຽກຮ້ອງຕ້ອງການໃຫ້ມີທັກສະສີຂຽວໃນທຸກຂະແໜງການ ແລະ ທຸກລະດັບຂອງກຳລັງແຮງງານ. ການສຶກສາ ແລະ ສີມືແຮງງານ ແລະ ນະໂຍບາຍການຝຶກອົບຮົມແມ່ນອົງປະກອບສຳຄັນຂອງການຫັນປ່ຽນນີ້. ການຂາດການເຂົ້າເຖິງການສຶກສາ ແລະ ການຝຶກອົບຮົມທີ່ມີຄຸນນະພາບ ແລະ ມີຄວາມສອດຄ່ອງແມ່ນປັດໄຈຫຼັກທີ່ເຮັດໃຫ້ການເຕີບໂຕສີຂຽວໃນທຸກຂະແໜງການມີປະສິດທິພາບຕ່ຳ ດັ່ງໃນປັດຈຸບັນ (GGGI, 2017).




**ແຮງງານທີ່ເຮັດວຽກດ້ານ ໄອຊີທີມີພຽງ 0,3 ສ່ວນຮ້ອຍຂອງກຳລັງແຮງງານທັງໝົດໃນທົ່ວປະເທດ (ຍຸດທະສາດການພັດທະນາເສດຖະກິດດິຈິຕອນແຫ່ງຊາດ).**

### ສິ່ງກີດຂວາງຕໍ່ການເປັນຜູ້ປະກອບການຂອງໄວໜຸ່ມ

ໄວໜຸ່ມສາມາດມີບົດບາດສຳຄັນໃນການຂັບເຄື່ອນການເຕີບໂຕຂອງທຸລະກິດ, ທຸລະກິດສະຕາດອັບ ແລະ ວິສາຫະກິດເພື່ອສັງຄົມ. ໃນບັນດາຜູ້ຕອບແບບສອບຖາມສຳລັບບົດລາຍງານນີ້, 84,4 ສ່ວນຮ້ອຍ ມີຄວາມສົນໃຈທີ່ຈະມີທຸລະກິດເປັນຂອງຕົນເອງເຊັ່ນດຽວກັນກັບຜູ້ເຂົ້າຮ່ວມໃນການສົນທະນາກຸ່ມ.

ເພື່ອແກ້ໄຂບັນຫາທາງດ້ານໂຄງສ້າງທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຢູ່ ສປປ ລາວ, ລັດຖະບານໄດ້ປັບໃຊ້ບັນດານະໂຍບາຍຕ່າງໆ ນັບແຕ່ປີ 2018 ເປັນຕົ້ນມາ ໂດຍມີຄວາມມຸ່ງມາດປາຖະໜາທີ່ຈະປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດ ແລະ ສົ່ງເສີມໃຫ້ທຸລະກິດມີການເຕີບໂຕທາງດ້ານຜົນຜະລິດ. ການປະຕິຮູບແມ່ນພະຍາຍາມປັບປຸງຂັ້ນຕອນທາງທຸລະກິດເພື່ອຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍພ້ອມທັງເຮັດໃຫ້ວ່ອງໄວ, ມີຄວາມໂປ່ງໃສ ແລະ ມີປະສິດທິພາບຂຶ້ນກວ່າເກົ່າ.ອີງຕາມການສຳຫຼວດການອຳນວຍຄວາມສະດວກດ້ານການລົງທຶນ ແລະ ການຄ້າຂັ້ນແຂວງ ປີ 2019 ເຫັນວ່າມີການປ່ຽນແປງທີ່ດີຂຶ້ນໃນດ້ານເວລາ ແລະ ຄ່າໃຊ້ຈ່າຍ ໃນການລົງທະບຽນທຸລະກິດຢູ່ໃນຫຼາຍໆແຂວງ (LNCCI ແລະ ADB, 2019). ແນວໃດກໍ່ຕາມ, ການສຳຫຼວດໄດ້ເປີດເຜີຍວ່າ ເກືອບ 70 ສ່ວນຮ້ອຍ ຂອງຜູ້ຕອບແບບສອບຖາມຕ້ອງໄດ້ຈ່າຍຄ່າບໍລິການແບບນອກລະບົບເພື່ອໃຫ້ໄດ້ ລົງທະບຽນທຸລະກິດ, ໃບອະນຸຍາດ ແລະ ໜັງສື ອະນຸຍາດດຳເນີນທຸລະກິດລວມທັງເອກະສານອື່ນໆຂອງລັດຖະບານ ແລະ ຍັງໄດ້ຈ່າຍໃຫ້ ແກ່ພະນັກງານທີ່ລົງມາກວດກາທຸລະກິດອີກດ້ວຍ.

ຮູບ 2.6 ຊີ້ໃຫ້ເຫັນຂໍ້ຈຳກັດທີ່ສຳຄັນທີ່ລາຍງານໂດຍຫົວໜ່ວຍທຸລະກິດ.ໃນຂະນະທີ່ອຸປະສັກຫຼັກແມ່ນການເຂົ້າເຖິງການເງິນສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ບໍລິສັດຂະໜາດໃຫຍ່ຖືວ່າພຶດຕິກຳຂອງຂະແໜງການນອກລະບົບເປັນສິ່ງທ້າທາຍຫຼັກ ແລະ ຮອງລົງມາແມ່ນແຮງງານທີ່ບໍ່ໄດ້ຮັບການສຶກສາພຽງພໍ.

ຮູບທີ 2.6

ອີງຕາມການສຳຫຼວດ ຊີ້ໃຫ້ເຫັນສິ່ງທ້າທາຍທີ່ໄວໜຸ່ມພົບເຫັນໃນການເຂົ້າສູ່ລະບົບນິເວດຂອງທຸລະກິດ ເຊິ່ງລວມມີອຸປະສັກທີ່ພົບເຫັນ ທົ່ວໄປສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເຊັ່ນ: ຂາດເງິນທຶນ (85,4 ສ່ວນຮ້ອຍ), ທັກສະທາງທຸລະກິດ (47 ສ່ວນຮ້ອຍ) ແລະ ຄວາມຢ້ານທີ່ຈະລົ້ມເຫຼວ (44,5 ສ່ວນຮ້ອຍ) ແລະ ອື່ນໆ (ຕາມໃນຮູບ 2.7). ການສົນທະນາກຸ່ມກໍຢືນຢັນເຊັ່ນດຽວກັນ ໂດຍໄດ້ຊີ້ໃຫ້ເຫັນເຖິງການຂາດແຄນຊັບ ພະຍາກອນ, ຄວາມຮູ້, ທັກສະການຄຸ້ມຄອງ ແລະ ຄູ່ຮ່ວມທຸລະກິດທີ່ເໝາະສົມ.

ຮູບທີ 2.7

ບົດລາຍງານປີ 2021 ຂອງ ແຂວງສາລະວັນ ທີ່ກວມເອົາຊຸມຊົນທີ່ດ້ອຍໂອກາດ ລວມທັງຊົນເຜົ່າທີ່ບໍ່ແມ່ນລາວ-ໄຕ ໄດ້ສະແດງໃຫ້ເຫັນເຖິງຄວາມຮັບຮູ້ ແລະ ອຸປະສັກທີ່ຜູ້ປະກອບການທີ່ເປັນໄວໜຸ່ມຍິງຕ້ອງປະເຊີນ (ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ອົງການຢູນິເຊັບ, 2021) ເຊັ່ນ: ບໍ່ໄດ້ຮັບການສຶກສາ, ບໍ່ມີໂອກາດໃນການຈ້າງງານໃນລະບົບ ແລະ ການເຂົ້າເຖິງຊັບພະຍາກອນຕ່າງໆແມ່ນມີຈຳກັດ ເຊິ່ງເປັນສາເຫດເຮັດໃຫ້ແມ່ຍິງຈຳນວນຫຼາຍເຂົ້າສູ່ການເປັນຜູ້ປະກອບການນອກລະບົບ ແລະ ອີງຕາມຄວາມຕ້ອງການ. ນອກຈາກນີ້ ຍັງມີອຸປະສັກອື່ນໆອີກ ເຊັ່ນ: ບໍ່ມີການເຊື່ອມໂຍງກັບຕະຫຼາດ ແລະ ການເຄື່ອນຍ້າຍກໍຈຳກັດ. ຄວາມຄາດຫວັງດ້ານບົດບາດຍິງ-ຊາຍ ທີ່ວ່າແມ່ຍິງຕ້ອງເຮັດວຽກເຮືອນ ແລະ ເປັນຜູ້ດູແລຄົນໃນຄອບຄົວ ໄດ້ຈຳກັດເວລາ ແລະ ໂອກາດຂອງແມ່ຍິງໃນການພັດທະນາຕົນເອງ ແລະ ຈຳກັດການໄປເຄື່ອນໄຫວກິດຈະກຳຢູ່ນອກຊຸມຊົນອີກດ້ວຍ.

### ບໍ່ມີຂັ້ນຕອນການຈ້າງງານທີ່ເປັນທຳ ເຮັດໃຫ້ໄວໜຸ່ມທີ່ກຳລັງຊອກວຽກເຮັດງານທຳໝົດກຳລັງໃຈ

ລະບົບການຈ້າງງານທີ່ເໝາະສົມ ແລະ ຍຸຕິທຳຊ່ວຍກະຕຸ້ນໃຫ້ໄວໜຸ່ມມີກຳລັງໃຈໃນການຊອກວຽກເຮັດງານທຳ. ແຕ່ຢູ່ພາກລັດ ການຮັບຄົນເຂົ້າເຮັດວຽກໂດຍເລືອກຈາກເສັ້ນສາຍ ແລະ ໃນເຄືອຂ່າຍຂອງຕົນເອງ ເຮັດໃຫ້ຄຸນນະພາບຂອງການເຮັດວຽກຕ່ຳລົງ. ໃນພາກສ່ວນເອກະຊົນ, ການເລືອກຄົນແມ່ນຕາມຄວາມມັກຄວາມພໍໃຈຂອງຕົນເອງຕໍ່ກັບລະດັບການສຶກສາທີ່ສູງສະເພາະດ້ານໃດໜຶ່ງ ແທນທີ່ຈະເລືອກຕາມຄວາມສາມາດ ແລະ ປະສົບການເຮັດວຽກຕົວຈິງຂອງຜູ້ສະໝັກເຮັດໃຫ້ຜູ້ສະໝັກທີ່ມີຄວາມເໝາະສົມເສຍປຽບ. ອະຄະຕິຕໍ່ຜູ້ສະໝັກທີ່ເປັນກຸ່ມຄົນຫຼາກຫຼາຍທາງເພດ LGBTQI+ ແລະ ຄົນທີ່ມີຄວາມພິການກໍເປັນອີກປັດໄຈໜຶ່ງທີ່ມີຜົນຕໍ່ການຈ້າງງານ ແລະ ການຢຸດການຈ້າງງານ.ໃນການສຳຫຼວດ ປີ 2021 (ອົງການສະຫະປະຊາຊາດ ເພື່ອການພັດທະນາ, 2021a), ຜູ້ຕອບຄົນໜຶ່ງເວົ້າວ່າ ຕອນທີ່ລາວສະໝັກວຽກ ມີຄົນເວົ້າໃຫ້ລາວວ່າລາວ "ບໍ່ມີຄວາມເປັນຜູ້ຊາຍພຽງພໍເທື່ອ" ການສົນທະນາກຸ່ມກັບບຸກ

ຄົນທີ່ມີ ຄວາມພິການ ແລະ ກຸ່ມຄົນຫຼາກຫຼາຍທາງເພດ LGBTQI+ ໃຫ້ຮູ້ວ່າພວກເຂົາເຄີຍຖືກຕັດໂອ ກາດການສຳພາດ ເນື່ອງຈາກການແຕ່ງຕົວທີ່ "ບໍ່ເປັນຕົວຢ່າງທີ່ດີໃຫ້ແກ່ຄົນອື່ນ" ຫຼື ບາງຄົນກໍຖືກປະຕິເສດຍ້ອນຄວາມພິການທາງດ້ານຮ່າງກາຍ  ເຊິ່ງວ່າບໍ່ໄດ້ກ່ຽວຂ້ອງກັບທັກສະທີ່ຈຳເປັນ ສຳລັບການເຮັດວຽກເລີຍ. ບົດລາຍງານການພັດທະນາມະນຸດແຫ່ງຊາດ ປີ 2009 ໄດ້ຊີ້ໃຫ້ເຫັນວ່າ ບັນຫາກ່ຽວກັບການຈ້າງງານຄືດັ່ງກ່າວນີ້ ມີມາຫຼາຍທົດສະວັດແລ້ວ. ການເຂົ້າສູ່ຕະຫຼາດແຮງງານ, ການເຄື່ອນຍ້າຍແຮງງານ ແລະ ກິດຈະກຳອື່ນໆສ່ວນໃຫຍ່ແມ່ນເກີດຂຶ້ນນອກລະບົບໂດຍຜ່ານເຄືອຍາດ ຜູ້ທີ່ມີມິດຕະພາບ ແລະ ຄວາມສຳພັນກັນ.ພະນັກງານໃໝ່ໄດ້ຮັບວຽກຈາກຄົນທີ່ເຂົາເຈົ້າຮູ້ຈັກ ເຊິ່ງມັກຈະມີການຕອບແທນຄືນເປັນການຊ່ວຍເຫຼືອ ຫຼື ເປັນເງິນສົດ ໃຫ້ແກ່ຜູ້ທີ່ຮັບເຂົ້າເຮັດວຽກ.

## ຂີດຈຳກັດທາງດ້ານຄວາມພ້ອມ ແລະ ການເຜີຍແຜ່ຂອງບັນດາການບໍລິການທີ່ຕິດພັນກັບຕະຫຼາດແຮງງານ

ໃນຄວາມໝາຍກວ້າງໆ ລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ແມ່ນຖານຂໍ້ມູນທີ່ຄົບຖ້ວນ ແລະ ກວມເອົາຫົວຂໍ້ຕ່າງໆຂອງແຮງງານໃນລະບົບເສດຖະກິດ ປະກອບມີຂໍ້ມູນກ່ຽວກັບໂອກາດສຳລັບການຝຶກອົບຮົມວິຊາຊີບ ແລະ ການຝຶກອົບຮົມດ້ານວິຊາການ ແລະ ວຽກເຮັດງານທຳ.ມັນເປັນເຄື່ອງມືທີ່ສຳຄັນໃນການວາງແຜນຕະຫຼາດແຮງງານ, ການຈັບຄູ່ລູກຈ້າງ ແລະ ນາຍຈ້າງ ລວມທັງການໃຫ້ຄຳ ແນະນຳປຶກສາດ້ານສາຍອາຊີບ. ບົດລາຍງານ ການພັດທະນາມະນຸດແຫ່ງຊາດ ປີ 2009 ໄດ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນຂອງລະບົບດັ່ງກ່າວ ໂດຍການບໍລິການແມ່ນແນໃສ່ຕະຫຼາດແຮງງານ ໃນຕົວເມືອງ ເພື່ອອຳນວຍຄວາມສະດວກໃນການຈັບຄູ່ວຽກ, ການຝຶກອົບຮົມ ແລະ ຂໍ້ມູນຂ່າວສານຕະຫຼາດແຮງງານ.

ການຂາດຂໍ້ມູນກ່ຽວກັບຂໍ້ສະເໜີ ແລະ ເງື່ອນໄຂໃນການຈ້າງງານ ຍັງສືບຕໍ່ເປັນອຸປະສັກຕໍ່ການຈ້າງງານ, ໂດຍສະເພາະໃນເວລາທີ່ວຽກບໍ່ມີຢູ່ໃນທ້ອງຖິ່ນ (ທະນາຄານໂລກ, 2021c). ຍ້ອນລະບົບຂໍ້ມູນຂ່າວສານ ແລະ ແຜນງານຂອງຕະຫຼາດແຮງງານຍັງບໍ່ທັນພຽງພໍ ແລະ ບໍ່ທັນໃຊ້ໄດ້ຈິງ ໄວໜຸ່ມຈຶ່ງບໍ່ມີຂໍ້ມູນພຽງພໍໃນການຕັດສິນໃຈກ່ຽວກັບບັນຫາຕ່າງໆ ເຊັ່ນ: ການຊອກຫາວຽກເຮັດງານທຳ, ການວາງແຜນອາຊີບ, ການຍົກລະດັບທັກສະ, ການຈ້າງງານ ແລະ ນະໂຍບາຍການເຄື່ອນຍ້າຍ. ຮູບ 2.8 ແລະ 2.9 ຊີ້ໃຫ້ເຫັນຊ່ອງທາງທີ່ແຕກຕ່າງກັນທີ່ໄວໜຸ່ມທີ່ກຳລັງຫວ່າງງານນຳໃຊ້ເພື່ອຊອກຫາວຽກ, ທຽບກັບຊ່ອງທາງທີ່ນາຍຈ້າງໃຊ້ເພື່ອຊອກຫາແຮງງານ ເຊິ່ງມັນສະແດງໃຫ້ເຫັນຊ່ອງຫວ່າງຊັດເຈນໃນທັກສະການຊອກຫາວຽກຂອງໄວໜຸ່ມ. ໃນບັນດາຜູ້ຕອບແບບສຳຫຼວດສຳລັບບົດລາຍງານນີ້, 75,2 ສ່ວນຮ້ອຍບໍ່ມີຄວາມຮູ້

### ຮູບທີ 2.6: ຂໍ້ຈຳກັດທາງທຸລະກິດ 3 ອັນດັບທຳອິດ ຕາມຂະໜາດຂອງວິສາຫະກິດໃນ ສປປ ລາວ

ແຫຼ່ງຂໍ້ມູນ: ທະນາຄານໂລກ, 2018.








### ຮູບທີ 2.7: ອຸປະສັກຂອງການເປັນຜູ້ປະກອບ ອີງຕາມຄຳຄິດເຫັນຂອງໄວໜຸ່ມ

ແຫຼ່ງຂໍ້ມູນ: ການສຳຫຼວດສຳລັບບົດລາຍງານນີ້.




ກ່ຽວກັບໂຄງການຂອງລັດຖະບານທີ່ສົ່ງເສີມການຈ້າງງານສຳລັບໄວໜຸ່ມ. ການສຳຫຼວດໃນປີ 2021 ຊີ້ໃຫ້ເຫັນວ່າ 70 ສ່ວນຮ້ອຍ ຂອງຜູ້ຕອບໄວໜຸ່ມບໍ່ມີຊີວະປະຫວັດຫຍໍ້ເພື່ອການສະໝັກວຽກ. ບາງຄົນເວົ້າວ່າການສະໝັກວຽກບາງຢ່າງກໍບໍ່ຈຳເປັນຕ້ອງສົ່ງປະຫວັດຫຍໍ້ໄປ ພຽງແຕ່ຕື່ມແບບຟອມງ່າຍໆແຕ່ວຽກທີ່ໄວໜຸ່ມຕ້ອງການຫຼາຍທີ່ສຸດນັ້ນ ຊີວະປະຫວັດຫຍໍ້ແມ່ນເງື່ອນໄຂເບື້ອງຕົ້ນສຳລັບການຮັບສະໝັກ ແລະ ການຄັດເລືອກ (UNDP, 2021a). ການບໍລິການຕະຫຼາດແຮງງານສາມາດຊ່ວຍໃຫ້ໄວໜຸ່ມພັດທະນາເຄື່ອງມືທີ່ເຂົາເຈົ້າຕ້ອງການ.

ຮູບທີ 2.8

## ການຕອບສະໜອງຄວາມມຸ່ງມາດປາຖະໜາຂອງໄວໜຸ່ມທ່າມກາງອຸປະສັກຂອງຕະຫຼາດແຮງງານ ແລະ ຄວາມບໍ່ແນ່ນອນທີ່ເພີ່ມຂຶ້ນ

ການສ້າງວຽກເຮັດງານທຳຍັງຄົງເປັນສິ່ງທ້າທາຍໃນ ສປປ ລາວ ແມ່ນແຕ່ໃນໄລຍະການຂະຫຍາຍຕົວທາງດ້ານເສດຖະກິດຢ່າງວ່ອງໄວ ເນື່ອງຈາກ ການສຸມໃສ່ຂະແໜງຊັບພະຍາກອນທຳມະຊາດ ທີ່ໃຊ້ທຶນຮອນຈຳນວນຫຼາຍ. ການສ້າງວຽກ ເຮັດງານທຳຍິ່ງມີຄວາມທ້າທາຍຫຼາຍຂຶ້ນໃນໄລຍະການແຜ່ລະບາດຂອງພະຍາດ COVID-19 ແລະ ໃນປັດຈຸບັນທີ່ອັດຕາເງິນເຟີ້ເພີ່ມສູງຂຶ້ນ. ການຢຸດຊະງັກເນື່ອງຈາກການປະຕິວັດອຸດສາຫະກຳ ຄັ້ງທີ 4 ຍິ່ງສ້າງບັນຫາເພີ່ມຕື່ມອີກ ຍ້ອນ ມີການປັບໂຄງສ້າງອຸດສາຫະກຳ ແລະ ພຶດຕິກຳ ການບໍລິໂພກກໍປ່ຽນແປງໄປ ເຊິ່ງອາດຈະຈຳກັດ ຂອບເຂດ ແລະ ຂະແໜງການທີ່ຕ້ອງໃຊ້ແຮງງານເປັນຫຼັກ.
ໃນສະພາບການທີ່ຕະຫຼາດແຮງງານຢຸດສະງັກ ແລະ ມີຫຼາຍຂໍ້ຈຳກັດໃນການສ້າງວຽກເຮັດງານທຳ, ການບັນລຸຄວາມມຸ່ງມາດປາຖະໜາດ້ານວຽກເຮັດງານທຳຂອງໄວໜຸ່ມຍັງເປັນຄວາມກັງວົນຫຼັກ. ການສຳຫຼວດກ່ຽວກັບບັນຫາການຫວ່າງງານ (ອົງການສະຫະປະຊາຊາດ ເພື່ອການພັດທະນາ, 2021a) ຊີ້ໃຫ້ເຫັນວ່າ ເກືອບເຄິ່ງຫນຶ່ງຂອງຜູ້ເຂົ້າຮ່ວມທີ່ກຳລັງຊອກວຽກແມ່ນຢາກເຮັດວຽກຢູ່ໃນພາກລັດເຊິ່ງເຫດຜົນແມ່ນກ່ຽວກັບຄວາມໝັ້ນຄົງຂອງວຽກງານ ແລະ ຄວາມຮູ້ສຶກທີ່ວ່າພະນັກງານລັດໄດ້ຮັບຄວາມເຄົາລົບຫຼາຍກວ່າ ເຊິ່ງສະແດງໃຫ້ເຫັນເຖິງຄວາມສຳຄັນຂອງການສ້າງວຽກເຮັດງານທຳ ທີ່ໝັ້ນຄົງ ແລະ ປອດໄພ ແຕ່ພາກລັດຍັງບໍ່ທັນໄດ້ຕອບສະໜອງຄວາມຕ້ອງການເຫຼົ່ານີ້. ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີໂຄຕ້າການຈ້າງງານຂອງພາກລັດ ມີພຽງແຕ່ 1.500 ຕຳແໜ່ງໃນປີ 2019 ແລະ 2.000 ຕຳແໜ່ງໃນປີ 2020. ໃນທາງກົງກັນຂ້າມ ນັບແຕ່ປີ 2011 ຫາ 2014

ການບັນຈຸລັດຖະກອນປະຈຳປີແມ່ນຫຼາຍກວ່າ 10.000 ຄົນ. ການຈ້າງງານຂອງພາກລັດທີ່ຫຼຸດລົງຢ່າງຫຼວງຫຼາຍນີ້ໄດ້ຈຳກັດໂອກາດຂອງໝົດທຸກຄົນ ໂດຍສະເພາະແມ່ນໄວໜຸ່ມທີ່ບໍ່ມີສິ່ງຮັບຮອງຄວາມໜ້າເຊື່ອຖືຫຼາຍພໍ ຍິ່ງຈະເປັນການຍາກຫຼາຍທີ່ຈະໄດ້ເຂົ້າເຮັດວຽກກັບພາກລັດ (ອົງການສະຫະປະຊາຊາດ ເພື່ອການພັດທະນາ, 2021a). 40 ສ່ວນຮ້ອຍ ຂອງຜູ້ເຂົ້າຮ່ວມໃນການສຶກສາກ່ຽວກັບການຫວ່າງງານ ສະແດງຄວາມສົນໃຈຕໍ່ການເຮັດວຽກກັບພາກເອກະຊົນ ແລະ 10 ສ່ວນຮ້ອຍ ແມ່ນສົນໃຈເຮັດວຽກກັບຂະແໜງການບໍ່ຫວັງຜົນກຳໄລ (ອົງການສະຫະປະຊາຊາດ ເພື່ອການພັດທະນາ, 2021a). ຕາຕະລາງ 2,5 ສະຫຼຸບສາເຫດທີ່ກະຕຸ້ນໃຫ້ໄວໜຸ່ມຊອກຫາວຽກເຮັດງານທຳໃນຫຼາກຫຼາຍຂະແໜງການ.

ຄວາມມຸ່ງມາດປາຖະໜາຂອງໄວໜຸ່ມໃນ ສປປ ລາວ ກົງກັບຄວາມມຸ່ງມາດປາຖະໜາຂອງໄວໜຸ່ມຈາກປະເທດອື່ນໃນອາຊຽນ. ການສຳຫຼວດຄ່ານິຍົມໂລກ (The World Values Survey) ຕິດຕາມຄຸນລັກສະນະ ທີ່ສຳຄັນຕໍ່ບຸກຄົນທີ່ກ່ຽວຂ້ອງກັບການຈ້າງງານທີ່ມີຄຸນນະພາບ ຄົ້ນພົບວ່າຄົນໃນປະເທດອິນໂດເນເຊຍ, ຟີລິບປິນ ແລະ ຫວຽດນາມ ຍຶດຖືຄວາມປອດໄພ ແລະຄວາມໝັ້ນຄົງດ້ານວຽກງານ ເປັນບຸລິມະສິດສູງສຸດ ເຊິ່ງມັນກົງກັນຂ້າມກັບຄົນທີ່ຢູ່ໃນບັນດາປະເທດທີ່ເປັນສະມາຊິກຂອງອົງການເພື່ອການຮ່ວມມື ແລະ ພັດທະນາເສດຖະກິດ (OECD) ທີ່ເຫັນວ່າຄວາມຮູ້ສຶກວ່າປະສົບຜົນສຳເລັດເປັນຄຸນລັກສະນະຕົ້ນຕໍສຳລັບຄຸນນະພາບຂອງວຽກ. ຜົນໄດ້ຮັບນີ້ ຊີ້ໃຫ້ເຫັນວ່າການສ້າງໂອກາດທີ່ພຽງພໍສຳລັບການຈ້າງງານທີ່ໄດ້ຮັບເງິນເດືອນຢ່າງເປັນລະບົບແມ່ນສຳຄັນທີ່ສຸດສຳລັບການຈ້າງງານທີ່ມີຄຸນນະພາບສູງໃນອາຊີຕາເວັນອອກສຽງໃຕ້ ໂດຍສະເພາະແມ່ນວຽກທີ່ມີຄວາມສ່ຽງຫຼາຍ (ໝາຍເຖິງວຽກອິດສະຫຼະ ຫຼື ທຸລະກິດຄອບຄົວ) ເຊິ່ງພົບເຫັນເລື້ອຍໆໃນອາຊີ ແລະ ປາຊີຟິກ ຫຼາຍກວ່າພາກພື້ນອື່ນໆໃນລະດັບການພັດທະນາທີ່ໃກ້ຄຽງກັນ (ທະນາຄານພັດທະນາອາຊີ, 2011; ທະນາຄານໂລກ, 2014).

## 2.5 ໂອກາດ

### ກະຕຸ້ນການເຕີບໂຕຂອງວຽກເຮັດງານທຳຜ່ານອຸດສາຫະກຳສີຂຽວ ແລະ ເຕັກໂນໂລຢີ

ການຂະຫຍາຍຕົວຢ່າງຕໍ່ເນື່ອງຂອງກຳລັງແຮງງານໃນຊຸມປີຕໍ່ໜ້າ ສະແດງໃຫ້ເຫັນໂອກາດອັນພິເສດຂອງ ສປປ ລາວ ໃນການຊຸກຍູ້ການເຕີບໂຕ ແລະ ການພັດທະນາມະນຸດໂດຍລວມ. ສິ່ງນີ້ສາມາດເກີດຂຶ້ນໄດ້ກໍຕໍ່ເມື່ອສາມາດໃຊ້ທ່າແຮງຂອງແຮງງານໄວໜຸ່ມໂດຍຜ່ານໂອກາດການຈ້າງງານທີ່ມີປະສິດທິພາບທີ່ສອດຄ່ອງກັບຄວາມປາຖະໜາຂອງໄວໜຸ່ມ. ປະເທດຊາດຈະໄດ້ຮັບຜົນປະໂຫຍດຈາກການຫຼັ່ງໄຫຼເຂົ້າມາຂອງແຮງງານທີ່ມີທັກສະ ເຊິ່ງພວກເຂົາຈະຊ່ວຍໃຫ້ເກີດການຫັນປ່ຽນທີ່ເປັນມິດກັບສິ່ງແວດລ້ອມ ແລະ ດິຈິຕອນຢ່າງໄວວາ ຖ້າຫາກວ່າໄວໜຸ່ມໄດ້ຮັບການສົ່ງເສີມຊຸກຍູ້ຢ່າງທັນການ ແລະ ມີເປົ້າໝາຍ ເພື່ອເຮັດໃຫ້ເຂົາເຈົ້າມີທັກສະທີ່ກົງກັບຄວາມຕ້ອງການ.

**ຮູບທີ 2.8: ຊ່ອງທາງໃນການເປີດຮັບສະໝັກພະນັກງານທີ່ນາຍຈ້າງນິຍົມໃຊ້**

ແຫຼ່ງຂ່າວ: UNDP, 2021a.








### ຕາຕະລາງ 2.5: ເຫດຜົນຂອງໄວໜຸ່ມສຳລັບຄວາມມັກຂອງຂະແໜງການວຽກ

ແຫຼ່ງຂໍ້ມູນ: UNDP, 2021a

ລັດຖະບານ
– ເປັນວຽກທີ່ໝັ້ນຄົງ
– ມີພາບລັກທີ່ດີ
– ເປັນວຽກທີ່ພໍ່ແມ່ຢາກໃຫ້ເຮັດ

ເອກະຊົນ
– ເງິນເດືອນສູງ ແລະ ປະກັນສຸຂະພາບດີ
– ມີພາບລັກທີ່ດີ
– ມີໂອກາດໄດ້ນຳໃຊ້ທັກສະທີ່ໄດ້ຮຽນມາເຂົ້າໃນການເຮັດວຽກ

ທຸລະກິດສ່ວນໂຕ
– ໄດ້ເປັນນາຍຕົນເອງ,
– ໂອກາດໄດ້ກຳໄລສູງ ໂດຍສະເພາະແມ່ນ e-commerce
– ກຳລັງເປັນທີ່ນິຍົມ ແລະ ເບິ່ງຄືເທ້ດີ

ອົງການບໍ່ຫວັງຜົນກຳໄລ
– ເງິນເດືອນສູງ ແລະ ສະຫວັດດີການດີ
– ມີພາບລັກແບບມີຈັນຍາບັນ
– ມີໂອກາດໄດ້ພັດທະນາດ້ານອາຊີບການງານ

ເສັ້ນທາງການຂະຫຍາຍຕົວທາງດ້ານເສດຖະກິດໃນປັດຈຸບັນຂອງ ສປປ ລາວ ມີຄວາມຈຳເປັນຕ້ອງໄດ້ປ່ຽນແປງທິດທາງ ເຊິ່ງວ່າຍຸດທະສາດສຳຄັນອັນໜຶ່ງກໍຄືການໝູນໃຊ້ປະໂຫຍດຈາກທຶນທຳມະຊາດ. ຈຸດສຸມຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ປີ 2030 ແມ່ນຊຸກຍູ້ການເຕີບໂຕດ້ານເສດຖະກິດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນຕົວເມືອງ ແລະ ຊົນນະບົດ ແລະ ສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຊຸດທີ 9, ພາຍໃຕ້ຜົນໄດ້ຮັບທີ 4, ໄດ້ຮັບຮູ້ຄວາມສາມາດບົ່ມຊ້ອນດ້ານເສດຖະກິດ-ສັງຄົມຂອງທຶນທຳມະຊາດ. ໃນຂະນະດຽວກັນ, ພະຍາດລະບາດໄດ້ເລັ່ງໃຫ້ເກີດການຫັນປ່ຽນໄປສູ່ການເປັນດິຈິຕອນ ແລະ ນະວັດຕະກຳ ໃນທົ່ວໂລກ ແລະ ພາຍໃນ ສປປ ລາວ. ຂະບວນການນີ້ຄວນຈະຖືກນຳໃຊ້ໃຫ້ຫຼາຍຂຶ້ນ. ຖ້າຫາກມີຄວາມສາມາດ ແລະ ໂອກາດທີ່ເໝາະສົມ ໄວໜຸ່ມສາມາດເປັນຜູ້ນຳພາການເຕີບໂຕ ແລະ ການຫັນປ່ຽນ.

ກ່ອງເນື້ອໃນ 2.5

ສະພາເສດຖະກິດໂລກ (The World Economic Forum) ຄາດວ່າຮອດປີ 2025, ຈະສ້າງວຽກເຮັດງານທຳໃໝ່ 97 ລ້ານຕຳແໜ່ງ ແລະ 85 ລ້ານຕຳແໜ່ງຈະສູນເສຍໄປໃນ 15 ອຸດສາຫະກຳໃນ 26 ພື້ນຖານເສດຖະກິດ (ອົງການສະຫະປະຊາຊາດ ເພື່ອການພັດທະນາ, 2022b). ອຸດສາຫະກຳທີ່ກ້າວບໍ່ທັນລະບົບອັດຕະໂນມັດຈະສູນເສຍຄວາມໄດ້ປຽບໃນການແຂ່ງຂັນເຊັ່ນດຽວກັນກັບແຮງງານທີ່ບໍ່ຮຽນຮູ້ທັກສະໃໝ່ໆທີ່ຈຳເປັນ ໃນຕະຫຼາດແຮງງານທີ່ມີການປ່ຽນແປງ. ລະບົບອັດຕະໂນມັດ ແລະປັນຍາປະດິດມີແນວໂນ້ມທີ່ຈະສ້າງໜ້າວຽກ, ອາຊີບ ແລະ ອຸດສາຫະກຳໃໝ່ (ອົງການສະຫະປະຊາຊາດ ເພື່ອການພັດທະນາ, 2022b) .ໃນ ສປປ ລາວ, ລັດຖະບານ, ໂດຍຜ່ານຍຸດທະສາດເສດຖະກິດດິຈິຕອນ, ມີເປົ້າໝາຍເພີ່ມທະວີການປະກອບສ່ວນຂອງເສດຖະກິດດິຈິຕອນເຂົ້າໃນ GDP ໃຫ້ໄດ້ 5 ສ່ວນຮ້ອຍ ໃນປີ 2025. ຍຸດທະສາດດັ່ງກ່າວໄດ້ສຸມໃສ່ການພັດທະນາຊັບພະຍາກອນມະນຸດ, ພື້ນຖານໂຄງລ່າງ, ເຄື່ອງມື, ເວທີ, ຜະລິດຕະພັນ ແລະ ການບໍລິການ ເພື່ອຮັດແໜ້ນການຄ້າ, ອຸດສາຫະກຳການຜະລິດ, ການຊຳລະເງິນ ແລະ ການເງິນ ພ້ອມທັງການພັດທະນາທຸລະກິດໃນຂະແໜງດິຈິຕອນ.

ໃນຊຸມປີມໍ່ໆມານີ້, ການຄ້າທາງອິນເຕີເນັດ ແລະ ການຂາຍຜ່ານສື່ສັງຄົມອອນລາຍໄດ້ເພີ່ມຂຶ້ນ ໃນ ສປປ ລາວ (ກ່ອງເນື້ອໃນ 2.5). ຍຸດທະສາດເສດຖະກິດດິຈິຕອນສົ່ງເສີມການນຳໃຊ້ດິຈິຕອນໃນຂະແໜງການຜະລິດ ໂດຍຜ່ານການພັດທະນາຂອງ ໂຮງງານອັດສະລິຍະ (smart factories), ພື້ນທີ່ດິຈິຕອນ (digital park ) ແລະ ເຂດເສດຖະກິດດິຈິຕອນ ທີ່ສາມາດດຶງດູດການລົງທຶນຕ່າງປະເທດໃນໂຮງງານຜະລິດອຸປະກອນ ແລະ ລະບົບທີ່ກ່ຽວຂ້ອງກັບເຕັກໂນໂລຢີດິຈິຕອນ. ການປະຕິບັດບັນດາບູລິມະສິດຕ່າງໆໃນຍຸດທະສາດດິຈິຕອນ ເປີດໂອກາດການຈ້າງງານ ແລະ ການເປັນຜູ້ປະກອບການໃຫ້ແກ່ໄວໜຸ່ມ. ລັດຖະບານໄດ້ຊີ້ໃຫ້ເຫັນໂອກາດໃນການສ້າງຕັ້ງສູນເຕັກໂນໂລຊີທາງດ້ານການເງິນ (a fintech valley) ແລະ ພື້ນທີ່ດິຈິຕອນຂອງລາວ (Lao digital park) ໂດຍ ການຮ່ວມມືກັບຄູ່ຮ່ວມງານຈາກປະເທດມາເລເຊຍ. ສະມາຄົມການຄ້າໄອຊີທີຂອງລາວລາຍງານວ່າ ກຳລັງດຳເນີນການສຶກສາຄວາມເປັນໄປໄດ້ໃນວຽກງານເຕັກໂນໂລຊີທາງດ້ານການເງິນ (fintech), ແພັດຟອມສຳລັບລັດເອເລັກໂຕຣນິກ (e-gov plateforms) ແລະ ວິທີແກ້ໄຂໂດຍໃຊ້ດິຈິຕອນອື່ນໆ.

ຄືກັນກັບການສ້າງວຽກເຮັດງານທຳໃໝ່ດ້ວຍການຫັນປ່ຽນທາງດ້ານເຕັກໂນໂລຢີ, ເສດຖະກິດທີ່ເປັນມິດຕໍ່ສິ່ງແວດລ້ອມກໍສາມາດສ້າງວຽກເຮັດງານທຳໄດ້ຫຼາຍກວ່າ 24 ລ້ານຕຳແໜ່ງງານ ໃນທົ່ວໂລກ ໃນປີ 2030 (ອົງການສະຫະປະຊາຊາດ ເພື່ອການພັດທະນາ, 2022b). ແຕ່ວຽກເຫຼົ່ານີ້ບໍ່ຈຳ



ໃນຄວາມໝາຍກວ້າງໆ ລະບົບຂໍ້ມູນຂ່າວສານ ຕະຫຼາດແຮງງານ ແມ່ນຖານຂໍ້ມູນທີ່ຄົບຖ້ວນ ແລະ ກວມເອົາຫົວຂໍ້ຕ່າງໆຂອງແຮງງານໃນລະບົບເສດຖະກິດ

ເປັນຕ້ອງໃຊ້ທັກສະດຽວກັນກັບເສດຖະກິດທີ່ອີງໃສ່ນ້ຳມັນເຊື້ອໄຟ. ໃນປີ 2040 ຈະສາມາດສ້າງວຽກເຮັດງານທຳໄດ້ປະມານ 1,6 ລ້ານຕຳແໜ່ງງານ ໂດຍຜ່ານການຫັນປ່ຽນໄປສູ່ລະບົບນິເວດເສດຖະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ (ຮູບ 2.10). ການຂະຫຍາຍຕົວຂອງຕຳແໜ່ງງານໃນລະບົບນິເວດເສດຖະກິດທີ່ເປັນມິດຕໍ່ສິ່ງແວດລ້ອມຈະສ້າງໂອກາດໃນການຈ້າງງານໃຫ້ແກ່ຜູ້ທີ່ເຮັດວຽກຢູ່ໃນຕ່ອງໂສ້ການຜະລິດແບບດັ້ງເດີມ. ທັງນີ້ທັງນັ້ນກໍຂຶ້ນຢູ່ກັບວຽກງານທີ່ເກີດຈາກລະບົບນິເວດເສດຖະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ ຈະສາມາດແທນທີ່ວຽກທີ່ຢູ່ໃນຕ່ອງໂສ້ການຜະລິດແບບດັ້ງເດີມ ໄດ້ຫຼາຍໜ້ອຍປານໃດ. ການຫັນປ່ຽນໄປສູ່ລະບົບນິເວດເສດຖະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ ອາດຈະຕ້ອງລົງທຶນໃສ່ໃນທັກສະຂອງມະນຸດ ແລະ ຄວາມຄິດສ້າງສັນ ເພື່ອປັບປຸງຜະລິດຕະພັນແຮງງານ ແລະ ລາຍໄດ້ຕໍ່ຫົວຄົນ. ເສດຖະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ ຍັງເປີດໂອກາດທາງທຸລະກິດທີ່ຜູ້ປະກອບການໄວໜຸ່ມສາມາດຄວ້າເອົາໄວ້ໄດ້.

ອີງຕາມການຄາດຄະເນທາງດ້ານທຸລະກິດ, 89 ສ່ວນຮ້ອຍ ຂອງການຫຼຸດຜ່ອນ ແລະ ຄວາມສາມາດໃນການກັກເກັບອາຍແກັສເຮືອນແກ້ວແບບເປັນວົງກົມ ເຮັດໃຫ້ເກີດມູນຄ່າສຸດທິໃນປັດຈຸບັນ ແລະ 82ສ່ວນຮ້ອຍ ສາມາດຈ່າຍຄືນຕົ້ນທຶນໄດ້ພາຍໃນເວລາບໍ່ເຖິງ 2,5 ປີ (UNDP, 2021b). ກໍລະນີສະເພາະເຈາະຈົງແມ່ນການທ່ອງທ່ຽວແບບນິເວດ, ເຊິ່ງໃນ ສປປ ລາວ ອາດຈະເພີ່ມຂຶ້ນ 4 ເທົ່າໃນ 10 ປີຂ້າງໜ້າ, ບັນລຸເຖິງ 600 ລ້ານໂດລາສະຫະລັດ. ການເຕີບໂຕນີ້ຈະເຮັດໃຫ້ຂະແໜງການທ່ອງທ່ຽວສາມາດປະກອບສ່ວນເປັນສອງເທົ່າໃນ GDP (UNDP, 2021b). ດຶງດູດການມີສ່ວນຮ່ວມຂອງໄວໜຸ່ມໃນການຈ້າງງານ ແລະ ການເປັນຜູ້ປະກອບການ ເຊິ່ງມັນສາມາດເກີດເປັນຈິງໄດ້ດ້ວຍການມີທັກສະ ແລະ ການເຂົ້າເຖິງຊັບພະຍາກອນທີ່ເໝາະສົມ.

ຮູບທີ 2.9

ອຳນວຍຄວາມສະດວກໃນການຈ້າງງານໃຫ້ແກ່ໄວໜຸ່ມຍິງ

ເຖິງແມ່ນວ່າເດັກຍິງ ແລະ ແມ່ຍິງຕ້ອງປະເຊີນກັບຂໍ້ຈຳກັດຈາກການເຮັດວຽກເຮືອນທີ່ໜັກ ແລະ ໂອກາດທີ່ຈະອອກໄປພັດທະນາທັກສະ ແລະ ການເຮັດວຽກກໍມີໜ້ອຍກໍຕາມ ຍັງມີສັນຍານວ່າທັດສະນະຄະຕິອາດຈະມີການປ່ຽນແປງ (ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ອົງການຢູນິເຊັບ, 2021). ມີການຍອມຮັບຜູ້ຍິງຫຼາຍຂຶ້ນໃນຕຳແໜ່ງຜູ້ນຳດ້ານການສຶກສາ ທຸລະກິດ ແລະ ການເປັນຜູ້ນຳຢູ່ຂັ້ນບ້ານ ຄຽງຄູ່ກັນກັບການປ່ຽນແປງດ້ານຄວາມຮັບຮູ້ ແລະ ທັດສະນະກ່ຽວກັບບົດບາດຂອງແມ່ຍິງໃນດ້ານເສດຖະກິດ ແລະ ສັງຄົມ. ໃນຂະນະທີ່ຍັງມີຄວາມຄາດຫວັງຕໍ່ເດັກຍິງ ແລະ ໄວໜຸ່ມຍິງວ່າຈະຕ້ອງເປັນຜູ້ນຳພາໃນການເຮັດວຽກເຮືອນ, ການອອກໄປເຮັດວຽກຢູ່ນອກເຮືອນ ແລະ ການສະແຫວງຫາໂອກາດດ້ານເສດຖະກິດຢູ່ນອກບ້ານກໍຖືກຍອມຮັບຫຼາຍຂຶ້ນ ລວມທັງຢູ່ເຂດທຸກຍາກ ແລະ ຫ່າງໄກສອກຫຼີກ.

ໄວໜຸ່ມຊາຍລາຍງານວ່າເຂົາເຈົ້າຮູ້ດີວ່າໂອກາດສຳລັບແມ່ຍິງແມ່ນຍັງບໍ່ທັນເທົ່າທຽມກັນແຕ່ພວກເຂົາຢືນຢັນວ່າສະຖານະການກຳລັງດີຂຶ້ນ ພ້ອມທັງໃຫ້ການຍອມຮັບການປ່ຽນແປງນີ້. ຫຼັກຖານອື່ນໆສອດຄ່ອງກັບແຮງບັນດານໃຈຂອງເດັກຊາຍ ແລະ ເດັກຍິງ ທີ່ກຳລັງຊອກຫາເປົ້າໝາຍທີ່ຄ້າຍຄືກັນ, ເຊິ່ງແຕກຕ່າງຈາກປະເທດອື່ນໆທີ່ໄດ້ເຂົ້າຮ່ວມໃນການສຶກສາຫົວຂໍ້ດຽວກັນ (ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ອົງການຢູນິເຊັບ, 2021) ທ່າອ່ຽງເຫຼົ່ານີ້ສາມາດເປີດທາງໄປສູ່ການປ່ຽນແປງຄັ້ງຍິ່ງໃຫຍ່ ທີ່ຊຸກຍູ້ໃຫ້ຜູ້ຍິງມີສ່ວນຮ່ວມໃນກຳລັງແຮງງານ ແລະ ການເປັນຜູ້ປະກອບການຫຼາຍຂຶ້ນ ລວມທັງພາກສ່ວນເສດຖະກິດທີ່ຜູ້ຊາຍເປັນໃຫຍ່ແບບດັ້ງເດີມ ກ່ອງເນື້ອໃນ 2.6 ສະແດງໃຫ້ເຫັນເຖິງໂອກາດໃນການຈ້າງງານຂອງໄວໜຸ່ມຍິງໃນວຽກງານເກັບກູ້ລະເບີດທີ່ຍັງບໍ່ທັນແຕກ.

ກ່ອງເນື້ອໃນ 2.6

## ຄວາມຄິດລິເລີ່ມ ແລະ ການທົດລອງຈັດຕັ້ງປະຕິບັດສາມາດກະຕຸ້ນ ການປ່ຽນແປງໃນແນວຄວາມຄິດ ແລະ ການມີສ່ວນຮ່ວມຂອງໄວໜຸ່ມໃນທາງບວກ

ບາງທັດສະນະຄະຕິໃນກຸ່ມໄວໜຸ່ມຂັດຂວາງການມີສ່ວນຮ່ວມຢ່າງມີປະສິດທິພາບຂອງພວກເຂົາໃນຂົງເຂດເສດຖະກິດ ເຊັ່ນ: ຢາກເຮັດວຽກຢູ່ໃນຫ້ອງການ-ວຽກທີ່ສະບາຍ, ຢາກເຮັດວຽກກັບພາກລັດ ແລະ ຍຶດຕິດກັບສະຖານະພາບທາງສັງຄົມທີ່ໄດ້ຈາກການເຮັດວຽກເຫຼົ່ານີ້ ບວກກັບການຂາດຄວາມສົນໃຈໃນການພັດທະນາທັກສະ, ການເພີ່ມທັກສະ ແລະ ການຮຽນວິຊາຊີບ. ແນວໃດກໍ່ຕາມ, ຄວາມຄິດລິເລີ່ມຫຼາຍໂຄງການໄດ້ສະແດງໃຫ້ເຫັນທ່າແຮງໃນການມີສ່ວນຮ່ວມຂອງໄວໜຸ່ມໃນການເປັນຜູ້ປະກອບການ ແລະ ການຂະຫຍາຍການບໍລິການ ແລະ ການຊ່ວຍເຫຼືອໃຫ້ແກ່ໄວໜຸ່ມ ເພື່ອຊ່ວຍໃຫ້ໄວໜຸ່ມເອົາຊະນະອຸປະສັກທາງດ້ານຈິດໃຈ ແລະ ເພີ່ມປະສິດທິພາບການເຮັດວຽກ. ບາງໂຄງການທີ່ຈະສືບຕໍ່ ແລະ ຂະຫຍາຍຕົວມີດັ່ງລຸ່ມນີ້:

ຕັ້ງແຕ່ປີ 2021 ເປັນຕົ້ນມາ, ຈຸດບໍລິການແນະນຳ

## ຮູບທີ 2.9 ທ່າແຮງດ້ານວຽກເຮັດງານທໍາຈາກການຫັນປ່ຽນເສດຖະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ

ແຫຼ່ງຂໍ້ມູນ:UNDP, 2021b.




ດ້ານອາຊີບ (Job Assist Office)ໄດ້ຖືກສ້າງຕັ້ງຂຶ້ນ ໂດຍການຊ່ວຍເຫຼືອຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ, ໄດ້ທົດສອບວ່າການຝຶກອົບຮົມໄວໜຸ່ມເພື່ອເສີມສ້າງຄວາມອາດສາມາດໃນການຊອກຫາວຽກເຮັດງານທໍາ ແລະ ການເຊື່ອມຕໍ່ໄວໜຸ່ມກັບບັນດາອົງກອນທີ່ຈ້າງງານຈະຊ່ວຍໃຫ້ໂອກາດໃນການໄດ້ວຽກເຮັດງານທໍາຂອງໄວໜຸ່ມເພີ່ມຂຶ້ນຫຼືບໍ່? ຫ້ອງການດັ່ງກ່າວເລັງໃສ່ນັກຮຽນຈົບໃໝ່ (ບໍ່ເກີນ 2 ປີຫຼັງຈາກຮຽນຈົບ) ແລະ ຜູ້ທີ່ຫາກໍຫວ່າງງານ ຊ່ວຍໃຫ້ຄໍາປຶກສາຕົວຕໍ່ຕົວ ແລະ ຝຶກອົບຮົມເປັນກຸ່ມກ່ຽວກັບການສໍາພາດວຽກ, ການຂຽນ CV, ທັກສະການສື່ສານ ແລະ ການປະສານງານ, ການເຮັດວຽກພາຍໃຕ້ຄວາມກົດດັນ ແລະ ການປັບຕົວ. ມາຮອດປັດຈຸບັນ, ກິດຈະກໍາດັ່ງກ່າວໄດ້ຊ່ວຍເຫຼືອໄວໜຸ່ມ 400 ກວ່າຄົນ. 35 ສ່ວນຮ້ອຍ ຂອງໄວໜຸ່ມຈໍານວນ 184 ຄົນທີ່ໄດ້ຮັບຄໍາປຶກສາແບບຕົວຕໍ່ຕົວແມ່ນໄດ້ວຽກເຮັດ.

ໂດຍການເຮັດວຽກຮ່ວມກັບໄວໜຸ່ມ ແລະ ເຂົ້າໃຈວິທີການຄົ້ນຫາສິ່ງໃໝ່ ແລະ ຄິດກ່ຽວກັບອະນາຄົດຂອງເຂົາເຈົ້າ ຫ້ອງການດັ່ງກ່າວຄົ້ນພົບວ່າໄວໜຸ່ມມີຄວາມສົນໃຈວຽກແບບບໍ່ເຕັມເວລາ ຫຼື ສົນໃຈເຮັດວຽກໃນເສດຖະກິດອາຊີບອິດສະຫຼະ (gig enonomy) ຫຼາຍກວ່າການຈ້າງງານເຕັມເວລາ. ການໃຫ້ການຊ່ວຍເຫຼືອຈໍາເປັນຕ້ອງມີສ່ວນຮ່ວມຢ່າງຈິງຈັງກັບໄວໜຸ່ມ ເນື່ອງຈາກວ່າໄວໜຸ່ມອາດຈະລັງເລທີ່ຈະຂໍຄວາມຊ່ວຍເຫຼືອ. ຕົວຢ່າງ: ຄລີນິກເຄື່ອນທີ່ອາດຈະມີປະສິດທິພາບຫຼາຍໃນການເຂົ້າເຖິງໄວໜຸ່ມ. ຍິ່ງໄປກວ່ານັ້ນ, ໄວໜຸ່ມຕ້ອງການເວລາ ແລະ ການຊ່ວຍເຫຼືອຢ່າງຕໍ່ເນື່ອງເພື່ອໃຫ້ພວກເຂົາສາມາດຮັບຜິດຊອບອະນາຄົດຂອງຕົນເອງໄດ້. ຫວ່າງມໍ່ໆມານີ້, ກະຊວງສຶກສາທິການ ແລະ ກິລາ ໄດ້ຊີ້ນໍາໃຫ້ໂຮງຮຽນວິຊາຊີບ ແລະ ສະຖາບັນການສຶກສາຊັ້ນສູງ ສ້າງຕັ້ງໜ່ວຍງານໃຫ້ຄໍາປຶກສາດ້ານອາຊີບທີ່ແຕ້ມຮູບ ໂດຍນໍາໃຊ້ຮູບແບບຂອງ, ຈຸດບໍລິການແນະນໍາດ້ານອາຊີບ (Job Assist Office) ເປັນຕົວຢ່າງໃນການຈັດຕັ້ງປະຕິບັດ. ບົດຮຽນອັນໜຶ່ງກໍຄືການເປັນຄູ່ຮ່ວມງານກັບບໍລິສັດ ແລະ ອົງການໃຫຍ່ໆຊ່ວຍເພີ່ມຄວາມໜ້າເຊື່ອຖືໄດ້ ຍ້ອນວ່າໄວໜຸ່ມຮູ້ສຶກວ່າເຂົາເຈົ້າມີໂອກາດເຊື່ອມຕໍ່ກັບນາຍຈ້າງທີ່ມີທ່າແຮງຫຼາຍຂຶ້ນ.ອົງການ ILO ໄດ້ທົດລອງແຜນງານການເປັນຜູ້ປະກອບການເພື່ອຊ່ວຍເຫຼືອການຟື້ນຕົວຈາກພະຍາດໂຄວິດ-19. ມັນຊ່ວຍຜູ້ປະກອບການໂດຍຜ່ານການເຂົ້າເຖິງທາງດ້ານການເງິນ ແລະ ໂດຍການສ້າງວັດທະນະທໍາຂອງຜູ້ປະກອບການ. ການເຮັດວຽກຮ່ວມກັບມະຫາວິທະຍາໄລລວມເຖິງການຈັດ 'ວັນການເປັນຜູ້ປະກອບການ' ເພື່ອຊ່ວຍໃຫ້ນັກຮຽນລະບຸ ແລະ ພັດທະນາແນວ



## ກ່ອງເນື້ອໃນ 2.5: ເຄື່ອງມື, ຜະລິດຕະພັນ ແລະ ການບໍລິການດ້ານດິຈິຕອນ ທີ່ພົ້ນເດັ່ນໃນ ສປປ ລາວ

— ເວທີຄ້າຂາຍແລກປ່ຽນສິນຄ້າລາວ, www.plaosme.com , ໄດ້ຖືກສ້າງຂຶ້ນໃນປີ 2017 ໂດຍກະຊວງອຸດສາຫະກໍາ ແລະ ການຄ້າ. ມີ 146 ບໍລິສັດທີ່ເປັນສະມາຊິກ ແລະ ມີສິນຄ້າກວ່າ 464 ລາຍການ ແລະ ເປັນສ່ວນໜຶ່ງໃນການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ.

— ການບໍລິການຊັອບແວໃໝ່ ຕົວຢ່າງ: ແອັບພລິເຄຊັນແທັກຊີ ທີ່ມີຊື່ວ່າ LOCA LAO ທີ່ເປີດຕົວໃນປີ 2018.

— ບໍລິການຈອງໂຮງແຮມອອນລາຍ ທີ່ສະໜັບສະໜູນການທ່ອງທ່ຽວ ເຊັ່ນ: Hotels.com, Expedia, Agoda, Lao Insurance (AGL) ແລະ ອື່ນໆ.

ແຫຼ່ງຂໍ້ມູນ: ຍຸດທະສາດເສດຖະກິດດິຈິຕອນຂອງ ສປປ ລາວ.

# ກ່ອງເນື້ອໃນ 2.6: ແມ່ຍິງທຳລາຍສິ່ງກີດຂວາງໃນຂະແໜງລະເບີດທີ່ຍັງບໍ່ທັນແຕກ ແລະ ເຮັດໃຫ້ຊຸມຊົນປອດໄພ

ຢູ່ ສປປ ລາວ, ການເກັບກູ້ລະເບີດບໍ່ທັນແຕກ (ລບຕ) ສະໜອງວຽກເຮັດງານທຳທີ່ມີຄຸນນະພາບໃຫ້ແກ່ໄວໜຸ່ມທີ່ຢູ່ທ້ອງຖິ່ນ, ພ້ອມດຽວກັນນັ້ນ ຍັງສະໜັບສະໜູນເປົ້າໝາຍການພັດທະນາແບບຍືນຍົງຂອງປະເທດ ເປົ້າໝາຍທີ 18 ທີ່ກ່າວວ່າ: ມີຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ. ຂະແໜງກຳຈັດ ລບຕ ໄດ້ຊຸກຍູ້ຍຸດທະສາດການສຳຫຼວດ, ເກັບກູ້ ແລະ ສື່ສານຄວາມສ່ຽງ ເພື່ອຮັບສະໝັກພະນັກງານຍິງຕື່ມອີກ. ພ້ອມທັງເຮັດວຽກຢ່າງຕັ້ງໜ້າຮ່ວມກັບຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ແລະ ຄົນທີ່ມີຄວາມພິການ ໃນການຊ່ວຍເຫລືອຜູ້ເຄາະຮ້າຍ.

ນາງ ລາ ແສງຊຸມປໍ ອາຍຸ 27 ປີ ແລະ ນາງ ກຸກສະຫວັນ ລ້ອນບຸດດີ ອາຍຸ 26 ປີ, ເປັນພະນັກງານກຳຈັດ ລບຕ ດ້ານມະນຸດສະທຳໃນກອງທັບປະຊາຊົນລາວ, ເຮັດວຽກສຳຫຼວດ ແລະ ເກັບກູ້ ຢູ່ 5 ເມືອງຂອງ ແຂວງບໍລິຄຳໄຊ. ໃນປີ 2015 ຫຼັງຈາກຮຽນຈົບຈາກຊັ້ນມັດທະຍົມປາຍ ທັງສອງກໍໄດ້ເຂົ້າຮ່ວມໜ່ວຍກູ້ໄພເພື່ອມະນຸດສະທຳໃນທັນທີ.

ເຕີບໃຫຍ່ຢູ່ໃນຕົວເມືອງໃຫຍ່ຄືນະຄອນຫຼວງວຽງຈັນ, ນາງລາ ເວົ້າວ່າ: "ຕອນຍັງນ້ອຍ ຂ້າພະເຈົ້າບໍ່ຄຸ້ນເຄີຍກັບບັນຫາລະເບີດບໍ່ທັນແຕກ ແລະ ການເຄື່ອນໄຫວວຽກງານດັ່ງກ່າວເລີຍ. ລາວເວົ້າຕໍ່ວ່າ "ແນວໃດກໍ່ຕາມ, ຂ້າພະເຈົ້າໄດ້ເຫັນເລື່ອງກ່ຽວກັບຄວາມສ່ຽງຂອງລະເບີດບໍ່ທັນແຕກ ແລະ ການປະຕິບັດດ້ານມະນຸດສະທຳ ເພື່ອຮັບມືກັບສິ່ງທ້າທາຍທີ່ເກີດຈາກ ລບຕ ຜ່ານສື່ສັງຄົມຕ່າງໆ. ເລື່ອງເຫຼົ່ານັ້ນເປັນແຮງບັນດານໃຈໃຫ້ຂ້າພະເຈົ້າຈົນໄດ້ກາຍມາເປັນ ຜູ້ທີ່ເຮັດວຽກກ່ຽວກັບ ລບຕ"

ກຸກສະຫວັນ ກ່າວຕື່ມວ່າ: ເມື່ອສັງເກດເບິ່ງຄວາມທຸກທໍລະມານຂອງຊາວບ້ານທີ່ອາໄສຢູ່ໃນດິນທີ່ເຕັມໄປດ້ວຍລະເບີດບໍ່ທັນແຕກ, ຂ້າພະເຈົ້າຢາກເປັນສ່ວນໜຶ່ງຂອງການປ່ຽນແປງທີ່ດີ ແລະ ສຳຄັນ ເພາະວ່າໄດ້ຊ່ວຍຮັບປະກັນຄວາມປອດໄພ ແລະ ປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນ ແລະ ກໍເປັນໂຊກດີເມື່ອຂ້າພະເຈົ້າເວົ້າຄວາມຝັນຂອງຕົນເອງ ກໍໄດ້ຮັບການສະໜັບສະໜູນຈາກຄອບຄົວ ແລະ ໝູ່ເພື່ອນ ຍ້ອນວ່າວຽກງານຂອງຂ້າພະເຈົ້າສາມາດຊ່ວຍເຫຼືອຄົນໃຫ້ຫຼຸດພົ້ນອອກຈາກຄວາມສ່ຽງຂອງ ລບຕ ພ້ອມທັງປະກອບສ່ວນເຂົ້າໃນການພັດທະນາປະເທດ.

ເມື່ອຖືກຖາມເຖິງປະສົບການການເຮັດວຽກໃນຖານະທີ່ເປັນຜູ້ຍິງ, ກຸກສະຫວັນຕອບດ້ວຍຄວາມຍິ້ມແຍ້ມແຈ່ມໃສວ່າ: ບໍ່ສຳຄັນວ່າຈະເປັນເພດຍິງ ຫຼື ຊາຍ, ເມື່ອລົງໄປສະໜາມ, ປະຊາຊົນໃນຊຸມຊົນກໍ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຂ້ອຍຮູ້ສຶກພູມໃຈທີ່ໄດ້ເປັນພະນັກງານ ລບຕ. ຂ້ອຍເປັນພະນັກງານ ລບຕ ທີ່ມີຄຸນສົມບັດຄືກັບຄົນອື່ນໆ. ພະນັກງານ ລບຕ ທຸກໆຄົນຮ່ວມມືກັນເພື່ອປົກປ້ອງປະຊາຊົນຈາກຄວາມສ່ຽງຂອງ ລບຕ ກໍເທົ່ານັ້ນແຫຼະ.

ໄວຍິງໜຸ່ມທັງສອງຄົນມີຄວາມຝັນອັນດຽວກັນຄື: ຢາກເປັນຫົວໜ້າທີມຜູ້ຍິງຄົນທຳອິດ ຫຼື ທີສອງຂອງໜ່ວຍຂອງຕົນເອງ ເຊິ່ງຜ່ານມາບໍ່ທັນເຄີຍມີຜູ້ຍິງເປັນຫົວໜ້າທີມຈັກເທື່ອ. ເຂົາເຈົ້າມີຄວາມກະຕືລືລົ້ນໃນການສະສົມປະສົບການໃນການເຮັດວຽກ, ການສະແຫວງຫາຄວາມຮູ້ ແລະ ທັກສະເພີ່ມເຕີມ ໃນການເປັນພະນັກງານ ລບຕ. ໃນທີ່ສຸດກໍໄດ້ເບິ່ງແຍງທີມສຳຫຼວດ ລບຕ ແລະ ທີມງານເກັບກູ້ ລບຕ ກໍເຕັມໄປດ້ວຍພະນັກງານຍິງທີ່ມີຄວາມສາມາດ.

ເຖິງວ່າ 30 ສ່ວນຮ້ອຍ ຂອງພະນັກງານເກັບກູ້ ລບຕ ແມ່ນແມ່ຍິງກໍ່ຕາມ, ແຕ່ເກືອບຈະບໍ່ມີແມ່ຍິງເລີຍໃນຕຳແໜ່ງຜູ້ນຳ ໃນຂະແໜງການນີ້. ລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງທັງໝົດຕ້ອງສືບຕໍ່ພະຍາຍາມສ້າງສະພາບແວດລ້ອມການເຮັດວຽກທີ່ຍຸດຕິທຳ ແລະ ມີສ່ວນຮ່ວມສຳລັບໝົດທຸກຄົນ. ພຽງເທົ່ານີ້ ໄວໜຸ່ມລາວຄື ລາ ແລະ ກຸກສະຫວັນ ກໍຈະກາຍມາເປັນຊ່ຽວຊານດ້ານ ລບຕ ແລະ ຫຼັງຈາກນັ້ນກໍຈະກາຍເປັນຜູ້ນຳທີ່ສາມາດຖ່າຍທອດຄວາມຮູ້ ແລະ ປະສົບການໃຫ້ຄົນຮຸ່ນຫຼັງ. ການມີຕົວແບບທີ່ມາຈາກພື້ນຖານທີ່ແຕກຕ່າງກັນສາມາດຊຸກຍູ້ໃຫ້ຄົນຮຸ່ນໃໝ່ມີຄວາມກ້າທີ່ຈະຕັ້ງຄວາມຫວັງໃຫ້ແກ່ອະນາຄົດຂອງຕົນເອງ ເຊິ່ງເປັນພື້ນຖານຂອງການສ້າງຄວາມເຂັ້ມແຂງຂອງໄວໜຸ່ມ.

ແຫຼ່ງຂໍ້ມູນ: ການສຳພາດ ໃນວັນທີ 1 ສິງຫາ 2022 ທີ່ ແຂວງບໍລິຄຳໄຊ.





ຄວາມຄິດທາງທຸລະກິດ. ໃນສອງມື້ຂອງການຈັດງານ ມີຊາວໜຸ່ມ 350 ກວ່າຄົນເຂົ້າຮ່ວມ ໃນງານມີການຈັດຝຶກອົບຮົມ ແລະ ການບັນຍາຍໂດຍຜູ້ນຳທາງທຸລະກິດເພື່ອສ້າງແຮງບັນດານໃຈໃຫ້ແກ່ໄວໜຸ່ມ ແລະ ໃຫ້ໄວໜຸ່ມມີສ່ວນຮ່ວມໃນການສົນທະນາ. ຜູ້ອຳນວຍຄວາມສະດວກທີ່ເປັນໄວໜຸ່ມໄດ້ນຳພາການຝຶກອົບຮົມໂດຍອີງໃສ່  ແຜນງານ ILO Ready 4 Business programme ມັນຊ່ວຍພັດທະນາທັກສະພາກປະຕິບັດຂອງໄວໜຸ່ມໃນການເປັນຜູ້ປະກອບການເພື່ອເລີ່ມຕົ້ນທຸລະກິດຂອງຕົນເອງ. ໃນຕອນທ້າຍ, ມີການມອບລາງວັນໃຫ້ແກ່ແນວຄວາມຄິດທຸລະກິດທີ່ດີທີ່ສຸດທີ່ໄດ້ຄົ້ນຄິດຂຶ້ນໃໝ່ໃນລະຫວ່າງການຝຶກອົບຮົມ.

ໂຄງການອື່ນໆທີ່ກຳລັງດຳເນີນຢູ່ ໄດ້ແກ່ການຝຶກອົບຮົມກ່ຽວກັບການພັດທະນາທັກສະໂດຍເນັ້ນໃສ່ໄວໜຸ່ມເຄື່ອນຍ້າຍ/ໄວໜຸ່ມທີ່ກັບຄືນມາປະເທດ. ການຈ້າງງານ ແລະ ການຈັດຫາງານໃຫ້ແກ່ຜູ້ທີ່ໄດ້ຝຶກອົບຮົມກັບຫົວໜ່ວຍທຸລະກິດໃນເຂດເສດຖະກິດພິເສດແມ່ນດຳເນີນງານຜ່ານການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ເຊັ່ນ: ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຢູ່ ນະຄອນຫຼວງວຽງຈັນ, ແຂວງຈຳປາສັກ ແລະ ແຂວງສະຫວັນນະເຂດ.

ໃນພາກພື້ນອາຊີ ແລະ ປາຊີຟິກ, Youth Co:Lab ເຊິ່ງນຳພາໂດຍອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ມູນນິທິ Citi, ມີຈຸດປະສົງເພື່ອສ້າງວາລະຮ່ວມກັນໃນຫຼາຍປະເທດເພື່ອເປັນການລົງທຶນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມ ທັງນີ້ທັງນັ້ນກໍເພື່ອເລັ່ງການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ໂດຍຜ່ານການເປັນຜູ້ນຳ, ນະວັດຕະກຳທາງສັງຄົມ ແລະ ການເປັນຜູ້ປະກອບການ. Youth Co:Lab ກຳລັງເຮັດໃຫ້ໄວໜຸ່ມກ້າວສູ່ຕຳແໜ່ງຜູ້ແກ້ໄຂສິ່ງທ້າທາຍທີ່ຮີບດ່ວນທີ່ສຸດຂອງພາກພື້ນ ໂດຍຜ່ານການພັດທະນາທັກສະທີ່ຈຳເປັນສຳລັບສະຕະວັດທີ 21 ແລະ ການສະໜັບສະໜູນຊຸກຍູ້ທຸລະກິດສະຕາດອັບທີ່ໄວໜຸ່ມເປັນຜູ້ນຳພາ ແລະ ທຸລະກິດເພື່ອສັງຄົມໃນພາກພື້ນ. ນັບຕັ້ງແຕ່ປີ 2017, Youth Co:Lab ໄດ້ດຳເນີນງານຢູ່ 28 ປະເທດ ແລະ ເຂດແຄ້ວນ. ການປຶກສາຫາລືລະດັບຊາດ, ກອງປະຊຸມສຸດຍອດລະດັບພາກພື້ນ ແລະ ງານເວທີສົນທະນາກ່ຽວກັບນະວັດຕະກຳທາງສັງຄົມ ໄດ້ມີຜູ້ເຂົ້າຮ່ວມກວ່າ 200.000 ຄົນ. ແນວຄວາມຄິດລິເລີ່ມນີ້ໄດ້ສ້າງປະໂຫຍດໃຫ້ແກ່ໄວໜຸ່ມທີ່ເປັນຜູ້ປະກອບການ




**ຈຸດບໍລິການແນະນຳດ້ານອາຊີບ (Job Assist Office) ໄດ້ຊ່ວຍເຫຼືອໄວໜຸ່ມ 400 ກວ່າຄົນ. 35 ສ່ວນຮ້ອຍຂອງໄວໜຸ່ມຈຳນວນ 184 ຄົນທີ່ໄດ້ຮັບຄຳປຶກສາແບບຕົວຕໍ່ຕົວແມ່ນໄດ້ວຽກເຮັດ.**

ເພື່ອສັງຄົມ ຫຼາຍກວ່າ 11.000 ຄົນ ແລະ ໄດ້ຊ່ວຍເປີດບໍລິການ ຫຼື ປັບປຸງທຸລະກິດເພື່ອສັງຄົມທີ່ນຳພາໂດຍໄວໜຸ່ມ ກວ່າ 1.240 ແຫ່ງ. Youth Co:Lab ຍັງໄດ້ເລີ່ມຮ່ວມມືກັບຜູ້ມີບົດບາດໃນລະບົບນິເວດຫຼັກ ໂດຍຜ່ານພັນທະມິດສ້າງຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມ Youth Empowerment Alliance. ໂດຍການໃຫ້ຄວາມສຳຄັນຕໍ່ຫຼັກການ ບໍ່ປະຖິ້ມໃຜໄວ້ຂ້າງຫຼັງ ຫຼື leaving no one behind, Youth Co:Lab ໄດ້ລິເລີ່ມແຜນງານຕ່າງໆເພື່ອສືບຕໍ່ສະໜັບສະໜູນໄວໜຸ່ມທີ່ດ້ອຍໂອກາດ ຈາກຊຸມຊົນທີ່ດ້ອຍໂອກາດ ຢູ່ຫຼາຍປະເທດ ລວມທັງຢູ່ໃນ ສປປ ລາວ.

## 2.6 ຂໍ້ສະເໜີແນະ

### ໃຫ້ບູລິມະສິດສຳຄັນຮີບດ່ວນແກ່ການລົງທຶນໃນຂະແໜງການສຶກສາ ແລະ ການພັດທະນາສີມືແຮງງານ ແລະ ຂະຫຍາຍໂຄງການທີ່ເຮັດໃຫ້ໄວໜຸ່ມມີສ່ວນຮ່ວມຫຼາຍຂຶ້ນໃນເສດຖະກິດ

ການສຶກສາ ແລະ ການພັດທະນາທັກສະຕ້ອງໄດ້ຮັບການປັບປຸງ ໂດຍຜ່ານການຫັນປ່ຽນຫຼັກສູດເພື່ອສຸມໃສ່ຄວາມຕ້ອງການຂອງອຸດສາຫະກຳ, ເສັ້ນທາງການຂະຫຍາຍຕົວໃນອະນາຄົດ ແລະ 'ທັກສະໃນອະນາຄົດ'; ວິທີການສອນແບບໃໝ່, ຄູສອນທີ່ມີຄຸນນະພາບ ແລະ ອຸປະກອນການຮຽນການສອນຕ່າງໆ. ການຫັນປ່ຽນນີ້ຈະເປັນໄປໄດ້ຖ້າຫາກມີການລົງທຶນດ້ານການເງິນໃນຂະແໜງການສຶກສາ ແລະ ທັກສະ ຢ່າງຕໍ່ເນື່ອງ ແລະ ເພີ່ມຂຶ້ນເລື້ອຍໆ ເຊິ່ງຈະອະທິບາຍລະອຽດຕື່ມໃນບົດທີ 3 ແລະ ບົດທີ 6. ລັດຖະບານຄວນພິຈາລະນາດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ ແລະ ການລົງທຶນຂອງເອກະຊົນພາຍໃນປະເທດໃນການພັດທະນາສີມືແຮງງານ ຜ່ານການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ ແລະ ການສ້າງແຮງຈູງໃຈອື່ນໆ. ລັດຖະບານຍັງສາມາດພິຈາລະນາຮູບແບບການສະໜອງທຶນສົມທົບ ທີ່ຮວບຮວມ ແລະ ຈັດສັນງົບປະມານຂອງພາກລັດ ທີ່ໄດ້ຈາກການຊ່ວຍເຫຼືອເພື່ອການພັດທະນາຢ່າງເປັນທາງການ ແລະ ເງິນທຶນຈາກພາກເອກະຊົນ ເພື່ອສະໜອງທຶນໃຫ້ແກ່ໂຄງການຂະໜາດໃຫຍ່ທີ່ເຮັດໃຫ້ເກີດການປະຕິຮູບທີ່ສຳຄັນ.

### ລົບລ້າງຄວາມຄິດດ້ານລົບແບບດັ້ງເດີມກ່ຽວກັບການຮຽນອາຊີວະສຶກສາ ແລະ ປັບທິດທາງການຮຽນວິຊາຊີບໄປສູ່ການພັດທະນາທີ່ເປັນມິດຕໍ່ສິ່ງແວດລ້ອມ, ດີຈິຕອນ ແລະ ການພັດທະນາ 'ທັກສະໃນອະນາຄົດ'

ເພື່ອແກ້ໄຂຊ່ອງຫວ່າງໃນປັດຈຸບັນຂອງອາຊີວະສຶກສາ ລັດຖະບານຄວນສ້າງຮູບແບບການເຮັດວຽກກັບນາຍຈ້າງຫຼັກ, ນັກວິຊາການ ແລະ ຜູ້ຊ່ຽວຊານດ້ານອຸດສາຫະກຳທີ່ເປັນມິດກັບສິ່ງແວດລ້ອມ, ດິຈິຕອນ ແລະ ເຕັກໂນໂລຢີ. ຄວນປັບປຸງຫຼັກສູດອາຊີວະສຶກສາເພື່ອໃຫ້ກວມເອົາການຮຽນຮູ້ກ່ຽວກັບການເຕີບໂຕສີຂຽວ, ໄອຊີທີ ແລະ 'ທັກສະໃນອະນາຄົດ', ທັກສະທາງສະຕິປັນຍາ (ການຄິດໄລ່ ແລະ ອ່ານອອກຂຽນເປັນ ແມ່ນທັກສະພື້ນຖານ, ນອກນັ້ນ ຍັງມີທັກສະການຈື່ຈຳ, ລວມໄປເຖິງ ທັກສະການຄິດວິເຄາະ ແລະ ປະເມີນຜົນ); ຄວາມຮູ້ດ້ານດິຈິຕອນ; ທັກສະ STEM; ທັກສະທາງສັງຄົມ; ຄວາມສາມາດໃນການຮຽນຮູ້ (ຕົວຢ່າງ: ຄວາມພ້ອມທີ່ຈະຮຽນຮູ້, ແຮງຈູງໃຈໃນການຮຽນຮູ້, ຄວາມໄຝ່ຮູ້ ແລະ ຢາກຮຽນຮູ້, ຍຸດທະສາດການຮຽນຮູ້ດ້ວຍຕົນເອງ); ຄຸນສົມບັດໃນການວາງຕົວ (ຕົວຢ່າງ, ການທົບທວນຄືນ ແລະ ການກະທຳທີ່ມີຈັນຍາບັນ, ຄວາມຮັບຮູ້ທາງສັງຄົມ ແລະ ວັດທະນະທຳ, ຮູ້ຈັກປັບຕົວ ແລະ ມີຄວາມຄິດໃໝ່ໆ); ແລະ ການແກ້ໄຂບັນຫາໃນສະພາບແວດລ້ອມທີ່ຊັບຊ້ອນ ແລະ ໃນສະພາບແວດລ້ອມທີ່ເຕັມໄປດ້ວຍເຕັກໂນໂລຢີ. ຊຸກຍູ້ການພົວພັນຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ກໍຄືການເຕົ້າໂຮມບັນດາວິສາຫະກິດ, ໂຮງຮຽນວິຊາຊີບ ແລະ ສະຫະພັນແຮງງານ ພາຍໃຕ້ກອບກົດໝາຍ ຫຼື ຊ່ອງທາງການເຮັດວຽກ ຈະສາມາດຮັບປະກັນໄດ້ວ່າການຝຶກອົບຮົມມີຄວາມສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ຊ່ວຍເສີມຂະຫຍາຍສິດ ແລະ ພັນທະຂອງຜູ້ອອກແຮງງານການຮຽນການສອນອາຊີວະສຶກສາ ຄວນໄດ້ຮັບການອອກແບບໂດຍການຮ່ວມມືຢ່າງໃກ້ຊິດກັບພາກເອກະຊົນ ແລະ ຊອກຫາແຫຼ່ງທຶນຈາກພາກເອກະຊົນ ເພື່ອຊ່ວຍໃຫ້ການຮຽນໄປຄຽງຄູ່ກັບການປະຕິບັດຕົວຈິງ ນັກຮຽນຈຶ່ງຈະມີປະສົບການ ແລະ ຂ້າມຜ່ານຈາກການຮຽນໄປສູ່ການເຮັດວຽກຢ່າງມີປະສິດທິພາບ. ຕຳແໜ່ງງານອາດຈະຢູ່ໃນຂົງເຂດເສດຖະກິດສີຂຽວ ຫຼື ເສດຖະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ, ອຸດສາຫະກຳເຕັກໂນໂລຢີ/ດິຈິຕອນ ຫຼື ຢູ່ໃນອຸດສາຫະກຳໃດໜຶ່ງສະເພາະກໍໄດ້. ໂດຍການຮ່ວມມືກັນຂອງພາກລັດ ແລະ ພາກເອກະຊົນ ຄວນຈ້າງຜູ້ຊ່ຽວຊານດ້ານອຸດສາຫະກຳ ມາສອນຊ່ວຍຄູໃນຂະແໜງອາຊີວະສຶກສາເຊິ່ງເປັນການສະໜອງຄູສອນ ແລະ ຊ່ວຍແກ້ບັນຫາຄູສອນທີ່ບໍ່ມີຄຸນນະພາບທີ່ມີຢູ່ໃນປັດຈຸບັນ ເຊິ່ງຖືເປັນການນຳໃຊ້ປະໂຫຍດຈາກປະສົບການ ແລະ ຄວາມຊຳນິຊຳນານຈາກຜູ້ຊ່ຽວຊານທີ່ຢູ່ໃນຂະແໜງອຸດສາຫະກຳ. ໄວໜຸ່ມໃນ ສປປ ລາວ ນິຍົມຮຽນຕໍ່ລະດັບມະຫາວິທະຍາໄລ ເຖິງຈະມີຄວາມຕ້ອງການທັກສະສະເພາະດ້ານໃນຫຼາກຫຼາຍຂະແໜງການກໍຕາມ. ກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສາມາດຮ່ວມມືກັນເພື່ອຈັດການໂຄສະນາ ແລະ



ເຜີຍແຜ່ຜົນສຳເລັດຂອງນັກສຶກສາທີ່ຈົບອາຊີວະສຶກສາ ແລະ ຍັງສາມາດເຮັດໃຫ້ຫຼັກສູດອາຊີວະສຶກສາມີຄວາມໜ້າສົນໃຈສຳລັບໄວໜຸ່ມຫຼາຍຂຶ້ນກວ່າເກົ່າ.

ການຫັນປ່ຽນການສຶກສາສາຍສາມັນ ຍັງເປັນການແກ້ໄຂບັນຫາການຈຳແນກທາງເພດ ແລະ ຈະເຮັດໃຫ້ແມ່ຍິງເຂົ້າຮຽນໃນສາຂາວິຊາ STEM ຫຼາຍຂຶ້ນ, ນອກຈາກນັ້ນ ການຈັດກິດຈະກຳເຜີຍແຜ່ຈະເພີ່ມໂອກາດໃນການສ້າງທັກສະສຳລັບໄວໜຸ່ມທີ່ດ້ອຍໂອກາດ ເຊັ່ນ: ໄວໜຸ່ມທີ່ມີຄວາມພິການ, ໄວໜຸ່ມຊົນເຜົ່າ ແລະ ໄວໜຸ່ມທີ່ດ້ອຍໂອກາດທາງດ້ານເສດຖະກິດ-ສັງຄົມ. ກິດຈະກຳເຜີຍແຜ່ເຫຼົ່ານີ້ຄວນຈັດຂຶ້ນໂດຍໃຫ້ໄວໜຸ່ມ ແລະ ກຸ່ມທາງສັງຄົມທີ່ຢູ່ຂັ້ນຮາກຖານໄດ້ມີສ່ວນຮ່ວມຢ່າງແທ້ຈິງ. ຂະແໜງອາຊີວະສຶກສາສາມາດນຳໃຊ້ເປົ້າໝາຍ ແລະ ໂຄຕ້າການຈ້າງງານ ສຳລັບໄວໜຸ່ມທີ່ດ້ອຍໂອກາດ.

ໃນລະດັບນະໂຍບາຍ, ລັດຖະບານນຳໃຊ້ວິທີທີ່ຫ້າວຫັນ ແລະ ຮັບປະກັນວ່າຍຸດທະສາດພັດທະນາສີມືແຮງງານ ແລະການຈ້າງງານຍັງມີຄວາມຄ່ອງຕົວ ແລະ ອຳນວຍຄວາມສະດວກໃຫ້ແກ່ການຫັນປ່ຽນດ້ານໂຄງສ້າງແທນທີ່ຈະຕອບສະໜອງການຂາດແຄນທັກສະ ແລະ ແຮງງານພຽງຢ່າງດຽວ. ອາດມີການສຶກສາ "ທັກສະໃນອະນາຄົດ" ເຊິ່ງສອດຄ່ອງກັບເສັ້ນທາງການເຕີບໂຕໃນໄລຍະຍາວທີ່ລັດຖະບານກຳລັງພິຈາລະນາ ເຊັ່ນ: ການຫັນປ່ຽນໄປສູ່ເສດຖະກິດດິຈິຕອນ ແລະ ເສດຖະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ.

### ສ້າງການປ່ຽນແປງບັນທັດຖານທາງສັງຄົມທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍ ເພື່ອບັນລຸການສ້າງຄວາມເຂັ້ມແຂງທາງເສດຖະກິດຂອງແມ່ຍິງ

ບັນທັດຖານທາງເພດເປັນປັດໄຈຫຼັກທີ່ສົ່ງຜົນຕໍ່ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດຂອງແມ່ຍິງ ເຊິ່ງມັນມີອິດທິພົນຕໍ່ການຮັບຮູ້ກ່ຽວກັບບົດບາດທີ່ເໝາະສົມສຳລັບແມ່ຍິງ ແລະ ຜູ້ຊາຍຢູ່ໃນສັງຄົມ ກໍຄືຢູ່ເຮືອນ ແລະ ໃນຂົງເຂດເສດຖະກິດ (Peters et al., 2019). ຫຼັກຖານທີ່ມີຢູ່ສະແດງໃຫ້ເຫັນວ່າ ມາດຕະຖານບົດບາດຍິງ-ຊາຍກຳລັງປ່ຽນແປງ ແລະ ປາກົດວ່າມີທັດສະນະຄະຕິທາງບວກຫຼາຍຂຶ້ນລະຫວ່າງແມ່ຍິງ ແລະ ຜູ້ຊາຍ ຕໍ່ກັບການເຮັດວຽກ ແລະ ການເຄື່ອນໄຫວຂອງແມ່ຍິງ. ການສະໜັບສະໜູນກຸ່ມແມ່ຍິງ, ກຸ່ມໄວໜຸ່ມ ແລະ ສື່ສັງຄົມອອນລາຍສາມາດສົ່ງເສີມແບບຢ່າງທີ່ດີ ຄຽງຄູ່ກັບ ການໂຄສະນາເຜີຍແຜ່ເພື່ອສະແດງໃຫ້ເຫັນການມີສ່ວນຮ່ວມທາງດ້ານເສດຖະກິດຂອງແມ່ຍິງ. ການເຜີຍແຜ່ຄວນສ້າງຈິດສຳນຶກກ່ຽວກັບການເຮັດວຽກເຮືອນ ແລະ ວຽກທີ່ບໍ່ໄດ້ຮັບຄ່າຕອບແທນຊ່ວຍແມ່ຍິງ ເຊິ່ງຖືເປັນສິ່ງສຳຄັນທີ່ເຮັດໃຫ້ແມ່ຍິງມີທາງເລືອກຫຼາຍຂຶ້ນໃນການຈ້າງງານ ແລະ ການເປັນຜູ້ປະກອບການ.

### ສ້າງການບໍລິການດ້ານວຽກເຮັດງານທຳແບບຄົບວົງຈອນຜ່ານປະຕູດຽວ ໂດຍລວມເອົາເຄື່ອງມື ແລະ ການບໍລິການທີ່ມີຢູ່ທັງໝົດມາຮວມຢູ່ຈຸດດຽວ

ສປປ ລາວ ຕ້ອງລົງທຶນໃສ່ບັນດາໂຄງການທີ່ໃຫ້ບໍລິການຈັດຫາງານ ເຊັ່ນ: ຊ່ວຍຊອກຫາວຽກເຮັດງານທຳ ແລະ ການເຂົ້າເຖິງຂໍ້ມູນຂ່າວສານຕະຫຼາດແຮງງານ, ການບໍລິການໃຫ້ຄຳປຶກສາດ້ານວຽກເຮັດງານທຳ ແລະ ໂຄງການຊ່ວຍເຫຼືອດ້ານການເງິນ. ມີຄວາມແຕກຕ່າງຢ່າງເຫັນໄດ້ຊັດເຈນກ່ຽວກັບຊ່ອງທາງທີ່ໄວໜຸ່ມໃຊ້ໃນການຊອກຫາວຽກເຮັດງານທຳ ກັບຊ່ອງທາງທີ່ນາຍຈ້າງໃຊ້ເພື່ອຊອກຫາພະນັກງານ. ໄວໜຸ່ມສ່ວນຫຼາຍຍັງອີງໃສ່ຄອບຄົວ ແລະ ເຄືອຂ່າຍສ່ວນຕົວໃນການຊອກຫາວຽກເຮັດງານທຳ ຊີ້ໃຫ້ເຫັນຄວາມບໍ່ເທົ່າທຽມກັນໃນການເຂົ້າສູ່ຕະຫຼາດແຮງງານການບໍລິການຈັດຫາງານທີ່ມີປະສິດທິພາບຈະຊ່ວຍໃຫ້ເຂົາເຈົ້າຊອກຫາວຽກທີ່ມີຄຸນນະພາບ ແລະ ສອດຄ່ອງກັບຄວາມມຸ່ງຫວັງ ແລະ ທັກສະຂອງເຂົາເຈົ້າ ໄດ້ໄວຂຶ້ນ (Mazza, 2017). ການບໍລິການຈັດຫາງານຂອງລັດຖະບານແມ່ນຊ່ອງທາງທີ່ສຳຄັນໃນການເພີ່ມການມີສ່ວນຮ່ວມໃນຕະຫຼາດແຮງງານ, ຊ່ວຍເຮັດໃຫ້ການປ່ຽນວຽກ ແລະ ປ່ຽນສາຍອາຊີບມີຜົນສຳເລັດ ພ້ອມທັງເຮັດໃຫ້ມີຄວາມໂປ່ງໃສຫຼາຍຂຶ້ນໃນຕະຫຼາດງານແຮງ.ຜູ້ໃຫ້ບໍລິການດ້ານວຽກເຮັດງານທຳສາມາດຮ່ວມມືກັບສະຫະພັນກຳມະບານ, ກຸ່ມໄວໜຸ່ມ ແລະ ອົງການຈັດຕັ້ງທາງສັງຄົມເພື່ອຮັດໃຫ້ລະບົບການຈ້າງງານຂອງພາກລັດ ແລະ ເອກະຊົນມີຄວາມຍຸຕິທຳຫຼາຍຂຶ້ນ ໂດຍຜ່ານຊ່ອງທາງການບໍລິການຈຸດດຽວ, ການໂຄສະນາຜ່ານສື່ສັງຄົມອອນລາຍ ແລະ ການຝຶກອົບຮົມທີ່ມີເປົ້າໝາຍໃຫ້ແກ່ນາຍຈ້າງເພື່ອເຮັດໃຫ້ມາດຕະຖານການຈ້າງງານມີຄວາມຍຸຕິທຳ ແລະ ມີສ່ວນຮ່ວມ. ຫຼາຍປະເທດກຳລັງປັບປຸງການບໍລິການດ້ານການຈັດຫາງານຂອງພາກລັດ ໃຫ້ທັນສະໄໝຂຶ້ນດ້ວຍການນຳໃຊ້ເຕັກໂນໂລຢີໃໝ່. ຕົວຢ່າງ ລັດຖະບານອິນເດຍໄດ້ປັບປຸງລະບົບການຈ້າງງານ ແລະ ສ້າງຖານຂໍ້ມູນອອນລາຍກ່ຽວກັບວຽກ ຊື່ວ່າ National Career Service ເຊິ່ງໄດ້ນຳເອົາຫຼາຍພາກສ່ວນມາຮ່ວມເຂົ້າກັນ ເຊັ່ນ: ບັນດານາຍຈ້າງ, ຜູ້ຊອກວຽກ, ອົງການ NGO, ສະຖາບັນການຝຶກອົບຮົມ, ຜູ້ຊ່ຽວຊານໃນການແນະນຳດ້ານວິຊາຊີບ, ທີ່ປຶກສາດ້ານອາຊີບ ແລະ ຊ່າງຫັດຖະກຳ

ທ້ອງຖິ່ນທີ່ເຮັດວຽກຢູ່ໃນເສດຖະກິດນອກລະບົບ. ກະຊວງແຮງງານຂອງເປຣູ ໄດ້ນຳສະເໜີແຜລດຟອມອອນໄລນ໌ ທີ່ຮັບຮອງຄວາມຖືກຕ້ອງຂອງຂໍ້ມູນສ່ວນຕົວຂອງຜູ້ສະໝັກວຽກ (ອາຍຸ 18-29 ປີ) ພ້ອມທັງອອກໃບຢັ້ງຢືນໃຫ້ແກ່ໄວໜຸ່ມໂດຍບໍ່ມີຄ່າໃຊ້ຈ່າຍ. ໃນໃບຢັ້ງຢືນດັ່ງກ່າວມີຂໍ້ມູນທີ່ນາຍຈ້າງຕ້ອງການ ເຊັ່ນ: ຂໍ້ມູນສ່ວນຕົວ, ການສຶກສາ, ໃບແຈ້ງໂທດ ແລະ ປະສົບການໃນການເຮັດວຽກ (ILO, 2020a)

ຈຸດບໍລິການຈັດຫາງານທີ່ມີຢູ່ແລ້ວ ໃນ ສປປ ລາວ ຄວນເຊື່ອມໂຍງກັບລະບົບຂໍ້ມູນຂ່າວສານຕະຫຼາດແຮງງານແຫ່ງຊາດ ຄຽງຄູ່ກັບ ການປັບປຸງການບໍລິການ ແລະ ການດຳເນີນງານ. ຄຳແນະນຳສະເພາະລວມມີ: ສຶກສາວ່າຊ່ອງທາງການຈັດຫາງານອອນລາຍທີ່ມີຢູ່ໃນປັດຈຸບັນ ມີຄວາມຫຍຸ້ງຍາກແນວໃດ ແລ້ວຈາກນັ້ນ ກໍພັດທະນາແອັບມືຖືທີ່ສົມບູນແບບ ໂດຍຮວບຮວມເອົາເຄື່ອງມືຕ່າງໆທີ່ມີຢູ່ແລ້ວເຂົ້າໃນແອັບໃໝ່. ການສ້າງແອັບມືຖືຈະສະໜອງການບໍລິການຈຸດດຽວໃຫ້ແກ່ໄວໜຸ່ມ ເຊິ່ງໃນນັ້ນຈະລວມມີ ຂໍ້ມູນຕະຫຼາດແຮງງານ, ປະກາດຮັບສະໝັກງານ, ການແຈ້ງເຕືອນກ່ຽວກັບວຽກງານ ແລະ ການສະໝັກວຽກຜ່ານຊ່ອງທາງອອນລາຍ ລວມໄປເຖິງ ການໃຫ້ຄຳແນະນຳ ແລະ ປຶກສາກ່ຽວກັບສາຍອາຊີບ ເພື່ອເປັນຊ່ອງທາງເຊື່ອມຈອດລະຫວ່າງນາຍຈ້າງ ແລະ ລູກຈ້າງ. ການບໍລິການຈຸດດຽວສາມາດດຳເນີນການເປັນວິສາຫະກິດເພື່ອສັງຄົມທີ່ນຳພາໂດຍໄວໜຸ່ມ, ເຊິ່ງຈະໄດ້ອະທິບາຍວິທີການນີ້ເພີ່ມຕື່ມໃນບົດທີ 6.

### ເພີ່ມຜູ້ປະກອບການໄວໜຸ່ມໃນອຸດສາຫະກຳທີ່ເນັ້ນໃສ່ເຕັກໂນໂລຢີ ແລະ ເປັນມິດຕໍ່ສິ່ງແວດລ້ອມ

ການໝູນໃຊ້ການປະກອບການໃນເສດຖະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ດິຈິຕອນ ສາມາດບັນລຸໄດ້ ຜ່ານການປະຕິບັດ 3 ຂໍ້ຄື: ທຳອິດແມ່ນການປູກຈິດສຳນຶກ ແລະ ປັບປຸງການພັດທະນາຄວາມສາມາດ ໃນດ້ານວັດທະນະທຳ ແລະ ຮູບແບບຂອງທຸລະກິດກ່ຽວກັບເຕັກໂນໂລຢີ ແລະ ທຸລະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ ເຊັ່ນ: ທຸລະກິດສະຕາດອັບ ແລະ ທຸລະກິດປະກອບການທາງສັງຄົມຂອງໄວໜຸ່ມ. ໂດຍນຳໃຊ້ຮູບແບບ webinars, ເວທີສົນທະນາ ແລະ ການຝຶກອົບຮົມທີ່ໄວໜຸ່ມສາມາດຮຽນຮູ້ໄດ້ດ້ວຍຕົນເອງ.

ດ້ານທີ 2 ແມ່ນແນໃສ່ສ້າງສະພາບແວດລ້ອມສຳລັບການລົງທຶນໃນວິສາຫະກິດສະຕາດອັບ ແລະ ວິສາຫະກິດທີ່ເປັນມິດຕໍ່ສິ່ງແວດລ້ອມ ລວມມີການອຳນວຍຄວາມສະດວກສູ່ໂອກາດການລົງທຶນໂດຍຜ່ານການລະດົມທຶນ, ກອງທຶນສຳລັບການລົງທຶນທີ່ສ້າງຜົນກະທົບ ແລະ ການຮ່ວມລົງທຶນ ແລະ ໂດຍຜ່ານການໂຄສະນາມາດຕະຖານຜົນກະທົບຕໍ່ສັງຄົມ ລະຫວ່າງສະຖາບັນການເງິນ. ແຮງຈູງໃຈຈາກລັດຖະບານສາມາດຊຸກຍູ້ບັນດາສະຖາບັນການເງິນ ໃຫ້ປ່ຽນບົດບາດຂອງຕົນເອງ ຈາກການເປັນ'ຜູ້ສະໜອງ' ໄປສູ່ການເປັນ 'ຜູ້ເຮັດໃຫ້ເກີດການປ່ຽນແປງ' ໂດຍຜ່ານການບໍລິການທາງດ້ານການເງິນທີ່ແຕກຕ່າງ ແລະ ສ້າງສັນ ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ກໍຄື ຜູ້ປະກອບການໄວໜຸ່ມ. ໃຫ້ບໍລິການທີ່ເໝາະສົມແກ່ທຸລະກິດຂະໜາດນ້ອຍ ເຊັ່ນ: ເງິນກູ້ທຶນໝູນວຽນຂອງລັດຖະບານ, ການໂຈະການຈ່າຍພາສີ, ການເລື່ອນການຊຳລະຄືນ ແລະ/ຫຼື ການສະໜັບສະໜູນການຈ້າງງານ ເຊິ່ງອາດຈະສະໜອງການບໍລິການໜຶ່ງຢ່າງ ຫຼື ຫຼາຍຢ່າງລວມກັນ ຕາມຄວາມເໝາະສົມກັບທຸລະກິດຂະໜາດນ້ອຍ. ຄວາມພະຍາຍາມດັ່ງກ່າວຈະຊ່ວຍໃຫ້ຫົວໜ່ວຍທຸລະກິດຂະໜາດນ້ອຍທີ່ມີຄວາມສຳຄັນ ແຕ່ບໍ່ມີເງິນທຶນພຽງພໍທີ່ຈະຕ້ານທານກັບພະຍາດລະບາດທີ່ຍັງບໍ່ທັນສິ້ນສຸດ ໃຫ້ສາມາດດຳເນີນຕໍ່ໄປໄດ້ ພ້ອມທັງເປັນການຊ່ວຍເຫຼືອຜູ້ປະກອບ ການໄວໜຸ່ມໃຫ້ສາມາດດຳເນີນທຸລະກິດໄດ້.

ທະນາຄານສາມາດສະໜັບສະໜູນວິສາຫະກິດ ແລະ ຜູ້ປະກອບການຂະໜາດນ້ອຍ ແລະ ກາງໄດ້ຕື່ມອີກ ໂດຍຜ່ານການບໍລິການດ້ານດິຈິຕອນ, ການໃຫ້ບໍລິການທີ່ບໍ່ຕ້ອງໃຊ້ເອກະສານ ແລະ ບໍ່ຕ້ອງດຳເນີນການຜ່ານສາຂາຂອງທະນາຄານ, ການທຳທຸລະກຳຜ່ານການສົນທະນາ ແລະ ການໃຫ້ຄຳແນະນຳທາງວິດີໂອ ແລະ ເຂົ້າເຖິງພະນັກງານທະນາຄານທີ່ກ່ຽວຂ້ອງໄດ້ງ່າຍຂຶ້ນ. ການບໍລິການເຫຼົ່າຈະເຮັດໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເລີ່ມດຳເນີນງານ ແລະ ປະສົບຜົນສຳເລັດໄວຂຶ້ນ ເຊິ່ງຈະເຮັດໃຫ້ຜົນປະກອບການຂອງທະນາຄານດີຂຶ້ນເຊັ່ນກັນ, ຈາກນັ້ນ ເສດຖະກິດກໍຈະຄວາມເຂັ້ມແຂງຂຶ້ນ ແລະ ໃນທີ່ສຸດກໍຈະນຳໄປສູ່ການຫັນປ່ຽນດ້ານໂຄງສ້າງ.

ຄຳແນະນຳທີ 3 ແມ່ນສະໜອງການບໍລິການໃຫ້ແກ່ການພັດທະນາເສດຖະກິດ ແລະ ໂຄງການສະໜັບສະໜູນທາງດ້ານການເງິນ ແລະ ດ້ານວິຊາການອື່ນໆ ເຊິ່ງຈະກວມເອົາສິ່ງທ້າທາຍຂອງທຸລະກິດສະຕາດອັບ, ສິ່ງທ້າທາຍດ້ານນະວັດຕະກຳທາງສັງຄົມ ແລະ ສະຖານທີ່ຝຶກອົບຮົມ. ນອກເໜືອໄປຈາກການພັດທະນາຜູ້ປະກອບການ, ຕ້ອງອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງຕະຫຼາດ (ທັງພາຍໃນ ແລະ ຕ່າງປະເທດ), ເຕັກໂນໂລຊີ ແລະ ພື້ນຖານໂຄງລ່າງ ເພື່ອໃຫ້ວິສາຫະກິດຂະໜາດກາງ ແລະ ນ້ອຍທີ່ນຳພາ ແລະ ຂັບເຄື່ອນໂດຍໄວໜຸ່ມ ໄດ້ຮັບການພັດທະນາ.

ຄວນເອົາໃຈໃສ່ເປັນພິເສດໃນການເຂົ້າເຖິງກຸ່ມປະຊາກອນທີ່ດ້ອຍໂອກາດແບບດັ້ງເດີມ ເຊັ່ນ: ວິສາຫະກິດຂະໜາດກາງ ແລະ ນ້ອຍທີ່ແມ່ຍິງເປັນເຈົ້າຂອງ ຫຼື ວິສາຫະກິດຂະໜາດນ້ອຍຢູ່ຊົນນະບົດ. ຜູ້ປະກອບການຍິງໜຸ່ມໄດ້ຮຽກຮ້ອງໃຫ້ມີຊ່ອງທາງການເຂົ້າເຖິງຂໍ້ມູນຂ່າວສານ ແລະ ໃຫ້ມີທີ່ປຶກສາເພື່ອຊ່ວຍເຂົາເຈົ້າໃນການເລີ່ມຕົ້ນ ແລະ ຂະຫຍາຍທຸລະກິດ (ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ອົງການຢູນິເຊັບ, 2021) ນະໂຍບາຍທີ່ກຳລັງຮ່າງໂດຍພະແນກພັດທະນາຜູ້ປະກອບການ ພາຍໃຕ້ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ອາດຈະລວມເອົາກໍລະນີສຶກສາ ແລະ ຕົວຢ່າງການປະຕິບັດທີ່ດີທີ່ສຸດ ຂອງບັນດາທຸລະກິດສະຕາດອັບ ເຮັດໃຫ້ເກີດຄວາມເຂົ້າໃຈວິທີການເຮັດວຽກ ແລະ ວິທີທີ່ຈະປະສົບຜົນສຳເລັດຂອງທຸລະກິດເຫຼົ່ານີ້.

## 2.7 ບົດສະຫຼຸບ

ການພັດທະນາມະນຸດຕ້ອງການທັງການສ້າງຄວາມສາມາດ ແລະ ການນຳໃຊ້ຄວາມສາມາດເຫຼົ່ານັ້ນໂດຍຜ່ານການຈ້າງງານທີ່ເໝາະສົມ ເພື່ອຮັບປະກັນການຈ້າງງານທີ່ມີຄຸນນະພາບໃຫ້ແກ່ໄວໜຸ່ມໃນ ສປປ ລາວ, ກອບນະໂຍບາຍຮອບດ້ານຄວນພິຈາລະນາອະນາຄົດຂອງວຽກງານ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ການຈ້າງງານໃນຂະແໜງການຕ່າງໆ ເຊິ່ງມັນຈະຊ່ວຍຊຸກຍູ້ໃຫ້ເກີດຄວາມຍືນຍົງໃນບຸກຄົນ, ການເຕີບໂຕຂອງວຽກເຮັດງານທຳແບບຍືນຍົງ ແລະ ເລັ່ງໃຫ້ເກີດການຫັນປ່ຽນດ້ານໂຄງສ້າງ.

ການປັບປຸງຄຸນນະພາບຂອງວຽກງານກໍມີຄວາມສຳຄັນເຊັ່ນດຽວກັນ ໂດຍຫຼຸດຜ່ອນປາກົດການການຈ້າງງານທີ່ບໍ່ພຽງພໍກັບຄວາມຕ້ອງການ, ການຈ້າງງານທີ່ມີຄວາມສ່ຽງ ລວມເຖິງ ການມີຜົນຜະລິດ ແລະ ລາຍໄດ້ຕໍ່າ. ການລົງທຶນໃນຂະແໜງເສດຖະກິດທີ່ສາມາດສ້າງວຽກເຮັດງານທຳທີ່ເໝາະສົມທີ່ສຸດ ແລະ ຕອບສະໜອງຄວາມມຸ່ງມາດປາຖະໜາຂອງໄວໜຸ່ມ ຄວນໄປຄຽງຄູ່ກັບຄວາມພະຍາຍາມທີ່ຈະຂະຫຍາຍ ແລະ ຍົກສູງຄຸນນະພາບຂອງການຮຽນອາຊີວະສຶກສາ ແລະ ການຮຽນຮູ້ຈາກປະສົບການເຮັດວຽກ ເພື່ອສ້າງໄວໜຸ່ມໃຫ້ມີທັກສະທີ່ພຽງພໍ ແລະ ເໝາະສົມ ທີ່ຈະສາມາດແຂ່ງຂັນກັບຄົນອື່ນໃນບ່ອນເຮັດວຽກໄດ້. ທັງໝົດນີ້ຈະຊ່ວຍຫຼຸດຜ່ອນຄວາມທ້າທາຍຈາກທຶນມະນຸດທີ່ອ່ອນແອ ແລະ ບັນຫາການມີທັກສະທີ່ບໍ່ກົງກັບຄວາມຕ້ອງການຂອງຕະຫຼາດແຮງງານຂອງໄວໜຸ່ມ ແລະ ໃນທີ່ສຸດ ໄວໜຸ່ມຈະສາມາດຊອກວຽກທີ່ດີທີ່ເຂົາເຈົ້າເລືອກເອງ ແລະ ເຮັດວຽກນັ້ນຢ່າງມີປະສິດທິຜົນ.

ການຈ້າງງານຂອງໄວໜຸ່ມແມ່ນເປັນບັນຫາທີ່ສຳຄັນທີ່ສຸດຕໍ່ອະນາຄົດຂອງເສດຖະກິດ ແລະ ສັງຄົມໃນ ສປປ ລາວ. ຄວາມສາມາດທີ່ຈະດຶງເອົາແຮງງານໄວໜຸ່ມທີ່ຫ້າວຫັນ ແລະ ມີທັກສະເຂົ້າສູ່ຕະຫຼາດແຮງງານ ສາມາດຂັບເຄື່ອນການເຕີບໂຕໃນອະນາຄົດ ແລະ ສາມາດນຳໃຊ້ຄວາມໄດ້ປຽບທີ່ເກີດຈາກການປ່ຽນແປງໂຄງສ້າງອາຍຸຂອງປະຊາກອນຂອງປະເທດ ເຊິ່ງສາມາດຊ່ວຍເຄື່ອນຍ້າຍປະເທດໄປສູ່ເສັ້ນທາງການຂະຫຍາຍຕົວແບບຍືນຍົງ ແລະ ມີສ່ວນຮ່ວມຫຼາຍກວ່າເກົ່າ, ໂດຍອີງໃສ່ການຫັນເປັນສີຂຽວ ແລະ ດິຈິຕອນ. ຢ່າງໃດກໍຕາມ, ເພື່ອໃຫ້ສິ່ງເຫຼົ່ານີ້ເກີດເປັນຈິງ ກິດຈະກຳຕ່າງໆທີ່ໄດ້ແນະນຳຢູ່ໃນບົດນີ້ ຄວນໄດ້ຮັບການຈັດຕັ້ງປະຕິບັດທັນທີ.

# ເອກະສານອ້າງອີງ

ADB (Asian Development Bank). 2011. Towards Higher Quality Employment in Asia. https://www.adb.org/sites/default/files/publication/29009/ki2011-special-chapter.pdf

———. 2019. Analysis Of Human Capital and Labor Force Participation. https://www.adb.org/sites/default/files/linked-documents/50399-003-sd-03.pdf

ADB (Asian Development Bank) and LNCCI (the Lao National Chamber of Commerce and Industry). 2022. Provincial Facilitation for Investment and Trade Index: Measuring Economic Governance for Business Development in the Lao People's Democratic Republic, Second Edition. https://www.adb.org/sites/default/files/publication/781701/economic-governance-business-development-lao-pdr.pdf

———. 2019. Provincial Facilitation of Investment and Trade Survey.

ASEAN (Association of Southeast Asian Nations). 2021. Human Resources Development Readiness in ASEAN: Lao PDR Country Report. https://asean.org/wp-content/uploads/2021/10/Lao-PDR-HRD-Country-Report-Final-1.pdf

Barford, A., A. Coutts and G. Sahai. 2021. Youth Employment in Times of COVID: A global review of COVID-19 policy responses to tackle (un)employment and disadvantage among young people. International Labor Organization. http://www.ilo.org/wcmsp5/groups/public/---ed_emp/documents/publication/wcms_823751.pdf

Cramer, C. 2011. Unemployment and Participation in Violence. Washington, DC: World Bank. https://openknowledge.worldbank.org/handle/10986/9247

Government of Lao PDR. 2011. The Promotion of Small and Medium Sized Enterprises Law (No. 011/NA). Government Gazette.

———. 2013a. Labour Law (No. 43/NA). Government Gazette.

———. 2013b. Social Security Law (No. 34/NA). Government Gazette.

———. 2018. Voluntary National Review on the Implementation of the 2030 Agenda for Sustainable Development. Vientiane. https://sustainabledevelopment.un.org/content/documents/19385Lao_Final_VNR_19_June_2018_web.pdf

———. 2022. Ninth Five-Year National Socio-Economic Development Plan (2021-2025). Vientiane. https://data.opendevelopmentmekong.net/library_record/9th-five-year-national-socio-economic-development-plan-2021-2025

IFC (International Finance Corporation). 2018. Banks' Offerings Back Women Entrepreneurs in Lao PDR. https://www.ifc.org/wps/wcm/connect/news_ext_content/ifc_external_corporate_site/news+and+events/news/impact-stories/banks-offerings-back-women-entrepreneurs-lao-pdr

ILO (International Labor Organization).2008. Measurement of Decent Work, Discussion Paper for the Tripartite Meeting of Experts on the Measurement of Decent Work. https://www.ilo.org/wcmsp5/groups/public/---dgreports/---integration/documents/meetingdocument/wcms_098027.pdf

———. 2020a. Global Employment Trends for Youth 2020: Technology and the Future of Jobs. https://www.ilo.org/wcmsp5/groups/public/---dgreports/---dcomm/---publ/documents/publication/wcms_737648.pdf

———. 2020b. Asia-Pacific Employment and Social Outlook: Navigating the Crisis Towards a Human-Centered Future of Work. https://www.ilo.org/wcmsp5/groups/public/---asia/---ro-bangkok/---sro-bangkok/documents/publication/wcms_764084.pdf

———. 2020c. Recruitment Fees and Related costs: What migrant workers from Cambodia, the Lao People's Democratic Republic, and Myanmar pay to work in Thailand. Bangkok. https://www.ilo.org/wcmsp5/groups/public/---asia/---ro-bangkok/documents/publication/wcms_740400.pdf

———. 2022a. Youth Employment, Decent Work for Sustainable Development (DW4SD). https://www.ilo.org/global/topics/dw4sd/themes/youth-employment/lang--en/index.htm

———. 2020b. ILOSTAT. ILO modelled estimates database. Accessed 14 September 2022. https://ilostat.ilo.org/data/

———. 2022c. Lao PDR (TRIANGLE in ASEAN Quarterly Briefing Note). Bangkok. https://www.ilo.org/wcmsp5/groups/public/---asia/---ro-bangkok/documents/genericdocument/wcms_735106.pdf

IOM (International Organization for Migration). 2020. An Analysis of Migration Trends of Lao Migrants for Lao People's Democratic Republic in Two Selected Provinces: Savannakhet and Xayaboury. Vientiane. https://publications.iom.int/system/files/pdf/Analysis-MIG-Trends-Lao.pdf

IOM (International Organization for Migration) and ILO (International Labor Organization). 2017. Risks and Rewards: Outcomes of labour migration in South-East Asia. Bangkok. https://eea.iom.int/sites/g/files/tmzbdl666/files/documents/Risks%20and%20Rewards%20-%20Outcomes%20of%20Labour%20Migration%20in%20South-East%20Asia.pdf

The Global Green Growth Institute. 2017. Green Growth Potential Assessment: Lao PDR Country Report. https://gggi.org/report/green-growth-potential-assessment-lao-pdr-country-report/

LSB (Lao Statistics Bureau). 2017. Lao Social Indicator Survey II (LSIS II). https://www.unicef.org/laos/reports/lao-social-indicator-survey-lsis-2017

———. 2018. Labor Force Survey 2017. http://lmi.gov.la/Download/Labor%20force_report%20%2022%20june_ENG.pdf

Mazza, J. 2017. Labor Intermediation Services in Developing Economies. London: Palgrave Macmillan Books.

MCT (Ministry of Technology and Communications). 2021. 2021 Technology and Communications Sector Statistics Book. Vientiane. https://mtc.gov.la/index.php?r=site%2Fdetail&id=908

MPI (Ministry of Planning and Investment) and UNFPA (United Nations Population Fund). 2020. Window of Opportunity for Realizing a Demographic Dividend. https://lao.unfpa.org/sites/default/files/pub-pdf/dd_brief_eng.pdf

OECD (Organisation for Economic Co-operation and Development). 2016. How Good is Your Job? Measuring and Assessing Job Quality. Paris. https://www.oecd.org/sdd/labour-stats/Job-quality-OECD.pdf

Peters, H. E., S. Adelstein and R. Abare. 2019. Gender Norms and Women's Economic Empowerment in Low-Income Countries: What We Learned by Reviewing the Evidence. Urban Institute. https://www.urban.org/urban-wire/gender-norms-and-womens-economic-empowerment-low-income-countries-what-we-learned-reviewing-evidence

UNDESA (United Nations Department of Economic and Social Affairs). 2020. Exploring Youth Entrepreneurship. https://sdgs.un.org/publications/exploring-youth-entrepreneurship-24572

UNDP (United Nations Development Programme). 2015. Human Development Report 2015: Work for Human Development. New York. https://hdr.undp.org/system/files/documents/2015humandevelopmentreportpdf_1.pdf

———. 2021a. Youth Unemployment Issues in Lao PDR. Vientiane. https://www.undp.org/laopdr/publications/report-youth-unemployment-issues-lao-pdr

———. 2021b. Circular GHG mitigation opportunities Lao PDR A metabolic approach. Vientiane. https://shiftingparadigms.nl/wp-content/uploads/2021/11/Circular-climate-action-in-Lao-PDR.pdf

———. 2022a. 2022 Special Report on Human Security. New York. https://hdr.undp.org/content/2022-special-report-human-security

———. 2022b. 2021/2022 Human Development Report: Uncertain Times, Unsettled Lives: Shaping our Future in a Transforming World. New York. https://hdr.undp.org/system/files/documents/global-report-document/hdr2021-22pdf_1.pdf

UNDP (———.2009. The Fourth National Human Development Report of Lao PDR: Employment and Livelihood. Vientiane. https://hdr.undp.org/system/files/documents//laonhdr2009enpdf.pdf

United Nations Development Programme) and UNICEF (United Nations Children's Fund). 2021. Addressing Gender Barriers to Entrepreneurship and Leadership Among Girls and Young Women in South-East Asia. Bangkok. https://www.undp.org/publications/addressing-gender-barriers-entrepreneurship-and-leadership-among-girls-and-young-women

UNDP (United Nations Development Programme) and MPI (Ministry of Planning and Investment) 2009. Fourth National Human Development Report: Employment and Livelihood. Vientiane. https://hdr.undp.org/system/files/documents//laonhdr2009enpdf.pdf

UNESCO (United Nations Educational, Scientific and Cultural Organization) and UNEVOC (International Centre for Technical and Vocational Education and Training). 2020. TVET Country Profile: Lao PDR. https://unevoc.unesco.org/pub/lao_tvet_country_profile.pdf

UNSDG (United Nations Sustainable Development Group). 2021. Coming Home During COVID-19: The Story of Noi, a Returning Migrant. https://unsdg.un.org/latest/stories/coming-home-during-covid-19-story-noi-returning-migrant

World Bank. 2014. East Asia Pacific at Work: Employment, Enterprise, and Well-being. Washington, DC. https://www.worldbank.org/content/dam/Worldbank/document/EAP/region/east-asia-pacific-at-work-full-report.pdf

———. 2017. Doing Business Economy Profile 2017: Lao People's Democratic Republic. Washington, DC. https://openknowledge.worldbank.org/handle/10986/25557

———. 2018. Enterprise Survey, Lao PDR. https://microdata.worldbank.org/index.php/catalog/3581

———. 2020. Lao People's Democratic Republic, Human Capital Index 2020. https://databank.worldbank.org/data/download/hci/HCI_2pager_LAO.pdf

———. 2021a. Lao PDR Economic Monitor August 2021. Vientiane. https://pubdocs.worldbank.org/en/147871629861334356/Lao-PDR-Economic-Monitor-August-2021

———. 2021b. Lao PDR Economic Monitor: Supporting Economic Recovery - Thematic Section: livelihoods in the time of COVID-19. Bangkok. https://pubdocs.worldbank.org/en/306131610167443727/Lao-PDR-Economic-Monitor-January-2021-Supporting-Economic-Recovery-Thematic-section-Livelihoods-in-the-Time-of-COVID-19.pdf

———. 2021c. Systematic Country Diagnostic Lao PDR, 2021 update. https://documents.worldbank.org/en/publication/documents-reports/documentdetail/525331657067519545/lao-peoples-democratic-republic-systematic-country-diagnostic-update

———. 2022. Linking Laos, Unlocking Policies: Lao PDR Country Economic Memorandum. Washington, DC. https://thedocs.worldbank.org/en/doc/e2126e24b45be8bbc35fdc6fc8374094-0360012022/original/Laos-CEM-Full-Report-ENG-Linking-Laos-Unlocking-Policies.pdf






# ບົດທີ 3 ການສຶກສາ ແລະ ການພັດທະນາທັກສະສີມືແຮງງານ

ການສຶກສາແມ່ນເປັນຫຼາຍກ່ວາການສະສົມຄວາມຮູ້; ເປັນພື້ນທີ່ໃຫ້ນັກຮຽນ ນັກສຶກສາໄດ້ສ້າງຄວາມສາມາດ ແລະ ພັດທະນາທັກສະແນວຄິດການວິເຄາະ, ເພື່ອກະກຽມເຂົ້າສູ່ຕະຫຼາດແຮງງານ, ສ້າງຕົວຕົນເພື່ອປະກອບສ່ວນເຂົ້າໃນສັງຄົມໂດຍລວມ ແລະ ຮັບຮູ້ຜົນສຳເລັດສ່ວນຕົວ. ການສຶກສາຍັງມີຄວາມສຳຄັນຢ່າງຍິ່ງຕໍ່ການພັດທະນາຂອງ ສປປ ລາວ, ຊ່ວຍພັດທະນາ ແລະ ປັບປຸງຜົນຜະລິດທາງດ້ານແຮງງານ ແລະ ສຸຂະພາບ (Muennig, 2007). ນອກຈາກນີ້ແລ້ວ, ອະນາຄົດຂອງ ສປປ ລາວ, ໂດຍອີງໃສ່ຂະໜາດຄວາມໄດ້ປຽບທາງດ້ານປະຊາກອນທີ່ມີ, ແມ່ນຂຶ້ນກັບປະເພດ ແລະ ຄຸນນະພາບຂອງການສຶກສາທີ່ໄວໜຸ່ມລາວໄດ້ຮັບໃນມື້ນີ້.

ເຖິງວ່າການສຶກສາຈະມີບົດບາດອັນສຳຄັນ, ໄວໜຸ່ມໃນ ສປປ ລາວ ຍັງປະສົບກັບຊ່ອງຫວ່າງທາງດ້ານການເຂົ້າເຖິງໂອກາດ, ການປະສົບຜົນສຳເລັດ ແລະ ການພັດທະນາສີມືແຮງງານ, ເນື່ອງຈາກບັນຫາທາງດ້ານຄ່າໃຊ້ຈ່າຍ, ແລະ ຍິ່ງໄປກວ່ານັ້ນໃນປະຈຸບັນນີ້ ມີສິ່ງກີດຂວາງທີ່ບໍ່ເຄີຍເກີດຂຶ້ນມາກ່ອນຈາກພະຍາດໂຄວິດ-19. ບັນຫາທັງໝົດທີ່ກ່າວມານີ້ ຍິ່ງທະວີຄວາມຮ້າຍແຮງຂຶ້ນ ສຳລັບໄວໜຸ່ມທີ່ມາຈາກພື້ນຖານເສດຖະກິດ-ສັງຄົມ ແລະ ຊົນເຜົ່າທີ່ດ້ອຍໂອກາດ, ແລະ ສຳລັບຜູ້ທີ່ຕ້ອງປະເຊີນກັບອຸປະສັກຕ່າງໆທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍ ແລະ/ຫຼື ຜູ້ທີ່ມີຄວາມພິການ. ປັດຈຸບັນ, ລະບົບການສຶກສາຍັງຖືວ່າບໍ່ທັນໄດ້ກຽມຄວາມພ້ອມໃຫ້ໄວໜຸ່ມໄດ້ດີເທື່ອ ໃນການເຂົ້າສູ່ຕະຫຼາດແຮງງານ, ທັງນີ້ຍັງບໍ່ທັນໄດ້ເວົ້າເຖິງການໃຫ້ໂອກາດແກ່ໄວໜຸ່ມໃນການຮັບຮູ້ຄວາມສາມາດ ແລະ ສັກກະຍະພາບຂອງຕົນ. ການແກ້ໄຂບັນຫາທາງດ້ານການສຶກສາຈຶ່ງເປັນກຸນແຈສຳຄັນໃນການປົດລັອກທ່າແຮງຂອງການລົງທຶນອື່ນໆ ບໍ່ວ່າຈະເປັນດ້ານສຸຂະພາບ, ການຈ້າງງານ ແລະ ການເຂົ້າຮ່ວມໃນຕະຫຼາດແຮງງານ.

ເຖິງແມ່ນວ່າໂລກລະບາດຈະມີແນວໂນ້ມຫຼຸດລົງ, ແຕ່ຄວາມຄືບໜ້າໂດຍລວມຂອງໂລກໃນການບັນລຸຕາມແຜນການພັດທະນາແບບຍືນຍົງປີ 2030 ແມ່ນບໍ່ເປັນໄປຕາມແຜນ. ເມື່ອຈຸດສິ້ນສຸດຂອງເປົ້າໝາຍການພັດທະນາແບບຍືນຍົງ (SDGs) ທີ່ຕັ້ງໄວ້ໄດ້ໃກ້ເຂົ້າມາ, ການລົງທຶນໃນການສຶກສາຄວນຖືເປັນວຽກງານບຸລິມະສິດ, ໂດຍ ສປປ ລາວ ຕ້ອງໃຫ້ຄວາມຮີບດ່ວນເປັນພິເສດ ເນື່ອງຈາກປະຊາກອນໄວໜຸ່ມທີ່ນັບມື້ນັບເພີ່ມຂຶ້ນ ໃນຂະນະທີ່ລະດັບລາຍຈ່າຍດ້ານວຽກງານການສຶກສາຂ້ອນຂ້າງຕໍ່າ. ວິທີການໃນການພັດທະນາມະນຸດແມ່ນອີງໃສ່ການເຊື່ອມໂຍງລະຫວ່າງການສຶກສາ, ຄວາມສາມາດຂອງໄວໜຸ່ມ ແລະ ບັນດາທາງເລືອກຂອງເຂົາ ລວມທັງໂອກາດຕ່າງໆໃນຕະຫຼອດໄລຍະການດຳເນີນຊີວິດທີ່ເກີດຂຶ້ນ. ວິທີການນີ້ເຮັດໃຫ້ເຫັນວ່າການສຶກສາຈະເປີດເສັ້ນທາງຕ່າງໆໃຫ້ແກ່ໄວໜຸ່ມທີ່ຈະນຳໄປສູ່ການພັດທະນາແບບຍືນຍົງ.

ສປປ ລາວ ຕ້ອງດຳເນີນມາດຕະການທີ່ມີຄວາມໝາຍ, ຕອບສະໜອງຕາມຄວາມຕ້ອງການທີ່ຈຳເປັນ ແລະ ຮີບດ່ວນ ເພື່ອເພີ່ມຈຳນວນ, ເພີ່ມການເຂົ້າເຖິງ ແລະ ຄຸນນະພາບຂອງການສຶກສາ, ແລະ ເພື່ອໃຫ້ການສຶກສາ ແລະ ການພັດທະນາສີມືແຮງງານ ກົງກັບຄວາມຕ້ອງການຂອງຕະຫຼາດ, ນີ້ຖືວ່າແມ່ນໜຶ່ງໃນບັນຫາຫຼັກອື່ນໆ. ຖ້າບໍ່ດັ່ງນັ້ນ, ຄວາມລົ້ມເຫຼວໃນວຽກງານການປັບປຸງພັດທະນາການສຶກສາຈະສົ່ງຜົນສະທ້ອນຮ້າຍແຮງຕໍ່ໄວໜຸ່ມ ແລະ ສັງຄົມ ແລະ ເສດຖະກິດໃນວົງກວ້າງໃນຫຼາຍທົດສະວັດຂ້າງໜ້າ. ບົດນີ້ແມ່ນເນັ້ນໃສ່ບັນຫາສຳຄັນໃນວຽກງານການສຶກສາ ແລະ ສີມືແຮງງານ, ທົບທວນຄືນນະໂຍບາຍ ແລະ ຍຸດທະສາດຕ່າງໆທີ່ມີໃນປະຈຸບັນ, ໂດຍເນັ້ນໃຫ້ເຫັນເຖິງໂອກາດ ແລະ ສິ່ງທ້າທາຍຕ່າງໆ ພ້ອມທັງສະເໜີວິທີການຍື່ນມືຊ່ວຍເຫຼືອທີ່ເປັນໄປໄດ້ ເພື່ອຊຸກຍູ້ການປັບປຸງພັດທະນາ.

## 3.1 ການສຶກສາ ແລະ ການພັດທະນາມະນຸດ

ການສຶກສາ ບໍ່ຈຳເປັນຈະຕ້ອງໝາຍເຖິງການຮຽນທີ່ໂຮງຮຽນ ສາມາດເຮັດໃຫ້ມີການປ່ຽນແປງ ແລະ ການປະຕິຮູບໃນທຸກສັງຄົມ. ການສຶກສາແມ່ນໜຶ່ງໃນບັນດາວິທີທີ່ສຳຄັນທີ່ສຸດເພື່ອຢຸດຕິຄວາມທຸກຍາກ ແລະ ຊຸກຍູ້ຄວາມຈະເລີນຮຸ່ງເຮືອງທາງດ້ານເສດຖະກິດ. ໃນລະດັບບຸກຄົນ,ການສຶກສາສາມາດເຮັດໃຫ້ຊີວິດດີຂຶ້ນ ແລະ ເປັນໃບເບີກທາງສູ່ການສ້າງຄວາມເຂັ້ມແຂງ ແລະ ໂອກາດໃນຊີວິດທີ່ຫຼາຍກວ່າເກົ່າ. ໃນທາງກົງກັນຂ້າມ, ການຂາດການສຶກສາສາມາດເຮັດໃຫ້ຄົນຂາດຄວາມຮູ້ ແລະ ທັກສະ ເພື່ອຫຼີກເວັ້ນໄພອັນຕະລາຍ ຫຼື ການລ່ວງລະເມີດຕ່າງໆ. ຍົກຕົວຢ່າງເຊັ່ນ: ຜູ້ທີ່ບໍ່ສາມາດອ່ານໄດ້, ອາດຈະບໍ່ສາມາດປະເມີນໄດ້ວ່າສັນຍາແຮງງານທີ່ເຂົາເຈົ້າເຊັນໄປນັ້ນແມ່ນມີຄວາມຍຸຕິ

ທຳ ແລະ ຈະບໍ່ຖືກຂູດຮີດ. ຖ້າຜູ້ຍິງບໍ່ໄດ້ຮຽນຮູ້ ແລະ ບໍ່ເຂົ້າໃຈກ່ຽວກັບສຸຂະພາບຈະເລີນພັນ, ສຸຂະພາບທາງເພດ ແລະ ສິດທິຂອງຕົນ ໂດຍຜ່ານເພດສຶກສາຮອບດ້ານ, ລາວອາດຈະບໍ່ຮູ້ວ່າລາວເອງມີທາງເລືອກ, ເຊິ່ງການທີ່ລາວເລືອກໄດ້ນັ້ນສາມາດສົ່ງຜົນສະທ້ອນອັນໃຫຍ່ຫຼວງຕໍ່ຊີວິດຂອງລາວເອງ. ການທີ່ບໍ່ໄດ້ຮັບການສຶກສາທີ່ພຽງພໍອາດຈະເຮັດໃຫ້ຊີວິດຂອງຄົນຕ້ອງທົນກັບການເຮັດວຽກງານຂັ້ນຕ່ຳ ທີ່ໄດ້ຮັບຜົນຕອບແທນໜ້ອຍ ແລະ ທ່າແຮງການເຕີບໂຕມີຂໍ້ຈຳກັດ. ບໍ່ພຽງເທົ່ານັ້ນ, ການທີ່ບໍ່ໄດ້ຮັບການສຶກສາທີ່ພຽງພໍນັ້ນ ອາດຈະຈຳກັດສິດທິໃນການຮຽກຮ້ອງຂອງຕົນ ແລະ ການກ້າສະແດງອອກທາງຄຳເວົ້າອອກມາເພື່ອຕໍ່ຕ້ານຄວາມບໍ່ຍຸດຕິທຳຕ່າງໆ.

**ການສຶກສາແມ່ນສິດທິມະນຸດທີ່ມີຄຸນຄ່າໃນຕົວມັນເອງ. ໃນຂະນະທີ່ການສຶກສາປະກອບສ່ວນເຂົ້າໃນການສ້າງຄວາມສາມາດໃນການຜະລິດ, ແຕ່ທີ່ສຳຄັນ, ການສຶກສາຊ່ວຍເສີມຂະຫຍາຍຊີວິດຂອງປະຊາຊົນນອກເໜືອຈາກການໃຫ້ວຽກເຮັດງານທຳ ແລະ ການກໍ່ສ້າງເສດຖະກິດ.**

ດັ່ງທີ່ Sen (1997) ໄດ້ຕັ້ງຂໍ້ສັງເກດວ່າ, "ເຖິງແມ່ນວ່າແນວຄິດກ່ຽວກັບມະນຸດແມ່ນຊັບພະຍາກອນທາງການຜະລິດ ຈະມີປະໂຫຍດຫຼາຍ, ແຕ່ສິ່ງທີ່ສຳຄັນແມ່ນການທີ່ເຫັນມະນຸດແມ່ນຜົນຜະລິດໃນຕົວມັນເອງ ແລະ ບໍ່ແມ່ນສະເພາະທີ່ເປັນໃນຮູບແບບຊັບພະຍາກອນທີ່ເປັນທຶນຮອນເທົ່ານັ້ນ."

ອີກປະການໜຶ່ງ ເຫັນວ່າ,"ມະນຸດແມ່ນທັງສອງຢ່າງ ທັງແມ່ນຜົນຜະລິດໃນຕົວເອງ ແລະ ແມ່ນວິທີການທີ່ນຳໃຊ້ເຂົ້າໃນການຜະລິດ, ດ້ວຍເຫດນັ້ນ ການພັດທະນານະໂຍບາຍຕ່າງໆ ຕ້ອງຮັບຮູ້ ແລະ ຕອບສະໜອງຕໍ່ຄວາມແຕກຕ່າງນີ້. ກ່ອນອື່ນໝົດ ແລະ ສຳຄັນທີ່ສຸດ, ການພັດທະນາຂອງມະນຸດແມ່ນມີຄຸນຄ່າພາຍໃນຕົວຂອງມັນເອງ ແລະ ມີຈຸດຈົບ ແລະ ຜົນຜະລິດໃນຕົວມັນເອງ, ຂໍ້ນີ້ບໍ່ຈຳເປັນຕ້ອງມີເຫດຜົນມາອະທິບາຍເພີ່ມເຕີມ. ປະການທີສອງ, ມັນຍັງເປັນເຄື່ອງມື, ທີ່ເປັນວິທີການໃນການສົ່ງເສີມຜົນຜະລິດໃຫ້ສູງຂຶ້ນ. ກຳລັງແຮງງານທີ່ໄດ້ຮັບການເອົາໃຈໃສ່ກໍ່ສ້າງ, ມີສຸຂະພາບທີ່ດີ, ມີການສຶກສາ, ມີທັກສະ ແລະ ມີຄວາມຕື່ນຕົວແມ່ນຊັບສິນທາງການຜະລິດທີ່ສຳຄັນທີ່ສຸດ. (Conceição et al, 2021).

ວິທີການນຳໄປສູ່ຜົນຜະລິດ ແນວຄິດນີ້ແມ່ນເຫັນດີ ແລະ ແບ່ງປັນຮ່ວມກັນລະຫວ່າງ ແນວທາງການພັດທະນາມະນຸດ ແລະ ແນວທາງທີ່ເຫັນວ່າມະນຸດແມ່ນຊັບພະຍາກອນ. ເຖິງແນວໃດກໍ່ຕາມ ແນວທາງການພັດທະນາມະນຸດ ແມ່ນໄດ້ຄຳນຶງເຖິງ ຜູ້ທີ່ອາດຈະບໍ່ສາມາດປະກອບສ່ວນເຂົ້າໃນການຜະລິດ ແລະ ບໍ່ມີວຽກເຮັດງານທຳ, ເຊັ່ນວ່າ ອາດເນື່ອງມາຈາກ ອາຍຸ, ຄວາມພິການ ຫຼື ການເຈັບປ່ວຍຊຳເຮື້ອ, ເຊິ່ງແນວທາງນີ້ແມ່ນ "ຊ່ວຍຊຸກຍູ້ແນວທາງທີ່ຈະນຳໄປສູ່ຜົນປະໂຫຍດໂດຍລ່ວມຂອງສັງຄົມແທນທີ່ຈະແມ່ນນຳໃຊ້ການຍົກເວັ້ນ ຫຼື ແນວທາງເຈາະຈົງກຸ່ມເປົ້າໝາຍ ໂດຍພະຍາຍາມຈະກຳນົດເລືອກວ່າ ກຸ່ມໃດ ບຸກຄົນໃດ "ສົມຄວນໄດ້ຮັບ" ຖືວ່າເປັນການລົງທຶນທີ່ມີ "ປະສິດທິພາບ"ເພື່ອເຜີຍແຜ່ສະຫວັດດີການສັງຄົມ. ຜົນໄດ້ຮັບຂອງແນວທາງນີ້ ຖືວ່າມີຄວາມສະເໝີພາບ ແລະ ສອດຄ່ອງກັບແນວຄິດການພັດທະນາຂອງມະນຸດ.

ແນວທາງຄວາມສາມາດ (the capability approach) ແມ່ນອີງໃສ່ຫຼັກການທີ່ວ່າ "ສິ່ງທີ່ຄົນເຮົາສາມາດເຮັດໄດ້ ແລະ ເປັນໄດ້ຢ່າງແທ້ຈິງ " (Nussbaum, 2003). ການສຸມໃສ່ກຳລັງຂອງມະນຸດ ແລະ ສິດເສລີພາບນີ້ ສະຫຼຸບໃຫ້ເຫັນວ່ານະໂຍບາຍການສຶກສາສາມາດເປັນເຄື່ອງມື ແລະ ວິທີການເພື່ອບັນລຸສັກກະຍາພາບຂອງມະນຸດໄດ້ຫຼາຍວິທີ, ເຊັ່ນ: ໂດຍຜ່ານການເປີດໃຈສູ່ໂລກທີ່ກວ້າງກວ່າເພື່ອຮຽນຮູ້ ແລະ ສ້າງເສັ້ນທາງຕ່າງໆທີ່ຈະໄດ້ຮັບຄວາມສາມາດທີ່ມີຄຸນຄ່າອື່ນໆ. ການສຶກສາແມ່ນໜຶ່ງໃນແນວທາງທີ່ເຂັ້ມແຂງທີ່ສຸດໃນການຫຼຸດຜ່ອນຄວາມທຸກຍາກ, ປັບປຸງພັດທະນາດ້ານສຸຂະພາບ, ຮັບປະກັນຄວາມສະເໝີພາບທາງເພດທີ່ດີກວ່າ ແລະ ຍັງຊ່ວຍໃນການຮັບຮູ້ຄວາມສະຫງົບ ແລະ ຄວາມປອດໄພໃນລະດັບທີ່ສູງຂຶ້ນ. ດ້ວຍວິທີນີ້, ການສຶກສາຈຶ່ງມີຄຸນຄ່າທັງໃນຕົນເອງ ແລະ ໃນຖານະເປັນເຄື່ອງມືໃນການນຳເອົາຄວາມໝາຍ ແລະ ສ້າງມຸມມອງທັດສະນະຄະຕິສູ່ຊີວິດຂອງແຕ່ລະຄົນໄດ້ຫຼາກຫຼາຍຂຶ້ນ ແລະ ຊ່ວຍໃຫ້ຄົນໄດ້ວຽກເຮັດງານທຳທີ່ດີຂຶ້ນ ແລະ ໄດ້ຮັບລາຍໄດ້ທີ່ເໝາະສົມ (Unterhalter, 2003). ການສຶກສາສະໜອງວິທີການໃຫ້ປະຊາຊົນໄດ້ເຮັດວຽກທີ່ມີປະໂຫຍດ, ມີຄວາມໝາຍ ແລະ ເປັນວຽກທີ່ມີຄວາມເພິ່ງພໍໃຈ ແລະ ສົ່ງເສີມການສືບຕໍ່ການຮຽນຮູ້ຕະຫຼອດຊີວິດ ແລະ ສາມາດທົບທວນວິວັດທະນາການຂອງບຸກຄົນຢ່າງຕໍ່ເນື່ອງໃນຂະນະທີ່ໄດ້ຮັບຄວາມສາມາດເພີ່ມເຕີມ.

ຂະບວນວິວັດຂອງແນວທາງການພັດທະນາມະນຸດໄດ້ຄຳນຶງເຖິງເອົາຜົນປະໂຫຍດທີ່ຫຼາຍກວ່າຂອງການສຶກສາຕໍ່ວິຖີຊີວິດ, ຄວາມມຸ່ງມາດປາຖະໜາ, ເປົ້າໝາຍ ແລະ ຄວາມໄຝ່ຝັນ. ດັ່ງທີ່ Sen ໄດ້ກ່າວໄວ້ (2003, ອ້າງອີງໃນ Walker, 2010): ໃນຂະນະທີ່ແນວທາງຄວາມສາມາດ ຮອງຮັບການຂະຫຍາຍຕົວຂອງແນວຄິດການເຫັນມະນຸດເປັນຊັບພະຍາກອນທຶນຮອນ ເຊິ່ງໃນນັ້ນການສຶກສາມີຄວາມສຳຄັນໃນຖານະເປັນວິທີການ ໃນການພັດທະນາຊັບພະຍາກອນມະນຸດ ແລະ ເປັນໜ່ວຍງານສຳລັບຈຸດສິ້ນສຸດດ້ານເສດຖະກິດ, ນອກນັ້ນການສຶກສາຍັງເນັ້ນໃຫ້ເຫັນເຖິງຄຸນຄ່າໃນຕົວມັນເອງ. ການໃຫ້ຄວາມສຳຄັນຂອງການເຫັນຄຸນຄ່າໃນຕົວຂອງການສຶກສາຢ່າງແທ້ຈິງ ນັ້ນໝາຍຄວາມວ່າມັນຈະບໍ່ພຽງແຕ່ໃຫ້ໝາກຜົນໃນການພັດທະນາເສດຖະກິດ ເຊິ່ງເປັນຄຳອ້າງອີງຫຼັກໃນການຊຸກຍູ້ສົ່ງເສີມການລົງທຶນໃນການສຶກສາໃຫ້ຫຼາຍກວ່າເກົ່າ. ການສຶກສານັ້ນຍັງຄວນທີ່ຈະສ້າງໄວໜຸ່ມໃຫ້ມີຄວາມຮອບຮູ້ ສາມາດຄິດວິເຄາະ ແລະ ມີວິທີຄິດ ແລະ ເປັນຜູ້ທີ່ສາມາດຕັ້ງຄຳຖາມ ແລະ ປະກອບສ່ວນເຂົ້າໃນການສົນທະນາດ້ານນະໂຍບາຍຕ່າງໆ. ສູນກາງຊາວໜຸ່ມລາວ, ວິທະຍາໄລຫຼາຍແຫ່ງ ແລະ ບັນດາອົງການຈັດຕັ້ງທາງສັງຄົມຈຳນວນໜຶ່ງ ເຊິ່ງລວມທັງສະມາຄົມສົ່ງເສີມພັດທະນາທັກສະຊີວິດ, ສະມາຄົມການພັດທະນາຊຸມຊົນ, ສະມາຄົມສົ່ງເສີມຄວາມຮູ້ຊຸມຊົນ ແລະ ສິດໃນການສຶກສາທີ່ສະເໝີພາບສຳລັບທຸກຄົນ, ແລະ ອື່ນໆ. ບັນດາອົງການຈັດຕັ້ງເຫຼົ່ານີ້ ສະໜອງກິດຈະກຳ ແລະ ການຝຶກອົບຮົມຕ່າງໆ ສຳລັບໄວໜຸ່ມທີ່ອາດຈະບໍ່ໄດ້ລວມຢູ່ໃນຫຼັກສູດການສຶກສາທາງການ. ກິດຈະກຳ ແລະ ການຝຶກອົບຮົມເຫຼົ່ານີ້ພັດທະນາຄວາມຄິດສ້າງສັນ ແລະ ຄວາມສາມາດ ໃນການປະກອບສ່ວນທາງດ້ານຄວາມຄິດທີ່ຊ່ວຍໃນການຕັດສິນໃຈ.ເຖິງແນວໃດກໍ່ຕາມ ບໍ່ວ່າການສຶກສາຈະຊ່ວຍໃນການປັບປຸງສະພາບຊີວິດໂດຍທັນທີ ຫຼື ໃນໄລຍະກາງນັ້ນຫຼືບໍ່ກໍ່ຕາມ, ການສຶກສາໂດຍພື້ນຖານແລ້ວ ແມ່ນໄດ້ຊ່ວຍປະກອບສ່ວນພັດທະນາ 2 ໃນ 10 ຄວາມສາມາດທີ່ເປັນສູນກາງ ເຊິ່ງອີງຕາມ Nussbaum (2000) ແລ້ວຖືວ່າ ເປັນຄວາມສາມາດທີ່ຈຳເປັນຂອງມະນຸດທຸກຄົນ ເປັນຕົ້ນແມ່ນຄວາມສາມາດໃນການໃຫ້ເຫດຜົນໃນແງ່ປະຕິບັດ, ປະສາດສຳຜັດ ແລະ ຄວາມຮູ້ສຶກ, ຈິນຕະນາການ ແລະ ຄວາມຄິດ.

ຄວາມສາມາດໃນການໃຫ້ເຫດຜົນໃນແງ່ປະຕິບັດກ່ຽວຂ້ອງກັບຄວາມສາມາດໃນການເຂົ້າໃຈໃນແນວຄວາມຄິດ ແລະ ຂໍ້ໂຕ້ຖຽງຕ່າງໆທີ່ແຕກຕ່າງກັນ ໂດຍຜ່ານການສົນທະນາ ແລະ ການທົບທວນໄຕ່ຕອງ (Nussbaum, 2011). ເພື່ອບັນລຸຄວາມສາມາດນີ້, ນັກຮຽນຕ້ອງໄດ້ຮັບການສິດສອນໃນການທົດສອບ ຄວາມຄິດ ການວິເຄາະ ຕໍ່ຄວາມຄິດ ແລະມູມມອງຂອງຕົນ ທີ່ເປັນທີ່ມາຂອງການກະທຳ ແລະ ການຕັດສິນໃຈຂອງພວກເຂົາ. ດັ່ງນັ້ນ, ນອກເໜືອຈາກການສະສົມທັກສະພື້ນຖານເຊັ່ນ ການຮູ້ໜັງສື ແລະ ຄຳນວນເລກແລ້ວ, ການສຶກສາທີ່ດີຄວນມີອິດທິພົນຕໍ່ຄວາມສາມາດຂອງໄວ ໜຸ່ມໃນການຄິດວິເຄາະ ແລະ ສາມາດຕັດສິນໃຈໄດ້ຢ່າງຮອບຮູ້ໂດຍອີງໃສ່ຂໍ້ມູນ ແລະ ຜ່ານການໄຕ່ຕອງຢ່າງຖີ່ຖ້ວນ (Sen, 1999). ຂະບວນການຄວາມຄິດປະເພດນີ້ ແມ່ນມີຄວາມຈຳເປັນ ບໍ່ສະເພາະແຕ່ໃນການສົນທະນາປຶກສາຫາລື ແລະ ການໃຫ້ເຫດຜົນຕ່າງໆ, ແຕ່ຍັງສະໜອງໂອກາດໃນການມີສ່ວນຮ່ວມໃນຂະບວນການຮຽນຮູ້, ການທົບທວນໄຕ່ຕອງ ແລະ ການສຳຜັດກັບການອ່ານ ແລະ ບົດເລື່ອງຕ່າງໆທີ່ຫຼາກຫຼາຍ (Nussbaum, 2006).

ປະສາດສຳຜັດ ຄວາມຮູ້ສຶກ, ຈິນຕະນາການ ແລະ ຄວາມຄິດກ່ຽວຂ້ອງກັບຄວາມສາມາດໃນການໃຊ້ຄວາມຄິດໃນທາງສ້າງສັນ ແລະ ແປກໃໝ່. ການເສີມສ້າງຄວາມສາມາດປະເພດນີ້ ຈຳເປັນຕ້ອງມີການປະຕິບັດການຮຽນ-ການສອນທີ່ເນັ້ນການທົດລອງເພື່ອຫາປະສົບການຕົວຈິງ ແລະ ນອກເໜືອຈາກຕຳລາຮຽນ. ການຮຽນຮູ້ປະເພດນີ້ ແມ່ນເນັ້ນໃສ່ການຂະຫຍາຍແນວຄິດ ແລະ ປະສົບການຂອງບຸກຄົນ ແລະ ມຸ່ງເນັ້ນໄປເຖິງການປູກຝັງຄວາມຄິດສ້າງສັນ ແລະ ການຄິດວິເຄາະ - ເຊິ່ງການຮຽນຮູ້ນີ້ແມ່ນມີຜົນໃນໄລຍະຍາວ ທີ່ບໍ່ພຽງແຕ່ສົ່ງເສີມທັກສະໃນບ່ອນເຮັດວຽກ ແຕ່ຍັງເປັນການເພີ່ມຄວາມສາມາດຂອງໄວໜຸ່ມໃນການເອົາຊະນະສິ່ງທ້າທາຍຕ່າງໆ, ແລະ ສາມາດຕັດສິນໃຈຢ່າງມີຄວາມໝາຍ ແລະ ປັບຕົວໃຫ້ເຂົ້າກັບສະພາບແວດລ້ອມທີ່ປ່ຽນແປງໄດ້ (Algraini, 2021).

ການສຶກສາແມ່ນອົງປະກອບທີ່ສຳຄັນຂອງການພັດທະນາມະນຸດທີ່ມັນໄດ້ຖືກລວມເຂົ້າໃຫ້ເປັນຕົວຊີ້ວັດ ດັ່ງທີ່ສະແດງອອກໃນອັດຕາການຮູ້ໜັງສືໃນດັດຊະນີການພັດທະນາມະນຸດ (HDI) ສະບັບທຳອິດ. ສະບັບຕໍ່ມາໄດ້ພິຈາລະນາເອົາການສຶກສາໃນມິຕິອື່ນທີ່ກວ້າງຂຶ້ນ ເຊິ່ງໄດ້ລວມເອົາຈຳນວນປີການຮຽນສະເລ່ຍສຳລັບຜູ້ໃຫຍ່ທີ່ມີອາຍຸ 25 ປີຂຶ້ນໄປ ແລະ ຈຳນວນປີຮຽນຂອງການຮຽນທີ່ຄາດຄະເນສຳລັບເດັກນ້ອຍອາຍຸໄວເຂົ້າໂຮງຮຽນ. ທັງສາມມິຕິຂອງ HDI, ທີ່ລວມມີດ້ານສຸຂະພາບ, ການສຶກສາ ແລະ ລາຍໄດ້, ແມ່ນໄດ້ເກັບກຳເອົາອົງປະກອບຫຼັກຂອງການພັດທະນາມະນຸດ.

## 3.2 ທ່າອ່ຽງຂອງການສຶກສາ ໃນ ສປປ ລາວ

ລະບົບການສຶກສາໃນ ສປປ ລາວ ມີ 3 ພາກສ່ວນ ຄື: ການສຶກສາທົ່ວໄປ, ການສຶກສາເຕັກນິກວິຊາຊີບ (TVET) ແລະ ການສຶກສາຫຼັງມັດທະຍົມ. ການສຶກສາທົ່ວໄປປະກອບມີການສຶກສາກ່ອນໄວຮຽນ (ກ່ອນໄວຮຽນ, ສະຖານລ້ຽງເດັກ ແລະ ອະນຸບານ), ປະຖົມສຶກສາ 5 ປີ, ມັດທະຍົມຕອນຕົ້ນ 4 ປີ (ພາກບັງຄັບ) ແລະ ມັດທະຍົມຕອນປາຍ 3 ປີ . ການສຶກສາເຕັກນິກ ວິຊາຊີບ TVET ແລະ ການສຶກສາຫຼັງມັດທະຍົມປະກອບດ້ວຍໃບຢັ້ງຢືນ, ໃບປະກາດ ແລະ ລະດັບປະລິນຍາຕີທີ່ຫຼາກຫຼາຍ

ເຊິ່ງໄລຍະເວລາໃນການຮຽນຂຶ້ນຢູ່ກັບລະດັບໃນປະພາກ ແລະ ສາຂາວິຊາທີ່ຮຽນ.

## ການສຶກສາທົ່ວໄປ: ການສຶກສາກ່ອນໄວຮຽນ

ການສຶກສາກ່ອນໄວຮຽນມີບົດບາດສຳຄັນຫຼາຍສຳລັບໄວໜຸ່ມ. ພວກເຂົາບໍ່ພຽງແຕ່ໄດ້ຮັບຄວາມຮູ້ໃນຊ່ວງໄລຍະກຳລັງເຕີບໃຫຍ່ເທົ່ານັ້ນ ແຕ່ພວກເຂົາຍັງສ້າງຮາກຖານທີ່ຈະຖືກຕໍ່ຍອດໄປຕະຫຼອດຊີວິດ. ການສຶກສາກ່ອນໄວຮຽນປະກອບມີໂຄງການການສຶກສາທີ່ເປັນທາງການ ແລະ ບໍ່ເປັນທາງການ ທີ່ແນະນຳການຈະເລີນເຕີບໂຕ ແລະ ພັດທະນາຂອງເດັກນ້ອຍຕະຫຼອດຊ່ວງໄລຍະກ່ອນໄວຮຽນຂອງເຂົາເຈົ້າ, ໂດຍທົ່ວໄປແມ່ນອາຍຸລະຫວ່າງ 2 ຫາ 5 ປີ. ການສຶກສາກ່ອນໄວຮຽນນີ້ ປະກອບມີຫຼາກຫຼາຍກິດຈະກຳທີ່ຖືກອອກແບບມາ ເພື່ອສົ່ງເສີມພັດທະນາການດ້ານສະຕິປັນຍາ ແລະ ສັງຄົມຂອງເດັກນ້ອຍກ່ອນເຂົ້າໂຮງຮຽນປະຖົມ. ໂຄງການເຫຼົ່ານີ້ ນອກຈາກເນັ້ນໃສ່ກໍ່ສ້າງຄວາມພ້ອມໃນການເຂົ້າໂຮງຮຽນ ແລະ ທາງດ້ານວິຊາການ ແມ່ນຍັງເນັ້ນໃສ່ການກຽມພ້ອມທາງດ້ານຈິດໃຈ ແລະ ອາລົມ.

ໃນບາງແຫ່ງ, ການລົງທຶນໃນການສຶກສາກ່ອນໄວຮຽນໃຫ້ຜົນຕອບແທນທີ່ສູງທີ່ສຸດໃນດ້ານການສຶກສາ, ສຸຂະພາບ, ສັງຄົມ ແລະ ເສດຖະກິດ (Heckman, Pinto and Savelyev, 2013). ບົດລາຍງານການພັດທະນາມະນຸດທົ່ວໂລກປະຈຳປີ 2014 ໄດ້ກວດສອບການປະກອບສ່ວນໃນຊ່ວງກ່ອນໄວຮຽນຕໍ່ກັບການສ້າງຄວາມສາມາດຕະຫຼອດຊີວິດ ແລະ ການພັດທະນາມະນຸດ, ສະຫຼຸບໄດ້ວ່າ,"ເມື່ອການລົງທຶນໃນການກໍ່ສ້າງຄວາມສາມາດໃນຊີວິດເກີດຂຶ້ນໄວເທົ່າໃດ, ໂອກາດໃນອະນາຄົດຈະດີກວ່າ. ການລົງທຶນໃນການສຶກສາກ່ອນໄວຮຽນ ແລະ ການສືບຕໍ່ລົງທຶນຢ່າງຕໍ່ເນື່ອງເຮັດໃຫ້ຂະບວນການສ້າງຄວາມສາມາດຕ່າງໆໃນຊີວິດເຂັ້ມແຂງຂຶ້ນ" (UNDP, 2014, ໜ້າ 55).

ບົດລາຍງານໄດ້ຍົກໃຫ້ເຫັນວ່າ ຄວາມສາມາດດ້ານສະຕິປັນຍາ, ສັງຄົມ, ອາລົມ ແລະ ພາສາແມ່ນມີການພົວພັນກັນ, ເພາະທັງໝົດລ້ວນແຕ່ຖືກຫຼໍ່ຫຼອມຂຶ້ນຈາກປະສົບການໃນຊ່ວງໄລຍະຕົ້ນຂອງຊີວິດ. ຄວາມຫຍຸ້ງຍາກຂອງຊີວິດໃນໄວເດັກສາມາດນຳໄປສູ່ຄວາມທ້າທາຍໃນຊີວິດໃນໄວຜູ້ໃຫຍ່, ເຊິ່ງລວມເຖິງພາວະດ້ອຍໂອກາດທາງດ້ານເສດຖະກິດສັງຄົມ ແລະການເບິ່ງແຍງດູແລທີ່ຖືກລົບກວນ. ຖ້າບໍ່ມີການສຶກສາກ່ອນໄວຮຽນທີ່ມີຄຸນນະພາບ, ເດັກນ້ອຍຈະສູນເສຍໂອກາດທີ່ຈະຮັບຮູ້ເຖິງສັກກະຍາພາບຂອງເຂົາເຈົ້າ ແລະ ປະເທດຈະສູນເສຍທຶນຮອນມະນຸດທີ່ຈະປະກອບສ່ວນເພື່ອຫຼຸດຜ່ອນຄວາມບໍ່ສະເໝີພາບ ແລະ ສົ່ງເສີມສັງຄົມທີ່ສະຫງົບສຸກ ແລະ ຈະເລີນຮຸ່ງເຮືອງ (UNICEF, 2021). ຮູບທີ 3.1 ສະແດງໃຫ້ເຫັນວ່າ ສປປ ລາວ ຍັງຕາມຫຼັງປະເທດອື່ນໆໃນອາຊີຕາເວັນອອກສຽງໃຕ້ໃນການສະໜອງການສຶກສາກ່ອນໄວຮຽນ.

ຮູບທີ 3.1

ຢູ່ໃນ ສປປ ລາວ, ມີເດັກນ້ອຍພຽງແຕ່ 3 ໃນ 100 ຄົນ ທີ່ຢູ່ໃນເກນອາຍຸກ່ອນປະຖົມ ທີ່ໄດ້ລົງທະບຽນເຂົ້າຮຽນໃນການສຶກສາກ່ອນໄວຮຽນ.

### ຮູບທີ 3.1: ອັດຕາສ່ວນການລົງທະບຽນຮຽນໃນໂຄງການການສຶກສາກ່ອນວຮຽນ ໃນ ສປປ ລາວ ແລະ ບັນດາປະເທດໃນອາຊີຕາເວັນອອກສຽງໃຕ້, 2018-2020

ແຫຼ່ງຂໍ້ມູນ: ສະຖາບັນສະຖິຕິຂອງ UNESCO (UNESCO Institute for Statistics), ຕົວຊີ້ວັດຂອງ SDG 4, ມີນາ 2022








### ຮູບທີ 3.2: ອັດຕາການເລື່ອນຊັ້ນໃນຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ, ເປັນສ່ວນຮ້ອຍ

ແຫຼ່ງຂໍ້ມູນ: ກະຊວງສຶກສາທິການ ແລະ ກິລາ, ສູນສະຖິຕິ.




ປະເທດໄທມີອັດຕາການລົງທະບຽນເຂົ້າຮຽນສູງກວ່າເກືອບ 20 ເທົ່າ. ກຳປູເຈຍ, ເຊິ່ງເປັນປະເທດອັນດັບສອງທີ່ມີອັດຕາການເຂົ້າຮຽນຕໍ່າສຸດໃນພາກພື້ນ ໂດຍອີງຕາມຂໍ້ມູນທີ່ມີຢູ່, ຍັງມີອັດຕາສ່ວນສູງກວ່າ ສປປ ລາວ ເຖິງສອງເທົ່າ. ອັດຕາການເຂົ້າຮຽນທີ່ຕໍ່າຊີ້ໃຫ້ເຫັນເຖິງຄວາມບໍ່ພຽງພໍໃນດ້ານຈຳນວນທີ່ມີ ແລະ ຂາດການສົ່ງເສີມການສຶກສາເດັກກ່ອນໄວຮຽນ. ອັດຕາການເຂົ້າຮຽນແມ່ນຂຶ້ນກັບການລົງທຶນໃນສູນການສຶກສາເດັກກ່ອນໄວຮຽນ, ຄູສອນ, ແລະ ການສົ່ງເສີມການສຶກສາກ່ອນໄວຮຽນ ໃຫ້ແກ່ບັນດາພໍ່ແມ່ເພື່ອຊອກຮູ້ ແລະ ລົງທະບຽນໃຫ້ລູກຂອງເຂົາເຈົ້າ. ອີງຕາມຫຼັກຖານທີ່ໄດ້ສະແດງໃຫ້ເຫັນວ່າ ການລົງທຶນໃນການສຶກສາກ່ອນໄວຮຽນໃຫ້ຜົນຕອບແທນທາງດ້ານເສດຖະກິດ ແລະ ສັງຄົມທີ່ດີກວ່າຖ້າທຽບກັບການສຶກສາຂັ້ນອື່ນໆ, ອີງໃສ່ຂໍ້ຈຳກັດທາງດ້ານງົບປະມານໃນຂະແໜງ ການສຶກສາ, ອັດຕາການເຂົ້າຮຽນຂອງເດັກກ່ອນໄວຮຽນ ໃນ ສປປລາວ ຖືວ່າໜ້າເປັນ" ຫ່ວງ. ຍິ່ງໄປກວ່ານັ້ນ, ຜົນສະທ້ອນບໍ່ວ່າຈະແມ່ນການລົງທຶນ ແລະ ອັດຕາການເຂົ້າຮຽນຂອງເດັກກ່ອນໄວຮຽນທີ່ຕໍ່າໃນຕອນນີ້ ອາດຈະສົ່ງຜົນກະທົບທາງລົບຕໍ່ຄົນຮຸ່ນຕໍ່ໄປ. ນອກນີ້ ອີກໜຶ່ງຜົນກະທົບຂອງການໄດ້ຮັບຜົນຕອບແທນທີ່ຕໍ່າ ຈາກການຂາດການລົງທຶນທີ່ພຽງພໍໃນການສຶກສາກ່ອນໄວຮຽນ ອາດຈະມີຜົນທາງລົບໃນການພິຈາລະນາລົງທຶນຄືນ ໃນການສຶກສາທຸກຂັ້ນໃນອະນາຄົດ, ແລະ ໃນທີ່ສຸດອາດຈະມີຜົນຕໍ່ຄວາມພະຍາຍາມທີ່ຈະສາມາດບັນລຸເປົ້າໝາຍການພັດທະນາເສດຖະກິດ ແລະ ສັງຄົມໃນໄລຍະຍາວຂອງ ສປປ ລາວ ໄດ້.

## ການສຶກສາທົ່ວໄປ: ຊັ້ນປະຖົມສຶກສາ

ສປປ ລາວ ຖືວ່າມີຄວາມຄືບໜ້າຢ່າງຫຼວງຫຼາຍໃນການເພີ່ມອັດຕາການເຂົ້າຮຽນໃນຊັ້ນປະຖົມສຶກສາ. ໃນປີ 2021, ມີນັກຮຽນເຂົ້າຮຽນຊັ້ນປະຖົມສຶກສາ ທັງໝົດ 756.191 ຄົນ, ໂດຍມີອັດຕາສ່ວນການເຂົ້າຮຽນຄິດໄລ່ເປັນສ່ວນຮ້ອຍທີ່ 98,8 ສ່ວນຮ້ອຍ (ລັດຖະບານແຫ່ງ ສປປ ລາວ, 2018; LSB, 2022). ເຖິງວ່າອັດຕາການເຂົ້າຮຽນໃນຊັ້ນປະຖົມສຶກສາຈະສູງກໍ່ຕາມ, ແຕ່ຈຳນວນໄດ້ຫຼຸດລົງຢ່າງຫຼວງຫຼາຍໃນຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍ, ໂດຍເຫຼືອພຽງ 418.236 ຄົນ ແລະ 192.853 ຄົນ ຕາມລຳດັບ. ສິ່ງນີ້ສະແດງໃຫ້ເຫັນເຖິງການຂາດຄວາມຕໍ່ເນື່ອງໃນການຮຽນ. ການລົງທະບຽນຮຽນໃນຊັ້ນມັດທະຍົມສຶກສາ, ເຊິ່ງລວມທັງຕອນຕົ້ນ ແລະ ປາຍ, ມີພຽງແຕ່ປະມານກາຍ 60 ສ່ວນຮ້ອຍ, ແລະ ມີພຽງແຕ່ 31 ສ່ວນຮ້ອຍຂອງນັກຮຽນໄວໜຸ່ມທີ່ຮຽນຈົບ (LSB, 2017). ອັດຕາການເລື່ອນຊັ້ນ, ເຊິ່ງສະທ້ອນໃຫ້ເຫັນການຮຽນທີ່ຕໍ່ເນື່ອງໃນແຕ່ລະຊັ້ນ,ຈະຕ້ອງເພີ່ມຂຶ້ນ ເພື່ອຮັບປະກັນວ່າການສຶກສາໃນຊັ້ນມັດທະຍົມສຶກສາ ສາມາດຕໍ່ຍອດໝາກຜົນຄວາມກ້າວໜ້າທີ່ສຳຄັນຈາກອັດຕາການຮຽນທີ່ເພີ່ມຂຶ້ນໃນຊັ້ນປະຖົມສຶກສາໄດ້. ໃນຂະນະທີ່ອັດຕາການເລື່ອນຊັ້ນຂອງນັກຮຽນຊັ້ນປະຖົມສຶກສາເພີ່ມຂຶ້ນຢ່າງກ້າວກະໂດດຈາກ 73,7 ສ່ວນຮ້ອຍ ໃນປີ 2007 ມາເປັນ 93 ສ່ວນຮ້ອຍ. ໃນປີ 2021, ແຕ່ໃນລະດັບມັດທະຍົມສຶກສາຕອນ

## ຮູບທີ 3.3: ອັດຕາການອອກໂຮງຮຽນ, ເປັນສ່ວນຮ້ອຍ

ແຫຼ່ງຂໍ້ມູນ: EMIS 2022.




ຕົ້ນ ແລະ ຕອນປາຍແມ່ນເພີ່ມຂຶ້ນພຽງເລັກນ້ອຍ ຫຼື ອາດຈະຫຼຸດລົງໃນຊ່ວງໄລຍະດຽວກັນ (ຮູບ 3.2). ການສະໜັບສະໜູນຂອງລັດຖະບານຕໍ່ການສຶກສາຊັ້ນປະຖົມທີ່ເພີ່ມຂຶ້ນ ອາດຈະຊ່ວຍເຮັດໃຫ້ນັກຮຽນສືບຕໍ່ຮຽນຊັ້ນປະຖົມດົນຂຶ້ນ ແຕ່ເຫັນໄດ້ຢ່າງຈະແຈ້ງວ່າມີຄວາມຫຍຸ້ງຍາກໃນການຮັກສານັກຮຽນຊັ້ນມັດທະຍົມ. ໃນປີ 2021, ອັດຕາການອອກໂຮງຮຽນຊັ້ນມັດທະຍົມຕອນຕົ້ນ ແມ່ນ 10.3 ສ່ວນຮ້ອຍ ແລະ ສໍາລັບມັດທະຍົມຕອນປາຍ ແມ່ນ 9.4 ສ່ວນຮ້ອຍ, ເຮັດໃຫ້ອັດຕາການເລື່ອນຊັ້ນ ໃນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ ແມ່ນ 89 ສ່ວນຮ້ອຍ ແລະ 90 ສ່ວນຮ້ອຍ ຕາມລໍາດັບ (ຮູບ 3.3). ອັດຕາການອອກໂຮງຮຽນທັງໃນລະດັບມັດທະຍົມຕອນຕົ້ນ ແລະ ປາຍ ແມ່ນມີທ່າອ່ຽງທີ່ເພີ່ມຂຶ້ນ ເຊິ່ງເຫັນໄດ້ແຕ່ປີ 2014 ເປັນຕົ້ນມາ, ເຖິງແມ່ນວ່າຈະມີຄວາມຄືບໜ້າໃນປີ 2009-2014 ກໍ່ຕາມ. ໃນປະຈຸບັນ, ອັດຕາການອອກໂຮງຮຽນແມ່ນຖືວ່າຄືກັນກັບປີ 2009, ເຊິ່ງເປັນໄພຂົ່ມຂູ່ທີ່ຄຸກຄາມ ຄວາມກ້າວໜ້າ ແລະ ໝາກຜົນທີ່ໄດ້ຈາກອັດຕາການເຂົ້າ" ຮຽນທີ່ເພີ່ມຂຶ້ນ ແລະ ອັດຕາການອອກໂຮງຮຽນທີ່ຫຼຸດລົງໃນຊັ້ນປະຖົມສຶກສາ.

ຮູບທີ 3.2 / ຕາຕະລາງ 3.3

ການຄົ້ນຄວ້າໃນ 6 ແຂວງທີ່ດໍາເນີນໃນລະຫວ່າງປີ 2020 ຫາ 2021 ພະຍາຍາມຊອກຮູ້ ແລະ ເຂົ້າໃຈເຖິງສາເຫດຂອງນັກຮຽນທີ່ອອກໂຮງຮຽນ. ການຄົ້ນຄວ້ານີ້ໄດ້ສໍາພາດ ຫຼາຍກວ່າ 900 ຄົນ, ເຊິ່ງລວມທັງໄວໜຸ່ມທີ່ອອກໂຮງຮຽນ, ພໍ່ແມ່, ຄູອາຈານ ແລະ ລັດຖະກອນໃນຂະແໜງການສຶກສາ, ແລະ ໄດ້ເບິ່ງຂໍ້ມູນເພີ່ມເຕີມຈາກ LSIS-II ທີ່ດໍາເນີນໃນປີ 2017 (UNICEF, 2022a). ຜົນການຄົ້ນຄວ້າເຫັນວ່າອັດຕາການອອກໂຮງຮຽນທີ່ຫຼາຍຂຶ້ນ ແມ່ນອາດຈະເນື່ອງມາຈາກການລະບາດຂອງພະຍາດ ໂຄວິດ-19 ແລະ ການປິດໂຮງຮຽນເປັນເວລາດົນນານ. ເຫດຜົນທົ່ວໄປອື່ນໆສໍາລັບການອອກໂຮງຮຽນທັງໃນຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ລວມມີ ຄວາມທຸກຍາກ, ໂອກາດໃນການໄດ້ຮັບຄ່າຈ້າງໃນແຕ່ລະມື້, ການເຫັນຄຸນຄ່າທາງດ້ານການສຶກສາທີ່ຕໍ່າ, ຄ່າຮຽນ ແລະ ຄ່າອື່ນໆທີ່ກ່ຽວຂ້ອງກັບການເຂົ້າໂຮງຮຽນເຖິງແມ່ນວ່າຈະມີນະໂຍບາຍຄວບຄຸມ ແລະ ການແຕ່ງງານກ່ອນໄວອັນຄວນສໍາລັບແມ່ຍິງ ແລະ ເດັກຍິງ. ຫຼາຍຄົນໃຫ້ຄໍາເຫັນວ່າ ການຂົ່ມເຫັງ ແລະ ການຕີກັນ ແມ່ນສິ່ງທີ່ຮ້າຍແຮງທີ່ສຸດກ່ຽວກັບການໄປໂຮງຮຽນ. ໃນຈໍານວນ ໂຮງຮຽນລັດ 30 ແຫ່ງທີ່ໄດ້ເຂົ້າຮ່ວມໃນການຄົ້ນຄວ້ານີ້, ທຸກໂຮງຮຽນລ້ວນແຕ່ເສຍຄ່າຮຽນ ຍົກເວັ້ນສອງໂຮງຮຽນເທົ່ານັ້ນ. ເຖິງແນວໃດກໍ່ຕາມ, ຄວາມທຸກຍາກແມ່ນເປັນເຫດຜົນຫຼັກທີ່ຖືກອ້າງອີງໃນການອອກໂຮງຮຽນ, ເຊິ່ງເຫດຜົນນີ້ໄດ້ຮັບການຢັ້ງຢືນຈາກການສໍາຫຼວດຕົວຊີ້ວັດສັງຄົມລາວ. ເດັກນ້ອຍຢູ່ໃນເຂດຊົນນະບົດ ແລະ ມາຈາກຄອບຄົວທີ່ມີລາຍໄດ້ຕໍ່າມີຄວາມສ່ຽງສູງທີ່ຈະອອກໂຮງຮຽນ, ໂດຍສະເພາະເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ ແລະ ມາຈາກຄອບຄົວໃນກຸ່ມທີ່ທຸກຍາກທີ່ສຸດ (ຮູບ 3.4).

ໃນຂະນະທີ່ການຈັດກຸ່ມບັນດາແຂວງທີ່ຮັ່ງມີແມ່ນຂ້ອນຂ້າງຈະແຈ້ງ, ແຕ່ພາບລວມທາງດ້ານການເຂົ້າ ແລະ ອອກໂຮງຮຽນ ໃນແຕ່ລະແຂວງ





## ຮູບທີ 3.4: ການສົມທຽບຄວາມສໍາເລັດດ້ານການສຶກສາໃນກຸ່ມທີ່ຮັ່ງມີ, ເປັນສ່ວນຮ້ອຍ

ແຫຼ່ງຂໍ້ມູນ:: LSB, 2017.




ແມ່ນແຕກຕ່າງກັນ (ຕາຕະລາງ 3.1). ໃນປີ 2021, ອັດຕາການເຂົ້າຮຽນລະດັບຊັ້ນມັດທະຍົມຕອນຕົ້ນທີ່ຕໍ່າ ແມ່ນຢູ່ ແຂວງຈໍາປາສັກ ແລະ ສາລະວັນ; ສ່ວນອັດຕາການເຂົ້າຮຽນຊັ້ນມັດທະຍົມປາຍທີ່ຍັງຕໍ່າ ແມ່ນຢູ່ ຜົ້ງສາລີ, ອຸດົມໄຊ ແລະ ສາລະວັນ. ອັດຕາການອອກຮຽນໃນຊັ້ນມັດທະຍົມປາຍທີ່ສູງທີ່ສຸດ ແມ່ນຢູ່ ສາລະວັນ, ເຊກອງ ແລະ ບໍ່ແກ້ວ. ຄວາມແຕກຕ່າງໃນອັດຕາການເຂົ້າແລະອອກຮຽນລະຫວ່າງເຂດຊົນນະບົດແລະເຂດຕົວເມືອງແມ່ນຂ້ອນຂ້າງພົ້ນເດັ່ນ. ໂດຍສະເພາະ, ນະຄອນຫຼວງວຽງຈັນ, ແມ່ນມີອັດຕາການເຂົ້າຮຽນສູງທີ່ສຸດໃນທຸກລະດັບການສຶກສາ ແລະ ມີອັດຕາການອອກໂຮງຮຽນທີ່ຕໍ່າທີ່ສຸດ.

ຮູບທີ 3.4 / ຕາຕະລາງ 3.1

ການສຶກສາທີ່ມີຄຸນນະພາບຕໍ່າແມ່ນຕິດພັນໂດຍກົງກັບຜົນການຮຽນທີ່ບໍ່ດີ, ເຊັ່ນ: ອັດຕາການຮູ້ໜັງສືທີ່ຕໍ່າ. ຈໍານວນໄວໜຸ່ມໃນເກນອາຍຸ 15-24 ປີ ທີ່ສາມາດອ່ານ ແລະ ຂຽນພາສາລາວໄດ້ຢ່າງຄ່ອງແຄ້ວແມ່ນຕໍ່າຫຼາຍ ຢູ່ທີ່ 65 ສ່ວນຮ້ອຍ ແລະ 64 ສ່ວນຮ້ອຍຕາມລໍາດັບ (ຮູບທີ 3.5). ນັ້ນໝາຍຄວາມວ່າໃນກຸ່ມໄວໜຸ່ມ ປະມານ 1 ໃນ 7 ມີຄວາມຫຍຸ້ງຍາກໃນການອ່ານ ແລະ ຂຽນ. ຄວາມສາມາດຖືວ່າແຕກຕ່າງກັນໄປຕາມເພດ, ຊົນເຜົ່າ ແລະ ສະຖານທີ່ຕັ້ງ. ອັດຕາສ່ວນຂອງໄວໜຸ່ມຊາຍທີ່ສາມາດອ່ານ ແລະ ຂຽນໄດ້ຢ່າງຄ່ອງແຄ້ວ ແມ່ນ 71 ສ່ວນຮ້ອຍ ແລະ 69 ສ່ວນຮ້ອຍ, ຕາມລໍາດັບ, ສົມທຽບໃສ່ໄວໜຸ່ມຍິງແມ່ນ 60 ສ່ວນຮ້ອຍ ແລະ 59 ສ່ວນຮ້ອຍ ຕາມລໍາດັບ. ໃນບັນດານັກຮຽນຊັ້ນປະຖົມ ປີທີ 5,98 ສ່ວນຮ້ອຍແມ່ນຍັງບໍ່ທັນຊໍານານ ທັກສະການຄໍານວນເລກ ແລະ 92 ສ່ວນຮ້ອຍ ແມ່ນຍັງບໍ່ບັນລຸທັກສະການອ່ານອອກຂຽນໄດ້ຕາມເກນທີ່ຄາດໄວ້ເມື່ອຈົບຊັ້ນປະຖົມສຶກສາ (UNICEF ແລະ SEAMEO, 2020). ນັກຮຽນຊັ້ນ ປ. 5 ໃນ ສປປ ລາວ ແມ່ນມີຜົນການຮຽນໃນເກນຕໍ່າສຸດ ດ້ານການອ່ານ ແລະ ຄະນິດສາດ ເມື່ອສົມທຽບກັບອີກ 6 ປະເທດໃນອາຊີຕາເວັນອອກສຽງໃຕ້ (ຕາຕະລາງ 3.2). ການເຫັນຄຸນຄ່າດ້ານການສຶກສາທີ່ຕໍ່າແມ່ນເຊື່ອມໂຍງກັບຄຸນນະພາບການສຶກສາທີ່ຕໍ່າ. ສໍາລັບນັກຮຽນຫຼາຍຄົນທີ່ມີຄວາມຫຍຸ້ງຍາກໃນການຮຽນຕັ້ງແຕ່ຍັງນ້ອຍ, ໂອກາດທີ່ຈະອອກໂຮງຮຽນແມ່ນມີຫຼາຍຂຶ້ນ ເມື່ອພວກເຮົາເລື່ອນຂຶ້ນສູ່ຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ. ຄວາມແຕກຕ່າງລະຫວ່າງຄວາມສາມາດໃນການອ່ານ ແລະ ຂຽນຂອງຊົນເຜົ່າລາວ ແລະ ຊົນເຜົ່າທີ່ບໍ່ແມ່ນລາວ ແມ່ນເຫັນໄດ້ຢ່າງຊັດເຈນ, ໂດຍທີ່ກຸ່ມຊົນເຜົ່າລາວ ສ່ວນໃຫຍ່ຈະສາມາດອ່ານ ແລະ ຂຽນໄດ້ດີກວ່າ. ດັ່ງທີ່ສະແດງຢູ່ໃນຮູບທີ 3.5, ສະຖານທີ່ຕັ້ງທາງດ້ານພູມສາດມີບົດບາດສໍາຄັນເນື່ອງຈາກເຫັນໄດ້ວ່າ ໄວໜຸ່ມໃນເຂດຕົວເມືອງມີອັດຕາການອ່ານ ແລະ ຂຽນທີ່ຄ່ອງແຄ້ວສູງສຸດ, ຮອງລົງມາແມ່ນໄວໜຸ່ມໃນເຂດຊົນນະບົດທີ່ຖະໜົນຫົນທາງເຂົ້າເຖິງ ແລະ ຕໍ່າສຸດແມ່ນໄວໜຸ່ມໃນເຂດຊົນນະບົດທີ່ຖະໜົນຫົນທາງຍັງບໍ່ທັນເຂົ້າເຖິງ.

## ຕາຕະລາງ 3.1: ຊັ້ນມັດທະຍົມສຶກສາຕາມແຂວງຕ່າງໆ, ປີ 2021

ແຫຼ່ງຂໍ້ມູນ: EMIS, 2022.

| | ຈຳນວນລົງທະບຽນຊັ້ນມັດທະຍົມຕົ້ນ | ຈຳນວນລົງທະບຽນຊັ້ນມັດທະຍົມປາຍ | ອັດຕາການເຂົ້າຮຽນຊັ້ນມັດທະຍົມຕົ້ນ | ອັດຕາການເຂົ້າຮຽນຊັ້ນມັດທະຍົມປາຍ | ຈຳນວນຫ້ອງຮຽນໃນຊັ້ນມັດທະຍົມຕົ້ນ | ອັດຕາການອອກຮຽນຊັ້ນມັດທະຍົມຕົ້ນ | ອັດຕາການອອກຮຽນຊັ້ນມັດທະຍົມປາຍ | ອັດຕາການເລື່ອນຊັ້ນໃນມັດທະຍົມຕົ້ນ | ອັດຕາການເລື່ອນຮຽນຊັ້ນມັດທະຍົມປາຍ | ອັດຕາການປ່ຽນຈາກມັດທະຍົມຕົ້ນຫາມັດທະຍົມປາຍ | ອັດຕາສ່ວນນັກຮຽນ-ຄູອອກຮຽນຊັ້ນມັດທະຍົມຕົ້ນ |
|---|---|---|---|---|---|---|---|---|---|---|---|
| ອັດຕະປື | 9.662 | 4.487 | 73,4 | 45,2 | 434 | 12,8 | 9,2 | 86 | 90,1 | 76,4 | 18 |
| ບໍ່ແກ້ວ | 13.759 | 6.025 | 82,5 | 47,3 | 626 | 11,5 | 15,1 | 87,3 | 84,2 | 79,2 | 18 |
| ບໍລິຄຳໄຊ | 19.733 | 9.301 | 80,2 | 48,9 | 818 | 11,5 | 11,1 | 87,2 | 88,2 | 76 | 21 |
| ຈຳປາສັກ | 34.702 | 16.332 | 63,7 | 41,3 | 1.657 | 11,9 | 8,1 | 87,7 | 91,6 | 77,2 | 16 |
| ຫົວພັນ | 24.460 | 11.024 | 92 | 56,2 | 1.075 | 9,8 | 9,8 | 89,7 | 90 | 76,9 | 17 |
| ຄຳມ່ວນ | 23.343 | 9.753 | 76,3 | 41,7 | 1.090 | 11,1 | 8,9 | 88,3 | 90,6 | 67,7 | 17 |
| ຫຼວງນ້ຳທາ | 13.648 | 6.547 | 84,3 | 55,5 | 567 | 7,8 | 8,3 | 91,4 | 91,1 | 78,7 | 19 |
| ຫຼວງພະບາງ | 31.824 | 12.557 | 81 | 44,2 | 1.253 | 11,5 | 11,5 | 88,1 | 87,9 | 63,9 | 16 |
| ອຸດົມໄຊ | 22.534 | 9.041 | 77,8 | 40,1 | 1.047 | 10,7 | 11,2 | 88,8 | 88,6 | 67,6 | 15 |
| ຜົ້ງສາລີ | 11.827 | 4.265 | 72,5 | 34,2 | 549 | 13 | 11,8 | 86,3 | 88,2 | 69 | 14 |
| ສາລະວັນ | 19.332 | 7.571 | 70,5 | 40,1 | 837 | 14,8 | 11,6 | 84,7 | 88,2 | 73,7 | 17 |
| ສະຫວັນນະເຂດ | 45.430 | 19.193 | 73,1 | 47,8 | 2.176 | 13,2 | 9,1 | 86,3 | 90,6 | 69,4 | 16 |
| ໄຊຍະບູລີ | 24.328 | 10.513 | 85,3 | 51,2 | 1.192 | 7,5 | 8,5 | 92,1 | 91,2 | 68,8 | 13 |
| ເຊກອງ | 8.779 | 4.487 | 72,8 | 51,2 | 386 | 13,3 | 9,7 | 85,4 | 89,6 | 80,7 | 16 |
| ນະຄອນຫຼວງ | 53.394 | 30.400 | 99,2 | 86,3 | 2.318 | 4,9 | 5,6 | 94,1 | 94 | 92,3 | 19 |
| ວຽງຈັນ | 31.125 | 16.303 | 86,5 | 57,7 | 1.306 | 9,2 | 8,8 | 89,6 | 90,6 | 81 | 18 |
| ໄຊສົມບູນ | 8.544 | 4.152 | 94,3 | 62,7 | 366 | 8,4 | 12,2 | 88,3 | 87,3 | 83,5 | 15 |
| ຊຽງຂວາງ | 21.812 | 10.902 | 91 | 62,8 | 1.068 | 8,3 | 11,5 | 90,8 | 88,2 | 80,3 | 15 |





## ຮູບທີ 3.5: ຄວາມສາມາດໃນການອ່ານ ແລະ ຂຽນພາສາລາວໃນກຸ່ມຄົນອາຍຸ 15-24 ປີ ຕາມເພດ, ຊົນເຜົ່າ ແລະ ສະຖານທີ່ຕັ້ງ, ເປັນສ່ວນຮ້ອຍ.

ແຫຼ່ງຂໍ້ມູນ: LSB, 2020b.




## ຕາຕະລາງ 3.2: ຜົນການຮຽນຂອງນັກຮຽນຊັ້ນປະຖົມປີທີ 5 ໃນການອ່ານ ແລະ ຄະນິດສາດ ສົມທຽບກັບລະດັບ SDG, ເປັນສ່ວນຮ້ອຍ

ແຫຼ່ງຂໍ້ມູນ: UNICEF ແລະ SEAMEO, 2020

| ປະເທດ | ການອ່ານ % | ເລກ % |
|---|---|---|
| ກຳປູເຈຍ | 11 | 19 |
| ສປປ ລາວ | 2 | 8 |
| ມາເລເຊຍ | 58 | 64 |
| ມຽນມ້າ | 11 | 12 |
| ຟິລິບປິນ | 10 | 17 |
| ຫວຽດນາມ | 82 | 92 |

ຮູບທີ 3.5 / ຕາຕະລາງ 3.2

ເມື່ອບໍ່ດົນມານີ້, ໂຮງຮຽນເອກະຊົນໄດ້ເຂົ້າມາຊ່ວຍເຕີມຊ່ອງຫວ່າງໃນການສຶກສາທາງພາກລັດ. ອັດຕາສ່ວນນັກຮຽນທີ່ຮຽນໃນໂຮງຮຽນເອກະຊົນບໍ່ວ່າຈະແມ່ນລະດັບປະຖົມ, ມັດທະຍົມຕອນຕົ້ນ ແລະ ຕອນປາຍແມ່ນເພີ່ມຂຶ້ນຕາມທີ່ສະແດງໃນຮູບທີ 3.6 (LSB, 2022). ສຳລັບບາງກຸ່ມ, ໂຮງຮຽນເອກະຊົນແມ່ນມີບົດບາດສຳຄັນໃນການສະໜອງການສຶກສາທີ່ມີຄຸນນະພາບ ແລະ ສາມາດຕອບສະໜອງຄວາມຕ້ອງການໄດ້ດີກວ່າລະບົບລັດ. ບາງໂຮງຮຽນນຳສະເໜີການສອນພາສາອັງກິດ ແລະ ຮັບສະໝັກຄູສອນຈາກຕ່າງປະເທດ. ເນື່ອງຈາກວ່າມີຊັບພະຍາກອນທີ່ຫຼາຍກວ່າ, ໂຮງຮຽນເອກະຊົນສາມາດສະໜອງສື່ອຳນວຍຄວາມໃນການຮຽນຮູ້ ແລະ ຄູສອນທີ່ມີຄຸນນະພາບທີ່ດີກວ່າ. ໂຮງຮຽນເອກະຊົນສ່ວນໃຫຍ່ແມ່ນເປີດສອນຢູ່ໃນເຂດຕົວເມືອງ, ເຊິ່ງເປັນເຂດທີ່ມີນັກຮຽນຖືກຈັດຢູ່ໃນກຸ່ມທີ່ຮັ່ງມີ. ດ້ວຍເຫດນີ້, ຜົນກະທົບທີ່ສຳຄັນທາງດ້ານຄວາມເທົ່າທຽມໄດ້ເກີດຂຶ້ນ ເນື່ອງຈາກວ່າມີແຕ່ນັກຮຽນທີ່ສາມາດຈ່າຍໄດ້ ຈຶ່ງມີຕົວເລືອກທີ່ດີກວ່າໄດ້, ແລະ ໂດຍສ່ວນໃຫຍ່ຜູ້ທີ່ມີຄວາມສາມາດຈ່າຍໄດ້ແມ່ນເລືອກທີ່ຈະຮຽນໂຮງຮຽນເອກະຊົນ, ສຸດທ້າຍແມ່ນປະຖິ້ມຜູ້ທຸກຍາກ

ທີ່ສຸດໄວ້ທາງຫຼັງ (McCowan and Unterhalter, 2021). ໃນ ສປປ ລາວ, ທ່າອ່ຽງນີ້ໄດ້ຂົ່ມຂູ່ ແລະ ເພີ່ມຄວາມບໍ່ສະເໝີພາບລະຫວ່າງຜູ້ທີ່ສາມາດຈ່າຍຄ່າຮຽນໄດ້ ແລະ ຜູ້ທີ່ບໍ່ສາມາດຈ່າຍໄດ້, ສະພາບການນີ້ ຍິ່ງເພີ່ມທະວີການແບ່ງແຍກຍິ່ງຂຶ້ນລະຫວ່າງນັກຮຽນຈາກກຸ່ມທີ່ຮັ່ງມີ ແລະ ກຸ່ມທີ່ທຸກຍາກ, ແລະ ລະຫວ່າງກຸ່ມທີ່ມາຈາກຊົນນະບົດ ແລະ ກຸ່ມທີ່ຢູ່ໃນເມືອງ.

ຮູບທີ 3.6

## ການສຶກສາ ແລະ ການຝຶກອົບຮົມດ້ານເຕັກນິກວິຊາຊີບ

ສະຖາບັນເຕັກນິກວິຊາຊີບຮັບລົງທະບຽນເຂົ້າຮຽນສູງສຸດຮອງຈາກການສຶກສາຊັ້ນປະຖົມ ແລະ ມັດທະຍົມ. ບັນດາກະຊວງ ແລະ ອົງການຈັດຕັ້ງຕ່າງໆເປັນຜູ້ຄຸ້ມຄອງການສຶກສາ ແລະ ຝຶກອົບຮົມດ້ານເຕັກນິກວິຊາຊີບ,ລວມທັງກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ສະຫະພັນແມ່ຍິງລາວ ແລະ ສູນກາງຊາວໜຸ່ມລາວ. ໃນປີ 2020-2021, ນັກຮຽນ 23.443 ຄົນ, ສ່ວນໃຫຍ່ແມ່ນໄວໜຸ່ມ, ໄດ້ລົງທະບຽນເຂົ້າຮຽນ ໂຮງຮຽນເຕັກນິກວິຊາຊີບໃນລະດັບຕ່າງໆ (ຮູບ 3.7ກ).ໂຮງຮຽນເຕັກນິກວິຊາຊີບລະດັບຕົ້ນໃຫ້ການຝຶກອົບຮົມເປັນເວລາຫົກເດືອນ ຫຼື ໜ້ອຍກວ່າ; ລະດັບກາງສະໜອງການຝຶກອົບຮົມສຳລັບຫົກເດືອນຫາໜຶ່ງປີ; ແລະ ລະດັບທີ່ສູງຂຶ້ນປະກອບດ້ວຍການຝຶກອົບຮົມສຳລັບໜຶ່ງຫາສາມປີ. ການລົງທະບຽນເຂົ້າຮຽນຫຼາຍທີ່ສຸດແມ່ນຢູ່ໃນລະດັບກາງ.

ໂຮງຮຽນເຕັກນິກວິຊາຊີບໄດ້ສິດສອນສາຂາວິຊາຕ່າງໆເຊັ່ນ: ການໄຟຟ້າ, ການປຸງແຕ່ງກະສິກຳ, ວຽກງານຕັດຫຍິບ, ຊ່າງໄມ້,ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ກົນຈັກລົດ. ໃນປີ 2020-2021, ຂະແໜງວິສະວະກຳມີສ່ວນແບ່ງສູງສຸດຂອງການລົງທະບຽນຢູ່ທີ່ 43,1 ສ່ວນຮ້ອຍ (ຮູບ 3.7ຂ). ຂະແໜງນີ້ປະກອບມີການປົວແປງຍານພາຫະນະ ແລະ ເຄື່ອງຈັກ ແລະ ຍັງກ່ຽວຂ້ອງກັບອຸດສາຫະກຳຈຳນວນໜຶ່ງເຊັ່ນ: ກະສິກຳ ແລະ ການຜະລິດ, ແລະ ອື່ນໆ. ສາຂາບໍລິຫານທຸລະກິດມີອັດຕາການເຂົ້າຮຽນສູງເປັນອັນດັບສອງຢູ່ທີ່ 21,4 ສ່ວນຮ້ອຍ; ສາຂານີ້ມີຈຸດປະສົງເພື່ອສົ່ງເສີມການເລີ່ມຕົ້ນເຮັດທຸລະກິດ. ຖັດມາແມ່ນຂະແໜງເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT) ຢູ່ທີ່ 15,9 ສ່ວນຮ້ອຍ. ສາຂາການຜະລິດ ແລະ ການບໍລິການມີຈຳນວນຜູ້ເຂົ້າຮຽນທີ່ໜ້ອຍກວ່າພຽງແຕ່ 2,7 ສ່ວນຮ້ອຍ ແລະ 5,2 ສ່ວນຮ້ອຍ ຕາມລຳດັບ, ເຖິງແມ່ນວ່າທັງສອງສາຂານີ້ຈະປະກອບສ່ວນຢ່າງໃຫຍ່ຫຼວງໃຫ້ແກ່ເສດຖະກິດລາວ (LSB,2022). ການດຶງດູດໃຫ້ນັກສຶກສາເຂົ້າມາຮຽນສາຂາເຫຼົ່ານີ້ຫຼາຍຂຶ້ນ ໜ້າຈະເໝາະສົມ ແລະ ແທດເໝາະກັບຄວາມຕ້ອງການຂອງຕະຫຼາດໄດ້ດີກວ່າ.

ຮູບທີ 3.7

ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານຈຳນວນໜຶ່ງສະໜອງການສຶກສາ ແລະ ການຝຶກອົບຮົມດ້ານເຕັກນິກວິຊາຊີບໂດຍຜ່ານການສະໜັບສະໜູນຈາກພາຍໃນ ແລະ ຕ່າງປະເທດ. ປົກກະຕິແລ້ວ

### ຮູບທີ 3.6: ສ່ວນແບ່ງຂອງນັກຮຽນໃນໂຮງຮຽນເອກະຊົນ, ເປັນສ່ວນຮ້ອຍ

ແຫຼ່ງຂໍ້ມູນ: EMIS, 2022.






## ກ່ອງເນື້ອໃນ 3.1: ສິ່ງທ້າທາຍຕໍ່ການສຶກສາ ແລະ ອົບຮົມເຕັກນິກວິຊາຊີບ

**ການລົງທຶນ ແລະ ການສະໜັບສະໜູນທີ່ຕໍ່າໃນການສຶກສາ ແລະ ອົບຮົມເຕັກນິກວິຊາຊີບ**
ບໍ່ມີໂຄງການຊ່ວຍເຫຼືອດ້ານທຶນຮອນທີ່ເໝາະສົມສຳລັບໂຮງຮຽນເຕັກນິກວິຊາຊີບ. ການສະໜັບສະໜູນດ້ານທຶນຮອນແມ່ນບໍ່ພຽງພໍໃນການປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮອງຮັບຈຳນວນຜູ້ຝຶກງານ ແລະ ນັກສຶກສາທີ່ເພີ່ມຂຶ້ນ.

**ບັນຫາຊຳເຮື້ອຂອງທັກສະທີ່ບໍ່ກົງກັນ**
ຄວາມບໍ່ແທດເໝາະກັນລະຫວ່າງນັກສຶກສາທີ່ຈົບຈາກໂຮງຮຽນເຕັກນິກວິຊາຊີບ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານຊີ້ໃຫ້ເຫັນເຖິງການເຊື່ອມໂຍງທີ່ບໍ່ພຽງພໍຂອງໂຮງຮຽນເຕັກນິກວິຊາຊີບກັບຄວາມຕ້ອງການຂອງຕະຫຼາດສ່ວນໜຶ່ງເປັນຜົນມາຈາກອຸປະກອນການຝຶກອົບຮົມທີ່ບໍ່ພຽງພໍ ແລະ ເຄື່ອງຈັກ, ເຄື່ອງມືທີ່ລ້າສະໄໝສຳລັບການຝຶກອົບຮົມພາກປະຕິບັດ. ການຝຶກອົບຮົມທີ່ມີຄຸນນະພາບຕໍ່າ (ເນື່ອງຈາກໂຄງສ້າງພື້ນຖານ, ເຄື່ອງຈັກ ແລະ ອຸປະກອນທີ່ມີຄຸນນະພາບຕໍ່າ), ຜູ້ສິດສອນທີ່ຂາດທັກສະການສອນ ແລະ ປະສົບການຕົວຈິງກໍ່ເຮັດໃຫ້ທັກສະທີ່ບໍ່ກົງກັນເປັນບັນຫາຊຳເຮື້ອ.

**ຄວາມສາມາດໃນການດຶງດູດທີ່ຈຳກັດຂອງໂຮງຮຽນເຕັກນິກວິຊາຊີບໃນລະບົບການສຶກສາ**
ບາງຄົນໃຫ້ຄຸນຄ່າພຽງຕໍ່ການສຶກສາລະດັບມະຫາວິທະຍາໄລເທົ່ານັ້ນ, ເຊິ່ງເຮັດໃນການລົງທະບຽນເຂົ້າຮຽນຢູ່ໂຮງຮຽນເຕັກນິກວິຊາຊີບຕໍ່າ. ການໃຫ້ຄຳແນະນຳທີ່ເປັນແບບແຜນກ່ຽວກັບໂອກາດການຮຽນຮູ້ ແລະ ຊ່ອງທາງຫາວຽກໃຫ້ກັບນັກຮຽນຈາກໂຮງຮຽນເຕັກນິກວິຊາຊີບແມ່ນຍັງຈຳກັດ.

ແຫຼ່ງຂໍ້ມູນ: UNESCO and UNEVOC, 2020.



## ຮູບທີ 3.7: ການລົງທະບຽນການສຶກສາດ້ານເຕັກນິກວິຊາຊີບຕາມລະດັບ ແລະ ສາຂາວິຊາ, 2020-2021

ແຫຼ່ງຂໍ້ມູນ: ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ.







ການຝຶກອົບຮົມແມ່ນໄດ້ຖືກສະໜອງໃຫ້ຢູ່ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ, ເນື່ອງຈາກເຂດເຫຼົ່ານີ້ຂາດແຄນການຝຶກອົບຮົມໃນລະບົບ. ໂດຍທົ່ວໄປແລ້ວຜູ້ມາຮ່ວມຝຶກອົບຮົມແມ່ນມາຈາກກຸ່ມດ້ອຍໂອກາດ. ວິທີແກ້ໄຂດັ່ງກ່າວຊ່ວຍສະໜັບສະໜູນຜູ້ທີ່ບໍ່ມີການສຶກສາຊັ້ນປະຖົມ ຫຼື ມັດທະຍົມ, ຍ້ອນວ່າໂຄງການຝຶກອົບຮົມອື່ນໆມັກມີເງື່ອນໄຂໃຫ້ຜູ້ເຂົ້າຮ່ວມຕ້ອງສຳເລັດການສຶກສາໃນລະບົບກ່ອນ. ການຝຶກອົບຮົມນອກລະບົບບາງບ່ອນຍັງໃຫ້ໃບຢັ້ງຢືນເພື່ອຊ່ວຍຜູ້ເຂົ້າຮ່ວມໃນການຊອກຫາວຽກເຮັດງານທຳ.

ບາງສິ່ງທ້າທາຍໃຫຍ່ໃນການສຶກສາດ້ານເຕັກນິກວິຊາຊີບ ລວມມີການລົງທຶນ ແລະ ການສະໜັບສະໜູນທີ່ຕໍ່າ (ເບິ່ງກ່ອງເນື້ອໃນ 3.1). ໂດຍທົ່ວໄປແລ້ວແມ່ນບໍ່ມີແຜນການສະໜອງທຶນທີ່ເໝາະສົມ, ແລະ ການສະໜັບສະໜູນທຶນຮອນບໍ່ພຽງພໍກັບພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກເພື່ອຮອງຮັບຈຳນວນຜູ້ເຂົ້າຮ່ວມຝຶກອົບຮົມ ແລະ ນັກສຶກສາທີ່ເພີ່ມຂຶ້ນ. ທັກສະທີ່ບໍ່ກົງກັນຂອງນັກສຶກສາເຕັກນິກວິຊາຊີບກັບຄວາມຕ້ອງການຂອງຕະຫຼາດແຮງງານຊີ້ໃຫ້ເຫັນການເຊື່ອມໂຍງທີ່ຕໍ່າກັບຄວາມຕ້ອງການຂອງຕະຫຼາດ. ອຸປະກອນການຝຶກອົບຮົມ, ເຄື່ອງມື ແລະເຄື່ອງຈັກທີ່ລ້າສະໄໝສຳລັບການຝຶກອົບຮົມພາກປະຕິບັດ, ພື້ນຖານໂຄງລ່າງທີ່ມີຄຸນນະພາບຕໍ່າ, ຜູ້ສິດສອນທີ່ຂາດທັກສະການສອນ ແລະ ປະສົບການຕົວຈິງເຮັດໃຫ້ທັກສະທີ່ບໍ່ກົງກັນເປັນບັນຫາຊໍ້າເຮື້ອ. ຄວາມສາມາດໃນການດຶງດູດທີ່ຈຳກັດຂອງການສຶກສາດ້ານເຕັກນິກວິຊາຊີບເມື່ອປຽບທຽບກັບການສຶກສາທົ່ວໄປໄດ້ເຮັດໃຫ້ການລົງທະບຽນເຂົ້າຮຽນຕໍ່າ, ເຊິ່ງເປັນບັນຫາທີ່ໜັກໜ່ວງຂຶ້ນຍ້ອນການຂາດການຊ່ວຍເຫຼືອແນະນຳນັກຮຽນກ່ຽວກັບໂອກາດການຮຽນຮູ້ ແລະ ຊ່ອງທາງຫາງານຂອງສາຂາເຕັກນິກວິຊາຊີບ (UNESCO, 2022).

ກ່ອງເນື້ອໃນ 3.1

## ການສຶກສາຫຼັງມັດທະຍົມ

ນັກສຶກສາທີ່ຮຽນຈົບມັດທະຍົມຕອນປາຍສາມາດສືບຕໍ່ການສຶກສາຫຼັງມັດທະຍົມໃນສະຖາບັນຂອງລັດ ຫຼື ເອກະຊົນ. ມະຫາວິທະຍາໄລຂອງລັດ 4 ແຫ່ງ ມີ 20 ກວ່າຄະນະວິຊາ; ມະຫາວິທະຍາໄລວິທະຍະສາດສຸຂະພາບໜຶ່ງແຫ່ງເຊິ່ງມີ 3 ຄະນະວິຊາ. 6 ສະຖາບັນການສຶກສາຫຼັງມັດທະຍົມເອກະຊົນມີສາຂາວິຊາລະດັບປະລິນຍາຕີທີ່ຈຳກັດ. ສະຖາບັນເອກະຊົນຫຼາຍແຫ່ງສ່ວນໃຫຍ່ແມ່ນໃຫ້ໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນການສຶກສາຊັ້ນສູງ, ເຊິ່ງຕໍ່າກວ່າລະດັບປະລິນຍາຕີ.

ນັກຮຽນຈົບມັດທະຍົມຕອນປາຍຈຳນວນຫຼາຍໄດ້ຮຽນຕໍ່ການສຶກສາຫຼັງມັດທະຍົມ (ຮູບ 3.8ກ). ໃນປີ 2021,ໃນບັນດານັກຮຽນຈົບມັດທະຍົມປາຍ, 56,9 ສ່ວນຮ້ອຍໄດ້ເຂົ້າຮຽນຕໍ່ມະຫາໄລ ແລະ ຊັ້ນສູງ. ເນື່ອງຈາກນັກຮຽນບາງຄົນລົງທະບຽນຮຽນໃນຫຼາຍກວ່າໜຶ່ງສາຂາວິຊາ, ຈຳນວນການລົງທະບຽນອາດຈະບໍ່ສະທ້ອນໃຫ້ເຫັນເຖິງຈຳນວນຕົວຈິງຂອງນັກຮຽນ. ເມື່ອສົມທຽບກັນແລ້ວ,





## ຮູບທີ 3.8: ນັກຮຽນຈົບຊັ້ນມັດທະຍົມສຶກສາ ແລະ ສຶກສາຕໍ່ 2020-2021

ແຫຼ່ງຂໍ້ມູນ: ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ.







ຈຳນວນນັກສຶກສາທີ່ຮຽນຈົບມັດທະຍົມຕອນຕົ້ນທີ່ຮຽນຕໍ່ມະຫາໄລ ແລະ ຊັ້ນສູງຍັງຕໍ່າກວ່າທີ່ 6 ສ່ວນຮ້ອຍ. ໃນບັນດາປະເພດການສຶກສາຫຼັງມັດທະຍົມທີ່ນັກສຶກສາຈົບມັດທະຍົມເຂົ້າຮຽນ, ການລົງທະບຽນໃນໂຮງຮຽນເຕັກນິກວິຊາຊີບແມ່ນສູງກວ່າມະຫາວິທະຍາໄລຂອງລັດ, ຮອງລົງມາແມ່ນສະຖາບັນການສຶກສາຊັ້ນສູງພາຍໃຕ້ກະຊວງອື່ນໆ, ສະຖາບັນສ້າງຄູ ແລະ ມະຫາວິທະຍາໄລເອກະຊົນ.

ຮູບທີ 3.8

ການສຶກສາຫຼັງມັດທະຍົມມີພຽງບາງສາຂາວິຊາທີ່ສຸມໃສ່ການກະສິກຳ ແລະ ການຜະລິດ ທີ່ສອດຄ່ອງກັບການວາງແຜນການພັດທະນາເສດຖະກິດ. ນັກສຶກສາຈຳນວນຫຼາຍ (17,3 ສ່ວນຮ້ອຍ) ຮຽນວິສະວະກຳ (ຮູບທີ 3.9). ສາຂາວິຊາອື່ນໆທີ່ມີການລົງທະບຽນທີ່ຫຼາຍແມ່ນບໍລິຫານທຸລະກິດ (16,7 ສ່ວນຮ້ອຍ) ແລະ ກະສິກຳ ແລະ ປ່າໄມ້ (13,1 ສ່ວນຮ້ອຍ). ນັກສຶກສາເລືອກວິຊາເຫຼົ່ານີ້ ຍ້ອນວ່າພວກເຂົາເຊື່ອວ່າສາຂາເຫຼົ່ານີ້ມີເຮັດໃຫ້ເຂົາສາມາດເຮັດວຽກໄດ້ໃນຂະແໜງເສດຖະກິດຫຼາຍຂະແໜງ. ມີພຽງແຕ່ນັກຮຽນຈຳນວນໜ້ອຍທີ່ລົງທະບຽນຮຽນໃນຄະນິດສາດ ແລະ ສະຖິຕິ (0,9 ສ່ວນຮ້ອຍ), ແລະ ວາລະສານ ແລະ ຂໍ້ມູນຂ່າວສານ (0,8 ສ່ວນຮ້ອຍ). ອັນນີ້ອາດຈະເປັນຍ້ອນຈຳນວນວຽກງານທີ່ຈຳກັດສຳລັບນັກຮຽນຈົບໃນສາຍຂໍ້ມູນຂ່າວສານ ແລະ ຄວາມຍາກຂອງວິຊາທີ່ກ່ຽວຂ້ອງກັບຄະນິດສາດ ແລະ ສະຖິຕິ.

ຮູບທີ 3.9

## ໂດຍລວມແລ້ວ ການສຶກສາກຳລັງກ້າວຖອຍຫຼັງ

ອີງຕາມຜົນໄດ້ຮັບຂອງ HDI ໃນປີ 2021, ຈຳນວນປີທີ່ຄາດວ່ານັກຮຽນຈະເຂົ້າຮຽນໃນ ສປປ ລາວ ໄດ້ຫຼຸດລົງຢ່າງຕໍ່ເນື່ອງຈາກ 11,22 ປີ ໃນປີ 2015 ເປັນ 10,14 ປີ ໃນປີ 2021. ລະດັບປະຈຸບັນແມ່ນຄືກັນກັບ 12 ປີກ່ອນໃນປີ 2010. ນີ້ສະແດງໃຫ້ເຫັນເຖິງລະດັບການຮັກສາອັດຕາເຂົ້າຮຽນທີ່ຫຼຸດລົງຂອງລະບົບການສຶກສາ. ລະດັບການພັດທະນາທີ່ຫຼຸດລົງຂອງລະບົບການສຶກສາອາດຈະເຮັດໃຫ້ທັດສະນະຄະຕິຕໍ່ກັບຄຸນຄ່າຂອງການສຶກສາຫຼຸດລົງ ແລະ ນັກຮຽນທີ່ຢາກຢູ່ໃນໂຮງຮຽນກໍ່ຫຼຸດລົງໄປນຳ. ຈຳນວນປີຂອງການເຂົ້າຮຽນໄດ້ຢຸດສະງັກຕັ້ງແຕ່ປີ 2019 ຢູ່ທີ່ 5,37 ປີ, ຊີ້ໃຫ້ເຫັນເຖິງການປ່ຽນແປງພຽງເລັກນ້ອຍໃນດ້ານທັກສະ ແລະ ຄວາມສາມາດຂອງປະຊາກອນ.

ໃນຂະນະທີ່ໂຄວິດ-19 ມີຜົນກະທົບທາງລົບຢ່າງຫຼວງຫຼາຍຕໍ່ການເຂົ້າຮຽນ ແລະ ຜົນການຮຽນ (ກ່ອງເນື້ອໃນ 3.2), ເຊິ່ງເຮັດໃຫ້ຄວາມບໍ່ສະເໝີພາບ ແລະ ສິ່ງທ້າທາຍທີ່ມີຢູ່ຮ້າຍແຮງຂຶ້ນ, ບັນຫາທີ່ໜ້າເປັນຫ່ວງໃນດ້ານການສຶກສາຫຼາຍຢ່າງເກີດຂຶ້ນກ່ອນໜ້າທີ່ຈະມີໂລກລະບາດແລ້ວ. ບັນຫາເຫຼົ່ານີ້ລວມມີອັດຕາການອອກໂຮງຮຽນໃນລະດັບມັດທະຍົມ, ການຫຼຸດລົງຂອງຈຳນວນປີເຂົ້າຮຽນ ແລະ ການໃຊ້ຈ່າຍທີ່ເທົ່າເກົ່າຂອງລັດໃນດ້ານການສຶກສາ (ຮູບ 3.10). ການໃຊ້ຈ່າຍໃນການສຶກສາທີ່ຕໍ່າແມ່ນເປັນທ່າອ່ຽງທີ່ໜ້າວິຕົກກັງວົນ ເນື່ອງຈາກຄວາມຈຳເປັນໃນການພັດທະນາ

ຄວາມສາມາດທີ່ສຳຄັນຕໍ່ການນຳໃຊ້ຄວາມໄດ້ປຽບທາງປະຊາກອນ. ເປົ້າໝາຍຂອງລັດຖະບານທີ່ຈະເພີ່ມການໃຊ້ຈ່າຍ ແລະ ແກ້ໄຂການຂາດແຄນດ້ານການສຶກສາຍັງບໍ່ທັນບັນລຸໄດ້, ເຊິ່ງຈະຂັດຂວາງອະນາຄົດການພັດທະນາມະນຸດຂອງໄວໜຸ່ມ (ຮູບ 3.11).

ຮູບທີ 3.10 / ຮູບທີ 3.11

# 3.3 ກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງ

## ຍຸດທະສາດຂອງລັດຖະບານໃນການພັດທະນາການສຶກສາ

ລັດຖະບານແຫ່ງ ສປປ ລາວ ກຳນົດການສຶກສາເປັນເງື່ອນໄຂເບື້ອງຕົ້ນສຳລັບການເຕີບໂຕທາງດ້ານເສດຖະກິດແບບຍືນຍົງ ແລະ ການຫຼຸດຜ່ອນຄວາມທຸກຍາກ. ລັດຖະທຳມະນູນໄດ້ຮັບຮູ້ການສຶກສາເປັນສິດທິມະນຸດ (ມາດຕາ 28) ແລະ ກຳນົດບົດບາດຂອງລັດໃນການພັດທະນາບັນດານະໂຍບາຍຂອງຊາດເພື່ອໜູນຊ່ວຍພົນລະເມືອງທີ່ມີຄວາມສາມາດ, ຄວາມຮູ້, ທັກສະ ແລະ ວິຊາການ (ມາດຕາ 22). ຫຼາຍໆນະໂຍບາຍ ແລະ ແຜນການທີ່ຜ່ານມາ ໄດ້ໃຫ້ບຸລິມະສິດການສຶກສາເປັນປະຕູສູ່ການພັດທະນາ ມະນຸດ, ລວມທັງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX (2021-2025). ຍຸດທະສາດການເຕີບໂຕ ແລະ ລົບລ້າງຄວາມທຸກຍາກແຫ່ງຊາດໄດ້ຍົກສູງການພັດທະນາທ່າແຮງຂອງຊາວໜຸ່ມຕໍ່ການຫຼຸດຜ່ອນຄວາມທຸກຍາກ.

ລັດຖະບານໄດ້ຮັບຮອງເອົາແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄລຍະ 2021-2025 ເປັນຍຸດທະສາດລວມຂອງການພັດທະນາຊັບພະຍາກອນມະນຸດ, ໂດຍແນໃສ່ການປັບປຸງຄວາມຮູ້,ທັກສະ ແລະ ສຸຂະພາບ, ໃນບັນດາບຸລິມະສິດອື່ນໆ. ນະໂຍບາຍເນັ້ນໃສ່ການປັບປຸງຄຸນນະພາບຂອງການສຶກສາຊັ້ນປະຖົມ, ຍ້ອນຮັບຮູ້ວ່າທັກສະພື້ນຖານແມ່ນໄດ້ຮັບການພັດທະນາຕັ້ງແຕ່ໄວເດັກ; ຂະຫຍາຍການເຂົ້າເຖິງການສຶກສາຊັ້ນມັດທະຍົມຕອນຕົ້ນ; ເສີມສ້າງຄວາມຮູ້ ແລະ ທັກສະການສອນຂອງຄູ; ຍົກລະດັບທັກສະ ແລະ ຄວາມສາມາດຂອງພະນັກງານກະຊວງສຶກສາທິການ ແລະ ກິລາ; ສ້າງຄວາມເຂັ້ມແຂງດ້ານສະຖາບັນຢູ່ຂັ້ນແຂວງ ແລະ ເມືອງ; ຫຼຸດຜ່ອນຄວາມບໍ່ສະເໝີພາບໃນເຂດທີ່ດ້ອຍໂອກາດທີ່ສຸດ; ແລະ ສະໜັບສະໜູນການສຶກສາຫຼັງຂັ້ນພື້ນຖານເພື່ອປະກອບສ່ວນໃນການພັດທະນາເສດຖະກິດ ແລະ ສັງຄົມ. ແຜນພັດທະນາແມ່ນສືບຕໍ່ຄວາມຄືບໜ້າທີ່ສຳຄັນໃນການຂະຫຍາຍການເຂົ້າເຖິງການສຶກສາ, ໂດຍສະເພາະໃນລະດັບປະຖົມ ເຊິ່ງໄດ້ຮັບການສະໜັບສະໜູນທີ່ດີຈາກບັນດາຄູ່ຮ່ວມມືສາກົນ.

**ຮູບທີ 3.9: ການລົງທະບຽນການສຶກສາຊັ້ນສູງຕາມສາຂາວິຊາ, 2020-2021**

ແຫຼ່ງຂໍ້ມູນ: ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ








**ຮູບທີ 3.10: ການໃຊ້ຈ່າຍຂອງລັດໃນການສຶກສາ 2010-2018**

ແຫຼ່ງຂໍ້ມູນ: ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ




ຍຸດທະສາດການຫຼຸດຜ່ອນຄວາມທຸກຍາກແຫ່ງຊາດສະເໜີໃຫ້ແນໃສ່ປັບປຸງການສຶກສາຂອງແມ່ຍິງ ແລະ ເດັກຍິງ, ຄຽງຄູ່ກັບໂອກາດການສ້າງລາຍຮັບຜ່ານການຝຶກອົບຮົມທັກສະ ແລະ ການເງິນຈຸລະພາກ. ຂະນະທີ່ຊາວໜຸ່ມຊົນນະບົດຖືກກ່າວເຖິງໂດຍຫຍໍ້ໃນນະໂຍບາຍກະສິກຳ, ຍຸດທະສາດຫຼຸດຜ່ອນຄວາມທຸກຍາກບໍ່ໄດ້ເຈາະຈົງເຖິງບັນດາສູນຝຶກອົບຮົມວິຊາຊີບທີ່ມີກິດຈະກຳພັດທະນາກະສິກຳ ຫຼື ກິດຈະກຳສ້າງລາຍຮັບອື່ນໆໃຫ້ຊາວໜຸ່ມຊົນນະບົດ. ນອກນັ້ນຍັງມີໂຄງການທີ່ຊຸກຍູ້ໃຫ້ພໍ່ແມ່ປະຊາຊົນເອົາລູກເຂົ້າໂຮງຮຽນ, ໂດຍສະເພາະແມ່ນເດັກຍິງ ແລະ ເດັກນ້ອຍຈາກບັນດາເຜົ່າ.

ໃນຊຸມປີບໍ່ດົນມານີ້, ລັດຖະບານໄດ້ລົງມືປ່ຽນຄຳໝັ້ນສັນຍານະໂຍບາຍການສຶກສາເປັນງົບປະມານຕົວຈິງໂດຍກຳນົດສ່ວນແບ່ງຂອງການໃຊ້ຈ່າຍດ້ານການສຶກສາປະຈຳປີຢູ່ທີ່ 18 ສ່ວນຮ້ອຍຂອງການໃຊ້ຈ່າຍທັງຫມົດ (ມາດຕາ 15, ກົດໝາຍວ່າດ້ວຍການສຶກສາ, 2015). ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຍັງລວມເອົາແຜນງົບປະມານລາຍຈ່າຍດ້ານການສຶກສາເປັນ 17 ສ່ວນຮ້ອຍຂອງລາຍຈ່າຍທັງໝົດຂອງລັດຖະບານ.

ໃນປີ 2021, ງົບປະມານສຳລັບແຜນການສຶກສາຂອງລັດຖະບານມີຢູ່ 3.866 ຕື້ກີບ ຫຼື 12,2 ສ່ວນຮ້ອຍ ຂອງງົບປະມານທັງໝົດຂອງລັດຖະບານ, ທຽບໃສ່ປີ 2020 ເຊິ່ງຢູ່ທີ່ 3.657 ຕື້ກວ່າກີບ ຫຼື 10,2 ສ່ວນຮ້ອຍ ຂອງງົບປະມານທັງໝົດ. ໃນສອງປີນີ້, ຂະແໜງການສຶກສາໄດ້ຮັບສ່ວນແບ່ງງົບປະມານເປັນອັນດັບສອງຮອງຈາກວຽກງານຄົມມະນາຄົມ, ຂົນສົ່ງ ແລະ ກໍ່ສ້າງ. ເຖິງວ່າຈະມີການໃຊ້ຈ່າຍຢ່າງຫຼວງຫຼາຍ, ສ່ວນແບ່ງງົບປະມານຍັງ

**ຮູບທີ 3.11: ອັດຕາສ່ວນຂອງງົບປະມານທັງໝົດຂອງລັດຖະບານທີ່ຈັດສັນໃຫ້ແກ່ການສຶກສາ, ສປປ ລາວ**

ແຫຼ່ງຂໍ້ມູນ: ກະຊວງສຶກສາທິການ ແລະ ກິລາ, 2020, 2022



## ຕາຕະລາງ 3.3: ອັດຕາລາຍຈ່າຍຂອງລັດດ້ານການສຶກສາ ທຽບໃສ່ລາຍຈ່າຍທັງໝົດ

ແຫຼ່ງຂໍ້ມູນ: ແຜນງົບປະມານແຫ່ງລັດ, ສປປ ລາວ, 2021 ແລະ Our World in Data, 2022

| ປະເທດ | ອັດຕາລາຍຈ່າຍຕໍ່ລາຍຈ່າຍທັງໝົດ | ປີ |
|---|---|---|
| ສປປ ລາວ | 12,2 | 2021 |
| ໄທ | 16,7 | 2020 |
| ຫວຽດນາມ | 14,8 | 2021 |
| ກຳປູເຈຍ | 9,4 | 2018 |
| ມາເລເຊຍ | 16,4 | 2021 |
| ກຸ່ມປະເທດລາຍໄດ້ປານກາງຂັ້ນຕ່ຳ | 14,3 | 2019 |
| ກຸ່ມປະເທດລາຍໄດ້ຂັ້ນຕ່ຳ | 15,8 | 2018 |

ຖືວ່າຕ່ຳເມື່ອທຽບກັບປະເທດອື່ນໆໃນພາກພື້ນ, ແນວໃດກໍ່ຕາມ (ຕາຕະລາງ 3.3). ສົກປີ 2016 – 2020, ງົບປະມານການສຶກສາຕົ້ນຕໍແມ່ນສຸມໃສ່ຊັ້ນປະຖົມ ສະເລ່ຍ 32,7 ສ່ວນຮ້ອຍ, ຮອງລົງມາແມ່ນ ມັດທະຍົມຕອນຕົ້ນ 21,8 ສ່ວນຮ້ອຍ, ຊັ້ນມັດທະຍົມຕອນປາຍ 11,8 ສ່ວນຮ້ອຍ, ໂຮງຮຽນເຕັກນິກ-ວິຊາຊີບ 4 ສ່ວນຮ້ອຍ, ມະຫາວິທະຍາໄລ ແລະ ຊັ້ນສູງ 5,7 ສ່ວນຮ້ອຍ ແລະ ການສຶກສານອກລະບົບຢູ່ທີ່ 1 ສ່ວນຮ້ອຍ.

ຕາຕະລາງ 3.3

ລັດຖະບານມີຄ່າໃຊ້ຈ່າຍຫຼັກຕໍ່ບຸກຄະລາກອນ ແລະ ຄູສອນໂດຍສະເລ່ຍ 77 ສ່ວນຮ້ອຍ ແຕ່ປີ 2017 ຫາ 2020, ເຊິ່ງຫຼາຍກວ່າການດຳເນີນງານ ແລະ ການປັບປຸງການສຶກສາ, ລວມທັງການຝຶກອົບຮົມຄູ ແລະ ວັດຖຸອຸປະກອນ ເພື່ອແກ້ໄຂບັນຫາດ້ານຄຸນນະພາບການສຶກສາ (ກະຊວງການເງິນ, 2021). ຢ່າງໃດກໍຕາມ, ການໃຊ້ຈ່າຍທີ່ຕ່ຳໃນການປັບປຸງການສຶກສາ, ອາດຈະເຮັດໃຫ້ຄວາມຄືບໜ້າຊ້າລົງໃນການບັນລຸເປົ້າໝາຍການສຶກສາ ແລະ ການປັບປຸງຜົນໄດ້ຮັບດ້ານການສຶກສາ. ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ, ການໃຊ້ຈ່າຍແມ່ນຢຸດສະງັກ, ເຊິ່ງເກີດຂຶ້ນກ່ອນໜ້າຈະປະເຊີນກັບບັນຫາທ້າທາຍຂອງໂຄວິດ-19. ບັນດາຂໍ້ຜູກມັດຂອງນະໂຍບາຍງົບປະມານດ້ານການສຶກສາຍັງບໍ່ທັນສອດຄ່ອງກັບຄວາມພະຍາຍາມ ຫຼື ກົນໄກປະຕິບັດທີ່ແທ້ຈິງໃນການບັນລຸເປົ້າໝາຍ. ນອກນັ້ນຍັງບໍ່ມີການແບ່ງແຍກການຈັດສັນທີ່ຈະແຈ້ງຂອງງົບປະມານການສຶກສາ. ລັດຖະບານຍັງຂາດຍຸດທະສາດທີ່ສຸມໃສ່ການຫາທຶນເພື່ອຕອບສະໜອງການໃຊ້ຈ່າຍທີ່ເພີ່ມຂຶ້ນ, ເຊິ່ງອາດເຮັດຜ່ານກົນໄກຫາແຫຼ່ງທຶນແບບໃໝ່ ຫຼື ການຮ່ວມມືກັບພາກເອກະຊົນ. ຖ້າຫາກບໍ່ມີມາດຕະການທີ່ແນ່ນອນໃນການຊີ້ນຳການໃຊ້ຈ່າຍ, ຄວາມມຸ່ງຫວັງຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄລຍະ 2021-2025 ຈະບໍ່ບັນລຸໄດ້.

ກ່ອງເນື້ອໃນ 3.2 / ກ່ອງເນື້ອໃນ 3.3

### ທັດສະນະຄະຕິຂອງໄວໜຸ່ມຕໍ່ກັບການສຶກສາ

ໃນບົດສຳຫຼວດຜ່ານທາງດິຈິຕອນຂອງ UNDP ໃນປີ 2021 ທີ່ໄດ້ດຳເນີນເພື່ອບົດລາຍງານນີ້ກັບຜູ້ຊາຍ ແລະ ແມ່ຍິງ 5.590 ຄົນ ອາຍຸ 15-24 ປີ ໃນ ສປປ ລາວ, 37,7 ສ່ວນຮ້ອຍບໍ່ໄດ້ເຂົ້າໂຮງຮຽນ. ປະມານ 37,4 ສ່ວນຮ້ອຍໄດ້ຮຽນຮອດມັດທະຍົມຕອນປາຍ ແລະ 23,2 ສ່ວນຮ້ອຍ ມີໃບປະກາດມະຫາວິທະຍາໄລ. ໃນບັນດາຜູ້ທີ່ເຂົ້າໂຮງຮຽນ (63,3 ສ່ວນຮ້ອຍ), ສິ່ງທ້າທາຍ 5 ອັນດັບຫຼັກໃນການສຶກສາແມ່ນການເຂົ້າເຖິງຊັບພະຍາກອນການຮຽນຮູ້ (29,6 ສ່ວນຮ້ອຍ), ການສຶກສາທາງໄກໃນເວລາທີ່ໂຮງຮຽນປິດ (21,1 ສ່ວນຮ້ອຍ), ການສອນທີ່ມີຄຸນນະພາບຕ່ຳ ຫຼື ບໍ່ຊັດເຈນ (19,4 ສ່ວນຮ້ອຍ), ທີ່ຕັ້ງທີ່ໄກຂອງໂຮງຮຽນ (17 ສ່ວນຮ້ອຍ) ແລະ ອຸປະສັກທາງພາສາ (16,9 ສ່ວນຮ້ອຍ). ເກືອບໜຶ່ງສ່ວນສາມ (32,7 ສ່ວນຮ້ອຍ) ຂອງໄວໜຸ່ມໄດ້ອ້າງວ່າ ເມື່ອເຂົາເຈົ້າບໍ່ໄດ້ຢູ່ໃນໂຮງຮຽນ, ເຂົາເຈົ້າໄດ້ເຮັດວຽກຊ່ວຍສະມາຊິກໃນຄອບຄົວ. ເຊັ່ນດຽວກັນ, 29,2 ສ່ວນຮ້ອຍລະບຸວ່າພວກເຂົາຊອກຫາວຽກເຮັດທີ່ໄດ້ຮັບຄ່າຈ້າງໃນຊ່ວງພັກຮ້ອນຈາກໂຮງຮຽນເພື່ອຫາລາຍໄດ້ເສີມ.

ເຖິງວ່າໄວໜຸ່ມສ່ວນໃຫຍ່ຈະສະແດງຄວາມຫວັງທີ່ຈະບັນລຸຄວາມມຸ່ງມາດປາຖະໜາຂອງເຂົາເຈົ້າຢູ່ໃນ ສປປ ລາວ, ແຕ່ 40,6 ສ່ວນຮ້ອຍຂອງໄວໜຸ່ມເຊື່ອວ່າການສຶກສາບໍ່ໄດ້ກະກຽມເຂົາເຈົ້າສຳລັບຕະຫຼາດວຽກງານ, 30,8 ສ່ວນຮ້ອຍບໍ່ໝັ້ນໃຈວ່າການສຶກສາຂອງເຂົາເຈົ້າຈະແທດເໝາະກັບຄວາມຕ້ອງການຂອງຕະຫຼາດ. ໃນກຸ່ມສົນທະນາ, ຜູ້ເຂົ້າຮ່ວມໄດ້ປຶກສາຫາລືກ່ຽວກັບປະສົບການຂອງເຂົາເຈົ້າໃນໂຮງຮຽນ, ໂດຍສະເພາະກ່ຽວກັບຄຸນນະພາບຂອງການສຶກສາ. ນ້ອງນັກຮຽນຊັ້ນມັດທະຍົມຄົນໜຶ່ງໄດ້ສະແດງຄວາມບໍ່ພໍໃຈຕໍ່ວິທີການສິດສອນທີ່ມີຄຸນນະພາບຕ່ຳ ເຊິ່ງເຮັດໃຫ້ນັກຮຽນຕ້ອງຮຽນເສີມນອກຫຼັກສູດ, ລວມທັງການໃຊ້ແຫຼ່ງອອນລາຍ ເຊັ່ນ YouTube ແລະ ຟັງລາຍການດ້ານການສຶກສາທາງວິທະຍຸ. ນັກສຶກສາມະຫາວິທະຍາໄລກ່າວວ່າພວກເຂົາພໍໃຈກັບການສອນອອນລາຍເຖິງແມ່ນວ່າບາງຄົນມີຄວາມກັງວົນເພີ່ມຕໍ່ການຂຶ້ນຄ່າຮຽນ ແລະ ການແບ່ງແຍກໃນຂົງເຂດ STEM ຕໍ່ຄົນທີ່ມີຄວາມພິການ. ກຸ່ມສົນທະນາລ້ວນແຕ່ຍົກໃຫ້ຄຸນນະພາບຂອງການສຶກສາທີ່ຕ່ຳ, ລວມທັງວິທີການສິດສອນທີ່ບໍ່ດີ ແລະ ຄວາມບິດບ່ຽງລະຫວ່າງຫຼັກສູດ ແລະ ຄວາມຕ້ອງການຂອງຕະຫຼາດ, ເປັນສິ່ງທ້າທາຍອັນດັບຕົ້ນໆ.

ໃນດ້ານພື້ນຖານໂຄງລ່າງ, ນັກຮຽນໄດ້ສະແດງຄວາມກັງວົນຕໍ່ກັບຄວາມຫ່າງໄກຂອງໂຮງຮຽນ ແລະ ການເຊື່ອມຕໍ່ອິນເຕີເນັດທີ່ບໍ່ສະຖຽນ, ໂດຍສະເພາະນັກຮຽນຈາກເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ. ເຂົາເຈົ້າໄດ້ພັນລະນາເຖິງຄວາມລຳອຽງ ແລະ ການຂົ່ມເຫັງໂດຍຄູສອນຕໍ່ກຸ່ມຊົນເຜົ່າທາງດ້ານສຳນຽງ ແລະ ອຸປະສັກທາງພາສາຂອງເຂົາເຈົ້າ. ນັກຮຽນຫຼາຍຄົນໄດ້ອ້າງວ່າການຈັດການຄວາມຮັບຜິດຊອບວຽກງານທັງຢູ່ໂຮງຮຽນ ແລະ ຢູ່ເຮືອນເປັນບັນຫາໃຫຍ່. ພວກເຂົາເຈົ້າຍັງໄດ້ອ້າງວ່າສິ່ງອື່ນທີ່ເປັນອຸປະສັກແມ່ນການຮຽນເພີ່ມທີ່ແພງ ແລະ ຈຳນວນປຶ້ມແບບຮຽນທີ່ບໍ່ພຽງພໍ.

ການມີສ່ວນຮ່ວມ ແລະ ພັນທະຈາກຄອບຄົວມີບົດບາດອັນໃຫຍ່ຫຼວງໃນການເລືອກສາຂາວິຊາຮຽນ. ຊາວໜຸ່ມຜູ້ໜຶ່ງທີ່ເຂົ້າຮ່ວມໃນກຸ່ມສົນທະນາໄດ້ເລົ່າວ່າລາວເຄີຍເປັນນັກຮຽນເກັ່ງດ້ານເຄມີສາດ ແຕ່ຕ້ອງຮຽນການທະນາຄານເພື່ອໃຫ້ຄອບຄົວສະໜັບສະໜູນການສຶກສາຕໍ່ຂອງລາວ. ນັກຮຽນຍິງຄົນໜຶ່ງເວົ້າວ່າ ລາວມີຄວາມສົນໃຈໃນການຂຽນໂປແກມຄອມພິວເຕີຢູ່ສະເໝີ ແຕ່ຄອບຄົວຂອງນາງບໍ່ຍອມໃຫ້ນາງຮຽນຕໍ່, ໂດຍກ່າວວ່າເດັກຍິງບໍ່ສາມາດເປັນນັກຂຽນໂປແກມໄດ້. ຜູ້ເຂົ້າຮ່ວມກຸ່ມສົນທະນາສ່ວນໃຫຍ່ກ່າວວ່າພວກເຂົາບໍ່ໄດ້ຮັບຄຳປຶກສາດ້ານວຽກງານໃດໆຈາກມະຫາວິທະຍາໄລ ຫຼື ໂຮງຮຽນຂອງພວກເຂົາ. ເຂົາເຈົ້າຕ້ອງໄດ້ປຶກສາພໍ່ແມ່, ຄູສອນ ແລະ ນັກຮຽນຮຸ່ນອ້າຍເອື້ອຍກ່ຽວກັບອາຊີບໃນອະນາຄົດຂອງເຂົາເຈົ້າແທນ.

ການສຳຫຼວດອອນລາຍ , ເຊິ່ງໜ້າ ແລະ ກຸ່ມສົນທະນາລ້ວນແຕ່ພົບເຫັນຄວາມກັງວົນດຽວກັນຕໍ່ຄຸນນະພາບການສຶກສາທີ່ຕ່ຳ. ນີ້ລວມໄປເຖິງວິທີການສິດສອນໄປຫາຫຼັກສູດ ແລະ ອຸປະກອນການຮຽນ, ເຊິ່ງບັງຄັບໃຫ້ນັກຮຽນຫຼາຍຄົນຕ້ອງຊອກຫາບ່ອນອື່ນເພື່ອຮຽນເພີ່ມ, ລວມທັງການຮຽນເພີ່ມນຳພາກເອກະຊົນ ແລະ ການຮຽນອອນລາຍ. ສຳລັບໄວໜຸ່ມທີ່ໄດ້ເຂົ້າໂຮງຮຽນຢູ່ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ, ໄລຍະເດີນທາງທີ່ຫ່າງຈາກໂຮງຮຽນ ແລະ ອຸປະສັກທາງພາສາແມ່ນບັນຫາຕົ້ນຕໍ. ສິ່ງທີ່ໜ້າຕົກໃຈຫຼາຍທີ່ສຸດແມ່ນຈຳນວນໄວໜຸ່ມອາຍຸ 15-24 ປີທີ່ບໍ່ໄດ້ລົງທະບຽນເຂົ້າຮຽນເລີຍ. ສະຖິຕິນີ້ແມ່ນສອດຄ່ອງກັບອັດຕາການອອກໂຮງຮຽນຊັ້ນມັດທະຍົມຕອນປາຍທີ່ສູງ ແລະ ອັດຕາການເຂົ້າຮຽນທີ່ຕ່ຳໃນໂຮງຮຽນເຕັກນິກວິຊາຊີບ ແລະ ການສຶກສາຫຼັງມັດທະຍົມ.




**ໃນບົດສຳຫຼວດຜ່ານທາງດິຈິຕອນຂອງ ໃນປີ 2021 ທີ່ໄດ້ດຳເນີນເພື່ອບົດລາຍງານນີ້ກັບ ຜູ້ຊາຍ ແລະ ແມ່ຍິງ 5.590 ຄົນ ອາຍຸ 15-24 ປີ ໃນ ສປປ ລາວ, 37,7 ສ່ວນຮ້ອຍ ບໍ່ໄດ້ເຂົ້າໂຮງຮຽນ.**

## 3.4 ບັນດາສິ່ງທ້າທາຍ

ໃນຂະນະທີ່ການເພີ່ມຂຶ້ນຂອງການລົງທະບຽນເຂົ້າຮຽນໃນໂຮງຮຽນປະຖົມເປັນຜົນສຳເລັດທີ່ສຳຄັນໃນ ສປປລາວ, ການຫຼຸດລົງຂອງຈຳນວນໂຮງຮຽນປະຖົມແມ່ນໜ້າເປັນຫ່ວງ. ແຕ່ປີ 2010 ຫາ 2021, ຈຳນວນໂຮງຮຽນປະຖົມທັງໝົດໄດ້ຫຼຸດລົງເລັກນ້ອຍຈາກ 8.968 ມາເປັນ 8.813 ໂຮງຮຽນ, ໃນຂະນະທີ່ຈຳນວນໂຮງຮຽນມັດທະຍົມເພີ່ມຂຶ້ນຢ່າງຫຼວງຫຼາຍຈາກ 1.236 ເປັນ 1.831 ແຫ່ງ. ການຫຼຸດລົງຂອງໂຮງຮຽນປະຖົມແມ່ນເປັນສິ່ງທ້າທາຍໂດຍສະເພາະສຳລັບເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ, ເຊິ່ງ 11,3 ສ່ວນຮ້ອຍຂອງໄວໜຸ່ມລາຍງານວ່າພວກເຂົາບໍ່ໄດ້ເຂົ້າໂຮງຮຽນປະຖົມເພາະວ່າບໍ່ມີໂຮງຮຽນທີ່ຢູ່ໃກ້ພໍ (LSB, 2020b). ການເດີນທາງທີ່ໄກໄປຫາໂຮງຮຽນໄດ້ສົ່ງຜົນໃຫ້ມີນັກຮຽນປະຖິ້ມການສຶກສາທັງໃນຊັ້ນປະຖົມ ແລະ ມັດທະຍົມ. ການຫຼຸດລົງຂອງຈຳນວນໂຮງຮຽນໄດ້ສົ່ງຜົນກະທົບຮ້າຍແຮງຕໍ່ວຽກງານສົ່ງເສີມການສຶກສາທີ່ທົ່ວເຖິງ. ວຽກງານຊ່ວຍເຫຼືອຄວນສຸມໃສ່ກຸ່ມທີ່ໄດ້ຮັບຜົນກະທົບສູງສຸດ, ເຊິ່ງອາດເຮັດຜ່ານຫຼາຍ

# ກ່ອງເນື້ອໃນ 3.2: ຜົນກະທົບຂອງ ໂຄວິດ-19 ຕໍ່ກັບການສຶກສາ

ການລະບາດຂອງພະຍາດໂຄວິດ-19 ສົ່ງຜົນໃຫ້ມີການປິດໂຮງຮຽນໃນທົ່ວປະເທດຕັ້ງແຕ່ເດືອນມີນາ 2020 ຫາ ເດືອນກັນຍາ 2021, ເຊິ່ງມີຜົນກະທົບຕໍ່ການຮຽນຂອງນັກຮຽນ 1.708.501 ຄົນ ຢູ່ໃນໂຮງຮຽນອະນຸບານ, ປະຖົມ, ມັດທະຍົມຕອນຕົ້ນ ແລະ ຕອນປາຍ, ລວມທັງໂຮງຮຽນເຕັກນິກ-ວິຊາຊີບ ແລະ ສະຖາບັນການສຶກສາອື່ນໆໃນທົ່ວປະເທດ.

ໃນລະຫວ່າງວິກິດການ, ເດັກນ້ອຍທີ່ດ້ອຍໂອກາດທີ່ສຸດ, ລວມທັງຜູ້ທີ່ມີຄວາມພິການ; ນັກຮຽນທີ່ມີບັນຫາດ້ານການຮຽນ;ເດັກນ້ອຍຈາກຊົນເຜົ່າທີ່ບໍ່ແມ່ນລາວ-ໄຕ; ເດັກນ້ອຍຢູ່ໃນເຂດຊົນນະບົດທີ່ສຸດ, ຫ່າງໄກສອກຫຼີກ ແລະ ຊຸມຊົນທຸກຍາກທີ່ສຸດ; ແລະ ເດັກຍິງ, ໂດຍສະເພາະແມ່ນຜູ້ທີ່ໄດ້ຮັບຜົນກະທົບຈາກພາລະການເບິ່ງແຍງດູແລທີ່ໜັກຂຶ້ນຈາກໂລກລະບາດ - ມັກຈະບໍ່ສາມາດເຂົ້າເຖິງໂອກາດການຮຽນຮູ້ແບບທາງໄກ. ການຂາດແຄນນີ້ໂດຍທົ່ວໄປແມ່ນເກີດມາຈາກການຂາດການເຂົ້າເຖິງອິນເຕີເນັດ, ຄ່າໃຊ້ຈ່າຍຂອງອຸປະກອນ ຫຼື ພຽງແຕ່ວ່າຮູບແບບການສອນບໍ່ຕອບສະໜອງຕໍ່ຄວາມຕ້ອງການຂອງພວກເຂົາ.

ວິກິດການໄດ້ເຮັດໃຫ້ຄວາມສ່ຽງທີ່ມີຢູ່ແລ້ວຮ້າຍແຮງຂຶ້ນ. ຕົວຢ່າງເຊັ່ນ, ເດັກຍິງຍິ່ງມີຄວາມອ່ອນໄຫວຕໍ່ກັບການໃຊ້ຄວາມຮຸນແຮງ ແລະ ຢູ່ໂດດດ່ຽວຫຼາຍຂຶ້ນໂດຍບໍ່ມີເຄືອຂ່າຍຊ່ວຍເຫຼືອຈາກເພື່ອນຮ່ວມໂຮງຮຽນຂອງເຂົາເຈົ້າ. ເພື່ອແກ້ໄຂບັນຫາ, ກະຊວງສຶກສາທິການ ແລະ ກິລາ, ໂດຍໄດ້ຮັບການສະໜັບສະໜູນຈາກ UNICEF ແລະ ບັນດາຄູ່ຮ່ວມມືອື່ນໆ, ໄດ້ສ້າງແຜນການຕອບສະໜອງການສຶກສາໄລຍະ COVID-19. ອົງປະກອບຫຼັກລວມມີການສະໜັບສະໜູນນັກສຶກສາ, ຜູ້ສິດສອນ, ຜູ້ເບິ່ງແຍງ / ພໍ່ແມ່ ແລະ ຊຸມຊົນໂຮງຮຽນ; ການຮັບປະກັນຄວາມສືບຕໍ່ຂອງການຮຽນຜ່ານການເຄື່ອນໄຫວທີ່ແນໃສ່ການຮຽນຮູ້ຢ່າງມີຄຸນນະພາບ ແລະ ສະຫວັດດີການຂອງນັກຮຽນ, ຄູອາຈານ, ຜູ້ດູແລ ແລະ ອື່ນໆ; ການສະໜັບສະໜູນການກັບຄືນໂຮງຮຽນທີ່ປອດໄພ ແລະ ແບບມີສ່ວນຮ່ວມ; ແລະ ຮັບປະກັນການຕອບສະໜອງຢ່າງພ້ອມພຽງຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ.

ອົງການ UNICEF ແລະ ສະຫະພາບເອີຣົບ, ເຊິ່ງເປັນສ່ວນໜຶ່ງຂອງການຮ່ວມມື ເພື່ອເສີມສ້າງລະບົບການສຶກສາໃນ ສປປ ລາວ ແລະ ການຮ່ວມມືທົ່ວໂລກເພື່ອການສຶກສາ, ກຳລັງສະໜັບສະໜູນກະຊວງສຶກສາທິການ ແລະ ກິລາ ໃນການພັດທະນາເຄື່ອງມືການຮຽນ-ການສອນດ້ານການສຶກສາ ແລະ ກິລາ ແບບດິຈິຕອນຂອງ ສປປ ລາວ, ເຊິ່ງອີງໃສ່ ເຄື່ອງມືໜັງສືຜ່ານແດນການຮຽນຮູ້ທົ່ວໂລກຂອງ UNICEF. ເຄື່ອງມືດັ່ງກ່າວມີຈຸດປະສົງເພື່ອອຳນວຍຄວາມສະດວກໃນການຮຽນຮູ້ອອນລາຍສຳລັບເດັກນ້ອຍ ແລະ ໄວໜຸ່ມໂດຍທີ່ບໍ່ຜ່ານອິນເຕີເນັດ ແລະ ການຮຽນຮູ້ແບບປະສົມ. ພ້ອມກັນນັ້ນ ກໍ່ໄດ້ເພີ່ມປະສິດທິພາບການສິດສອນ ໂດຍການສະໜັບສະໜູນວຽກງານ ແລະ ພັດທະນາວິຊາສະເພາະຂອງຄູ, ອາຈານ, ທີ່ປຶກສາການສອນ ແລະ ພະນັກງານວິຊາການດ້ານການສຶກສາໄວເດັກ. ເຄື່ອງມືນີ້ໂດຍລວມແລ້ວແມ່ນແນໃສ່ການປັບປຸງຄວາມຮູ້ທາງດ້ານດິຈິຕອນຂອງນັກສຶກສາລາວ ແລະ ຄູສອນ ລວມທັງຜູ້ໃຊ້ອື່ນໆ.

ແຫຼ່ງຂໍ້ມູນ: UNICEF, 2021.



# ກ່ອງເນື້ອໃນ 3.3: ເປົ້າໝາຍການສຶກສາໃນແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ IX

ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ IX ໄດ້ຮັບຮູ້ເຖິງຄວາມສຳຄັນຂອງການລົງທຶນດ້ານການສຶກສາໃນປະຈຸບັນ ເພື່ອເກັບກ່ຽວຜົນປະໂຫຍດຢ່າງເຕັມທີ່ຂອງຄວາມໄດ້ປຽບທາງປະຊາກອນ, ເຊິ່ງຄາດວ່າຈະແກ່ຍາວເຖິງປີ 2048. ໝາກຜົນທີສອງຂອງແຜນການແມ່ນການປັບປຸງຄຸນນະພາບຂອງຊັບພະຍາກອນມະນຸດເພື່ອຕອບສະໜອງຕໍ່ການພັດທະນາ, ຄວາມສາມາດໃນການຄົ້ນຄວ້າ, ຄວາມຕ້ອງການທາງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ສ້າງມູນຄ່າເພີ່ມທາງການຜະລິດ ແລະ ການບໍລິການ. ສອງຜົນໄດ້ຮັບໄດ້ຍົກໃຫ້ເຫັນເປົ້າໝາຍທີ່ສຳຄັນ ແລະ ຕົວຊີ້ວັດທີ່ກ່ຽວຂ້ອງກັບການສຶກສາ ແລະ ການພັດທະນາສີມືແຮງງານ.

**ໝາກຜົນ 2**

ຄຸນນະພາບການສຶກສາທຸກລະດັບ ແລະ ເງື່ອນໄຂທີ່ສ້າງຂຶ້ນເພື່ອເຂົ້າເຖິງການສຶກສາທີ່ດີຂຶ້ນ ເພື່ອຮອງຮັບຄວາມພ້ອມໃນການເຊື່ອມໂຍງພາກພື້ນ ແລະ  ສາກົນ ແລະ  ອຸດສາຫະກຳ 4.0.ເປົ້າໝາຍຫຼັກ ແລະ ຕົວຊີ້ວັດຈຳນວນໄວໜຸ່ມ ແລະ  ຜູ້ທີ່ອອກໂຮງຮຽນທີ່ສາມາດເຂົ້າເຖິງການສຶກສານອກລະບົບ ແລະ  ການຝຶກອົບຮົມວິຊາຊີບ ບັນລຸ 150.000 ຄົນ ການລົງທະບຽນນັກສຶກສາມະຫາວິທະຍາໄລໃນສາຂາວິຊາ STEM ບັນລຸ 12.500 ຄົນ ເພີ່ມອັດຕາການຮູ້ໜັງສືຂອງເດັກນ້ອຍອາຍຸ 15-24 ປີເປັນ 91 ສ່ວນຮ້ອຍ.

**ໝາກຜົນ 3**

ທັກສະ ແລະ  ສະມັດຖະພາບຂອງແຮງງານດີຂຶ້ນ, ແລະ ຄວາມຫຼາກຫຼາຍທາງດ້ານວຽກເຮັດງານທຳ, ຄວາມໝັ້ນຄົງ ແລະ  ໂອກາດດ້ານລາຍຮັບເພີ່ມຂຶ້ນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດສັງຄົມ.

**ເປົ້າໝາຍຫຼັກ ແລະ ຕົວຊີ້ວັດ**

— ຝຶກອົບຮົມ 10.000 ຄົນຢູ່ສະຖາບັນພັດທະນາສີມືແຮງງານ ແລະ ສູນຝຶກອົບຮົມໃນລະດັບຕ່າງໆ, ແລະ  ສະໜອງການຝຶກອົບຮົມເຄື່ອນທີ່ໃນຂົງເຂດທັກສະຕ່າງໆໃຫ້ 5.000 ຄົນ

— ທົດສອບມາດຕະຖານສີມືແຮງງານຢ່າງໜ້ອຍ 1.700 ຄົນ ໃນ 32 ຂົງເຂດສີມືແຮງງານ

— ພັດທະນາສີມືແຮງງານໃນຫົວໜ່ວຍແຮງງານໃຫ້ໄດ້ມາດຕະຖານສີມືແຮງງານແຫ່ງຊາດໃນ 10 ຂົງເຂດສີມືແຮງງານ

— ປັບປຸງສະຖາບັນ ແລະ  ສູນພັດທະນາສີມືແຮງງານ 7 ແຫ່ງດ້ວຍການສະໜອງອຸປະກອນ, ຊຸກຍູ້ໃຫ້ຂະ ແໜງເສດຖະກິດລົງທຶນ

— ສ້າງສູນພັດທະນາສີມືແຮງງານ 2 ແຫ່ງສ້າງ ແລະ  ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ເພື່ອຕິດຕາມຂໍ້ມູນ 17 ຕົວຊີ້ວັດຂອງຕະຫຼາດແຮງງານແລະຕົວຊີ້ວັດທີ່ກ່ຽວຂ້ອງຂອງເປົ້າໝາຍການພັດທະນາແບບຍືນຍົງ.

ແຫຼ່ງຂໍ້ມູນ: ລັດຖະບານແຫ່ງ ສປປ ລາວ, 2021.



ຊ່ອງທາງເຊັ່ນ ການຮຽນທາງໄກ ຫຼື ການມອບທຶນຊ່ວຍເຫຼືອໃນການເດີນທາງໄປຫາໂຮງຮຽນ.

ຈຳນວນມະຫາວິທະຍາໄລທີ່ໜ້ອຍ, ຄ່າໃຊ້ຈ່າຍທີ່ສູງ ແລະ ທຶນການສຶກສາທີ່ຈຳກັດເຮັດໃຫ້ການລົງທະບຽນໃນການສຶກສາຫຼັງຊັ້ນມັດທະຍົມນັ້ນຕ່ຳ. ໃນຂະນະທີ່ມະຫາວິທະຍາໄລໄດ້ຂະຫຍາຍສິ່ງອຳນວຍຄວາມສະດວກ ແລະ ການບໍລິການເພື່ອຕອບສະໜອງຄວາມຕ້ອງການທີ່ເພີ່ມຂຶ້ນ, ຄວາມສາມາດຂອງມະຫາວິທະຍາໄລໃນການຮອງຮັບເອົານັກຮຽນທີ່ຈົບມັດທະຍົມ ແລະ ສະໜັບສະໜູນການພັດທະນາເສດຖະກິດສັງຄົມຂອງປະເທດແມ່ນຍັງບໍ່ພຽງພໍ (ADB, 2016).

ແຕ່ປີ 2007 ຫາ 2021, ອັດຕາສ່ວນນັກຮຽນຕໍ່ຄູໄດ້ຫຼຸດລົງຈາກ 31 ເປັນ 22 ຄົນສຳລັບຊັ້ນປະຖົມສຶກສາ ແລະ 25 ເປັນ 17 ຄົນ ສຳລັບຊັ້ນມັດທະຍົມ. ແຕ່ເຖິງແນວໃດ, ອັດຕາສ່ວນນີ້ຍັງຕ່ຳກວ່າມາດຕະຖານທີ່ກະຊວງສຶກສາທິການ ແລະ ກິລາໄດ້ວາງອອກ. ອັດຕາສ່ວນນີ້ແມ່ນຍັງເປັນເລື່ອງທີ່ໜ້າເປັນຫ່ວງຫຼາຍທີ່ສຸດສຳລັບນັກຮຽນຢູ່ເຂດຊົນນະບົດເນື່ອງຈາກຈຳນວນຄູສອນທີ່ບໍ່ພຽງພໍ. ຄູຫຼາຍຄົນມັກໄປເຮັດວຽກຢູ່ໃນຕົວເມືອງ ຫຼື ໂຮງຮຽນທີ່ມີຊື່ສຽງ ເນື່ອງຈາກການໃຊ້ຊີວິດໃນເຂດຊົນນະບົດມີຄວາມທຸກຍາກ (ກະຊວງສຶກສາທິການ ແລະ ກິລາ, 2016). ເນື່ອງຈາກຈຳນວນຕຳແໜ່ງວຽກຄູສອນໃນຕົວເມືອງມີຈຳນວນຈຳກັດ, ຈຳນວນຜູ້ສະໝັກວຽກງານສິດສອນແມ່ນລົ້ນອັດຕາ. ບວກກັບການຂາດມາດຕະການຊຸກຍູ້ການຍົກຍ້າຍຄູທີ່ຊອກຫາວຽກເຮັດໄປໂຮງຮຽນໃນຊົນນະບົດ, ປັດໃຈເຫຼົ່ານີ້ອາດຈະສົ່ງຜົນໃຫ້ອາຈານ ແລະ ຄູສອນຢຸດເຊົາອາຊີບສິດສອນ ແລະ ຫັນໄປປະກອບອາຊີບອື່ນ. ເນື່ອງຈາກໂຮງຮຽນຫຼາຍແຫ່ງບໍ່ມີຄູສອນພຽງພໍກັບຈຳນວນວິຊາ, ຄູອາດຕ້ອງສອນວິຊາທີ່ຕົນເອງບໍ່ຖະໜັດ ເຊິ່ງເຮັດໃຫ້ຄຸນນະພາບການຮຽນ-ການສອນຫຼຸດລົງ.

ອຸປະກອນການຮຽນເຊັ່ນປຶ້ມແບບຮຽນແມ່ນມີຄວາມສຳຄັນຕໍ່ການສິດສອນທີ່ມີຄຸນນະພາບ ແຕ່ນັກຮຽນຫຼາຍຄົນພັດຍັງບໍ່ມີປຶ້ມແບບຮຽນຄົບຖ້ວນ (ຮູບ 3.12). ໃນຈຳນວນທັງໝົດ, ນັກຮຽນ 3,7 ສ່ວນຮ້ອຍ ບໍ່ມີປຶ້ມແບບຮຽນເລີຍ ແລະ 25,1 ສ່ວນຮ້ອຍ ມີປຶ້ມແບບຮຽນສະເພາະບາງວິຊາເທົ່ານັ້ນ. ລະດັບການເຂົ້າເຖິງປຶ້ມແບບຮຽນແຕກຕ່າງກັນໄປຕາມເພດ, ຊົນເຜົ່າ ແລະ ສະຖານທີ່. ນັກຮຽນຍິງມີປຶ້ມແບບຮຽນຄົບຊຸດ ຫຼາຍກວ່ານັກຮຽນຊາຍ (72,1 ສ່ວນຮ້ອຍ ທຽບກັບ 70,4 ສ່ວນຮ້ອຍ). ມີພຽງ 65,9 ສ່ວນຮ້ອຍຂອງນັກຮຽນທີ່ບໍ່ແມ່ນຊົນເຜົ່າລາວມີປຶ້ມແບບຮຽນຄົບຖ້ວນ, ໃນຂະນະທີ່ສະຖິຕິນີ້ຂອງນັກຮຽນຊົນເຜົ່າລາວແມ່ນ 78,4 ສ່ວນຮ້ອຍ. ໃນເຂດຕົວເມືອງ, ນັກຮຽນ 82,5 ສ່ວນຮ້ອຍ ມີປຶ້ມແບບຮຽນຄົບຖ້ວນ ທຽບກັບ 67,2 ສ່ວນຮ້ອຍ ແລະ 61,3 ສ່ວນຮ້ອຍ ໃນເຂດຊົນນະບົດທີ່ມີ ແລະ ບໍ່ມີຖະໜົນຫົນທາງ ຕາມລຳດັບ.

ຮູບທີ 3.12

ເຖິງວ່າການລົງທະບຽນເຂົ້າຮຽນຈະເພີ່ມຂຶ້ນ, ການເຂົ້າເຖິງການສຶກສາສຳລັບບາງກຸ່ມຄົນຍັງຄົງເປັນໜຶ່ງໃນສິ່ງທ້າທາຍຫຼັກໃນວຽກງານການສຶກສາ. ໂດຍລວມແລ້ວ, 61,9 ສ່ວນຮ້ອຍຂອງໄວໜຸ່ມອາຍຸ 15-24 ບໍ່ໄດ້ເຂົ້າໂຮງຮຽນ (ຮູບ 3.13). ການເຂົ້າເຖິງການສຶກສາຍັງແຕກຕ່າງກັນໂດຍຂຶ້ນນຳເພດ, ຊົນເຜົ່າ ແລະ ອື່ນໆ. ເດັກຍິງມີຄວາມເປັນໄປໄດ້ໜ້ອຍກ່ວາເດັກຊາຍທີ່ຈະຢູ່ໃນໂຮງຮຽນ; 63,6 ສ່ວນຮ້ອຍຂອງເດັກຍິງບໍ່ໄດ້ເຂົ້າຮຽນທຽບກັບ 60,2 ສ່ວນຮ້ອຍຂອງເດັກຊາຍ. ນັກຮຽນຊົນເຜົ່າ, ໂດຍສະເພາະຜູ້ທີ່ບໍ່ມີພາສາລາວເປັນພາສາແມ່, ມີຄວາມດ້ອຍໂອກາດໃນການສຶກສາ, ດັ່ງທີ່ສະທ້ອນໃຫ້ເຫັນໃນອັດຕາການເຂົ້າຮຽນ. ໃນຂະນະທີ່ 56,9 ສ່ວນຮ້ອຍຂອງໄວໜຸ່ມຊົນເຜົ່າລາວບໍ່ໄດ້ເຂົ້າໂຮງຮຽນ, ອັດຕາຂອງໄວໜຸ່ມຊົນເຜົ່າອື່ນທີ່ບໍ່ໄດ້ເຂົ້າຮຽນແມ່ນ 65,6 ສ່ວນຮ້ອຍ. ນັກຮຽນຊົນເຜົ່າຫຼາຍຄົນ ບໍ່ໄດ້ອາໄສຢູ່ໃນຕົວເມືອງໃຫຍ່ທີ່ມີການບໍລິການດ້ານການສຶກສາທີ່ມີຄຸນນະພາບ. ປັດໄຈເຫຼົ່ານີ້ໃຫ້ຄຳອະທິບາຍວ່າເປັນຫຍັງອັດຕາການເຂົ້າໂຮງຮຽນ, ການຮູ້ຫນັງສື ແລະ ຕົວຊີ້ວັດອື່ນໆໃນຂະແໜງການສຶກສາແຕກຕ່າງກັນຢ່າງຫຼວງຫຼາຍໃນບັນດາຊົນເຜົ່າ. ສຸດທ້າຍ, ເດັກນ້ອຍທີ່ທຸກຍາກທີ່ສຸດມີຄວາມສ່ຽງສູງທີ່ຈະບໍ່ໄດ້ເຂົ້າໂຮງຮຽນ, ຢູ່ທີ່ 60,9 ສ່ວນຮ້ອຍ, ເມື່ອທຽບກັບເດັກນ້ອຍຈາກຄອບຄົວຮັ່ງມີທີ່ສຸດຢູ່ທີ່ 9,6 ສ່ວນຮ້ອຍ.

ໃນຂະນະທີ່ໄວໜຸ່ມທີ່ອາໄສຢູ່ໃນເມືອງຫຼາຍກວ່າເຄິ່ງກຳລັງເຂົ້າຮຽນ, ມີພຽງ 33,7 ສ່ວນຮ້ອຍຂອງໄວໜຸ່ມເຂດຊົນນະບົດທີ່ມີຫົນທາງ ແລະ 31,2 ສ່ວນຮ້ອຍໃນຊົນນະບົດທີ່ໄຮ້ຖະໜົນຫົນທາງໄດ້ເຂົ້າຮຽນ. ຄູສອນຢູ່ເຂດຫ່າງໄກສອກຫຼີກປະເຊີນໜ້າກັບວິຖີຊີວິດການເປັນຢູ່ ແລະ ການສິດສອນແບບຊົນນະບົດ ເຊິ່ງເຮັດໃຫ້ການສອນປະເຊີນຄວາມຫຍຸ້ງຍາກໃນການເຮັດໃຫ້ນັກຮຽນມີຄວາມສົນໃຈ ແລະ ຕັ້ງໃຈໃນການຮ່ຳຮຽນ. ໂຮງຮຽນມັດທະຍົມຕອນຕົ້ນສ່ວນໃຫຍ່ແມ່ນຕັ້ງຢູ່ເມືອງຫຼັກຂອງແຂວງ, ເຊິ່ງເຮັດໃຫ້ນັກຮຽນໃນເຂດຫ່າງໄກຈາກຕົວເມືອງຕ້ອງໄດ້ຈຳເປັນຈ່າຍເງິນຕື່ມເພື່ອໄດ້ນອນຢູ່ຫໍພັກຫ່າງໄກຈາກບ້ານ.

ຮູບທີ 3.13

ເມື່ອສົມທຽບກັບໄວໜຸ່ມຜູ້ຊາຍ, ໄວໜຸ່ມຍິງປະເຊີນກັບພາລະວຽກເຮືອນທີ່ສູງກວ່າ, ເຊິ່ງເຮັດໃຫ້ເຂົາເຈົ້າບໍ່ໄດ້ໄປໂຮງຮຽນ. ຫຼາຍຄົນທີ່ອອກໂຮງ





## ຮູບທີ 3.12: ອັດຕາສ່ວນຂອງນັກຮຽນທີ່ມີປຶ້ມແບບຮຽນ

ແຫຼ່ງຂໍ້ມູນ: LSB, 2020b.




ຮຽນກໍ່ຍ້ອນໄດ້ເປັນເຈົ້າສາວ ແລະ ເປັນແມ່. ນອກຈາກນັ້ນ, ພໍ່ແມ່ເລືອກທີ່ຈະສົ່ງເດັກຊາຍຫຼາຍກວ່າເດັກຍິງໄປໂຮງຮຽນ, ໂດຍທີ່ເດັກຊາຍມັກຈະຖືກເບິ່ງເປັນຜູ້ຫາເງິນຫຼັກລ້ຽງຄອບຄົວໃນອະນາຄົດ. ການແບ່ງແຍກທາງເພດຈຶ່ງເຮັດໃຫ້ເດັກຍິງເສຍປຽບ ແລະ ຈຳກັດການເຂົ້າເຖິງການສຶກສາຂອງເຂົາເຈົ້າ (UNICEF, 2021). ມາດຕະຖານເຫຼົ່ານີ້ແມ່ນຖືກສະທ້ອນໃຫ້ເຫັນຢູ່ໃນອັດຕາສ່ວນການລົງທະບຽນເຂົ້າຮຽນລວມຂອງນັກຮຽນຍິງ, ເຊິ່ງຕ່ຳກວ່ານັກຮຽນຊາຍໃນຊັ້ນປະຖົມ ແລະ ມັດທະຍົມ. ແນວໃດກໍ່ຕາມ, ນັກຮຽນຊາຍມີອັດຕາການອອກໂຮງຮຽນຊັ້ນປະຖົມສູງກວ່າທີ່ 4,6 ສ່ວນຮ້ອຍ ທຽບໃສ່ເພດຍິງທີ່ 3,6 ສ່ວນຮ້ອຍ. ໂດຍລວມແລ້ວ, ຄະແນນດັດຊະນີຄວາມສະເໝີພາບລະຫວ່າງຍິງ-ຊາຍ ສຳລັບການສຶກສາແມ່ນ 0,98 ຈາກປີ 2019 ຈົນຮອດປີ 2021, ເຊິ່ງໝາຍຄວາມວ່າເດັກຍິງມີຄວາມດ້ອຍໂອກາດກວ່າເດັກຊາຍເລັກໜ້ອຍໃນດ້ານການສຶກສາ. ຄ່າຮຽນ, ຄ່າໃຊ້ຈ່າຍເຄື່ອງແບບນັກຮຽນ ແລະ ອຸປະກອນການຮຽນຍັງຂັດຂວາງການເຂົ້າເຖິງການສຶກສາ. ການສຳຫຼວດລາຍຈ່າຍ ແລະ ການຊົມໃຊ້ຂອງ ສປປ ລາວ ຄັ້ງທີ VI ໄດ້ຕິດຕາມຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການສຶກສາ, ເຊິ່ງຍັງຄົງຄ້າງເຖິງວ່າຈະມີນະໂຍບາຍທີ່ໜັກແໜ້ນໃນການລົບລ້າງ ແລະ ເຮັດໃຫ້ການເຂົ້າເຖິງການສຶກສາເປັນໄປຢ່າງທົ່ວເຖິງໂດຍບໍ່ມີຄ່າໃຊ້ຈ່າຍ. ການສຳຫຼວດພົບວ່າ 4,7 ສ່ວນຮ້ອຍຂອງກຸ່ມໄວໜຸ່ມຕົວຢ່າງລາຍງານວ່າບໍ່ໄດ້ເຂົ້າຮຽນ ແລະ 5 ສ່ວນຮ້ອຍບໍ່ໄດ້ຮຽນຕໍ່ຫຼັງຊັ້ນປະຖົມ ເພາະຄ່າໃຊ້ຈ່າຍ. ນີ້ອາດເປັນຍ້ອນຄ່າໃຊ້ຈ່າຍຂອງການສຶກສາໂດຍກົງ ຫຼື ຄ່າໃຊ້ຈ່າຍທາງໂອກາດທີ່ສູງໃນການເຂົ້າໂຮງຮຽນແທນທີ່ຈະເຮັດວຽກ. ໃນກຸ່ມຕົວຢ່າງ, 13,1 ສ່ວນຮ້ອຍລາຍງານວ່າ 'ວຽກ' ເປັນເຫດຜົນທີ່ບໍ່ເຂົ້າໂຮງຮຽນ ແລະ 12,7 ສ່ວນຮ້ອຍເປັນເຫດຜົນທີ່ບໍ່ຮຽນຕໍ່.

ອຸປະສັກອື່ນໆລວມມີພາສາ, ເຊິ່ງເປັນເຫດຜົນວ່າເປັນຫຍັງ 0,3 ສ່ວນຮ້ອຍບໍ່ໄດ້ເຂົ້າຮຽນ ແລະ 1,3 ສ່ວນຮ້ອຍຂອງໄວໜຸ່ມບໍ່ສືບຕໍ່ຮຽນ. ການຂາດຄູສອນ ແລະ ອຸປະກອນການຮຽນເຮັດໃຫ້ 0,3 ສ່ວນຮ້ອຍ ແລະ 1,5 ສ່ວນຮ້ອຍ, ຕາມລຳດັບ, ບໍ່ໄດ້ເຂົ້າຮຽນ ແລະ ຮຽນຕໍ່. ສຸດທ້າຍ, ບັນຫາສຸຂະພາບໄດ້ບັງຄັບ 0,9 ສ່ວນຮ້ອຍຈາກການເຂົ້າຮຽນ ແລະ ສົ່ງຜົນໃຫ້ 1,3 ສ່ວນຮ້ອຍບໍ່ຮຽນຕໍ່. ໄວໜຸ່ມ ແລະ ຄົວເຮືອນຈຳນວນໜຶ່ງບໍ່ຮັບຮູ້ເຖິງຄວາມສຳຄັນຂອງການສຶກສາໃນການປັບປຸງຊີວິດການເປັນຢູ່ ແລະ ການພັດທະນາປະເທດ (LSB, 2020b). ຮູບທີ 3.14 ສະຫຼຸບເຫດຜົນຂອງການບໍ່ເຂົ້າໂຮງຮຽນ ແລະ ບໍ່ຮຽນຕໍ່ຫຼັງຈາກລະດັບປະຖົມ.ເຫດຜົນຫຼັກສຳລັບທັງສອງກຸ່ມແມ່ນ 'ບໍ່ມີຄວາມສົນໃຈ', ເຊິ່ງເປັນເຫດຜົນທີ່ 39,1 ສ່ວນຮ້ອຍບໍ່ໄດ້ເຂົ້າຮຽນ ແລະ 49,7 ສ່ວນຮ້ອຍບໍ່ໄດ້ຮຽນຕໍ່. ອັດຕາທີ່ສູງດັ່ງກ່າວແມ່ນໜ້າເປັນຫ່ວງຢ່າງຍິ່ງ.

ຮູບທີ 3.14

## ຄຸນນະພາບການສຶກສາ

ຄຸນນະພາບການສຶກສາຍັງຄົງເປັນສິ່ງທ້າທາຍອັນໃຫຍ່ຫຼວງຕໍ່ການປັບປຸງບາງທ່າອ່ຽງທີ່ໜ້າເປັນຫ່ວງທີ່ກ່າວມາຂ້າງເທິງ, ລວມໄປເຖິງການເສີມຂະຫຍາຍຜົນການຮຽນ, ຫຼຸດຜ່ອນອັດຕາການອອກໂຮງຮຽນ ແລະ ຮັບປະກັນໃຫ້ໄວໜຸ່ມໄດ້ຮັບການສຶກສາທີ່ຊ່ວຍໃຫ້ເຂົາເຈົ້າປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມ.



“

## ອັນຕິກາ ໄຊຍະພອນ

### 22 ປີ, ນັກຮຽນມະຫາວິທະຍາໄລແຫ່ງຊາດ

ຂ້ອຍມາຈາກເມືອງຄົງເຊໂດນ ແຂວງສາລະວັນ ພາກໃຕ້ຂອງ ສປປ ລາວ. ຂ້ອຍໃຊ້ເວລາໃນໄວເດັກຢູ່ເມືອງຄົງເຊໂດນຈົນຮອດອາຍຸ 14 ປີ, ຈາກນັ້ນກໍ່ຍ້າຍໄປຮຽນຢູ່ໂຮງຮຽນມັດທະຍົມຢູ່ປາກເຊ. ຂ້ອຍຕັດສິນໃຈຍ້າຍໄປຮຽນຢູ່ໂຮງຮຽນອື່ນ ເພາະຢາກມີຄວາມຮູ້, ເພື່ອເຂົ້າເຖິງການສຶກສາທີ່ມີຄຸນນະພາບດີກວ່າ, ເພື່ອໄດ້ຮຽນຮູ້ບົດຮຽນຊີວິດໃໝ່ ແລະ ສຳຄັນທີ່ສຸດແມ່ນກ້າວໄປບ່ອນທີ່ມີໂອກາດທີ່ຈະພັດທະນາຕົນເອງ. ແຕ່ສຳລັບນັກຮຽນຄົນອື່ນໆໃນບ້ານຂ້ອຍເດ? ພວກເຂົາຫຼາຍຄົນບໍ່ມີການສະໜັບສະໜູນທີ່ພຽງພໍເພື່ອເອົາຕົວເອງໄປບ່ອນທີ່ໂອກາດເຫຼົ່ານັ້ນຢູ່. ນີ້ແມ່ນຊ່ອງຫວ່າງໃນສັງຄົມທີ່ສົ່ງຜົນກະທົບຕໍ່ການສຶກສາຂອງຜູ້ທີ່ຈະເປັນກຳລັງໄວໜຸ່ມ (ຊັບພະຍາກອນມະນຸດ) ຂອງ ສປປ ລາວ. ຂ້ອຍຫວັງວ່າໃນ 5 ຫຼື 10 ປີ, ເລື່ອງລາວທີ່ຄ້າຍຄືຂອງຂ້ອຍຈະກາຍເປັນເລື່ອງໃນອາດີດ, ບໍ່ແມ່ນສິ່ງທີ່ຈະສືບຕໍ່ເກີດຂຶ້ນໃນສັງຄົມຂອງພວກເຮົາ.

ອັນຕິກາ ໄຊຍະພອນ, ເຊິ່ງເປັນໜຶ່ງໃນນັກຮຽນຈຳນວນຫຼາຍ, ແຕ່ຍັງມີໜ້ອຍເກີນໄປ, ທີ່ເຄື່ອນຍ້າຍຈາກຕ່າງແຂວງເພື່ອໄປສຶກສາຕໍ່ຢູ່ນະຄອນຫຼວງວຽງຈັນ.

**ຮູບທີ 3.13: ອັດຕາສ່ວນເຂົ້າຮຽນໃນກຸ່ມໄວໜຸ່ມ 15-24 ຕາມເພດ, ຊົນເຜົ່າ ແລະ ທີ່ຢູ່**

ແຫຼ່ງຂໍ້ມູນ: LSB, 2020b.




## ການຝຶກອົບຮົມຄູອາຈານ

ສປປ ລາວ ໄດ້ບັນລຸການລົງທະບຽນເຂົ້າຮຽນຊັ້ນປະຖົມຢ່າງທົ່ວເຖິງ ແຕ່ຈຳນວນນັກຮຽນທີ່ສຳເລັດການສຶກສາຊັ້ນປະຖົມແມ່ນຍັງບໍ່ເຕັມອັດຕາ, ເນື່ອງມາຈາກອັດຕາການອອກໂຮງຮຽນທີ່ສູງ. ຄຸນນະພາບຂອງການສຶກສາ ເຊັ່ນ: ຄູສອນ ແລະ ບຸກຄະລາກອນການສອນທີ່ຂາດການຝຶກອົບຮົມ, ສະພາບໂຮງຮຽນທີ່ຊຸດໂຊມ, ປຶ້ມແບບຮຽນ ແລະ ການປັບຕົວເຂົ້າກັບເຕັກໂນໂລຊີທີ່ຈຳກັດ, ແມ່ນເຫດຜົນໜຶ່ງທີ່ເຮັດໃຫ້ໄວໜຸ່ມອອກໂຮງຮຽນ. ຖ້າບໍ່ມີການລົງທຶນດ້ານຄຸນນະພາບ, ອັດຕາການອອກໂຮງຮຽນມັດທະຍົມຄາດວ່າຈະສືບຕໍ່ເພີ່ມຂຶ້ນ.

ການຝຶກອົບຮົມຄູແມ່ນມີສ່ວນສຳຄັນຕໍ່ການປັບປຸງຄຸນນະພາບໂດຍລວມ. ອາຊີບການສອນຍັງຄົງເປັນທີ່ນິຍົມໜ້ອຍກວ່າເສັ້ນທາງການສຶກສາອື່ນໆສຳລັບນັກຮຽນຈົບມັດທະຍົມ, ນີ້ເປັນເຫດຜົນໜຶ່ງທີ່ຈຳນວນຄູ ແລະ ບຸກຄະລາກອນການສອນບໍ່ພຽງພໍໃນ ສປປ ລາວ. ເງິນເດືອນທີ່ຕໍ່າ ແລະ ການເລື່ອນຂັ້ນທີ່ຈຳກັດເຮັດໃຫ້ຄູທີ່ເກັ່ງໆຕ້ອງອອກຈາກວຽກງານສິດສອນ ຫຼື ຕ້ອງຊອກຫາລາຍໄດ້ເພີ່ມເຕີມ. ໃນເຂດຊົນນະບົດທີ່ທຸກຍາກ, ຄູສອນທີ່ມີຄຸນນະພາບແມ່ນມີຄວາມຈຳເປັນຢ່າງສູງ ຍ້ອນວ່ານັກຮຽນອີງໃສ່ຄູເປັນຫຼັກໃນການຮຽນຮູ້, ເນື່ອງຈາກພວກເຂົາຂາດເຂີນແຫຼ່ງການສຶກສາທາງອື່ນເມື່ອທຽບໃສ່ກັບໝູ່ເພື່ອນຢູ່ໃນຕົວເມືອງ. ແຕ່ເຂດຊົນນະບົດຊ້ຳພັດມີຄູສອນໜ້ອຍກວ່າ. ຍິ່ງໄປກວ່ານັ້ນ, ສ່ວນໃຫຍ່ຄູສອນມີປະສົບການໜ້ອຍ ແລະ ຄຸນນະພາບທີ່ຕໍ່າກວ່າ.

## ພື້ນຖານໂຄງລ່າງ

ພື້ນຖານໂຄງລ່າງຂອງໂຮງຮຽນສົ່ງຜົນກະທົບຢ່າງໃຫຍ່ຫຼວງຕໍ່ຄຸນນະພາບການສຶກສາ. ໂຮງຮຽນຫຼາຍແຫ່ງບໍ່ມີໄຟຟ້າໃຊ້ ໃນຂະນະທີ່ປະມານ 25 ສ່ວນຮ້ອຍຍັງຂາດນ້ຳປະປາ ຫຼື ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ, ເຊິ່ງສົ່ງຜົນກະທົບທີ່ຮ້າຍແຮງກວ່າຕໍ່ເດັກຍິງ. ນີ້ເປັນສິ່ງທີ່ທ້າທາຍໂດຍສະເພາະໃນໄລຍະໂຄວິດ-19 ເນື່ອງຈາກບົດບາດອັນສຳຄັນຂອງສຸຂະອະນາໄມໃນມາດຕະການປ້ອງກັນພະຍາດຂອງວຽກງານສາທາລະນະສຸກ (ກະຊວງສຶກສາທິການ ແລະ ກິລາ, 2021). ເງິນທຶນສຳລັບຄ່າໃຊ້ຈ່າຍໃນການດຳເນີນງານຂອງໂຮງຮຽນແມ່ນມີມູນຄ່າສູງກວ່າສຳລັບໂຮງຮຽນມັດທະຍົມເມື່ອທຽບກັບປະຖົມ, ແລະ ໃນບາງກໍລະນີ, ນີ້ໄດ້ຊ່ວຍປັບປຸງຄຸນນະພາບຂອງການສຶກສາມັດທະຍົມໂດຍຜ່ານການລົງທຶນໃນພື້ນຖານໂຄງລ່າງ. ເຊັ່ນດຽວກັບອັດຕາການອອກໂຮງຮຽນ ແລະ ການເຂົ້າຮຽນ, ນັກຮຽນໃນຊົນນະບົດປະສົບກັບສິ່ງທ້າທາຍໃຫຍ່ທີ່ສຸດໃນດ້ານພື້ນຖານໂຄງລ່າງ, ເຊິ່ງທະວີຄູນຄວາມແຕກຕ່າງໃນການເຂົ້າເຖິງ ແລະ ຄຸນນະພາບຂອງການສຶກສາລະຫວ່າງນັກຮຽນເຂດຊົນນະບົດ ແລະ ໃນເມືອງ. ໃນຂະນະທີ່ການສຶກສາດ້ານດິຈິຕອນເລັ່ງຂຶ້ນ, ຄວາມບໍ່ສະເໝີພາບໃນການເຂົ້າເຖິງເຄື່ອງມືດິຈິຕອນທີ່ມີຢູ່ກ່ອນແລ້ວຍິ່ງໄດ້ຂະຫຍາຍຊ່ອງຫວ່າງໃນການເຂົ້າເຖິງ ແລະ ຄຸນນະພາບການສຶກສາຂອງເດັກນ້ອຍ, ເຮັດໃຫ້ເກີດຄວາມຢ້ານກົວວ່າຈະມີ ຮຸ່ນຄົນທີ່ສູນເສຍໄປ ຂອງກຸ່ມນັກຮຽນທີ່ຖືກປະຖິ້ມໄວ້ຂ້າງຫຼັງໃນຂະນະທີ່ເຕັກໂນໂລຊີຍັງສືບຕໍ່ກ້າວໄປຂ້າງໜ້າ.

## ຫຼັກສູດ ແລະ ທັກສະ

ຄຸນນະພາບການສຶກສາໂດຍຫຼັກແລ້ວແມ່ນຂຶ້ນກັບຄຸນນະພາບ, ຄວາມເໝາະສົມ ແລະ ຄວາມພຽບພ້ອມຂອງອຸປະກອນການຮຽນການສອນ, ລວມທັງປຶ້ມແບບຮຽນ. ປຶ້ມແບບຮຽນສຳລັບຊັ້ນປະຖົມ ແລະ ມັດທະຍົມສຶກສາແມ່ນໄດ້ຮັບການປັບປຸງເລື້ອຍໆ ແຕ່ການຝຶກອົບຮົມໃຫ້ຄູນຳໃຊ້ປຶ້ມແບບຮຽນແມ່ນບໍ່ພຽງພໍ. ປຶ້ມແບບຮຽນສຳລັບການສຶກສາຫຼັງມັດທະຍົມສ່ວນໃຫຍ່ເປັນພາສາລາວ, ມີຈຳນວນສະບັບຈຳກັດ ແລະ ບໍ່ມີຄວາມຫຼາກຫຼາຍ. ມັນເປັນສິ່ງທ້າທາຍສຳລັບນັກຮຽນທີ່ຈະນຳໃຊ້ປຶ້ມແບບຮຽນຕ່າງປະເທດຍ້ອນພວກເຂົາບໍ່ມີຄວາມສາມາດພຽງພໍໃນການສື່ສານເປັນພາສາຕ່າງປະເທດ ເຊັ່ນ ພາສາອັງກິດ. ນອກຈາກນັ້ນ, ຄວາມຮູ້ທາງດ້ານດິຈິຕອນຂອງບັນດາຄູສອນຍັງຕ່ຳ, ແລະ ໂຮງຮຽນສ່ວນໃຫຍ່ບໍ່ມີຫຼັກສູດ ແລະ ອຸປະກອນ, ແມ່ນແຕ່ສິ່ງພື້ນຖານເຊັ່ນຄອມພິວເຕີ ແລະ ອິນເຕີເນັດ, ທີ່ໃຊ້ສອນວິຊາ ICT. ດັ່ງທີ່ໄດ້ກ່າວໄວ້ໃນບົດທີ 2, ການຈັດສັນການສຶກສາ ແລະ ການພັດທະນາສີມືແຮງງານໃຫ້ແທດເໝາະກັບຄວາມຕ້ອງການຂອງຕະຫຼາດແມ່ນມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ສະມັດຕະພາບຂອງຕະຫຼາດແຮງງານ. ນັກສຶກສາໃນຫຼັກສູດການສຶກສາຕ່າງໆແມ່ນໄດ້ຮັບອັດຕາຈ້າງງານທີ່ແຕກຕ່າງກັນ. ອັດຕາການຈ້າງງານນັກສຶກສາໃນຂະແໜງວິສະວະກຳ, ການຄ້າ ແລະ ການກະສິກຳໂດຍທົ່ວໄປແມ່ນຕ່ຳ, ເມື່ອທຽບກັບນັກສຶກສາໃນສາຂາວິຊາສັງຄົມສາດ, ກົດໝາຍ, ການສຶກສາ ແລະ ທຸລະກິດ (ຮູບ 3.15). ຄວາມບໍ່ເປັນທີ່ນິຍົມຂອງບາງຂະແໜງຮຽນອາດສະທ້ອນໃຫ້ເຫັນເຖິງທາງເລືອກທີ່ໜ້ອຍຂອງບ່ອນເຮັດວຽກ, ແລະ ຍັງໃຫ້ເຫັນເຖິງມຸມມອງຂອງນັກສຶກສາຕໍ່ຄຸນນະພາບຂອງຫຼັກສູດ ແລະໂອກາດສຳລັບການຈ້າງງານ, ໂດຍສະເພາະຂະແໜງວິສະວະກຳ. ການສຶກສາອົບຮົມໄວໜຸ່ມກ່ຽວກັບການພັດທະນາອາຊີບ ແລະ ການສຶກສາໃຫ້ສອດຄ່ອງກັບຂະແໜງທີ່ຕົນມີຄວາມສົນໃຈ ແລະ ຄວາມຕ້ອງການຂອງຕະຫຼາດແມ່ນຂາດແຄນຢ່າງໜັກໜ່ວງ, ທັງໃນການສຶກສາຊັ້ນມັດທະຍົມ ແລະ ຫຼັງຊັ້ນມັດທະຍົມ.

ຮູບທີ 3.15

ດ້ວຍຄວາມກ້າວໜ້າທາງດ້ານເຕັກໂນໂລຊີດິຈິຕອນ, ຄວາມຕ້ອງການໃຫມ່ສຳລັບການຫັນປ່ຽນສີຂຽວ ແລະ ຄວາມຈຳເປັນເພື່ອເລັ່ງການຫັນປ່ຽນໂຄງສ້າງ, ລະບົບການສຶກສາໃນ ສປປລາວ ຕ້ອງສອດຄ່ອງກັບຄວາມຕ້ອງການທີ່ມີການປ່ຽນແປງຢ່າງໄວວາ. ການສຶກສາ ແລະ ທຸລະກິດທີ່ຫັນເປັນອອນລາຍ ເນື່ອງຈາກໂລກລະບາດສະແດງໃຫ້ເຫັນວ່າປະຊາກອນຕ້ອງກຽມພ້ອມທີ່ຈະປັບຕົວເຂົ້າກັບຄວາມຜັນແປທີ່ບໍ່ສາມາດຄາດເດົາໄດ້. ບົດງານຄົ້ນຄວ້າໜຶ່ງຊີ້ໃຫ້ເຫັນວ່າ 85 ສ່ວນຮ້ອຍຂອງວຽກທີ່ຈະມີໃນປີ 2030 ແມ່ນຍັງບໍ່ໄດ້ຖືກສ້າງຂຶ້ນເທື່ອໃນປີ 2018 (Dell Technologies ແລະ Institute for the Future, 2019). ຮອດປີ 2028, 6,6 ລ້ານວຽກງານຈະຖືກລຶບລ້າງ ເນື່ອງຈາກການນຳໃຊ້ເຕັກໂນໂລຊີຢ່າງແຜ່ຫຼາຍໃນ 6 ເສດຖະກິດໃຫຍ່ທີ່ສຸດໃນອາຊີຕາເວັນອອກສຽງໃຕ້ (CISCO ແລະ Oxford Economics, 2018).

ໄວໜຸ່ມໃນ ສປປ ລາວ ຈຳນວນຫຼວງຫຼາຍບໍ່ມີ 'ທັກສະແຫ່ງອະນາຄົດ' ເຊິ່ງໝາຍຄວາມວ່າເຂົາເຈົ້າບໍ່ມີຄວາມພ້ອມຕໍ່ການປ່ຽນແປງຢ່າງໄວວາຂອງຕະຫຼາດ, ສັງຄົມ ຫຼື ສະພາບແວດລ້ອມ. ທັກສະດັ່ງກ່າວນອນໃນຂະແໜງ ICT ແລະ ຄວາມຮູ້ດ້ານດິຈິຕອນ, STEM, ວຽກງານສີຂຽວ ແລະ ການຄິດຢ່າງມີວິຈາລະນະຍານ, ການແກ້ໄຂບັນຫາຂັ້ນສູງ. ໃນບັນດາໄວໜຸ່ມອາຍຸ 15-24 ປີ, ມີພຽງ 34 ສ່ວນຮ້ອຍໃນກຸ່ມຮັ່ງມີອັນດັບຕົ້ນທີ່ລາຍງານວ່າມີທັກສະ ICT. ຕົວເລກນີ້ຫຼຸດລົງຕ່ຳກວ່າ 4 ສ່ວນຮ້ອຍສຳລັບໄວໜຸ່ມຈາກກຸ່ມທີ່ຢູ່ລຸ່ມສຸດ 60 ສ່ວນຮ້ອຍຂອງຄວາມຮັ່ງມີ (Mizunoya et al., 2019). ການຂາດຫຼັກສູດການສຶກສາທີ່ເຈາະຈົງກັບທັກສະໃນສະຕະວັດທີ 21ໃນທຸກລະດັບໄດ້ພັດພາກໂອກາດໄວໜຸ່ມຢ່າງໃຫຍ່ຫຼວງໃນການສ້າງທັກສະການປັບຕົວ ແລະ ສະແຫວງຫານະວັດຕະກຳ, ທັງໃນດ້ານອາຊີບ ແລະ ຊີວິດສ່ວນຕົວຂອງເຂົາເຈົ້າ. ການພັດທະນາທັກສະແຫ່ງອະນາຄົດຈະເສີມຂະຫຍາຍການຈ້າງງານ ແລະ ສະມັດຖະພາບແຮງງານ, ປະກອບສ່ວນສຳຄັນເຂົ້າໃນການເຕີບໂຕທາງດ້ານເສດຖະກິດ ແລະ ການແຂ່ງຂັນ.

## 3.5 ໂອກາດໃນການ

## ເລັ່ງລັດລະບົບການສຶກສາສັດຕະວັດທີ 21

### ການເພີ່ມທະວີຄວາມສະເໝີພາບຜ່ານການສຶກສາ

ໄວໜຸ່ມແຕ່ລະກຸ່ມປະສົບກັບສິ່ງທ້າທາຍດ້ານການສຶກສາທີ່ບໍ່ເທົ່າທຽມກັນໃນ ສປປ ລາວ. ໄວໜຸ່ມທີ່ດ້ອຍໂອກາດ ແລະ ມີຄວາມສ່ຽງ ປະເຊີນກັບອຸປະສັກເພີ່ມເຕີມທີ່ສົ່ງຜົນໃຫ້ອັດຕາການເຂົ້າຮຽນຫຼຸດລົງ, ອັດຕາການອອກໂຮງຮຽນເພີ່ມຂຶ້ນ ແລະ ຜົນການຮຽນອ່ອນລົງ. ກຸ່ມດັ່ງກ່າວລວມມີແມ່ຍິງ ແລະ ເດັກຍິງ, ຊົນເຜົ່າ, ໄວໜຸ່ມທີ່ມີຄວາມພິການ, ໄວໜຸ່ມ LGBTQI+ ແລະ ໄວໜຸ່ມຈາກເຂດຊົນນະບົດ. ໃນປີ 2018, ດັດຊະນີ GINI ໃນ ສປປ ລາວ ແມ່ນ 38,80, ເພີ່ມຂຶ້ນຈາກ 32,60 ໃນປີ 2002 (GINI, World Bank, 2022). ນີ້ຊີ້ໃຫ້ເຫັນວ່າຄວາມບໍ່ສະເໝີພາບໄດ້ຮຸນແຮງຂຶ້ນເຖິງແມ່ນວ່າການຂະຫຍາຍຕົວທາງເສດຖະກິດຈະເພີ່ມຂຶ້ນ. ການຂະຫຍາຍຕົວຂອງຊ່ອງຫວ່າງໃນສັງຄົມລາວຂົ່ມຂູ່ທີ່ຈະຂັດຂວາງການເຕີບໂຕຂອງເສດຖະກິດຕື່ມ.ຊ່ອງຫວ່າງນີ້ໄດ້ເຮັດໃຫ້ຫຼາຍກຸ່ມຄົນບໍ່ສາ

### ຮູບທີ 3.14: ເຫດຜົນທີ່ບໍ່ເຂົ້າຮຽນ, ເປັນອັດຕາສ່ວນຮ້ອຍ

ແຫຼ່ງຂໍ້ມູນ: LSB, 2020b.




### ຮູບທີ 3.15: ການເຂົ້າຮ່ວມໃນຕະຫຼາດແຮງງານ ຕາມສາຂາວິຊາ ແລະ ຜົນໄດ້ຮັບໃນກຸ່ມໄວໜຸ່ມ 15-24, ເປັນອັດຕາສ່ວນຮ້ອຍ

ແຫຼ່ງຂໍ້ມູນ: LSB, 2020b. ໝາຍເຫດ: ບໍ່ໄດ້ລວມສາຂາວິຊາທີ່ມີຂໍ້ມູນໜ້ອຍກວ່າ 25 ຕົວຢ່າງ.



ມາດປະກອບສ່ວນສຳຄັນຕໍ່ຕະຫຼາດແຮງງານ, ແລະ ເພີ່ມພາລະດ້ານການເງິນຂອງລັດຖະບານໃນການສະໜອງສະຫວັດດີການສັງຄົມ. ຄວາມບໍ່ສະເໝີພາບຍັງມີຄວາມສ່ຽງຕໍ່ການສ້າງຄວາມບໍ່ພໍໃຈໃນສັງຄົມ ເຊິ່ງປະຊາຊົນ ແລະ ຫຼາຍກຸ່ມຮູ້ສຶກວ່າດ້ອຍໂອກາດ ແລະ ຖືກເບິ່ງຂ້າມອັນເນື່ອງມາຈາກນະໂຍບາຍເສດຖະກິດ ແລະ ສັງຄົມທີ່ລົ້ມເຫຼວ. ໂດຍການສົ່ງເສີມການສຶກສາແບບມີສ່ວນຮ່ວມ, ສປປ ລາວ ສາມາດຕ້ານກັບທ່າອ່ຽງຂອງຄວາມບໍ່ສະເໝີພາບທີ່ເພີ່ມຂຶ້ນ.

## ການເລັ່ງລັດການປະຕິຮູບການສຶກສາຜ່ານເຕັກໂນໂລຊີ

ເຕັກໂນໂລຊີກຳລັງປ່ຽນແປງວິທີການສິດສອນຢ່າງໄວວາ. ເຄື່ອງມືດິຈິຕອນສາມາດຊ່ວຍແກ້ໄຂບັນຫາທີ່ສຳຄັນໃນການເຂົ້າເຖິງການສຶກສາໂດຍຜ່ານການຮຽນຮູ້ແບບທາງໄກ ແລະ ການພັດທະນາຫຼັກສູດສຳລັບກຸ່ມຕ່າງໆ, ລວມທັງຄົນທີ່ມີຄວາມພິການ. ເຄື່ອງມືດັ່ງກ່າວສາມາດປັບປຸງຄຸນນະພາບຂອງການສຶກສາໂດຍຜ່ານຫຼັກສູດທີ່ຫຼາກຫຼາຍ, ເຊື່ອມຕໍ່ນັກຮຽນກັບໂອກາດການຮຽນຮູ້ທົ່ວໂລກ ແລະ ຮັບປະກັນການຝຶກອົບຮົມຄູສອນທີ່ສະໝໍ່າສະເໝີຫຼາຍຂຶ້ນ. ໃນຂະນະທີ່ເຂດຊົນນະບົດໃນ ສປປ ລາວ ຍັງຕ້ອງການການລົງທຶນຫຼາຍກວ່າເກົ່າເພື່ອເຊື່ອມຕໍ່ຫາໂອກາດທາງອິນເຕີເນັດ, ອັດຕາການເຂົ້າເຖິງອິນເຕີເນັດຍັງສືບຕໍ່ເພີ່ມຂຶ້ນ. ການວາງແຜນໄລຍະຍາວ ແລະ ການລົງທຶນໃນການຮຽນຮູ້ດິຈິຕອນສາມາດສ້າງຜົນໄດ້ຮັບໃນທາງບວກທີ່ສຳຄັນສຳລັບທັງໄວໜຸ່ມ ແລະ ການພັດທະນາແບບຍືນຍົງ.

ສປປ ລາວ ສາມາດນຳເອົາຕົວຢ່າງຂອງການຮຽນຮູ້ດິຈິຕອນທີ່ດີເດັ່ນທົ່ວໂລກມາໝູນໃຊ້. ຄັງປັນຍາລາວ ເປັນໜຶ່ງໃນໂອກາດທີ່ດີທີ່ສຸດທີ່ຈະໝູນໃຊ້ເຕັກໂນໂລຊີ ຍ້ອນເປັນພື້ນທີ່ໄດ້ຮັບຜູ້ຊົມໃຊ້ຢ່າງກວ້າງຂວາງ ແລະ ຍັງຈະສືບຕໍ່ຂະຫຍາຍຕົວ. ການລົງທຶນໃນເຕັກໂນໂລຊີແມ່ນຈຳເປັນຕ້ອງມີການສະໜອງທຶນເບື້ອງຕົ້ນໃນພື້ນຖານໂຄງລ່າງດິຈິຕອນ ແລະ ອຸປະກອນ. ເຖິງແນວໃດກໍ່ຕາມ, ການລົງທຶນນີ້ຖ້າເຮັດຮ່ວມກັບການແກ້ໄຂແຕ່ໄວເດັກແມ່ນອາດນຳຜົນຕອບແທນທີ່ດີທີ່ສຸດໃນການລົງທຶນເພື່ອພັດທະນາເສດຖະກິດ ແລະ ສັງຄົມ, ໂດຍສະເພາະໃນໄລຍະຍາວ.

## ການວາງແຜນເພື່ອຜົນໄດ້ຮັບທີ່ດີກວ່າໂດຍຜ່ານການເພີ່ມປະສິດທິພາບ

ໄພຂົ່ມຂູ່ ແລະ ວິກິດການທົ່ວໂລກສືບຕໍ່ສ້າງຄວາມບໍ່ສະຖຽນລະພາບຕໍ່ຄວາມພະຍາຍາມໃນການບັນລຸເປົ້າໝາຍການພັດທະນາແຫ່ງຊາດ. ເສດຖະກິດໃນຫຼາຍປະເທດປະສົບກັບຄວາມວຸ້ນວາຍດັ່ງກ່າວ ແລະ ບໍ່ສາມາດເພີ່ມທະວີການລົງທຶນໃນຂົງເຂດພັດທະນາທີ່ສຳຄັນຍ້ອນລະດັບການເຕີບໂຕຂອງເສດຖະກິດຍັງຕໍ່າ. ສປປ ລາວ ໄດ້ປະສົບກັບຜົນກະທົບດັ່ງກ່າວ, ແລະ ໃນຂະນະທີ່ປາກົດການເຫຼົ່ານີ້ເປັນໄພຂົ່ມຂູ່ຕໍ່ການປະຕິຮູບດ້ານການສຶກສາ, ລັດຖະບານຍັງມີໂອກາດທີ່ຈະສືບຕໍ່ຄວາມພະຍາຍາມເພື່ອຊຸກຍູ້ການປະຕິຮູບ.

ເນື່ອງຈາກບໍ່ສາມາດໃຊ້ເງິນເພື່ອການປະຕິຮູບຢ່າງມີປະສິດທິຜົນ, ລັດຖະບານສາມາດຫັນມາສົ່ງເສີມມາດຕະການຊຸກຍູ້ການສຶກສາໃຫ້ມີປະສິດທິພາບແທນ. ການເພີ່ມຂຶ້ນຂອງຂໍ້ມູນສາມາດຊ່ວຍອຳນວຍຄວາມສະດວກໃນຂະບວນການນີ້ເຊັ່ນດຽວກັນກັບການຂະຫຍາຍຕົວຂອງພາກເອກະຊົນໃນການສຶກສາ. ການຮັບຮູ້ເຖິງຂົງເຂດວຽກງານທີ່ມີແນວໂນ້ມໃຫ້ຜົນຕອບແທນສູງສຸດແມ່ນເປັນສິ່ງຈຳເປັນ. ດ້ວຍການປັບປຸງການວາງແຜນ, ການເກັບກຳຂໍ້ມູນ, ການປຶກສາຫາລືກັບຂະແໜງການຫຼັກໆ ແລະ ປະສິດທິພາບລວມໃນທົ່ວລະບົບການສຶກສາທີ່ສູງຂຶ້ນ, ລັດຖະບານສາມາດປ້ອງກັນຂະແໜງການສຶກສາຈາກວິກິດການໄດ້ດີຂຶ້ນ ແລະ ຮັບປະກັນຄວາມເຂັ້ມແຂງຂອງລະບົບຫຼາຍຂຶ້ນ ເຊິ່ງເປັນສ່ວນໜຶ່ງຂອງການຮັກສາຜົນຕອບແທນສູງສຸດຈາກຄວາມໄດ້ປຽບທາງດ້ານປະຊາກອນ.

# 3.6 ຂໍ້ສະເໜີແນະ

## ໝູນໃຊ້ເຕັກໂນໂລຊີເພື່ອຫຼຸດຜ່ອນຄວາມບໍ່ສະເໝີພາບດ້ານການສຶກສາ

ໂດຍອີງໃສ່ການຂະຫຍາຍຕົວຂອງ ICT ເຊັ່ນໂທລະສັບມືຖືແລະ ອິນເຕີເນັດ, ລັດຖະບານສາມາດລົງທຶນໃນເຕັກໂນໂລຊີທີ່ແນໃສ່ແກ້ໄຂຄວາມບໍ່ສະເໝີພາບທາງດ້ານການສຶກສາ, ໂດຍສຸມໃສ່ໄວໜຸ່ມທີ່ຖືກປະຖິ້ມໄວ້ຂ້າງຫຼັງ. ບຸລິມະສິດລວມມີໂຄງການການສຶກສາດິຈິຕອນ ແລະ ອຸປະກອນທີ່ແນໃສ່ກຸ່ມຄົນຕ່າງໆ, ລວມທັງໄວໜຸ່ມທີ່ມີຄວາມພິການ, ຊົນເຜົ່າ ແລະ ໄວໜຸ່ມໃນເຂດຊົນນະບົດ. ການໃຊ້ເຕັກໂນໂລຊີດັ່ງກ່າວສາມາດຫຼຸດຕົ້ນທຶນ ແລະ ສະໜອງການສຶກສາທີ່ມີຄຸນນະພາບ, ດັ່ງປະສົບການຜ່ານມາໃນຊ່ວງໂຄວິດ-19. ຄຳແນະນຳອື່ນໆລວມມີ ການແປແບບຮຽນການສຶກສາດິຈິຕອນທີ່ມີຢູ່ແລ້ວໃນຄັງປັນຍາລາວເປັນ 5 ພາສາຊົນເຜົ່າຕື່ມອີກ, ແລະ ປັບປ່ຽນພາສາເຫຼົ່ານີ້ຜ່ານຮູບແບບທີ່ເຂົ້າເຖິງໄດ້ສຳລັບນັກຮຽນຜູ້ທີ່ຫູໜວກ, ຜູ້ທີ່ມີຄວາມບົກພ່ອງດ້ານການຟັງ, ຜູ້ທີ່ຕາບອດ ແລະ ຜູ້ທີ່ມີຄວາມບົກພ່ອງດ້ານການເບິ່ງເຫັນ, ລວມທັງການລົງທຶນໃນເຕັກໂນໂລຊີເຄື່ອງອ່ານໜ້າຈໍ ແລະ ແທັບເລັດການສຶກສາ.



ຄັງປັນຍາລາວ ແມ່ນອີງໃສ່ການຮ່ວມມືທີ່ສ້າງຂຶ້ນໂດຍອົງການ UNICEF ແລະ Microsoft ເອີ້ນວ່າ 'ໜັງສືຜ່ານແດນການຮຽນຮູ້'. ປະຈຸບັນນີ້ໄດ້ຖືກນຳໃຊ້ຢູ່ໃນ 30 ປະເທດ. ເຄື່ອງມືດັ່ງກ່າວໄດ້ສະໜອງການສຶກສາອອນລາຍໃຫ້ແກ່ຜູ້ໃຊ້ຫຼາຍກວ່າ 300.000 ຄົນໃນ ສປປ ລາວ. ເຄື່ອງມືນີ້ໄດ້ປະກອບສ່ວນເຂົ້າໃນການຂະຫຍາຍການເຂົ້າເຖິງການສຶກສາ ແລະ ປັບປຸງຜົນການຮຽນ. ເຄື່ອງມືດັ່ງກ່າວຍັງມີຄຸນຄ່າສູງສຳລັບການຝຶກອົບຮົມຄູ ແລະ ໃຫ້ຄຳແນະນຳໃນການພັດທະນາອາຊີບ.

ເຖິງຢ່າງໃດກໍຕາມ, ການຂະຫຍາຍການເຂົ້າເຖິງຂອງຊາວໜຸ່ມຢູ່ເຂດຊົນນະບົດຍັງຄົງເປັນອຸປະສັກໃຫຍ່ທີ່ສຸດໃນການບັນລຸສັກກະຍະພາບອັນສູງສຸດໃນການຫຼຸດຜ່ອນຄວາມບໍ່ສະເໝີພາບດ້ານການສຶກສາ ແລະ ຮັບປະກັນວ່າການນຳໃຊ້ເຕັກໂນໂລຊີບໍ່ໄດ້ເຮັດໃຫ້ຄວາມບໍ່ສະເໝີພາບທາງດ້ານດິຈິຕອນຮ້າຍແຮງຂຶ້ນຕື່ມ. ເຄື່ອງມືນີ້ຄວນໄດ້ຮັບການເພີ່ມພູນ  ແລະ ຂະຫຍາຍຕົວໂດຍຜ່ານການລົງທຶນຫຼາຍກວ່າເກົ່າໃນພື້ນຖານໂຄງລ່າງ ICT, ເຊັ່ນຄອມພິວເຕີ, ການເຊື່ອມຕໍ່ອິນເຕີເນັດ, ການເຂົ້າເຖິງ ແລະ ການຝຶກອົບຮົມທັກສະດິຈິຕອນໃຫ້ນັກຮຽນ ແລະ ຄູອາຈານ. ການຂະຫຍາຍການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນກໍ່ຄືກະຊວງສຶກສາທິການ ແລະ ກິລາກັບຜູ້ໃຫ້ບໍລິການອິນເຕີເນັດ ສາມາດເຮັດໃຫ້ເດັກນ້ອຍ ແລະ ຄູສອນໃຊ້ເຄື່ອງມືດັ່ງກ່າວໂດຍບໍ່ເສຍຄ່າ, ນອກນັ້ນຍັງຂະຫຍາຍການເຂົ້າເຖິງໄດ້ຢ່າງກວ້າງຂວາງ, ໂດຍສະເພາະໃນເຂດຊົນນະບົດ.

## ສົ່ງເສີມການສຶກສາແບບມີສ່ວນຮ່ວມໂດຍຜ່ານການຂະຫຍາຍໂຄງການທຶນການສຶກສາໃຫ້ແກ່ໄວໜຸ່ມທີ່ດ້ອຍໂອກາດ.

ໂຄງການທຶນການສຶກສາຄວນເຂົ້າເຖິງປະຊາກອນຜູ້ທຸກຍາກ, ແມ່ຍິງ ແລະ ເດັກຍິງ, ຊົນເຜົ່າ, ກຸ່ມຄົນໃນຊົນນະບົດ ແລະ ຄົນທີ່ມີຄວາມພິການ ເພື່ອປ້ອງກັນບໍ່ໃຫ້ໄວໜຸ່ມອອກຈາກໂຮງຮຽນ. ໂຄງການທີ່ມີຢູ່ປະຈຸບັນແມ່ນຖືກອອກແບບ ແລະ ນຳໃຊ້ບໍ່ດີ. ວິທີການທີ່ມີລັກສະນະກວມລວມ ແລະ ມີປະສິດທິພາບກວ່າ ຄວນແກ້ໄຂຕົ້ນເຫດຫຼາຍຢ່າງທີ່ເຮັດໃຫ້ການເຂົ້າເຖິງການສຶກສາຈຳກັດ, ເຖິງຢ່າງໃດກໍ່ຕ້ອງໃຫ້ຄວາມສຳຄັນຢ່າງຊັດເຈນຕໍ່ເຫດຜົນອັນດັບໜຶ່ງຂອງການອອກຮຽນຄື: ລາຍໄດ້ຂອງຄອບຄົວທີ່ຕໍ່າ.

ການແກ້ໄຂບັນຫາລາຍໄດ້ຕໍ່າທີ່ເປັນຕົ້ນເຫດເຮັດໃຫ້ໄວໜຸ່ມອອກໂຮງຮຽນສາມາດຊ່ວຍໃນການແກ້ໄຂອຸປະສັກອື່ນໆ. ຕົວຢ່າງເຊັ່ນ, ການໃຫ້ທຶນການສຶກສາຫຼາຍຂຶ້ນແກ່ເດັກຍິງຊົນນະບົດທີ່ມາຈາກພື້ນຖານລາຍຮັບຕໍ່າ ຍັງສາມາດຫຼຸດຜ່ອນຄວາມສ່ຽງຕໍ່ການແຕ່ງງານໄວຂຶ້ນ. ມາດຕະການອື່ນໆຄວນຊ່ວຍຮັບຄືນເອົາແມ່ໄວໜຸ່ມເຂົ້າສູ່ໂຮງຮຽນໃນລະບົບ, ແນະນຳໂຄງການແກ້ໄຂທີ່ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກຍິງ, ແລະ ສ້າງສະພາບແວດລ້ອມທາງກົດໝາຍທີ່ເໝາະສົມເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ, ລວມໄປເຖິງການປະຕິບັດ,ຕິດຕາມກົດໝາຍ ແລະ ນະໂຍບາຍຕ່າງໆ. ການປັບປຸງໂຄງການໃຫ້ທຶນແກ່ໄວໜຸ່ມຜູ້ດ້ອຍໂອກາດ ຄວນອີງໃສ່ຄຳຄິດເຫັນຂອງອະດີດຜູ້ໄດ້ຮັບທຶນການສຶກສາ, ຜົນໄດ້ຮັບຂອງລະບົບຂໍ້ມູນການຄຸ້ມຄອງການສຶກສາ ແລະ ການປຶກສາຫາລືກັບພາກສ່ວນກ່ຽວຂ້ອງທີ່ສຳຄັນອື່ນໆ, ເພື່ອຮັບປະກັນໃຫ້ໂຄງການດັ່ງກ່າວສາມາດຊ່ວຍເຫຼືອກຸ່ມເປົ້າໝາຍແມ່ຍິງ ແລະ ໄວໜຸ່ມໃນເຂດຊົນນະບົດຢ່າງມີປະສິດທິພາບ.

## ເພີ່ມທະວີ ແລະ ຂະຫຍາຍການລົງທຶນໃນການສຶກສາຂອງເດັກກ່ອນໄວຮຽນ

ການລົງທຶນໃນການສຶກສາຂອງເດັກກ່ອນໄວຮຽນມີທ່າແຮງທີ່ຈະໄດ້ຮັບຜົນຕອບແທນສູງທີ່ສຸດໃນຂະແໜງການສຶກສາ, ສຸຂະພາບ, ສັງຄົມ ແລະ ເສດຖະກິດ. ລັດຖະບານສາມາດສຸມໃສ່ການສຶກສາໃນໄວເດັກເພື່ອເພີ່ມຜົນຕອບແທນໃນຫຼາຍດ້ານດັ່ງກ່າວ, ເຊິ່ງອາດຈະມີຜົນຕອບແທນທີ່ສູງຂຶ້ນອີກຍ້ອນຄວາມໄດ້ປຽບທາງປະຊາກອນ. ອັດຕາການເຂົ້າຮຽນຂອງໄວເດັກແມ່ນຍັງຕໍ່າ ແລະ ຕ້ອງຖືກຍົກສູງຂຶ້ນ, ໂດຍເລີ່ມແຕ່ຢູ່ເຂດຊົນນະບົດ ແລະ ໃນພາກພື້ນ ແລະ ບັນດາກຸ່ມທີ່ຍັງຫຼ້າຫຼັງກວ່າໝູ່. ການລົງທຶນໃນເບື້ອງຕົ້ນຄວນຈະແນໃສ່ການຮັບປະກັນການລົງທະບຽນເຂົ້າຮຽນຕໍ່າສຸດທີ່ 10 ຄົນໃນເດັກນ້ອຍທຸກໆ 100 ຄົນ, ໂດຍມີໂຄງການທີ່ຈັດສະເພາະເດັກຍິງໄວໜຸ່ມ ແລະ ເຂດຊົນນະບົດ.

## ລົງທຶນໃນການປັບປຸງຄຸນນະພາບການສຶກສາ

ລັດຖະບານຄວນເພີ່ມງົບປະມານການສຶກສາທັງໝົດໃນປັດຈຸບັນຂຶ້ນ. ການລົງທຶນທີ່ພຽງພໍປະກອບກັບການວາງແຜນທີ່ດີຈະປະກອບສ່ວນເຂົ້າໃນການໃຫ້ບໍລິການດ້ານການສຶກສາທີ່ມີຄຸນນະພາບດີຂຶ້ນ. ເນື່ອງຈາກຄຸນນະພາບການຮຽນການສອນ ແລະ ຜົນການຮຽນທີ່ບໍ່ດີພໍ, ການລົງທຶນຄວນສຸມໃສ່ການປັບປຸງການຮຽນ ແລະ ການນຳໃຊ້ການສຶກສາ. ການຮຽນ-ການສອນທີ່ມີຄຸນນະພາບສາມາດເກີດມາຈາກການຍົກລະດັບຄວາມສາມ

າດຂອງຄູ; ການເຜີຍແຜ່ປຶ້ມແບບຮຽນຄືບຊຸດໃຫ້ນັກຮຽນ, ໂດຍສະເພາະຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ; ການຮັບປະກັນຄວາມພຽບພ້ອມຂອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ເຊັ່ນ: ໂຕະ ແລະ ຕັ່ງ, ຫ້ອງສະໝຸດ, ຫ້ອງນໍ້າ, ເຄື່ອງໃຊ້ນໍ້າປະປາ, ໄຟຟ້າ, ເດີ່ນຫຼິ້ນ ແລະ ອື່ນໆ. ແຜນງົບປະມານຄວນກຳນົດເປົ້າໝາຍໃນເລື່ອງປະສິດທິພາບ ແລະ ຄວາມພ້ອມໃນໜ້າທີ່ວຽກງານ ບໍ່ພຽງແຕ່ຫຼັກສູດວິຊາການ.

ລັດຖະບານຄວນຮັບປະກັນງົບປະມານການສຶກສາທັງໝົດໃຫ້ບັນລຸເປົ້າໝາຍປະຈຳປີແຫ່ງຊາດທີ່ 18 ສ່ວນຮ້ອຍຂອງລາຍຈ່າຍທັງໝົດ (ມາດຕາ 15, ກົດໝາຍວ່າດ້ວຍການສຶກສາ, 2015) ແລະ 4 ສ່ວນຮ້ອຍຂອງ GDP ສຳລັບລາຍຈ່າຍດ້ານການສຶກສາ, ພາຍໃຕ້ການສຶກສາ 2030 ຂອງຂອບການປະຕິບັດງານ. ລັດຖະບານຄວນເນັ້ນໜັກການລົງທຶນໃນໂຮງຮຽນທີ່ບໍ່ມີພື້ນຖານໂຄງລ່າງ, ລວມທັງການເຂົ້າເຖິງໄຟຟ້າ, ແລະ ແຫຼ່ງນໍ້າທີ່ພຽງພໍ ແລະ ປອດໄພ.

## ສຳຫຼວດທາງເລືອກແຫຼ່ງສະໜອງທຶນອື່ນໆ

ຜູ້ວາງນະໂຍບາຍຄວນພິຈາລະນາແຫຼ່ງທາງເລືອກໃນການສະໜອງທຶນ ແລະ ຫຼີກລ່ຽງການໃຫ້ພາລະເພີ່ມເຕີມຕໍ່ກັບຄົວເຮືອນ, ເພາະວ່ານີ້ຈະເປັນການເພີ່ມຄວາມສ່ຽງຕໍ່ການບໍ່ເຂົ້າຮຽນ ແລະ ການອອກໂຮງຮຽນ. ຕົວຢ່າງເຊັ່ນວ່າ ລັດຖະບານສາມາດສ້າງແຮງຈູງໃຈໃຫ້ບັນດາຫົວໜ່ວຍທຸລະກິດປະກອບສ່ວນຊຸກຍູ້ການສຶກສາພາຍໃຕ້ຄວາມຮັບຜິດຊອບຂອງຫົວໜ່ວຍທຸລະກິດຕໍ່ສັງຄົມ (UNESCO, 2013). ນອກເໜືອໄປຈາກແຮງຈູງໃຈດ້ານເງິນຕາແບບທົ່ວໄປແລ້ວ, ການປັບປຸງຄວາມເຂົ້າໃຈຂອງພາກເອກະຊົນຕໍ່ກັບຜົນປະໂຫຍດຂອງກຳລັງແຮງງານທີ່ມີການສຶກສາສູງຂຶ້ນສາມາດເພີ່ມທະວີການຮ່ວມມືຈາກພາກສ່ວນດັ່ງກ່າວ.

ໂດຍທົ່ວໄປແລ້ວ, ມີໂອກາດສູງທີ່ພາກເອກະຊົນຈະໃຫ້ຄວາມຮ່ວມມືເນື່ອງຈາກລັດຖະທຳມະນູນຮຽກຮ້ອງໃຫ້ມີວິທີການທີ່ຮອບຮອມຫຼາຍພາກສ່ວນໃນການສະໜອງທຶນການສຶກສາ (ມາດຕາ 22). ລັດຖະບານຍັງສາມາດພິຈາລະນາສ້າງຕັ້ງຊ່ອງທາງໃນການເຂົ້າເຖິງບົດຄົ້ນຄວ້າ ແລະ ຄວາມຮູ້ທີ່ສະດວກສຳລັບຫົວໜ່ວຍທຸລະກິດ. ເວທີການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນໃນຂະແໜງການສຶກສາສາມາດສົ່ງເສີມການສົນທະນາກ່ຽວກັບນະວັດຕະກຳ, ການສະໜອງທຶນ, ຄວາມສອດຄ່ອງຂອງການສຶກສາກັບຄວາມຕ້ອງການຂອງຕະຫຼາດ, ແລະ ການແລກປ່ຽນຄວາມຮູ້ອື່ນໆ. ຂໍ້ສະເໜີອີກອັນໜຶ່ງແມ່ນການສ້າງແຜນຍຸດທະສາດການສະໜອງທຶນໃຫ້ແກ່ການສຶກສາປີ 2023 ທີ່ນຳໃຊ້ທັງຊັບພະຍາກອນທັງພາກລັດ ແລະ ເອກະຊົນ ໃຫ້ສອດຄ່ອງກັບຍຸດທະສາດການເງິນແຫ່ງຊາດເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX.

## ພັດທະນາການສຶກສາທີ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ ແລະ ທັກສະໃນອະນາຄົດ

ເພີ່ມທະວີການສົນທະນາລະຫວ່າງກະຊວງທີ່ກ່ຽວຂ້ອງ ແລະ ຜູ້ຈ້າງງານ. ກະຊວງສຶກສາທິການ ແລະ ກິລາ ຄວນສົມທົບກັບທຸກກະຊວງທີ່ກ່ຽວຂ້ອງລວມທັງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງການຄ້າ ແລະ ອຸດສາຫະກຳ ແລະ ກະຊວງເຕັກໂນໂລຊີ ແລະ ສື່ສານ, ໃນການເກັບກຳ ແລະ ວິເຄາະຂໍ້ມູນ ເພື່ອຊ່ວຍປັບລະບົບການສຶກສາໃຫ້ເໝາະສົມກັບຄວາມຕ້ອງການໃນປະຈຸບັນ ແລະ ອະນາຄົດ. ເຊັ່ນດຽວກັນ, ຄວນໃຫ້ມີການປຶກສາຫາລືກັບຜູ້ຈ້າງງານຫຼາຍຂຶ້ນເພື່ອເຂົ້າໃຈຄວາມຕ້ອງການຂອງເຂົາເຈົ້າໃນດ້ານຊັບພະຍາກອນມະນຸດ ແລະ ວິທີການຕອບສະໜອງຕໍ່ສິ່ງເຫຼົ່ານີ້.

ປັບຫຼັກສູດໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດທີ່ປ່ຽນແປງເລື້ອຍໆ. ຫຼັກສູດ ແລະ ສື່ການສອນຂອງໂຮງຮຽນໃນປະຈຸບັນແມ່ນບໍ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ຜູ້ວ່າຈ້າງ. ການປັບຄວາມແທດເໝາະຂອງຫຼັກສູດ, ວິທີການ ແລະ ການອອກແບບໂຄງການໂດຍລວມແມ່ນຕ້ອງເຮັດໃຫ້ດີຂຶ້ນ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດທີ່ມີການປ່ຽນແປງ, ຄຽງຄູ່ກັບການປັບປຸງການເຊື່ອມໂຍງລະຫວ່າງການສຶກສາເຕັກນິກວິຊາຊີບ, ການສຶກສາຫຼັງມັດທະຍົມ ແລະ ຊັ້ນມັດທະຍົມຕອນປາຍ. ສະຖາບັນການສຶກສາສາມາດຮຽນຮູ້ຈາກພາກອຸດສາຫະກຳ, ບໍລິສັດ ແລະ ຮູບແບບການຈ້າງງານເພື່ອປັບປຸງຫຼັກສູດການຝຶກອົບຮົມ. ເຂົາເຈົ້າຄວນສຳຫຼວດຄຳເຫັນຂອງໄວໜຸ່ມເປັນປະຈຳ ແລະ ແລກປ່ຽນປະສົບການກັບບັນດານັກປະກອບອາຊີບ ແລະ ຜູ້ປະກອບການທີ່ປະສົບຜົນສຳເລັດ ເພື່ອໃຊ້ເຂົ້າໃນການພັດທະນາຫຼັກສູດ. ເຂົາເຈົ້າຍັງສາມາດພິຈາລະນາຈັດຕະຫຼາດນັດແຮງງານເລື້ອຍໆເພື່ອອຳນວຍຄວາມສະດວກໃຫ້ແກ່ການຈ້າງງານຂອງຜູ້ຮຽນຈົບໃນຂະແໜງຕ່າງໆ. ບັນດາຫົວໜ່ວຍທຸລະກິດຄວນພິຈາລະນາການສະໜອງໂອກາດໃນການຝຶກງານ, ການຕິດຕາມ ແລະ ການຝຶກອົບຮົມເພື່ອສະໜັບສະໜູນ ແລະ ເສີມສ້າງທັກສະຂອງໄວໜຸ່ມ. ການສົນທະນາປະຈຳປີລະຫວ່າງຫົວໜ່ວຍທຸລະກິດ ແລະ ອົງການຈັດຕັ້ງທຸລະກິດສາມາດເຮັດໜ້າທີ່ເປັນເວທີສຳລັບການເສີມຂະຫຍາຍຫຼັກສູດ ແລະ ເປີດໂອກາດສຳລັບການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ, ລວມທັງການສະໜອງທຶນການສຶກສາໃນທາງອື່ນໆ.




**ລັດຖະບານ ຄວນຮັບປະກັນ ງົບປະມານການສຶກສາ ທັງໝົດໃຫ້ບັນລຸ ເປົ້າໝາຍປະຈຳປີ ແຫ່ງຊາດທີ່ 18 ສ່ວນຮ້ອຍຂອງ ລາຍຈ່າຍທັງໝົດ**

ພັດທະນາການຄົ້ນຄວ້າ ແລະ ນະວັດຕະກຳ. ການສຶກສາມີສ່ວນສຳຄັນໃນການພັດທະນານະວັດຕະກຳ ແລະ ຄວາມຄິດສ້າງສັນພາຍໃນອຸດສາຫະກຳຕ່າງໆ. ລັດຖະບານ ກໍ່ຄືພາກເອກະຊົນຄວນພິຈາລະນານຳໃຊ້ບົດຄົ້ນຄວ້າ ແລະ ງານວິໄຈຈາກສະຖາບັນການສຶກສາຂັ້ນສູງເຂົ້າໃນຂະບວນການຜະລິດຕົວຈິງນີ້ຈະເພີ່ມມູນຄ່າໃຫ້ກັບການຄົ້ນຄວ້າທີ່ໃຫ້ຜົນປະໂຫຍດຕໍ່ທັງສະຖາບັນການສຶກສາ ແລະ ຫົວໜ່ວຍທຸລະກິດ. ການຄົ້ນຄວ້າສ່ວນໃຫຍ່ແມ່ນປະຖົມປະຖານພຽງເພື່ອສະໜັບສະໜູນການສອນແທນທີ່ຈະເປັນການພັດທະນາວິທະຍາສາດ ແລະ ເຕັກໂນໂລຊີທີ່ພົບເຫັນຢູ່ໃນມະຫາວິທະຍາໄລຄົ້ນຄ້ວາທົ່ວໄປ (ADB, 2016). ກະຊວງສຶກສາທິການ ແລະ ກິລາ ແລະ ບັນດາສະຖາບັນການສຶກສາຂັ້ນສູງຄວນໃຫ້ການຊ່ວຍເຫຼືອແກ່ບັນດາຄະນະວິຊາໃນການຄົ້ນຄວ້າວິທະຍາສາດຄຸນນະພາບສູງທີ່ຊຸກຍູ້ການພັດທະນາດ້ານການສຶກສາ ແລະ ເສດຖະກິດ, ທັງເປັນເຄື່ອງມືເຊື່ອມຕໍ່ການຄົ້ນຄວ້ານີ້ກັບພາກອຸດສາຫະກຳ.

ປະຕິບັດການຄາດຄະເນຕະຫຼາດແຮງງານ ແລະ ສາຂາອາຊີບ. ຄວາມຕ້ອງການຂອງສັງຄົມ ແລະ ເສດຖະກິດທີ່ມີການຜັນແປເປັນສິ່ງທ້າທາຍຕໍ່ລະບົບການສຶກສາຊັ້ນມະຫາໄລ ແລະ ມັດທະຍົມປາຍ. ປັດຈຸບັນ, ໄວໜຸ່ມຍັງບໍ່ທັນມີຄວາມພ້ອມທີ່ຈະຕອບສະໜອງເງື່ອນໄຂຂອງແຮງງານລະດັບກາງ ແລະ ສູງ. ການຄາດຄະເນຕະຫຼາດແຮງງານ ແລະ ສາຂາອາຊີບຄວນດຳເນີນໄປຄຽງຄູ່ກັບການຄາດການດ້ານເສດຖະກິດເພື່ອແຈ້ງໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ສະຖາບັນການສຶກສາໃນການອອກແບບຫຼັກສູດຂອງຕົນ. ການຂະຫຍາຍຕົວຂອງຂະແໜງເສດຖະກິດສາມາດຖືກນຳໃຊ້ເປັນຕົວຄາດຄະເນຕຳແໜ່ງວ່າງ ແລະ ທັກສະທີ່ເປັນທີ່ຕ້ອງການ ເຊິ່ງສາມາດຊ່ວຍສະຖາບັນການສຶກສາຈັດສັນຫຼັກສູດໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.

ໃນປັດຈຸບັນ, ວຽກງານກະສິກຳແມ່ນກວມເອົາສ່ວນແບ່ງການຈ້າງງານທີ່ໃຫຍ່ກວ່າຂະແໜງອຸດສາຫະກຳ ແລະ ການບໍລິການ. ໃນຂະນະທີ່ສ່ວນແບ່ງຂອງການຈ້າງງານທັງຫມົດໃນອຸດສາຫະກຳແມ່ນຕໍ່າ, ການປະກອບສ່ວນຂອງອຸດສາຫະກຳຕໍ່ GDP ແມ່ນສູງຫຼາຍ. ນີ້ໝາຍຄວາມວ່າລັດຖະບານອາດຈະຕ້ອງເພີ່ມກຳລັງແຮງງານທີ່ມີສີມື ແລະ ວຽກເຮັດງານທຳໃນຂະແໜງອຸດສາຫະກຳເພື່ອໝູນໃຊ້ທ່າແຮງດ້ານເສດຖະກິດຂອງຂະແໜງນີ້. ຄຽງຄູ່ກັນນັ້ນ, ຂະແໜງການບໍລິການມີສ່ວນແບ່ງທີ່ສຳຄັນໃນການຈ້າງງານທັງ ໝົດ. ຄົນງານສ່ວນໃຫຍ່ໃນຂະແໜງນີ້ແມ່ນເຮັດວຽກຄ້າຂາຍສົ່ງ ແລະ ຂາຍຍ່ອຍ, ເຊິ່ງລວມທັງການຜະລິດດ້ວຍຕົນເອງ. ຂະແໜງການນີ້ມີບົດບາດສຳຄັນໃນການຮັບປະກັນການຈ້າງງານ, ດັ່ງນັ້ນລັດຖະບານຄວນສົ່ງເສີມສາຂາວິຊາທີ່ສາມາດຊ່ວຍນັກຮຽນເລີ່ມຕົ້ນການຜະລິດເປັນຂອງຕົນເອງ. ການທົດລອງຕະຫຼາດແຮງງານ ແລະ ການຄາດຄະເນດ້ານອາຊີບຄວນຖືກນຳມາໃຊ້ໃນການປັບປຸງຫຼັກສູດຊັ້ນປະຖົມ ແລະ ມັດທະຍົມ.

## ເສີມສ້າງຄວາມເຂົ້າໃຈກ່ຽວກັບຄຸນຄ່າ ແລະ ຜົນປະໂຫຍດຂອງການສຶກສາ

ການສຶກສາພັດທະນາສະມັດຖະພາບແຮງງານ, ລາຍຮັບ, ການດູແລສຸຂະພາບ, ການລ້ຽງດູເດັກ, ການເຂົ້າເຖິງສາທາລະນູປະໂພກ, ຄວາມຄືບຫນ້າຂອງປະຊາທິປະໄຕ ແລະ ການປ່ຽນແປງວັດທະນະທຳໃນຄົວເຮືອນ (Kampelmann et al, 2018; Grossman, 2015; Ramesh, 2020). ການຄາດຄະເນທາງເສດຖະສາດທີ່ອີງໃສ່ຂໍ້ມູນຈາກການສຳຫຼວດລາຍຈ່າຍ ແລະ ການຊົມໃຊ້ຂອງ ສປປ ລາວ ຄັ້ງທີ VI ພົບວ່າການສຶກສາເພີ່ມອີກ 1 ປີສາມາດເພີ່ມເງິນເດືອນໄດ້ 3,3 ສ່ວນຮ້ອຍ. ນອກນັ້ນ, ການຄາດຄະເນນີ້ຍັງໄດ້ສະແດງໃຫ້ເຫັນຜົນດີຕໍ່ແມ່ຍິງ ແລະ ຜູ້ຊາຍທັງໃນກຸ່ມຊົນເຜົ່າລາວ ແລະ ຊົນເຜົ່າອື່ນ. ອັນນີ້ຊີ້ໃຫ້ເຫັນເຖິງເຫດຜົນທີ່ລັດຖະບານຄວນພະຍາຍາມສຸມໃສ່ການເສີມສ້າງຄວາມເຂົ້າໃຈກ່ຽວກັບຜົນປະໂຫຍດຂອງການສຶກສາເຊັ່ນ: ໂດຍຜ່ານກອງປະຊຸມ, ການຝຶກອົບຮົມ ແລະ ວິທີອື່ນໆເພື່ອໃຫ້ຊາວໜຸ່ມໄດ້ແລກປ່ຽນຄວາມຮູ້ ແລະ ສະແດງຄວາມຄິດສ້າງສັນ. ສິ່ງນີ້ຈະຊຸກຍູ້ໃຫ້ໄວໜຸ່ມເຫັນຄຸນຄ່າຂອງການສຶກສາ ແລະ ກາຍເປັນຜູ້ຮຽນຮູ້ທີ່ຫ້າວຫັນ ແທນທີ່ຈະເປັນຜູ້ຮຽນຮູ້ທີ່ບໍ່ມີຄວາມກະຕືລືລົ້ນ. ໂຄງການເຜີຍແຜ່ທົ່ວປະເທດກ່ຽວກັບຄຸນຄ່າຂອງການສຶກສາສາມາດປຸກລະດົມທັງຊາວໜຸ່ມ ແລະ ພໍ່ແມ່ປະຊາຊົນໃຫ້ສຸມໃສ່ການສຶກສາ, ໂດຍແນໃສ່ບັນດາຊຸມຊົນທີ່ດ້ອຍໂອກາດ ແລະ ເຂດທີ່ມີອັດຕາການເຂົ້າຮຽນຕໍ່າ ແລະ ອັດຕາການອອກຮຽນສູງ.

# 3.7 ບົດສະຫຼຸບ

ການພັດທະນາມະນຸດແມ່ນອີງໃສ່ການສຶກສາ. ຄວາມໄດ້ປຽບທາງດ້ານປະຊາກອນກໍ່ເຊັ່ນດຽວກັນ, ເຊິ່ງສະແດງໃຫ້ເຫັນເຖິງຄວາມຕ້ອງການຮີບດ່ວນຕໍ່ການລົງທຶນໃສ່ການສຶກສາ. ເຖິງວ່າຊັບພະຍາກອນທີ່ມີຢູ່ແມ່ນຈຳກັດທີ່ສຸດ, ຂະແໜງການສຶກສາກໍ່ຍັງຄວນໄດ້ຮັບການລົງທຶນທີ່ເພີ່ມຂຶ້ນ.

ເຖິງວ່າຜົນປະໂຫຍດຂອງການຮັບປະກັນໃຫ້ໄວໜຸ່ມໄດ້ຮັບການສຶກສາທີ່ດີຈະຊັດເຈນ, ຜົນໄດ້ຮັບຂອງການສຶກສາຍັງບໍ່ເປັນໄປຕາມຄາດໝາຍມາໄດ້ໄລຍະໜຶ່ງແລ້ວ. ລະບົບການສຶກສາຂອງລາວຍັງບໍ່ຕອບສະໜອງຕໍ່ຄວາມຄາດຫວັງຂອງໄວໜຸ່ມ ແລະ ສັງຄົມ ກໍ່ຄືຄວາມຕ້ອງການຂອງເສດຖະກິດ. ຄູອາຈານຂາດການຝຶກອົບຮົມທີ່ຈຳເປັນ, ວິທີການສິດສອນແມ່ນບໍ່ເໝາະສົມຕໍ່ໄປ ແລະ ຫຼັກສູດຂອງໂຮງຮຽນແມ່ນຫຼ້າສະໄໝ. ຈຳເປັນຕ້ອງມີການເຄື່ອນໄຫວຢ່າງທັນການ, ຊີ້ນຳໂດຍການປະຕິຮູບຍຸດທະສາດ ແລະ ການປັບປຸງແກ້ໄຂເພື່ອຮັບປະກັນໃຫ້ໄວໜຸ່ມທີ່ຮຽນຈົບມາມີທັກສະທີ່ຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ບັນລຸຄວາມມຸ່ງມາດປາຖະໜາ ແລະ ທ່າແຮງຂອງຕົນ. ຖ້າບໍ່ດັ່ງນັ້ນ, ສປປ ລາວ ອາດຈະປະເຊີນກັບ 'ຮຸ່ນຄົນທີ່ສູນເສຍໄປ'; ກໍ່ຄືກຸ່ມໄວໜຸ່ມທີ່ບໍ່ໄດ້ຮັບໂອກາດທາງການສຶກສາທີ່ສົມຄວນໄດ້ຮັບເຊິ່ງນັບມື້ນັບໃຫຍ່ຂຶ້ນ.

ຄວາມຕ້ອງການອັນຮີບດ່ວນປະກອບມີການລົງທຶນໃນຄຸນນະພາບ, ການປັບປຸງການຮຽນຮູ້ ແລະ ການນຳໃຊ້, ການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ, ການນຳໃຊ້ເຕັກໂນໂລຊີ, ສົ່ງເສີມການມີສ່ວນຮ່ວມ, ການສ້າງຕັ້ງໂຄງການທຶນການສຶກສາ ແລະ ການຄົ້ນຫາການສະໜອງທຶນແບບອື່ນ. ຕ້ອງໄດ້ມີການປັບປຸງໃໝ່ເພື່ອໃຫ້ການສຶກສາ ແລະ ການຝຶກອົບຮົມເໝາະສົມກັບທັກສະທີ່ຕະຫຼາດຕ້ອງການ ນອກເໜືອຈາກການໄດ້ຮັບພຽງໃບປະກາດ ແລະ ຮັບປະກັນການເຂົ້າເຖິງການສຶກສາທີ່ດີໃຫ້ແກ່ປະຊາກອນທີ່ດ້ອຍໂອກາດທີ່ສຸດ, ລວມທັງໄວໜຸ່ມຢູ່ເຂດຫ່າງໄກສອກຫຼີກ, ຊົນນະບົດ, ແມ່ຍິງ ແລະ ຊາວໜຸ່ມທີ່ມີຄວາມພິການ, ແລະ ອີກຫຼາຍກຸ່ມ. ເພື່ອດຶງດູດ ແລະ ຮັກສາໄວໜຸ່ມໃຫ້ເຂົ້າຮຽນແມ່ນຮຽກຮ້ອງໃຫ້ມີການເສີມຂະຫຍາຍໂຄສະນາເຖິງບົດບາດຂອງການສຶກສາທີ່ມີຕໍ່ການປັບສູງຊີວິດການເປັນຢູ່ ແລະ ພັດທະນາເສດຖະກິດສັງຄົມ.

ຄວາມກ້າວໜ້າສ່ວນໃຫຍ່ແມ່ນຂຶ້ນກັບຜູ້ກຳນົດນະໂຍບາຍທີ່ຄັດເລືອກ ແລະ ປະກາດໃຊ້ນະໂຍບາຍ ແລະ ການລົງທຶນທີ່ຮັບຮູ້ຢ່າງຖ່ອງແທ້ວ່າການສຶກສາແມ່ນສິ່ງສຳຄັນພື້ນຖານຕໍ່ການພັດທະນາມະນຸດ ແລະ ການໝູນໃຊ້ຄວາມໄດ້ປຽບທາງດ້ານປະຊາກອນ. ຜູ້ກຳນົດນະໂຍບາຍຕ້ອງມີຄວາມທະເຍີທະຍານໃນການແກ້ໄຂຄວາມບໍ່ສະເໝີພາບ, ສ້າງຄວາມເຂັ້ມແຂງຂອງສະຖາບັນ ແລະ ການປັບປຸງຄວາມພ້ອມ, ການເຂົ້າເຖິງ ແລະ ຄຸນນະພາບຂອງການສຶກສາ.





# ເອກະສານອ້າງອີງ

ADB (Asian Development Bank). 2016. “LAO PDR: Second Strengthening Higher Education Project.”https://www.adb.org/projects/48127-002/main

Algraini, S. 2021. “Education for Human Development: A capability perspective in Saudi public education.” Compare: A Journal of Comparative and International Education 51(3).

Chicagos, M. M., and M. R. West. 2010. “Teacher Employment Patterns and Student Results in Charlotte.” Strategic Data Project. Harvard University.

CISCO and Oxford Economics. 2018. Technology and the Future of ASEAN Jobs: The impact of AI on workers in ASEAN’s six largest economies. https://www.cisco.com/c/dam/global/en_sg/assets/csr/pdf/technology-and-the-future-of-asean-jobs.pdf

Conceição, P., M. Kovacevic and T. Mukhopadhyay. 2021. “Human Development: A perspective on metrics.” In B. Fraumeni, ed., Measuring Human Capital. London: Academic Press by Elsevier.

Dell Technologies and the Institute for The Future. 2019. Future of Work: Forecasting Emerging Technologies’ Impact on Work in the Next Era of Human-Machine Partnerships. https://www.iftf.org/fileadmin/user_upload/images/ourwork/Tech_Horizons/realizing_2030_future_of_work_report_dell_technologies.pdf

EMIS, 2022. Education Management Information System (UNICEF)

Government of Lao PDR. 2018. Voluntary National Review on the Implementation of the 2030 Agenda for Sustainable Development. Vientiane. https://sustainabledevelopment.un.org/content/documents/19385Lao_Final_VNR_19_June_2018_web.pdf

———. 2022. Ninth Five-Year National Socio-Economic Development Plan (2021-2025). Vientiane. https://data.opendevelopmentmekong.net/library_record/9th-five-year-national-socio-economic-development-plan-2021-2025

Grossman, M. 2005. Education and Nonmarket Outcomes. NBER Working Papers 11582. National Bureau of Economic Research. https://www.nber.org/system/files/working_papers/w11582/w11582.pdf

Heckman, J., R. Pinto and P. Savelyev. 2013. “Understanding the Mechanism Through Which an Early Childhood Program Boosted Adult Outcomes.” American Economic Review 103: 2052-86.

Kampelmann, S., F. Rycx, Y. Saks, et al.. 2018. “Does Education Raise Productivity and Wages Equally? The Moderating Role of Age and Gender.” IZA Journal of Labor Economics 7(1). https://izajole.springeropen.com/articles/10.1186/s40172-017-0061-4

Lamichhane, K., and Y. Sawada. 2013. “Disability and Returns to Education in a Developing Country.” Economics of Education Review 37: 85-94. https://www.sciencedirect.com/science/article/pii/S027277571300109X

LSB (Lao Statistics Bureau). 2017. Lao Social Indicator Survey II (LSIS II). https://www.unicef.org/laos/reports/lao-social-indicator-survey-lsis-2017

———. 2020a. Disability Monography of Lao PDR from the 2015 Population and Housing Census. Vientiane. https://lao.unfpa.org/sites/default/files/pub-pdf/1.disability_monograph_laos_en_final_29_nov_2020_print.pdf

———. 2020b. The Lao Expenditure and Consumption Survey (LECS 6).

———. 2020c. Major indicators. https://laosis.lsb.gov.la/majorIndicators

McCowan, T., and E. Unterhalter. 2021. Education and International Development: An Introduction. Bloomsbury.

Ministry of Education and Sports. 2016. Education and Sports Sector Development Plan (2016-2020). Vientiane. https://planipolis.iiep.unesco.org/en/2015/education-and-sports-sector-development-plan-2016-2020-6273

——— 2020. “Education and Sports Sector Development Plan 2021-2025”. Vientiane. https://planipolis.iiep.unesco.org/sites/default/files/ressources/lao_education_development_plan_2011-2025_en.pdf

———. 2021. Lao PDR Education Covid-19 Response Plan. Vientiane. http://www.moes.edu.la/moes/images/Argreement/Lao_PDR_Education_COVID-19_Response_Plan.pdf

——— 2022. Decision on the saved state budget expenditure in the Education and Sports sector. Government Gazette. https://laoofficialgazette.gov.la/index.php?r=site/display&id=1877

Ministry of Finance. 2021. State Budget Plan for Fiscal Year 2020. Vientiane.

Ministry of Planning and Investment. 2016. Eighth Five-Year National Socio-Economic Development Plan (2016-2020). Vientiane. https://laopdr.un.org/sites/default/files/2019-08/2016_8th%20NSEDP_2016-2020_English.pdf

Mizunoya, S., M. Sakshi, C. Venturini, et al.. 2019. “ICT Skills Divide: Are all of today’s youth prepared for the digital economy?” UNICEF. https://blogs.unicef.org/evidence-for-action/ict-skills-divide-todays-youth-prepared-digital-economy/

Muennig, P. 2007. “How Education Produces Health: A hypothetical framework.” The Teachers College Record. New York: Columbia University. https://academiccommons.columbia.edu/doi/10.7916/D8B858J8

Nielsen, A., and V. Chanhsomphou. 2006. “Needs and Potential for Rural Youth Development in Lao PDR.” RAP Publication 2006/11. Food and Agriculture Organization. https://www.fao.org/3/ag106e/AG106E00.htm#Contents
Nussbaum, M. 2000. Women and Human Development: The Capabilities Approach. Cambridge: Cambridge University Press

———. 2003. “Capabilities As Fundamental Entitlements: Sen and Social Justice.” Feminist Economics 9(2-3) https://philpapers.org/archive/NUSCAF.pdf

———. 2006. Frontiers of Justice: Disability, Nationality, Species Membership. Cambridge, MA: Harvard University Press.

Our World in Data. 2022. “Education spending as a share of total government spending, 2021”. https://ourworldindata.org/grapher/share-of-education-in-government-expenditure
Ramesh, R. 2020. “How Equal is Access to Public Services? The Impact of Sociodemographic Background on Public Service Delivery in Sri Lanka.” Journal of Developing Societies 37(1). https://journals.sagepub.com/doi/10.1177/0169796X20970882

Sen, A. 1997. “Editorial: Human Capital and Human Capability.” World Development 25(12). https://www.staff.ncl.ac.uk/david.harvey/AEF806/Sen1997.pdf

———. 1999. Development as Freedom. Oxford University Press.

United Nations. 2015. Country Analysis Report Lao PDR: Analysis to inform the Lao People’s Democratic Republic-United Nations Partnership Framework (2017-2021). Vientiane. https://laopdr.un.org/sites/default/files/2019-08/2015%20Country%20Analysis%20Report.pdf
UNDP (United Nations Development Programme). 2014. Human Development Report: Sustaining Human Progress. New York.

———. 2021. “Youth Unemployment Issues in Lao PDR.” Vientiane. https://www.undp.org/sites/g/files/zskgke326/files/migration/

la/57d03c550b79288337d6eb814ffce19b9c65d9892b5a6f7db5f8ec6823562f12.pdf

UNESCO (The United Nations Educational, Scientific and Cultural Organization). 2013. Private Sector Should Boost Finance for Education. Policy Paper 05. Paris. https://unesdoc.unesco.org/ark:/48223/pf0000219221

———. 2020. “TVET Country Profile: Lao P.D.R..” Vientiane. https://unevoc.unesco.org/pub/lao_tvet_country_profile.pdf

UNICEF (United Nations Children’s Fund). 2021. “Impact of Covid-19 on Children, Adolescents and Their Families in Lao PDR.” Vientiane. https://www.unicef.org/laos/reports/impact-covid-19-children-adolescents-and-their-families-lao-pdr

———. 2022a. Education Case Study: Lao PDR. https://www.unicef.org/media/125696/file/Opening%20up%20the%20frontiers%20of%20digital%20learning%20with%20the%20Learning%20Passport%20(Lao%20PDR).pdf

———. 2022b. UNICEF Lao PDR: Compendium of factsheets. Vientiane. https://www.unicef.org/laos/media/7356/file/UNICEF%20Lao%20PDR%20Child%20Protection%20Compendium%20of%20Factsheets.pdf

UNICEF (United Nations Children’s Fund) and SEAMEO (Southeast Asian Ministers of Education Organization). 2020. SEA-PLM 2019 Main Regional Report: Children’s learning in 6 Southeast Asian countries. Bangkok. https://www.unicef.org/eap/media/7356/file/SEA-PLM%202019%20Main%20Regional%20Report.pdf

Unterhalter, E. 2003. “The Capabilities Approach and Gendered Education: An Examination of South African Complexities.” Theory and Research in Education 1(1). https://journals.sagepub.com/doi/10.1177/1477878503001001002

Walker, M. 2010. “Critical Capability Pedagogies and University Education.” Educational Philosophy and Theory 42(8). https://onlinelibrary.wiley.com/doi/abs/10.1111/j.1469-5812.2007.00379.x

Winship, C., and S. D. Korenman. 1999. “Economic Success and the Evolution of Schooling and Mental Ability.” In S. E. Mayer and P. E. Peterson, eds., Earning and Learning: How schools matter. Washington, DC: Brookings Institution Press.

World Bank. 2022. “Gini Index—Lao PDR.” https://data.worldbank.org/indicator/SI.POV.GINI?locations=LA Chapter 4: Health, well-being and safety





# ບົດທີ #4
## ສຸຂະພາບ, ການເປັນຢູ່ທີ່ດີ ແລະ ຄວາມປອດໄພ

©UNFPA Laos



“

## ວັດດາລາພົງ ພົງສະຫວັດ

20 ປີ, ນັກຮຽນ

ຂ້ອຍຊື່ວ່າ ວັດດາລາພົງ ຫຼື K-CIN, ແຕ່ຂ້ອຍເຄີຍເອີ້ນໂຕເອງວ່າ ນິກ. ຂ້ອຍແມ່ນໄວໜຸ່ມທີ່ມີຄວາມຫຼາກຫຼາຍທາງເພດແລະ ເຄີຍໄດ້ຜ່ານໄລຍະເວລາທີ່ຍາກລຳບາກໃນຊີວິດ ເຊິ່ງເຮັດໃຫ້ຂ້ອຍສູນເສຍຄວາມໝັ້ນໃຈໃນຕົນເອງ ແລະ ບາງຄັ້ງກໍ່ກຽດຊັງຕົນເອງ.ຂ້ອຍຮູ້ສຶກວ່າຊີວິດບໍ່ມີຄວາມໝາຍ ແລະ ຖືກບັງຄັບໃຫ້ມີຊີວິດແບບທີ່ຕົນເອງບໍ່ຕ້ອງການ. ຕໍ່ມາ ຂ້ອຍໄດ້ຮູ້ວ່າຂ້ອຍມີບັນຫາສຸຂະພາບຈິດທີ່ເອີ້ນວ່າ ໂລກຊຶມເສົ້າ ເຊິ່ງໄວໜຸ່ມຫຼາຍຄົນໄດ້ມີປະສົບການກັບໂລກດັ່ງກ່າວ ໂດຍສະເພາະໃນກຸ່ມໄວໜຸ່ມທີ່ມີຄວາມຫຼາກຫຼາຍທາງເພດ.

ແຕ່ຫນ້າເສຍດາຍ, ບຸກຄົນທີ່ມີໂລກຊຶມເສົ້າ ຍັງຖືກດູຖູກໂດຍຫມູ່ເພື່ອນ, ຄູ ແລະ ສະມາຊິກໃນຄອບຄົວຫຼາຍຄົນ ຜູ້ທີ່ບໍ່ເຂົ້າໃຈບັນຫາສຸຂະພາບຈິດ ແລະ ວິທີຂໍຄວາມຊ່ວຍເຫຼືອ. ຜູ້ທີ່ຄວນຈະສະໜັບສະໜູນພວກເຮົາ ຊໍ້າພັດເຂົ້າໃຈພວກເຮົາແບບຜິດໆ ພວກເຮົາເລີຍເລືອກທີ່ຈະປິດບັງບັນຫາຂອງພວກເຮົາ ແລະ ເກັບໂຕງຽບ. ສາເຫດ ແລະ ອາການຂອງພາວະຊຶມເສົ້າຂອງພວກເຮົາແມ່ນຍາກທີ່ຈະລະບຸໄດ້.

ຕອນນີ້ຂ້ອຍຢາກເປັນສື່ກາງ ເພື່ອຕິດຕໍ່ສື່ສານກັບຜູ້ຄົນກ່ຽວກັບຄວາມສຳຄັນຂອງສຸຂະພາບຈິດທີ່ດີ ແລະ ສະໜັບສະໜູນຜູ້ທີ່ປະສົບກັບປັນຫາດ້ານສຸຂະພາບຈິດ. ການທີ່ໄວໜຸ່ມໄດ້ຮັບການສະໜັບສະໜູນໃນການສ້າງຄວາມສຳພັນທີ່ດີ, ຝຶກຄວາມເຫັນອົກເຫັນໃຈໃນໝູ່ເພື່ອນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຍາກລຳບາກ ແລະ ເຮັດວຽກຮ່ວມກັນ ເພື່ອໃຫ້ມີຈຸດມຸ່ງໝາຍ ແລະ ເປັນສ່ວນໜຶ່ງຂອງຜູ້ອື່ນ ແມ່ນເປັນສິ່ງສຳຄັນ. ພວກເຮົາບໍ່ສາມາດຫ້າມໃຜບໍ່ໃຫ້ເວົ້າ ຫຼື ຄິດໃນບາງເລື່ອງ, ແຕ່ພວກເຮົາສາມາດສ້າງຄວາມທົນທານໃຫ້ກັບໄວໜຸ່ມເພື່ອໃຫ້ພວກເຂົາສາມາດປົກປ້ອງຕົນເອງຈາກຄຳເວົ້າ ແລະ ຄວາມຄິດຂອງຄົນອື່ນໄດ້. ພວກເຮົາສາມາດໃຫ້ຄວາມສຳຄັນກັບຄົນທີ່ຊຸກຍູ້ພວກເຮົາ ແລະ ຢາກເຫັນພວກເຮົາປະສົບຜົນສຳເລັດ ແລະ ມີຄວາມສຸກໃນຊີວິດ.

# ບົດທີ #4
# ສຸຂະພາບ,ການເປັນຢູ່ທີ່ດີ ແລະ ຄວາມປອດໄພ

ໄວໜຸ່ມໃນໄລຍະຈະເລີນພັນ ແມ່ນໄລຍະທີ່ສຳຄັນຂອງການພັດທະນາຂອງມະນຸດ, ເປັນຊ່ວງເວລາໃນການວາງຮາກຖານສຳລັບການພັດທະນາຂີດຄວາມສາມາດ, ສຸຂະພາບຈິດ ແລະ ຮ່າງກາຍທີ່ດີ. ໄວໜຸ່ມມີສຸຂະພາບຈະເລີນເຕີບໂຕທາງຮ່າງກາຍ, ສະຕິປັນຍາ ແລະ ຈິດຕະສັງຄົມຢ່າງໄວວາ ເຊິ່ງລວມເຖິງການປ່ຽນແປງໃນການປະຕິສຳພັນລະຫວ່າງໝູ່ເພື່ອນ, ປະສົບການທາງເພດ ແລະ ການຮັບມືກັບຄວາມສ່ຽງ ພວກເຂົາໄດ້ຮັບຜົນກະທົບ ໂດຍສະເພາະຈາກການປ່ຽນແປງເຫຼົ່ານີ້ ເຊິ່ງລວມມີຜົນກະທົບຕໍ່ຄວາມຄິດ, ຄວາມຮູ້ສຶກ ແລະ ການມີປະຕິສຳພັນກັບໂລກອ້ອມຕົວພວກເຂົາ (ອົງການອະນາໄມໂລກ, 2021). ເຖິງວ່າໄວໜຸ່ມອາດຈະຖືກເບິ່ງວ່າເປັນໄລຍະເວລາແຫ່ງຄວາມແຂງແຮງຂອງຮ່າງກາຍ ແລະ ສຸຂະພາບທີ່ສົມບູນແຂງແຮງ ແຕ່ມັນຍັງນຳມາ ເຊິ່ງຄວາມທ້າທາຍ ແລະ ຄວາມອ່ອນແອ ໂດຍປັດໄຈຫຼາຍຢ່າງເກີດມາຈາກການປ່ຽນແປງທາງຮ່າງກາຍ ແລະ ຈິດໃຈ. ໃນໄລຍະເປັນໄວໜຸ່ມຮູບແບບຂອງພຶດຕິກຳຂອງເຂົາເຈົ້າຈະເຫັນເປັນຮູບເປັນຮ່າງຈະແຈ້ງຂຶ້ນ. ໄວໜຸ່ມບາງຄົນເລີ່ມມີສ່ວນຮ່ວມໃນກິດຈະກຳທີ່ມີຄວາມສ່ຽງເຊັ່ນ: ການໃຊ້ສານເສບຕິດ. ໄວໜຸ່ມອາດຈະປະສົບກັບຄວາມເຈັບປ່ວຍ, ບາດເຈັບ ແລະ ເສຍຊີວິດເຖິງວ່າຄວາມສ່ຽງດ້ານສຸຂະພາບຫຼາຍຢ່າງ ແມ່ນສາມາດປ້ອງກັນ ຫຼື ປິ່ນປົວໄດ້ກໍຕາມ.

ໄວໜຸ່ມໃນ ສປປ ລາວ ປະເຊີນກັບບັນຫາດ້ານສຸຂະພາບທີ່ສຳຄັນຫຼາຍຢ່າງ. ໃນຂະນະທີ່ຄວາມກັງວົນດ້ານສຸຂະພາບທາງຮ່າງກາຍເຊັ່ນ ອຸບັດຕິເຫດທາງຈະລາຈອນຕາມຖະຫນົນຍັງສືບຕໍ່ດຶງດູດຄວາມສົນໃຈໃນລະດັບປະເທດ; ສິ່ງທ້າທາຍດ້ານສຸຂະພາບຈິດ ກໍກຳລັງຖືກພົບເຫັນຫຼາຍຂຶ້ນໃນກຸ່ມໄວໜຸ່ມ ຫຼື ຢ່າງໜ້ອຍກໍມີການເວົ້າເຖິງຫຼາຍຂຶ້ນ ເນື່ອງຈາກຄວາມຮັບຮູ້ຂອງປະຊາຊົນທົ່ວໄປຕໍ່ບັນຫາດັ່ງກ່າວແມ່ນສູງຂຶ້ນ. ໃນບັນດາໄວໜຸ່ມທີ່ໄດ້ຖືກສຳຫຼວດສຳລັບບົດລາຍງານນີ້, 32,1 ສ່ວນຮ້ອຍ ຊີ້ໃຫ້ເຫັນວ່າພວກເຂົາໄດ້ຕໍ່ສູ້ກັບຄວາມທ້າທາຍດ້ານສຸຂະພາບຈິດ. ຫຼາຍຄົນຍັງປະສົບກັບອຸປະສັກທາງດ້ານໂຄງສ້າງ ແລະ ສັງຄົມໃນການເຂົ້າເຖິງການດູແລສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ຮູ້ສຶກວ່າເຂົາເຈົ້າບໍ່ສາມາດຄວບຄຸມຮ່າງກາຍຂອງເຂົາເຈົ້າໄດ້. ການແຕ່ງງານກ່ອນໄວອັນຄວນ ແລະ ການຖືພາກ່ອນໄວອັນຄວນເຫັນວ່າມີອັດຕາທີ່ສູງທີ່ສຸດໃນອາຊີຕາເວັນອອກສຽງໃຕ້. ການໃຊ້ຢາເສບຕິດ ແລະ ທາດເຫຼົ້າແມ່ນມີອັດຕາທີ່ສູງ, ມີລາຍງານວ່າສານເສບຕິດຖືກໃຊ້ເປັນຍຸດທະສາດໃນການຮັບມືກັບບັນຫາ. ການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ເພີ່ມຄວາມກົດດັນຕື່ມອີກ ໂດຍການເຮັດໃຫ້ຄວາມບໍ່ສະເໝີພາບທີ່ມີຢູ່ແລ້ວ ແລະ ຄວາມສ່ຽງດ້ານສຸຂະພາບທີ່ກ່ຽວຂ້ອງກັບໄວໜຸ່ມຮຸນແຮງຂຶ້ນ ເຊິ່ງເນັ້ນໃຫ້ເຫັນເຖິງຊ່ອງຫວ່າງ ແລະ ຄວາມບໍ່ສະເໝີພາບໃນການດູແລສຸຂະພາບ.

ການໃຊ້ຈ່າຍດ້ານສຸຂະພາບ ທີ່ສອດຄ່ອງກັບການພັດທະນາທາງຈິດໃຈທີ່ສຳຄັນຂອງໄວໜຸ່ມ ຊ່ວຍໃຫ້ເຂົາເຈົ້າສ້າງຄວາມທົນທານ ແລະ ຄວາມສາມາດໃນການໃຊ້ຊີວິດ ໃຫ້ເກີດປະໂຫຍດສູງສຸດ. ສະນັ້ນ ມັນຈະເປັນການລົງທຶນທີ່ສາມາດຫຼຸດຜ່ອນລາຍຈ່າຍກ່ຽວກັບສຸຂະພາບໃນອະນາຄົດ. ການບັນລຸຈຸດໝາຍເຫຼົ່ານີ້ໃນ ສປປ ລາວ ຮຽກຮ້ອງໃຫ້ມີການສຸມໃສ່ ແລະ ເພີ່ມທະວີການລົງທຶນໃນການດູແລສຸຂະພາບຈິດ ແລະ ການປັບປຸງການບໍລິການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນທີ່ຕອບສະໜອງຄວາມຕ້ອງການທີ່ຫຼາກຫຼາຍ, ສົ່ງເສີມຄວາມປອດໄພ ແລະ ເສີມສ້າງການມີສ່ວນຮ່ວມຂອງໄວໜຸ່ມ. ການດູແລສຸຂະພາບຄວນປັບໃຫ້ເຂົ້າກັບຄວາມກົດດັນໃນປັດຈຸບັນ, ລວມທັງເຕັກໂນໂລຢີໃໝ່ໆ, ສື່ສັງຄົມອອນລາຍ, ການຂົ່ມເຫັງທາງອອນລາຍ (online bullying), ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ຄວາມສ່ຽງທີ່ເພີ່ມຂຶ້ນຂອງການແຍກຕົວ ແລະ ຄວາມໂດດດ່ຽວຈາກການແຜ່ລະບາດຂອງພະຍາດໂຄວິດ-19.

ພາກສ່ວນຕໍ່ໄປນີ້ລົງເລິກບັນຫາສຳຄັນດ້ານສຸຂະພາບ ແລະ ຄວາມປອດໄພທີ່ໄວໜຸ່ມປະສົບ ເຊິ່ງລວມມີກົດໝາຍດ້ານສຸຂະພາບ, ຄວາມຄິດລິເລີ່ມ ແລະ ການລົງທຶນໃນປັດຈຸບັນ ເພື່ອຮັບປະກັນວ່າໄວໜຸ່ມສາມາດປະກອບສ່ວນ ແລະ ໄດ້ຮັບຜົນປະໂຫຍດຈາກການພັດທະນາມະນຸດທີ່ເພີ່ມຂຶ້ນ ຕອບສະໜອງເປົ້າໝາຍການພັດທະນາແບບຍືນຍົງ ແລະ ບັນລຸເປົ້າໝາຍດ້ານສຸຂະພາບ ແລະ ການພັດທະນາລະດັບຊາດໃນທີ່ສຸດ.

# 4.1 ການເຊື່ອມໂຍງສຸຂະພາບກັບການພັດທະນາມະນຸດ

ສຸຂະພາບແມ່ນສິດຂັ້ນພື້ນຖານ ແລະ ເປັນພື້ນຖານໜຶ່ງຂອງການພັດທະນາມະນຸດ. ສຸຂະພາບເປັນປາກົດການທີ່ສະລັບຊັບຊ້ອນ ແລະ ມີຫຼາຍມິຕິ ເຊິ່ງມີຄຸນຄ່າທີ່ຈຳເປັນພື້ນຖານ ແລະ ເປັນເຄື່ອງມືສຳຄັນຂອງການພັດທະນາ .ປະຊາກອນທີ່ມີສຸຂະພາບດີ ບໍ່ພຽງແຕ່ມີຄວາມສຳຄັນສຳລັບຕົວຂອງພວກເຂົາເອງເທົ່ານັ້ນ ແຕ່ຍັງມີຄວາມສຳຄັນຕໍ່ການບັນລຸເປົ້າໝາຍເສດຖະກິດ ແລະ ສັງຄົມ ແຫ່ງຊາດອີກດ້ວຍ. ການປັບປຸງດ້ານສຸຂະພາບ ນຳໄປສູ່ການໄດ້ຮັບພັດທະນາການທາງສະຕິປັນຍາ, ຜົນສຳເລັດດ້ານການສຶກສາ, ໂອກາດການຈ້າງງານ ແລະ ລະດັບລາຍໄດ້ ເປັນຕົ້ນ. ສຸຂະພາບທີ່ບໍ່ດີ ສາມາດເຮັດໃຫ້ເກີດການດ້ອຍໂອກາດຮ້າຍແຮງຂຶ້ນ ແລະ ກາຍເປັນຜົນເສຍທີ່ຊ້ຳເຮື້ອ (Wolff ແລະ de-Shalit, 2007).

ຜົນໄດ້ຮັບດ້ານສຸຂະພາບ ສາມາດປັບປຸງໄດ້ດ້ວຍການເພີ່ມຕົວຊີ້ວັດການພັດທະນາຂອງມະນຸດໃນດ້ານອື່ນໆ. ລະດັບການສຶກສາທີ່ສູງຂຶ້ນສາມາດສົ່ງຜົນດີຕໍ່ສຸຂະພາບໄດ້ (Zimmerman, Woolf ແລະ Haley, 2015) ໂດຍສະເພາະສຳລັບເດັກຍິງ(Raghupathi ແລະ Raghupathi, 2020) ພ້ອມນັ້ນຍັງສົ່ງຜົນດີຕໍ່ການພັດທະນາທາງເສດຖະກິດ ຖ້າຫາກມີການມີສ່ວນຮ່ວມ ແລະ ເນັ້ນການຈ້າງງານສູງ. ເສດຖະກິດທີ່ກຳລັງເຕີບໃຫຍ່ຄວນມີທາງເລືອກໃນການຂະຫຍາຍການບໍລິການທີ່ຈຳເປັນ, ລວມທັງ ການດູແລສຸຂະພາບ, ການສຶກສາ ແລະ ການປະກັນສັງຄົມ. ການເພີ່ມຂຶ້ນຂອງ GNP ສ່ວນໃຫຍ່ໝາຍເຖິງການປັບປຸງດ້ານສຸຂະພາບໃນທົ່ວສັງຄົມ ແລະ ຈະສາມາດເພີ່ມຂຶ້ນໄດ້ ກໍຕໍ່ເມື່ອມີທິດທາງນະໂຍບາຍທີ່ຖືກຕ້ອງ ເພື່ອຮັບປະກັນວ່າຊັບພະຍາກອນຂອງລັດ ແລະ ເອກະຊົນ ລວມທັງໃນລະດັບບຸກຄົນ ໄດ້ຖືກຈັດສັນ ເພື່ອໃຫ້ບັນລຸການປັບປຸງຢ່າງກວ້າງຂວາງໃນດ້ານສຸຂະພາບ, ການເປັນຢູ່ທີ່ດີ ແລະ ຄວາມປອດໄພສ່ວນບຸກຄົນ.

ການປັບປຸງແບບປະສົມປະສານໃນຫຼາຍດ້ານຂອງຊີວິດ ສ້າງເງື່ອນໄຂການສຳລັບຜົນຜະລິດ, ການເຕີບໂຕໃນລະບົບເສດຖະກິດ ແລະ ສັງຄົມທີ່ກວ້າງຂວາງ ເພື່ອເລັ່ງການພັດທະນາມະນຸດ ປະຊາຊົນທີ່ມີສຸຂະພາບແຂງແຮງກວ່າ ແມ່ນຈະສາມາດປະກອບສ່ວນ ແລະ ໄດ້ຮັບຜົນປະໂຫຍດຈາກບັນດານະໂຍບາຍທີ່ມີຈຸດປະສົງເພື່ອຊຸກຍູ້ການພັດທະນາ ເຊັ່ນ: ນະໂຍບາຍເພີ່ມທະວີການສຶກສາ ແລະ ຊຸກຍູ້ການເຕີບໂຕຂອງເສດຖະກິດ.

ການວັດແທກການປັບປຸງດ້ານສຸຂະພາບຂອງປະຊາກອນ ແມ່ນມີຫຼາຍວິທີ. ໃນພາກປະຕິບັດຕົວຈິງໂດຍສະເພາະແມ່ນຢູ່ປະເທດທີ່ມີລາຍໄດ້ຕໍ່າ ຫາປານກາງ ສິ່ງເຫຼົ່ານີ້ສາມາດຖືກຕີຂອບໃນແງ່ຂອງອາຍຸຊີວິດທີ່ເພີ່ມຂຶ້ນຕາມການເວລາ ຕົວຢ່າງ: ປັບປຸງການຄວບຄຸມພະຍາດຕິດຕໍ່ທີ່ຂັບເຄື່ອນໂດຍວຽກງານສຸຂາພິບານ, ຄວາມປອດໄພດ້ານອາຫານ, ການສະໜອງວັກຊີນ, ຢາຕ້ານເຊື້ອ ແລະ ການບໍລິການໂພຊະນາການທີ່ດີຂຶ້ນ (Schlipköter ແລະ Flahault, 2010).

ກ່ອງເນື້ອໃນ 4.1

ຄົນທີ່ມີເງື່ອນໄຂທີ່ແຕກຕ່າງກັນ ຮຽກຮ້ອງໃຫ້ມີການດູແລທາງສຸຂະພາບໃນລະດັບທີ່ແຕກຕ່າງກັນ ຕົວຢ່າງ: ໄວໜຸ່ມທີ່ມີສຸຂະພາບດີຄົນໜຶ່ງ ອາດຈະຕ້ອງໄດ້ຮັບການກວດສຸຂະພາບເປັນບາງຄັ້ງຄາວ ແລະ ມາດຕະການປ້ອງກັນບາງຢ່າງເຊັ່ນ: ການຄຸມກຳເນີດ, ໃນຂະນະທີ່ໄວໜຸ່ມອີກຄົນໜຶ່ງທີ່ມີພະຍາດປະຈຳໂຕ ອາດຈະຕ້ອງການການເບິ່ງແຍງທາງການແພດຢ່າງເຂັ້ມງວດຫຼາຍກວ່າ ເພື່ອໃຫ້ມີຄຸນນະພາບຊີວິດທີ່ໃກ້ຄຽງກັນ. ຄວາມເປັນຈິງນີ້ສາມາດໃຊ້ໄດ້ກັບເງື່ອນໄຂອື່ນໆເຊັ່ນກັນ ຕົວຢ່າງ: ບຸກຄົນທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ ອາດຈະຕ້ອງການຄວາມຊ່ວຍເຫຼືອດ້ານສຸຂະພາບທີ່ແຕກຕ່າງຈາກຜູ້ທີ່ຢູ່ໃນເຂດຕົວເມືອງ ເພາະພວກເຂົາປະສົບກັບສິ່ງທ້າທາຍທີ່ແຕກຕ່າງກັນ ເຊັ່ນວ່າ ຄວາມພ້ອມຂອງສະຖານບໍລິການສຸຂະພາບຂັ້ນຕົ້ນ ຫຼື ຖ້າພວກເຂົາມີຄວາມສ່ຽງຕໍ່ສຸຂະພາບບາງປະເພດ.

ດັ່ງທີ່ໄດ້ລະບຸໃນບົດລາຍງານການພັດທະນາມະນຸດຂອງໂລກປີ 2021/2022 ເພື່ອໃຫ້ເຂົ້າໃຈກ່ຽວກັບການເຊື່ອມໂຍງກັບຄວາມທຸກທາງຈິດໃຈ, ການເປັນຢູ່ທີ່ດີ ແລະ ການພັດທະນາມະນຸດ, ການນຳແນວທາງການສ້າງຄວາມອາດສາມາດ ຈະເປັນປະໂຫຍດ ໂດຍສຸມໃສ່ຄວາມສາມາດທີ່ຊ່ວຍໃຫ້ປະຊາຊົນສາມາດຂະຫຍາຍເສລີພາບທີ່ຈະເຮັດສິ່ງໃດໜຶ່ງ ແລະ ເປັນໃນສິ່ງທີ່ພວກເຂົາໃຫ້ຄຸນຄ່າ ແລະ ມີເຫດຜົນທີ່ຈະໃຫ້ຄຸນຄ່າ. ການເປັນຢູ່ທີ່ດີທາງຈິດໃຈ ເປັນຕົວກຳນົດວິທີຄິດ, ການກະທຳ ແລະ ປະຕິສຳພັນຂອງຜູ້ຄົນ. ອາລົມ, ຄວາມຮັບຮູ້, ສະຕິປັນຍາ ແລະ ແຮງຈູງໃຈຂອງບຸກຄົນ ແມ່ນຖືກກຳນົດຂຶ້ນແລ້ວແຕ່ສະຖານະການ, ບໍລິບົດທາງສັງຄົມ, ຄວາມສຳພັນ ແລະ ວັດທະນະທຳ ເຊິ່ງສາມາດຊ່ວຍໃນການຈັດການກັບໂລກທີ່ບໍ່ສາມາດຄາດເດົາໄດ້ (ມີບາງຄົນໂຕ້ແຍ່ງວ່າ ອາລົມສະທ້ອນໃຫ້ເຫັນເຖິງການປັບຕົວຕາມວິວັດທະນາການ). ການຄວບຄຸມອາລົມ ແລະ ສຸຂະພາບຈິດທີ່ດີເປັນສິ່ງສຳຄັນຕໍ່ສັງຄົມທີ່ສະຫງົບສຸກ ແລະ ສາມັກຄີ ເຊິ່ງມັນກໍແມ່ນເພື່ອການພັດທະນາມະນຸດ. ໃນໄລ





## ກ່ອງເນື້ອໃນ 4.1: ສຸຂະພາບ ແມ່ນຄວາມສາມາດໃນໄລຍະທີ່ມີການແຜ່ລະບາດຂອງພະຍາດ

ໂດຍພື້ນຖານແລ້ວ, ຄວາມສາມາດແມ່ນຜົນລວມຂອງການໜ້າທີ່ການທາງຊີວະວິທະຍາ ແລະ ເງື່ອນໄຂພາຍນອກຂອງແຕ່ລະບຸກຄົນ ລວມທັງສະພາບແວດລ້ອມທາງສັງຄົມ ແລະ ທາງດ້ານຮ່າງກາຍ. ຄວາມສາມາດໃນການມີສຸຂະພາບທີ່ດີໃນໄລຍະທີ່ມີໂລກລະບາດ ອາດລວມເຖິງຂີດຄວາມສາມາດໃນການຕັດສິນໃຈກ່ຽວກັບຮ່າງກາຍ ແລະ ພຶດຕິກຳຂອງຕົນ, ການຄຸ້ມຄອງການພົວພັນທາງສັງຄົມ ແລະ ການມີສ່ວນຮ່ວມກັບສະພາບແວດລ້ອມທາງດ້ານຮ່າງກາຍ ເພື່ອມີສາມາດຫຼີກລ່ຽງການຕິດເຊື້ອ.

ນະໂຍບາຍ ຄວນນຳເອົາຄວາມສາມາດໃຫ້ໄປນອກເໜືອກວ່າພຽງແຕ່ການ ເວັ້ນໄລຍະຫ່າງທາງກາຍ ແລະ ການໃສ່ຜ້າອັດປາກ ເພື່ອແກ້ໄຂສິ່ງກີດຂວາງທາງໂຄງສ້າງທີ່ຕິດພັນກັບການປະຕິບັດພຶດຕິກຳດັ່ງກ່າວ. ການຮັບປະກັນຄວາມສາມາດດ້ານສຸຂະພາບຂອງໄວໜຸ່ມອາດຈະຕ້ອງຮຽກຮ້ອງໃຫ້ມີການເຕົ້າໂຮມເຈົ້າໜ້າທີ່ສາທາລະນະສຸກ, ຕຳຫຼວດ, ຜູ້ນຳຊຸມຊົນ ແລະ ໄວໜຸ່ມ ເພື່ອອອກແບບຍຸດທະສາດທີ່ເປັນນະວັດຕະກຳ ທີ່ສົ່ງເສີມການຮັບຮູ້ເລື່ອງສຸຂະພາບ ແລະ ການປະຕິບັດສຸຂະອະນາໄມທີ່ດີໂດຍອີງໃສ່ຊີວິດການເປັນຢູ່ໃນທ້ອງຖິ່ນ, ປັດໄຈຄວາມສ່ຽງ ແລະ ຄວາມຕ້ອງການຂອງກຸ່ມໂດຍສະເພາະ (ຕົວຢ່າງ: ໄວໜຸ່ມຍິງຢູ່ໃນສະຖານະການທີ່ມີຄວາມສ່ຽງ ຫຼື ນັກຮຽນໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ), ພ້ອມກັບການທົດສອບ, ຕິດຕາມ ແລະ ການແຍກປ່ຽວຢ່າງມີປະສິດທິພາບ. ສິ່ງນີ້ຈະຮຽກຮ້ອງໃຫ້ມີໂຄງການທີ່ມີຄວາມທົນທານໃນພາກສ່ວນຕ່າງໆຂອງປະເທດ ທີ່ຄຳນຶງເຖິງຄວາມຕ້ອງການຂອງໄວໜຸ່ມໂດຍສະເພາະ, ນັບຕັ້ງແຕ່ການຮັບປະກັນການຮຽນຮູ້ທາງໄກຢູ່ເຂດຊົນນະບົດ ໄປຈົນເຖິງການໜູນຊ່ວຍດ້ານຈິດໃຈ ສຳລັບການແຍກປ່ຽວ, ລວມເຖິງການແຊກແຊງ ເພື່ອຮັບປະກັນໃຫ້ບັນດາຄອບຄົວທຸກຍາກບໍ່ຖືກຊັກຈູງໃຫ້ດຶງນັກຮຽນອອກຈາກໂຮງຮຽນໄປເຮັດວຽກເພື່ອລ້ຽງຊີບ.

ແຫຼ່ງຂໍ້ມູນ: Venkatapuram, 2020.



©UNFPA Laos

ຍະເວລາທີ່ບໍ່ແນ່ນອນ, ຄວາມທຸກທາງຈິດໃຈໃນຕົວບຸກຄົນ ສາມາດສ້າງຄ່າໃຊ້ຈ່າຍຕໍ່ກັບສັງຄົມໂດຍລວມ ເນື່ອງຈາກຄວາມທຸກທາງຈິດໃຈ ມັນກີດຂວາງປະຊາຊົນບໍ່ໃຫ້ເຂົ້າເຖິງສັກກະຍະພາບທີ່ສູງສຸດຂອງຕົນເອງຕະຫຼອດຊີວິດ.

ລະບົບການດູແລສຸຂະພາບທີ່ລວມເອົາການບໍລິການດ້ານສັງຄົມ ແລະ ການສຶກສາ, ຕອບສະໜອງບັນຫາສຸຂະພາບສະເພາະຂອງໄວໜຸ່ມແມ່ນມີຄວາມຈຳເປັນໃນການສະໜັບສະໜູນໄວໜຸ່ມໃນ ສປປ ລາວ ເພື່ອເພີ່ມໂອກາດສູງສຸດ, ປະກອບສ່ວນເຂົ້າໃນການຜະລິດ ແລະ ສັງຄົມຂອງປະເທດໂດຍລວມ. ການລົງທຶນໃນລະບົບດັ່ງກ່າວ ຄວນປະກອບດ້ວຍການບໍລິການດ້ານສຸຂະພາບຈິດ ແລະ ຈິດຕະສັງຄົມທີ່ຖືກເປົ້າໝາຍ ເຊິ່ງຊ່ວຍສະໜອງຄວາມຮູ້ ແລະ ທັກສະໃຫ້ໄວໜຸ່ມ ໃນການຕັດສິນໃຈໃນທາງບວກກ່ຽວກັບບັນຫາທີ່ສົ່ງຜົນກະທົບຕໍ່ພວກເຂົາ.

# 4.2 ທ່າອ່ຽງດ້ານສຸຂະພາບ, ການເປັນຢູ່ທີ່ດີ ແລະ ຄວາມປອດໄພ

### ຄວາມກົດດັນ ແລະ ຄວາມກັງວົນດ້ານສຸຂະພາບຈິດ

ສະພາບສຸຂະພາບຈິດກວມເອົາປະມານ 14 ສ່ວນຮ້ອຍຂອງມວນລວມພະຍາດທັງຫມົດໃນທົ່ວໂລກ; ການຄາດຕະກຳຕົນເອງເປັນຫນຶ່ງໃນສອງສາເຫດອັນດັບຕົ້ນຂອງການເສຍຊີວິດກ່ອນໄວອັນຄວນສຳລັບໄວໜຸ່ມ. ນອກຈາກຄວາມກົດດັນທີ່ກ່ຽວຂ້ອງກັບການຮຽນແລ້ວ, ຍັງມີລາຍງານວ່າໄວໜຸ່ມ ແລະ ໄວຈະເລີນພັນໃນທົ່ວອາຊີຕາເວັນອອກສ່ຽງໃຕ້ ໄດ້ປະສົບກັບ "ຄວາມຜິດປົກກະຕິຂອງການນອນ, ພະຍາດຊຳເຮື້ອ, ຄວາມຮຸນແຮງໃນຄອບຄົວ, ການລ່ວງລະເມີດທາງວາຈາ, ມີບັນຫາໃນການຄວບຄຸມອາລົມຕົນເອງ ແລະ ຄວາມຜິດປົກກະຕິທາງດ້ານການປະພຶດ, ພາວະຊຶມເສົ້າ, ຄວາມຢ້ານກົວຂອງການສູນເສຍວຽກ, ຄວາມກັງວົນຕໍ່ຄວາມຍາກລຳບາກທາງເສດຖະກິດ, ຄວາມຢ້ານກົວຂອງການລ່ວງລະເມີດທາງເພດ, ອາລົມປ່ຽນແປງ, ແລະ ອື່ນໆ (World Vision International, 2021).

ດັ່ງທີ່ໄດ້ລະບຸໄວ້ໃນບົດລາຍງານການພັດທະນາມະນຸດຂອງໂລກປະຈຳປີ 2021/2022, ຄວາມຜິດປົກກະຕິທາງຈິດໃຈມີຜົນກະທົບຕໍ່ການພັດທະນາມະນຸດໃນຫຼາຍດ້ານ (UNDP, 2022). ບັນຫາສຸຂະພາບຈິດ ມັກຈະພົວພັນກັບສິ່ງທ້າທາຍດ້ານສຸຂະພາບອື່ນໆ ແລະ ມັນສາມາດກີດຂວາງການເຂົ້າໂຮງຮຽນ ແລະ ການຮຽນຮູ້ ເຊັ່ນດຽວກັນກັບຄວາມສາມາດໃນການຊອກຫາວຽກເຮັດ ແລະ ມີປະສິດທິພາບຢ່າງເຕັມທີ່. ການໃສ່ຮ້າຍປ້າຍສີທີ່ມັກມາພ້ອມກັບຄວາມຜິດປົກກະຕິທາງຈິດ ເຮັດໃຫ້ເລື່ອງຮ້າຍແຮງຂຶ້ນ. ໃນກໍລະນີທີ່ຂາດຄວາມຍືດຍຸ່ນທາງດ້ານຈິດໃຈ ຄວາມທຸກອາດສົ່ງຜົນໃຫ້ເກີດຄວາມຜິດປົກກະຕິທາງຈິດສົ່ງຜົນໃຫ້ຜົນການຮຽນອ່ອນ ປະສິດທິພາບໃນການເຮັດວຽກຕໍ່າ, ເຮັດໃຫ້ເກີດຄວາມທຸກຍາກ, ການຕາຍກ່ອນໄວອັນຄວນ ແລະ ສຸຂະພາບໂດຍລວມທີ່ບໍ່ດີ.

ໄວໜຸ່ມເກືອບ 1 ໃນ 3 ຂອງ ສປປ ລາວ ໄດ້ລາຍງານວ່າ ຕົນເອງປະສົບກັບສິ່ງທ້າທາຍດ້ານສຸຂະພາບຈິດ. ໃນການສົນທະນາທີ່ຈັດຂຶ້ນ ເພື່ອກະກຽມການທົບທວນດ້ວຍຄວາມສະໝັກໃຈແຫ່ງຊາດປີ 2021 ກ່ຽວກັບການຈັດຕັ້ງປະຕິບັດວາລະການພັດທະນາແບບຍືນຍົງສຳລັບປີ 2030, ພວກເຂົາໄດ້ກ່າວເຖິງຄວາມກັງວົນຮ້າຍແຮງທີ່ກ່ຽວຂ້ອງກັບການທີ່ຕ້ອງມີຜົນການຮຽນດີໃນໂຮງຮຽນ. ບັນຫາເຫຼົ່ານີ້ ເກີດຂຶ້ນກັບຫຼາຍກຸ່ມເປົ້າໝາຍສຳລັບບົດລາຍງານນີ້ ເຊິ່ງບັນດາໄວໜຸ່ມອະທິບາຍວ່າສຸຂະພາບຈິດເປັນສິ່ງທີ່ມັກຈະຖືກເບິ່ງຂ້າມ. ພວກເຂົາໄດ້ໃຫ້ລາຍລະອຽດກ່ຽວກັບບັນຫາການຂົ່ມເຫັງຢູ່ໃນໂຮງຮຽນ, ການນອນທີ່ບໍ່ພຽງພໍ, ການອອກກຳລັງກາຍ ແລະ ໂພຊະນາການ. ຫຼາຍຄົນທີ່ປະສົບບັນຫາສຸຂະພາບຈິດບໍ່ຮູ້ວິທີຂໍຄວາມຊ່ວຍເຫຼືອ ເນື່ອງຈາກເຂົາເຈົ້າບໍ່ຮູ້ວິທີເຂົ້າເຖິງການບໍລິການຕ່າງໆເພື່ອຊ່ວຍເຫຼືອປະຊາຊົນ.

ໄວໜຸ່ມທີ່ມີຄວາມຫຼາກຫຼາຍທາງເພດຫຼາຍຄົນປະສົບກັບບັນຫາສຸຂະພາບຈິດ ເນື່ອງຈາກການຖືກຈຳແນກ ແລະ ການຖືກລັງກຽດ. ເຖິງວ່າຂໍ້ມູນໃນ ສປປ ລາວ ຈະມີການລາຍງານຢ່າງຈຳກັດ, ບົດລາຍງານການພັດທະນາມະນຸດຂອງໂລກ 2021/2022 ລະບຸວ່າ: "ຫຼາຍກວ່າເຄິ່ງໜຶ່ງຂອງໄວໜຸ່ມຂ້າມເພດ ແລະ ບໍ່ລະບຸເພດ ໄດ້ພິຈາລະນາເຖິງການຈົບຊີວິດຂອງຕົນເອງຢ່າງໜ້າອາໜາດໃຈໃນປີທີ່ຜ່ານມາ, ມີເຖິງ 71 ສ່ວນຮ້ອຍມີອາການຂອງຄວາມວິຕົກກັງວົນ ແລະ ປະມານ 62 ສ່ວນຮ້ອຍ ເປັນພະຍາດຊຶມເສົ້າ." (UNDP, 2022 pp. 91). ອົງການຈັດຕັ້ງເພື່ອສົ່ງເສີມກຸ່ມໄວໜຸ່ມທີ່ມີຄວາມຫຼາກຫຼາຍທາງເພດ ເຊັ່ນ ພູມໃຈທີ່ເປັນເຮົາ (Proud to Be Us Laos) ທີ່ສະໜູນໂດຍ UNFPA ໄດ້ຮຽກຮ້ອງໃຫ້ມີການໃຫ້ຄວາມຮູ້ດ້ານເພດສຶກສາ ແລະ ສຸຂະພາບຈະເລີນພັນຮອບດ້ານ ພ້ອມທັງສະໜອງການສຶກສາແບບເພື່ອນສອນເພື່ອນ ແລະ ເຄືອຂ່າຍສະໜັບສະໜູນ. ມາດຕະການເຫຼົ່ານີ້ ມີຈຸດປະສົງເພື່ອໃຫ້ຂໍ້ມູນແກ່ໄວໜຸ່ມທີ່ມີຄວາມຫຼາກຫຼາຍທາງເພດ ແລະ ເປັນສະຖານທີ່ທີ່ເປັນມິດກັບໄວໜຸ່ມໃນການແກ້ໄຂບັນຫາຕ່າງໆເຊັ່ນ ການຂົ່ມເຫັງທາງວາຈາ (bullying), ການຮ່ວມເພດທີ່ປອດໄພ ແລະ ການປ່ຽນແປງທີ່ກ່ຽວພັນກັບຮ່າງກາຍຂອງພວກເຂົາ ພ້ອມທັງເພື່ອເຮັດໃຫ້ມີຕົວເລືອກທາງດ້ານຂໍ້ມູນກ່ຽວກັບຮ່າງກາຍ ແລະ ເພດຂອງພວກເຂົາໃນລະດັບອາລົມທີ່ດີຂຶ້ນ (UNFPA, 2021c). ກຸ່ມໄວໜຸ່ມທີ່ມີລັກສະນະມັກເພດດຽວກັນ ແລະ ກຸ່ມໄວໜຸ່ມທີ່ຂາດຄວາມເຂັ້ມແຂງທາງດ້ານຈິດໃຈແມ່ນມີຄວາມສ່ຽງສູງຕໍ່ບັນຫາສຸຂະພາບຈິດ. ບັນຫານີ້ລວມເຖິງຜູ້ທີ່ອາໄສຢູ່ໃນຊຸມຊົນເຂດຫ່າງໄກສອກຫຼີກ, ຊົນນະບົດ, ກຸ່ມຊົນເຜົ່າ, ປະຊາກອນເຄື່ອນຍ້າຍ ແລະ ຄົນທີ່ມີຄວາມພິການ (USAID, 2021).




**30 ສ່ວນຮ້ອຍ ຂອງໄວໜຸ່ມ ທັງຫມົດ ລາຍງານວ່າ ມີຄວາມຮູ້ສຶກ ໂດດດ່ຽວ.**

ພະຍາດໂຄວິດ-19 ໄດ້ເຮັດໃຫ້ຄວາມວິຕົກກັງວົນດ້ານສຸຂະພາບຈິດໃນທົ່ວປະເທດລາວເພີ່ມຂຶ້ນ. ຜູ້ຄົນຈຳນວນຫຼາຍຂຶ້ນກຳລັງປະສົບກັບຄວາມຫຍຸ້ງຍາກຈາກການເຈັບປ່ວຍ, ຄວາມລຳບາກທາງດ້ານເສດຖະກິດ ແລະ/ຫຼື ຄວາມໂດດດ່ຽວ (UHC Partnership, 2021). ດັ່ງທີ່ໄດ້ບັນທຶກໄວ້ໃນບົດລາຍງານການພັດທະນາມະນຸດທົ່ວໂລກປີ 2021/2022, ອັດຕາການເພີ່ມຂຶ້ນຂອງພາວະຊຶມເສົ້າ ແລະ ຄວາມວິຕົກກັງວົນໄດ້ເພີ່ມຂຶ້ນຫຼາຍກວ່າ 25 ສ່ວນຮ້ອຍ ໃນປີທຳອິດຂອງການແຜ່ລະບາດ, ສົ່ງຜົນກະທົບຕໍ່ຜູ້ທີ່ມີລາຍໄດ້ຕໍ່າທີ່ຕ້ອງດີ້ນຮົນເພື່ອຄວາມຕ້ອງການພື້ນຖານ. (UNDP, 2022). ເນື່ອງຈາກວ່າຄວາມຕ້ອງການຂອງໄວໜຸ່ມ ແລະ ເຍົາວະຊົນແຕກຕ່າງຈາກເດັກນ້ອຍ ແລະ ຜູ້ໃຫຍ່, ຜົນກະທົບທາງດ້ານຈິດໃຈຈາກວິກິດການ ແລະ ມາດຕະການປິດເມືອງໃນໄລຍະການແຜ່ລະບາດຍິ່ງມີແນວໂນ້ມສູງຂຶ້ນກວ່າເກົ່າ. ການພັດທະນາທັກສະທາງສັງຄົມ, ຄວາມເຫັນອົກເຫັນໃຈ ແລະ ຄວາມຮູ້ສຶກເປັນຕົວຕົນແມ່ນສຳຄັນທີ່ສຸດໃນເຍົາວະຊົນ, ເປັນຕົ້ນ ການສ້າງຄວາມສຳພັນກັບເພື່ອນມິດ (MPI, 2021). ການແຜ່ລະບາດ ແລະ ການບັງຄັບໃຫ້ແຍກປ່ຽວຈາກດ້ານສັງຄົມຈຶ່ງມີແນວໂນ້ມວ່າອາດຈະເຮັດໃຫ້ໄວໜຸ່ມກັບຄືນສູ່ຈຸດທີ່ຍາກລຳບາກຂອງການພັດທະນາທາງດ້ານສັງຄົມ ແລະ ຈິດໃຈ. ການສຳຫຼວດຂອງ UNDP ທີ່ດຳເນີນຂຶ້ນສຳລັບບົດລາຍງານນີ້ຢັ້ງຢືນວ່າ 30,8 ສ່ວນຮ້ອຍ ຂອງໄວໜຸ່ມຮູ້ສຶກບໍ່ປອດໄພທີ່ຈະອອກໄປນອກເຮືອນ ແລະ 17,5 ສ່ວນຮ້ອຍ ຮູ້ສຶກວ່າໂລກລະບາດໄດ້ເຮັດໃຫ້ເຂົ້າເຖິງການບໍລິການຕ່າງໆ ລວມທັງການໄດ້ຮັບການປິ່ນປົວສຸຂະພາບຫຍຸ້ງຍາກຂຶ້ນ. ສຳລັບຜູ້ຕອບແບບສອບຖາມ 9,4 ສ່ວນຮ້ອຍ, ມີຄວາມກົດດັນທາງຈິດໃຈ ແລະ ຄວາມຮູ້ສຶກໂດດດ່ຽວເພີ່ມຂຶ້ນ.

ຄວາມໂດດດ່ຽວ ແລະ ຄວາມລຳບາກທາງເສດຖະກິດຢ່າງຕໍ່ເນື່ອງສາມາດນຳໄປສູ່ພຶດຕິກຳທີ່ມີຄວາມສ່ຽງເຊັ່ນ ການຕິດສານເສບຕິດ ແລະ ໃນໄລຍະຍາວສາມາດເຮັດໃຫ້ເກີດຄວາມສ່ຽງຕໍ່ພະຍາດຊຶມເສົ້າ, ໂລກຕຸ້ຍ (obesity) ແລະ ຄວາມດັນເລືອດສູງ (Xai ແລະ Li, 2018). ການສຳຫຼວດຂອງ UNDP ສຳລັບບົດລາຍງານນີ້ພົບວ່າເກືອບ 30 ສ່ວນຮ້ອຍ ຂອງໄວໜຸ່ມທັງຫມົດ ລາຍງານວ່າມີຄວາມຮູ້ສຶກໂດດດ່ຽວ. ພຽງແຕ່ຫຼາຍກວ່າ 9 ສ່ວນຮ້ອຍ ເທົ່ານັ້ນລະບຸວ່າພວກເຂົາເພິ່ງພາເຄື່ອງດື່ມທີ່ມີທາດເຫຼົ້າ ເພື່ອຮັບມືກັບການລະບາດຂອງໂຄວິດ - 19.

ກ່ອງເນື້ອໃນ 4.2

### ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ

ໄວໜຸ່ມໃນ ສປປ ລາວ ຮັບຮູ້ເລື່ອງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນເປັນເລື່ອງສຳຄັນລະດັບຕົ້ນໆ, ໂດຍ 28.1 ສ່ວນຮ້ອຍຂອງຜູ້ຕອບແບບສຳຫຼວດຂອງ UNDP ໄດ້ລະບຸວ່າສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນເປັນກຸນແຈສຳຄັນຂອງບັນຫາສຸຂະພາບ. ມີພຽງ 50,7 ສ່ວນຮ້ອຍ ຂອງໄວໜຸ່ມເທົ່ານັ້ນທີ່ເຫັນດີເປັນເອກະພາບກັນວ່າພວກເຂົາມີຂໍ້ມູນທີ່ຈຳເປັນກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ເພື່ອໃຊ້ປະກອບການຕັດສິນໃຈຢ່າງມີຂໍ້ມູນ; 80 ສ່ວນຮ້ອຍ ຂອງຜູ້ຕອບແບບສອບຖາມເພດຍິງ ຮູ້ສຶກອາຍໃນການໂອ້ລົມກັບທ່ານໝໍກ່ຽວກັບພະຍາດ. ໃນການສົນທະນາສະເພາະກຸ່ມ, ໄວໜຸ່ມຫຼາຍຄົນກ່າວວ່າ ມັນເປັນການຍາກທີ່ຈະເຂົ້າເຖິງຂໍ້ມູນຂ່າວສານເປັນພາສາທ້ອງຖິ່ນ, ເຊິ່ງກາຍເປັນອຸປະສັກຕໍ່ການໃຫ້ບໍລິການ. ພວກເຂົາຊອກຫາຂໍ້ມູນສ່ວນໃຫຍ່ຜ່ານການຊອກຫາທາງອິນເຕີເນັດເປັນພາສາອັງກິດ ໂດຍມີເນື້ອຫາເປັນພາສາລາວ ຫຼື ພາສາທ້ອງຖິ່ນອື່ນໆໜ້ອຍຫຼາຍ.

ການເຂົ້າເຖິງຂໍ້ມູນຜ່ານສະຖານບໍລິການສຸຂະພາບອາດມີຄວາມສັບສົນ, ໂດຍໄວໜຸ່ມອະທິບາຍວ່າພວກເຂົາຕ້ອງປຶກສາກັບໂຮງໝໍຫຼາຍແຫ່ງກ່ອນທີ່ຈະຕັດສິນໃຈເລືອກການປິ່ນປົວ. ມັນໄດ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນໃນການລົງທຶນໃຫ້ຫຼາຍກວ່າເກົ່າໃນການສຶກສາສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນແບບຮອບດ້ານ, ເລີ່ມຕົ້ນຈາກລະດັບປະຖົມ, ເຊັ່ນດຽວກັນກັບການຝຶກອົບຮົມ ແລະ ມີການຕິດຕາມຄູ (Phongluxa et al., 2020). ການປັບປຸງການເຜີຍແຜ່ຂໍ້ມູນຂ່າວສານເປັນປົກກະຕິແມ່ນມີຄວາມຈຳເປັນໂດຍສະເພາະໃນພາສາທ້ອງຖິ່ນ ແລະ ນຳໃຊ້ສື່ທີ່ສາມາດເຂົ້າເຖິງໄດ້ໂດຍສະເພາະກຸ່ມເປົ້າໝາຍ ແລະ ຊຸກຍູ້ການມີສ່ວນຮ່ວມຂອງໄວໜຸ່ມ.

# ກ່ອງຂໍ້ຄວາມ 4.2: ການສ້າງຄວາມອາດສາມາດໃຫ້ການບໍລິການດ້ານສຸຂະພາບຈິດໃນໄລຍະທີ່ເກີດໂລກລະບາດໃຫ້ເຂັ້ມແຂງຂຶ້ນ

ໃນປີ 2021, ໄວໜຸ່ມ ແລະ ເຍົາວະຊົນໃນ ສປປ ລາວ ຫຼາຍກວ່າ 120.000 ຄົນ ໄດ້ຮັບການໃຫ້ຄຳປຶກສາຜ່ານໂທລະສັບສາຍດ່ວນ, ກິດຈະກຳເຜີຍແຜ່ ແລະ ທາງອິນເຕີເນັດ. ຄວາມຕ້ອງການທີ່ປຶກສາ ແລະ ອາສາສະໝັກໄວໜຸ່ມທີ່ເບິ່ງແຍງຊ່ອງທາງເຫຼົ່ານີ້ຍັງສືບຕໍ່ຢ່າງຫຼວງຫຼາຍ (UNFPA, 2022b). ລັດຖະບານໄດ້ໃຫ້ບຸລິມະສິດໃຫ້ແກ່ການບໍລິການດ້ານສຸຂະພາບຈິດໃນທັນທີໃນໄລຍະທີ່ເກີດການແຜ່ຂອງໂລກລະບາດ, ດ້ວຍການສະໜັບສະໜູນຂອງອົງການຈັດຕັ້ງສາກົນ ແລະ ຜູ້ໃຫ້ທຶນ. ຕົວຢ່າງບາງສ່ວນມີດັ່ງລຸ່ມນີ້:

**ຄູ່ມືແນະນຳການສະໜັບສະໜູນສຸຂະພາບຈິດ ແລະ ຈິດຕະສັງຄົມແຫ່ງຊາດ:** ກະຊວງສາທາລະນະສຸກ,ໂດຍໄດ້ຮັບການສະໜັບສະໜູນຈາກອົງການອະນາໄມໂລກ, ໄດ້ພັດທະນາປຶ້ມແນະນຳການສະໜັບສະໜູນສຸຂະພາບຈິດ ແລະ ຈິດຕະສັງຄົມແຫ່ງຊາດ ເພື່ອແນໃສ່ປັບປຸງຄວາມອາດສາມາດດ້ານສຸຂະພາບຈິດ ແລະ ການສ້າງຈິດສຳນຶກໃນຂອບເຂດທົ່ວປະເທດ. ຄູ່ມືແນະນຳເຫຼົ່ານີ້ໄດ້ສ້າງເປັນພື້ນຖານໃຫ້ແກ່ຊຸດຝຶກອົບຮົມຫຼາຍຊຸດ, ລວມທັງເລື່ອງຂອງໄວໜຸ່ມ ແລະ ສຸຂະພາບຈິດໃນລະຫວ່າງການແຜ່ລະບາດ.

**ສາຍດ່ວນເພື່ອຊ່ວຍເຫຼືອດ້ານສູຂະພາບຈິດ ແລະ ຈິດຕະສັງຄົມຝຶກອົບຮົມຮ່ວມກັບ UNFPA:** ຢູ່ນະຄອນຫຼວງວຽງຈັນ, UNFPA ເຮັດວຽກຢ່າງໃກ້ຊິດກັບສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສູນກາງສະຫະພັນແມ່ຍິງລາວ ແລະ ສູນໄວໜຸ່ມນະຄອນຫຼວງວຽງຈັນ ເພື່ອສ້າງຕັ້ງສາຍດ່ວນທາງໂທລະສັບສຳລັບຊ່ວຍເຫຼືອທາງດ້ານຈິດໃຈ. ການແຊກແຊງເພື່ອຊ່ວຍເຫຼືອເພີ່ມເຕີມລວມມີແອັບ Noi-Yakhoo ສຳລັບໄວໜຸ່ມ, ການເຜີຍແຜ່ປູກຈິດສຳນຶກເລື່ອງຄວາມສ່ຽງ ແລະ ການບໍລິການສະຫນັບສະຫນູນທີ່ເຂັ້ມແຂງຍິ່ງຂຶ້ນສຳລັບຄວາມຮຸນແຮງທາງເພດ. ສ່ວນໜຶ່ງຂອງຄວາມພະຍາຍາມດັ່ງກ່າວ, ຜູ້ເຂົ້າຮ່ວມ 40 ຄົນຈາກ 3 ອົງການຈັດຕັ້ງ ແລະ ອາສາສະໝັກໄວໜຸ່ມຈາກມະຫາວິທະຍາໄລແຫ່ງຊາດລາວໄດ້ຮຽນຮູ້ເພື່ອທີ່ຈະຕອບສະໜອງຄວາມຕ້ອງການດ້ານສຸຂະພາບຈິດຂອງໄວໜຸ່ມໃຫ້ດີຂຶ້ນ. ຫຼັກສູດການຝຶກອົບຮົມວິຊາຊີບ ແລະ ອຸປະກອນການສະໜັບສະໜູນດ້ານສຸຂະພາບຈິດ ແລະ ຈິດຕະສັງຄົມໄດ້ຮັບການພັດທະນາໂດຍການຮ່ວມມືກັບກະຊວງສາທາລະນະສຸກ ແລະ ອົງການອະນາໄມໂລກ.

**ການຝຶກອົບຮົມການດູແລສຸຂະພາບຈິດ ແລະ ການຊ່ວຍເຫຼືອດ້ານຈິດຕະສັງຄົມທີ່ບ້ານໃນໄລຍະການລະບາດຂອງໂຄວິດ-19 ກັບອົງການອະນາໄມໂລກ:** ໄດ້ພັດທະນາສີມືແຮງງານໃຫ້ບຸກຄະລາກອນ 60 ຄົນຈາກຫ້ອງການສາທາລະນະສຸກຂັ້ນເມືອງໃນແຂວງວຽງຈັນ, ຕົ້ນຕໍແມ່ນຢູ່ໃນໜ່ວຍງານສົ່ງເສີມສຸຂະພາບ.

**ການຝຶກອົບຮົມການຊ່ວຍເຫຼືອດ້ານສຸຂະພາບຈິດ ແລະ ຈິດຕະສັງຄົມໃຫ້ແກ່ຄູຝຶກສູນກາງ:** ໂດຍມີຜູ້ເຂົ້າຮ່ວມ 30 ຄົນຈາກໂຮງໝໍສູນກາງ, ກົມປິ່ນປົວ ແລະ ຟື້ນຟູສຸຂະພາບ, ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ ແລະ ພະນັກງານຊຸມຊົນຈາກອົງການຈັດຕັ້ງມະຫາຊົນ ລວມທັງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສູນກາງສະຫະພັນແມ່ຍິງລາວ.

**ການຝຶກອົບຮົມຍ່ອຍລະດັບຊາດ ດ້ານການສະຫນັບສະຫນູນສຸຂະພາບຈິດ ແລະ ຈິດຕະສັງຄົມ:** ເພື່ອສ້າງຄວາມສາມາດໃຫ້ແກ່ບຸກຄະລາກອນ 19 ຄົນ ຈາກໜ່ວຍງານທີ່ເຮັດວຽກດ້ານການປິ່ນປົວ ແລະ ຟື້ນຟູສຸຂະພາບໃນຂັ້ນແຂວງ, ສົ່ງເສີມສຸຂະພາບ ແລະ ສຶກສາດ້ານສຸຂະພາບ ທົ່ວສູນກາງຊາວໜຸ່ມ ແລະ ສູນກາງສະຫະພັນແມ່ຍິງລາວ, ໜ່ວຍງານແຮງງານ ແລະ ສະຫວັດດີການສັງຄົມ ແລະ ແນວລາວສ້າງຊາດ ແຂວງ ອັດຕະປື, ຈຳປາສັກ ແລະ ສະຫວັນນະເຂດ.

ແຫຼ່ງຂໍ້ມູນ: UNFPA, 2022a.





## ຮູບ 4.2: ການແຕ່ງງານກ່ອນອາຍຸ 15 ປີ ແລະ ອາຍຸ 18 ປີ

ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ (LSB), 2018.




**ການແຕ່ງງານໄວອັນຄວນ ແລະ ການຖືພາໃນໄວໜຸ່ມ:** ໃນ ສປປ ລາວ, ປະມານ 1 ໃນ 4 ຂອງໄວໜຸ່ມຍິງທີ່ມີ ອາຍຸ 15-19 ປີໄດ້ແຕ່ງງານແລ້ວ (UNFPA, 2021a), ໂດຍມີອັດຕາທີ່ສູງໃນເຂດຊົນນະບົດ (ຮູບ 4.2). ປະເທດດັ່ງກ່າວມີອັດຕາການຖືພາໃນໄວໜຸ່ມທີ່ສູງທີ່ສຸດໃນອາຊີຕາເວັນອອກສຽງໃຕ້, ຄາດຄະເນວ່າມີການເກີດລູກ 64,5 ຄົນຕໍ່ໄວໜຸ່ມຍິງ 1,000 ຄົນໃນຊ່ວງອາຍຸ 15-19 ປີ (ຕົວຊີ້ວັດການພັດທະນາໂລກ, 2022). ການສຳຫຼວດຕົວຊີ້ວັດສັງຄົມລາວຄັ້ງທີ II ລາຍງານອັດຕາການເກີດລູກທີ່ສູງຂຶ້ນໂດຍສະເລ່ຍ 83 ຄົນຕໍ່ໄວໜຸ່ມຍິງ 1.000 ຄົນໃນຊ່ວງອາຍຸ 15-19 ປີ, ໂດຍມີຄວາມແຕກຕ່າງກັນຢ່າງຊັດເຈນລະຫວ່າງຊົນນະບົດ ແລະ ຕົວເມືອງ, ເຊິ່ງມີ 136 ຄົນໃນຊົນນະບົດ ແລະ 42 ຄົນໃນຕົວເມືອງທີ່ເກີດລູກໃນໄວໜຸ່ມຍິງ 1.000 ຄົນ, ຕາມລຳດັບ. ອັດຕາການເກີດແມ່ນສູງເປັນພິເສດໂດຍສະເພາະໃນບັນດາປະຊາກອນທີ່ທຸກຍາກ ແລະ ບັນດາຊົນເຜົ່າຢູ່ເຂດຫ່າງໄກສອກຫຼີກ, ເຊິ່ງບາງເທື່ອການຖືພາຂອງໄວໜຸ່ມໄດ້ຖືກເອີ້ນວ່າເປັນ “ວິຖີຊີວິດ”. (UNFPA, 2013, ເບິ່ງຮູບ 4.3).

ຮູບທີ 4.2

ການແຕ່ງງານໄວ ແລະ ການຖືພາມັກຈະສົ່ງຜົນທາງລົບຕໍ່ໄວໜຸ່ມ, ໂດຍສະເພາະໄວໜຸ່ມ ແລະ ເຍົາວະຊົນ. ແມ່ອາຍຸນ້ອຍ ແລະ ລູກນ້ອຍຂອງພວກເຂົາປະເຊີນກັບຄວາມສ່ຽງສູງສຸດທີ່ຈະເກີດອາການສົນໃນລະຫວ່າງການຖືພາ ແລະ ການເກີດລູກ, ຍ້ອນວ່າການຖືພາໃນໄວໜຸ່ມ ແມ່ນກ່ຽວພັນກັບອັດຕານ້ຳຫນັກທີ່ຕ່ຳຂອງເດັກໃນຕອນເກີດ, ການເກີດລູກກ່ອນກຳນົດ, ພະຍາດທາງລະບົບຫາຍໃຈ ແລະ ການຕາຍຂອງເດັກ (Azevedo et al., 2015). ອາການແຊກຊ້ອນອື່ນໆປະກອບມີ ອັດຕາການເກີດພາວະຄວາມດັນເລືອດສູງໃນໄລຍະການຖືພາ, ພະຍາດເລືອດຈາງ, ພະຍາດເບົາຫວານໃນໄລຍະຖືພາ, ຄວາມເຈັບປ່ວຍ ແລະ ອາການແຊກຊ້ອນໃນລະຫວ່າງການເກີດຫຼາຍກວ່າເມື່ອທຽບໃສ່ກັບແມ່ຍິງທີ່ມີອາຍຸສູງກວ່າ (Azevedo et al., 2015; Leftwich ແລະ Alves, 2017). ເຍົາວະຊົນທີ່ມີອາຍຸ 10-19 ປີທີ່ເກີດລູກມີຄວາມສ່ຽງສູງຕໍ່ການເສຍຊີວິດເມື່ອທຽບກັບແມ່ທີ່ມີອາຍຸສູງ (ອົງການອະນາໄມໂລກ, 2019), ອັດຕາການຖືພາໃນໄວໜຸ່ມຢູ່ໃນ ສປປ ລາວ ສູງຫຼາຍ, ຊ່ວຍອະທິບາຍວ່າເປັນຫຍັງປະເທດລາວຈຶ່ງຍັງມີອັດຕາການຕາຍຂອງແມ່ສູງທີ່ສຸດໃນອາຊີຕາເວັນອອກສຽງໃຕ້, ເຖິງວ່າຈະມີຄວາມຄືບໜ້າຢ່າງຫຼວງຫຼາຍ. (Sychareun et al., 2018; UNFPA, 2018). ບັນຫາອີກຢ່າງໜຶ່ງແມ່ນເດັກນ້ອຍມີທ່າອ່ຽງທີ່ຈະມີລວງສູງຕ່ຳກວ່າມາດຕະຖານ ຫາກເກີດຈາກເດັກຍິງ, ຈາກແມ່ທີ່ຮຽນບໍ່ຈົບຊັ້ນປະຖົມ ແລະ ເປັນແມ່ທີ່ມີລວງສູງບໍ່ໄດ້ຕາມມາດຕະຖານເອງ. ໂອກາດທີ່ເດັກຈະມີລວງສູງບໍ່ໄດ້ຕາມມາດຕະຖານແມ່ນສູງກວ່າ 10 ສ່ວນຮ້ອຍໃນບັນດາເດັກທີ່ເກີດຈາກແມ່ອາຍຸຕ່ຳກວ່າ 17 ປີ. (ທະນາຄານໂລກ, 2016).

ຮູບທີ 4.3 / ຮູບທີ 4.4

ຕະຫຼອດຊີວິດ. ອັດຕາການອອກໂຮງຮຽນຂອງເດັກຍິງອາຍຸ 15-17 ປີ ແມ່ນ 41,8 ສ່ວນຮ້ອຍໃນປີ 2017 (UNFPA, 2021b). ຄວາມແຕກຕ່າງໃນທັດສະນະຄະຕິຕໍ່ການຖືພາໃນໄວໜຸ່ມ ແລະ ການແຕ່ງງານໄວແມ່ນມີຄວາມໂດດເດັ່ນຍິ່ງຂຶ້ນ ເມື່ອພິຈາລະນາຈາກຊົນເຜົ່າ, ລະດັບຄວາມຮັ່ງມີ, ທີ່ຕັ້ງພູມສາດ ແລະ ລະດັບການສຶກສາຂອງໄວໜຸ່ມຍິງ, ຊີ້ໃຫ້ເຫັນວ່າຄວາມບໍ່ ສະເໝີພາບທີ່ມີຢູ່ກ່ອນແລ້ວ ແລະ ການກີດກັ້ນທາງສັງຄົມມີບົດບາດສຳຄັນໃນການກຳນົດຜົນໄດ້ຮັບດ້ານສຸຂະພາບຂອງແມ່. ສອງແຂວງພາກເໜືອ ຄື ບໍ່ແກ້ວ ແລະ ຫຼວງນ້ຳທາ ມີອັດຕາການເກີດລູກຂອງໄວໜຸ່ມສູງເປັນພິເສດ (Sychareun et al, 2018). ທັງສອງແຂວງແມ່ນສ່ວນໃຫຍ່ເປັນເຂດຊົນນະບົດ ແລະ ມີລັກສະນະທີ່ມີຄວາມຫຼາກຫຼາຍຂອງຊົນເຜົ່າສູງ, ສະພາບເສດຖະກິດ-ສັງຄົມທີ່ຂ້ອນຂ້າງທຸກຍາກ, ການເຂົ້າເຖິງຂໍ້ມູນການດູແລສຸຂະພາບຂອງແມ່ທີ່ເໝາະສົມ ແລະ ລາຄາຍ່ອມເຍົາຍັງມີຈຳກັດ. ໃນການໃຫ້ສຳພາດ, ທ່ານ ດຣ ຄຳແພງ ພົງລູຊາ, ຮອງຜູ້ອຳນວຍການສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນລາວ ກ່າວວ່າ: “ມີຄວາມຈຳເປັນຕ້ອງມີການ

## ຮູບ 4.3: ສັດສ່ວນຂອງແມ່ຍິງອາຍຸ 15-24 ປີ ທີ່ມີລູກຢ່າງໜ້ອຍ 1 ຄົນກ່ອນອາຍຸ 18 ປີ ແຍກຕາມພາກພື້ນ, ລະດັບການສຶກສາ, ກຸ່ມຊົນເຜົ່າຂອງຫົວໜ້າຄອບຄົວ ແລະ ລະດັບຄວາມຮັ່ງມີ.

ແຫຼ່ງຂໍ້ມູນ: LSB, 2018.




ຕອບສະໜອງໃນຫຼາຍມິຕິຕໍ່ບັນຫາສັງຄົມ ແລະ ສຸຂະພາບທີ່ ສປປ ລາວ ກໍາລັງປະເຊີນ, ເຊັ່ນການແຕ່ງງານໄວ ແລະ ການຖືພາ, ບໍ່ແມ່ນມາຈາກຂະແໜງການສາທາລະນະສຸກພຽງຢ່າງດຽວ, ແຕ່ມາຈາກພາກສ່ວນກ່ຽວຂ້ອງທັງໝົດ.”

ການສໍາຫຼວດຕົວຊີ້ວັດທາງສັງຄົມລາວປີ 2017 ຄັ້ງທີ II ຊີ້ໃຫ້ເຫັນວ່າ ລະດັບສູງສຸດຂອງຄວາມຕ້ອງການການຄຸມກໍາເນີດແບບທັນສະໄໝແມ່ນຍັງບໍ່ທັນໄດ້ຮັບການຕອບສະໜອງໃນກຸ່ມໄວໜຸ່ມຍິງ ແລະ ຍັງບໍ່ທັນແຕ່ງງານ. ໃນຂະນະທີ່ຄວາມຕ້ອງການທີ່ບໍ່ໄດ້ຮັບການຕອບສະໜອງແມ່ນ 14,3 ສ່ວນຮ້ອຍ ສໍາລັບແມ່ຍິງທີ່ແຕ່ງງານໃນອາຍຸ 15-49 ປີ, ແຕ່ຈະສູງເຖິງ 75,4 ສ່ວນຮ້ອຍ ສໍາລັບແມ່ຍິງທີ່ບໍ່ໄດ້ແຕ່ງງານໃນອາຍຸ 15-19 ປີ (UN-FPA, 2022a). ເຖິງວ່າຈະມີຂໍ້ມູນນີ້, ແຕ່ມີການຄົ້ນຄວ້າພຽງຈໍານວນໜ້ອຍທີ່ໄດ້ສຸມໃສ່ການເຂົ້າເຖິງການບໍລິການຂອງແມ່ໄວລຸ້ນໃນດ້ານສຸຂະພາບທາງເພດ, ສຸຂະພາບຈະເລີນພັນ ແລະການບໍລິການສຸຂະພາບແມ່, ການຄົ້ນຄວ້າຄວາມຕ້ອງການຂອງກຸ່ມຊົນເຜົ່າຕ່າງໆຢູ່ໃນເຂດຊົນນະບົດຍິ່ງມີຈໍານວນໜ້ອຍກວ່ານັ້ນ (Sychareun et al., 2018). ຂໍ້ມູນໂດຍລະອຽດແມ່ນມີຄວາມສໍາຄັນເປັນພິເສດເພື່ອເຂົ້າໃຈຄວາມແຕກຕ່າງທາງວັດທະນະທໍາສັງຄົມໃນການແຕ່ງງານ ແລະ ການເກີດລູກ ແລະ ການແຊກແຊງທີ່ມີປະສິດທິຜົນທີ່ສຸດໃນການເລື່ອນການແຕ່ງງານ ແລະ ການເກີດລູກ.

ໄວໜຸ່ມຍິງສ່ວນໃຫຍ່ມີທາງເລືອກ ຫຼື ອໍານາດໃນການຕັດສິນໃຈພຽງເລັກນ້ອຍກ່ຽວກັບການແຕ່ງງານກ່ອນໄວອັນຄວນ ຫຼື ແມ່ນແຕ່ເລື່ອງສຸຂະພາບຈະເລີນພັນຂອງພວກເຂົາເອງ, ໂດຍອາຍຸ, ການສຶກສາ, ເພດ, ສາດສະໜາ, ສະຖານະວຽກເຮັດງານທໍາ ແລະ ສະຖານະການສົມລົດລ້ວນແຕ່ເປັນຕົວຊີ້ວັດທີ່ສໍາຄັນ. ຈາກຜົນຂອງການສຶກສາໜຶ່ງກ່ຽວກັບຄວາມຮູ້, ທັດສະນະຄະຕິ ແລະ ການປະຕິບັດຂອງໄວໜຸ່ມໃນແຂວງບໍ່ແກ້ວພົບວ່າ: ໃນຂະນະທີ່ຄວາມສໍາພັນໃນທາງບວກລະຫວ່າງຄວາມຮູ້ ແລະ ຄວາມເປັນອິດສະຫຼະພາບເກີດມີຢ່າງໜັກແໜ້ນ, ແຕ່ກໍມີຄວາມສໍາພັນທີ່ຍັງອ່ອນແອ ເຊິ່ງແມ່ນລະຫວ່າງອິດສະຫຼະໃນກິດຈະກໍາທາງເພດກັບການນໍາໃຊ້ການຄຸມກໍາເນີດ ແລະ ລະຫວ່າງຄວາມຮູ້ກັບການນໍາໃຊ້ແນວຄວາມຄິດ. ການສຶກສາໄດ້ຊີ້ໃຫ້ເຫັນວ່າ, ໃນແຕ່ລະປີທີ່ມີອາຍຸເພີ່ມຂຶ້ນ, ໄວໜຸ່ມມີທ່າອຽງໃຊ້ການຄຸມກໍາເນີດຫຼາຍກວ່າ 1,9 ເທົ່າ (Phongluxa et al., 2020).

ເມື່ອນໍາມາລວມກັນແລ້ວ ອັດຕາການແຕ່ງງານກ່ອນໄວອັນຄວນ, ການຖືພາ,ອັດຕາການຕາຍຂອງແມ່ ແລະ ການອອກໂຮງຮຽນຂອງໄວໜຸ່ມຍິງ, ໂດຍສະເພາະໃນກຸ່ມຊົນເຜົ່າຕ່າງໆ, ເຂດຊົນນະບົດທີ່ດ້ອຍໂອກາດທາງດ້ານເສດຖະກິດ, ຊີ້ໃຫ້ເຫັນເຖິງຄວາມຈໍາເປັນໃນການເຜີຍແຜ່ຂໍ້ມູນຂ່າວສານ, ການບໍລິການສຸຂະພາບທາງເພດ ແລະ ຈະເລີນພັນທີ່ມີປະສິດທິພາບ ແລະ ຄວາມສ້າງສັນຫຼາຍຂຶ້ນ. ຄວາມຮູ້ທີ່ບໍ່ດີກ່ຽວກັບວິທີຄຸມກໍາເນີດໃນຫຼາຍຂົງເຂດລວມເຂົ້າກັບຄວາມເຂົ້າໃຈຜິດກ່ຽວກັບການຄຸມກໍາເນີດ ແລະ ຄຸນນະພາບການສອນຕໍ່າ. ຂໍ້ມູນ ແລະ ການບໍລິການດ້ານສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນທີ່ດີຂຶ້ນ ຄວນພິຈາລະນາເຖິງເພດທີ່ຫຼາກຫຼາຍ, ບັນດາມາດຖານດ້ານວັດທະນະທໍາສັງຄົມໃນທົ່ວປະເທດ ແລະ ຮັບປະກັນວ່າໂຄງການການສຶກສາແມ່ນການຫັນປ່ຽນບົດບາດຍິງຊາຍ ແລະ ໄວໜຸ່ມ.

ກ່ອງເນື້ອໃນ 4.3

**ພຶດຕິກໍາທາງເພດທີ່ມີຄວາມສ່ຽງ:** ໄວໜຸ່ມຈໍານວນຫຼາຍໃນ ສປປ ລາວ ເລີ່ມສໍາຫຼວດເລື່ອງເພດຂອງຕົນໃນເຍົາວະຊົນ ແລະ ໄວຜູ້ໃຫຍ່ຕອນຕົ້ນ. ໃນຈໍານວນຊາຍໜຸ່ມທີ່ມີອາຍຸ 15-19 ປີ, 21,8 ສ່ວນຮ້ອຍ ໄດ້ລາຍງານວ່າມີເພດສໍາພັນຄືກັນກັບ 75,6 ສ່ວນຮ້ອຍ ຂອງຊາຍໜຸ່ມອາຍຸ 20-24 ປີ. ໃນຈໍານວນເດັກຍິງໄວຈະເລີນພັນທີ່ມີອາຍຸ 15-19 ປີ, 29,7 ສ່ວນຮ້ອຍ ໄດ້ລາຍງານວ່າມີເພດສໍາພັນຄືກັນກັບ 74,8 ສ່ວນຮ້ອຍ ຂອງຍິງໜຸ່ມອາຍຸ 20-24 ປີ. ຊາຍໜຸ່ມມີແນວໂນ້ມທີ່ຈະລາຍງານວ່າມີເພດສໍາພັນກັບຄູ່ນອນຫຼາຍກວ່າຫນຶ່ງຄົນໃນ 12 ເດືອນທີ່ຜ່ານມາ, ຢູ່ທີ່ 5,6 ສ່ວນຮ້ອຍ ເມື່ອທຽບກັບ 0,6 ສ່ວນຮ້ອຍ ຂອງໄວໜຸ່ມຍິງ. ໄວໜຸ່ມເພດຊາຍຈໍານວນຫຼາຍລາຍງານວ່າໃຊ້ຖົງຢາງອະນາໄມຄັ້ງສຸດທ້າຍທີ່ມີເພດສໍາພັນ, ຢູ່ທີ່ 46,3 ສ່ວນຮ້ອຍ ທຽບກັບ 30,7 ສ່ວນຮ້ອຍຂອງແມ່ໄວໜຸ່ມຍິງ. ພຶດຕິກໍາທີ່ມີຄວາມສ່ຽງ ເຊັ່ນ: ການໃຊ້ຖົງຢາງອະນາໄມຕໍ່າ ແລະ ມີຄູ່ຮ່ວມເພດຫຼາຍຄົນ, ແມ່ນເປັນເຫດການທີ່ແຜ່ຫຼາຍໃນໄວໜຸ່ມ, ໂດຍສະເພາະແມ່ນໄວໜຸ່ມທີ່ມາຈາກຊົນເຜົ່າກຸ່ມນ້ອຍບາງຊົນເຜົ່າເຊັ່ນ ອາຄາ, ສ່ວນຫນຶ່ງແມ່ນຍ້ອນຄວາມເຊື່ອຖືວັດທະນະທໍາທີ່ກ່ຽວຂ້ອງກັບຮີດຄອງປະເພນີກ່ອນມີລູກ. (ຄຊປປລ ແລະ UNFPA, 2014).

ການໃຊ້ສານເສບຕິດມີຜົນເຮັດໃຫ້ທ່າອ່ຽງເຫຼົ່ານີ້ຮ້າຍແຮງຂຶ້ນ. ເຫຼົ້າ ແລະ ຢາກະຕຸ້ນປະເພດແອມເຟຕາມິນ ແມ່ນມີຄວາມກ່ຽວຂ້ອງກັບພຶດຕິກໍາທີ່ມີຄວາມສ່ຽງສູງເຊິ່ງລວມມີການບໍ່ໃຊ້ຖົງຢາງອະນາໄມ ຫຼື ໃຊ້ຖົງຢາງອະນາໄມທີ່ບໍ່ສະໝໍ່າສະເໝີ ແລະ ຄວາມຮຸນແຮງທາງເພດ, ເຊິ່ງສິ່ງຜົນໃຫ້ເກີດພະຍາດຕິດຕໍ່ທາງເພດສໍາພັນ ແລະ ການຖືພາໂດຍບໍ່ຕັ້ງໃຈສູງຂຶ້ນ. ການສຶກສາຂອງໄວໜຸ່ມໃນຕົວເມືອງໃນ ສປປ ລາວ ພົບວ່າ 22 ສ່ວນຮ້ອຍ ຂອງແມ່ຍິງໜຸ່ມ ອາຍຸ 15-24 ປີ ເຄີຍຖືກບັງຄັບໃຫ້ມີເພດສໍາພັນຄັ້ງທໍາອິດໂດຍແຟນຂອງພວກເຂົາ (ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ, ສະຖາບັນເບີເນັດ ແລະ UNFPA, 2008). ການບັງຄັບມີເພດສໍາພັນຄັ້ງທໍາອິດເປັນເລື່ອງປົກກະຕິຂອງໄວໜຸ່ມທີ່ລາຍງານການມີເພດສໍາພັນກ່ອນອາຍຸ 15 ປີ, ໂດຍມີຫຼາຍຄົນຂາດຄວາມຮູ້ ແລະ ທັກສະໃນການເຈລະຈາການມີເພດສໍາພັນດ້ວຍຄວາມຍິນຍອມ, ເຮັດໃຫ້ພວກເຂົາມີຄວາມສ່ຽງ ໂດຍສະເພາະແມ່ນຖືກຂູດຮີດ ແລະ ລ່ວງລະເມີດ. (ອີງການອະນາໄມໂລກ, 2011).

## ຮູບ 4.4: ອັດຕາການເກີດລູກຂອງໄວຈະເລີນພັນໃນອາຊີຕາເວັນອອກສຽງໃຕ້ຕໍ່ 1.000 ຄົນ ຂອງຜູ້ທີ່ມີອາຍຸ 15-19 ປີ ໃນປີ 2019

ແຫຼ່ງຂໍ້ມູນ: ຕົວຊີ້ວັດການພັດທະນາໂລກ.

ໝາຍເຫດ:ອັດຕາການເກີດລູກໃນເຍົາວະຊົນໃນ ສປປ ລາວ ທີ່ລາຍງານຢູ່ໃນຕົວຊີ້ວັດການພັດທະນາໂລກ (64,5 ຕໍ່ 1.000 ການເກີດ) ແຕກຕ່າງຈາກທີ່ລາຍງານຢູ່ໃນ ການສໍາຫຼວດຕົວຊີ້ວັດທາງສັງຄົມລາວ II (83 ຕໍ່ 1.000 ການເກີດ).






©UNFPA Laos

## ກ່ອງຂໍ້ຄວາມ 4.3: ສູນໄວໜຸ່ມເພື່ອສຸຂະພາບ ແລະ ການພັດທະນາ ນະຄອນຫຼວງວຽງຈັນ

ສະຫະພັນແມ່ຍິງລາວໄດ້ສ້າງຕັ້ງສູນໄວໜຸ່ມວຽງຈັນ ເພື່ອສຸຂະພາບ ແລະ ການພັດທະນາ  ໃນປີ 2001. ພະນັກງານການແພດທີ່ເຮັດວຽກຢູ່ສູນດັ່ງກ່າວ ໃຫ້ຄໍາປຶກສາທີ່ເປັນຄວາມລັບກ່ຽວກັບບັນຫາສຸຂະພາບຈະເລີນພັນແກ່ໄວໜຸ່ມຢູ່ຄລີນິກ ແລະ ຜ່ານສາຍດ່ວນ. ນອກນັ້ນ ມີການອອກເຄື່ອນໄຫວກິດຈະກໍາໃນຊຸມຊົນ, ເຊິ່ງໄດ້ສະໜອງການຝຶກອົບຮົມດ້ານສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ທັກສະຊີວິດໃຫ້ແກ່ໜ່ວຍງານຕ່າງໆ, ລວມທັງພະນັກງານໂຮງງານຕັດຫຍິບ, ນັກສຶກສາຢູ່ວິທະຍາໄລ, ມະຫາວິທະຍາໄລ ແລະ ສະຖາບັນການສຶກສາອື່ນໆ. ການປະຊຸມໄດ້ໃຫ້ຄໍາແນະນໍາກ່ຽວກັບການປ້ອງກັນການຖືພາ, ສະໜອງການບໍລິການສຸຂະພາບຈິດ ແລະ ຈິດຕະສັງຄົມໃຫ້ແກ່ໄວໜຸ່ມ ແລະ ເຍົາວະຊົນທີ່ມີອາຍຸ 10-24 ປີ. ເຫດຜົນສ່ວນໃຫຍ່ທີ່ໄວໜຸ່ມຈະໄປຢ້ຽມຢາມ ຫຼື ໂທຫາສູນແມ່ນເພື່ອປຶກສາແພດກ່ຽວກັບການຖືພາທີ່ບໍ່ຄາດຄິດ ຫຼື ບໍ່ຕ້ອງການ, ບັນຫາທີ່ກ່ຽວຂ້ອງກັບຢາເສບຕິດ ແລະ ການຕິດເຊື້ອທາງເພດສໍາພັນ.

ຈາກການແຜ່ລະບາດຂອງພະຍາດ ໂຄວິດ-19, ໃນຊ່ວງທໍາອິດ ສູນດັ່ງກ່າວໄດ້ຮັບການໂທເຂົ້າ ແລະ ຂໍ້ຄວາມຈາກໄວໜຸ່ມຢ່າງຫຼວງຫຼາຍ , ທັງຜ່ານສາຍດ່ວນ ແລະ ຂໍ້ຄວາມທາງເຟສບຸກ, ໂດຍມີການສອບຖາມຫຼາຍຄັ້ງກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ລວມທັງພະຍາດໂຄວິດ - 19. ໃນລະຫວ່າງການປິດເມືອງ, ຈໍານວນສາຍດ່ວນເພີ່ມຂຶ້ນ 28 ສ່ວນຮ້ອຍ. ໄວໜຸ່ມ ແລະ ເຍົາວະຊົນຫຼາຍກວ່າ 50.000 ຄົນໄດ້ເຂົ້າເຖິງຂໍ້ມູນກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ການປ້ອງກັນ ໂຄວິດ - 19 ໃນເດືອນເມສາ 2021. ອີກ 16.300 ຄົນໄດ້ໃຊ້ບໍລິການ ຄລີນິກຂອງສູນຕັ້ງແຕ່ເດືອນມັງກອນ ຫາ ເດືອນເມສາ 2021.

ແຫຼ່ງຂໍ້ມູນ: ຫຼັງສືພິມ Vientiane Times, 2016; ອີງການ UNFPA, 2021b.



©UNFPA Laos

ອັດຕາການປະພຶດທີ່ມີຄວາມສ່ຽງ ແລະ ບາງຄັ້ງການລ່ວງລະເມີດແມ່ນສູງກວ່າໃນບັນດາປະຊາກອນບາງກຸ່ມ, ລວມທັງ ຄົນຂ້າມເພດ (transgender). ໃນການສຶກສາຄົນຂ້າມເພດຊາຍຫາຍິງໃນປີ 2010 ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງສະຫວັນນະເຂດ, 84 ສ່ວນຮ້ອຍ ແມ່ນອາຍຸ 15-24 ປີ, 47 ສ່ວນຮ້ອຍ ລາຍງານວ່າມີຄູ່ຮ່ວມເພດຫຼາຍກວ່າໜຶ່ງຄົນໃນຮອບ 12 ເດືອນທີ່ຜ່ານມາ, ການໃຊ້ຖົງຢາງອະນາໄມທີ່ຢ່າງສະໝໍ່າສະເໝີລະຫວ່າງມີການຮ່ວມເພດທາງຮູທະວານ, ລະຫວ່າງ 55 ສ່ວນຮ້ອຍ ກັບຄູ່ຮ່ວມເພດປົກກະຕິ ແລະ 87 ສ່ວນຮ້ອຍ ກັບຄູ່ຮ່ວມເພດແບບຈ່າຍເງິນ. ໃນການສຶກສາອື່ນໃນປີ 2010 ກ່ຽວກັບ ກຸ່ມຊາຍຮັກຊາຍ ແລະ ຄູ່ຮ່ວມເພດຂອງພວກເຂົາໃນນະຄອນຫຼວງວຽງຈັນ, ເຊິ່ງອາຍຸສະເລ່ຍແມ່ນ 22 ປີ, ຜູ້ຕອບແບບສອບຖາມລາຍງານວ່າມີຄູ່ຮ່ວມເພດສະເລ່ຍ 8 ຄົນໃນປີກ່ອນ (ຄຊປປລ ແລະ UNFPA, 2014). ການສຶກສາຄັ້ງທີ 3 ໄດ້ອະທິບາຍເຖິງອັດຕາການມີຄູ່ນອນຫຼາຍຄົນໃນລະດັບສູງ, ການໃຊ້ຖົງຢາງອະນາໄມຕໍ່າ, ຄວາມຮຸນແຮງທາງເພດ, ການຕິດເຊື້ອທາງເພດສໍາພັນ ແລະ ການເອົາລູກອອກໃນກຸ່ມໄວໜຸ່ມຍິງທີ່ຂາຍບໍລິການທາງເພດ (Morineau et al, 2011). ການເຂົ້າເຖິງ ແລະ ການສະໜັບສະໜູນເພື່ອນໃນກຸ່ມໄວໜຸ່ມທີ່ຂາຍບໍລິການທາງເພດ, ຊາຍໜຸ່ມທີ່ມີເພດສໍາພັນກັບຜູ້ຊາຍ ແລະ ຄົນຂ້າມເພດ ສາມາດເພີ່ມຄວາມຮູ້, ຄວາມນັບຖືຕົນເອງ ແລະ ປັບປຸງການເຂົ້າເຖິງການບໍລິການຕ່າງໆ, ເຮັດໃຫ້ການນໍາໃຊ້ຖົງຢາງອະນາໄມຫຼາຍຂຶ້ນ (Middleton-Lee, 2012).




**ການສຶກສາຂອງໄວໜຸ່ມໃນຕົວເມືອງໃນ ສປປ ລາວ ພົບວ່າ 22 ສ່ວນຮ້ອຍ ຂອງແມ່ຍິງໜຸ່ມອາຍຸ 15-24 ປີ ເຄີຍຖືກບັງຄັບໃຫ້ມີເພດສໍາພັນຄັ້ງທໍາອິດໂດຍແຟນຂອງພວກເຂົາ**

ໃນຂະນະທີ່ອັດຕາການແຜ່ລະບາດຂອງເຊື້ອ HIV ໃນປະຊາກອນທົ່ວໄປຍັງຕໍ່າຢູ່ທີ່ 0,2 ສ່ວນຮ້ອຍ, ພຶດຕິກໍາທີ່ມີຄວາມສ່ຽງສູງຢ່າງຕໍ່ເນື່ອງຂອງໄວໜຸ່ມ, ປະກອບກັບການເຕີບໂຕທາງດ້ານເສດຖະກິດທີ່ໄວ, ລະດັບການເຄື່ອນຍ້າຍຖິ່ນຖານສູງ ແລະ ການປ່ຽນແປງທາງສັງຄົມ, ອາດຈະເຮັດໃຫ້ການຕິດເຊື້ອ HIV ເພີ່ມຂຶ້ນ. ອັດຕາສ່ວນຂອງການຕິດເຊື້ອທາງເພດສໍາພັນແມ່ນສູງ, ໂດຍສະເພາະໂລກໜອງໃນ ແລະ ໂລກໜອງໃນທຽມ (Thanavanh et al., 2013). ເຖິງວ່າຂໍ້ມູນກ່ຽວກັບການຕິດເຊື້ອທາງເພດສໍາພັນຈະຫາໄດ້ທົ່ວໄປຢູ່ໃນຕົວເມືອງ, ການຂາດຄວາມຮູ້ບອກກັບການເຂົ້າເຖິງຖົງຢາງອະນາໄມ ແລະ ການຄຸມກໍາເນີດທີ່ບໍ່ດີ ເຮັດໃຫ້ອັດຕາການຖືພາທີ່ບໍ່ໄດ້ວາງແຜນໄວ້ ແລະ ການຕິດເຊື້ອທາງເພດສໍາພັນຢູ່ໃນເຂດຊົນນະບົດສູງ. ເຊິ່ງມັນອາດເພີ່ມຄວາມໄວຂອງການແຜ່ລະບາດຂອງເຊື້ອ HIV. ຂະນະທີ່ການລະບາດຂອງເຊື້ອພະຍາດຝີດາດລີງ (Monkeypox) ໃນທົ່ວໂລກໃນໄລຍະມໍ່ໆມານີ້ຍັງບໍ່ທັນຮອດ ສປປ ລາວ, ມັນສາມາດເປັນໂອກາດໃນການດຶງດູດໄວໜຸ່ມ ແລະ ຂະຫຍາຍການໂຄສະນາການສຶກສາທີ່ແນໃສ່ໄວໜຸ່ມໂດຍເນັ້ນໜັກເຖິງຄວາມສໍາຄັນຂອງການໃຊ້ຖົງຢາງອະນາໄມ ແລະ ການຮ່ວມເພດທີ່ປອດໄພ.

ໃນບັນດາແມ່ຍິງຂາຍບໍລິການທາງເພດເມື່ອປຽບທຽບກັບປະຊາກອນທົ່ວໄປ, ອັດຕາການຕິດເຊື້ອ HIV ແມ່ນສູງກວ່າ, ລະຫວ່າງ 1 ຫາ 4 ສ່ວນຮ້ອຍ, ເຊັ່ນດຽວກັບອັດຕາການຕິດເຊື້ອທາງເພດສໍາພັນ, ຄາດວ່າຈະມີ 18 ສ່ວນຮ້ອຍ ສໍາລັບພະຍາດໜອງໃນ ແລະ 38 ສ່ວນຮ້ອຍ ຂອງພະຍາດໜອງໃນທຽມ (ລັດຖະບານແຫ່ງ ສປປ ລາວ, 2004). ອັດຕາການຕິດເຊື້ອທາງເພດສໍາພັນໃນກຸ່ມຄົນຂ້າມເພດ ຈາກຊາຍຫາຍິງກໍຍັງສູງເຊັ່ນກັນ; ໃນບັນດາຜູ້ຕອບແບບສອບຖາມຈໍານວນ 450 ຄົນ, 87 ສ່ວນຮ້ອຍ ແມ່ນມີອາຍຸຕໍ່າກວ່າ 25 ປີ, 12 ສ່ວນຮ້ອຍ ເປັນພະຍາດໜອງໃນ, 32 ສ່ວນຮ້ອຍ ເປັນພະຍາດໜອງໃນທຽມ ແລະ 6,2 ສ່ວນຮ້ອຍ ແມ່ນມີຕິດເຊື້ອຊື່ວ່າ neisseria gonorrhoea/chlamydia trachomatis ຮ່ວມກັນ. (Phimphachan et al, 2010).

ກ່ອງເນື້ອໃນ 4.4

**ການຈັດການສຸຂະອະນາໄມປະຈໍາເດືອນ:** ການເຂົ້າເຖິງນໍ້າ, ສຸຂາພິບານ ແລະ ສຸຂະອະນາໄມມີຜົນກະທົບຕໍ່ສຸຂະພາບຂອງ ໄວໜຸ່ມ, ລວມທັງການເຂົ້າເຖິງສິ່ງອໍານວຍຄວາມສະດວກທີ່ປອດໄພ ແລະ ເປັນສ່ວນຕົວສໍາລັບການຈັດການສຸຂະອະນາໄມປະຈໍາເດືອນ. ການຂັບເຄື່ອນເພື່ອປັບປຸງນໍ້າ,  ສຸຂາພິບານ ແລະ ສຸຂະອະນາໄມທີ່ເລີ່ມມາແຕ່ປີ 1990 ໄດ້ປັບປຸງສິ່ງອໍານວຍຄວາມສະດວກດ້ານສຸຂາພິບານໃນທົ່ວປະເທດ, ຢ່າງໜ້ອຍກໍຢູ່ໃນລະດັບຄົວເຮືອນ. ໃນປີ 2017, 73,8 ສ່ວນຮ້ອຍ ຂອງຄົວເຮືອນສາມາດເຂົ້າເຖິງອຸປະກອນການຄຸ້ມຄອງສຸຂະອະນາໄມປະຈໍາເດືອນ ພ້ອມທັງສະຖານທີ່ສ່ວນຕົວເພື່ອຊັກລ້າງ ແລະ ປ່ຽນເຄື່ອງນຸ່ງ (LSB, 2018). ການສໍາຫຼວດຕົວຊີ້ວັດສັງຄົມລາວຄັ້ງທີ II ໃນປີ 2017 ລາຍງານຕື່ມອີກວ່າ: 81 ສ່ວນຮ້ອຍຂອງແມ່ຍິງ ແລະ ເດັກຍິງລາວມີສະຖານທີ່ສ່ວນຕົວເພື່ອລ້າງຕົວ ແລະ ປ່ຽນຜ້າອະນາໄມປະຈໍາເດືອນເມື່ອເຂົາເຈົ້າຢູ່ເຮືອນ (LSB, 2018; ເບິ່ງຮູບ 4.5).

ຮູບທີ 4.5

ສິ່ງອໍານວຍຄວາມສະດວກ ແລະ ຂໍ້ມູນສໍາລັບເດັກຍິງໃນການຈັດການປະຈໍາເດືອນໃນໂຮງຮຽນ, ໂດຍສະເພາະໃນເຂດຊົນນະບົດຍັງບໍ່ພຽງພໍ. ໃນຈໍານວນເດັກຍິງ 1.366 ຄົນໃນຊັ້ນມໍ 4 ຫາ 7 ໃນໂຮງຮຽນມັດທະຍົມ 6 ແຫ່ງໃນ ແຂວງຫຼວງພະບາງ, 64,6 ສ່ວນຮ້ອຍ "ຕົກໃຈ ຫຼື ອາຍ" ເມື່ອມີປະຈໍາເດືອນ ແລະ 31,8 ສ່ວນຮ້ອຍ ໄດ້ຂາດໂຮງຮຽນໃນ 6 ເດືອນກ່ອນໜ້ານີ້ເນື່ອງ

## ຮູບ 4.5: ການຈັດການສຸຂະອະນາໄມປະຈຳເດືອນຢູ່ເຮືອນ.

ແຫຼ່ງຂໍ້ມູນ: LSB, 2018.




ຈາກມີປະຈຳເດືອນ (Inthaphatha et al., 2021). ການຄົ້ນພົບດັ່ງກ່າວແນະນຳວ່າຫ້ອງນ້ຳໃນໂຮງຮຽນຄວນຈະແຍກອອກຕາມເພດ ແລະ ຈັດໃຫ້ມີຖັງຂີ້ເຫຍື້ອ. ການສຶກສາກ່ຽວກັບປະຈຳເດືອນຄວນເລີ່ມຕົ້ນຈາກຊັ້ນປະຖົມໂດຍມີຄູສອນທີ່ຝຶກອົບຮົມກ່ຽວກັບສຸຂະພາບປະຈຳເດືອນ.

ຮູບທີ 4.5

### ຢາສູບ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການໃຊ້ສານເສບຕິດທີ່ຜິດກົດໝາຍ

ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການໃຊ້ສານເສບຕິດ ແມ່ນບູລິມະສິດດ້ານສຸຂະພາບອັນດັບໜຶ່ງຂອງໄວໜຸ່ມ; 66,3 ສ່ວນຮ້ອຍ ຂອງຜູ້ຕອບແບບສຳຫຼວດຂອງ UNDP ສຳລັບບົດລາຍງານນີ້ໄດ້ກ່າວເຖິງປະເດັນນີ້. ການສົນທະນາກຸ່ມສະເພາະໄດ້ເປີດເຜີຍວ່າ ໄວໜຸ່ມຈຳນວນຫຼາຍເຫັນວ່າ ມີການຂາຍ ແລະ ບໍລິໂພກສິ່ງເສບຕິດຢູ່ໂຮງຮຽນຂອງພວກເຂົາ, ໄວໜຸ່ມຍິງຮູ້ສຶກປອດໄພໜ້ອຍກວ່າ ເນື່ອງຈາກເຫັນວ່າ ການໃຊ້ສິ່ງເສບຕິດ, ອາຊະຍາກຳ ແລະ ຄວາມຮຸນແຮງມີຄວາມສຳພັນກັນ. ການໃຊ້ຢາສູບ ແລະ ການສູບຢາ: ການສູບຢາແມ່ນບັນຫາສາທາລະນະສຸກທີ່ສຳຄັນຂອງປະເທດທີ່ກຳລັງພັດທະນາຫຼາຍປະເທດ ລວມທັງ ສປປ ລາວ. ການສຳຫຼວດຢາສູບໃນຜູ້ໃຫຍ່ແຫ່ງຊາດລາວ ປີ 2015 ໂດຍມີກຸ່ມຕົວຢ່າງຕົວແທນທົ່ວປະເທດ 7.562 ຄົນ ອາຍຸ 15 ປີຂຶ້ນໄປ ພົບວ່າ 27,9 ສ່ວນຮ້ອຍ ຂອງຜູ້ໃຫຍ່ແມ່ນຜູ້ສູບຢາໃນປັດຈຸບັນ. ອັດຕາສ່ວນໃຫຍ່ຂອງເພດຊາຍແມ່ນ 50,8 ສ່ວນຮ້ອຍ, ເປັນ 7 ເທົ່າຂອງເພດຍິງທີ່ 7,1 ສ່ວນຮ້ອຍ. ອັດຕາການສູບຢາແມ່ນສູງທີ່ສຸດໃນເຂດຊົນນະບົດ ແລະ ໃນບັນດາຜູ້ທີ່ມີການສຶກສາໜ້ອຍ. ຜູ້ສູບຢາສ່ວນໃຫຍ່ເລີ່ມສູບຢາໃນໄວໜຸ່ມຕອນປາຍ ອາຍຸສະເລ່ຍແມ່ນ 17,4 ປີ ຫຼືໃນໄວເລີ່ມຕົ້ນເປັນຜູ້ໃຫຍ່.

**ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ:** ສປປ ລາວ ມີລະດັບການດື່ມເຄື່ອງດື່ມທີ່ມີທາດເຫຼົ້າສູງທີ່ສຸດທັງຍິງ ແລະ ຊາຍ ໃນ ອາຊີຕາເວັນອອກສຽງໃຕ້. ປະລິມານການດື່ມເຄື່ອງດື່ມທີ່ມີທາດເຫຼົ້າຕໍ່ຫົວຄົນຂອງຜູ້ມີອາຍຸ 15 ປີຂຶ້ນໄປແມ່ນ 10,4 ລິດໃນປີ 2016 (ອົງການອະນາໄມໂລກ, 2018a). ອັດຕາການດື່ມເຄື່ອງດື່ມທີ່ມີທາດເຫຼົ້າຂອງໄວໜຸ່ມປະກົດວ່າໜັກໜ່ວງ, ການສຳຫຼວດໜຶ່ງຂອງນະຄອນຫຼວງວຽງຈັນ, ຫຼວງພະບາງ ແລະ ຈຳປາສັກ ພົບວ່າ 21 ສ່ວນຮ້ອຍ ຂອງໄວໜຸ່ມອາຍຸ 15-24 ປີ ດື່ມ 5 ຫາ 7 ມື້ຕໍ່ອາທິດ (ສູນການສຶກສາກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ, ປະເທດໄທ, 2013). ອາຍຸສະເລ່ຍທີ່ໄວໜຸ່ມເລີ່ມດື່ມເຄື່ອງດື່ມທີ່ມີທາດເຫຼົ້າແມ່ນໄວເຖິງ 13 ປີ (ຄຊປປລ ແລະ UNFPA, 2014). ມີການສຶກສາເມື່ອບໍ່ດົນມານີ້ຂອງໂຮງຮຽນມັດທະຍົມສຶກສາ 8 ແຫ່ງໃນເມືອງໂພນໂຮງ ແຂວງວຽງຈັນ, ໄດ້ພົບເຫັນວ່າ ອັດຕາສ່ວນການດື່ມເຄື່ອງດື່ມທີ່ມີທາດເຫຼົ້າໂດຍລວມແມ່ນສູງເຖິງ 57,5 ສ່ວນຮ້ອຍ (Kounnavong et al, 2021). ໃນບັນດາຜູ້ດື່ມ, ປະມານເຄິ່ງໜຶ່ງໄດ້ຖືກຈັດປະເພດເປັນ 'ຜູ້ດື່ມເບົາ', ໃນຂະ




## ກ່ອງຂໍ້ຄວາມ 4.4: ແຄມເປນ"ຂ້ອຍ", ຮ່າງກາຍຂອງຂ້ອຍ, ໂລກຂອງຂ້ອຍ, ອະນາຄົດຂອງຂ້ອຍ".

ໃນເດືອນກັນຍາ 2019, ກະຊວງສາທາລະນະສຸກ ແລະ UNFPA ໄດ້ເປີດຕົວແຄມເປນ “ຂ້ອຍ, ຮ່າງກາຍຂອງຂ້ອຍ, ໂລກຂອງຂ້ອຍ, ອະນາຄົດຂອງຂ້ອຍ” ເພື່ອຊຸກຍູ້ໃຫ້ໄວໜຸ່ມປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ. ຂະບວນການດັ່ງກ່າວມີຈຸດປະສົງເພື່ອຍົກສູງຄວາມຮັບຮູ້ກ່ຽວກັບເປົ້າໝາຍທົ່ວໂລກ ໂດຍເນັ້ນໃສ່ບັນຫາທີ່ສຳຄັນທີ່ສຸດສຳລັບໄວໜຸ່ມ, ລວມທັງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ຄວາມສະເໝີພາບລະຫວ່າງຍິງ - ຊາຍ ແລະ ການປ່ຽນແປງຂອງດິນຟ້າອາກາດ.

ຂະບວນການດັ່ງກ່າວໄດ້ກວມເອົາ 11 ໂຮງຮຽນໃນນະຄອນຫຼວງວຽງຈັນ ແລະ ມີການເຂົ້າຮ່ວມຢ່າງຕັ້ງໜ້າຂອງນັກຮຽນ 1.200 ຄົນ ແລະ ຄູສອນ 100 ຄົນເຂົ້າຮ່ວມຢ່າງກະຕືລືລົ້ນ. ໄວໜຸ່ມອາສາສະໝັກ 20 ຄົນໄດ້ຮຽນຮູ້ທີ່ຈະເປັນຜູ້ນຳພາຂະບວນການ. ພະນັກງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ອຳນວຍຄວາມສະດວກໃຫ້ແກ່ກອງປະຊຸມຕ່າງໆໃນໂຮງຮຽນ. ເຊິ່ງມີເນື້ອຫາກວມເອົາເລື່ອງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ສຸຂະພາບຈິດ ແລະ ການສະໜັບສະໜູນທາງດ້ານຈິດຕະສັງຄົມ, ການນຳໃຊ້ສະຖານທີ່ໃຫ້ຄຳປຶກສາທີ່ປອດໄພ ແລະ ການເຂົ້າເຖິງຂໍ້ມູນໂດຍໃຊ້ແອັບມືຖື Noi-Yakhoo. ໂຮງຮຽນໄດ້ຈັດກິດຈະກຳແບບມີສ່ວນຮ່ວມ ແລະ ສົ່ງເສີມເລື່ອງການຮັກສາຄວາມສະອາດ ເພື່ອຊຸກຍູ້ໃຫ້ໄວໜຸ່ມມີສ່ວນຮ່ວມໃນການປະຕິບັດການຫຼຸດຜ່ອນຜົນກະທົບຂອງ ໂຄວິດ - 19.

ແຫຼ່ງຂໍ້ມູນ: UNFPA, 2019a, 2020a.





©UNFPA Laos

## ກ່ອງຂໍ້ຄວາມ 4.5: ແຜນງານ ນາງນ້ອຍ ເພື່ອການເສີມສ້າງ ຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມຍິງ

ໃນປີ 2016, ສປປ ລາວ ໄດ້ເປີດຕົວແຜນງານ ນາງນ້ອຍ ເພື່ອສ້າງຈິດສຳນຶກກ່ຽວກັບບັນຫາໄວໜຸ່ມ ແລະ ຕິດຕາມຄວາມຄືບໜ້າຂອງສິ່ງເຫຼົ່ານີ້ພາຍໃນວາລະ 2030. ຈຸດປະສົງແມ່ນເພື່ອໃຫ້ແນ່ໃຈວ່າເດັກຍິງໄວໜຸ່ມໂດຍສະເພາະ ແລະ ບໍ່ໄດ້ຖືກປະຖິ້ມໄວ້. ແຜນງານນີ້ກ່າວເຖິງການແກ້ໄຂສິ່ງທ້າທາຍໃນການເຂົ້າເຖິງການສຶກສາ, ສຸຂະພາບທາງເພດ ແລະ ການຈະເລີນພັນ, ໂພຊະນາການ, ການຈ້າງງານ, ຄວາມສະເໝີພາບຍິງ - ຊາຍ ແລະ ການມີສ່ວນຮ່ວມໃນການຕັດສິນໃຈ.

ນາງນ້ອຍ ເປັນຕົວແທນຂອງເດັກຍິງອາຍຸ 1-19 ປີ. ເຊິ່ງເປັນຈູດເລີ່ມຕົ້ນໃນການສ້າງຈິດສຳນຶກ, ສ້າງຄວາມຮ່ວມມື ແລະ ເພີ່ມການລົງທຶນໃນເດັກຍິງເພື່ອໃຫ້ພວກເຂົາບັນລຸທ່າແຮງຂອງຕົນຢ່າງເຕັມທີ່. ພັດທະນາໂດຍສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນລາວ, UNFPA ແລະ Plan International, ນາງນ້ອຍ ແມ່ນຄວາມພະຍາຍາມລະດັບຊາດຄັ້ງທຳອິດໃນການຕິດຕາມຄວາມຄືບໜ້າຂອງເດັກຍິງໄວໜຸ່ມໃນ 5 ຕົວຊີ້ວັດ ເປົ້າໝາຍການພັດທະນາແບບຍືນຍົງ, ເຊັ່ນ: ອັດຕາສ່ວນຂອງພະຍາດເລືອດຈາງໃນເດັກຍິງອາຍຸ 15-19 ປີ, ອັດຕາການເກີດລູກຂອງໄວໜຸ່ມ ແລະ ສັດສ່ວນຂອງເດັກຍິງອາຍຸ 15-17 ປີທີ່ບໍ່ໄດ້ເຂົ້າໂຮງຮຽນ. ມັນໃຊ້ຂໍ້ມູນແຍກຍ່ອຍກ່ຽວກັບໄວໜຸ່ມທີ່ຜະລິດໂດຍການສຳຫຼວດຕົວຊີ້ວັດສັງຄົມລາວທຸກໆຫ້າປີ. ໃນການຈັດຕັ້ງປະຕິບັດແຜນງານດັ່ງກ່າວຮ່ວມມືກັບສູນຂ່າວສານການແພດສຸຂະສຶກສາ ຂອງກະຊວງສາທາລະນະສຸກ, ໄດ້ນຳເອົາແອັບໂທລະສັບມືຖື Noi-Yakhoo ເປັນແຫຼ່ງຂໍ້ມູນແບບຮອບດ້ານສຳລັບຂໍ້ມູນຂ່າວສານດ້ານສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ບົດບາດຍິງ-ຊາຍ ແລະ ທັກສະຊີວິດທີ່ເປັນມິດກັບໄວໜຸ່ມ.

ແຫຼ່ງຂໍ້ມູນ: UNFPA, 2019b.




©UNFPA Laos




**27,9 ສ່ວນຮ້ອຍ ຂອງຜູ້ໃຫຍ່ແມ່ນຜູ້ສູບຢາໃນປັດຈຸບັນ. ອັດຕາສ່ວນໃຫຍ່ ຂອງເພດຊາຍ ແມ່ນ 50,8 ສ່ວນຮ້ອຍ, ເປັນ 7 ເທົ່າຂອງ ເພດຍິງທີ່ 7,1 ສ່ວນຮ້ອຍ.**

ນະທີ່ອີກເຄິ່ງໜຶ່ງແມ່ນຜູ້ດື່ມປານກາງ, ໜັກ ຫຼື ໜັກຫຼາຍ. ການດື່ມຢ່າງໜັກແມ່ນກ່ຽວຂ້ອງກັບການໃຊ້ຢາເສບຕິດ, ລະດັບການຮຽນຕໍ່າ ແລະ ຄວາມຮຸນແຮງໃນໂຮງຮຽນ (NCAW ແລະ LSB, 2015). ຄວາມສ່ຽງເພີ່ມເຕີມລວມມີການຂັບລົດໃນຂະນະທີ່ມຶນເມົາ, ອຸບັດຕິເຫດເພີ່ມຂຶ້ນ ແລະ ການເສບຕິດເຄື່ອງດື່ມທີ່ມີທາດເຫຼົ້າຕະຫຼອດຊີວິດ.

**ການໃຊ້ຢາເສບຕິດ:** ສປປ ລາວ ຍັງຄົງເປັນປະເທດທີ່ຜະລິດຝິ່ນລາຍໃຫຍ່ ໂດຍມີເນື້ອທີ່ປູກຝິ່ນປະມານ 5.700 ເຮັກຕາ, ໃນປີ 2015 ຜະລິດຝິ່ນໄດ້ເຖິງ 176 ໂຕນ (UNODC, 2015). ຂະນະທີ່ການຜະລິດຍັງຄົງຕົວຢູ່, ເຖິງວ່າຈະຢູ່ໃນລະດັບສູງ, ແຕ່ໃນຊຸມປີມໍ່ໆມານີ້ ໄດ້ມີການລັກລອບຄ້າຢາສັງເຄາະ ທັງຜ່ານ ແລະ ໄປຂາຍທີ່ ສປປ ລາວ ເພີ່ມຂຶ້ນຢ່າງວ່ອງໄວ. ການຖືກໃຊ້ເປັນປະເທດຜ່ານແດນສຳລັບການຄ້າຢາບ້າຈາກມຽນມາໄດ້ເພີ່ມຂຶ້ນ. ການຍຶດຢາບ້າໄດ້ເພີ່ມຂຶ້ນຈາກ 6.331.692 ເມັດ ໃນປີ 2015 ເປັນ 18.602.900 ເມັດ ໃນປີ 2020 (UNODC, 2021). ໃນປີ 2021 ທາງການລາວ ຍຶດໄດ້ 143 ລ້ານເມັດ ເພີ້ມຂຶ້ນ 600 ສ່ວນຮ້ອຍ ຈາກປີ 2020. (UNODC, 2022).

ການຂາດຂໍ້ມູນຫຼ້າສຸດ ທີ່ກ່ຽວກັບຂອບເຂດຂອງການໃຊ້ຢາເສບຕິດ ແລະ ຜູ້ທີ່ມີຄວາມຜິດປົກກະຕິກ່ຽວກັບການນຳໃຊ້ຢາເຮັດໃຫ້ການວິເຄາະສະຖານະການມີຄວາມຫຍຸ້ງຍາກ. ການສຳພາດ ແລະ ສົນທະນາເປັນກຸ່ມສະເພາະກັບໄວໜຸ່ມນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ ພົບວ່າ ໄວໜຸ່ມທີ່ເສບຢາບ້າ ສ່ວນໃຫຍ່ເລີ່ມນຳໃຊ້ຢາເສບຕິດໃນລະຫວ່າງອາຍຸ 15-19 ປີ ແລະ ຫຼາຍຄົນໄດ້ນຳໃຊ້ໂດຍສະເລ່ຍແມ່ນ 5 ປີ. ຂໍ້ມູນຈາກສູນບຳບັດແຫ່ງໜຶ່ງຊີ້ໃຫ້ເຫັນວ່າ ຢາບ້າກວມອັດຕາສ່ວນໃຫຍ່ທີ່ສຸດຂອງການກະທຳຜິດທີ່ກ່ຽວຂ້ອງກັບຢາເສບຕິດ, ຜູ້ໃຊ້ຢາເສບຕິດໄດ້ນຳເຂົ້າໄປພົວພັນກັບເຈົ້າໜ້າທີ່ຢ່າງເປັນທາງການ ແລະ ເຂົ້າປິ່ນປົວ (UNODC, 2021).

### ອຸບັດຕິເຫດ ແລະ ການບາດເຈັບ

ອຸບັດຕິເຫດຈະລາຈອນຕາມຖະຫນົນແມ່ນສາເຫດອັນດັບຕົ້ນຂອງການເສຍຊີວິດຂອງໄວໜຸ່ມໃນທົ່ວໂລກ (ອົງການອະນາໄມໂລກ, 2021; Strong et al., 2021), ກັບປະເທດທີ່ມີລາຍໄດ້ຕໍ່າ ແລະ ປານກາງຕ້ອງແບກຮັບພາລະການເສຍຊີວິດໃນໂລກຢ່າງບໍ່ສົມເຫດສົມຜົນ. ຢູ່ ສປປ ລາວ, ອຸບັດຕິເຫດຕາມທ້ອງຖະໜົນເປັນສາເຫດການເສຍຊີວິດອັນດັບ 1 ຂອງຜູ້ອາຍຸ 5-14 ປີ ແລະ ອັນດັບ 2 ຂອງການເສຍຊີວິດສຳລັບຜູ້ອາຍຸ 15-49 ປີ ທັງເປັນສາເຫດອັນໜຶ່ງຂອງຄວາມພິການຂອງປະຊາຊົນທັງໝົດ (ທະນາຄານໂລກ, 2021).

ອຸບັດຕິເຫດມັກຈະຕິດພັນກັບການດື່ມເຫຼົ້າ ແລະ ເສບຢາເສບຕິດຂອງ ໄວໜຸ່ມຊາຍ, ເຊັ່ນດຽວກັນກັບການຂັບລົດໄວ ແລະ ການແຂ່ງລົດຈັກ. ຢູ່ສີ່ແຍກແຫ່ງໜຶ່ງໃນນະຄອນຫຼວງວຽງຈັນ, 73 ສ່ວນຮ້ອຍ ຂອງຍານພາຫະນະໃຊ້ຄວາມໄວເກີນຂີດຈຳກັດ, ໂດຍຜູ້ຂັບຂີ່ໄວໜຸ່ມສ່ວນຫຼາຍມັກໃຊ້ຄວາມໄວສູງ (ທະນາຄານໂລກ, 2021). ໃນແຕ່ລະປີ ມີຜູ້ເສຍຊີວິດກວ່າ 1.000 ຄົນ ຕາມທ້ອງຖະໜົນໃນ ສປປ ລາວ (ທະນາຄານໂລກ, 2021).

ໄວໜຸ່ມເປັນກຸ່ມຄົນສ່ວນໃຫຍ່ຂອງຜູ້ທີ່ໄດ້ຮັບບາດເຈັບຈາກການຈະລາຈອນຕາມຖະຫນົນ. ໃນປີ 2015, 43,5 ສ່ວນຮ້ອຍ ຂອງອຸບັດຕິເຫດທັງໝົດກ່ຽວຂ້ອງກັບຜູ້ທີ່ມີອາຍຸ 16-28 (Mektakul, 2016). ການສຳຫຼວດຢູ່ໂຮງໝໍແຂວງຫຼວງນ້ຳທາ ພົບວ່າຄົນເຈັບທັງໝົດ 1.074 ຄົນ ທີ່ໄດ້ຮັບບາດເຈັບຈາກການຈະລາຈອນຕາມທ້ອງຖະໜົນ ແມ່ນໄວໜຸ່ມ, ອາຍຸສະເລ່ຍ 22 ປີ. (Slesak et al., 2015). ສ່ວນໃຫຍ່ເປັນເພດຊາຍ (68 ສ່ວນຮ້ອຍ), ຂັບຂີ່ລົດຈັກ (76 ສ່ວນຮ້ອຍ) ແລະ ຄົນຂັບລົດບໍ່ມີໃບຂັບຂີ່ (85 ສ່ວນຮ້ອຍ) ຫຼື ບໍ່ມີປະກັນໄພອຸບັດຕິເຫດ (95 ສ່ວນຮ້ອຍ).

ດ້ວຍການລົງທະບຽນຍານພາຫະນະສ່ວນບຸກຄົນເພີ່ມຂຶ້ນຫຼາຍກວ່າ 10 ສ່ວນຮ້ອຍ ຕໍ່ປີໃນທົດສະວັດທີ່ຜ່ານມາ ແລະ ລົດຈັກກວມເອົາ 67 ສ່ວນຮ້ອຍ ຂອງການເດີນທາງປະຈຳວັນ (ADB, 2021), ທັງຈຳນວນ ແລະ ຄວາມຮຸນແຮງຂອງອຸບັດຕິເຫດໄດ້ເພີ່ມຂຶ້ນ. ອຸບັດຕິເຫດທັງໝົດປະຈຳປີເພີ່ມຂຶ້ນ 35 ສ່ວນຮ້ອຍ ລະຫວ່າງປີ 2010 ເຖິງ 2020 ແລະ ຜູ້ເສຍຊີວິດເພີ່ມຂຶ້ນ 67 ສ່ວນຮ້ອຍ. ຈຳນວນຜູ້ເສຍຊີວິດຍ້ອນອຸບັດເຫດທາງຖະໜົນໄດ້ຫຼຸດລົງຈາກ 1.031 ໃນປີ 2020 ເປັນ 831 ໃນປີ 2021, ອາດເປັນຍ້ອນການປິດເມືອງຂອງໂຄວິດ-19 ໃນທົ່ວປະເທດ.

ເຖິງວ່າຈະມີຫຼັກຖານທາງດ້ານນິເວດຂອງການບາດເຈັບຈາກການຈະລາຈອນຕາມຖະຫນົນໃນລະດັບສູງ, ໂດຍສະເພາະໃນບັນດາໄວໜຸ່ມຊາຍ, ແຕ່ສ່ວນຫຼາຍແມ່ນບໍ່ມີການບັນທຶກ, ດັ່ງນັ້ນສະຖິຕິຢ່າງເປັນທາງການສະທ້ອນໃຫ້ເຫັນພຽງແຕ່ສ່ວນໜຶ່ງຂອງບັນຫາ (Slesak et al, 2015; Ferrand ແລະ Peyronnie, 2006; Weichert, 2006). ຂໍ້ມູນຈາກເຂດຊົນນະບົດຍັງຂາດແຄນ ແລະ ຍັງບໍ່ມີຕົວເລກສະເພາະຂອງໄວໜຸ່ມ. ມີຂໍ້ມູນພຽງເລັກນ້ອຍກ່ຽວກັບຄຸນລັກສະນະ, ທ່າອ່ຽງ ແລະ ປັດໄຈສ່ຽງທີ່ກ່ຽວຂ້ອງກັບຜູ້ຂັບຂີ່ໄວໜຸ່ມ, ພຶດຕິກຳການຂັບຂີ່ ແລະ ຜົນກະທົບຫຼັງເກີດອຸບັດຕິເຫດທາງລົດ (ເຊັ່ນ ປະເພດຂອງການບາດເຈັບ, ການຄາດຄະເນພະຍາດໃນໄລຍະຍາວ, ຄວາມພິການ ແລະ ອື່ນໆ).




**39,7 ສ່ວນຮ້ອຍ ຂອງຜູ້ຕອບແບບສຳຫຼວດສຳລັບບົດລາຍງານນີ້ ກ່າວວ່າການບາດເຈັບຈາກອຸບັດຕິເຫດ ເປັນບັນຫາສຸຂະພາບບຸລິມະສິດ.**

ໄວໜຸ່ມຮັບຮູ້ຄວາມສ່ຽງທີ່ເພີ່ມຂຶ້ນຂອງການບາດເຈັບ ແລະ ອຸບັດຕິເຫດ; 39,7 ສ່ວນຮ້ອຍ ຂອງຜູ້ຕອບແບບສຳຫຼວດສຳລັບບົດລາຍງານນີ້ກ່າວວ່າການບາດເຈັບຈາກອຸບັດຕິເຫດເປັນບັນຫາສຸຂະພາບບຸລິມະສິດ. ຄວາມສ່ຽງຕໍ່ການບາດເຈັບແມ່ນຮ້າຍແຮງໂດຍສະເພາະສຳລັບໄວໜຸ່ມໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກທີ່ການບໍລິການການດູແລສຸຂະພາບທີ່ມີຄຸນນະພາບມັກຈະບໍ່ສາມາດເຂົ້າເຖິງໄດ້. ໃນການສົນທະນາກຸ່ມ, ມີຜູ້ໜຶ່ງໄດ້ກ່າວວ່າ ຫຼັງຈາກອຸປະຕິເຫດ, "ທ່ານໝໍເວົ້າວ່າບໍ່ມີຫຍັງຮ້າຍແຮງກັບຂາຂອງຂ້ອຍ ແຕ່ຕໍ່ມາອາການຂອງຂາຂອງຂ້ອຍກໍ່ຮ້າຍແຮງຂຶ້ນ ແລະ ດຽວນີ້ຂາຂ້ອຍກໍເປັນອຳມະພາດ."

## ໂຄວິດ-19 ແລະ ຜົນກະທົບຂອງມັນຕໍ່ໄວໜຸ່ມ

ການປະເມີນສຸຂະພາບ ແລະ ສະຫວັດດີການຂອງໄວໜຸ່ມໃນ ສປປ ລາວ ຈຳເປັນຕ້ອງຄຳນຶງເຖິງການລະບາດຂອງພະຍາດໂຄວິດ-19 ທີ່ຜ່ານມາ. ຜົນກະທົບດັ່ງກ່າວໄດ້ຮັບການກະທົບຢ່າງໜັກໜ່ວງ, ໂດຍມີການຢຸດການຈ້າງງານຄັ້ງໃຫຍ່, ການສຶກສາ ແລະ ການຮຽນຮູ້ທັງໃນລະບົບ ແລະ ນອກລະບົບ, ແລະ ການບໍລິການດ້ານສາທາລະນະສຸກ ແລະ ສັງຄົມ (UNFPA, 2020).ໄວໜຸ່ມແມ່ນມີຄວາມອ່ອນໄຫວໂດຍສະເພາະຕໍ່ກັບຜົນກະທົບທາງກິ່ງ ແລະ ທາງອ້ອມຂອງການປິດເມືອງທີ່ນຳໄປສູ່ການປິດໂຮງຮຽນ, ສູນເສຍໂອກາດທາງເສດຖະກິດ, ເພີ່ມທະວີຄວາມຮັບຜິດຊອບພາຍໃນບ້ານ ແລະ ມີຄວາມສ່ຽງຕໍ່ຄວາມຮຸນແຮງ, ລວມທັງຄວາມຮຸນແຮງໃນຄອບຄົວ. ຄວາມບໍ່ສະເໝີພາບທີ່ເລິກເຊິ່ງຂຶ້ນຈະເພີ່ມຄວາມກົດດັນ, ຄວາມກັງວົນ, ການຊຶມເສົ້າ ແລະ ບັນຫາສຸຂະພາບອື່ນໆ ເນື່ອງຈາກການຫຼຸດລົງຢ່າງຫຼວງຫຼາຍໃນກິດຈະກຳທາງດ້ານຮ່າງກາຍ ແລະ ສັງຄົມ.

ມີຄາດຄະເນວ່າອັດຕາການອອກໂຮງຮຽນໃນຊັ້ນມັດທະຍົມຕອນຕົ້ນເພີ່ມຂຶ້ນ 5 ສ່ວນຮ້ອຍ ກັບເດັກຍິງໄວໜຸ່ມ ແລະ ນັກຮຽນຈາກຄອບຄົວທຸກຍາກທີ່ສຸດ ແມ່ນມີຄວາມສ່ຽງທີ່ຈະອອກໂຮງຮຽນ (UNFPA ແລະ UNICEF, 2021). ມີລາຍງານວ່າອັດຕາການໃຊ້ຢາຄຸມກຳເນີດໄດ້ຫຼຸດລົງໃນບັນດາໄວໜຸ່ມແມ່ຍິງ ໃນຂະນະທີ່ຄວາມສ່ຽງຂອງການຖືພາທີ່ບໍ່ໄດ້ວາງແຜນໄວ້ ແລະ ການເສຍຊີວິດຂອງແມ່ໄດ້ເພີ່ມຂຶ້ນ. ຄວາມກົດດັນທາງຈິດຕະສັງຄົມທີ່ເພີ່ມຂຶ້ນແມ່ນເຫັນໄດ້ໃນການສຳຫຼວດຄວາມຮັບຮູ້ຂອງໄວໜຸ່ມ 1,200 ຄົນໃນ 6 ເມືອງຊົນນະບົດ ຊຶ່ງ 73,3 ສ່ວນຮ້ອຍ ໄດ້ລາຍງານວ່າຮູ້ສຶກບໍ່ປອດໄພໃນການອອກໄປນອກ, 57,1 ສ່ວນຮ້ອຍ ບໍ່ສາມາດເຂົ້າເຖິງການບໍລິການ, 46,6 ສ່ວນຮ້ອຍ ສູນເສຍວຽກເຮັດງານທຳ ແລະ 25,3 ສ່ວນຮ້ອຍ ບໍ່ສາມາດເຂົ້າໂຮງຮຽນ. (UNDP, 2022, ເບິ່ງຮູບ 4.6).

ເນື່ອງຈາກຄວາມຫຼາກຫຼາຍຂອງສະພາບການຢູ່ໃນ ສປປ ລາວ, ວິທີການຮັບມືກັບເຊື້ອໄວຣັສ ແລະ ຜົນກະທົບທາງດ້ານສັງຄົມ ແລະ ເສດຖະກິດຈຶ່ງມີຄວາມແຕກຕ່າງກັນ. ຄວາມແຕກໂຕນເຫັນໄດ້ຊັດເຈນຢູ່ໃນສະພາບການເປັນຢູ່, ລະດັບການເຂົ້າເຖິງ ແລະ ຄຸນນະພາບຂອງການບໍລິການທີ່ຈຳເປັນເຊັ່ນ: ສຸຂະພາບ ແລະ ການສຶກສາ. ອີງຕາມພູມສາດ, ເພດ, ຫ້ອງຮຽນ, ແລະ ອື່ນໆ, ໄວໜຸ່ມຍັງມີລະດັບຄວາມທົນທານແຕກຕ່າງກັນ. ບາງຄົນແມ່ນຢູ່ໃນສະຖານະການທີ່ມີຄວາມສ່ຽງໃນໄລຍະຍາວເຊິ່ງນອກເໜືອຈາກອັນຕະລາຍຂອງການຕິດເຊື້ອໄວຣັດ. ຜົນໄດ້ຮັບທາງລົບເພີ່ມເຕີມລວມເຖິງການຂົ່ມຂູ່ທີ່ເພີ່ມຂຶ້ນຂອງຄວາມຮຸນແຮງທາງເພດ, ການຂົ່ມຂູ່ທາງອອນລາຍ, ການຂູດຮີດທາງເພດ ແລະ ການແຕ່ງງານໃນໄວເດັກ.

ຮູບທີ 4.6

ໃນຂະນະທີ່ລັດຖະບານໄດ້ດຳເນີນການເຄື່ອນໄຫວຢ່າງວ່ອງໄວໃນການຕອບໂຕ້ການແຜ່ລະບາດຂອງພະຍາດ ໂຄວິດ - 19, ໂດຍໄດ້ຈັດຕັ້ງຄະນະສະເພາະກິດເພື່ອປ້ອງກັນພະຍາດໂຄວິດ - 19, ປະຕິບັດມາດຕະການປ້ອງກັນ ແລະ ເພີ່ມທະວີຄວາມສາມາດດ້ານການດູແລສຸຂະພາບຢ່າງວ່ອງໄວ, ການແຊກແຊງທັງໝົດບໍ່ໄດ້ພິຈາລະນາເຖິງຄວາມຕ້ອງການທີ່ແຕກຕ່າງກັນຂອງໄວໜຸ່ມ ຫຼື ມີການປຶກສາຫາລືໃນສິ່ງທີ່ກ່ຽວຂ້ອງກັບພວກເຂົາ, ເຮັດໃຫ້ຄວາມບໍ່ສະເໝີພາບທີ່ມີຢູ່ແລ້ວຍິ່ງເພີ່ມຂຶ້ນອີກ. ຜົນກະທົບໃນໄລຍະກາງຫາໄລຍະຍາວອາດຈະຮ້າຍແຮງຂຶ້ນ ຖ້າຫາກບໍ່ດຳເນີນມາດຕະການທີ່ເໝາະສົມເພື່ອຮັບປະກັນສິດຂອງໄວໜຸ່ມ ແລະ ເຍົາວະຊົນຕໍ່ກັບ “ສຸຂະພາບ, ຄວາມປອດໄພ, ທາງເລືອກ ແລະ ສຽງ ຂອງເຂົາເຈົ້າ” (UNFPA, 2020).

ການສຳຫຼວດແບບເຊິ່ງໜ້າ ແລະ ຜ່ານທາງອອນລາຍສຳລັບບົດລາຍງານນີ້ໃຫ້ຄະແນນ ໂຄວິດ-19 ສູງສຸດ (51,8 ສ່ວນຮ້ອຍ ຂອງຜູ້ຕອບ) ແລະ ອັນດັບສອງ (62,9 ສ່ວນຮ້ອຍ ຂອງຜູ້ຕອບ) ແມ່ນບັນຫາສຸຂະພາບສຳລັບໄວໜຸ່ມ. ກອບເສດຖະກິດ - ສັງຄົມຂອງສະຫະປະຊາຊາດສຳລັບປີ 2020 ຊີ້ໃຫ້ເຫັນເຖິງຜົນກະທົບທາງລົບຂອງການຂາດແຄນຫຼາຍດ້ານຕໍ່ການເຕີບໂຕ ແລະ ການພັດທະນາ, ເຊິ່ງລວມທັງຜົນກະທົບສຳລັບການຜະລິດ ແລະ ການພັດທະນາຄວາມສາມາດຂອງມະນຸດ (ອົງການສະຫະປະຊາຊາດ, 2020)

ໃນຂະນະທີ່ ສປປ ລາວ ມີຄວາມຄືບໜ້າທີ່ດີໃນດ້ານສຸຂະພາບຫຼາຍຢ່າງ ໂດຍສະເພາະແມ່ນການຫຼຸດອັດຕາການຕາຍຂອງເດັກນ້ອຍ ແລະ ແມ່, ການຫຼຸດຜ່ອນການເສຍຊີວິດຈາກພະຍາດຕິດຕໍ່ ແລະ ອັດຕາການສັກຢາກັນພະຍາດທີ່ກ້າວໜ້າ, ບັນຫາບຸລິມະສິດຂອງໄວໜຸ່ມ ຫຼື ແຜນງານສະເພາະຂອງໄວໜຸ່ມພາຍໃນການດູແລສຸຂະພາບຂັ້ນຕົ້ນຍັງບໍ່ທັນໄດ້ປະກົດຜົນເປັນຈິງ. ມີຄວາມຈຳເປັນຕ້ອງໄດ້ເພີ່ມທະວີການເອົາໃຈໃສ່ໃນການບໍລິການສຸຂະພາບຈິດ ແລະ ໂຄງການສຸຂະພາບທາງເພດ ແລະ ການຈະເລີນພັນ ໂດຍສະເພາະຢູ່ເຂດຊົນນະບົດ. ການບໍລິການດ້ານສາທາລະນະສຸກທີ່ອຸທິດເພື່ອປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງສະເພາະຂອງໄວໜຸ່ມ, ລວມທັງການໃຊ້ສິ່ງມຶນເມົາ ແລະ ຢາເສບຕິດ, ຄວາມຮຸນແຮງ ແລະ ອຸບັດຕິເຫດຕາມທ້ອງຖະໜົນ, ຈະເຮັດໃຫ້ໄວໜຸ່ມສາມາດເພີ່ມທະວີການພັດທະນາທີ່ເປັນຮູບແບບຂອງຕົນ, ຮັບຮູ້ຄວາມຜາສຸກຢ່າງເຕັມທີ່, ປະກອບສ່ວນສ້າງສາສັງຄົມ ແລະ ເສດຖະກິດ.

# 4.3 ກົດໝາຍ, ຄວາມຄິດລິເລີ່ມ ແລະ ການລົງທຶນ

ໃນປະຫວັດສາດຂອງ ສປປ ລາວ, ລັດຖະທຳມະນູນ ແລະ ກົດໝາຍແຫ່ງຊາດ, ຍຸດທະສາດ ແລະ ແຜນປະຕິບັດງານ ໄດ້ປົກປ້ອງ ແລະ ສົ່ງເສີມສິດຂອງແມ່ຍິງ, ເດັກນ້ອຍ ແລະ ຄົນທີ່ມີຄວາມພິການ. ກົດໝາຍຫຼາຍສະບັບໄດ້ກຳນົດການເຂົ້າເຖິງການດູແລສຸຂະພາບສຳລັບໄວໜຸ່ມ. ໃນນັ້ນລວມມີກົດໝາຍວ່າດ້ວຍການດູແລສຸຂະພາບ (2005), ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (2004), ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2006), ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສຳລັບເຍົາວະຊົນ (2014) ແລະ ກົດໝາຍວ່າດ້ວຍການປ້ອງກັນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ (2014), ແລະ ອື່ນໆ. ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດຄັ້ງທີ 7 ແລະ 8 ໄລຍະເວລາ 7 ປີ ເຫັນວ່າມີຄວາມຄືບໜ້າຢ່າງຫຼວງຫຼາຍທາງດ້ານສຸຂະພາບ, ໂພຊະນາການ ແລະ ການປົກປ້ອງເດັກ ແລະ ໄວໜຸ່ມ.

ນັບແຕ່ປີ 2009 ເປັນຕົ້ນມາ, ໄດ້ເຫັນການປ່ຽນແປງໃນຂະແໜງສາທາລະນະສຸກ. ນະໂຍບາຍ ແລະ ທິດທາງຍຸດທະສາດໃໝ່ໄດ້ເຮັດໃຫ້ມີການປ່ຽນແປງໃນການປະສານງານຜູ້ໃຫ້ທຶນ, ການແນະນຳຫຼັກປະກັນສຸຂະພາບແຫ່ງຊາດ, ການປະຕິຮູບລະບົບຂໍ້ມູນຂ່າວສານສຸຂະພາບ ແລະ ການນຳໃຊ້ຊຸດການບໍລິການທີ່ຈຳເປັນ (ອົງການອະນາໄມໂລກ, 2018b).

## ກອບກົດໝາຍແຫ່ງຊາດເພື່ອປົກປ້ອງສິດ ແລະ ຜົນປະໂຫຍດດ້ານສຸຂະພາບຂອງໄວໜຸ່ມ

ລັດຖະທຳມະນູນປີ 2015 ສະບັບປັບປຸງກ່າວວ່າ "ລັດເອົາໃຈໃສ່ໃນການປັບປຸງ ແລະ ຂະຫຍາຍການບໍລິການສາທາລະນະສຸກເພື່ອດູແລສຸຂະພາບຂອງປະຊາຊົນ" ໂດຍສຸມໃສ່ແມ່ຍິງ, ເດັກນ້ອຍ, ປະຊາຊົນທີ່ມີຖານະທຸກຍາກ ແລະ ຢູ່ເຂດຫ່າງໄກສອກຫຼີກ. ກົດໝາຍທີ່ກ່ຽວຂ້ອງກັບສຸຂະພາບຫຼາຍສະ

**ຮູບ 4.6: ໄວໜຸ່ມລາຍງານຜົນກະທົບຂອງ ໂຄວິດ - 19, ຄິດເປັນສ່ວນຮ້ອຍ**

ແຫຼ່ງຂໍ້ມູນ: UNDP, 2022.



ບັບກຳນົດສິດຂອງໄວໜຸ່ມໃນການເຂົ້າເຖິງການດູແລສຸຂະພາບ ໃນຂະນະທີ່ປົກປ້ອງເຂົາເຈົ້າຈາກອັນຕະລາຍທີ່ອາດຈະເກີດຂຶ້ນ. ກົດໝາຍວ່າດ້ວຍການດູແລສຸຂະພາບ, ປີ 2005 (ສະບັບເລກທີ 09/ສພຊ) (ປະກາດໃຊ້ໂດຍດຳລັດເລກທີ 139/ສພຊ, ລົງວັນທີ 9 ທັນວາ 2005) ກ່າວວ່າທຸກຄົນ "ບໍ່ວ່າຈະເປັນເພດ, ອາຍຸ, ຊົນເຜົ່າກຳເນີດ, ເຊື້ອຊາດ, ສາສະໜາ ຫຼື ສະຖານະພາບທາງເສດຖະກິດສັງຄົມ" ມີສິດໄດ້ຮັບການດູແລສຸຂະພາບ. ກະຊວງສາທາລະນະສຸກຮັບປະກັນໃຫ້ທຸກຄົນ ລວມທັງໄວໜຸ່ມເຂົ້າເຖິງການດູແລສຸຂະພາບທົ່ວໄປ ແລະ ການດູແລຄວາມຕ້ອງການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ. ກົດໝາຍວ່າດ້ວຍການດູແລສຸຂະພາບ (2005) ແລະ ນະໂຍບາຍສຸຂະພາບຈະເລີນພັນແຫ່ງຊາດ (2005) ຮ່ວມກັນປົກປ້ອງສິດເຫຼົ່ານີ້.

ໃນດ້ານການດູແລສຸຂະພາບຈະເລີນພັນ, ການເອົາລູກອອກໄດ້ຖືກກຳນົດຢູ່ໃນກົດໝາຍວ່າດ້ວຍສຸຂະພາບ ແລະ ປະມວນກົດໝາຍອາຍາ (2019), ເຊິ່ງມັນຈະຖືກກົດໝາຍ ຫຼື ຜິດກົດໝາຍແມ່ນຂຶ້ນກັບ "ສະຖານທີ່ບໍລິການ (ໂຮງໝໍ ແລະ ຄລີນິກຂອງລັດຖະບານເທົ່ານັ້ນ), ປະເພດຂອງການບໍລິການ (ສະເພາະວິທີການດູດເທົ່ານັ້ນ (vacuum aspiration) , ບໍ່ແມ່ນການໃຫ້ຢາ) ແລະ ສະຖານະພາບການແຕ່ງງານ ແລະ ການເງິນຂອງແມ່" (ຄຊປປລ ແລະ UNFPA, 2014, p. 19). ການໄດ້ຮັບການອະນຸມັດໃຫ້ເອົາລູກອອກຢ່າງຖືກກົດໝາຍສຳລັບໄວໜຸ່ມທີ່ຖືພາ ໂດຍສະເພາະຜູ້ທີ່ບໍ່ໄດ້ແຕ່ງງານນັ້ນ ຄົງຈະບໍ່ສາມາດເປັນໄປໄດ້, ເຊິ່ງອາດບັງຄັບໃຫ້ຫຼາຍຄົນຕ້ອງໃຊ້ວິທີການທີ່ຜິດກົດໝາຍ ແລະ ອາດເປັນອັນຕະລາຍຢູ່ໃນຄລີນິກເອກະຊົນທີ່ບໍ່ໄດ້ຮັບອະນຸຍາດ ຫຼື ໄປທີ່ປະເທດເພື່ອນບ້ານ. ຜົນສະທ້ອນຂອງການເອົາລູກອອກແບບຜິດກົດໝາຍແມ່ນຮ້າຍແຮງ: "ແມ່ຍິງຜູ້ໃດທີ່ເອົາລູກອອກດ້ວຍຕົວເອງ ຫຼື ຮັບເອົາຜູ້ອື່ນມາປະຕິບັດໜ້າທີ່ຢ່າງຜິດກົດໝາຍຈະຖືກລົງໂທດຕັດອິດສະຫຼະພາບແຕ່ສາມເດືອນ ຫາ ໜຶ່ງປີ ແລະ ປັບໃໝແຕ່ 3.000.000 ກີບ ຫາ 10.000.000 ກີບ" (ປະມວນກົດໝາຍອາຍາ).

ຫຼາຍມາດຕາໃນກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2007) ໄດ້ກຳນົດຫຼັກການ, ກົດລະບຽບ ແລະ ມາດຕະການສຳລັບຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ. ມາດຕາ 3 ຮັບປະກັນວ່າເດັກນ້ອຍທຸກຄົນຈະມີ "ການເຂົ້າເຖິງການດູແລສຸຂະພາບ, ການປິ່ນປົວທາງການແພດ ແລະ ການຟື້ນຟູສຸຂະພາບໃນເວລາທີ່ເຈັບປ່ວຍ." ກົດໝາຍກຳນົດຄວາມຮັບຜິດຊອບຂອງລັດ, ສັງຄົມ, ພໍ່ແມ່ ແລະ ຜູ້ປົກຄອງໃນການຮັບປະກັນໃຫ້ເດັກໄດ້ເຂົ້າເຖິງການຮັກສາສຸຂະພາບຂັ້ນຕົ້ນ ແລະ ຊີ້ແຈງວ່າເດັກນ້ອຍອາຍຸ 15-18 ປີມີສິດທີ່ຈະຕັດສິນໃຈກ່ຽວກັບວິທີການ ແລະ ສະຖານທີ່ທີ່ຈະໄດ້ຮັບການປິ່ນປົວທີ່ເໝາະສົມ ເວັ້ນເສຍແຕ່ວ່າພວກເຂົາຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ ຫຼື ມີຄວາມບົກຜ່ອງທາງດ້ານຈິດໃຈ. ກົດໝາຍສະບັບນີ້ຍັງຊີ້ບອກວ່າ: ເດັກນ້ອຍທີ່ມີຄວາມພິການ, ເດັກນ້ອຍທີ່ຖືກປະຖິ້ມ ແລະ ເດັກນ້ອຍທີ່ມາຈາກຄອບຄົວທຸກຍາກ ມີສິດໄດ້ຮັບການບໍລິການປິ່ນປົວສຸຂະພາບໂດຍບໍ່ເສຍຄ່າຈາກລັດ. ມາດຕາ 40 ແລະ 41 ກ່າວເຖິງມາດຕະການ ແລະ ຂັ້ນຕອນການປົກປ້ອງ, ລວມທັງຄວາມຮັບຜິດຊອບໃນການໃຫ້ຄຳປຶກສາ, ການດູແລສຸຂະພາບ, ການສຶກສາ, ການຝຶກອົບຮົມອາຊີບ ແລະ ການບໍລິການອື່ນໆທີ່ກ່ຽວຂ້ອງເພື່ອຊ່ວຍເຫຼືອເດັກໃຫ້ກັບຄືນສູ່ສັງຄົມ ແລະ ການຟື້ນຟູຂອງເດັກນ້ອຍ.

ກົດໝາຍທີ່ກ່ຽວຂ້ອງກັບສຸຂະພາບອື່ນໆຍັງກ່າວເຖິງເດັກນ້ອຍ ຫຼື ໄວໜຸ່ມ, ໂດຍມີການບັງຄັບໃຊ້ທີ່ແຕກຕ່າງກັນ. ຕົວຢ່າງ: ກົດໝາຍວ່າດ້ວຍຢາສູບ (2009) ມີມາດຕາ 50, ເຊິ່ງຫ້າມຜູ້ທີ່ມີອາຍຸຕໍ່າກວ່າ 18 ປີສູບຢາ, ຊື້ ຫຼື ຂາຍຢາສູບ. ມາດຕາ 55 ຂອງກົດໝາຍວ່າດ້ວຍຢາເສບຕິດ (2007) ລະບຸວ່າ ໄວໜຸ່ມມີຄວາມຮັບຜິດຊອບໃນການບໍ່ໃຊ້ຢາເສບຕິດ ແລະ ຊອກຫາການປິ່ນປົວ, ຖ້າພວກເຂົາເຮັດໂດຍໃຫ້ຄວາມຮັບຜິດຊອບຢູ່ທີ່ຕົວບຸກຄົນ, ບໍ່ແມ່ນລັດໃນການແກ້ໄຂບັນຫາ. ກົດໝາຍວ່າດ້ວຍການຈະລາຈອນທາງບົກ (2000) ກຳນົດອາຍຸການຂັບຂີ່ຕາມກົດໝາຍແຕ່ 15 ປີຂຶ້ນໄປ. ອະນຸຍາດໃຫ້ເຍົາວະຊົນ 15-18 ປີ ຂີ່ລົດຈັກທີ່ມີເຄື່ອງຈັກຕໍ່າກວ່າ 110 cc. ພ້ອມທັງຮຽກຮ້ອງໃຫ້ຜູ້ຂັບຂີ່ລົດຈັກຕ້ອງໃສ່ໝວກກັນກະທົບທີ່ໄດ້ມາດຕະຖານ, ເຖິງແມ່ນວ່າການບັງຄັບໃຊ້ກົດໝາຍຈະປະຕິບັດໄດ້ບໍ່ດີກໍຕາມ (ຄຊປປລ ແລະ UNFPA, 2014).

ຍຸດທະສາດການພັດທະນາໄວໜຸ່ມ ແລະ ເຍົາວະຊົນລາວ 2021-2030, ພັດທະນາໂດຍສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ UNFPA ເຊິ່ງໄດ້ຖືກຮັບຮອງເອົາໂດຍຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ເປັນແນວທາງຍຸດທະສາດເພື່ອປັບປຸງດ້ານສຸຂະພາບ ແລະ ສະຫວັດດີການຂອງໄວໜຸ່ມ. ຍຸດທະສາດໄດ້ຍົກໃຫ້ເຫັນຄວາມສຳຄັນຂອງໄວໜຸ່ມໃນການຮັກສາສຸຂະພາບທີ່ດີ ແລະ ການດຳລົງຊີວິດທີ່ມີສຸຂະພາບດີ, ຮຽກຮ້ອງໃຫ້ມີການປັບປຸງການເຂົ້າເຖິງຂໍ້ມູນກ່ຽວກັບສຸຂະພາບທາງເພດ ແລະ ການຈະເລີນພັນ, ສະໜອງຄວາມສາມາດ ແລະ ຄວາມຮູ້ໃຫ້ແກ່ໄວໜຸ່ມ ເພື່ອພັດທະນາຄວາມສຳພັນທີ່ມີສຸຂະພາບດີ ແລະ ພຶດຕິກຳໃນທາງບວກທີ່ບໍ່ສາມາດໂຕ້ຖຽງໄດ້ສຳລັບທາງເລືອກທີ່ດີຕໍ່ສຸຂະພາບ ເຊິ່ງມີຜົນກະທົບຕະຫຼອດຊີວິດ. ຂົງເຂດບູລິມະສິດທີ່ຕ້ອງສຸມໃສ່ແມ່ນຂະຫຍາຍການບໍລິການດ້ານສຸຂະພາບທາງເພດ ແລະ ການຈະເລີນພັນ ແລະ ການສຶກສາຢ່າງກວ້າງຂວາງ; ປັບປຸງການບໍລິການໃຫ້ຄຳປຶກສາ, ຄວາມຮັບຮູ້ດ້ານສຸຂະພາບຈິດ ແລະ ຂະຫຍາຍໂຄງການວາງແຜນຄອບຄົວທີ່ກ່າວເຖິງການແຕ່ງງານກ່ອນໄວອັນຄວນ ແລະ ອື່ນໆ.

## ການລົງທຶນ

ຍຸດທະສາດ ແລະ ກອບການປະຕິຮູບຂະແໜງສາທາລະນະສຸກປີ 2025 ຮັບຮູ້ເຖິງຄວາມຈຳເປັນຂອງການເຂົ້າເຖິງການບໍລິການດ້ານສຸຂະພາບທີ່ມີຄຸນນະພາບຢ່າງສະເໝີພາບ. ສປປ ລາວ ຕັ້ງເປົ້າທີ່ຈະບັນລຸຫຼັກປະກັນສາທາລະນະສຸກທົ່ວໂລກພາຍໃນປີ 2025 ດ້ວຍການຊ່ວຍເຫຼືອຈາກການລົງທຶນດ້ານນະວັດຕະກຳ ແລະ ການຮ່ວມມື ລະຫວ່າງລັດຖະບານ, ໜ່ວຍງານພັດທະນາ ແລະ ອົງການຈັດຕັ້ງສັງຄົມ. ໃນປີ 2019, ເງິນທຶນຈາກພາຍນອກກວມເອົາປະມານ 22,5 ສ່ວນຮ້ອຍຂອງລາຍຈ່າຍດ້ານສຸຂະພາບທັງໝົດ, ໂດຍມີຫຼາຍໂຄງການແນວຕັ້ງແມ່ນອີງໃສ່ການສະໜອງທຶນຂອງຜູ້ໃຫ້ທຶນເປັນຫຼັກ. ຕົວຢ່າງ:ການສະໜັບສະໜູນຈາກ Gavi ເຊິ່ງເປັນພັນທະມິດດ້ານວັກຊີນກັນພະຍາດ ມີຄວາມສຳຄັນໃນການຈັດຊື້ວັກຊີນ, ໂດຍຄາດວ່າຈະມີການຫັນໄປສູ່ການຈັດຊື້ໂດຍລັດຖະບານຢູ່ໃນຊຸມປີຂ້າງໜ້າ. ພາຍໃຕ້ຂໍ້ຕົກລົງເມື່ອບໍ່ດົນມານີ້ລະຫວ່າງກອງທຶນໂລກເພື່ອຕ້ານພະຍາດເອດ, ວັນນະໂລກ ແລະ ມາເລເລຍ, ທະນາຄານໂລກ ແລະ ລັດຖະບານອົດສະຕຣາລີ ຄາດວ່າໂຄງການການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ໂພຊະນາການ ຈະເພີ່ມການເຂົ້າເຖິງການດູແລສຸຂະພາບທີ່ມີຄຸນນະພາບ ແລະ ເສີມສ້າງລະບົບສາທາລະນະສຸກ ໂດຍສະເພາະການດູແລສຸຂະພາບຂັ້ນຕົ້ນໃນ ສປປ ລາວ.

ຮູບທີ 4.7

ດ້ວຍຄວາມຄາດຫວັງວ່າ ສປປ ລາວ ຈະຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2026, ຈຶ່ງສາມາດຄາດການໄດ້ວ່າການສະໜັບສະໜູນຈາກພາຍນອກຈະຫຼຸດລົງໄດ້ໃນໄລຍະກາງ. ພາຍໃຕ້ຂອບເຂດຖະແຫຼງການວຽງຈັນວ່າດ້ວຍການຮ່ວມມືເພື່ອການຮ່ວມພັດທະນາຢ່າງມີປະສິດທິຜົນ (2016-2025), ກະຊວງສາທາລະນະສຸກໄດ້ຜັນຂະຫຍາຍບັນດາທິດທາງເພີ່ມທະວີການເປັນເຈົ້າການແຫ່ງຊາດ ແລະ ສອດຄ່ອງກັບບັນດານະໂຍບາຍ ແລະ ລະບຽບການພາຍໃນປະເທດ, ມຸ່ງໄປເຖິງການສ້າງຕັ້ງການພົວພັນຮ່ວມມືຮອບດ້ານເພື່ອບັນລຸໝາກຜົນການພັດທະນາດ້ານບວກໃນຂະແໜງສາທາລະນະສຸກ (ອົງການອະນາໄມໂລກ, 2018b).

ການສະໜອງທຶນໃຫ້ແກ່ຂະແໜງສາທາລະນະສຸກເຫັນວ່າມີລາຍຈ່າຍເພີ່ມຂຶ້ນຢ່າງຕໍ່ເນື່ອງຈາກແຫຼ່ງທຶນສາທາລະນະໃນໄລຍະທົດສະວັດທີ່ຜ່ານມາ. ລາຍຈ່າຍດ້ານສາທາລະນະສຸກທົ່ວປະເທດຂອງລັດຖະບານຕໍ່ຫົວຄົນ ແລະ ໃນສ່ວນຂອງລາຍຈ່າຍດ້ານສຸຂະພາບທັງໝົດໄດ້ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງນັບແຕ່ກາງປີ 2011 ເປັນຕົ້ນມາ (ຮູບ 4.8). ແຕ່ວ່າລາຍຈ່າຍຂອງລັດຖະບານພາຍໃນປະເທດດ້ານສຸຂະພາບຕໍ່ຫົວຄົນກໍຍັງຖືວ່າຕໍ່າຫຼາຍເມື່ອທຽບໃສ່ກັບປະເທດອື່ນໆ (ອົງການອະນາໄມໂລກ, 2018b). ໃນປີ 2016 ໄດ້ຈັດສັນລາຍຈ່າຍພາຍໃນປະເທດ 5,9 ສ່ວນຮ້ອຍ ຕໍ່າກວ່າເປົ້າໝາຍການໃຊ້ຈ່າຍຂອງລັດຖະບານທົ່ວໄປທີ່ 9 ສ່ວນຮ້ອຍ (ອົງການອະນາໄມໂລກ, 2018b). ທັງລາຍຈ່າຍດ້ານສຸຂະພາບທັງໝົດເປັນສ່ວນຮ້ອຍຂອງ GDP ແລະ ລາຍຈ່າຍດ້ານສາທາລະນະສຸກທົ່ວໄປຂອງລັດລວມທັງການໃຫ້ທຶນຈາກຜູ້ໃຫ້ທຶນເປັນສ່ວນຂອງ GDP ໄດ້ເພີ່ມຂຶ້ນເລັກນ້ອຍໃນປີ 2019 ເມື່ອທຽບໃສ່ປີ 2018 (ຮູບ 4.9).

ຈະຕ້ອງມີການລົງທຶນເພີ່ມເຕີມໃນການດູແລສຸຂະພາບຂັ້ນຕົ້ນ ເພື່ອປັບປຸງການໃຫ້ບໍລິການ ແລະ ສາມາດຮ່ວມມືເພື່ອຊ່ວຍເຫຼືອກຸ່ມຄົນທີ່ດ້ອຍໂອກາດ ແລະ ກຸ່ມທີ່ມີຄວາມສ່ຽງ ລວມທັງໄວໜຸ່ມ, ແມ່ຍິງ ແລະ ຄົນທີ່ມີຄວາມພິການ. ການຫຼຸດລົງຂອງເງິນທຶນຈາກພາຍນອກທີ່ຄາດໄວ້ສຳລັບໂຄງການແນວຕັ້ງບາງຢ່າງ, ເຊັ່ນ ການສັກຢາກັນພະຍາດ, ໄຂ້ມາເລເລຍ, ວັນນະໂລກ ແລະ HIV, ຈະຮຽກຮ້ອງໃຫ້ລັດຖະບານເພີ່ມງົບປະມານດ້ານສຸຂະພາບພາຍໃນປະເທດ.

ຮູບທີ 4.8 / ຮູບທີ 4.9

ການສະໜອງທຶນໃນການດູແລສຸຂະພາບຖືກຕັດລົງສ່ວນໜຶ່ງຈາກອັດຕາພາສີຢາສູບທັງໝົດ 18,8 ສ່ວນຮ້ອຍ ຂອງລາຄາຂາຍຍ່ອຍຂອງຍີ່ຫໍ້ຢາສູບທີ່ຂາຍຫຼາຍທີ່ສຸດ, ຕໍ່າກວ່າຂໍ້ສະເໜີແນະຂອງອົງການອະນາໄມໂລກ ທີ່ໃຫ້ພາສີຄິດເປັນຢ່າງໜ້ອຍ 75 ສ່ວນຮ້ອຍ ຂອງລາຄາຂາຍຍ່ອຍຂອງຜະລິດຕະພັນຢາສູບ. ຂໍ້ຕົກລົງໄລຍະເວລາ 25 ປີກັບບໍລິສັດ Imperial Tobacco, ເຊິ່ງຂາຍ 90 ສ່ວນຮ້ອຍ ຂອງຜະລິດຕະພັນຢາສູບທັງໝົດທີ່ບໍລິໂພກໃນ ສປປ ລາວ, ຈຳກັດລັດຖະບານບໍ່ໃຫ້ຂຶ້ນພາສີຜະລິດຕະພັນຈົນຮອດປີ 2026. ອັດຕາພາສີທີ່ບໍ່ເໜັງຕີງ ບວກກັບລາຍໄດ້ທີ່ເພີ່ມຂຶ້ນ, ໝາຍຄວາມວ່າຢາສູບມີລາຄາທີ່ຖືກລົງຫຼາຍ. ນອກນີ້, ລັດຖະບານຍັງບໍ່ສາມາດນຳໃຊ້ປະໂຫຍດຈາກແຫຼ່ງລາຍຮັບນີ້ໄດ້. ໃນສະຖານະການສົມມຸດທີ່ບໍ່ມີຂໍ້ຕົກລົງກັບ ບໍລິສັດ Imperial Tobacco, ການຂຶ້ນພາສີໃນໄລຍະ 5 ປີຂ້າງໜ້າຈະສ້າງລາຍຮັບເກືອບ 1,8 ພັນຕື້ກີບ, ຄິດເປັນມູນຄ່າ 354 ຕື້ກີບຕໍ່ປີ, ເຊິ່ງທຽບເທົ່າກັບ 1/5 (22 ສ່ວນຮ້ອຍ) ຂອງລາຍຈ່າຍດ້ານສຸຂະພາບທັງໝົດຂອງລັດຖະບານໃນປີ 2018. (ກະຊວງສາທາລະນະສຸກ et al., 2021).

### ຂໍ້ລິເລີ່ມເພື່ອປັບປຸງສຸຂະພາບ ແລະ ການເປັນຢູ່ທີ່ດີຂອງໄວໜຸ່ມ

ລັດຖະບານໄດ້ລົງທຶນໃນການດູແລສຸຂະພາບຂັ້ນຕົ້ນ, ການເຂົ້າເຖິງການປັບປຸງນໍ້າ, ສຸຂາພິບານ ແລະ ການສຶກສາ, ນໍາໄປສູ່ການປັບປຸງສຸຂະພາບ ແລະ ອັດຕາການຕາຍຫຼຸດລົງ. ບັນດາໜ່ວຍງານຂອງສະຫະປະຊາຊາດ, ອົງການຈັດຕັ້ງສັງຄົມ ແລະ ບັນດາອົງການທີ່ໃຫ້ການຊ່ວຍເຫຼືອໄດ້ສະໜັບສະໜູນໂຄງການດ້ານສຸຂະພາບໃນຂົງເຂດທີ່ມີຄວາມສໍາຄັນຕໍ່ໄວໜຸ່ມ, ລວມທັງໃນການດູແລສຸຂະພາບຈິດ, ສຸຂະພາບທາງເພດ ແລະ ຈະເລີນພັນ, ການໃຊ້ຢາເສບຕິດ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ການບາດເຈັບ ຫຼື ເສຍຊີວິດຈາກອຸບັດຕິເຫດ. ພາກສ່ວນຕໍ່ໄປນີ້ໃຫ້ບົດສະຫຼຸບຂອງການລິເລີ່ມໃນປັດຈຸບັນ.

**ການດູແລສຸຂະພາບຈິດ:** ໃນປີ 2012, ກະຊວງສາທາລະນະສຸກໄດ້ປະກາດໃຊ້ຍຸດທະສາດວຽກງານສຸຂະພາບຈິດປີ 2020 ດ້ວຍ 5 ເສົາຄໍ້າຄື: ການພັດທະນາຊັບພະຍາກອນມະນຸດ, ຊຸກຍູ້ໃຫ້ຂະບວນການຄົ້ນຄວ້າ ແລະ ຄວາມສາມາດບົ່ມຊ້ອນ, ເພີ່ມທະວີການບໍລິການໃນລະດັບຊາດ ແລະ ທ້ອງຖິ່ນ, ການສົ່ງເສີມ ແລະ ຊຸກຍູ້ດ້ານສຸຂະພາບຈິດຕະຫຼອດຈົນນະໂຍບາຍ ແລະ ນິຕິກໍາ. ແຕ່ມີພຽງ 2,68 ສ່ວນຮ້ອຍ ຂອງງົບປະມານດ້ານສຸຂະພາບທີ່ໄດ້ຈັດສັນໃຫ້ວຽກງານການດູແລຄວາມຜິດປົກກະຕິທາງ ພຶດຕິກໍາ, ຈິດໃຈ ແລະ ລະບົບປະສາດໃນປີ 2019. ນັບຕັ້ງແຕ່ການແຜ່ລະບາດຂອງພະຍາດໂຄວິດ - 19 ເປັນຕົ້ນມາ, ສປປ ລາວ ໄດ້ເພີ່ມທະວີການຮັກສາສຸຂະພາບຈິດດ້ວຍການຊ່ວຍເຫຼືອຈາກອົງການທະນາຄານໂລກ ແລະ UNFPA. ມີປະມານ 9.676 ຄົນ ທີ່ຢູ່ໃນສູນຈໍາກັດບໍລິເວນ ແລະ ຊຸມຊົນໄດ້ຮັບການໃຫ້ຄໍາປຶກສາທາງດ້ານຈິດໃຈ; ສາຍດ່ວນເພື່ອຊ່ວຍເຫຼືອທີ່ສະໜອງໂດຍສູນກາງສະຫະພັນແມ່ຍິງລາວເພີ່ມຂຶ້ນ 197 ສ່ວນຮ້ອຍ ໃນປີ 2020 ເມື່ອທຽບໃສ່ປີຜ່ານມາ.

75 ສ່ວນຮ້ອຍ ຂອງປະຊາຊົນໃນເຂດຊົນນະບົດ ບໍ່ສາມາດເຂົ້າເຖິງການບໍລິການປິ່ນປົວສຸຂະພາບຈິດ, ກະຊວງສາທາລະນະສຸກຈຶ່ງໄດ້ກໍານົດໃຫ້ການເບິ່ງແຍງສຸຂະພາບຂັ້ນຕົ້ນເປັນເວທີທີ່ເໝາະສົມເພື່ອສົ່ງເສີມ ແລະ ປັບປຸງການສະໜອງການດູແລສຸຂະພາບຈິດໃນລະດັບບ້ານ. ອົງການອະນາໄມໂລກໄດ້ສະໜັບສະໜູນລັດຖະບານໃນການໃຫ້ບໍລິການດ້ານສຸຂະພາບຈິດໄລຍະຍາວໃນລະດັບນີ້ ແລະ ຈັດຕັ້ງປະຕິບັດເຄື່ອງມື, ແນວທາງ ແລະ ຂໍ້ສະເໜີແນະຕ່າງໆ.

**ການຊ່ວຍເຫຼືອດ້ານສຸຂະພາບຈະເລີນພັນ, ສຸຂະພາບແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ:** ໃນຈໍານວນ 10 ຕົວຊີ້ວັດທີ່ສະພາແຫ່ງຊາດກໍານົດເພື່ອຕິດຕາມຄວາມຄືບໜ້າຂອງຂະແໜງສາທາລະນະສຸກເພື່ອບັນລຸສຸຂະພາບທົ່ວປວງຊົນ ແລະ ເປົ້າໝາຍການພັດທະນາແບບຍືນຍົງກ່ຽວກັບສຸຂະພາບມີ 7 ຕົວຊີ້ວັດທີ່ສຸມໃສ່ຂົງເຂດນີ້. ຍ້ອນເຫັນເຖິງຄວາມສໍາຄັນດັ່ງກ່າວ, ສປປ ລາວ

## ກ່ອງຂໍ້ຄວາມ 4.6: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX

**ຜົນໄດ້ຮັບ** 3
— ປະຊາຊົນມີຊີວິດການເປັນຢູ່ທີ່ດີຂຶ້ນ

**ຜົນໄດ້ຮັບ 4**
— ສົ່ງເສີມ ແລະ ພັດທະນາໄວໜຸ່ມ ເພື່ອປັບປຸງທຶນມະນຸດ ແລະ ການມີສ່ວນຮ່ວມໃນແຮງງານ

**ເປົ້າໝາຍຫຼັກ ແລະ ຕົວຊີ້ວັດ**

— ເພີ່ມການໃຫ້ຄໍາປຶກສາແກ່ໄວໜຸ່ມທີ່ມີອາພະຊຶມເສົ້າ ແລະ ທໍ້ຖອຍ ຫຼື ຜູ້ທີ່ປະສົບກັບບັນຫາອື່ນໆເປັນ 15 ສ່ວນຮ້ອຍ ຂອງປະຊາກອນໄວໜຸ່ມ.
— ໃຫ້ຄໍາປຶກສາແກ່ໄວໜຸ່ມທີ່ມີຄວາມຮູ້ສຶກຊຶມເສົ້າ, ທໍ້ຖອຍ, ຂາດທິດທາງທີ່ຊັດເຈນ ຫຼື ປະສົບກັບບັນຫາອື່ນໆ.
— ສົ່ງເສີມສຸຂະພາບຂອງໄວໜຸ່ມໂດຍການໃຫ້ຄວາມຮູ້ກ່ຽວກັບສຸຂະພາບຈະເລີນພັນ, ການສຶກສາທາງເພດ, HIV/AIDS ແລະ ຜົນກະທົບທີ່ເປັນອັນຕະລາຍຂອງການໃຊ້ສານເສບຕິດ.
— ສ້າງໂອກາດໃຫ້ໄວໜຸ່ມມີສ່ວນຮ່ວມໃນຂະບວນການຕັດສິນໃຈກ່ຽວກັບສຸຂະພາບຂອງຕົນເອງຫຼາຍຂຶ້ນ.




### ຮູບ 4.7: ຄ່າໃຊ້ຈ່າຍດ້ານສຸຂະພາບທັງໝົດເປັນສ່ວນ ຂອງ GDP, ຄິດເປັນສ່ວນຮ້ອຍ

ແຫຼ່ງຂໍ້ມູນ: ບົດລາຍງານບັນຊີສຸຂະພາບແຫ່ງຊາດ, 2019 ແລະ ອົງການອະນາໄມໂລກ, 2022



ໄດ້ປະກາດໃຊ້ກົດໝາຍ, ມາດຕະຖານ, ທິດທາງ, ນະໂຍບາຍ ແລະ ໂຄງການທີ່ກ່ຽວຂ້ອງເຖິງລະບົບສຸຂະພາບທີ່ຈຳເປັນ ແລະ ປັບປຸງການບໍລິການໃຫ້ດີຂຶ້ນ. ພະຍາຍາມທີ່ຈະກະຕຸ້ນການປັບປຸງໃນການແຊກແຊງສຳລັບແມ່ຍິງ ແລະ ເດັກນ້ອຍ. ຢ່າງໃດກໍຕາມ, ອົງກອນໄດ້ໃຫ້ຄວາມສຳຄັນກັບການຖືພາໃນໄວໜຸ່ມພຽງເລັກນ້ອຍ, ເຖິງວ່າມັນຈະມີອັດຕາສ່ວນສູງ ຫຼື ກ່ຽວກັບໂຄງການສະເພາະດ້ານສຸຂະພາບຂອງໄວໜຸ່ມກໍຕາມ.

**ການດູແລສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ:** ສຳລັບກົດລະບຽບທີ່ຮັບປະກັນວ່າ ແມ່ຍິງ ແລະ ຜູ້ຊາຍທີ່ມີອາຍຸ 15 ປີຂຶ້ນໄປຈະສາມາດເຂົ້າເຖິງການດູແລທາງເພດ ແລະ ສຸຂະພາບຈະເລີນພັນ, ຂໍ້ມູນຂ່າວສານ ແລະ ການສຶກສາຢ່າງເຕັມທີ່ ແລະ ເທົ່າທຽມກັນ, ສປປ ລາວ ໄດ້ຄະແນນ 96 ຈາກ100 ຄະແນນ ຕາມຕົວຊີ້ວັດ ເປົ້າໝາຍການພັດທະນາແບບຍືນຍົງ 5.6.2. (ເປົ້າໝາຍ 5.6 ກ່ຽວຂ້ອງກັບການຮັບປະກັນການເຂົ້າເຖິງສຸຂະພາບທາງເພດ ແລະ ຈະເລີນພັນ ແລະ ສິດຈະເລີນພັນ). ລັດຖະບານໄດ້ປະສົມປະສານການເຂົ້າເຖິງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ລວມທັງການວາງແຜນຄອບຄົວແບບສະໝັກໃຈ ແລະ ສຸຂະພາບແມ່ ໃນຂອບແຫ່ງຊາດ. ເຊິ່ງລວມມີແຜນປະຕິບັດງານການວາງແຜນຄອບຄົວແຫ່ງຊາດ ແລະ ຍຸດທະສາດສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ໄວໜຸ່ມ.

ບັນດາຜູ້ໃຫ້ທຶນສາກົນສະໜັບສະໜູນແຜນງານ ແລະ ຍຸດທະສາດເຫຼົ່ານີ້ ເພື່ອປັບປຸງຄຸນນະພາບການບໍລິການແບບປະສົມປະສານ, ໂດຍສະເພາະໃນບັນດາປະຊາກອນທີ່ດ້ອຍໂອກາດ ແລະ ມີຄວາມສ່ຽງທີ່ສຸດ ເຊັ່ນ: ໄວໜຸ່ມ ແລະ ຊົນເຜົ່າ. ຕົວຢ່າງຂອງຄວາມພະຍາຍາມດັ່ງກ່າວລວມມີການໂຄສະນາສົ່ງເສີມ ເປົ້າໝາຍການພັດທະນາແບບຍືນຍົງທີ່ກ່ຽວຂ້ອງກັບສຸຂະພາບ ແລະ ການເປັນຢູ່ທີ່ດີຂອງໄວໜຸ່ມ (ກ່ອງຂໍ້ຄວາມ 4.4), ແຜນງານນາງນ້ອຍ ເພື່ອການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມຍິງ (ກ່ອງຂໍ້ຄວາມ 4.5), ການສຶກສາທາງເພດແບບອອນລາຍຢ່າງຄອບຄຸມ ແລະ ການສະໜອງຜະລິດຕະພັນອະນາໄມປະຈຳເດືອນສຳລັບແຮງງານເຄື່ອນຍ້າຍແມ່ຍິງທີ່ເດີນທາງກັບຄືນປະເທດ. UNFPA ໄດ້ພັດທະນາຫຼັກສູດເພດສຶກສາຮອບດ້ານ ພ້ອມທັງອຸປະກອນການຝຶກອົບຮົມຄູ ໂດຍເຊື່ອມສານເຂົ້າໃນຫຼັກສູດໂຮງຮຽນຊັ້ນມັດທະຍົມ, ເຕັກນິກ-ວິຊາຊີບ ແລະ ສະຖາບັນສ້າງຄູ 8 ແຫ່ງ (UNFPA, 2020).

**ການປິ່ນປົວດ້ວຍຢາ:** ສູນການປິ່ນປົວໃນປັດຈຸບັນ ແມ່ນອີງໃສ່ການລ້າງສານພິດ ແລະ ການແຊກແຊງທີ່ບໍ່ອີງໃສ່ຫຼັກຖານ ຫຼື ຄວາມຕ້ອງການຂອງຄົນເຈັບແຕ່ລະຄົນ, ເສລີພາບຂອງຄົນເຈັບມັກຈະຖືກຈຳກັດເມື່ອເຂົ້າໄປໃນສະຖານບໍລິການສຸຂະພາບ. ດ້ວຍເຫດຜົນເຫຼົ່ານີ້,ອັດຕາການກັບຄືນມາເຈັບປ່ວຍຄືນມີສູງ. ມີສູນປິ່ນປົວຄົນເຈັບພາຍໃນທັງໝົດ 17 ແຫ່ງ ທີ່ພວມເປີດດຳເນີນການ; ປະມານ 4,000 ຄົນຖືກສົ່ງໄປຫາພວກເຂົາຕໍ່ປີ (UNODC ແລະ UNAIDS, 2022).

## ຮູບ 4.8: ຄ່າໃຊ້ຈ່າຍດ້ານສຸຂະພາບຂອງລັດຖະບານພາຍໃນປະເທດຕໍ່ຫົວຄົນ, ເປັນເງິນໂດລາ ແລະ ອັດຕາສ່ວນຂອງລາຍຈ່າຍດ້ານສຸຂະພາບທັງໝົດ.

ແຫຼ່ງຂໍ້ມູນ: ບົດລາຍງານບັນຊີສຸຂະພາບແຫ່ງຊາດ, 2019.








## ຮູບ 4.9: ຄ່າໃຊ້ຈ່າຍດ້ານສຸຂະພາບໂດຍລວມ ຂອງລັດຖະບານພາຍໃນປະເທດ ເປັນສ່ວນແບ່ງຂອງ GDP, ຄິດເປັນສ່ວນຮ້ອຍ

ແຫຼ່ງຂໍ້ມູນ: ບົດລາຍງານບັນຊີສຸຂະພາບແຫ່ງຊາດ, 2019.




ໃນຊຸມປີມໍ່ໆມານີ້, ສປປ ລາວ ໄດ້ມີຄວາມຄືບໜ້າໃນການແນະນຳການບໍລິການປິ່ນປົວໃນຊຸມຊົນ, ໄດ້ຮັບການຊຸກຍູ້ຈາກອົງການ UNODC. ຮູບແບບການດູແລນີ້ສະໜອງທາງເລືອກໂດຍສະໝັກໃຈ. ມັນມີລາຄາທີ່ຖືກກວ່າ ແລະ ໃຫ້ຜົນໄດ້ຮັບດ້ານສຸຂະພາບທີ່ດີກວ່າ, ລວມທັງອັດຕາຄວາມຮ້າຍແຮງຂຶ້ນຂອງພະຍາດແມ່ນຕ່ຳ. ນັບຕັ້ງແຕ່ຮູບແບບດັ່ງກ່າວໄດ້ເປີດຕົວໃນປີ 2014 ທີ່ນະຄອນຫຼວງວຽງຈັນ, ມັນໄດ້ຂະຫຍາຍອອກໄປຢ່າງໄວວາ. ປັດຈຸບັນ, ການປິ່ນປົວແບບຊຸມຊົນແມ່ນໄດ້ໃຫ້ບໍລິການຢູ່ໂຮງໝໍເມືອງ 34 ແຫ່ງໃນ 6 ແຂວງ ແລະ ນະຄອນຫຼວງວຽງຈັນ. ສູນເຫຼົ່ານີ້ໄດ້ໃຫ້ບໍລິການຜູ້ທີ່ມີຄວາມຜິດປົກກະຕິຈາກການໃຊ້ຢາຕ່າງໆ 3.469 ຄົນ ແລະ ໃຫ້ຄຳປຶກສາຫຼາຍກວ່າ 12.759 ຄັ້ງ (ASEAN-NARCO, 2018).

**ຄວາມປອດໄພທາງຖະໜົນ:** ຄະນະກຳມະການຄວາມປອດໄພທາງຖະໜົນແຫ່ງຊາດ ໄດ້ຮັບທຶນຈາກງົບປະມານແຫ່ງຊາດ ແລະ ມີແຜນຍຸດທະສາດດ້ານຄວາມປອດໄພທາງຖະໜົນທີ່ໄດ້ຮັບທຶນບາງສ່ວນ. ສິ່ງອຳນວຍຄວາມສະດວກດ້ານຄວາມປອດໄພທາງຖະໜົນທົ່ວໂລກຂອງທະນາຄານໂລກສະໜັບສະໜູນ ຂະບວນການຄວາມປອດໄພທາງຖະໜົນສຳລັບນັກຮຽນ ແລະ ຊຸມຊົນທີ່ອາໄສຢູ່ຕາມຖະໜົນໃນໂຄງການ ແລະ ໃຫ້ການສະໜັບສະໜູນຕຳຫຼວດ. ດ້ານການບັງຄັບໃຊ້, ການກວດສອບຄວາມປອດໄພທາງຖະໜົນ ແລະ ການປະເມີນໂຄງສ້າງພື້ນຖານ, ພ້ອມກັບການພັດທະນາຖານຂໍ້ມູນອອນລາຍເພື່ອບັນທຶກອຸບັດຕິເຫດ (ທະນາຄານໂລກ, 2021). ໃນປັດຈຸບັນກະຊວງສາທາລະນະສຸກຮ່ວມກັບ ອົງການອະນາໄມໂລກພວມຮ່າງດຳລັດວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ເພື່ອແນໃສ່ສ້າງມາດຕະການສຳຄັນເພື່ອຄວາມປອດໄພທາງຖະໜົນເຊັ່ນ 'ດື່ມບໍ່ຂັບ'. ກະຊວງໂຍທາທິການ ແລະ ຂົນສົ່ງ ຮ່ວມມືກັບກະຊວງສາທາລະນະສຸກ ແລະ ອົງການອະນາໄມໂລກ, ສືບຕໍ່ເພີ່ມທະວີການໂຄສະນາສົ່ງເສີມຄວາມປອດໄພທາງຖະໜົນ ແລະ ການເຜີຍແຜ່ປູກຈິດສຳນຶກທີ່ແນໃສ່ການໃຊ້ໝວກກັນກະທົບ ແລະ ສາຍຮັດນິລະໄພ, ຫ້າມຂັບຂີ່ລົດຫຼັງຈາກດື່ມເຫຼົ້າ.

ເຖິງວ່າການປະຕິຮູບດ້ານການດູແລສຸຂະພາບ, ການພັດທະນານະໂຍບາຍ ແລະ ການປັບປຸງການລົງທຶນໃນການບໍລິການດ້ານສຸຂະພາບແມ່ນເຫັນໄດ້ຊັດເຈນຢູ່ໃນ ສປປ ລາວ, ແຕ່ຂໍ້ລິເລີ່ມທີ່ມີສ່ວນຮ່ວມໂດຍກົງ ແລະ ຜົນປະໂຫຍດຂອງໄວໜຸ່ມຍັງຂາດຜົນກະທົບໃນທາງປະຕິບັດ. ໄວໜຸ່ມໄດ້ຮັບຮູ້ໃນການສົນທະນາກຸ່ມສະເພາະວ່າພວກເຂົາປະເຊີນກັບສິ່ງທ້າທາຍທີ່ແຕກຕ່າງກັນ ໃນການຮັບຮູ້ເຖິງສິດດ້ານສຸຂະພາບຂອງພວກເຂົາ ໂດຍອ້າງເຖິງຄວາມຫຍຸ້ງຍາກໃນການເຂົ້າເຖິງສະຖານທີ່ປິ່ນປົວສຸຂະພາບຢູ່ເຂດຊົນນະບົດ, ການຂົ່ມເຫັງ ໂດຍບຸກຄະລາກອນຮັກສາສຸຂະພາບ ເນື່ອງຈາກພື້ນຖານເສດຖະກິດ-ສັງຄົມຂອງພວກເຂົາ, ການບໍລິການທີ່ມີຄຸນນະພາບຕ່ຳ ແລະ ບໍ່ສາມາດເຂົ້າເຖິງຂໍ້ມູນດ້ານສຸຂະພາບທີ່ມີຄວາມສຳຄັນຕໍ່ພວກເຂົາ. ຂໍ້ລິເລີ່ມໃນປັດຈຸບັນຄວນພິຈາລະນາຕື່ມອີກກ່ຽວກັບຄວາມຕ້ອງການສະເພາະ ແລະ ບັນຫາບູລິມະສິດຂອງໄວໜຸ່ມໃນ ສປປ ລາວ,

ລວມເຖິງການຂະຫຍາຍການເຂົ້າເຖິງບໍລິການດ້ານສຸຂະພາບຈິດ, ການບໍລິການສຸຂະພາບທາງເພດ ແລະ ຈະເລີນພັນ ຕະຫຼອດຈົນຂໍ້ມູນຂ່າວສານ ແລະ ໂຄງການປ້ອງກັນ, ເຊິ່ງລວມມີການຫຼຸດຜ່ອນການໃຊ້ເຫຼົ້າ ແລະ ການໃຊ້ສານເສບຕິດໄວ ແລະ ຄວາມສ່ຽງຕໍ່ການບາດເຈັບ ຫຼືເສຍຊີວິດໃນອຸບັດຕິເຫດ. ການລົງທຶນດັ່ງກ່າວຈະຊ່ວຍໃຫ້ໄວໜຸ່ມສາມາດຕັດສິນໃຈໄດ້ຢ່າງມີຂໍ້ມູນ ເຊິ່ງເປັນເສັ້ນທາງພັດທະນາທີ່ປອດໄພ ແລະ ສຸຂະພາບດີໄປສູ່ການເປັນຜູ້ໃຫຍ່.

## 4.4 ຂໍ້ສະເໜີແນະ

ໃນຂະນະທີ່ລັດຖະບານສົມທົບກັບບັນດາອົງການຈັດຕັ້ງສາກົນໄດ້ປະຕິບັດບັນດາໂຄງການກ່ຽວກັບສຸຂະພາບທີ່ໜ້າຍ້ອງຍໍ, ໃນຫຼາຍຂົງເຂດທີ່ສຳຄັນສຳລັບເດັກນ້ອຍ, ມີໂຄງການຈຳນວນໜ້ອຍທີ່ແນໃສ່ໄວໜຸ່ມ ແລະ ເຍົາວະຊົນ. ໄດ້ມີການດຳເນີນການພຽງເລັກນ້ອຍໃນແງ່ຂອງການປ່ຽນທັດສະນະຄະຕິຕໍ່ການແຕ່ງງານກ່ອນໄວອັນຄວນ ແລະ ກິດຈະກຳທາງເພດກ່ອນໄວອັນຄວນ ຫຼື ໃຫ້ການສຶກສາຮອບດ້ານກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ໂດຍສະເພາະຢູ່ເຂດຊົນນະບົດທີ່ມີອັດຕາການເກີດລູກສູງ. ຕ້ອງມີຄວາມພະຍາຍາມເພີ່ມເຕີມເພື່ອຮັບປະກັນການດູແລສຸຂະພາບເຖິງໄວໜຸ່ມທີ່ດ້ອຍໂອກາດ ແລະ ຢູ່ເຂດຫ່າງໄກສອກຫຼີກ. ການປຶກສາຫາລືກັບໄວໜຸ່ມຄວນເປັນພື້ນຖານໃນການອອກແບບກິດຈະກຳຕໍ່ການສ້າງຈິດສຳນຶກ ແລະ ແຜນງານທີ່ດີກວ່າເພື່ອປ້ອງກັນ ແລະ ຫຼຸດຜ່ອນການແຜ່ລະບາດຂອງເຊື້ອ HIV/AIDS. ການຮ່ວມມືຊ່ວຍເຫຼືອຢູ່ນອກຂະແໜງສາທາລະນະສຸກໄດ້ສຸມໃສ່ການປ່ຽນແປງທາງດ້ານສັງຄົມ ແລະ ພຶດຕິກຳທີ່ເປັນແບບຢ່າງ, ກ່ຽວກັບວິທີປະຕິບັດໃນການຂັບຂີ່, ການໃຊ້ສາຍຮັດນິລະໄພ ແລະ ສິ່ງຈູງໃຈທີ່ຈະຮັກສາໄວໜຸ່ມຍິງຢູ່ໃນໂຮງຮຽນ ຍັງມີຄວາມຈຳເປັນເພື່ອປົກປ້ອງສຸຂະພາບ ແລະ ການເປັນຢູ່ທີ່ດີຂອງໄວໜຸ່ມໃຫ້ດີຂຶ້ນ. ບຸລິມະສິດຫຼາຍອັນແມ່ນໄດ້ສົນທະນາຂ້າງລຸ່ມນີ້.

### ຍົກລະດັບການບໍລິການດູແລສຸຂະພາບຈິດສຳລັບໄວໜຸ່ມ

ເຖິງວ່າຈະມີການປະກາດໃຊ້ຍຸດທະສາດສຸຂະພາບຈິດປີ 2020, ການບໍລິການສຸຂະພາບຈິດຍັງຄົງເປັນພື້ນຖານ ແລະ ບໍ່ໄດ້ປະສົມປະສານເຂົ້າໃນການບໍລິການດູແລສຸຂະພາບທົ່ວໄປ. ການເສີມສ້າງຄວາມສາມາດໃນການດູແລສຸຂະພາບຈິດລວມທັງການຝຶກອົບຮົມຜູ້ຊ່ຽວຊານດ້ານສຸຂະພາບ, ຊຸກຍູ້ໃຫ້ມີການຄົ້ນຄວ້າເພີ່ມເຕີມກ່ຽວກັບສາເຫດ ແລະ ປະຫວັດຂອງຄົນທີ່ມີຄວາມສ່ຽງຕໍ່ການເປັນພະຍາດທາງຈິດ, ເພີ່ມທະວີການບໍລິການທັງລະດັບຊາດ ແລະ ທ້ອງຖິ່ນ, ສ້າງຄວາມຮັບຮູ້ໃຫ້ຫຼາຍກວ່າເກົ່າກ່ຽວກັບບັນຫາສຸຂະພາບຈິດ, ສະໜັບສະໜູນ ແລະ ເສີມຂະຫຍາຍບັນດາອົງການຄູ່ຮ່ວມມື, ເຊັ່ນ: ອົງການຈັດຕັ້ງທາງສັງຄົມ, ເພື່ອຈັດຕັ້ງປະຕິບັດໂຄງການທີ່ກ່ຽວຂ້ອງ, ໂດຍສະເພາະສຳລັບຜູ້ທີ່ມີຄວາມສ່ຽງ, ເຊັ່ນ: ເຍົາວະຊົນ, ໄວໜຸ່ມ ແລະ ຄົນທີ່ມີຄວາມພິການ.

**ເພີ່ມທະວີຄວາມສາມາດຂອງຜູ້ຊ່ຽວຊານດ້ານສຸຂະພາບຈິດ.** ການສະໜອງທຶນ ແລະ ການສະໜັບສະໜູນທີ່ພຽງພໍແມ່ນມີຄວາມຈຳເປັນເພື່ອເສີມສ້າງຄວາມສາມາດໃນການສະໜອງການບໍລິການດ້ານສຸຂະພາບຈິດໃຫ້ແກ່ກຸ່ມຄົນດ້ອຍໂອກາດ ແລະ ກຸ່ມທີ່ມີຄວາມສ່ຽງ, ລວມທັງໄວໜຸ່ມ, ໄວໜຸ່ມທີ່ມີຄວາມຫຼາກຫຼາຍທາງເພດ ແລະ ຄົນໃຫ້ມີຄວາມພິການ. ການຂາດແຄນຜູ້ຊ່ຽວຊານດ້ານສຸຂະພາບຈິດຢ່າງຫຼວງຫຼາຍຮຽກຮ້ອງໃຫ້ມີການສະໜອງທຶນເພີ່ມເຕີມເພື່ອຝຶກອົບຮົມບຸກຄະລາກອນດ້ານສຸຂະພາບ. ກົນໄກການເງິນທີ່ຕັ້ງຂຶ້ນກັບບັນດາອົງການສາກົນ ແລະ ຄູ່ຮ່ວມມືພັດທະນາ ສາມາດທົດລອງ ແລະ ຂະຫຍາຍການຮ່ວມມືຊ່ວຍເຫຼືອຢ່າງມີປະສິດທິຜົນ.ຂະຫຍາຍໂຄງການຕ້ານການຂົ່ມເຫງ (bullying) ໃນໂຮງຮຽນ. ການບໍລິການສຸຂະພາບຈິດທີ່ແນໃສ່ໄວໜຸ່ມຄວນເປັນນອກເໜືອກວ່າການໃຫ້ບໍລິການດູແລທາງດ້ານສຸຂະພາບຈິດ, ແຕ່ຍັງຕອບສະໜອງຕໍ່ສາເຫດຂອງຄວາມກົດດັນ ແລະ ຄວາມກັງວົນທີ່ເພີ່ມຂຶ້ນເຊັ່ນ: ການຂົ່ມເຫັງ. ການໂຄສະນາສົ່ງເສີມການຕ້ານການຂົ່ມເຫັງເພື່ອເຂົ້າເຖິງໄວໜຸ່ມ, ພໍ່ແມ່ ແລະ ຄູສອນຈະຊ່ວຍປັບປຸງຄວາມເຂົ້າໃຈກ່ຽວກັບຜົນກະທົບທາງລົບຂອງການຂົ່ມເຫັງ ແລະ ຫຼຸດຜ່ອນການຖືກດູຖູກທີ່ມັກຈະກ່ຽວຂ້ອງກັບຜູ້ເຄາະຮ້າຍຈາກການຂົ່ມເຫັງ. ການໂຄສະນາດັ່ງກ່າວຄວນໄດ້ຮັບການສົ່ງເສີມໂດຍໂຄງການການສຶກສາສື່ສັງຄົມອອນລາຍ ທີ່ມີຄວາມຮັບຜິດຊອບ ເພື່ອເຮັດໃຫ້ໄວໜຸ່ມສາມາດຈັດການກັບການຂົ່ມເຫັງອອນລາຍໄດ້ດີຂຶ້ນ ແລະ ການຮັກສາຮູບລັກຂອງຮ່າງກາຍທີ່ມີສຸຂະພາບດີ ແລະ ຄວາມນັບຖືຕົນເອງໃນເວລາທີ່ໃຊ້ເວທີອອນລາຍ. ວິທີການທີ່ສອດຄ່ອງໃນການຄຸ້ມຄອງຄວາມກົດດັນຂອງໄວໜຸ່ມ ແລະ ການຂົ່ມເຫັງໃນໂຮງຮຽນສາມາດຖືກຈັດຕັ້ງປະຕິບັດໂດຍຜ່ານໂຄງການສ້າງແຮງຈູງໃຈທີ່ໂຮງຮຽນ, ເຊິ່ງໃຫ້ຄະແນນໂຮງຮຽນ ໂດຍອີງໃສ່ຜົນງານຂອງພວກເຂົາໃນການສ້າງສະພາບແວດລ້ອມທາງສັງຄົມທີ່ປອດໄພສຳລັບນັກຮຽນທຸກຄົນ. ລະບົບການໃຫ້ຄະແນນແມ່ນຈະສົມທົບກັບການຝຶກອົບຮົມຄູສອນ ແລະ ຄະນະບໍລິຫານໂຮງຮຽນເພື່ອປູກຈິດສຳນຶກດ້ານສຸຂະພາບຈິດ, ສ້າງຄວາມອາດສາມາດຕ້ານທານຕໍ່ຄວາມກົດດັນຈາກໝູ່ເພື່ອນຂອງໄວໜຸ່ມ, ມີມາດຕະການປ້ອງກັນ ແລະ ຕອບສະໜອງຕໍ່ການຂົ່ມເຫັງ ແລະ ພຶດຕິກຳຕໍ່ຕ້ານສັງຄົມ.

**ເພີ່ມຄວາມຮູ້ດ້ານສຸຂະພາບຈິດຂອງຜູ້ໃຫ້ບໍລິການທີ່ບໍ່ແມ່ນຜູ້ຊ່ຽວຊານ**. ການປັບປຸງຄວາມຮັບຮູ້ດ້ານສຸຂະພາບຈິດ ແລະຄວາມສາມາດຂອງຜູ້ໃຫ້ບໍລິການທີ່ບໍ່ແມ່ນຜູ້ຊ່ຽວຊານສາມາດຊ່ວຍປ້ອງກັນຄວາມສ່ຽງດ້ານສຸຂະພາບຈິດ ແລະ ນຳໃຊ້ການແຊກແຊງໃນເບື້ອງຕົ້ນ ສຳລັບໄວໜຸ່ມທີ່ປະສົບກັບຄວາມກັງວົນສຸຂະພາບຈິດ, ຄວາມກົດດັນ ຫຼື ຄວາມກັງວົນ. ການຝຶກອົບຮົມຜູ້ໃຫ້ບໍລິການທີ່ບໍ່ແມ່ນຜູ້ຊ່ຽວຊານເຊັ່ນ: ຄູ, ຄູຝຶກສອນ (coach), ພຣະສົງ,ທ່ານໝໍບັດທົ່ວໄປ ແລະ ອື່ນໆ, ໃນການປະຖົມພະຍາບານທາງດ້ານຈິດຕະສັງຄົມ, ສາມາດເຮັດໃຫ້ຜູ້ຊ່ຽວຊານຮັບມືໃນການມີສ່ວນຮ່ວມຂອງໄວໜຸ່ມໄດ້ດີຂຶ້ນ, ມີທັກສະທີ່ຈຳເປັນໃນການລະບຸສັນຍານເບື້ອງຕົ້ນຂອງບັນຫາທີ່ກ່ຽວຂ້ອງກັບສຸຂະພາບຈິດ, ສະໜອງການສະໜັບສະໜູນທາງດ້ານຈິດຕະສັງຄົມຂັ້ນພື້ນຖານ ແລະ ມີຄວາມຮັບຜິດຊອບທາງວັດທະນະທຳ ແລະ ການຊ່ວຍເຫຼືອໄວໜຸ່ມໃນການຄົ້ນຫາການບໍລິການປິ່ນປົວສຸຂະພາບຈິດຕາມຄວາມຕ້ອງການ. ການດຳເນີນການດັ່ງກ່າວສາມາດໄດ້ຮັບການປັບປຸງຕື່ມອີກໂດຍການຮັບປະກັນວ່າຜູ້ໃຫ້ບໍລິການທີ່ບໍ່ແມ່ນຜູ້ຊ່ຽວຊານແມ່ນເຊື່ອມຕໍ່ກັບລະບົບການສົ່ງຕໍ່ທີ່ເກີດຂຶ້ນໃໝ່ ແລະ ໂດຍການເຊື່ອມໂຍງທີ່ໂດດເດັ່ນລະຫວ່າງສູນສຸຂະພາບຊຸມຊົນ ແລະ ການບໍລິການອື່ນໆ.

**ເພີ່ມສະຖານທີ່ປອດໄພ ແລະ ການບໍລິການຊ່ວຍເຫຼືອທີ່ເປັນມິດກັບໄວໜຸ່ມ.** ການພົວພັນຂອງໄວໜຸ່ມກັບໝູ່ເພື່ອນ ແລະ ສະພາບແວດລ້ອມແມ່ນມີຄວາມສຳຄັນຕໍ່ການພັດທະນາຂອງພວກເຂົາ. ການເພີ່ມຈຳນວນພື້ນທີ່ປອດໄພທີ່ເປັນມິດກັບໄວໜຸ່ມສາມາດເປັນບາດກ້າວທີ່ສຳຄັນໃນການຮັບປະກັນໃຫ້ໄວໜຸ່ມມີຄວາມສາມາດທີ່ຈຳເປັນ ເພື່ອພັດທະນາສາຍພົວພັນໃນທາງບວກ ແລະ ສຸຂະພາບກັບເພື່ອນມິດຂອງພວກເຂົາໃນຊ່ວງປີແຫ່ງການພັດທະນາ. ສະຖານທີ່ດັ່ງກ່າວສາມາດປັບປຸງເຄືອຂ່າຍສະໜັບສະໜູນ ແລະ ການບໍລິການສຳລັບກຸ່ມທີ່ຫຼາກຫຼາຍ ແລະ ປະຊາກອນທີ່ດ້ອຍໂອກາດ, ລວມທັງ ໄວໜຸ່ມທີ່ມີຄວາມຫຼາກຫຼາຍທາງເພດ ແລະ ຄົນທີ່ມີຄວາມພິການ, ເສີມສ້າງໂຄງການ ແລະ ກິດຈະກຳຂອງກຸ່ມສະໜັບສະໜູນແບບໝູ່ຕໍ່ໝູ່. ສູນສັນທະນາການຊຸມຊົນທີ່ມີຢູ່ແລ້ວສາມາດສະໜອງກິດຈະກຳສຳລັບໄວໜຸ່ມເພື່ອສົ່ງເສີມສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ.

**ຂະຫຍາຍໂຄງການປູກຈິດສຳນຶກກ່ຽວກັບຢາເສບຕິດ ແລະ ຟື້ນຟູຊຸມຊົນສຳລັບໄວໜຸ່ມ.** ການຄົ້ນຄວ້າຈາກທົ່ວອາຊີຕາເວັນອອກສຽງໃຕ້ໄດ້ຊີ້ໃຫ້ເຫັນເຖິງຄວາມກ່ຽວຂ້ອງກັນທີ່ເຂັ້ມແຂງລະຫວ່າງບັນຫາສຸຂະພາບຈິດ ແລະ ການໃຊ້ສານເສບຕິດໃນໄວໜຸ່ມ. ຍ້ອນວ່າຜູ້ໃຊ້ຢາເສບຕິດທີ່ອາຍຸນ້ອຍຢູ່ໃນໄລຍະພັດທະນາການທີ່ອ່ອນໄຫວທັງຮ່າງກາຍ ແລະ ຈິດໃຈ, ຈຶ່ງຄວນພັດທະນາທາງເລືອກອື່ນແທນການກັກຂັງຜູ້ໃຊ້ຢາເສບຕິດໃນທີ່ຢູ່ອາໄສ, ເຊັ່ນ: ການບໍລິການແບບສະໝັກໃຈໃນຊຸມຊົນທີ່ເໝາະສົມທາງດ້ານການແພດ ແລະ ສອດຄ່ອງກັບມາດຕະຖານສາກົນ. ຄວາມຄືບໜ້າໃນການຂະຫຍາຍການປິ່ນປົວແບບຊຸມຊົນສາມາດຂະຫຍາຍອອກໄປໄດ້,ໂດຍສະເພາະຜູ້ກະທຳຜິດໃນໄວໜຸ່ມ ແລະ ຜູ້ກະທຳຜິດຄັ້ງທຳອິດ. ບັນດາໂຄງການດັ່ງກ່າວ ຄວນໄດ້ຮັບການເສີມສ້າງດ້ວຍການຝຶກອົບຮົມວິຊາຊີບ ເພື່ອຊ່ວຍເຫຼືອໄວໜຸ່ມຜູ້ຕິດຢາເສບຕິດ ເຂົ້າໃນການແກ້ໄຂການຕິດຢາເສບຕິດ.

**ປະຕິບັດການເງິນດ້ານສຸຂະພາບທີ່ຕິດພັນກັບພາສີຢາສູບ.** ລັດຖະບານບໍ່ຄວນຕໍ່ເວລາສັນຍາອະນຸຍາດການລົງທຶນເກີນກວ່າປີ 2026 ແລະ ຂຶ້ນພາສີຢາສູບຢ່າງຕໍ່ເນື່ອງ, ໂດຍເພີ່ມຂຶ້ນເປັນ 4 ເທົ່າຂອງຄ່າສູບຢາໃນປີ 2034. ນີ້ບໍ່ພຽງແຕ່ຈະຫຼຸດຜ່ອນພາລະດ້ານສຸຂະພາບຂອງການໃຊ້ຢາສູບເທົ່ານັ້ນ, ແຕ່ຍັງສ້າງລາຍຮັບທີ່ສຳຄັນສຳລັບການລົງທຶນຢ່າງຕໍ່ເນື່ອງ ແລະ ການປັບປຸງການດູແລສຸຂະພາບນຳອີກ. ການໂຄສະນາອົບຮົມໃຫ້ຄວາມຮູ້ແກ່ໄວໜຸ່ມ ທີ່ເຜີຍແຜ່ຜົນກະທົບໃນໄລຍະຍາວຂອງເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການ

ໃຊ້ສານເສບຕິດ ເຊິ່ງຊ່ວຍໃຫ້ໄວໜຸ່ມສາມາດຕັດສິນ ໃຈໄດ້ດີຂຶ້ນກ່ຽວກັບການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາເສບຕິດອື່ນໆ ຈະຊ່ວຍສະກັດກັ້ນການທົດລອງທີ່ເປັນອັນຕະລາຍ.ລັດຖະບານສາມາດຮ່ວມມືກັບອົງການຈັດຕັ້ງສັງຄົມ ແລະ ຄູ່ຮ່ວມພັດທະນາອື່ນໆ ທີ່ໃຫ້ບໍລິການປິ່ນປົວຢາເສບຕິດທີ່ຈຳເປັນ ເຊັ່ນດຽວກັບການບໍລິການດ້ານສຸຂະພາບຈິດ ແລະ ຈິດຕະສັງຄົມໃຫ້ແກ່ປະຊາຊົນທີ່ມີຄວາມສ່ຽງ.

### ຂະຫຍາຍການສຶກສາ ແລະ ການບໍລິການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນທີ່ເປັນມິດກັບໄວໜຸ່ມ

ໄວໜຸ່ມຕ້ອງການຄວາມພ້ອມທີ່ຈະເຂົ້າເຖິງຂໍ້ມູນທີ່ຖືກຕ້ອງກ່ຽວກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນໃນພາສາທີ່ພວກເຂົາສາມາດເຂົ້າໃຈໄດ້ ແລະ ການເລືອກວິທີຄຸມກຳເນີດທີ່ປອດໄພ, ມີປະສິດທິພາບ, ລາຄາບໍ່ແພງ ແລະ ເປັນທີ່ຍອມຮັບໄດ້. ພວກເຂົາຍັງຕ້ອງການຂໍ້ມູນກ່ຽວກັບພະຍາດຕິດຕໍ່ທາງເພດສຳພັນ ແລະ ການບໍລິການທີ່ປັບປຸງໃນການກວດຄັດກອງ ແລະ ປິ່ນປົວພະຍາດລະບົບຈະເລີນພັນ.

**ສ້າງຕັ້ງໂຄງການສຶກສາສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ສິດໃນໂຮງຮຽນ.** ນີ້ຈະເປັນການຮັບປະກັນວ່າໄວໜຸ່ມສາມາດຕັດສິນໃຈຢ່າງມີຂໍ້ມູນກ່ຽວກັບຮ່າງກາຍ ແລະ ຄວາມສຳພັນທາງເພດຂອງພວກເຂົາ. ແຜນງານດັ່ງກ່າວຄວນດຳເນີນຢູ່ໃນສະຖານການສຶກສາຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ, ໂດຍພິຈາລະນາອີງປະກອບການສຶກສາສະເພາະແຕ່ຂັ້ນສຸດທ້າຍຂອງໂຮງຮຽນປະຖົມ. ຫຼັກສູດສິດ, ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນຄວນຈະປະກອບມີການຮຽນຮູ້ກ່ຽວກັບຂອບກົດໝາຍຂອງ ສປປ ລາວ, ລະບົບສຸຂະພາບຈະເລີນພັນ, ການເລີ່ມເປັນຜູ້ໃຫຍ່, ການປ່ຽນຮ່າງກາຍ ແລະ ອາລົມ, ມາດຕະຖານທາງເພດ ແລະ ຄວາມສຳພັນທີ່ມີສຸຂະພາບດີ, ການຕິດເຊື້ອທາງເພດສຳພັນ, ການຄຸມກຳເນີດ ແລະ ການອະນາໄມປະຈຳເດືອນ. ການບໍລິການສຸຂະພາບທາງໄກ ແລະ ຊຸດການສຶກສາສຸຂະພາບ ແລະ ສິດທາງເພດໂດຍນຳໃຊ້ເວທີສື່ສັງຄົມ ຄວນໄດ້ຮັບການພັດທະນາໄປຄຽງຄູ່ກັນເພື່ອໃຫ້ການຊ່ວຍເຫຼືອໄວໜຸ່ມນອກໂຮງຮຽນ, ພໍ່ແມ່ ແລະ ບຸກຄົນຈາກພື້ນຖານທີ່ຫຼາກຫຼາຍ ໃຫ້ໄດ້ຮັບການເຂົ້າເຖິງຂໍ້ມູນຂ່າວສານ ແລະ ຄຳແນະນຳທີ່ປອດໄພ ແລະ ເປັນສ່ວນຕົວ.

**ຈັດຕັ້ງການເຜີຍແຜ່ປູກຈິດສຳນຶກທີ່ສຸມໃສ່ໄວໜຸ່ມ ກ່ຽວກັບ ສຸຂະພາບທາງເພດ, ສຸຂະພາບຈະເລີນພັນ ແລະ ສິດທິທາງເພດຂອງໄວໜຸ່ມ.** ອິດທິພົນທາງດ້ານສັງຄົມ, ຄອບຄົວ ແລະ ວັດທະນະທຳມີຜົນກະທົບຢ່າງຫຼວງຫຼາຍຕໍ່ໄວໜຸ່ມ ແລະ ການມີສ່ວນຮ່ວມຂອງພວກເຂົາໃນການຮ່ວມເພດທີ່ປອດໄພ. ໂຮງຮຽນ ແລະ ໂຄງການການສຶກສາ ເລື່ອງສິດ, ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ຄວນໄດ້ຮັບການສະໜັບສະໜູນໂດຍການໂຄສະນາຂໍ້ມູນຂ່າວສານ, ຊ່ວຍໃຫ້ຜູ້ປົກຄອງ ແລະ ຜູ້ນຳຊຸມຊົນ ໃຫ້ຄວາມຮູ້ແກ່ໄວໜຸ່ມກ່ຽວກັບຄວາມສ່ຽງທີ່ກ່ຽວຂ້ອງກັບກິດຈະກຳທາງເພດ ແລະ ຜົນປະໂຫຍດຂອງການໃຊ້ການຄຸມກຳເນີດ. ກິດຈະກຳທີ່ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ - ຊາຍ, ຄວາມສຳພັນທີ່ມີສຸຂະພາບດີ ແລະ ສິດທາງເພດຍັງຈະຊ່ວຍຫຼຸດຜ່ອນອັດຕາການຖືພາໄວ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ຄວາມຮຸນແຮງ ແລະ ການບີບບັງຄັບທາງເພດ. ແຕ່ລະຂະບວນການຄວນໃຫ້ບຸລິມະສິດເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ເຊິ່ງພິຈາລະນາດ້ານພາສາ, ຊົນເຜົ່າ ແລະ ຄວາມສາມາດໃນເຂົ້າເຖິງການຍົກສູງຄວາມຮັບຮູ້, ທຳລາຍການດູຖູກ ແລະ ສຶກສາອົບຮົມຜູ້ປົກຄອງຂອງໄວໜຸ່ມ. ການໂຄສະນາດັ່ງກ່າວສາມາດໃຊ້ໂທລະພາບ, ວິທະຍຸ ແລະ ສື່ສັງຄົມ.

**ນຳໃຊ້ຮູບແບບການບໍລິການວາງແຜນຄອບຄົວແບບຮອບດ້ານ**. ຕ້ອງມີວິທີການທີ່ຄົບຊຸດໃນການບໍລິການວາງແຜນຄອບຄົວເພື່ອປົກປ້ອງໄວໜຸ່ມຍິງຈາກການແຕ່ງງານໄວ ແລະ ການຖືພາກ່ອນໄວອັນຄວນ. ຮູບແບບຕ່າງໆເຊັ່ນ: ສຸຂະພາບທາງໂທລະສັບ, ການເຜີຍແຜ່ທາງໂທລະສັບມືຖື ແລະ ການບໍລິການທີ່ແນໃສ່ໄວໜຸ່ມ ເຊິ່ງໄດ້ເກີດຂຶ້ນແລ້ວ, ເຖິງແມ່ນວ່າຈະມີຂອບເຂດຈຳກັດກໍຕາມ, ຄວນຂະຫຍາຍໄປສູ່ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ. ນອກຈາກນັ້ນ, ຜູ້ໃຫ້ບໍລິການດ້ານສຸຂະພາບ ເຊັ່ນ ຜະດຸງຄັນ, ແພດໝໍທົ່ວໄປ ແລະ ພະນັກງານສັງຄົມສົງເຄາະ ຄວນໄດ້ຮັບການສະໜັບສະໜູນໃນການພັດທະນາທັກສະ ແລະ ຄວາມສາມາດທີ່ເໝາະສົມເພື່ອແກ້ໄຂຄວາມກັງວົນສະເພາະຂອງໄວໜຸ່ມຍິງ. ຖ້າເປັນໄປໄດ້, ການບໍລິການວາງແຜນຄອບຄົວຄວນລວມການໃຫ້ຄຳປຶກສາທາງເພດ ແລະ ສຸຂະພາບຈະເລີນພັນກັບຜະລິດຕະພັນຄຸມກຳເນີດ. ການບໍລິການວາງແຜນຄອບຄົວຈະໄດ້ຮັບການປັບປຸງຕື່ມອີກໂດຍການປັບປຸງການເຊື່ອມໂຍງລະຫວ່າງໂຄງການສຸຂະພາບແບບປ້ອງກັນ, ການບໍລິການດ້ານການສຶກສາ ແລະ ອົງການຈັດຕັ້ງທາງສັງຄົມທີ່ໃຫ້ການຊ່ວຍເຫຼືອດ້ານການສຶກສາການວາງແຜນຄອບຄົວແລ້ວ.

ການຮ່ວມມືທາງດ້ານນະໂຍບາຍເພື່ອເລື່ອນການແຕ່ງງານກ່ອນໄວອັນຄວນ (ແລະ ການຖືພາກ່ອນໄວອັນຄວນ) ຕ້ອງມີຫຼາຍກວ່າຂະແໜງສຸຂະພາບພຽງຢ່າງດຽວ, ເນັ້ນໜັກເຖິງບັນດາໂຄງການຮັກສາເດັກຍິງໃຫ້ເຂົ້າໂຮງຮຽນ, ຜ່ານການສຶກສາຊັ້ນມັດທະຍົມສຶກສາ ແລະ ອື່ນໆ. ການໂຄສະນາປ່ຽນແປງພຶດຕິກຳທີ່ສ້າງສັນຄວນແນໃສ່ການເລື່ອນອາຍຸການແຕ່ງງານທີ່ຍອມຮັບໄດ້ ແລະ ສົ່ງເສີມການສຶກສາສຳລັບໄວໜຸ່ມຍິງ. ການສ້າງແຮງຈູງໃຈທາງການເງິນຍັງສາມາດຈັດການ ແລະ ຂະຫຍາຍ ເພື່ອໃຫ້ໄວໜຸ່ມຍິງໄດ້ສືບຕໍ່ການສຶກສາ, ໂດຍສະເພາະໃນເຂດທຸກຍາກໃນຊົນນະບົດ.

**ສະໜອງສິ່ງອຳນວຍຄວາມສະດວກເພື່ອສຸຂະອະນາໄມປະຈຳເດືອນ.** ການລົງທຶນໃນການສຶກສາການຄຸ້ມຄອງສຸຂະອະນາໄມປະຈຳເດືອນ ແລະ ສິ່ງອຳນວຍຄວາມສະດວກໃນໂຮງຮຽນມັດທະຍົມແມ່ນມີຄວາມຈຳເປັນ, ເປັນສ່ວນໜຶ່ງຂອງການບໍລິການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ທີ່ກວ້າງຂວາງ ເພື່ອຮັບປະກັນບໍ່ໃຫ້ໄວໜຸ່ມຍິງພາດໂອກາດການສຶກສາອັນສຳຄັນ. ເຊິ່ງຄວນລວມເຖິງການຕິດຕັ້ງອຸປະກອນອະນາໄມປະຈຳເດືອນທີ່ປອດໄພ ແລະ ສິ່ງອຳນວຍຄວາມສະດວກຕ່າງໆຢູ່ໃນໂຮງຮຽນ ແລະ ຮັບປະກັນວ່າໄວໜຸ່ມຍິງສາມາດເຂົ້າເຖິງຊຸດອະນາໄມໄດ້. ລັດຖະບານສາມາດພິຈາລະນາຮ່ວມມືກັບບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ຄູ່ຮ່ວມພັດທະນາເພື່ອສົ່ງເສີມຊຸດສຸຂາພິບານແບບບໍ່ເສຍຄ່າໃນໂຮງຮຽນສຳລັບໄວໜຸ່ມທີ່ດ້ອຍໂອກາດ.

**ສົ່ງເສີມການໃຊ້ຖົງຢາງອະນາໄມ.** ຄວາມພະຍາຍາມແຫ່ງຊາດເພື່ອຫຼຸດຜ່ອນການຕິດເຊື້ອ HIV/AIDS ແລະ ການຕິດເຊື້ອທາງເພດສຳພັນຄວນສືບຕໍ່ປັບປຸງຄວາມຕ້ອງການ ແລະ ການນຳໃຊ້ຖົງຢາງອະນາໄມຂອງໄວໜຸ່ມທັງໝົດ. ເຊິ່ງຄວນລວມເອົາຂໍ້ມູນຂ່າວສານສຸຂະພາບການຈະເລີນພັນຢ່າງເປັນລະບົບເຂົ້າໃນຫຼັກສູດຂອງໂຮງຮຽນໃນທົ່ວປະເທດ, ເຊິ່ງສາມາດເນັ້ນໃສ່ທັກສະການເຈລະຈາກ່ຽວກັບຖົງຢາງອະນາໄມ ແລະ ຜົນປະໂຫຍດຂອງການໃຊ້ຖົງຢາງອະນາໄມ.ຂະບວນການສື່ສານສຳລັບໄວໜຸ່ມສາມາດປັບປຸງ ແລະ ປະສົມປະສານເຂົ້າໃນການໂຄສະນາຫາສາເຫດ, ຜົນກະທົບ, ການປິ່ນປົວພະຍາດເອດສ໌ ແລະ ພະຍາດຕິດຕໍ່ທາງເພດສຳພັນ.ຈຳເປັນຕ້ອງມີກົນໄກການແຈກຢາຍຖົງຢາງອະນາໄມທີ່ແນໃສ່ກຸ່ມໄວໜຸ່ມທີ່ມີຄວາມຫຼາກຫຼາຍ. ຄວນຂະຫຍາຍຈຸດແຈກຈ່າຍນອກເໜືອຈາກຮ້ານຂາຍຢາຕາມທ້ອງຖິ່ນເຊັ່ນ: ຮ້ານຂາຍຢາທົ່ວໄປ. ອາດຈະລວມເຖິງການແຈກຖົງຢາງອະນາໄມແບບບໍ່ເສຍຄ່າໃນງານບຸນຕ່າງໆ ຫຼື ເຫດການອື່ນໆທີ່ມີໄວໜຸ່ມເຕົ້າໂຮມກັນ, ເຊັ່ນ ໃນຮ້ານບັນເທີງ ບາ , ບ່ອນຈອດລົດ, ຮ້ານເບຍ ຫຼື ສະຖານທີ່ບັນເທີງຕ່າງໆ. ການມີສ່ວນຮ່ວມກັບຜູ້ໃຫ້ບໍລິການຂອງອົງການ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດເພື່ອພັດທະນາການສື່ສານການປ່ຽນແປງພຶດຕິກຳ ແລະ ສົ່ງເສີມການໃຊ້ຖົງຢາງອະນາໄມລະຫວ່າງໄວໜຸ່ມ, ອາດຈະຮັບປະກັນວ່າຖົງຢາງອະນາໄມແມ່ນມີພ້ອມໃຊ້ງານ ແລະ ເປັນທີ່ຍອມຮັບໄດ້ຫຼາຍຂຶ້ນ.

## ປັບປຸງຄວາມສາມາດຂອງຊັບພະຍາກອນມະນຸດທີ່ກ່ຽວຂ້ອງກັບສຸຂະພາບ

ເຖິງວ່າ ສປປ ລາວ ຈະມີການປັບປຸງດ້ານສຸຂະພາບຢ່າງຍາກລຳບາກ, ຍັງມີຊ່ອງຫວ່າງອັນສຳຄັນທາງດ້ານທັກສະ ແລະ ຄວາມສາມາດດ້ານຊັບພະຍາກອນມະນຸດ. ຜູ້ໃຫ້ບໍລິການດ້ານສຸຂະພາບຍັງຂາດຄວາມສາມາດທາງດ້ານວັດທະນະທຳ ແລະ ທັກສະທາງດ້ານພາສາໃນການໃຫ້ບໍລິການກຸ່ມຊົນເຜົ່າ, ໄວໜຸ່ມ ແລະ ຄົນທີ່ມີຄວາມພິການ. ຄວາມພະຍາຍາມຮ່ວມເພື່ອຂະຫຍາຍໂອກາດການຝຶກອົບຮົມ ແລະ ການລະດົມພະນັກງານທີ່ມີຊ່ຽວຊານໃນການບໍລິການດູແລສຸຂະພາບສະເພາະຂອງໄວໜຸ່ມແມ່ນມີຄວາມຈຳເປັນ. ເຊິ່ງຄວນປະກອບມີພະນັກງານເພື່ອສະໜອງການດູແລສຸຂະພາບຈິດທີ່ສອດຄ່ອງກັບຄວາມກົດດັນ ແລະ ບັນຫາການພັດທະນາຂອງໄວໜຸ່ມເຊັ່ນດຽວກັນກັບການສຶກສາສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນທີ່ມີຄວາມສຳຄັນ ແລະ ຕອບສະໜອງຄວາມຫຼາກຫຼາຍຂອງກຸ່ມໄວໜຸ່ມ.

**ເປີດເສັ້ນທາງການຝຶກອົບຮົມທີ່ໄດ້ຮັບການປັບປຸງສຳລັບນັກຮຽນແພດຈາກຫຼາຍພື້ນທີ່** ຮັບປະກັນໃຫ້ຂະແໜງສາທາລະນະສຸກມີກຳລັງແຮງງານທີ່ຫຼາກຫຼາຍ ແລະ ເປັນຕົວແທນສາມາດປະກອບສ່ວນປັບປຸງການມີສ່ວນຮ່ວມຂອງໄວໜຸ່ມ ແລະ ການໃຫ້ບໍລິການ, ຊ່ວຍເຫຼືອປະຊາກອນທີ່ດ້ອຍໂອກາດ ຫຼື ມີຄວາມສ່ຽງໃຫ້ເຊື່ອມຕໍ່ກັບຜູ້ໃຫ້ບໍລິການໄດ້ດີຂຶ້ນ ແລະ ຮູ້ສຶກສະດວກສະບາຍໃນການຂໍຄວາມຊ່ວຍເຫຼືອ. ການຂະຫຍາຍໂຄງການຝຶກອົບຮົມທີ່ອີງໃສ່ສິ່ງຈູງໃຈສຳລັບໄວໜຸ່ມຈາກພື້ນຖານທີ່ຫຼາກຫຼາຍສາມາດຊ່ວຍຕອບສະໜອງຄວາມຕ້ອງການນີ້ໄດ້. ເຊິ່ງອາດຈະລວມເຖິງການໃຫ້ທຶນການສຶກສາໂດຍສະເພາະສຳລັບຄົນທີ່ມີຄວາມພິການ, ຊົນເຜົ່າ, ຜູ້ທີ່ມີຄວາມຫຼາກຫຼາຍທາງເພດ ແລະ ແມ່ຍິງ, ແລະ/ຫຼື ສະເໜີເສັ້ນທາງການຝຶກອົບຮົມທາງເລືອກ ແລະ ຫຼັກສູດເຊື່ອມໂຍງຄວາມສຳເລັດທາງການສຶກສາໃນໄລຍະຍາວເພື່ອເຮັດໃຫ້ໄວໜຸ່ມຈາກພື້ນຖານທີ່ຫຼາກຫຼາຍສາມາດເດີນຕາມເສັ້ນທາງອາຊີບໃນການດູແລສຸຂະພາບ.

**ສ້າງແຮງຈູງໃຈໃນການຈັດສັນບຸກຄະລາກອນການແພດລົງຮັບໜ້າທີ່ໃນຊົນນະບົດ ແລະ ຫ່າງໄກສອກຫຼີກ.** ການບໍລິການຮັກສາສຸຂະພາບທີ່ເປັນບຸລິມະສິດຂອງໄວໜຸ່ມຕ້ອງມີຊັບພະຍາກອນ ແລະ ການຊ່ວຍເຫຼືອທີ່ດີຂຶ້ນໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ. ການມີນະໂຍບາຍດ້ານຄ່າຮຽນ ຫຼື ມີລາຍຮັບຈູງໃຈສຳລັບນັກສຶກສາທີ່ຈົບການສຶກສາດ້ານສາທາລະນະສຸກທີ່ເຂົ້າເຮັດວຽກຫຼາຍປີຢູ່ເຂດຊົນນະບົດສາມາດຊ່ວຍຮັບປະກັນວ່າເຂດດັ່ງກ່າວມີການເຂົ້າເຖິງການບໍລິການດ້ານສຸຂະພາບທີ່ມີຄຸນນະພາບເທົ່າທຽມກັນ. ໂອກາດການຝຶກອົບຮົມຫຼັງປະລິນຍາເພີ່ມເຕີມໃຫ້ແກ່ພະນັກງານສາທາລະນະສຸກຊົນນະບົດ ແລະ ຫ່າງໄກສອກຫຼີກ ຍັງສາມາດຊ່ວຍສົ່ງເສີມຄຸນນະພາບ ແລະ ທັກສະໃຫ້ແກ່ການມີສ່ວນຮ່ວມຂອງໄວໜຸ່ມ.

**ພັດທະນາຫຼັກສູດການດູແລສຸຂະພາບ ແລະ ໄວໜຸ່ມ.** ຈຳເປັນຕ້ອງມີການຈັດບຸລິມະສິດ ແລະ ຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບບັນຫາການດູແລສຸຂະພາບທີ່ກ່ຽວຂ້ອງກັບໄວໜຸ່ມທົ່ວປະເທດ. ສາມາດພັດທະນາຫຼັກສູດ ແລະ ການຝຶກອົບຮົມຄວາມຮູ້ຄວາມສາມາດດ້ານວັດທະນະທຳ ແລະ ຫຼັກສູດການສຶກສາສຸຂະພາບຂອງໄວໜຸ່ມ ເພື່ອກະກຽມພະນັກງານຮັກສາສຸຂະພາບໃຫ້ດີຂຶ້ນ ໃນການມີສ່ວນຮ່ວມກັບກຸ່ມໄວໜຸ່ມທີ່ມີຄວາມຫຼາກຫຼາຍ ແລະ ຮັບປະກັນໃຫ້ໄວໜຸ່ມໄດ້ຮັບການສະໜັບສະໜູນທີ່ດີກວ່າເມື່ອເຂົ້າເຖິງການບໍລິການຕ່າງໆ. ຄວາມສາມາດຂອງພະນັກງານດູແລສຸຂະພາບໃນການດູແລສຸຂະພາບຈິດກໍ່ສາມາດໄດ້ຮັບການປັບປຸງໂດຍຜ່ານການແນະນຳບັນຫາສຸຂະພາບ

ຈິດ ແລະ ການຊ່ວຍເຫຼືອທາງດ້ານຈິດຕະສັງຄົມ, ການຝຶກອົບຮົມການປະຖົມພະຍາບານເປັນສ່ວນໜຶ່ງຂອງຄວາມຕ້ອງການດ້ານການສຶກສາຂອງພະນັກງານສາທາລະນະສຸກຂັ້ນຕົ້ນ.

### ບຸລິມະສິດຂອງການມີສ່ວນຮ່ວມໃນການດູແລສຸຂະພາບໂດຍການພັດທະນາຍຸດທະສາດຕ້ານການຈຳແນກ,ຄວາມສະເໝີພາບ ແລະ ການລອບລວມຂໍ້ມູນທີ່ແຍກອອກ.

ໄວໜຸ່ມທຸກຄົນ, ລວມທັງກຸ່ມຄົນທີ່ດ້ອຍໂອກາດ ແລະ ກຸ່ມທີ່ມີຄວາມສ່ຽງເຊັ່ນ: ຊຸມຊົນຊົນເຜົ່າທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ, ຄົນທີ່ມີຄວາມພິການ ຫຼື ເຈັບປ່ວຍທາງຈິດ, ຜູ້ໃຊ້ຢາເສບຕິດ ແລະ ຜູ້ໃຫ້ບໍລິການທາງເພດ, ມີສິດເທົ່າທຽມກັນໃນການບໍລິການທີ່ຈຳເປັນ, ລວມທັງການດູແລສຸຂະພາບ. ການຮັບຮູ້ສິດເຫຼົ່ານີ້ສາມາດກ້າວໄປຂ້າງໜ້າໄດ້ໃນບາງສ່ວນໂດຍຜ່ານການພັດທະນາຍຸດທະສາດຕ້ານການຈຳແນກ ແລະ ສົ່ງເສີມຄວາມສະເຫມີພາບ ທີ່ຮັບປະກັນການເຂົ້າເຖິງການດູແລສຸຂະພາບສຳລັບທຸກຄົນເທົ່າທຽມກັນ.ນອກຈາກນັ້ນ, ການສະແດງໃຫ້ເຫັນເຫິງພາບຄວາມຕ້ອງການ ແລະ ຄວາມກັງວົນໂດຍຜ່ານການເກັບກຳຂໍ້ມູນ ແລະ ການພັດທະນາສຸຂະພາບຂອງໄວໜຸ່ມ ແລະ ເຍົາວະຊົນ ກໍ່ເປັນສິ່ງສຳຄັນ, ຄວນຈະແບ່ງອອກເປັນກຸ່ມຕ່າງໆ ເຊັ່ນ: ຕາມສະຖານທີ່ໃນຕົວເມືອງ, ຊົນນະບົດ ແລະ ຕາມເຊື້ອຊາດ. ຂໍ້ມູນດັ່ງກ່າວຈະເຕີມເຕັມຊ່ອງຫວ່າງທາງຄວາມຮູ້, ສາມາດແຈ້ງການວາງແຜນ ແລະ ການຕັດສິນໃຈຕາມຫຼັກຖານ.

## 4.5 ບົດສະຫຼຸບ

ສຸຂະພາບໝາຍເຖິງຜົນລວມຂອງ ສະພາບຈິດໃຈ, ຄວາມເປັນຢູ່ທີ່ດີທາງຮ່າງກາຍ ແລະ ທາງສັງຄົມ. ມັນເປັນທັງສະພາບຂອງຄວາມເປັນຢູ່, ສະທ້ອນໃຫ້ເຫັນເຖິງຄວາມສາມາດ ແລະ ຄວາມອາດສາມາດຂອງບຸກຄົນທີ່ຈະດຳລົງຊີວິດທີ່ມີຄວາມໝາຍ. ສຸຂະພາບເປັນຮາກຖານຂອງການພັດທະນາມະນຸດໃນຫຼາຍໆມິຕິເຊັ່ນ: ການສຶກສາ, ການມີສ່ວນຮ່ວມ ແລະ ການຈ້າງງານ. ການເຊື່ອມໂຍງລະຫວ່າງສຸຂະພາບ ແລະ ການພັດທະນາຂອງມະນຸດແມ່ນມີຄວາມສຳຄັນໂດຍສະເພາະໃນເຍົາວະຊົນ ແລະ ໄວໜຸ່ມ, ເນື່ອງຈາກເປັນເຍົາວະຊົນ ແລະ ໄວໜຸ່ມເປັນໄລຍະຂອງຊີວິດທີ່ສຳຄັນໃນການວາງພື້ນຖານສຳລັບສຸຂະພາບຈິດ ແລະ ຮ່າງກາຍທີ່ດີ ແລະ ພຶດຕິກຳການຮຽນຮູ້ທີ່ອາດຈະຢູ່ນຳພວກເຂົາໄປຕະຫຼອດຊີວິດ.

ການຊ່ວຍເຫຼືອດ້ານສຸຂະພາບ, ການສຶກສາ, ການຝຶກອົບຮົມທັກສະ ແລະ ການປົກປ້ອງທາງສັງຄົມຄວນເກີດຂຶ້ນໄວ ແລະ ໄປພ້ອມໆກັນເພື່ອກຳນົດຊີວິດໄວໜຸ່ມໃຫ້ຢູ່ເທິງເສັ້ນທາງໄປສູ່ການເປັນຜູ້ໃຫຍ່ທີ່ຍືນຍົງ. ສິ່ງກີດຂວາງຕ່າງໆ ເຊັ່ນ: ຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ, ທັກສະຊີວິດທີ່ດ້ອຍພັດທະນາ, ບັນທັດຖານທາງສັງຄົມທີ່ຈຳແນກ ແລະ ຄວາມລັງເລໃຈຂອງຜູ້ປົກຄອງ ແລະ ຜູ້ເບິ່ງແຍງບໍ່ເຕັມໃຈທີ່ຈະແກ້ໄຂບັນຫາຫຼັກໆ, ເຊັ່ນ: ສຸຂະພາບຈິດ ແລະ ເລື່ອງເພດຕ້ອງໄດ້ຮັບການແກ້ໄຂ ເພື່ອຮັບປະກັນການເປັນຢູ່ທີ່ດີຂອງໄວໜຸ່ມທຸກຄົນ. ໄວໜຸ່ມຄວນສາມາດພັດທະນາໃນສະພາບແວດລ້ອມແຫ່ງການເສີມສ້າງທີ່ປົກປັກຮັກສາສິດທິຂອງພວກເຂົາ, ປົກປ້ອງພວກເຂົາຈາກການໃຊ້ຄວາມຮຸນແຮງ, ການຂົ່ມເຫັງ ຫຼື ການຂົ່ມຂູ່, ເຫັນຄຸນຄ່າຂອງເຂົາເຈົ້າ ແລະ ການປະກອບສ່ວນຂອງພວກເຂົາຕໍ່ສັງຄົມ.

ເພື່ອໃຫ້ໄວໜຸ່ມໃນ ສປປ ລາວ ໄດ້ຮັບຄວາມສາມາດດ້ານມະນຸດສະທຳທີ່ຈຳເປັນເພື່ອຕອບສະໜອງການທ້າທາຍໃນການພັດທະນາທີ່ພົ້ນເດັ່ນ, ຄົ້ນຫາໂອກາດພັດທະນາ ແລະ ສາມາດປະກອບສ່ວນຕໍ່ໂຄງສ້າງເສດຖະກິດໂດຍການຈຳແນກອາຍຸປະຊາກອນ, ຈຳເປັນຕ້ອງມີການສຸມໃສ່ເອົາໃຈໃສ່ຕໍ່ບັນຫາສຸຂະພາບຂອງໄວໜຸ່ມ. ສິ່ງນີ້ແມ່ນຂຶ້ນກັບການສຸມໃສ່ແບບໃໝ່ ແລະ ການລົງທຶນໃນການດູແລສຸຂະພາບຈິດ, ການພັດທະນາຫຼັກສູດການສຶກສາເພື່ອການປ້ອງກັນການເຈັບປ່ວຍທາງຈິດໃຈ, ຂະຫຍາຍວຽກງານສັງຄົມ ແລະ ການໃຫ້ຄຳປຶກສາ ເພື່ອຊ່ວຍເຫລືອໄວໜຸ່ມ ໃນການຈັດການກັບແຮງກະທົບ ແລະ ຄວາມກົດດັນໃຫ້ດີຂຶ້ນ. ວິທີການລວມເອົາໄວໜຸ່ມເປັນໃຈກາງໃນການດູແລສຸຂະພາບທາງເພດ ແລະ ຈະເລີນພັນ, ການບໍລິການເພື່ອປ້ອງກັນ ແລະ ຕອບສະໜອງຕໍ່ຄວາມຮຸນແຮງ ຈະຊ່ວຍໃຫ້ໄວໜຸ່ມຍິງ ແລະ ກຸ່ມໄວໜຸ່ມທີ່ມີຄວາມຫຼາກຫຼາຍອື່ນໆ ໄດ້ຮັບສິດອຳນາດເໜືອຮ່າງກາຍ ແລະ ການພັດທະນາຕົນເອງ. ເມື່ອລວມກັບການປັບປຸງການສຶກສາກ່ຽວກັບການນຳໃຊ້ຢາເສບຕິດ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ, ຄວາມປອດໄພທາງຖະໜົນໃຫ້ຫຼາຍຂຶ້ນຈະຊ່ວຍໃຫ້ໄວໜຸ່ມສາມາດຕັດສິນໃຈໄດ້ຢ່າງມີຂໍ້ມູນ ເມື່ອທົດລອງກັບສະພາບແວດລ້ອມສັງຄົມໃໝ່ ແລະ ປະຕິບັດພຶດຕິກຳທີ່ມີຄວາມສ່ຽງ.





# ເອກະສານອ້າງອີງ

ADB (Asian Development Bank). 2021. Setting Vientiane on the Road to Sustainable Transport. Vientiane.

Alkire, S., and S. Deneulin. 2009. "The Human Development and Capability Approach." In S. Deneulin and L. Shahani, eds., An Introduction to Human Development and Capability Approach. London: Earthscan, IDRC.

Ariana, P., and A. Naveed. 2009. "Health." In S. Deneulin and L. Shahani, eds., An Introduction to Human Development and Capability Approach. London: Earthscan, IDRC.

ASEAN-NARCO (ASEAN Narcotics Cooperation Centre). 2018. ASEAN Drug Monitoring Report 2018. Bangkok. https://aseannarco.oncb.go.th/ebook/B0078/index.html

Centre for Alcohol Studies, Thailand. 2013. A Baseline Survey on Alcohol Consumption Behavior and Harm to Others from Drinking in Three Provinces, Namely Vientiane Capital, Luangprabang and Champasack, Lao People's Democratic Republic. Unpublished preliminary data.

Collard, D. 2003. Research on Wellbeing: Some advice from Jeremy Bentham. Wellbeing in Developing Countries, ESRC Research Group Working Paper No. 2. University of Bath.

Committee on the Rights of the Child. 2015. List of Issues in Relation to the Report Submitted by the Lao PDR Under Article 12, Paragraph 1, of the OPSC. https://digitallibrary.un.org/record/856021?ln=en

De Azevedo, W. F., M. B. Diniz, E.S.B. da Fonseca, et al.. 2015. Complications in Adolescent Pregnancy: Systematic review of the literature. San Paulo: Einstein. https://www.ncbi.nlm.nih.gov/pmc/articles/PMC4878642/

Department of Health of Vientiane Capital, Burnet Institute and UNFPA (United Nations Population Fund). 2008. Young Women's Sexual Behavior Study, Vientiane Capital, the Lao People's Democratic Republic. https://lao.unfpa.org/sites/default/files/resource-pdf/FinalReportYoungWomensSexualBehaviourStudy.pdf

Ferrand J., and K. Peyronnie. 2006. Les accidents de la circulation à Vientiane (RDP Lao): un enjeu de santé publique nouveau et important. Espace Populations Sociétés 2(3). https://www.researchgate.net/publication/30465810_Les_accidents_de_la_circulation_a_Vientiane_RDP_Lao_un_enjeu_de_sante_publique_nouveau_et_important

Inthaphatha S, V. Louangpradith, L. L. Xiong, et al.. 2021. "Menstrual Health and Factors Associated with School Absence Among Secondary School Girls in Luang Prabang Province, Lao People's Democratic Republic: A cross-sectional study." PLoS ONE 16(12). https://journals.plos.org/plosone/article?id=10.1371/journal.pone.0261268

Kieling C., H. Baker-Henningham, M. Belfer, et al.. 2011. "Child and Adolescent Mental Health Worldwide: Evidence for action." The Lancet 378(9801): 515-25 https://pubmed.ncbi.nlm.nih.gov/22008427/

Kounnavong, T., M. Vonglokham, K. Moji, et al.. 2021. "Factors Affecting Alcohol Drinking Behavior Among Secondary School Students in Vientiane Province, Lao People's Democratic Republic: A cross-sectional study." International Health 0: 1-10.

Landmine and Cluster Munition Monitor. 2020. "Lao PDR. Impact." http://www.the-monitor.org/en-gb/reports/2020/lao-pdr/impact.aspx.

Leftwich, H. K., and M.V.O. Alves. 2017. "Adolescent Pregnancy." The Pediatric Clinics of North America 64(2). https://pubmed.ncbi.nlm.nih.gov/28292453/

LSB (Lao Statistics Bureau). 2018. Lao Social Indicator Survey II, Survey Findings Report. Vientiane. https://www.unicef.org/laos/media/306/file/LSIS2017ENG.pdf
LSB (Lao Statistics Bureau) and the National Commission for the Advancement of Women, Mothers and Children. 2018. "Priority Actions to Address Violence Against Women in Lao PDR." Vientiane. https://www.unicef.org/laos/media/941/file/UNILAO2018.pdf

LYU (Lao People's Revolutionary Youth Union) and UNFPA (United Nations Population Fund). 2014. "Adolescent and Youth Situation Analysis Lao People's Democratic Republic: 'Investing in Young People is Investing in the Future'." https://lao.unfpa.org/sites/default/files/pub-pdf/Final_Eng_AYSA%20Report.pdf

Manolom, T., and B. Promphakping. 2016. "Measuring Development and Human Wellbeing in the Lao PDR: Exploring Laos' development indicators." Kasetsart Jounral of Social Science 37: 73-81. https://www.thaiscience.info/journals/Article/TKJS/10983812.pdf

McGillivray, M. 2007. Human Well-Being: Concept and Measurement. Studies in Development Economics and Policy Series. London: Palgrave Macmillan.

Mektakul, S. 2016. "Road Safety Status in Lao PDR." Presentation in Seoul, 29 July. Ministry of Public Works and Transport, Department of Transport, Government of Lao PDR. https://www.unescap.org/sites/default/files/14.%20%20Road%20Safety%20Status%20in%20Lao%20PDR.pdf.

Middleton-Lee, S. 2012. HIV/SRHR Integration for Key Populations: A review of experiences and lessons learned in India and globally. New Delhi: India HIV/AIDS Alliance. https://www.aidsdatahub.org/sites/default/files/resource/hiv-srhr-alliance-india.pdf

MoH (Ministry of Health). 2019. National Health Accounts Report. Vientiane.

MoH (Ministry of Health), European Union, MCNV (Medical Committee Netherlands-Vietnam) and UNFPA (United Nations Population Fund). 2017. The Adolescent Health Research Agenda Lao PDR. Vientiane: National Institute of Public Health, Ministry of Health.

Morineau G., G. Neilsen, S. Heng, et al.. 2011. "Falling Through the Cracks: Contraceptive needs of female sex workers in Cambodia and Laos." Contraception 84(2). https://pubmed.ncbi.nlm.nih.gov/21757062/

MPI (Ministry of Planning and Investment). 2021. "Impact of Covid-19: Adolescent wellbeing and mental health." Vientiane. https://www.unicef.org/laos/media/4816/file/IMPACT%20OF%20COVID-19%20ON%20ADOLESCENT%20WELLBEING%20AND%20MENTAL%20HEALTH.pdf

NCAW (National Commission for the Advancement of Women) and LSB (Lao Statistics Bureau). 2015. Lao National Survey on Women's Health and Life Experiences 2014: A Study on Violence Against Women. Vientiane. https://lao.unfpa.org/en/publications/lao-national-survey-women's-health-and-life-experiences-2014

OHCHR (Office of the High Commissioner for Human Rights). 2017. "Lao Must Make Child Protection a Core Issue to Combat Sexual Exploitation, UN Expert Urges." Press release. Geneva. https://www.ohchr.org/en/press-releases/2017/11/lao-must-make-child-protection-core-issue-combat-sexual-exploitation-un

Open Development Laos. 2019. "SDG 18 Lives Safe from UXO." Vientiane. https://laos.opendevelopmentmekong.net/topics/sdg-18-lives-safe-from-uxo

Phimphachan, C., S. Phanalasy, V. Phommanivong, et al.. 2010. First Round HIV/STI Prevalence and Behavioral Tracking Survey among Male-to-Female Transgenders in Vientiane Capital and Savannakhet, Lao PDR. Washington, DC: Population Services International. https://www.aidsdatahub.org/sites/default/files/resource/hiv-sti-prevalence-bts-tg-lao-pdr-vientiane-savannakhet-round-1-2010.pdf

Phongluxa K., G. Langeslag, T. R. Jat, et al.. 2020. "Factors Influencing Sexual and Reproductive Health Among Adolescents in Lao PDR." Global Health Action 13(sup2). https://www.ncbi.nlm.nih.gov/pmc/articles/PMC7480507/
Raghupathi, V., and W. Raghupathi. 2020. The Influence of

Education on Health: An empirical assessment of OECD countries for the period 1995–2015.

Schlipköter, U., and A. Flahault. 2010. "Communicable Diseases: Achievements and challenges for public health." Public Health Review 32: 90-119. https://pubmed.ncbi.nlm.nih.gov/32226190/

Slesak, G., S. Inthalath, A. Wilder-Smith, et al.. 2015. "Road Traffic Injuries in Northern Laos: Trends and risk factors of an underreported public health problem." Tropical Medicine and International Health 22(11). https://onlinelibrary.wiley.com/doi/full/10.1111/tmi.12562

Strong, K. L., J. Pedersen, E. W. Johansson, et al. 2021. "Patterns and Trends in Causes of Child and Adolescent Mortality 2000–2016: Setting the scene for child health redesign." BMJ Global Health 6(3). https://pubmed.ncbi.nlm.nih.gov/33731440/

Swiss Agency for Development and Cooperation. 2014. "Hidden Danger: Uncovering the UXO problem in Lao PDR." Asia Brief 1/2014. Bern: SDC. https://data.opendevelopmentmekong.net/my/library_record/hidden-danger-uncovering-the-uxo-problem-in-lao-pdr

Sychareun, V., B, Santavasy, N. Chanlivong, et al.. 2018. "Methamphetamine-type Stimulant Use in Lao PDR: Qualitative findings from users aged 15-25 years in Vientiane Capital and Vientiane Province." Harm Reduction Journal 15(17). https://harmreductionjournal.biomedcentral.com/articles/10.1186/s12954-018-0222-1

Sychareun V., S. Thomsen and E. Faxelid. 2011. "Concurrent Multiple Health Risk Behaviors Among Adolescents in Luangnamtha Province, Lao PDR." BMC Public Health 11(1). https://bmcpublichealth.biomedcentral.com/articles/10.1186/1471-2458-11-36

Sychareun, V., V, Vongxay, S. Houaboun, et al.. 2018. "Determinants of Adolescent Pregnancy and Access to Reproductive and Sexual Health Services for Married and Unmarried Adolescents in Rural Lao PDR: A qualitative study." BMC Pregnancy Childbirth 18 (219). https://bmcpregnancychildbirth.biomedcentral.com/articles/10.1186/s12884-018-1859-1

Thanavanh B, M. Harun-Or-Rashid, H. Kasuya, et al.. 2013. "Knowledge, Attitudes and Practices Regarding HIV/AIDS Among Male High School Students in Lao People's Democratic Republic." Journal of International AIDS Society 16(1).

United Nations. 2017. "UN Special Rapporteur Reports on Child Protection in Lao PDR." Press release. Vientiane. https://laopdr.un.org/en/14636-un-special-rapporteur-reports-child-protection-lao-pdr.

———. 2019. "Noi and All Adolescent Girls in Lao PDR Taking Center Stage on the International Day of the Girl Child." Vientiane. https://laopdr.un.org/en/32530-noi-and-all-adolescent-girls-lao-pdr-taking-center-stage-international-day-girl-child.

———. 2020. A UN Framework for the Immediate Socio-economic Response to COVID-19. https://unsdg.un.org/sites/default/files/2020-04/UN-framework-for-the-immediate-socio-economic-response-to-COVID-19.pdf

———. 2021. 2020 Progress Report: Lao PDR—United Nations Partnership Framework 2017-2021, A Partnership for Sustainable Development. Vientiane. https://laopdr.un.org/en/176688-lao-pdr-united-nations-partnership-framework-sustainable-development-2021-progress-report

UNAIDS (Joint United National Programme on HIV/AIDS) and UNODC (United Nations Office on Drugs and Crime). 2022. Compulsory Drug Treatment and Rehabilitation in East and South-East Asia: Regional overview. Bangkok. https://www.unodc.org/documents/southeastasiaandpacific/Publications/2022/Booklet_2_12th_Jan_2022.pdf

UNDP (United Nations Development Programme). 2022. 2021/2022 Human Development Report: Uncertain Times, Unsettled Lives: Shaping our future in a transforming world. New York. https://hdr.undp.org/system/files/documents/global-report-document/hdr2021-22pdf_1.pdf

UNFPA (United Nations Population Fund). 2013. "Teenage Pregnancy Is Way of Life in Remote Laotian Villages." Vientiane. https://www.unfpa.org/news/teenage-pregnancy-way-life-remote-laotian-villages.

———. 2018. Addressing the Patterns of Child Marriage, Early Union and Teen Pregnancy in Southeast Asia: A matter of urgency. Bangkok. https://asiapacific.unfpa.org/en/news/addressing-patterns-child-marriage-early-union-and-teen-pregnancy-southeast-asia-matter-urgency

———. 2019a. "Me, My Body, My Planet, My Future: The launch of new campaign engaging youth to take action on climate change, health and the global goals." Vientiane. https://lao.unfpa.org/en/news/me-my-body-my-planet-my-future-launch-new-campaign-engaging-youth-take-action-climate-change.

———. 2019b. "Empowering Lao Adolescent Girls by Implementing Noi Ecosystem." Vientiane. https://lao.unfpa.org/en/news/empowering-lao-adolescent-girls-implementing-noi-ecosystem

———. 2021a. "UNFPA Laos COVID-19 Response Report." Fact sheet. September. Vientiane. https://lao.unfpa.org/sites/default/files/pub-pdf/10sep21_6_months_covid19_response.pdf.

———. 2021b. "The Unstoppable Services Responding to Growing Demand from Adolescents and Youth in Laos During Covid-19." Vientiane. https://lao.unfpa.org/en/news/unstoppable-services-responding-growing-demand-adolescents-and-youth-laos-during-covid-19

———. 2021c. "Laotian LGBTQI Youth Find Peace, Purpose and Community." https://www.unfpa.org/news/laotian-lgbtqi-youth-find-peace-purpose-and-community.

———. 2022a. "UNFPA in Lao." Vientiane. https://lao.unfpa.org/en/unfpa-lao/ 2

———. 2022b. "UNFPA Strengthening Mental Health Psychosocial Support for Young People in Lao PDR." Vientiane. https://lao.unfpa.org/en/news/unfpa-strengthening-mental-health-psychosocial-support-young-people-lao-pdr.

UNICEF (United Nations Children's Fund). 2019. "Violence Against Children Survey in Lao PDR." Vientiane. https://www.unicef.org/laos/reports/vacsurvey-laos

———. 2020. Country Office Annual Report 2020, Lao People's Democratic Republic: Update on the context and situation of youth. Vientiane. https://www.unicef.org/media/100351/file/Lao-Peoples-Democratic-Republic-2020-COAR.pdf

———. 2021. "Adolescence and Youth. Adolescent and youth development and participation." https://www.unicef.org/laos/adolescence-and-youth#:~:text=Lao%20PDR%20has%20one%20of,1%2C000%20adolescent%20girls%2C%20respectively

UNODC (United Nations Office on Drugs and Crime). 2013. Transnational Organized Crime in East Asia and the Pacific: A threat assessment. https://sherloc.unodc.org/cld/uploads/res/bibliography/2013/transnational_organized_crime_in_east_asia_and_the_pacific_a_threat_assessment_html/TOCTA_EAP_web.pdf

———. 2015. Southeast Asia Opium Survey 2015, Lao PDR, Myanmar. https://www.unodc.org/documents/southeastasiaandpacific/Publications/2015/Southeast_Asia_Opium_Survey_2015_web.pdf

———. 2018. Migrant Smuggling in Asia and the Pacific: Current trends and challenges. Vol. II. https://www.unodc.org/documents/human-trafficking/Migrant-Smuggling/2018-2019/SOM_in_Asia_and_the_Pacific_II_July_2018.pdf.

———. 2021. Synthetic Drugs in East and Southeast Asia: Latest developments and challenges.

———. 2022. Synthetic Drugs in East and Southeast Asia: Latest developments and challenges

USAID (United States Agency for International Development). 2019. Laos Health Strategy 2019-2023. Washington, DC. https://www.usaid.gov/sites/default/files/documents/1861/USAID_Laos_Health_Strategy_2019-2023.pdf

Venkatapuram, S. 2020. "Human Capabilities and Pandemics." Journal of Human Development and Capabilities 21(3): 280-286.

Vientiane Times. 2016. "Unwanted Pregnancies Ranks as Top Issue Among Vientiane Youth." Vientiane. https://jclao.com/unwanted-pregnancies-ranks-top-issue-among-vientiane-youth/

Weichert, C. 2006. "Hospitals Survey April 2006 conducted in Friendship Hospital, Vientiane—Results." Vientiane: Handicap International Belgium.

WHO (World Health Organization). 2008. Closing the Gap in a Generation: Health equity through action on the social determinants of health. Final report of the Commission on Social Determinants of Health. https://www.who.int/publications/i/item/WHO-IER-CSDH-08.1

———. 2011. Women and Health in the Western Pacific Region: Remaining challenges and new opportunities. Manila. https://apps.who.int/iris/handle/10665/207493
———. 2018a. Global Status Report on Alcohol and Health 2018. Geneva. https://www.who.int/publications/i/item/9789241565639

———. 2018b. Overview of Lao Health System Development 2009-2018. Manila. https://apps.who.int/iris/bitstream/handle/10665/274721/9789290618621-eng.pdf?

———. 2019. "Maternal Mortality." Fact sheet. Geneva. https://www.who.int/news-room/fact-sheets/detail/maternal-mortality.

———. 2021. "Adolescent Health." https://www.who.int/health-topics/adolescent-health#tab=tab_1

———. . 2022. Global Health Expenditure Database. https://apps.who.int/nha/database/country_profile/Index/en
Wolff, J., and A. De-Shalit. 2007. Disadvantage. Oxford: Oxford University Press

World Bank. 1993. World Development Report 1993: Investing in health. Washington, DC. https://openknowledge.worldbank.org/handle/10986/5976

———. 2016. Nutrition in Lao PDR: Causes, determinants, and bottlenecks. Washington, DC. https://documents1.worldbank.org/curated/en/706941471934533652/pdf/107927-WP-P132582-PUBLIC-Nutrition-in-Lao-FA.pdf

———. 2021. "Speeding, Driving Under the Influence of Alcohol Common Among Drivers in Vientiane, Road Safety Survey Finds." Press release, 18 November. https://www.worldbank.org/en/news/press-release/2021/11/18/speeding-driving-under-the-influence-of-alcohol-common-among-drivers-in-vientiane-road-safety-survey-finds.

———. 2022. World Development Indicators. October. https://databank.worldbank.org/source/world-development-indicators

World Economic Forum. 2021. "Gender Parity Accelerators." https://www.weforum.org/projects/gender-parity-accelerators

World Vision International. 2021. "Unmasking II Report, Children Lost: Key findings—Lao PDR." Vientiane. https://reliefweb.int/sites/reliefweb.int/files/resources/Unmasking%20II%20-%20Childhood%20Lost%20-%20Laos%20final.pdf.
Ning Xai and Hieng Li. 2018. Loneliness, Social Isolation, and Cardiovascular Health. https://www.ncbi.nlm.nih.gov/pmc/articles/PMC5831910/

Xinhua. 2021. "11 Killed, 44 Injured in UXO Accidents in Laos During 2021." 9 December. http://www.news.cn/english/asiapacific/2021-12/09/c_1310361527.htm.

Zimmerman, E. B., S. H. Woolf and A. Haley. 2015. "Review of Behavioral and Social Sciences Research Opportunities: Innovations in population health metrics" Bethesda, MD: National Institutes of Health.






# ບົດທີ #5: ການພັດທະນາມະນຸດ ແລະ ສ້າງຄວາມເຂັ້ມແຂງໃຫ້ໄວໜຸ່ມ

ການມີສ່ວນຮ່ວມມີຄວາມສຳຄັນຢ່າງຍິ່ງຕໍ່ການມີສ່ວນຮ່ວມທາງສັງຄົມ, ການພັດທະນາເສດຖະກິດ ແລະ ຄວາມກ້າວໜ້າຂອງສິດທິມະນຸດທັງໝົດ. ຢູ່ໃນຖະແຫຼງການສາກົນກ່ຽວກັບສິດທິມະນຸດ, ການມີສ່ວນຮ່ວມແມ່ນພື້ນຖານສຳຄັນຂອງວາລະປີ 2030 ສຳລັບການພັດທະນາແບບຍືນຍົງ ແລະ ບັນດາເປົ້າໝາຍການພັດທະນາແບບຍືນຍົງ, ເຊິ່ງຮຽກຮ້ອງໃຫ້ມີການມີສ່ວນຮ່ວມຂອງ ທຸກປະເທດ, ທຸກພາກສ່ວນ ແລະ ທຸກຄົນ (United Nations, 2015).

ຜ່ານການເຂົ້າຮ່ວມການຕັດສິນໃຈທາງດ້ານສັງຄົມ, ເສດຖະກິດ ແລະ ການເມືອງ, ໄວໜຸ່ມໄດ້ຊີ້ນຳທາງເລືອກໃນການປັບປຸງຊີວິດຂອງຕົນ ແລະ ໂອກາດຂອງຕົນເອງໃຫ້ແກ່ຊຸມຊົນ ແລະ ສັງຄົມໃນວົງກວ້າງ ຈາກທັດສະນະການພັດທະນາມະນຸດແລ້ວ, ການມີສ່ວນຮ່ວມຂອງໄວໜຸ່ມໃນການຕັດສິນໃຈແມ່ນສຳຄັນຕໍ່ການສະທ້ອນເຖິງປະສົບການຊີວິດຂອງໄວໜຸ່ມ, ລວມທັງຜູ້ທີ່ດ້ອຍໂອກາດ ແລະ ມີຄວາມສ່ຽງ. ຂະບວນການດັ່ງກ່າວຍັງຊ່ວຍສ້າງທາງແກ້ໄຂຕໍ່ການພັດທະນາແບບຍືນຍົງ ທີ່ມີປະສິດຕິຜົນ ແລະ ຊ່ວຍໃຫ້ໄວໜຸ່ມສາມາດເປັນຜູ້ກຳນົດອະນາຄົດຂອງເຂົາເຈົ້າເອງໄດ້. ມັນເສີມສ້າງຄວາມອາດສາມາດຂອງໄວໜຸ່ມໃຫ້ຕອບສະໜອງຄວາມຕ້ອງການຂອງຕົນເອງ ແລະ ສາມາດເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບສິ່ງທ້າທາຍຂອງເຂົາເຈົ້າ ແລະ ການແກ້ໄຂທີ່ເປັນໄປໄດ້ຕໍ່ກັບສິ່ງທ້າທາຍດັ່ງກ່າວ ເຊິ່ງສາມາດຊ່ວຍຫຼຸດຜ່ອນຄວາມສ່ຽງຂອງພວກເຂົາຕໍ່ກັບຜົນກະທົບທາງດ້ານເສດຖະກິດ, ການເມືອງ ແລະ ສັງຄົມ. ການພັດທະນາແບບຍືນຍົງ, ຄວາມໄວ້ວາງໃຈຂອງສັງຄົມ ແລະ ການປ່ຽນແປງທາງສັງຄົມລ້ວນແຕ່ຂຶ້ນກັບການມີສ່ວນຮ່ວມຂອງໄວໜຸ່ມ.

ໃນຫຼາຍປະເທດທີ່ກຳລັງພັດທະນາ, ລວມທັງໃນອາຊີຕາເວັນອອກສຽງໃຕ້, ວາລະການພັດທະນາທີ່ໃຊ້ເວລາຫຼາຍປີສ່ວນໃຫຍ່ແມ່ນລັດຖະບານເປັນຈຸດສູນກາງ ຫຼື ມີຜູ້ໃຫ້ທຶນເປັນຜູ້ຂັບເຄື່ອນ. ການເປັນເຈົ້າການໂດຍຊຸມຊົນ ແລະ ຄວາມສອດຄ່ອງກັບຄວາມຕ້ອງການຂອງບຸກຄົນທີ່ມີສ່ວນກ່ຽວຂ້ອງແມ່ນບໍ່ເຂັ້ມແຂງ (O-In, 2019). ການໃຊ້ແນວທາງທີ່ກວ້າງຂວາງກວ່າ ແລະ ອາດມີຜົນກະທົບຫຼາຍກວ່ານັ້ນຈຳເປັນຕ້ອງສິ່ງເສີມການຮ່ວມມືເພື່ອການພັດທະນາ ເຊັ່ນ: ການເສີມສ້າງຂີດຄວາມສາມາດຂັ້ນທ້ອງຖິ່ນ ແລະ ສ້າງພື້ນທີ່ໃຫ້ປະຊາຊົນມີສ່ວນຮ່ວມ. ຜູ້ປະຕິບັດທຸກຄົນຄວນມີສ່ວນຮ່ວມລວມທັງໄວໜຸ່ມ.

ໃນ ສປປ ລາວ ສິ່ງນີ້ແມ່ນມີຄວາມສຳຄັນເປັນພິເສດ ເນື່ອງຈາກເກືອບ 60 ສ່ວນຮ້ອຍຂອງປະຊາກອນມີອາຍຸຕໍ່າກວ່າ 25 ປີ. ແຕ່ຍັງບໍ່ທັນມີກົນໄກທີ່ຈະແຈ້ງໃຫ້ແກ່ໄວໜຸ່ມໃນການປະຕິບັດບົດບາດໃນການນຳພາ. ຄວາມຮັບຮູ້ຂອງປະຊາຊົນກ່ຽວກັບໄວໜຸ່ມສະທ້ອນໃຫ້ເຫັນເຖິງການມີສ່ວນຮ່ວມໃນທົ່ວໂລກ, ບ່ອນທີ່ໄວໜຸ່ມມັກຈະເຫັນວ່າຕົນເອງຢູ່ໃນຂອບໃນການຕັດສິນໃຈດ້ານການພັດທະນາ (United Nations, 2020a). ບາງຄັ້ງສື່ມວນຊົນທ້ອງຖິ່ນກໍເວົ້າເຖິງໄວໜຸ່ມ, ໂດຍສະເພາະຜູ້ທີ່ເປັນນັກເຄື່ອນໄຫວເພື່ອການປ່ຽນແປງທາງສັງຄົມ ຄືວ່າເປັນຜູ້ສ້າງບັນຫາ ເຖິງວ່າໄວໜຸ່ມສ່ວນຫຼາຍຈະມີສ່ວນຮ່ວມໃນກິດຈະກຳທີ່ເຮັດໃຫ້ມີການປ່ຽນແປງທີ່ດີໃນຊຸມຊົນ.

ໄວໜຸ່ມມັກຈະຖືກພິຈາລະນາເປັນຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ນະໂຍບາຍເປັນສ່ວນໃຫຍ່. ໃນຂະນະທີ່ການລິເລີ່ມດັ່ງກ່າວເຮັດເພື່ອຜົນປະໂຫຍດຂອງໄວໜຸ່ມ, ບັນຫາຄວນໄດ້ຮັບການພັດທະນາ ແລະ ນຳພາໂດຍໄວໜຸ່ມເຊັ່ນກັນ. ຄຳສຸພາສິດທີ່ວ່າ "ໄວໜຸ່ມແມ່ນຜູ້ນຳໃນອະນາຄົດ" ຕ້ອງໄດ້ເຮັດໃຫ້ເປັນຈິງ ເພື່ອສ້າງບົດບາດຜູ້ນຳທີ່ຊັດເຈນຫຼາຍຂຶ້ນສຳລັບໄວໜຸ່ມໃນປັດຈຸບັນ. ໄວໜຸ່ມເປັນແຫຼ່ງສຳຄັນຂອງການປ່ຽນແປງທາງດ້ານສັງຄົມທີ່ມີນະວັດກຳທີ່ສາມາດຂັບເຄື່ອນການພັດທະນາມະນຸດ ແລະ ສ້າງຜົນປະໂຫຍດຈາກການປັນຜົນທາງປະຊາກອນ. ເມື່ອພວກເຂົາມີຄວາມເຂັ້ມແຂງ ແລະ ໄດ້ຮັບການພັດທະນາ, ສັງຄົມຈະໄດ້ຮັບຜົນປະໂຫຍດໃນຫຼາຍດ້ານ (Maconachie, 2014; Powers and Tiffany, 2006). ໃນຂະນະທີ່ມີຫຼັກຖານເພີ່ມຫຼາຍຂຶ້ນກ່ຽວກັບຜົນປະໂຫຍດທີ່ຊັດເຈນຂອງການເສີມສ້າງການມີສ່ວນຮ່ວມຂອງໄວໜຸ່ມໃນການພັດທະນາ, ຄຳຖາມສຳລັບຜູ້ທີ່ພ້ອມທີ່ຈະເຮັດວຽກກັບໄວໜຸ່ມຈຶ່ງບໍ່ແມ່ນ 'ເປັນຫຍັງ', ແຕ່ 'ເຮັດແນວໃດ' ໃຫ້ທີ່ດີທີ່ສຸດທີ່ຈະມີສ່ວນຮ່ວມກັບໄວໜຸ່ມ.

### ກ່ອງເນື້ອໃນ 5.1

ມີຄວາມຄືບໜ້າບາງຢ່າງ ກ່ຽວກັບບັນທັດຖານດ້ານລົບຕໍ່ກັບການມີສ່ວນຮ່ວມຂອງໄວໜຸ່ມເຊິ່ງເຫັນໄດ້ຊັດເຈນໃນທົ່ວອາຊີ ແລະ ປາຊີຟິກໄດ້ເປັນແຮງຈູງໃຈໃຫ້ບັນດາປະເທດ ທີ່ກຳລັງສະ

ໜັບສະໜູນໄວໜຸ່ມໃນປະເທດຂອງຕົນໃຫ້ເປັນຜູ້ນຳພາການພັດທະນາ, ໂດຍສະເພາະແມ່ນການປະດິດສ້າງຂອງໄວໜຸ່ມ ແລະ ການເປັນຜູ້ປະກອບການ, ເຊິ່ງເປັນໂຄງການທີ່ຈະເພີ່ມຂຶ້ນໃນຊຸມປີຕໍ່ໜ້າ (Youth Co:Lab, 2021). ໄວໜຸ່ມທົ່ວໂລກມີສ່ວນຮ່ວມຫຼາຍຂຶ້ນໃນການເຄື່ອນໄຫວຂອງຊຸມຊົນ, ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລະ ການປ່ຽນແປງພູມອາກາດ. ຄົນອື່ນກຳລັງເຂົ້າຮ່ວມ ຫຼື ກໍ່ຕັ້ງເວບທີສຳລັບການສະໜັບສະໜູນນະໂຍບາຍ. ສປປ ລາວ ໄດ້ໃຫ້ຄຳໝັ້ນສັນຍາອັນສຳຄັນ ເພື່ອເປີດໂອກາດໃຫ້ໄວໜຸ່ມໄດ້ສະແດງຄວາມຄິດເຫັນ. ໃນການປະຕິບັດບັນດາຄຳໝັ້ນສັນຍາດ້ານນະໂຍບາຍດັ່ງກ່າວ, ໂດຍສະໜອງໂອກາດທີ່ມີຄວາມໝາຍເປັນເອກະພາບ ແລະ ປອດໄພໃຫ້ແກ່ການເຂົ້າຮ່ວມ, ໄວໜຸ່ມສາມາດມີສ່ວນຮ່ວມທີ່ດີຂຶ້ນໃນການພັດທະນາ ແລະ ປະຕິບັດບັນດານະໂຍບາຍທີ່ປະກອບສ່ວນເຂົ້າໃນສັງຄົມຢ່າງຕັ້ງໜ້າ, ຊຸກຍູ້ການເປັນເຈົ້າການຂອງໄວໜຸ່ມໃນການຕັດສິນໃຈໃນປັດຈຸບັນ ແລະ ຮັບປະກັນການມີສ່ວນຮ່ວມຢ່າງຕໍ່ເນື່ອງໃນໄລຍະຍາວ.

ບົດນີ້ ກ່າວເຖິງການພັດທະນາມະນຸດສຳລັບການມີສ່ວນຮ່ວມຂອງໄວໜຸ່ມ ແລະ ໃຫ້ພາບລວມຂອງບັນຫາໃນ ສປປ ລາວ, ລາຍລະອຽດກ່ຽວກັບເວທີການມີສ່ວນຮ່ວມ ແລະ ຜົນການສຳຫຼວດ ແລະ ການສົນທະນາກຸ່ມຈຸດສຸມກັບໄວໜຸ່ມ. ນອກນັ້ນ ບົດນີ້ຍັງທົບທວນຄືນບັນດາສິ່ງກີດຂວາງໃນການມີສ່ວນຮ່ວມໃນປັດຈຸບັນ ແລະ ອະທິບາຍບົດສະຫຼຸບເບື້ອງຕົ້ນກ່ຽວກັບວິທີການແກ້ໄຂຊ່ອງຫວ່າງການມີສ່ວນຮ່ວມ ເພື່ອໃຫ້ໄວໜຸ່ມສາມາດເປັນຜູ້ຂັບເຄື່ອນການພັດທະນາທີ່ຍືນຍົງ.

**ໄວໜຸ່ມທົ່ວໂລກມີສ່ວນຮ່ວມຫຼາຍຂຶ້ນໃນການເຄື່ອນໄຫວຂອງຊຸມຊົນ,ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລະ ການປ່ຽນແປງພູມອາກາດ.**

## 5.1 ການພັດທະນາມະນຸດ ຕ້ອງການການມີສ່ວນຮ່ວມຂອງໄວໜຸ່ມ ແລະ ການມີສ່ວນຮ່ວມຂອງພົນລະເມືອງ

ເພື່ອເຮັດໃຫ້ການມີສ່ວນຮ່ວມຂອງໄວໜຸ່ມມີຄວາມໝາຍ, ໄວໜຸ່ມ ແລະ ອົງການຈັດຕັ້ງທີ່ນຳພາໂດຍໄວໜຸ່ມຕ້ອງມີສິດເສລີພາບ ແລະ ໂອກາດໃນການມີສ່ວນຮ່ວມໃນທຸກລະດັບ (ກ່ອງເນື້ອໃນ 5.1). ການພັດທະນາມະນຸດທັງປະກອບສ່ວນຕໍ່ການພັດທະນາໄວໜຸ່ມ ແລະ ກໍໄດ້ຮັບຜົນປະໂຫຍດຈາກການມີສ່ວນຮ່ວມຂອງໄວໜຸ່ມ. ທ່ານ Amartya Sen, ຜູ້ທີ່ໃຫ້ແນວທາງຄວາມຄິດສຳລັບວິທີການພັດທະນາມະນຸດ ໄດ້ນິຍາມເສລີພາບວ່າເປັນ "ສິ່ງທີ່ບຸກຄົນມີອິດສະຫຼະທີ່ຈະເຮັດ ແລະ ບັນລຸເປົ້າໝາຍ ຫຼື ຄຸນຄ່າໃດກໍ່ຕາມທີ່ລາວຖືວ່າມີຄວາມສຳຄັນ" (Sen, 1985). ບຸກຄົນທີ່ມີສິດເສລີພາບແມ່ນ "ຜູ້ທີ່ປະຕິບັດ ແລະ ນຳເອົາການປ່ຽນແປງ ແລະ ຜົນສຳເລັດສາມາດຖືກຕັດສິນໄດ້ຈາກຄຸນຄ່າ ແລະ ຈຸດປະສົງຂອງຕົນເອງ, ເຖິງແມ່ນວ່າພວກເຮົາຈະປະເມີນມັນຢູ່ໃນເງື່ອນໄຂພາຍນອກບາງຢ່າງກໍຕາມ" (Sen, 1999).

ເນື່ອງຈາກວ່າການພັດທະນາຂອງມະນຸດແມ່ນພື້ນຖານກ່ຽວກັບການຂະຫຍາຍທາງເລືອກທີ່ມີໃຫ້ແກ່ບຸກຄົນ ແລະ ໂດຍການຂະຫຍາຍລົງເລິກເຖິງຄວາມອຸດົມສົມບູນຂອງຊີວິດຂອງມະນຸດ, ມັນຈຳເປັນຕ້ອງເພີ່ມຄວາມອາດສາມາດຂອງມະນຸດ ຫຼື ສິດເສລີພາບໃນການບັນລຸຄວາມເປັນຢູ່ທີ່ດີໂດຍຜ່ານທິດທາງຂອງຕົນເອງທີ່ແທ້ຈິງ. ແຕ່ລະຄົນຕ້ອງສາມາດກຳນົດອະນາຄົດຂອງຕົນເອງໃນຖານະເປັນບຸກຄົນ ແລະ ໃນຖານະສະມາຊິກຂອງຊຸມຊົນຕ່າງໆ. 'ເສລີພາບ' ໃນການເພີ່ມທາງເລືອກ ແລະ ຄວາມອາດສາມາດນີ້ໄດ້ອ້າງອີງມາຈາກ Sen ແມ່ນມີຢູ່ສອງ ອົງປະກອບ. ອົງປະກອບທຳອິດ, ລັກສະນະຂະບວນການທີ່ກ່ຽວຂ້ອງກັບຄວາມສາມາດໃນການປະຕິບັດງານໃນເລື່ອງທີ່ສຳຄັນ (ຄວາມອາດສາມາດໃນການປະຕິບັດ), ເຊັ່ນ: ຜ່ານສະຖາບັນ, ການເຄື່ອນໄຫວ ແລະ ການມີສ່ວນຮ່ວມຂອງພົນລະເມືອງ. ອົງປະກອບທີສອງ, ລັກສະນະຂອງໂອກາດແມ່ນຄວາມສາມາດໃນການບັນລຸໜ້າທີ່ທີ່ມີຄຸນຄ່າ, ເຊິ່ງຖືກຄັດເລືອກຈາກບັນດາຄວາມສາມາດຕ່າງໆ. ດັ່ງນັ້ນ, "ໂອກາດທາງສັງຄົມເພື່ອຂະຫຍາຍພື້ນທີ່ຂອງຄວາມອາດສາມາດ ແລະ ເສລີພາບຂອງມະນຸດ" ໄດ້ຖືກເຫັນວ່າເປັນທັງສອງວິທີທີ່ຈະ ຂະຫຍາຍເສລີພາບໃນຕົວຂອງມັນເອງ. ຈາກທັດສະນະນີ້, ການພັດທະນາມະນຸດໂດຍພື້ນຖານແລ້ວເປັນ "ວິທີການທີ່ເອົາປະຊາຊົນເປັນໃຈກາງ", ເຊິ່ງເຮັດໃຫ້ມະນຸດເປັນຜູ້ກະທຳ (ແທນທີ່ໃຫ້ເປັນອົງການຈັດຕັ້ງ ເຊັ່ນ: ບັນດາແຫຼ່ງການຄ້າຂາຍ ຫຼື ລັດຖະບານ) ເປັນໃຈກາງ" (Dr ze and Sen, 2002).

ໃນແງ່ຂອງຊີວິດປະຈຳວັນ, ນີ້ໝາຍຄວາມວ່າໃນຂະນະທີ່ການໃຫ້ຄວາມຮູ້ແກ່ໄວໜຸ່ມເປັນການສ້າງທັກສະຂອງເຂົາເຈົ້າ, ແຕ່ກໍມີປະໂຫຍດພຽງເລັກນ້ອຍຖ້າພວກເຂົາບໍ່ສາມາດເຂົ້າຫາວຽກ ຫຼື ຂາດທັກສະທີ່ເໝາະສົມກັບຕະຫຼາດແຮງງານທ້ອງຖິ່ນ. ບົດທີ່ຜ່ານມາໄດ້ປຶກສາຫາລືກ່ຽວກັບການພັດທະນາສີມືແຮງງານ ແລະ ຕະຫຼາດແຮງງານທີ່ບໍ່ສອດຄ່ອງກັນ. ແຕ່ເພື່ອກ້າວໄປໜ້າອີກຂັ້ນໜຶ່ງ, ໄວໜຸ່ມຍັງຕ້ອງການວິທີທີ່ຈະມີສ່ວນຮ່ວມກັບຜູ້ຄົນ, ນະໂຍບາຍ ແລະ ແມ່ນແຕ່ສະຖານທີ່ທີ່ມີອິດ





### ກ່ອງເນື້ອໃນ 5.1: ນິຍາມຂອງການເຂົ້າຮ່ວມ, ການປະກອບສ່ວນຂອງໜ່ວຍງານ, ການມີສ່ວນຮ່ວມຂອງພົນລະເມືອງ ແລະ ພື້ນທີ່ຂອງພົນລະເມືອງ

ມີຫຼາຍຄຳນິຍາມການເຮັດວຽກຂອງການມີສ່ວນຮ່ວມຂອງໄວໜຸ່ມ ແລະ ພື້ນທີ່ຂອງພົນລະເມືອງ. ຕົວຢ່າງ: ຖະແຫຼງການຮ່ວມໃນປີ 2011 ຂອງບັນດາຫົວໜ້າອົງການສະຫະປະຊາຊາດຂອງເຄືອຂ່າຍລະຫວ່າງໜ່ວຍງານດ້ານການພັດທະນາໄວໜຸ່ມ (Inter-agency Network on Youth Development) ໄດ້ເນັ້ນຄຳໝາຍໝັ້ນວ່າ: ການມີສ່ວນຮ່ວມຂອງໄວໜຸ່ມຢ່າງເຕັມທີ່ ແລະ ມີປະສິດຕິພາບໃນສັງຄົມ ແລະ ການຕັດສິນໃຈ ທັງໃນຊົນນະບົດ ແລະ ຕົວເມືອງ, ສູ້ຊົນລວມເອົາໄວໜຸ່ມພິການ, ໄວໜຸ່ມທີ່ຕິດເຊື້ອເອສໄອວີ, ໄວໜຸ່ມພື້ນເມືອງ, ໄວໜຸ່ມຈາກຊົນເຜົ່າສ່ວນໜ້ອຍ, ໄວໜຸ່ມທີ່ອົບພະຍົບ, ໄວໜຸ່ມທີ່ບໍ່ມີສັນຊາດ,ຜູ້ຍົກຍ້າຍຖິ່ນຖານພາຍໃນປະເທດ, ໄວໜຸ່ມທີ່ລີ້ໄພ ຫຼື ຜູ້ທີ່ໄດ້ຮັບຜົນກະທົບຈາກສະຖານະການດ້ານມະນຸດສະທຳ ຫຼື ການປະທະກັນດ້ວຍອາວຸດ (UNECE, 2011).

ເວທີ YouthPower ກຳນົດການມີສ່ວນຮ່ວມຂອງໄວໜຸ່ມທີ່ມີຄວາມໝາຍຄື:

*...ການຮ່ວມມືທີ່ມີສ່ວນຮ່ວມ, ມີຄວາມຕັ້ງໃຈ, ເຄົາລົບເຊິ່ງກັນ ແລະ ກັນລະຫວ່າງໄວໜຸ່ມ ແລະ ຜູ້ໃຫຍ່ ເຊິ່ງມີອຳນາດຮ່ວມກັນ,ການປະກອບສ່ວນຕາມລຳດັບແມ່ນມີຄຸນຄ່າ ແລະ ແນວຄວາມຄິດ, ທັດສະນະ, ທັກສະ ແລະ ກຳລັງແຮງຂອງໄວໜຸ່ມໄດ້ຖືກລວມເຂົ້າໃນການອອກແບບ ແລະ ການສົ່ງມອບແຜນງານ,ຍຸດທະສາດ, ນະໂຍບາຍ, ກົນໄກການສະໜອງທຶນ ແລະ ອົງການຈັດຕັ້ງທີ່ມີຜົນກະທົບຕໍ່ຊີວິດ ແລະ ຊຸມຊົນຂອງເຂົາເຈົ້າ, ຫຼາຍປະເທດ ແລະ ທົ່ວໂລກ. ການມີສ່ວນຮ່ວມຂອງໄວໜຸ່ມທີ່ມີຄວາມໝາຍຮັບຮູ້ ແລະ ສະແຫວງຫາການປ່ຽນແປງໂຄງສ້າງອຳນາດທີ່ກີດຂວາງບໍ່ໃຫ້ໄວໜຸ່ມຖືກພິຈາລະນາວ່າເປັນຜູ້ຊ່ຽວຊານກ່ຽວກັບຄວາມຕ້ອງການ ແລະ ບຸລິມະສິດຂອງຕົນເອງ, ພ້ອມດຽວກັນນັ້ນກໍ່ຍັງສ້າງຄວາມສາມາດໃນການເປັນຜູ້ນຳຂອງພວກເຂົາ... (United Nations, 2020)*

ກ່ຽວກັບພື້ນທີ່ຂອງພົນລະເມືອງ, ບົດລາຍງານຂອງອົງການສະຫະປະຊາຊາດໂດຍທູດໄວໜຸ່ມຂອງເລຂາທິການໃຫຍ່ກ່າວວ່າ:

*...ສະພາບແວດລ້ອມເຮັດໃຫ້ປະຊາຊົນ ແລະ ກຸ່ມຄົນຕ່າງໆ ຫຼື – ນັກເຄື່ອນໄຫວໃນພື້ນທີ່ຂອງພົນລະເມືອງ – ມີສ່ວນຮ່ວມຢ່າງມີຄວາມໝາຍໃນຊີວິດທາງດ້ານການເມືອງ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳຂອງສັງຄົມຂອງເຂົາເຈົ້າບັນດານັກເຄື່ອນໄຫວໃນພື້ນທີ່ຂອງພົນລະເມືອງຄວນສາມາດສະແດງອອກຢ່າງເສລີທີ່ຢູ່ໃນຄວາມປອດໄພຢ່າງເຕັມທີ່ ແລະ ສົ່ງຜົນຕໍ່ການປ່ຽນແປງຢ່າງສັນຕິ ແລະ ມີປະສິດທິຜົນ* (Izsák-Ndiaye, 2021).

UNICEF ກຳນົດການມີສ່ວນຮ່ວມຂອງພົນລະເມືອງຄື: ການກະທຳສ່ວນບຸກຄົນ ຫຼື ສ່ວນລວມທີ່ປະຊາຊົນມີສ່ວນຮ່ວມເພື່ອປັບປຸງຄວາມເປັນຢູ່ຂອງຊຸມຊົນ ຫຼື ສັງຄົມໂດຍທົ່ວໄປ. (UNICEF, 2020)



ທີ່ມີຜົນຕໍ່ຊີວິດຂອງພວກເຂົາ. ລວມທັງການກຳນົດທາງເລືອກທີ່ມີອິດທິພົນຕໍ່ແຮງບັນດານໃຈໃນການຈ້າງງານ. ການມີສ່ວນຮ່ວມຫຼາຍຂຶ້ນໄດ້ສ້າງເງື່ອນໄຂທີ່ຈຳເປັນໃຫ້ແກ່ໄວໜຸ່ມເພື່ອຂະຫຍາຍສິດເສລີໃນການເລືອກ ແລະ ໄດ້ຮັບໂອກາດໃນຊີວິດທີ່ພວກເຂົາເລືອກ ແລະ ມີຄຸນຄ່າ.

ໄວໜຸ່ມທີ່ມີສ່ວນຮ່ວມໃນການກຳນົດແນວທາງການພັດທະນາມະນຸດໃນ ສປປ ລາວ ຈະສົ່ງຜົນກະທົບຕໍ່ຊີວິດປັດຈຸບັນ ແລະ ຊີວິດທີ່ເຂົາເຈົ້າສາມາດຄາດຫວັງໄດ້ວ່າ ຈະມີຄວາມສຸກໃນການກ້າວເຂົ້າສູ່ການເປັນຜູ້ໃຫຍ່. ການມີສ່ວນຮ່ວມຈະສ້າງສະຖານະການໃຫ້ເຂົາເຈົ້າມີການປະກອບສ່ວນຫຼາຍຂຶ້ນ ແລະ ດີຂຶ້ນໃນສັງຄົມ ແລະ ການພັດທະນາແບບຍືນຍົງ. ແນວໃດກໍຕາມ, ປະສິດທິຜົນຂອງການປະກອບສ່ວນຂອງພວກເຂົາຂຶ້ນກັບວ່າການມີສ່ວນຮ່ວມເກີດຂຶ້ນຢູ່ໃສ  ແລະ ມີວິທີການແນວໃດ, ຄຽງຄູ່ກັບນະໂຍບາຍ ແລະ ການປະຕິບັດຂອງລັດຖະບານທີ່ສະໜັບສະໜູນໄວໜຸ່ມທຸກກຸ່ມເຂົ້າຮ່ວມ (ກ່ອງເນື້ອໃນ 5.2).

ກ່ອງເນື້ອໃນ 5.2

## ຮູບແບບການມີສ່ວນຮ່ວມ

ການມີສ່ວນຮ່ວມຂອງໄວໜຸ່ມສາມາດມີຫຼາຍຮູບຫຼາຍແບບ, ຈາກຊ່ອງທາງການເມືອງຢ່າງເປັນທາງການເຖິງຊ່ອງທາງພົນລະເມືອງທີ່ບໍ່ເປັນທາງການ. ການມີສ່ວນຮ່ວມທາງດ້ານການເມືອງຢ່າງເປັນທາງການສາມາດປະກອບມີການຊຸມນຸມຂອງໄວໜຸ່ມ ຫຼື ສະພາ ຕະຫຼອດເຖິງການມີສ່ວນຮ່ວມຂອງໄວໜຸ່ມໃນດ້ານການເມືອງຢູ່ທີ່ໂຮງຮຽນ. ການມີສ່ວນຮ່ວມທີ່ບໍ່ເປັນທາງການມັກຈະມີການກ່ຽວຂ້ອງກັບການມີສ່ວນຮ່ວມໃນໂຮງຮຽນ, ຫ້ອງສະໝຸດ  ແລະ ອົງການຈັດຕັ້ງທາງສາສະໜາ, ສິລະປະ, ກິລາ ແລະ ພົນລະເມືອງ (Saito and Sullivan, 2011). ອາສາສະໝັກໃນກິດຈະກຳທີ່ນຳພາໂດຍໄວໜຸ່ມ ຫຼື ຊຸມຊົນຍັງຄົງເປັນທາງເລືອກທີ່ເປັນທີ່ນິຍົມຂອງໄວໜຸ່ມທີ່ຈະມີສ່ວນຮ່ວມໃນການພັດທະນາທ້ອງຖິ່ນ.

ທ່າມກາງທ່າອ່ຽງການມີສ່ວນຮ່ວມທາງອອນລາຍທີ່ເພີ່ມຂຶ້ນ, ໄວໜຸ່ມໃຊ້ສື່ສັງຄົມອອນລາຍ ແລະ ເຕັກໂນໂລຊີທາງມືຖືອື່ນໆເພື່ອເຂົ້າເຖິງ ແລະ ແບ່ງປັນຂໍ້ມູນ (LYU, 2021), ສະແດງຄຳຄິດຄຳເຫັນກ່ຽວກັບບັນຫາສັງຄົມ ແລະ ແມ່ນແຕ່ການໂຄສະນາການປ່ຽນແປງ. ຂໍ້ມູນຈາກ 11 ປະເທດສະແດງໃຫ້ເຫັນວ່າລະຫວ່າງ 43 ສ່ວນຮ້ອຍ ຫາ 64 ສ່ວນຮ້ອຍ ຂອງຄົນທີ່ມີອາຍຸ 9-17 ປີ ຊອກຫາຂ່າວທາງອິນເຕີເນັດ, ໃນຂະນະທີ່ເດັກນ້ອຍ 12 ສ່ວນຮ້ອຍ ຫາ 27 ສ່ວນຮ້ອຍ ສົນທະນາບັນຫາທາງສັງຄົມຢູ່ທີ່ນັ້ນ (UNICEF, 2020). ການມີສ່ວນຮ່ວມທາງອອນລາຍສາມາດສົ່ງເສີມການມີສ່ວນຮ່ວມກັບໄວໜຸ່ມ ແລະ ຜູ້ມີອຳນາດຕັດສິນໃຈຄົນອື່ນໆໄດ້ຫຼາຍຂຶ້ນ ເຮັດໃຫ້ເຂົ້າເຖິງໄດ້ກວ້າງກວ່າການມີສ່ວນຮ່ວມໃນສັງຄົມຮູບແບບຕ່າງໆ.

ການມີສ່ວນຮ່ວມໃນປະເພດຕ່າງໆມີສິ່ງທີ່ຄ້າຍຄືກັນ ເປັນຕົ້ນແມ່ນການເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບສິ່ງທ້າທາຍທີ່ໄວໜຸ່ມພວມປະເຊີນ, ສ້າງເວທີເພື່ອແກ້ໄຂບັນຫາ ແລະ ນະວັດຕະກຳທີ່ນຳພາໂດຍໄວໜຸ່ມ ແລະ ການສ້າງຄວາມອາດສາມາດ ແລະ ການສ້າງຄວາມເຂັ້ມແຂງ. ການມີສ່ວນຮ່ວມສາມາດກາຍເປັນການປ່ຽນແປງທາງດ້ານສັງຄົມທີ່ນຳພາໂດຍໄວໜຸ່ມໃນຫຼາຍໆຢ່າງ (Christensen, Korgman and Parlee, 2010), ເຊັ່ນ: ສຸຂະພາບ ແລະ ຄວາມປອດໄພຂອງມະນຸດ (Weinstock et al., 2004); ສິດທິມະນຸດ ແລະ ປະຊາທິປະໄຕ (Jahromi, Crocetti and Buchanan, 2012); ຄວາມສະເໝີພາບ, ການສ້າງຄວາມເຂັ້ມແຂງ ແລະ ຄວາມຍຸຕິທຳທາງສັງຄົມ (Wilson, 2000); ການສຶກສາ (Connell, Spencer and Aber, 2004); ວິທະຍາສາດ, ທຸລະກິດ, ເຕັກໂນໂລຊີ ແລະ ການພັດທະນາ (Ho et al., 2009) ແລະ ວັດທະນະທຳ ແລະ ສາສະໜາ (Ary, Duncan ແລະ Hops, 1999).

ພາກສ່ວນຕໍ່ໄປນີ້ສະແດງໃຫ້ເຫັນວ່າ ແກ່ນຂອງການປະຕິບັດໃນທາງບວກຂອງໄວໜຸ່ມໄດ້ເຕີບໃຫຍ່ຢູ່ໃນ ສປປ ລາວ (ກ່ອງເນື້ອໃນ 5.3). ຖ້າສິ່ງເຫຼົ່ານີ້ສາມາດເປັນຮາກຖານໃນການພັດທະນາມະນຸດ, ພວກເຂົາມອບຄຳໝັ້ນສັນຍາອັນໃຫຍ່ຫຼວງທີ່ຈະເຕີບໂຕໄປສູ່ການແບ່ງປັນປະຊາກອນທີ່ມີປະສິດທິພາບ.

ກ່ອງເນື້ອໃນ 5.3

# 5.2 ການປະເມີນການມີສ່ວນຮ່ວມຂອງໄວໜຸ່ມໃນ ສປປ ລາວ

ເຖິງວ່າຈະມີຫຼັກຖານຂອງການມີສ່ວນຮ່ວມຂອງໄວໜຸ່ມໃນລະດັບໜຶ່ງ, ສປປ ລາວ ມີຂໍ້ມູນພຽງເລັກນ້ອຍທີ່ຈະລະບຸທ່າອ່ຽງທີ່ຊັດເຈນຂອງອັດຕາການມີສ່ວນຮ່ວມ ແລະ ຄຸນນະພາບຂອງການມີສ່ວນຮ່ວມ. ການວິເຄາະສະຖານະການເຍົາວະຊົນ ແລະ ໄວໜຸ່ມ ສປປ ລາວ ໄດ້ເນັ້ນໃຫ້ແນວຄິດ






## ກ່ອງເນື້ອໃນ 5.2: ຄວາມເຫັນດີເຫັນພ້ອມຂອງສາກົນກ່ຽວກັບການເຂົ້າຮ່ວມ ແລະ ມີສ່ວນຮ່ວມຂອງໄວໜຸ່ມ

ການເຂົ້າຮ່ວມຂອງໄວໜຸ່ມມີຄວາມໝາຍທີ່ຫຼາກຫຼາຍ. ສຳລັບບາງຄົນ, ຈຸດສຸມແມ່ນຮັບປະກັນໃຫ້ໄວໜຸ່ມເຂົ້າຮ່ວມໂຄງການທີ່ມີຄຸນນະພາບສູງ. ສຳລັບຄົນອື່ນ, ມັນແມ່ນກ່ຽວກັບການຊ່ວຍໃຫ້ໄວໜຸ່ມຊອກຫາກິດຈະກຳທີ່ພວກເຂົາມັກ. ສຳລັບຄົນອື່ນ, ການມີສ່ວນຮ່ວມຂອງໄວໜຸ່ມໝາຍເຖິງການໃຫ້ຄວາມສຳຄັນກັບຄວາມຄິດເຫັນຂອງໄວໜຸ່ມ ແລະ ເບິ່ງບັນຫາທີ່ມີຜົນກະທົບຕໍ່ພວກເຂົາ.

ສົນທິສັນຍາວ່າດ້ວຍສິດທິເດັກທີ່ລົງນາມໂດຍຜູ້ຕາງໜ້າຂອງ 196 ປະເທດ ລວມທັງ ສປປ ລາວ, ເນັ້ນໜັກວ່າໄວໜຸ່ມມີສິດທີ່ຈະໄດ້ຍິນສຽງຂອງພວກເຂົາ. ສິດທິໃນການບໍ່ເລືອກປະຕິບັດ (ມາດຕາ 1) ແລະ ສິດເສລີໃນການສະແດງອອກ (ມາດຕາ 13) ສ້າງໜ້າທີ່ໃຫ້ລັດຖະບານສ້າງສະພາບແວດລ້ອມໃຫ້ໄວໜຸ່ມມີອິດທິພົນຕໍ່ການຕັດສິນໃຈ ແລະ ນະໂຍບາຍ.

ໃນວາລະປີ 2030, ຊຶ່ງໄດ້ຮັບການຮັບຮອງເອົາໂດຍບັນດາປະເທດສະມາຊິກຂອງສະຫະປະຊາຊາດໃນປີ 2015, ຮັບຮູ້ວ່າເດັກນ້ອຍ ແລະ ໄວໜຸ່ມຜູ້ຍິງ ແລະ ຜູ້ຊາຍແມ່ນຕົວຊີ້ບອກທີ່ສຳຄັນຂອງການປ່ຽນແປງ ແລະ ຈະພົບເຫັນຢູ່ໃນເປົ້າໝາຍໃໝ່ນີ້ຈະເປັນເວທີເພື່ອສະໜອງຄວາມສາມາດທີ່ບໍ່ມີຂອບເຂດຂອງພວກເຂົາສຳລັບການເຄື່ອນໄຫວໄປສູ່ການສ້າງໂລກທີ່ດີກວ່າ.ໃນປີດຽວກັນ, ສະພາຄວາມໝັ້ນຄົງອົງການສະຫະປະຊາຊາດໄດ້ຮັບຮອງເອົາມະຕິເລກທີ 2250 ກ່ຽວກັບໄວໜຸ່ມ, ສັນຕິພາບ ແລະ ຄວາມໝັ້ນຄົງ. ຢືນຢັນວ່າ ໄວໜຸ່ມມີບົດບາດສຳຄັນ ແລະ ເປັນແຮງຊຸກຍູ້ ທາງບວກໃນການຮັກສາ ແລະ ສົ່ງເສີມສັນຕິພາບ ແລະ ຄວາມໝັ້ນຄົງສາກົນ ແລະ ຮຽກຮ້ອງບັນດາປະເທດສະມາຊິກໃຫ້ໄວໜຸ່ມມີສິດມີສຽງໃນການຕັດສິນໃຈທຸກຂັ້ນຂອງຂະບວນການສັນຕິພາບ ແລະ ຄວາມສາມັກຄີທາງສັງຄົມ.

ສະຫະປະຊາຊາດໄດ້ຮັບຮູ້ມາດົນແລ້ວວ່າ ໄວໜຸ່ມແມ່ນຊັບພະຍາກອນມະນຸດທີ່ສຳຄັນໃນການພັດທະນາ ແລະ ເປັນຕົວແທນທີ່ສຳຄັນໃນການປ່ຽນແປງທາງສັງຄົມ, ການເຕີບໂຕດ້ານເສດຖະກິດ ແລະ ການປະດິດສ້າງດ້ານເຕັກໂນໂລຊີ. ປີ 1995, ເນື່ອງໃນໂອກາດສະເຫຼີມສະຫຼອງຄົບຮອບ 10 ປີ ຂອງໄວໜຸ່ມສາກົນ, ສະຫະປະຊາຊາດໄດ້ຮັບຮອງເອົາໂຄງການດຳເນີນງານຂອງໄວໜຸ່ມໂລກເປັນຍຸດທະສາດສາກົນເພື່ອເພີ່ມທະວີການເຂົ້າຮ່ວມຂອງໄວໜຸ່ມ. ໃນປີ 2018 ໄວໜຸ່ມ 2030, ຍຸດທະສາດໄວໜຸ່ມທົ່ວປະເທດຂອງອົງການສະຫະປະຊາຊາດໄດ້ກາຍເປັນກອບການເຮັດວຽກຫຼັກເພື່ອເພີ່ມທະວີການຮ່ວມມືກັບໄວໜຸ່ມ. ຍຸດທະສາດແນໃສ່ຂະຫຍາຍການເຄື່ອນໄຫວລະດັບໂລກ, ພາກພື້ນ ແລະ ໃນລະດັບປະເທດເພື່ອຕອບສະ ໜອງຄວາມຕ້ອງການ, ສ້າງຄວາມອາດສາດມາດ ແລະ ຊຸກຍູ້ສິດຂອງໄວໜຸ່ມໃນທຸກຂົງເຂດ, ຮັບປະກັນການມີສ່ວນຮ່ວມ ແລະ ການເຂົ້າຮ່ວມໃນການປະຕິບັດ, ກວດກາ ແລະ ຕິດຕາມວາລະປີ 2030 ເຊັ່ນດຽວກັນກັບກອບການປະຕິບັດງານແຫ່ງຊາດ.

ປີ 2021, ທູດພິເສດດ້ານໄວໜຸ່ມຂອງອົງການສະຫະປະຊາຊາດໄດ້ອອກບົດລາຍງານທົ່ວໂລກທີ່ມີຫົວຂໍ້ເປັນພາສາອັງກິດວ່າ “if I disappear”ຫຼື ແປລາວວ່າ "ຖ້າຂ້ອຍຫາຍໄປ.” ບົດລາຍງານຊຸກຍູ້ໃຫ້ບັນດາປະເທດສະມາຊິກພິຈາລະນາສ້າງໂຄງປະກອບ, ກົນໄກ ຫຼື ສະຖານບັນໄວໜຸ່ມທີ່ທຸ່ມເທ, ຄວບຄຸມ ແລະ ເປັນເອກະລາດ ເພື່ອໄດ້ຮັບຄຳສັ່ງໃຫ້ຮັກສາຄວາມປອດໄພສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການເຄື່ອນໄຫວຂອງໄວໜຸ່ມ, ຮັບລາຍງານການຄຸກຄາມ, ປົກປ້ອງໄວໜຸ່ມ ແລະ ໃຊ້ມາດຕະການເພື່ອໃຫ້ຜູ້ລະເມີດຕ້ອງຮັບຜິດຊອບ. ບົດລາຍງານຮຽກຮ້ອງໃຫ້ລັດຖະບານເອົາໃຈໃສ່ກັບໄວໜຸ່ມເປັນພິເສດ ແລະ ພິຈາລະນາຈັດຕັ້ງບັນດາຈຸດສຸມໄວໜຸ່ມໃນທຸກຂະແໜງການໃຫຍ່.

ແຫຼ່ງຂໍ້ມູນ: United Nations, 1995, 2021.



# ກ່ອງເນື້ອໃນ 5.3: ໄວໜຸ່ມຕ້ອງການມີສ່ວນຮ່ວມຫຼາຍຂຶ້ນ ໃນສັງຄົມທີ່ກວມເອົາທຸກພາກສ່ວນ

ໃນປີ 2021, ການສົນທະນາກັບກຸ່ມເປົ້າໝາຍ 20 ຄັ້ງກັບໄວໜຸ່ມ 100 ຄົນ ທີ່ມາຈາກຫຼາກຫຼາຍຖິ່ນທີ່ມາພື້ນຖານໃນ ສປປ ລາວ ເພື່ອພະຍາຍາມເຂົ້າໃຈທັດສະນະຂອງເຂົາເຈົ້າກ່ຽວກັບການມີສ່ວນຮ່ວມ. ການສົນທະນາດັ່ງກ່າວໄດ້ເຮັດໃຫ້ເຫັນໄດ້ຊັດເຈນວ່າ ໄວໜຸ່ມຈຳນວນຫຼາຍແມ່ນໄດ້ອຸທິດເວລາ ແລະ ແຮງງານໃຫ້ກັບສັງຄົມໃນທາງບວກຜ່ານການເປັນອາສາສະໝັກເພື່ອວັດຖຸປະສົງຕ່າງໆ. ຕົວຢ່າງເຊັ່ນ: ໂຄງການປົກປັກຮັກສາສິ່ງແວດລ້ອມ (Zero Waste Laos ແລະ ໂຄງການລິເລີ່ມປົກປັກຮັກສາສິ່ງແວດລ້ອມຊຸມຊົນນະບົດ), ການເຄື່ອນໄຫວດ້ານການບໍ່ຈຳແນກ (ຄວາມສະເໝີພາບຂອງກຸ່ມ LGBTQ, ສູນແຫ່ງຄວາມຫວັງສຳລັບຄົນທີ່ພິການທາງການໄດ້ຍິນ), ວຽກງານບັນເທົາທຸກ (ອາສາສະໝັກກູ້ໄພ), ໂຄງການສາທາລະນະສຸກ (Ta Kieng Lao Association), ການອະນຸລັກມໍລະດົກ ແລະ ບັນດາການສົນທະນາ ແລະ ເວທີປາໄສພາກພື້ນ (ເວທີປາໄສໄວໜຸ່ມອາຊຽນ ແລະ ຂໍ້ລິເລີ່ມຜູ້ນຳໄວໜຸ່ມອາຊີຕາເວັນອອກສຽງໃຕ້-the ASEAN Children’s Forum and the Young South East Asian Leaders Initiative). ໄວໜຸ່ມໄດ້ອະທິບາຍກິດຈະກຳອອນລາຍຕ່າງໆໂດຍຜ່ານເວທີ HUBBO, ຊຸມຊົນໄວໜຸ່ມທີ່ສົ່ງເສີມການເປັນອາສາສະໝັກພ້ອມດ້ວຍ HubRsar ແລະ Tonka.

ການສົນທະນາໄດ້ຊີ້ໃຫ້ເຫັນເຖິງຄວາມກະຫາຍທີ່ຊັດເຈນຂອງໄວໜຸ່ມ ທີ່ຢາກເປັນສ່ວນໜຶ່ງຂອງການພັດທະນາສັງຄົມໃຫ້ດີຂຶ້ນ ແລະ ຄົ້ນຫາຄວາມຕ້ອງການຕົນເອງພາຍໃນສະຖາບັນຕ່າງໆ ແລະ ຄວາມສົນໃຈຕ່າງໆ. ຫຼາຍຄົນໄດ້ເນັ້ນວ່າໄວໜຸ່ມຕ້ອງການໂອກາດໃນການມີສ່ວນຮ່ວມຕື່ມອີກ ແລະ ຫວັງວ່າຜູ້ກຳນົດບັນດານະໂຍບາຍຈະປະຕິບັດຕາມຂໍ້ມູນທີ່ໄດ້ຮັບ.

ແຫຼ່ງຂໍ້ມູນ: UNDP, 2021 focus group discussion.

©UNFPA Laos





ເລື່ອງການມີສ່ວນຮ່ວມຂອງໄວໜຸ່ມອາດສ້າງຄວາມສັບສົນໄດ້ແນວໃດ ເນື່ອງຈາກເປັນທີ່ເຂົ້າໃຈໂດຍທົ່ວໄປວ່າເປັນການມີສ່ວນຮ່ວມໃນວຽກງານ ແລະ ຄວາມຮັບຜິດຊອບຂອງຊຸມຊົນ (LYU, 2014). ການຄົ້ນພົບນີ້ແມ່ນສອດຄ່ອງກັບການສຳຫຼວດ ແລະ ການສົນທະນາທີ່ດຳເນີນສຳລັບບົດລາຍງານນີ້.

ໃນທົ່ວໂລກຂໍ້ມູນບົ່ງຊີ້ໃຫ້ເຫັນວ່າໄວໜຸ່ມມີຄວາມມຸ່ງໝັ້ນຕໍ່ການມີສ່ວນຮ່ວມທາງການເມືອງຕາມແບບແຜນ (Barrett, 2017) ແລະ ການເປັນພົນລະເມືອງທີ່ ມີຄວາມຮັບຜິດຊອບໜ້ອຍກວ່າຄົນຮຸ່ນກ່ອນໆ . ຫຼາຍຄົນຮູ້ສຶກວ່າຖືກປະຕິເສດຈາກການຕັດສິນໃຈຫຼາຍຂຶ້ນເລື້ອຍໆ (Henn and Weinstein, 2006). ຢູ່ໃນ ສປປ ລາວ,ໄວໜຸ່ມບໍ່ໄດ້ເປັນຕົວແທນຢ່າງພຽງພໍໃນໂຄງສ້າງທາງດ້ານການເມືອງທີ່ເປັນທາງການເຖິງແມ່ນວ່າຈະມີສິດລົງຄະແນນສຽງ ແລະ ສະໝັກຮັບຕຳແໜ່ງການເມືອງກໍຕາມ. ອັດຕາສ່ວນຂອງສະມາຊິກສະພາແຫ່ງຊາດທີ່ເປັນໄວໜຸ່ມໄດ້ກຳນົດໄວ້ວ່າມີອາຍຸຕ່ຳກວ່າ 45 ປີ ແມ່ນພຽງ 12,2 ສ່ວນຮ້ອຍ ຫຼື ຈຳນວນ 20 ຄົນໃນຈຳນວນສະມາຊິກທັງໝົດ 164 ຄົນ (ສະພາແຫ່ງຊາດ ສປປ ລາວ, 2022).[2] ສະມາຊິກສະພາຂັ້ນແຂວງອາຍຸນ້ອຍສຸດແມ່ນ 33 ປີ. ສັດສ່ວນເລັກນ້ອຍທີ່ມີໄວໜຸ່ມຢູ່ໃນສະພາແມ່ນສະທ້ອນໃຫ້ເຫັນເຖິງແນວໂນ້ມທົ່ວໂລກໃນວົງກວ້າງຂອງການມີຕົວແທນໄວໜຸ່ມຈຳນວນໜ້ອຍໃນສະພາ. ເຖິງວ່າຈະມີການປັບປຸງເລັກນ້ອຍໃນຊຸມປີຜ່ານມານີ້, ແຕ່ປະຊາກອນໂລກ 50 ສ່ວນຮ້ອຍ ທີ່ມີອາຍຸຕ່ຳກວ່າ 30 ປີມີພຽງແຕ່ 2,6 ສ່ວນຮ້ອຍ ຂອງສະມາຊິກລັດຖະສະພາທົ່ວໂລກທີ່ມີອາຍຸຕ່ຳກວ່າ 30 ປີ (IPU, 2021). ຢູ່ ສປປ ລາວ, ສະພາບການດັ່ງກ່າວຊີ້ໃຫ້ເຫັນເຖິງການຂາດນະໂຍບາຍ ແລະ ການແຊກແຊງ ເພື່ອຊ່ວຍເຫຼືອ ທີ່ມີປະສິດທິຜົນທີ່ຊຸກຍູ້ໃຫ້ໄວໜຸ່ມມີການເຄື່ອນໄຫວທາງດ້ານການເມືອງ ແລະ ສະໝັກເລືອກຕັ້ງ.

2 ເບິ່ງຖານຂໍ້ມູນ IPU ໄດ້ທີ່ https://www.ipu.org/parliament/LA; https://na.gov.la/

ອັດຕາການມີສ່ວນຮ່ວມຂອງສະພາ ແລະ ການມີສ່ວນຮ່ວມທາງການເມືອງທີ່ຕ່ຳໃນຊ່ວງຊຸມປີຜ່ານມາ ໄດ້ບົ່ງຊີ້ໃຫ້ເຫັນເຖິງການເຄື່ອນຍ້າຍອອກຈາກການມີສ່ວນຮ່ວມໃນໂຄງສ້າງທີ່ເປັນສະຖາບັນ. ດັດຊະນີການພັດທະນາໄວໜຸ່ມອາຊຽນຄັ້ງທຳອິດໃນປີ 2017 ສະແດງໃຫ້ເຫັນທ່າອ່ຽງທີ່ຫຼຸດລົງຂອງການມີສ່ວນຮ່ວມໃນ ສປປ ລາວ ເຊິ່ງເປັນຂົງເຂດດຽວທີ່ເປັນເຊັ່ນນັ້ນ. ການສຶກສາ, ສຸຂະພາບ ແລະ ການເປັນຢູ່ທີ່ດີ, ການຈ້າງງານ ແລະ ໂອກາດທັງໝົດໄດ້ສະແດງໃຫ້ເຫັນການປັບປຸງເທື່ອລະກ້າວໃນດັດຊະນີໄລຍະຫ້າປີ (ຮູບ 5.1). ເສົາຫຼັກການມີສ່ວນຮ່ວມຂອງດັດຊະນີການພັດທະນາໄວໜຸ່ມປະກອບມີ 2 ຕົວຊີ້ບອກຄື: ສ່ວນຮ້ອຍຂອງໄວໜຸ່ມທີ່ໄດ້ເປັນອາສາສະໝັກນຳອົງການຈັດຕັ້ງໃດໜຶ່ງ ແລະ ສ່ວນຮ້ອຍຂອງຜູ້ທີ່ໄດ້ຊ່ວຍເຫຼືອຄົນແປກໜ້າ ຫຼື ຄົນທີ່ເຂົາເຈົ້າບໍ່ຮູ້ຈັກໃນຊ່ວງເດືອນທີ່ຜ່ານມາ. ຕົວຊີ້ວັດເຫຼົ່ານີ້ບໍ່ໄດ້ໃຫ້ພາບທີ່ສົມບູນຂອງການມີສ່ວນຮ່ວມຂອງໄວໜຸ່ມເຊິ່ງລວມເຖິງການມີສ່ວນຮ່ວມໃນຂອບເຂດອື່ນໆຂອງຊີວິດ ເຊັ່ນ: ຄອບຄົວ, ການຕັດສິນໃຈກ່ຽວກັບວຽກ, ກິດຈະກຳຊຸມຊົນ ແລະ ການມີສ່ວນຮ່ວມຂອງພົນລະເມືອງ. ດັດຊະນີນີ້ຊີ້ໃຫ້ເຫັນເຖິງແນວໂນ້ມທີ່ຫຼຸດລົງຂອງໄວໜຸ່ມທີ່ເປັນອາສາສະໝັກ. ເນື່ອງຈາກໂດຍທົ່ວໄປແລ້ວການເປັນອາສາສະໝັກແມ່ນເປັນທາງເລືອກທີ່ເປັນທີ່ນິຍົມຂອງໄວໜຸ່ມທີ່ຈະມີສ່ວນຮ່ວມໃນການພັດທະນາທ້ອງຖິ່ນ, ການຫຼຸດລົງສາມາດຊີ້ໃຫ້ເຫັນເຖິງການບໍ່ມີສ່ວນຮ່ວມຢ່າງກວ້າງຂວາງ.

ເຖິງວ່າຈະມີການຄົ້ນພົບເຫຼົ່ານີ້, ການສຳຫຼວດປີ 2016 ສະແດງໃຫ້ເຫັນວ່າໄວໜຸ່ມເກືອບທັງໝົດໄດ້ລາຍງານວ່າພວກເຂົາຕ້ອງການຢາກຮູ້ຂໍ້ມູນເພີ່ມເຕີມ ແລະ ເຂົ້າຮ່ວມກິດຈະກຳທາງດ້ານການເມືອງ, ສັງຄົມ ແລະ ຊຸມຊົນ (GIZ, 2016). ນີ້ອາດຈະຊີ້ໃຫ້ເຫັນວ່າພວກເຂົາມີຄວາມສົນໃຈໃນການເຂົ້າຮ່ວມໃນການຕັດສິນໃຈ ແຕ່ຂາດໂອກາດທີ່ຈະເຮັດເຊັ່ນນັ້ນ. ມັນເປັນການນຳສະເໜີໂອກາດທີ່ສຳຄັນ ແລະ ຮີບດ່ວນແກ່ລັດຖະບານໃນການໃຊ້ປະໂຫຍດຈາກຄວາມເຕັມໃຈຂອງໄວໜຸ່ມທີ່ຈະມີສ່ວນຮ່ວມກ່ອນທີ່ພວກເຂົາຈະສູນເສຍຄວາມສົນໃຈ. ຄວາມຄືບໜ້າຈະຂຶ້ນຢູ່ກັບການໃຫ້ຄວາມຮູ້ ແລະ ວິທີການທີ່ເປັນຮູບປະທຳໃນການເຂົ້າຮ່ວມ. ໃນຂະນະທີ່ດຽວກັນສູນກາງຊາວໜຸ່ມລາວໄດ້ລະດົມໄວໜຸ່ມເພື່ອປະກອບສ່ວນເຂົ້າໃນການພັດທະນາປະເທດຊາດຕາມທີ່ເປັນມາ, ແຕ່ໄວໜຸ່ມຍັງສືບຕໍ່ຊອກຫາວິທີທາງເລືອກໃນການປຸກລະດົມ ແລະ ອາສາສະໝັກ, ໃນນັ້ນມີການພະຍາຍາມສ້າງຕັ້ງກຸ່ມອາສາສະໝັກໃໝ່ໆ ເຊັ່ນ: Zero Waste Laos (ເບິ່ງຂ້າງລຸ່ມ). ຄວາມສົນໃຈໃນການເຄື່ອນໄຫວແບບໃໝ່ນີ້ອາດເກີດຈາກການຂາດໂອກາດທີ່ມີປະສິດທິຜົນຂອງສອງຝ່າຍໃນການເຂົ້າຮ່ວມຂອງໄວໜຸ່ມໂດຍຜ່ານອົງການໄວໜຸ່ມທີ່ມີການສ້າງຕັ້ງຫຼາຍຂຶ້ນ, ລວມທັງການເຕີບໂຕຂອງການມີສ່ວນຮ່ວມໃນການໃຊ້ສື່ສັງຄົມອອນລາຍ ແລະ ເວທີອອນລາຍອື່ນໆ.

# 5.3 ນິຕິກຳ, ນະໂຍບາຍ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ

## ນິຕິກຳ, ນະໂຍບາຍ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງກັບການມີສ່ວນຮ່ວມ

ກົດໝາຍຫຼາຍສະບັບໃນ ສປປ ລາວ ຄຸ້ມຄອງສິດຂອງໄວໜຸ່ມໃນການມີສ່ວນຮ່ວມ. ຕົວຢ່າງ, ກົດໝາຍສະບັບເລກທີ 05 ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2006) ໄດ້ວາງໜ້າທີ່ຮັບຜິດຊອບຂອງລັດ, ສັງຄົມ ແລະ ຄອບຄົວ Òສ້າງເງື່ອນໄຂໃຫ້ເດັກມີສ່ວນຮ່ວມໃນກິດຈະກຳຕ່າງໆ ແລະ ອອກຄຳຄິດຄຳເຫັນຕໍ່ບັນຫາທີ່ພົວພັນກັບເດັກທີ່ມີຜົນກະທົບພວກເຂົາ (ມາດຕາ 7). ມາດຕາ 6 ປົກປ້ອງເດັກຈາກການຈຳແນກ ແລະ ເດັກທຸກຄົນມີຄວາມສະເໝີພາບໃນທຸກດ້ານໂດຍບໍ່ຈຳແນກ ເພດ, ເຊື້ອຊາດ, ຊົນເຜົ່າ, ພາສາ, ຄວາມເຊື່ອ, ທາງດ້ານສາສະໜາ, ສະພາບທາງດ້ານຮ່າງກາຍ, ຖານະທາງດ້ານເສດຖະກິດ ແລະ ສັງຄົມຂອງຄອບຄົວ, ສະນັ້ນ, ການຮັບປະກັນສິດຂອງເດັກຈາກກຸ່ມຄົນດ້ອຍໂອກາດ ແລະ ກຸ່ມດ້ອຍໂອກາດໃນການມີສ່ວນຮ່ວມໃນບາງຂະບວນການ.

ກົດໝາຍວ່າດ້ວຍການເລືອກຕັ້ງ ສະບັບເລກທີ 105 (2020) ກຳນົດໃຫ້ໄວໜຸ່ມລົງຄະແນນສຽງເລີ່ມແຕ່ອາຍຸ 18 ປີ ແລະ ສະໝັກຮັບເລືອກຕັ້ງເປັນນັກການເມືອງຕັ້ງແຕ່ອາຍຸ 21 ປີ (ມາດຕາ 6). ໃນດ້ານເປົ້າໝາຍນະໂຍບາຍເພື່ອແນໃສ່ເພີ່ມທະວີການເຂົ້າຮ່ວມຂອງໄວໜຸ່ມ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ (2021-2025) ໄດ້ກຳນົດ 2 ຂົງເຂດບຸລິມະສິດໃຫ້ບັນດາກະຊວງໃນທຸກຂະແໜງການຄື: ການພັດທະນາເສດຖະກິດສັງຄົມແຫ່ງຊາດ ແລະ ການຕັດສິນໃຈ ແລະ ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຍົາວະຊົນ ແລະ ໄວໜຸ່ມ.

ສປປ ລາວ ບໍ່ມີກະຊວງໄວໜຸ່ມ. ສູນກາງຊາວໜຸ່ມລາວ ດຳເນີນງານໃນລັກສະນະຄ້າຍຄືກັນກັບກະຊວງໄວໜຸ່ມໃນປະເທດອື່ນໆ, ມີໂຄງສ້າງຍ່ອຍ, ໄດ້ຮັບທຶນຮອນທັງຈາກລັດຖະບານ ແລະ ອົງການຈັດຕັ້ງສາກົນ ແລະ ມີສ່ວນຮ່ວມໃນບາງຂະບວນການທາງການເມືອງ. ດັ່ງທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍໄວໜຸ່ມລາວສະບັບເລກທີ 234 (2020), ສູນກາງຊາວໜຸ່ມລາວ ມີຈຸດປະສົງ ເພື່ອປຸກລະດົມກຳລັງໃຈໄວໜຸ່ມ ໃນການປະຕິບັດເປົ້າໝາຍຂອງລັດຖະບານ, ປະກອບສ່ວນກໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ມຸ່ງໄປເຖິງການສ້າງຄວາມສະຫງົບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ຄວາມຈະເລີນຮຸ່ງເຮືອງ. ການເປັນສະມາຊິກໄວໜຸ່ມລາວແມ່ນຮູບແບບຂອງການມີສ່ວນຮ່ວມທາງດ້ານການເມືອງ ແລະ ໃນບາງກໍລະນີກໍ່ໃຫ້ໂອກາດສຳລັບການມີສ່ວນຮ່ວມໂດຍກົງໃນການພັດທະນາຊຸມຊົນໂດຍຜ່ານການເປັນອາສາສະໝັກ. ທັງເປັນການພັດທະນາອາຊີບຂອງພັກປະຊາຊົນປະຕິວັດລາວ.

ໃນຖານະທີ່ເປັນອົງການຈັດຕັ້ງມະຫາຊົນ, ສູນກາງຊາວໜຸ່ມລາວ ມີສະມາຊິກໄວໜຸ່ມປະມານ 273.000 ຄົນ ໃນປີ 2005, ມີສະມາຊິກເພີ່ມຂຶ້ນເປັນ 702.000 ຄົນໃນປີ 2022 (LYU et al., 2005, 2022). ຜ່ານມາ ສູນກາງຊາວໜຸ່ມລາວ ໄດ້ເຂົ້າຮ່ວມໃນການເຄື່ອນໄຫວຕ່າງໆ ເພື່ອຍົກສູງຄວາມຮັບຮູ້ກ່ຽວກັບບັນຫາທາງສັງຄົມ ແລະ ສາທາລະນະສຸກ, ເຊັ່ນວຽກງານຢາເສບຕິດ, ຄວາມປອດໄພທາງຖະໜົນ, ພະຍາດຕິດຕໍ່ ແລະ ການເຄື່ອນຍ້າຍຖິ່ນຖານ. ສູນກາງຊາວໜຸ່ມ ສຸມໃສ່ລະດົມໄວໜຸ່ມໃຫ້ປະຕິບັດບັນດາເປົ້າໝາຍເພື່ອພັດທະນາປະເທດຊາດ ຫຼາຍກວ່າການໃຫ້ໂອກາດແກ່ໄວໜຸ່ມມີສ່ວນຮ່ວມໃນການກຳນົດນະໂຍບາຍ.

ໃນດ້ານອົງການຈັດຕັ້ງທາງສັງຄົມ, ບັນດາອົງການຈັດຕັ້ງທາງສັງຄົມໄດ້ລົງທະບຽນເປັນສະມາຄົມທີ່ບໍ່ຫວັງຜົນກຳໄລໃນ ສປປ ລາວ. ດຳລັດວ່າດ້ວຍສະມາຄົມເລກທີ 238 (2017) ຄຸ້ມຄອງບັນດາປະເພດສະມາຄົມທີ່ສາມາດສ້າງຕັ້ງໄດ້. ມາດຕາ 4 ລະບຸວ່າ "ມີແຕ່ອົງການຈັດຕັ້ງລັດເທົ່ານັ້ນ ມີສິດອະນຸມັດສ້າງຕັ້ງສະມາຄົມ", ລວມທັງອົງການຈັດຕັ້ງ ແລະ ເຄືອຂ່າຍທີ່ເອົາໄວໜຸ່ມເປັນຈຸດສຸມ ແລະ ມີໄວໜຸ່ມເປັນຜູ້ນຳພາ ແລະ ລັດຖະບານຍັງມີອຳນາດໃນການຄວບຄຸມການພົວພັນຂອງກຸ່ມດັ່ງກ່າວກັບອົງການຈັດຕັ້ງສາກົນ ເຊັ່ນດຽວກັບອະນຸມັດໃຫ້ຂົນຂວາຍ ແລະ ຮັບເອົາການບໍລິຈາກທຶນ, ຊັບສິນຕ່າງໆຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ຖືກຕ້ອງຕາມກົດໝາຍ. CIVICUS ເຊິ່ງເປັນໜ່ວຍງານຕິດຕາມອົງການຈັດຕັ້ງທາງສັງຄົມສາກົນ ໄດ້ປະເມີນພື້ນທີ່ສຳລັບອົງການຈັດຕັ້ງທາງສັງຄົມ ໃນ ສປປ ລາວ ວ່າມີຈຳກັດຫຼາຍ (CIVICUS, 2022). ປັດຈຸບັນ, ມີພຽງ 5 ອົງກອນທີ່ບໍ່ຫວັງຜົນກຳໄລທີ່ລົງທະບຽນໂດຍກົງທີ່ສຸມໃສ່ບັນຫາໄວໜຸ່ມ, ພ້ອມກັບ 2 ເຄືອຂ່າຍຄື: ເຄືອຂ່າຍໄວໜຸ່ມລາວ (Lao Youth Network) ແລະ ກຸ່ມການຮຽນຮູ້ສິດທິເດັກ (Child Rights Learning Group).




**ສູນກາງຊາວໜຸ່ມລາວ ມີສະມາຊິກໄວໜຸ່ມປະມານ 273.000 ຄົນ ໃນປີ 2005, ມີສະມາຊິກເພີ່ມຂຶ້ນເປັນ 702.000 ຄົນ ໃນປີ 2022**

ໃນປີ 2020, ທ່ານນາຍົກລັດຖະມົນຕີ ໄດ້ຮັບຮອງເອົາຍຸດທະສາດການພັດທະນາເຍົາວະຊົນ ແລະ ໄວໜຸ່ມລາວ ສະບັບທຳອິດ (2021-2030). ນີ້ແມ່ນຈຸດສຳຄັນສຳລັບນະໂຍບາຍການພັດທະນາໄວໜຸ່ມ ແລະ ຍຸດທະສາດດັ່ງກ່າວໄດ້ອ້າງອີງໂດຍກົງໄປຍັງໄວໜຸ່ມຫຼາຍກຸ່ມທີ່ມີຄວາມສ່ຽງລວມເຖິງໄວໜຸ່ມຈາກກຸ່ມທີ່ມີຄວາມຫຼາກຫຼາຍທາງເພດ LGBTQI+ (LYU, 2021). ຍຸດທະສາດດັ່ງກ່າວໄດ້ຢືນຢັນວ່າ ຜູ້ທີ່ມີຄວາມຮັບຜິດຊອບຕໍ່ການມີສ່ວນຮ່ວມຂອງໄວໜຸ່ມ ຍັງສືບຕໍ່ເບິ່ງໄວໜຸ່ມຄືຜູ້ຮັບຄຳແນະນຳຈາກຜູ້ມີອຳນາດໃນການຕັດສິນໃຈ ແລະ ບໍ່ມີບົດບາດສຳຄັນໃນການພັດທະນາ. ມັນໄດ້ອະທິບາຍເຖິງບົດບາດອັນພົ້ນເດັ່ນຂອງສູນກາງຊາວໜຸ່ມລາວ ແລະ ຊີ້ໃຫ້ເຫັນເຖິງສິ່ງກີດຂວາງໃນການໃຫ້ໂອກາດອັນມີຄວາມໝາຍແກ່ໄວໜຸ່ມໃນການມີສ່ວນຮ່ວມ ແລະ ກຳນົດທິດທາງໃນການຕັດສິນໃຈ. ສິ່ງສຳຄັນແມ່ນຍຸດທະສາດດັ່ງກ່າວ ໄດ້ກຳນົດທິດທາງຍຸດທະສາດເພື່ອສົ່ງເສີມການມີສ່ວນຮ່ວມຂອງໄວໜຸ່ມ ແລະ ການມີສ່ວນຮ່ວມຂອງພົນລະເມືອງຫຼາຍຂຶ້ນໂດຍການຕ້ານກັບແນວຄິດທີ່ຄອບງຳ ແລະ ສ້າງ 'ຖະໜົນສອງແລວ' ເພື່ອຮັບຟັງໄວໜຸ່ມ ແລະ ໃຫ້ເຂົາເຈົ້າມີອິດທິພົນຕໍ່ການພັດທະນາ (ເບິ່ງກ່ອງເນື້ອໃນ 5.4). ຈຸດປະສົງສະເພາະຂອງຍຸດທະສາດລວມມີການສ້າງສະພາບແວດລ້ອມທີ່ສົ່ງເສີມການມີສ່ວນຮ່ວມຂອງເຍົາວະຊົນ ແລະ ໄວໜຸ່ມທຸກລະດັບໃນຂະບວນການພັດທະນາ ແລະ ສ້າງໂອກາດ ແລະ ພື້ນທີ່ໃຫ້ໄວໜຸ່ມສາມາດສະແດງແນວຄວາມຄິດຂອງພວກເຂົາຢ່າງເສລີ ແລະ ສ້າງການເຊື່ອມຕໍ່ກັບອົງການຈັດຕັ້ງທີ່ເປັນຕົວແທນ ແລະ ແກ້ໄຂຂໍ້ກັງວົນຂອງເຍົາວະຊົນ ແລະ ໄວໜຸ່ມ. ເມື່ອນຳມາຮ່ວມກັນ, ຈຸດປະສົງເຫຼົ່ານີ້ສະແດງໃຫ້ເຫັນເຖິງຄຳໝາຍໝັ້ນໃນເຊີງນະໂຍບາຍທີ່ຊັດເຈນໃນການເສີມສ້າງການມີສ່ວນຮ່ວມຂອງໄວໜຸ່ມໃນການພັດທະນາບໍ່ພຽງແຕ່ໄດ້ຮັບການຊີ້ນຳຈາກຜູ້ມີອຳນາດຕັດສິນໃຈທີ່ເປັນຜູ້ໃຫຍ່, ແຕ່ໃນຖານະຜູ້ມີບົດບາດຫຼັກໃນການພັດທະນາ.

2 ເບິ່ງຖານຂໍ້ມູນ IPU ໄດ້ທີ່ https://www.ipu.org/parliament/LA; https://na.gov.la/

## ຮູບທີ 5.1: ດັດຊະນີການພັດທະນາໄວໜຸ່ມໄດ້ເພີ່ມຂຶ້ນໃນ ສປປ ລາວ ຍົກເວັ້ນການມີສ່ວນຮ່ວມ




ໃນບໍລິບົດຂອງພາກພື້ນທີ່ກວ້າງຂຶ້ນ ປະຊາກອນໄວໜຸ່ມໃນສະມາຊິກອາຊຽນຄາດວ່າຈະມີຈຳນວນສູງສຸດທີ່ຫຼາຍກວ່າ 220 ລ້ານຄົນ ພາຍໃນປີ 2038. ສະນັ້ນ, ອາຊຽນສະແຫວງຫາການຊຸກຍູ້ແນວຄິດນະວັດຕະກຳຂອງໄວໜຸ່ມ ແລະ ໝູນໃຊ້ປະໂຫຍດຈາກວິທີແກ້ໄຂບັນຫາເພື່ອການພັດທະນາລະດັບປະເທດຊາດ ແລະ ພາກພື້ນ. ນອກຈາກການອອກດັດຊະນີການພັດທະນາໄວໜຸ່ມອາຊຽນ, ປະເທດສະມາຊິກຍັງໃຫ້ການຮ່ວມມືດ້ານໄວໜຸ່ມໂດຍຜ່ານກອງປະຊຸມລັດຖະມົນຕີອາຊຽນຫົວຂໍ້ໄວໜຸ່ມ (Ministerial Meeting on Youth). ລັດຖະບານ ແຫ່ງ ສປປ ລາວ ໄດ້ເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີອາຊຽນຫົວຂໍ້ໄວໜຸ່ມ ຄັ້ງທີ 11 ຢູ່ນະຄອນຫຼວງວຽງຈັນໃນປີ 2019 ແລະ ປັດຈຸບັນໄດ້ເປັນເຈົ້າພາບຈັດກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ຫົວຂໍ້ໄວໜຸ່ມ ເຊິ່ງກຳລັງເຮັດແຜນດຳເນີນງານ 5 ປີ ກ່ຽວກັບໄວໜຸ່ມ (2021-2025). ໜຶ່ງໃນ 5 ເປົ້າໝາຍຂອງແຜນດຳເນີນງານທີ່ຜ່ານມາແມ່ນ ເພີ່ມທະວີການມີສ່ວນຮ່ວມຂອງໄວໜຸ່ມ ແລະ ການມີສ່ວນຮ່ວມໃນການສ້າງປະຊາຄົມອາຊຽນ ໂດຍຜ່ານໂອກາດການເປັນອາສາສະໝັກ ແລະ ໂຄງການໃນການເປັນຜູ້ນຳ.

ກ່ອງເນື້ອໃນ 5.4

ໂດຍລວມແລ້ວ, ເຖິງວ່າຈະມີນິຕິກຳ, ນະໂຍບາຍ ແລະ ພື້ນຖານຂອງສະຖາບັນທີ່ສົ່ງເສີມການມີສ່ວນຮ່ວມຂອງໄວໜຸ່ມໃຫ້ເຂັ້ມແຂງຂຶ້ນ ແຕ່ຈຸດສຸມໃນປັດຈຸບັນຍັງຄົງຈຳກັດພຽງແຕ່ການລົມນະລົງ ຫຼື ໂອກາດຍັງແຄບສຳລັບອາສາສະໝັກທ້ອງຖິ່ນ. ພ້ອມນັ້ນ ຍັງຂາດແຜນປະຕິບັດງານແຫ່ງຊາດທີ່ຈະແຈ້ງ, ລວມທັງມາດຕະການທີ່ຊັດເຈນເພື່ອສະໜັບສະໜູນໄວໜຸ່ມ ໃຫ້ຢູ່ເໜືອກວ່າການເປັນຜູ້ຮັບຄຳແນະນຳດ້ານການພັດທະນາ ແລະ ມຸ່ງສູ່ການເປັນຜູ້ທີ່ມີບົດບາດຫຼັກໃນການພັດທະນາ. ແນວທາງການພັດທະນາມະນຸດເພື່ອການມີສ່ວນຮ່ວມທີ່ໄດ້ຮັບການສະໜັບສະໜູນໂດຍການປະຕິບັດ, ທາງດ້ານກົນໄກ ແລະ ໂອກາດໃນການມີສ່ວນຮ່ວມທີ່ເປັນຮູບປະທຳຈະສະໜັບສະໜູນໄວໜຸ່ມໃນຖານະ ຜູ້ນຳໃນການພັດທະນາທີ່ສາມາດຕັດສິນໃຈດ້ວຍຕົນເອງວ່າຕ້ອງການອະນາຄົດແບບໃດ.



©UNFPA Laos

## ກ່ອງເນື້ອໃນ 5.4: ການມີສ່ວນຮ່ວມຂອງພົນລະເມືອງ ແລະ ການມີສ່ວນຮ່ວມໃນຍຸດທະສາດການພັດທະນາເຍົາວະຊົນ ແລະ ໄວໜຸ່ມ

ເປັນຄັ້ງທຳອິດໃນປະຫວັດສາດ, ສູນກາງຊາວໜຸ່ມລາວຮ່ວມກັບ UNFPA ໄດ້ຮ່າງ ແລະ ຮັບຮອງຍຸດທະສາດພັດທະນາເຍົາວະຊົນ ແລະ ໄວໜຸ່ມ ໃນປີ 2021. ອີງໃສ່ກົດໝາຍວ່າດ້ວຍອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວສະບັບປັບປຸງ ປີ 2019 ໂດຍມີ 5 ຂົງເຂດຈຸດສຸມ, ເປັນຕົ້ນແມ່ນການມີສ່ວນຮ່ວມ ແລະ ການເຂົ້າຮ່ວມຂອງພົນລະເມືອງ.ຍຸດທະສາດສະບັບນີ້ເນັ້ນວ່າ:

*ການລົງທຶນໃນໄວໜຸ່ມຕ້ອງຮັບປະກັນຄວາມຕ້ອງການ, ຄວາມມຸ່ງມາດປາຖະໜາ ແລະ ຂໍ້ກັງວົນຂອງພວກເຂົາໂດຍຜ່ານການສ້າງຍຸດທະສາດ, ການປະຕິບັດ, ການຕິດຕາມ ແລະ ການປະເມີນຜົນ. ເພື່ອບັນລຸໄດ້ນັ້ນ, ບັນດາພາກສ່ວນທີ່ກ່ຽວຂ້ອງຕ້ອງຊຸກຍູ້ການມີສ່ວນຮ່ວມຢ່າງເຕັມທີ່ ແລະ ເທົ່າທຽມກັນໃນທຸກຂົງເຂດຂອງສັງຄົມ. ການມີສ່ວນຮ່ວມຢ່າງເຕັມທີ່ຂອງເຍົາວະຊົນ ແລະ ໄວໜຸ່ມຈະຮັບປະກັນວ່າຄວາມຕ້ອງການ ແລະ ຜົນປະໂຫຍດຂອງກຸ່ມຄົນດ້ອຍໂອກາດ ເຊັ່ນ: ຜູ້ທີ່ຖືກຂູດຮີດ, ຖືກປະລະ, ຖືກທາລຸນ ຫຼື ຖືກເລືອກປະຕິບັດ.*

**ຍຸດທະສາດຮັບຮູ້ວ່າ:**

ການຮວບຮວມຂໍ້ມູນ, ໂດຍສະເພາະຂໍ້ມູນແຍກຍ່ອຍ (disaggregated data) ແມ່ນຈຳເປັນເພື່ອໃຫ້ທິດທາງຕໍ່ການວາງແຜນ, ເຊັ່ນດຽວກັນກັບການມີສ່ວນຮ່ວມຂອງເຍົາວະຊົນ ແລະ ໄວໜຸ່ມໃນຖານະຕົວແທນຂອງການປ່ຽນແປງທີ່ມີສ່ວນຮ່ວມໃນການສົນທະນາ ແລະ ການຕັດສິນໃຈທີ່ມີຜົນກະທົບຕໍ່ຊີວິດຂອງພວກເຂົາ.

ທິດທາງຍຸດທະສາດໃນການສົ່ງເສີມການເຂົ້າຮ່ວມ ແລະ ການມີສ່ວນຮ່ວມຂອງພົນລະເມືອງໃນວົງກວ້າງຫຼາຍຂຶ້ນ, ລວມເຖິງການສ້າງສະພາບແວດລ້ອມທີ່ເອື້ອອຳນວຍເພື່ອສົ່ງເສີມການມີສ່ວນຮ່ວມຂອງເຍົາວະຊົນ ແລະ ໄວໜຸ່ມໃນທຸກລະດັບ (ຂັ້ນສູນກາງເຖິງຊຸມຊົນ) ໃນເລື່ອງທີ່ມີຜົນກະທົບຊີວິດຂອງພວກເຂົາ; ຊຸກຍູ້ການເຂົ້າຮ່ວມຂອງເຍົາວະຊົນ ແລະ ໄວໜຸ່ມໃນເວທີປາໄສລະດັບຊາດ ແລະ ສາກົນ ແລະ ໂຄງການແລກປ່ຽນຊາວໜຸ່ມ; ສ້າງໂອກາດ ແລະ ຊ່ອງຫວ່າງໃຫ້ແກ່ໄວໜຸ່ມໃນການສະແດງຄວາມຄິດເຫັນຂອງຕົນຢ່າງເສລີ, ຮັບປະກັນເສລີພາບໃນການສະແດງອອກ ແລະ ເຊື່ອມໂຍງບັນດາການສະແດງອອກດັ່ງກ່າວກັບບັນດາຜູ້ຕາງໜ້າອົງການຈັດຕັ້ງ ແລະ ແກ້ໄຂຂໍ້ກັງວົນ, ສິດທິ ແລະ ຜົນປະໂຫຍດຂອງເຍົາວະຊົນ ແລະ ໄວໜຸ່ມ, ສະໜັບສະໜູນບັນດາອົງກອນທີ່ນຳພາໂດຍໄວໜຸ່ມ ແລະ ລິເລີ່ມການເພີ່ມທະວີການປະກອບສ່ວນເຂົ້າໃນການພັດທະນາຂອງປະເທດຂອງພວກເຂົາ ແລະ ເພີ່ມທະວີການຮ່ວມມືລະຫວ່າງລັດຖະບານ, ອົງການຈັດຕັ້ງທີ່ນຳພາໂດຍໄວໜຸ່ມ, ສະຖາບັນວິຊາການ, ອົງການຈັດຕັ້ງທາງສັງຄົມແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ບໍລິສັດເອກະຊົນ, ສື່ມວນຊົນ ແລະ ລະບົບອົງການສະຫະປະຊາຊາດເພື່ອເສີມຂະຫຍາຍຄວາມມຸ່ງໝັ້ນ ແລະ ການສະໜັບສະໜູນການພັດທະນາໄວໜຸ່ມຢ່າງຮອບດ້ານ.

## 5.4 ທັດສະນະຂອງໄວໜຸ່ມຕໍ່ການມີສ່ວນຮ່ວມ

### ວຽກງານອາສາສະໝັກຂອງໄວໜຸ່ມ

ຕົວຢ່າງທີ່ຈະແຈ້ງທີ່ສຸດຂອງການມີສ່ວນຮ່ວມຂອງໄວໜຸ່ມໃນ ສປປ ລາວ ແມ່ນພົບເຫັນຢູ່ໃນວຽກງານອາສາສະໝັກ, ເຊິ່ງເປັນເວທີທີ່ສຳຄັນໃນການບົ່ມເພາະທັກສະການເປັນຜູ້ນຳໃນອະນາຄົດ. ຊາວໜຸ່ມມີສ່ວນຮ່ວມທາງອອນລາຍ ແລະ ໃນອົງການຈັດຕັ້ງທີ່ປະກອບສ່ວນເຂົ້າໃນອະນາຄົດທີ່ຍືນຍົງ ແລະ ການມີສ່ວນຮ່ວມ, ໂດຍສະເພາະການເຄື່ອນໄຫວດ້ານສິ່ງແວດລ້ອມ. ໄວໜຸ່ມຈຳນວນໜຶ່ງ ລວມທັງ ຜູ້ທີ່ມີຄວາມພິການ ແລະ ໄວໜຸ່ມຈາກກຸ່ມ LGBTQI+ ໄດ້ມີການເຕົ້າໂຮມກັນ ເພື່ອເຮັດກິດຈະກຳປູກຈິດສຳນຶກ ແລະ ປ່ຽນແປງທັດສະນະຄະຕິກ່ຽວກັບຊຸມຊົນໄວໜຸ່ມ ແລະ ລັກສະນະຕົວຕົນທີ່ທັບຊ້ອນ (intersectional identities) ຂອງພວກເຂົາ. ສະມາຄົມທີ່ບໍ່ຫວັງຜົນກຳໄລເຊັ່ນ: ສະມາຄົມຮ່ວມໃຈອາສາສະໝັກ ເປັນກຸ່ມທີ່ອຸທິດຕົນເພື່ອສົ່ງເສີມການເປັນອາສາສະໝັກຂອງ ໄວໜຸ່ມ ໄດ້ສະແດງໃຫ້ເຫັນວ່າ ເຍົາວະຊົນ ແລະ ໄວໜຸ່ມໄດ້ປະກອບສ່ວນເຂົ້າໃນສັງຄົມຫຼາຍປານໃດ.

ການເຄື່ອນໄຫວດ້ານສິ່ງແວດລ້ອມຂອງຊາວໜຸ່ມແມ່ນມີສີສັນເປັນພິເສດ. ຕົວຢ່າງໜຶ່ງແມ່ນ Zero Waste Laos ເຊິ່ງເປັນການເຄື່ອນໄຫວຊາວໜຸ່ມທີ່ລິເລີ່ມຂຶ້ນຢູ່ທາງເຟສບຸກໃນປີ 2019 ໂດຍນາງ ສຸກສະເຫວີຍ ແກ້ວທຽມຈັນ[3]. ອົງການດັ່ງກ່າວໄດ້ຍົກສູງຄວາມຮັບຮູ້ກ່ຽວກັບບັນຫາສິ່ງແວດລ້ອມ ແລະ ດ້ານດິນຟ້າອາກາດ ແລະ ໄດ້ລະດົມອາສາສະໝັກນັບຮ້ອຍຄົນ ເພື່ອຫຼຸດຜ່ອນການໃຊ້ປລາສະຕິກ, ຍຸຕິການຈູດຂີ້ເຫຍື້ອ ແລະ ຫຼຸດຜ່ອນຂີ້ເຫຍື້ອ. ກິດຈະກຳເຫຼົ່ານີ້ເສີມສ້າງອາດຄວາມສາມາດໃຫ້ສະມາຊິກໃນທີມເພື່ອໃຫ້ພວກເຂົາກາຍເປັນຜູ້ນຳທີ່ມີຄວາມຍືນຍົງ. ໂດຍມີສະມາຊິກຫຼັກ 20 ທ່ານ ແລະ ອາສາສະໝັກ 100 ກວ່າຄົນ, Zero Waste Laos ຍັງໄດ້ຈັດຕັ້ງກອງປະຊຸມໃຫຍ່ ເຊັ່ນ: ກອງປະຊຸມໄວໜຸ່ມເພື່ອການປ່ຽນແປງດິນຟ້າອາກາດ (Youth 4 Climate Change Conference) ໃນປີ 2021. ໂດຍມີອາສາສະໝັກ 200 ກວ່າຄົນ ພ້ອມກັບ ຜູ້ຕາງໜ້າຈາກລັດຖະບານ, ຄະນະການທູດ, ອົງການຈັດຕັ້ງທາງສັງຄົມ ແລະ ປະຊາຄົມສາກົນ ໄດ້ປຶກສາຫາລືກ່ຽວກັບວິທີການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ ແລະ ການຮ່ວມມືກັບໄວໜຸ່ມໃນການແກ້ໄຂບັນຫາສິ່ງແວດລ້ອມທີ່ເລັ່ງດ່ວນ. Zero Waste Laos ຍັງໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນໂຄງການລິເລີ່ມຕ່າງໆ ເຊັ່ນໂຄງການ ຂ້ອຍ, ຮ່າງກາຍຂອງຂ້ອຍ, ໂລກຂອງຂ້ອຍ, ອະນາຄົດຂອງຂ້ອຍ ຮ່ວມກັບ UNFPA ແລະ ອາສາສະໝັກຂອງ ສປຊ (UNV); ກິດຈະກຳທຳຄວາມສະອາດແມ່ນ້ຳຂອງ ແລະ ວຽງຈັນ ສະອາດ ສວຍງາມ (the Clean Up Mekong River and Green); ແລະ ກອງປະຊຸມໄວໜຸ່ມເພື່ອການພັດທະນາແບບຍືນຍົງໃນລາວ (Youths for SDGs Laos Conference) ແລະ ອື່ນໆ. ກຸ່ມດັ່ງກ່າວໄດ້ພັດທະນາໂຄງການຮ່ວມກັບຊາວກະສິກອນ ກ່ຽວກັບການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນສິ່ງເສດເຫຼືອທາງການກະເສດ ແລະ ຮ່ວມມືກັບ ບັນດາອົງການຄົ້ນຄວ້າວິໄຈ ເພື່ອສ້າງຖານຂໍ້ມູນກ່ຽວກັບບັນຫາຂີ້ເຫຍື້ອໃຫ້ຫຼາຍຂຶ້ນ.

ນອກນັ້ນ, ຊາວໜຸ່ມໄດ້ເຂົ້າຮ່ວມໃນອົງການຈັດຕັ້ງຕ່າງໆ ເຊັ່ນ: ພູມໃຈທີ່ເປັນເຮົາ - Proud to Be Us Laos (PTBUL) ທີ່ສ້າງຕັ້ງຂຶ້ນໃນປີ 2021 ເຊິ່ງເປັນໜຶ່ງໃນອົງການເຄື່ອນໄຫວດ້ານສິດທິຂອງກຸ່ມ LGBTQI+ ແຫ່ງທຳອິດ ແລະ ແຫ່ງດຽວໃນປະເທດ. ເຊັ່ນດຽວກັບ Zero Waste Laos, ອົງການ PTBUL ໄດ້ພະຍາຍາມປູກຈິດສຳນຶກ, ສ້າງການຍອມຮັບ ແລະ ການຮັບຮູ້ບັນຫາທີ່ສຳຄັນຕໍ່ກຸ່ມ LGBTQI+ ໃຫ້ແກ່ຄົນໃນສັງຄົມ. ອົງການນີ້ ໄດ້ມີສ່ວນຮ່ວມກັບໄວໜຸ່ມ, ພ້ອມກັບພາກສ່ວນສາກົນ ເພື່ອເກັບກຳ ແລະ ສ້າງຖານຂໍ້ມູນກ່ຽວກັບໄວໜຸ່ມ LGBTQI+ ໃນນະຄອນຫຼວງວຽງຈັນ, ລວມທັງຊຸກຍູ້ຄວາມເຂົ້າໃຈ ແລະ ການຍອມຮັບໃນໂຮງຮຽນ.

ກຸ່ມດັ່ງກ່າວໄດ້ຊ່ວຍເຫຼືອອົງການ International Republican Institute (IRI) ໃນການຄົ້ນຄວ້າ ແລະ ລະບຸສິ່ງກີດຂວາງທີ່ເຮັດໃຫ້ໄວໜຸ່ມດ້ອຍໂອກາດລວມທັງໄວໜຸ່ມຈາກກຸ່ມ LGBTQI+ ຕ້ອງປະສົບໃນດ້ານການມີສ່ວນຮ່ວມໃນສັງຄົມ, ເຊິ່ງສະແດງໃຫ້ເຫັນເຖິງຮູບແບບການຖືກດູໝິ່ນ ຫຼື ລັງກຽດ. ຜູ້ຕອບການຄົ້ນຄວ້າຄົນໜຶ່ງກ່າວວ່າ:"ເມື່ອເວົ້າເຖິງການສະຫຼອງ ຫຼື ການເຕົ້າໂຮມໃດໜຶ່ງ ທີ່ນຳພາໂດຍສະມາຊິກຂອງຊຸມຊົນ LGBTQI+, ປະຊາຊົນມີແນວໂນ້ມທີ່ຈະຄິດວ່າ ມັນເປັນວິທີທີ່ຈະປ່ຽນ ຫຼື ຊັກຊວນໄວໜຸ່ມໃຫ້ກາຍເປັນ LGBTQI+" (Ertelt ແລະ Hussey, 2020). ການຄົ້ນຄວ້າຍັງພົບວ່າ ການທີ່ມາຈາກກຸ່ມ LGBTQI ອາດຈະຖືກຂັດຂວາງໂອກາດທີ່ຈະໄດ້ຮັບຕຳ

3 Zero Waste Laos ໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງສາກົນຫຼາຍກວ່າ 15 ພາກສ່ວນ ເຊັ່ນ ອົງການພັດທະນາສອງແບບຝ່າຍ (Norwegian People Aid ແລະ ສະຫະພາບເອີຣົບປະຈຳ ສ ປປ ລາວ), ອົງການຈັດຕັ້ງທາງສັງຄົມ (Plan International) ແລະ ອົງການພັດທະນາສາກົນ (UNFPA ແລະ UNV).



“

## ມະໄລສອນ ວັນນະລາດ,
### 25 ປີ, ອາສາສະໝັກຂອງ Hubbo ແລະ Global Shapers Vientiane Hub

ຂ້າພະເຈົ້າເຊື່ອວ່າ ເຖິງເວລາແລ້ວທີ່ທຸກຄົນໃນສັງຄົມລາວຕ້ອງລົງມືປະຕິບັດຢ່າງຈິງຈັງ ແລະ ຈິງໃຈຕໍ່ບັນຫາສິ່ງແວດລ້ອມ, ພ້ອມທັງມີນະໂຍບາຍທີ່ເຂັ້ມແຂງ ທີ່ເນັ້ນໜັກໃສ່ຜົນໄດ້ຮັບ ຕໍ່ບັນຫາດັ່ງກ່າວນີ້, ລວມທັງສ້າງເວທີ ທີ່ເປີດໃຫ້ທຸກຄົນໃນສັງຄົມມີສ່ວນຮ່ວມ, ເພື່ອວ່າໃນອະນາຄົດ ສປປ ລາວ ຈະສືບຕໍ່ມີຊີວະນາໆພັນທີ່ຫຼາກຫຼາຍ ແລະ ອຸດົມສົມບູນໃຫ້ຄົນຮຸ່ນຫຼັງໄດ້ສຶກສາ, ຮຽນຮູ້ ແລະ ສໍາຜັດດ້ວຍຕົນເອງ,ບໍ່ແມ່ນພຽງແຕ່ໄດ້ຮຽນຮູ້ຜ່ານຮູບ, ປຶ້ມ ຫຼື ອິນເຕີເນັດ ເທົ່ານັ້ນ.

ວຽກງານອາສາສະໝັກເປັນວຽກງານໜຶ່ງທີ່ສໍາຄັນ ແລະ ຈໍາເປັນຕໍ່ການພັດທະນາໄວໜຸ່ມ ເຊິ່ງຈະຊ່ວຍຊຸກຍູ້ໃຫ້ເຂົາເຈົ້າໄດ້ເຂົ້າໃຈເຖິງຮາກເຫງົ້າຂອງບັນຫາສັງຄົມຫຼາຍຂຶ້ນ. ຂ້າພະເຈົ້າຢາກຊຸກຍູ້ໃຫ້ໄວໜຸ່ມມີພື້ນທີ່ເພື່ອພັດທະນາຄວາມສາມາດ ລວມທັງທັກສະຂອງເຂົາເຈົ້າຜ່ານວຽກອາສາສະໝັກ ເພາະຂ້າພະເຈົ້າເຊື່ອວ່າ ວຽກງານນີ້ຈະກາຍເປັນກະແຈສໍາຄັນໃຫ້ໄວໜຸ່ມໄດ້ຄົ້ນພົບຕົວຕົນຂອງເຂົາເຈົ້າ ແລະ ຍັງຮຽນຮູ້ວິທີການເຮັດວຽກຕົວຈິງ ແລະ ວຽກທີ່ມີຄຸນຄ່າຕໍ່ສັງຄົມ.

ແໜ່ງຜູ້ນໍາ ແລະ ການມີສ່ວນຮ່ວມຂອງພວກເຂົາໃນການຕັດສິນໃຈທີ່ຫຼາຍຂຶ້ນ. PTBUL ໄດ້ທົດລອງກິດຈະກໍາ LGBTQI+ Peer Education Network ໃນນະຄອນຫຼວງວຽງຈັນ ເຊິ່ງຈັບຄູ່ນັກເຄື່ອນໄຫວດ້ານສິດທິ LGBTQI+ ກັບໄວໜຸ່ມ LGBTQI+ ທີ່ຍັງບໍ່ທັນໄດ້ມີສ່ວນຮ່ວມໃນສັງຄົມ. ເປົ້າໝາຍແມ່ນເພື່ອເສີມຂະຫຍາຍຄວາມສາມາດຂອງຜູ້ນໍາໜຸ່ມໃນການເຂົ້າຮ່ວມດ້ານການພັດທະນາ ໂດຍການຫຼຸດຜ່ອນສິ່ງກີດຂວາງ ແລະ ເພີ່ມໂອກາດໃນການສະແດງທັດສະນະ ແລະ ຄວາມຄິດເຫັນຂອງພວກເຂົາ.

ໄວໜຸ່ມໄດ້ມີການເຮັດວຽກອາສາສະໝັກຢ່າງຫ້າວຫັນໃນວິທະຍຸຊຸມຊົນ ແລະ ວິທະຍຸກະຈາຍສຽງ, ອັນເປັນແຫຼ່ງຂໍ້ມູນຂ່າວສານທີ່ສໍາຄັນໂດຍສະເພາະຢູ່ເຂດຊົນນະບົດ ແລະ ເປັນຊ່ອງທາງໃຫ້ແກ່ຜູ້ຊົມທີ່ຫຼາກຫຼາຍໃຫ້ມີສ່ວນຮ່ວມໃນການສົນທະນາໃນສາທາລະນະ. ວິທະຍຸຊຸມຊົນມັກຈະເປັນວິທີທີ່ມີປະສິດທິພາບໃນການສົ່ງເສີມການປູກຈິດສໍານຶກ ເຊັ່ນ: ມາດຕະການກັນພະຍາດໂຄວິດ-19 ແລະ ບັນຫາຄວາມສະເໝີພາບບົດບາດຍິງ-ຊາຍ, ແລະ ອື່ນໆ.

ວິທະຍຸຊາວໜຸ່ມລາວສົນໄຊຍຸກໃໝ່ (Lao Youth Radio) ແມ່ນໜຶ່ງໃນບັນດາວິທະຍຸກະຈາຍສຽງຂອງຊາວໜຸ່ມທີ່ສໍາຄັນທີ່ສຸດ. ໂຄສົກຂອງສະຖານີດັ່ງກ່າວຈໍານວນ 30 ຄົນ ສ່ວນໃຫຍ່ມີອາຍຸຕໍ່າກວ່າ 35 ປີ; ເຄິ່ງໜຶ່ງແມ່ນແມ່ຍິງ. ສະຖານີດັ່ງກ່າວໄດ້ສ້າງຕັ້ງຂຶ້ນໃນປີ 2015 ໂດຍຮ່ວມມືກັບສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ. ຊາວໜຸ່ມມີບົດບາດຢ່າງຕັ້ງໜ້າໃນທຸກພາກສ່ວນຂອງການສ້າງ ແລະ ຜະລິດວິທະຍຸກະຈາຍສຽງ. ຊ່ອງທາງອອນລາຍຂອງສະຖານີໄດ້ເຕີບໃຫຍ່ຂຶ້ນນັບຕັ້ງແຕ່ການມີພະຍາດລະບາດ, ໂດຍມີຄົນຕິດຕາມເພຈເຟສບຸກຂອງສະຖານີຫຼາຍຂຶ້ນ. ສະຖານີໄດ້ຮ່ວມມືກັບສະມາຄົມທີ່ບໍ່ຫວັງຜົນກໍາໄລ, ບັນດານັກວິຊາການ ແລະ ນັກຄົ້ນຄວ້າເພື່ອເກັບກໍາຂໍ້ມູນໃຫ້ດີຂຶ້ນ ແລະ ໃຫ້ຂໍ້ມູນ ແລະ ສະຖິຕິທີ່ເປັນປະໂຫຍດແກ່ຜູ້ຟັງ. ສະຖານີວິທະຍຸແຫ່ງນີ້ມີແຜນທີ່ຈະສ້າງສູນເຝິກອົບຮົມເພື່ອໃຫ້ໄວໜຸ່ມ ແລະ ສະມາຊິກຂອງຊຸມຊົນທ້ອງຖິ່ນມີທັກສະໃນການຊົມໃຊ້ສື່ສັງຄົມອອນລາຍໃຫ້ເປັນປະໂຫຍດ (ສິດທິລາດ, 2021).

ສິ່ງໜຶ່ງທີເກີດຂຶ້ນໃໝ່ ແຕ່ກໍາລັງພົ້ນເດັ່ນໃນຂົງເຂດວຽກງານອາສາສະໝັກແມ່ນ ວິສາຫະກິດເພື່ອສັງຄົມທີ່ນໍາພາໂດຍໄວໜຸ່ມ (youth led social enterprise). ສິ່ງເຫຼົ່ານີ້ລວມເອົາໂລກຂອງທຸລະກິດ ແລະ ອົງການບໍ່ຫວັງຜົນກໍາໄລເຂົ້ານໍາກັນ ແລະ ມັກຈະໃຊ້ການເຊື່ອມຕໍ່ສື່ສານທາງດິຈິຕອນ ແລະ ຊ່ອງທາງອອນລາຍ ໃນການແບ່ງປັນແນວຄວາມຄິດ ແລະ ສ້າງການຮ່ວມມືດ້ານຕ່າງໆ. ຕົວຢ່າງດ້ານຊ່ອງທາງອອນລາຍ ໄດ້ແກ່: Hubbo, Global Shapers Vientiane Hub ແລະ STELLA. Hubbo ສົ່ງເສີມການມີສ່ວນຮ່ວມໃນສັງຄົມ ໂດຍການເຊື່ອມຕໍ່ໄວໜຸ່ມກັບໂອກາດດ້ານວຽກອາສາສະໝັກ, ມີຈຸດປະສົງເພື່ອຊ່ວຍໃຫ້ໄວໜຸ່ມສ້າງທັກສະທາງສັງຄົມ (soft skill) ໃນຂະນະດຽວກັນ ກໍ່ສົ່ງເສີມການມີສ່ວນຮ່ວມຂອງໄວໜຸ່ມ. Global Shapers Vientiane Hub ມີສ່ວນຮ່ວມກັບກຸ່ມໄວໜຸ່ມ “ຜູ້ທີ່ເຮັດວຽກເພື່ອສ້າງອະນາຄົດຂອງຊຸມຊົນ ແລະ ປະເທດຂອງເຂົາເຈົ້າ ໂດຍການສະເໜີວິທີແກ້ໄຂທີ່ນໍາພາໂດຍໄວໜຸ່ມ (ສະຖາບັນລາວ-ອົດສະຕຣາລີ, 2021).

ຂວັນຟ້າ ສິຣິພອນ ແລະ ສຸພາພອນ ດັ່ງມະນີ, ສອງຜູ້ປະກອບການໄວໜຸ່ມທີ່ມີຄວາມສົນໃຈໃນການພັດທະນາໄວໜຸ່ມ ແລະ ວຽກງານອາສາສະໝັກ ໄດ້ກໍ່ຕັ້ງ ສະເຕ່ວລ້າ (STELLA). ສະເຕ່ວລ້າ ໃຫ້ໄວໜຸ່ມມີໂອກາດພັດທະນາສັກກະຍະພາບຂອງຕົນ ແລະ ສ້າງຜົນກະທົບທາງສັງຄົມ ໂດຍຜ່ານການລິເລີ່ມອາສາສະໝັກ ແລະ ໄດ້ຮ່ວມມືກັບປະມານ 40 ອົງການຈັດຕັ້ງໃນທົ່ວອຸດສາຫະກໍາທີ່ຫຼາກຫຼາຍ ເພື່ອອອກແບບໂຄງການສໍາລັບໄວໜຸ່ມ. ຕົວຢ່າງ, STELLA ຄຸ້ມຄອງໂຄງການຊ່ວຍເຫຼືອຂະໜາດນ້ອຍທີ່ເອີ້ນວ່າ Kup Ban Kun—ຫຼື 'ກັບບ້ານກັນ'—ໂດຍການຮ່ວມມືກັບ Helvetas. ໂຄງການດັ່ງກ່າວນີ້ໄດ້ສະໜອງເງິນ 10 ລ້ານກີບໃຫ້ແກ່ບັນດາໂຄງການອາສາສະໝັກທີ່ໃຫ້ການສະໜັບສະໜູນໂດຍກົງໃຫ້ແກ່ຊຸມຊົນຊົນນະບົດໃນການປັບປຸງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຜົນຜະລິດທາງການກະເສດ ແລະ ການນໍາເອົາກະສິກໍາປອດສານພິດມາຈັດຕັ້ງປະຕິບັດ ແລະ ອື່ນໆ. ແນວຄິດລິເລີ່ມດັ່ງກ່າວຊ່ວຍໃຫ້ໄວໜຸ່ມໃນນະຄອນຫຼວງວຽງຈັນ ແລະ ຊົນນະບົດເປັນອາສາສະໝັກຮ່ວມກັນ ເພື່ອແນໃສ່ສ້າງທັກສະການເປັນຜູ້ນໍາ ແລະ ໄດ້ຮັບປະສົບການຕົວຈິງ, ເສີມສ້າງທັກສະທາງສັງຄົມໃນການພັດທະນາຊຸມຊົນ ແລະ ກາຍເປັນຜູ້ປ່ຽນແປງໃນອະນາຄົດ (ສະຖາບັນລາວ-ອົດສະຕຣາລີ, 2021).

## ທັດສະນະຂອງໄວໜຸ່ມຕໍ່ກັບການມີສ່ວນຮ່ວມ ແລະ ການປະກອບສ່ວນໃນສັງຄົມ

ໄວໜຸ່ມມີທັດສະນະທີ່ຫຼາກຫຼາຍກ່ຽວກັບການມີສ່ວນຮ່ວມ, ດັ່ງທີ່ພົນປະກົດໃຫ້ເຫັນຈາກການສໍາຫຼວດທາງອອນລາຍ ແລະ ແບບເຊິ່ງໜ້າ ລວມທັງການສົນທະນາກຸ່ມ ທີ່ໄດ້ຈັດຂຶ້ນເພື່ອບົດລາຍງານສະບັບນີ້. ໂດຍລວມ, ໄດ້ເຫັນເຖິງລະດັບ

ຄວາມຮັບຮູ້ທີ່ຕ່າງກັນຂອງໄວໜຸ່ມໃນດ້ານກົດໝາຍ, ນະໂຍບາຍ ແລະ ຂໍ້ລິເລີ່ມທີ່ໄດ້ລະບຸໄວ້ຂ້າງເທິງ. ການສໍາຫຼວດອອນລາຍພົບວ່າມີ 45,1 ສ່ວນຮ້ອຍ ຂອງໄວໜຸ່ມທີ່ຮູ້ກ່ຽວກັບນະໂຍບາຍ ເຊັ່ນ: ຍຸດທະສາດການພັດທະນາໄວໜຸ່ມ ແລະ ເຍົາວະຊົນ (ຮູບ 5.2), ໃນຂະນະທີ່ການສໍາຫຼວດແບບເຊິ່ງໜ້າພົບວ່າ ມີພຽງແຕ່ 24 ສ່ວນຮ້ອຍ ໄດ້ຍິນກ່ຽວກັບສິ່ງເຫຼົ່ານີ້. ໃນການສົນທະນາກຸ່ມ, ມີຜູ້ເຂົ້າຮ່ວມຈໍານວນໜ້ອຍທີ່ອ້າງວ່າ ຮູ້ກ່ຽວກັບກົດໝາຍພາຍໃນປະເທດ ແລະ ນະໂຍບາຍການຄຸ້ມຄອງການພັດທະນາໄວໜຸ່ມ; ຈໍານວນໜຶ່ງກ່າວວ່າການເຂົ້າເຖິງຂໍ້ມູນດັ່ງກ່າວແມ່ນຈໍາກັດ.

ຄໍາຖາມສໍາຫຼວດທາງອອນລາຍທີ່ສໍາຄັນຂໍ້ໜຶ່ງກ່ຽວກັບການມີສ່ວນຮ່ວມ ໂດຍສຸມໃສ່ຄວາມຮູ້ສຶກຂອງໄວໜຸ່ມວ່າ ເຂົາເຈົ້າຮູ້ສຶກວ່າຕົນເອງມີສິດ ຫຼື ມີສຽງໃນການຕັດສິນໃຈທີ່ມີຜົນກະທົບຕໍ່ຊີວິດຂອງພວກເຂົາບໍ່: 80,5 ສ່ວນຮ້ອຍຂອງຜູ້ຕອບແບບສໍາຫຼວດກ່າວວ່າ "ມີໜ້ອຍໜຶ່ງ" (49,1 ສ່ວນຮ້ອຍ) ຫຼື "ມີແນ່ນອນ" (31,4 ສ່ວນຮ້ອຍ) (ຮູບ 5.3). ໃນການສໍາຫຼວດແບບເຊິ່ງໜ້າ, 76 ສ່ວນຮ້ອຍ ຂອງຜູ້ຕອບແບບສໍາຫຼວດກໍ່ຕອບຄ້າຍໆກັນ. ຜົນໄດ້ຮັບເຫຼົ່ານີ້ໄດ້ຊີ້ໃຫ້ເຫັນຢ່າງຊັດເຈນວ່າ ໄວໜຸ່ມຮັບຮູ້ວ່າເຂົາເຈົ້າມີອໍານາດໃນການຕັດສິນໃຈ. ຄວາມແຕກຕ່າງກັນມີຢູ່ລະຫວ່າງການຕອບສະໜອງຂອງຊາວໜຸ່ມໃນຕົວເມືອງ ແລະ ຊົນນະບົດ, ໃນນັ້ນ, 11,8 ສ່ວນຮ້ອຍ ຂອງຊາວໜຸ່ມໃນຕົວເມືອງລະບຸວ່າ ເຂົາເຈົ້າບໍ່ມີສິດມີສຽງຫຼາຍປານໃດໃນການຕັດສິນໃຈ ເມື່ອທຽບໃສ່ກັບ 21 ສ່ວນຮ້ອຍ ຂອງຊາວໜຸ່ມຊົນນະບົດ. ບໍ່ມີຄວາມແຕກຕ່າງທີ່ຊັດເຈນລະຫວ່າງຜູ້ຕອບເພດຊາຍ ແລະ ຍິງ.

ເຖິງແມ່ນວ່າ ຜົນໄດ້ຮັບໂດຍລວມຊີ້ໃຫ້ເຫັນເຖິງຄວາມຮັບຮູ້ທີ່ຊັດເຈນກ່ຽວກັບສິດອໍານາດ, ແຕ່ການສົນທະນາກຸ່ມ ໄດ້ເຜີຍໃຫ້ເຫັນວ່າ ໄວໜຸ່ມຫຼາຍຄົນຍັງບໍ່ທັນເຂົ້າໃຈແນວຄວາມຄິດຂອງການມີສ່ວນຮ່ວມຢ່າງຮອບດ້ານ. ບາງຄົນຍັງມີຄວາມສັບສົນຕໍ່ແນວຄິດດັ່ງກ່າວ ກັບການເປັນອາສາສະໝັກເພື່ອສັງຄົມ, ລວມທັງ ການອະນຸລັກຮັກສາມໍລະດົກ, ການປົກປ້ອງສິ່ງແວດລ້ອມ ແລະ ການຊ່ວຍເຫຼືອດ້ານໄພພິບັດ, ຫຼື ການເຂົ້າຮ່ວມກອງປະຊຸມສໍາມະນາ, ການໂອ້ລົມສົນທະນາລະດັບທ້ອງຖິ່ນ ແລະ ພາກພື້ນ, ຫຼື ເຂົ້າຮ່ວມງານແຂ່ງຂັນສິລະປະ ແລະ ງານຕະຫຼາດນັດແຮງງານ. ຊາວໜຸ່ມຄົນອື່ນໆໄດ້ເນັ້ນຢໍ້າຄຸນຄ່າຂອງການມີພື້ນທີ່ເພື່ອແລກປ່ຽນຄວາມຄິດເຫັນ ແລະ ສົ່ງເສີມຄວາມຫຼາກຫຼາຍ. ໜ້ອຍທີ່ສຸດທີ່ເວົ້າເຖິງການເປັນຜູ້ຕັດສິນໃຈ, ຄູ່ຮ່ວມງານ ຫຼື ຜູ້ນໍາໃນການອອກແບບໂຄງການ ຫຼື ນະໂຍບາຍ. ການຄົ້ນພົບນີ້ໄດ້ຢືນຢັນ ການວິໄຈສະພາບໄວໜຸ່ມ ແລະ ເຍົາວະຊົນປີ 2014 ທີ່ລະບຸວ່າ ບໍ່ພົບຫຼັກຖານການມີສ່ວນຮ່ວມໃນການຕັດສິນໃຈໃດໆຂອງໄວໜຸ່ມ (LYU ແລະ UNPFA, 2014).

ຮູບທີ 5.2 + ຮູບທີ 5.3

ໃນດ້ານຮູບແບບການມີສ່ວນຮ່ວມ, 85,7 ສ່ວນຮ້ອຍ ຂອງຊາວໜຸ່ມທີ່ຖືກສໍາຫຼວດກ່າວວ່າການເປັນອາສາສະໝັກແມ່ນສໍາຄັນ. ເຖິງແນວໃດກໍຕາມ, ມີພຽງແຕ່ 6,9 ສ່ວນຮ້ອຍ ເທົ່ານັ້ນທີ່ລະບຸວ່າ ເຂົາເຈົ້າມີສ່ວນຮ່ວມໃນກິດຈະກໍາອາສາສະໝັກ; 76,3 ສ່ວນຮ້ອຍ ລາຍງານວ່າ ບໍ່ໄດ້ເປັນສ່ວນໜຶ່ງຂອງກຸ່ມຊຸມຊົນ ຫຼື ສະມາຄົມໃດໆ. ຜົນໄດ້ຮັບເຫຼົ່ານີ້ແມ່ນສອດຄ່ອງກັບຜົນການຄົ້ນພົບຂອງ ດັດຊະນີການພັດທະນາໄວໜຸ່ມອາຊຽນ ເຊິ່ງລະບຸໄວ້ວ່າ ຈໍານວນອາສາສະໝັກໄວໜຸ່ມໃນ ສປປ ລາວ ຫຼຸດລົງຢ່າງຫຼວງຫຼາຍ ໃນໄລຍະ 4 ປີ ຈົນເຖິງປີ 2015. ເມື່ອຖືກຖາມວ່າ ໄວໜຸ່ມມີສ່ວນຮ່ວມກັບວຽກງານອາສາສະໝັກປະເພດໃດ, ສ່ວນຫຼາຍຕອບວ່າ ກິດຈະກໍາການເກັບຂີ້ເຫຍື້ອ. ໃນບັນດາຜູ້ທີ່ເຄີຍເປັນອາສາສະໝັກ, ມີ 63,4 ສ່ວນຮ້ອຍ ອະທິບາຍວ່າ ເຄີຍມີສ່ວນຮ່ວມໃນກິດຈະກໍາດັ່ງກ່າວນີ້.

ການສໍາຫຼວດແບບເຊິ່ງໜ້າໄດ້ສະແດງໃຫ້ເຫັນວ່າໄວໜຸ່ມສ່ວນໃຫຍ່ໄດ້ຮັບຂໍ້ມູນຈາກໂທລະພາບ (28.8.2 ສ່ວນຮ້ອຍ) ແຕ່ອັດຕາສ່ວນໃຫຍ່ທີ່ສຸດ (52,7 ສ່ວນຮ້ອຍ), ຢູ່ທົ່ວປະເທດລະບຸວ່າ ໄດ້ຮັບຂ່າວສານຈາກສື່ສັງຄົມອອນລາຍ ເຊັ່ນ: Facebook, YouTube, Instagram, WhatsApp, Line ແລະ WeChat (ຮູບ 5.4). ເມື່ອແບ່ງຕາມເຂດທີ່ຢູ່ອາໄສ, ອັດຕາສ່ວນນີ້ປ່ຽນໄປເລັກໜ້ອຍ, ໂດຍໄວໜຸ່ມທີ່ຢູ່ເຂດຊົນນະບົດ ແລະ ໃນຕົວເມືອງ ທີ່ໄດ້ຮັບຂ່າວສານຈາກສື່ສັງຄົມອອນລາຍ ກວມເອົາ 45,3 ແລະ 62,7 ສ່ວນຮ້ອຍ ຕາມລໍາດັບ. ອັນນີ້ທຽບກັບພຽງແຕ່ 30,1 ສ່ວນຮ້ອຍ ຂອງໄວໜຸ່ມໃນເຂດຫ່າງໄກສອກຫຼີກ. ເຂົາເຈົ້າມີແນວໂນ້ມທີ່ຈະໄດ້ຮັບຂ່າວທາງໂທລະພາບຫຼາຍກວ່າ 60 ສ່ວນຮ້ອຍ, ເມື່ອທຽບໃສ່ກັບໄວໜຸ່ມໃນເຂດຕົວເມືອງ ແລະ ຊົນນະບົດທີ່ມີພຽງ 19,2 ແລະ 46,4 ສ່ວນຮ້ອຍ ເທົ່ານັ້ນ ຕາມລໍາດັບ.

ຮູບທີ 5.4

ການສໍາຫຼວດຕົວຊີ້ວັດສັງຄົມລາວຄັ້ງທີ II ໃນປີ 2017 ລາຍງານວ່າ ມີໄວໜຸ່ມພຽງ 10 ສ່ວນຮ້ອຍ ເທົ່ານັ້ນທີ່ໄດ້ນໍາໃຊ້ອິນເຕີເນັດ. ເຖິງແມ່ນວ່າ ອັດຕາການເຂົ້າເຖິງອິນເຕີເນັດໂດຍລວມແມ່ນປະມານ 34 ສ່ວນຮ້ອຍ ໃນປີ 2020, ຂໍ້ມູນດ້ານການນໍາໃຊ້ບໍ່ຊັດເຈນ ແລະ ຈໍາກັດ ຖືກແບ່ງອອກຕາມອາຍຸ ຫຼື ສະຖານທີ່ (ທະນາຄານໂລກ, 2022). ເຖິງວ່າຈະຍັງຂາດຂໍ້ມູນ, ແຕ່ການນໍາໃຊ້ສື່ສັງຄົມອອນລາຍຂອງໄວໜຸ່ມທີ່ເພີ່ມຂຶ້ນຢ່າງຊັດເຈນ ໄດ້ເຮັດໃຫ້ສື່ເຫຼົ່ານີ້ມີອໍານາດທັງໃນດ້ານການແຂ່ງຂັນ ແລະ ການແລກປ່ຽນຂໍ້ມູນຂ່າວສານສໍາລັບກຸ່ມສັງຄົມ ແລະ ການເຄື່ອນໄຫວຂອງໄວໜຸ່ມ ລວມເຖິງ ມີທ່າອ່ຽງເປັນແຫຼ່ງກໍາເນີດຂອງຂໍ້ມູນທີ່ບິດເບືອນ ແລະ ບໍ່ຖືກຕ້ອງ. ໄວໜຸ່ມສ່ວນໃຫຍ່ທີ່ມີການເຂົ້າເຖິງອິນເຕີເນັດໃນທົ່ວການສົນທະນາສະເພາະກຸ່ມ ໄດ້ຮັບຮູ້ເຖິງຄວາມອັນຕະລາຍດັ່ງກ່າວ ແລະ ຢັ້ງຢືນວ່າ ຈໍາເປັນຕ້ອງ "ຕິດຕາມຂ່າວຢ່າງມີສະຕິ" ແລະ ຫຼີກເວັ້ນ "ຂ່າວປອມ".

ໃນການສົນທະນາສະເພາະກຸ່ມ, ໄວໜຸ່ມໄດ້ແບ່ງປັນປະສົບການຂອງເຂົາເຈົ້າກ່ຽວກັບພື້ນທີ່ໃນການສະແດງຄວາມຄິດເຫັນຂອງຕົນທີ່ຈໍາກັດ. ຫຼາຍຄົນຮູ້ສຶກພ້ອມ ແລະ ເຕັມໃຈທີ່ຈະເຂົ້າຮ່ວມຂະບວນການພັດທະນາ ແລະ ໂດຍຫຼັກການແລ້ວພວກເຂົາຮູ້ສຶກວ່າ ພວກເຂົາມີຄວາມສາມາດໃນການກໍານົດອະນາຄົດຂອງຕົນເອງ ພຽງແຕ່ຂາດໂອກາດໃນການລົງມືຈັດຕັ້ງປະຕິບັດ. ຜູ້ເຂົ້າຮ່ວມບາງຄົນບໍ່ເຫັນດີກັບແນວຄິດຂອງຜູ້ໃຫຍ່ຫຼາຍຄົນທີ່ວ່າໄວໜຸ່ມມີຄວາມສາມາດໜ້ອຍທີ່ຈະສ້າງການປ່ຽນແປງຍ້ອນວ່າພວກເຂົາຍັງອ່ອນປະສົບການ. ຜູ້ເຂົ້າຮ່ວມໄວໜຸ່ມມີຄວາມກັງວົນວ່າ ເຖິງແມ່ນພວກເຂົາຈະມີໂອກາດປະກອບສ່ວນ, ແຕ່ຄໍາຄິດເຫັນຂອງເຂົາເຈົ້າກໍ່ອາດຈະຖືກເກັບກໍາ "ພໍເປັນພິທີ" ເທົ່ານັ້ນ, ໂດຍມັນບໍ່ມີຜົນກະທົບໃດໆຕໍ່ການຈັດຕັ້ງປະຕິບັດ.

ເຂົ້າຮ່ວມກຸ່ມສົນທະນາສະເພາະກຸ່ມເຫັນພ້ອມນໍາກັນວ່າ ລະບົບປັດຈຸບັນປະຕິເສດສຽງຂອງໄວໜຸ່ມ ແລະ ມັນຈໍາເປັນທີ່ຕ້ອງມີພື້ນທີ່ໃຫ້ໄວໜຸ່ມ "ສະແດງຄວາມຄິດເຫັນກ່ຽວກັບການຕັດສິນໃຈໃນບັນດາເລື່ອງໃຫຍ່ໆ", ດັ່ງທີ່ຜູ້ເຂົ້າຮ່ວມໜຶ່ງໄດ້ກ່າວໄວ້. ນອກເໜືອໄປຈາກການຂາດກົນໄກການມີສ່ວນຮ່ວມຢ່າງເປັນທາງການແລ້ວ,ໄວໜຸ່ມບາງຄົນກັງວົນວ່າ ຂໍ້ຈໍາກັດໃນການສະແດງອອກເຮັດໃຫ້ໄວໜຸ່ມລັງເລທີ່ຈະສະແດງຄວາມຄິດເຫັນຂອງເຂົາເຈົ້າ ເພາະຢ້ານວ່າຈະຖືກເຂົ້າໃຈຜິດ ຫຼື ແມ່ນແຕ່ຖືກລົງໂທດ. ມີພຽງແຕ່ຜູ້ເຂົ້າຮ່ວມຈໍານວນໜ້ອຍ ເຊັ່ນຜູ້ທີ່ເປັນຄະນະຫ້ອງຢູ່ໂຮງຮຽນນານາຊາດ ຫຼື ຜູ້ທີ່ມີສາຍສໍາພັນຄອບຄົວກັບການຈັດຕັ້ງລະດັບທ້ອງຖິ່ນກ່າວວ່າ ພວກເຂົາຮູ້ສຶກຖືກຮັບຟັງ. ຜູ້ເຂົ້າຮ່ວມຄົນອື່ນໆກ່າວວ່າ ພວກເຂົາເຈົ້າພຽງແຕ່ໃຫ້ຄວາມເຫັນຕໍ່ໝູ່ເພື່ອນທີ່ໃກ້ຊິດ ແລະ ສະມາຊິກໃນຄອບຄົວເທົ່ານັ້ນ.

ຊາວໜຸ່ມຈາກຊຸມຊົນຊົນເຜົ່າສ່ວນນ້ອຍ ແລະ ກຸ່ມຄົນດ້ອຍໂອກາດ ເຊັ່ນ: ຄົນທີ່ມີຄວາມພິການ ແລະ ສະມາຊິກຂອງຊຸມຊົນ LGBTQI+ ກ່າວວ່າ ພວກເຂົາເຄີຍມີສຽງໜ້ອຍໃນການຕັດສິນໃຈ. ເຂົາເຈົ້າຮູ້ສຶກວ່າ ອົງການຈັດຕັ້ງບາງອົງການ ເຊັ່ນ: ບັນດາຫົວໜ່ວຍທຸລະກິດ ແລະ ອົງການຈັດຕັ້ງທາງສັງຄົມ ກໍາລັງເລີ່ມສ້າງເວທີໃຫ້ເຂົາເຈົ້າໄດ້ສະແດງອອກຫຼາຍຂຶ້ນ ເມື່ອທຽບກັບສອງສາມປີກ່ອນ.

ໃນລະຫວ່າງການສົນທະນາກັບໄວໜຸ່ມທີ່ມີຄວາມພິການ, ຜູ້ເຂົ້າຮ່ວມໄດ້ຊີ້ໃຫ້ເຫັນວ່າ ທັດສະນະຄະຕິດ້ານລົບ ແລະ ທັດສະນະເໝົາລວມ ສົ່ງຜົນກະທົບຕໍ່ຂອບເຂດການມີສ່ວນຮ່ວມໃນສັງຄົມຂອງເຂົາເຈົ້າ. ເຂົາເຈົ້າໄດ້ອະທິບາຍວ່າ ໄວໜຸ່ມທີ່ມີຄວາມພິການ ບໍ່ໄດ້ຮັບໂອກາດໃຫ້ເປັນອາສາສະໝັກ ຫຼື ເຮັດວຽກງານທາງສັງຄົມໃດໆ ເນື່ອງຈາກພວກເຂົາຖືກເບິ່ງວ່າບໍ່ມີການສຶກສາ ແລະ ຂາດຄວາມສາມາດ. ຫຼາຍອົງການຈັດຕັ້ງຮູ້ສຶກວ່າໄວໜຸ່ມທີ່ມີຄວາມພິການຈະສ້າງພາລະຕໍ່ຊັບພະຍາກອນທີ່ມີຢູ່ຈໍາກັດ ສະນັ້ນຈຶ່ງບໍ່ສະແຫວງຫາໃຫ້ພວກເຂົາມາຮ່ວມໃນອົງການຈັດຕັ້ງ. ເມື່ອຄົນທີ່ມີຄວາມພິການມີສ່ວນຮ່ວມ, ເຂົາເຈົ້າມັກຈະຖືກປະເມີນຄ່າຕໍ່າ. ໃນລະດັບທີ່ສູງຂຶ້ນ, ໄວໜຸ່ມທີ່ມີຄວາມພິການບໍ່ຄ່ອຍມີສ່ວນຮ່ວມກັບຜູ້ມີອໍານາດຕັດສິນໃຈ, ນອກຈາກໄວໜຸ່ມທີ່ມີຄວາມພິການທາງຮ່າງກາຍບາງຄົນທີ່ໄດ້ມີສ່ວນຮ່ວມຢ່າງຈໍາກັດກັບອໍານາດການປົກຄອງທ້ອງຖິ່ນ. ອັນນີ້ກໍ່ຍ້ອນທັດສະນະດ້ານລົບກ່ຽວກັບຄວາມສາມາດ ແລະ ລະດັບການສຶກສາຂອງໄວໜຸ່ມທີ່ມີຄວາມພິການເຫຼົ່ານີ້. ເນື່ອງຈາກໄວໜຸ່ມທີ່ມີຄວາມພິການມີແນວໂນ້ມທີ່ຈະບໍ່ຮູ້ກົດໝາຍ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບຄວາມພິການ, ເຂົາເຈົ້າຈຶ່ງບໍ່ມີບົດບາດໃນການສົ່ງເສີມການຈັດຕັ້ງປະຕິບັດ, ການປັບປຸງ ຫຼື ການປະຕິຮູບ. ເຖິງຢ່າງໃດກໍຕາມ, ບັນດາຜູ້ເຂົ້າຮ່ວມຍັງໄດ້ລະບຸວ່າ ຊາວ ໜຸ່ມທີ່ມີຄວາມພິການທາງຮ່າງກາຍມີຄວາມຮັບຮູ້ຫຼາຍຂຶ້ນຜ່ານການເຜີຍແຜ່ຂໍ້ມູນຂ່າວສານ ຈາກລັດຖະບານ ແລະ ອົງການຈັດຕັ້ງຄົນພິການ.

ໄວໜຸ່ມລາວມີຄວາມສົນໃຈ, ເຕັມໃຈ ແລະ ມີຄວາມພ້ອມຢ່າງຊັດເຈນທີ່ຈະມີສ່ວນຮ່ວມໃນການພັດທະນາ. ເຂົາເຈົ້າຕ້ອງການອາສາສະໝັກ ແລະ ຊ່ວຍໃນການບັນລຸເປົ້າໝາຍການພັດທະນາລະດັບຊາດ ແລະ ສາກົນ. ແຕ່ຍັງບໍ່ຊັດເຈນວ່າ ເຂົາເຈົ້າເຂົ້າໃຈແນວຄິດຂອງການມີສ່ວນຮ່ວມໃນບໍລິບົດການພັດທະນາມະນຸດທີ່ຖືໄວໜຸ່ມເປັນສູນກາງຂອງການພັດທະນາ ແລະ ເຊື້ອເຊີນໃຫ້ພວກເຂົາກໍານົດ ແລະ ຕັດສິນໃຈທິດທາງຂອງປະເທດ. ຍິ່ງໄປກວ່ານັ້ນ, ປະເທດຍັງຂາດກົນໄກເພື່ອອໍານວຍຄວາມສະດວກໃຫ້ແກ່ການເຂົ້າຮ່ວມຢ່າງມີຄວາມໝາຍຂອງຊາວໜຸ່ມ ແລະ ສົ່ງເສີມການພັດທະນາມະນຸດຂອງພວກເຂົາ. ວິທີການແບບຝ່າຍດຽວແບບດັ້ງເດີມຄອບງໍານະໂຍບາຍ ແລະ ການປະຕິບັດ. ແມ່ນແຕ່ການເປັນອາສາສະໝັກ ເຊິ່ງໄດ້ຮັບການຍ້ອງຍໍວ່າເປັນແກນຫຼັກຂອງການມີສ່ວນຮ່ວມ ແລະ ການປະ

ກອບສ່ວນຂອງໄວໜຸ່ມ - ໃນຖານະທີ່ເປັນເສັ້ນທາງໄປສູ່ການມີສ່ວນຮ່ວມ ກໍ່ຍັງຫ່າງໄກຄວາມໝັ້ນຄົງ, ເນື່ອງຈາກໄວໜຸ່ມປ່ຽນຄວາມສົນໃຈ ແລະ ໃຊ້ເວລາໄປກັບອິນເຕີເນັດ ນັບມື້ນັບຫຼາຍຂຶ້ນ. ເຍົາວະຊົນອາດຈະເຕັມໃຈທີ່ຈະມີສ່ວນຮ່ວມຫຼາຍກວ່ານີ້ ແຕ່ປາສະຈາກໂອກາດທີ່ມີຄວາມໝາຍໃນການເຮັດສິ່ງດັ່ງກ່າວ ແລະ ເພື່ອຊຸກຍູ້ການພັດທະນາມະນຸດ, ຄວາມກະຕືລືລົ້ນຂອງພວກເຂົາກໍອາດຈະໝົດໄປ.

## 5.5 ສິ່ງກີດຂວາງຕໍ່ການມີສ່ວນຮ່ວມ

ການມີສ່ວນຮ່ວມຂອງໄວໜຸ່ມປະເຊີນກັບສິ່ງທ້າທາຍຫຼາຍຢ່າງທີ່ຈຳເປັນຕ້ອງໄດ້ຮັບຄວາມເຂົ້າໃຈ ແລະ ແກ້ໄຂ. ດັ່ງທີ່ໄດ້ຍົກໃຫ້ເຫັນຂ້າງເທິງ ໃນຮູບແບບການມີສ່ວນຮ່ວມແບບດັ້ງເດີມຫຼາຍ ເຊັ່ນໃນຂົງເຂດການເມືອງເຊັ່ນ: ສະພາປະຊາຊົນແຫ່ງຊາດ ແລະ ແຂວງ, ໄວໜຸ່ມ ແລະ ຄວາມຕ້ອງການຂອງເຂົາເຈົ້າບໍ່ໄດ້ຮັບການນຳສະເໜີຢ່າງເໝາະສົມ. ຫາກບໍ່ມີການເລືອກຕັ້ງສະມາຊິກຊາວໜຸ່ມເຂົ້າຮ່ວມສະພາແຫ່ງຊາດ ແລະ/ຫຼື ສະມາຊິກທີ່ເຮັດວຽກງານສະເພາະເພື່ອທຳຄວາມເຂົ້າໃຈ ແລະ ມຸ່ງໜ້າຫາທາງການແກ້ໄຂບັນຫາທີ່ໄວໜຸ່ມຕ້ອງປະເຊີນ. ໄວໜຸ່ມຈະສືບຕໍ່ພົບກັບສິ່ງກີດຂວາງໃນການເຂົ້າຮ່ວມການຕັດສິນໃຈພັດທະນາປະເທດຊາດໃນລະດັບສູງ. ສະພາແຫ່ງຊາດຍັງຄົງເປັນພາກສ່ວນສຳຄັນຂອງໄວໜຸ່ມ ໃນການນຳເອົາຄວາມອາດສາມາດໄປສູ່ການຈັດຕັ້ງປະຕິບັດ ແລະ ໄດ້ຮັບໂອກາດທີ່ມີຄວາມໝາຍໃນການກຳນົດການຕັດສິນໃຈ ແລະ ນະໂຍບາຍ.

ອີກເວທີໜຶ່ງທີ່ສຳຄັນຕໍ່ການມີສ່ວນຮ່ວມໃນການຕັດສິນໃຈແມ່ນບັນດາກະຊວງ ແລະ ໜ່ວຍງານລັດຖະບານ. ແຕ່ສິ່ງເຫຼົ່ານີ້ຮັກສາວັດທະນະທຳທີ່ບໍ່ຄ່ອຍສະແຫວງຫາທັດສະນະຂອງໄວໜຸ່ມໃນການຕັດສິນໃຈ ຫຼື ໃຫ້ຄຸນຄ່າທັດສະນະຂອງໄວໜຸ່ມໃນຂະບວນການພັດທະນາ. ການສົນທະນາກຸ່ມໄດ້ເຜີຍວ່າ ໄວໜຸ່ມມີຄວາມຢ້ານກົວຕໍ່ອຳນາດການປົກຄອງທ້ອງຖິ່ນ, ໂດຍສະເພາະໄວໜຸ່ມທີ່ຢູ່ນອກເຂດຕົວເມືອງ. ໃນຂົງເຂດຕົວເມືອງ, ໄວໜຸ່ມມີໂອກາດມີສ່ວນຮ່ວມກັບອຳນາດການປົກທ້ອງຖິ່ນຫຼາຍກວ່າ ເຊັ່ນດຽວກັນກັບການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການບໍລິການອອນລາຍເພື່ອພັດທະນາ ແລະ ສະແດງຄວາມຄິດເຫັນກ່ຽວກັບຂະບວນການປົກຄອງທ້ອງຖິ່ນ.ດັ່ງທີ່ໄດ້ຍົກໃຫ້ເຫັນໃນຍຸດທະສາດການພັດທະນາເຍົາວະຊົນ ແລະ ໄວໜຸ່ມຂອງລາວ, ໃນດ້ານທັດສະນະຄະຕິຂອງຜູ້ຮັບຜິດຊອບຕໍ່ວຽກງານການມີສ່ວນຮ່ວມຂອງໄວໜຸ່ມ ຍັງມີຊ່ອງຫວ່າງໃຫ້ປັບປຸງຢູ່ຫຼາຍ. ແຕ່ບັນດາຜູ້ມີອຳນາດຕັດສິນໃຈຕ້ອງມີຄວາມເຂົ້າໃຈໂດຍລວມວ່າໃຜເປັນຜູ້ຮັບຜິດຊອບໃນການມີສ່ວນຮ່ວມຂອງຊາວໜຸ່ມ. ຜູ້ມີອຳນາດຕັດສິນໃຈໃນຕຳແໜ່ງດັ່ງກ່າວໂດຍທົ່ວໄປ ຍັງຂາດຄວາມຮັບຮູ້ ແລະ ຄວາມສາມາດໃນການຈັດຫາເຄື່ອງມືທີ່ຈຳເປັນ, ໃຫ້ການສະໜັບສະໜູນ ແລະ ການໃຫ້ກຳລັງໃຈໄວໜຸ່ມ.

ຄວາມພະຍາຍາມໃນການຍົກ ຄວາມອາດສາມາດໃຫ້ແກ່ພະນັກງານສັງຄົມສົງເຄາະ, ຜູ້ເຮັດວຽກດ້ານສາທາລະນະສຸກ, ຄູອາຈານ, ນາຍຈ້າງຂອງໄວໜຸ່ມ ແລະ ຜູ້ປົກຄອງ ສາມາດຊ່ວຍໃຫ້ກຸ່ມຄົນດັ່ງກ່າວ ມີບົດບາດສຳຄັນໃນການກະຕຸ້ນໃຫ້ໄວໜຸ່ມສະແດງຄວາມຄິດເຫັນຂອງເຂົາເຈົ້າ ແລະ ມີຄວາມໝັ້ນໃຈ ແລະ ຫ້າວຫັນໃນການເຄື່ອນໄຫວໃນຊຸມຊົນຂອງເຂົາ. ບັນຫາທີ່ກ່ຽວຂ້ອງແມ່ນຂາດການສຶກສາຄຸນນະພາບກ່ຽວກັບການມີສ່ວນຮ່ວມຂອງໄວໜຸ່ມ ແລະ ການມີສ່ວນຮ່ວມໃນສັງຄົມ ແລະ ວັດທະນະທຳຂອງລັດຖະບານທີ່ບໍ່ໃຫ້ຄຸນຄ່າການມີສ່ວນຮ່ວມຂອງຊາວໜຸ່ມໃນຂະບວນການພັດທະນາ.

ໄວໜຸ່ມຍັງປະເຊີນກັບອຸປະສັກ ເນື່ອງຈາກລະດັບການຖືກນຳສະເໜີໃນການມີສ່ວນຮ່ວມໃນສັງຄົມຂ້ອນຂ້າງຕ່ຳ. ອົງການຈັດຕັ້ງທີ່ນຳພາໂດຍ ແລະ ສຸມໃສ່ໄວໜຸ່ມ ແມ່ນບໍ່ຄ່ອຍພົບເຫັນຢູ່ໃນຂະບວນການຕັດສິນໃຈ, ເຊິ່ງຈຳກັດຄວາມເຂົ້າໃຈ ແລະ ການດຳເນີນການຕໍ່ສິ່ງທ້າທາຍທີ່ໄວໜຸ່ມຫຼາກຫຼາຍກຸ່ມຕ້ອງປະເຊີນ. ການລົງທະບຽນທາງດ້ານກົດໝາຍສຳລັບອົງການບໍ່ຫວັງຜົນກຳໄລແມ່ນຫຍຸ້ງຍາກ ເພາະຕ້ອງໄດ້ຮັບການອະນຸມັດຫຼາຍແບບທີ່ແຕກຕ່າງກັນ ໃນໄລຍະ 165 ວັນ ຫາ ສອງ ປີ. ໃນທາງກົງກັນຂ້າມ, ເວລາສຳລັບການລົງທະບຽນບໍລິສັດເອກະຊົນໄດ້ຫຼຸດລົງ ຈາກຫົກເດືອນມາເປັນໜຶ່ງເດືອນ. ຍິ່ງໄປກວ່ານັ້ນ, ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລຕ້ອງຕໍ່ອາຍຸການລົງທະບຽນຂອງພວກເຂົາທຸກໆປີ.

ອຸປະສັກອື່ນໆແມ່ນຢູ່ໃນປະມວນກົດໝາຍອາຍາ (2017), ເຊິ່ງການກະທຳຜິດ ການໂຄສະນາຕ້ານ ສປປ ລາວ" (ມາດຕາ 65) ແລະ "ການເຕົ້າໂຮມກຸ່ມຄົນເພື່ອສ້າງຄວາມປັ່ນປ່ວນ" (ມາດຕາ 72) ອາດສ້າງຄວາມຫຍຸ້ງຍາກໃນການວາງຕົວຂອງໄວໜຸ່ມຕໍ່ກັບເລື່ອງສຳຄັນໆເຊັ່ນ: ການພັດທະນາຊຸມຊົນ ຫຼື ການປົກປັກຮັກສາສິ່ງແວດລ້ອມ ແລະ ການປ່ຽນແປງຂອງດິນຟ້າອາກາດ. ອີງຕາມດຳລັດເລກທີ 327 ວ່າດ້ວຍ ການຄຸ້ມຄອງຂໍ້ມູນຂ່າວສານ ຜ່ານອິນເຕີເນັດ (2014), ການລົງໂທດທາງອາຍາໃຫ້ກັບການວິພາກວິຈານລັດຖະບານ ແລະ ພັກປະຊາຊົນປະຕິວັດລາວ ຜ່ານອິນເຕີເນັດ ຫຼື ການເຜີຍແຜ່ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ ຫຼື ບິດເບືອນຜ່ານອິນເຕີເນັດ ສາມາດຂັດ



“

**ຈິນູ ເລີຣາງ**

ອາຍຸ 18 ປີ, ນັກຮຽນຊົນເຜົ່າມົ້ງຈາກແຂວງຫົວພັນ.

ການມີຄວາມສາມາດ ມີສ່ວນຮ່ວມ ແລະ ມີໂອກາດທີ່ຈະປະກອບສ່ວນແມ່ນວິທີການທີ່ດີໃນການຮຽນຮູ້ ແລະ ການແບ່ງປັນ. ແຕ່ໃນຫຼາຍໆຄັ້ງ, ໂອກາດທີ່ຈະເຂົ້າຮ່ວມນັ້ນຫຍຸ້ງຍາກ, ໃນຂະນະທີ່ມັນຄວນຈະເປີດກວ້າງ ແລະ ເຂົ້າເຖິງໄດ້ງ່າຍ. ຂ້າພະເຈົ້າຮູ້ສຶກວ່າ ຍັງມີການຈຳແນກຕໍ່ແມ່ຍິງ, ເຍົາວະຊົນ ແລະ ຄົນທີ່ມີຄວາມພິການ ແລະ ນີ້ແມ່ນໜຶ່ງໃນເຫດຜົນທີ່ກີດຂວາງການຮຽນຮູ້ ແລະການພັດທະນາຂອງໄວໜຸ່ມໃນສັງຄົມຂອງພວກເຮົາ.

ຂ້າພະເຈົ້າຢາກເຫັນການເປີດໂອກາດໃຫ້ໄວໜຸ່ມໄດ້ພິສູດຄວາມສາມາດຂອງຕົນ ໃນການປະກອບສ່ວນ ແລະ ມີສ່ວນຮ່ວມໃນສັງຄົມຫຼາຍຂຶ້ນ ແລະ ຢາກເຫັນການຈຳແນກຕໍ່ເຍົາວະຊົນຫຼຸດໜ້ອຍລົງ.

## ຮູບທີ 5.3: ໄວໜຸ່ມສ່ວນຫຼາຍຮູ້ສຶກວ່າເຂົາເຈົ້າມີສິດມີສຽງທີ່ຈຳກັດໃນການຕັດສິນໃຈ

ແຫຼ່ງຂໍ້ມູນ: UNDP, Online Survey for NHDR of Lao PDR 2022




## ຮູບທີ 5.2: ຊາວໜຸ່ມສະແດງໃຫ້ເຫັນເຖິງລະດັບຄວາມຮັບຮູ້ທີ່ຕ່າງກັນໃນດ້ານກົດໝາຍ ແລະ ນະໂຍບາຍທີ່ມີຜົນກະທົບຕໍ່ພວກເຂົາ

ແຫຼ່ງຂໍ້ມູນ: ການສຳຫຼວດແບບອອນລາຍສຳລັບບົດລາຍງານການພັດທະນາມະນຸດແຫ່ງຊາດ 2022, UNDP.




ລະດັບຄວາມຮັບຮູ້ໃນດ້ານກົດໝາຍ ແລະ ນະໂຍບາຍທີ່ມີຜົນກະທົບຕໍ່ໄວໜຸ່ມໃນລາວ ເຊັ່ນ: ຍຸດທະສາດການພັດທະນາໄວໜຸ່ມ ແລະ ເຍົາວະຊົນ

ຂວາງບໍ່ໃຫ້ໄວໜຸ່ມມີສ່ວນຮ່ວມໃນບົດສົນທະນາ, ການໂອ້ລົມ-ແລກປ່ຽນ ຫຼື ວຽກງານການສົ່ງເສີມທາງອອນລາຍ. ມີລາຍງານວ່າ ຂໍ້ຈຳກັດເພີ່ມຕື່ມມີຈຸດມຸ່ງໝາຍເພື່ອຮັບປະກັນການຍຶດໝັ້ນ ແລະ ສົ່ງເສີມນະໂຍບາຍຂອງລັດຖະບານຢ່າງເຂັ້ມງວດ. ການປັບປຸງກົດໝາຍວ່າດ້ວຍສື່ມວນຊົນ (2008) ທີ່ມີຂຶ້ນໃນປີ 2016 ແລະ ດຳລັດວ່າດ້ວຍການຄຸ້ມຄອງສື່ຕ່າງປະເທດ (2015) ກຳນົດໃຫ້ມີການສົ່ງເອກະສານ ລວມເຖິງ ບົດບັນຍັດອື່ນໆ ເພື່ອໃຫ້ລັດຖະບານອະນຸມັດກ່ອນການເຜີຍແຜ່.

ໂອກາດໃນການມີປະສົບການ ແລະ ເຂົ້າໃຈຄວາມຮັບຜິດຊອບ ແລະໂອກາດຂອງການມີສ່ວນຮ່ວມໃນສັງຄົມ ອາດຈະບໍ່ເທົ່າທຽມກັນໃນບັນດາໄວໜຸ່ມທີ່ມີພື້ນຖານ ດ້ານວັດທະນະທຳ ຫຼື ຊົນເຜົ່າ, ເຊື້ອຊາດ ແລະ ສະຖານະພາບທາງເສດຖະກິດ-ສັງຄົມ ທີ່ແຕກຕ່າງກັນ (Freeman, 2009). ກຸ່ມທີ່ປະເຊີນກັບຊ່ອງຫວ່າງທີ່ສູງ ລວມມີແມ່ຍິງໄວໜຸ່ມ, ໂດຍສະເພາະຈາກເຂດຊົນນະບົດ; ໄວໜຸ່ມທີ່ມີຄວາມພິການ; ໄວໜຸ່ມຈາກຊົນເຜົ່າ; ໄວໜຸ່ມກຸ່ມ LGBTQI+ ແລະ ໄວໜຸ່ມກຸ່ມອົບພະຍົບ. ຄວາມແຕກໂຕນດັ່ງກ່າວນີ້ເຮັດໃຫ້ເຫັນວ່າວັດທະນະທຳການມີສ່ວນຮ່ວມແມ່ນຈຳເປັນ, ແຕ່ມັນຕ້ອງສອດຄ່ອງກັບການສົ່ງເສີມການມີສ່ວນຮ່ວມຂອງທຸກຄົນໃນສັງຄົມ ເພື່ອໃຫ້ກຸ່ມຄົນທີ່ມີຄວາມສ່ຽງສາມາດເຂົ້າເຖິງຂໍ້ມູນ ແລະ ຮູ້ສຶກຖືກຕ້ອນຮັບໃນການມີສ່ວນຮ່ວມກັບລັດຖະບານ. ຫຼາຍກຸ່ມຍັງຂາດບົດບາດ ເນື່ອງຈາກອຸປະສັກໃນການເຂົ້າເຖິງຂໍ້ມູນຂ່າວສານ ລວມທັງການມີອະຄະຕິ ແລະ ການດູຖູກຈາກສັງຄົມໂດຍລວມ ແລະ ຈາກຜູ້ທີ່ມີອຳນາດຕັດສິນໃຈເອງ. ການເຂົ້າເຖິງໄວໜຸ່ມທີ່ດ້ອຍໂອກາດ ແລະ ມີຄວາມສ່ຽງ ແມ່ນເປັນສິ່ງທ້າທາຍອັນໃຫຍ່ຫຼວງໃນທຸກສັງຄົມ, ລວມທັງໃນ ສປປ ລາວ, ຍ້ອນວ່າກຸ່ມດັ່ງກ່າວມັກຈະຖືກຕັດຂາດຈາກ ແລະ ບໍ່ເຊື່ອໝັ້ນ ໃນລະບົບທີ່ເຂົາເຈົ້າດຳລົງຊີວິດຢູ່. ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ມີການສະໜັບສະໜູນຢ່າງມີເປົ້າໝາຍເພື່ອສົ່ງເສີມການມີສ່ວນຮ່ວມ.

ທ້າຍນີ້, ອີກໜຶ່ງຈຸດທີ່ສຳຄັນຢ່າງຍິ່ງແມ່ນການຂາດກົນໄກສະເພາະ ຫຼື ສະຖາບັນທີ່ກ່ຽວຂ້ອງເພື່ອຊ່ວຍໄວໜຸ່ມຈາກຫຼາກຫຼາຍພາກສ່ວນໃນການສະແດງຄວາມຄິດເຫັນຂອງພວກເຂົາ ຍັງຖືເປັນອຸປະສັກຕໍ່ການມີສ່ວນຮ່ວມຂອງໄວໜຸ່ມ. ໃນຂະນະທີ່ປະເທດຕ່າງໆໄດ້ຈັດຫາເວທີເພື່ອສົ່ງເສີມນະວັດຕະກຳ ແລະຮວບຮວມແນວຄວາມຄິດໃໝ່ໆຈາກໄວໜຸ່ມ ເຊັ່ນ: ເວທີນະວັດຕະກຳທາງສັງຄົມໃນປະເທດໄທ ແລະ ສະພາໄວໜຸ່ມແຫ່ງຊາດໃນຟີລິບປິນ (ກ່ອງເນື້ອໃນ 5.5) ທີ່ໃຫ້ທິດທາງນະໂຍບາຍທີ່ກ່ຽວຂ້ອງກັບໄວໜຸ່ມ, ສປປ ລາວ ຍັງບໍ່ທັນມີກົນໄກລັກສະນະດັ່ງກ່າວ. ເວທີໃນການ





## ຮູບທີ 5.4: ແຫຼ່ງຂໍ້ມູນຂ່າວສານຂອງໄວໜຸ່ມໃນທົ່ວ 6 ແຂວງໃນ ສປປ ລາວ ຈາກການສຳຫຼວດຄວາມຮັບຮູ້ຂອງໄວໜຸ່ມແບບເຊິ່ງໜ້າ (UNDP, 2021)

ແຫຼ່ງຂໍ້ມູນ: UNDP, ການສຳຫຼວດອອນລາຍສຳລັບ NHDR ຂອງ ສປປ ລາວ ປີ 2022




ສ້າງຄວາມຮູ້ ແລະ ຊຸກຍູ້ການສົນທະນາບໍ່ພຽງແຕ່ມີຜົນດີຕໍ່ຊາວໜຸ່ມເທົ່ານັ້ນ, ຫາກຍັງດີສຳລັບສັງຄົມໂດຍລວມ, ມັນນຳໄປສູ່ບັນດານະໂຍບາຍທີ່ມີຄວາມຖືກຕ້ອງ ແລະ ແທດເໝາະກັບທຸກຄົນຫຼາຍຂຶ້ນ. ເຖິງຢ່າງໃດກໍຕາມ, ບັນດາກົດໝາຍ, ນະໂຍບາຍທີ່ກ່ຽວຂ້ອງ ແລະ ຍຸດທະສາດດ້ານໄວໜຸ່ມທີ່ຖືກຮັບຮອງເມື່ອບໍ່ດົນມານີ້ ຍັງບໍ່ທັນມີມາດຕະການດ້ານການປະຕິບັດ ເພື່ອຊຸກຍູ້ການມີສ່ວນຮ່ວມຂອງໄວໜຸ່ມ. ຫນ້າເສຍດາຍທີ່ຄວາມກະຕືລືລົ້ນຂອງພວກເຂົາຈະຍັງຄົງປະກົດຢູ່ພຽງແຕ່ໃນໜ້າເຈ້ຍເອກະສານ ຍັງປາສະຈາກວິທີການສະເພາະ ເພື່ອຊຸກຍູ້ໃຫ້ໄວໜຸ່ມໄດ້ແບ່ງປັນຄວາມຄິດເຫັນ ແລະ ເຊື່ອມຄວາມຄິດເຫັນຂອງເຂົາເຈົ້າເຂົ້າໄປໃນການພັດທະນາ ແລະ ຂະບວນການຕັດສິນໃຈຕົວຈິງ.

## 5.6 ຂໍ້ສະເໜີແນະ

ໃນປັດຈຸບັນ, ໄວໜຸ່ມໃນ ສປປ ລາວ ມີໂອກາດໜ້ອຍທີ່ຈະກຳນົດ ແລະ ນຳພາການຕັດສິນໃຈທີ່ສົ່ງຜົນກະທົບຕໍ່ຊີວິດຂອງເຂົາເຈົ້າ ແລະ ເລັ່ງການປ່ຽນແປງທາງດ້ານສັງຄົມ ແລະ ການພັດທະນາມະນຸດ. ແລະ ນີ້ແມ່ນຄວາມຈິງໃນຫຼາຍບໍລິບົດ: ໃນຄົວເຮືອນ, ໂຮງຮຽນ, ຊຸມຊົນທ້ອງຖິ່ນ, ສະຖານທີ່ເຮັດວຽກ, ທຸລະກິດ ແລະ ໃນເວທີການເມືອງ. ເນື່ອງຈາກທ່າແຮງຂອງຄວາມໄດ້ປຽບທາງດ້ານປະຊາກອນ, ການປິດຊ່ອງຫວ່າງໃນລະດັບຕ່າງໆຈຶ່ງເປັນເລື່ອງຮີບດ່ວນ ແລະ ມີຫຼາຍຂັ້ນຕອນທີ່ສຳຄັນ.

### ຕ້ອງປ່ຽນເລື່ອງລາວກ່ຽວກັບບົດບາດຂອງການມີສ່ວນຮ່ວມຂອງໄວໜຸ່ມ

ການສ້າງຄວາມຮູ້ ແລະ ການປ່ຽນແປງມຸມມອງກ່ຽວກັບການມີສ່ວນຮ່ວມຂອງຊາວໜຸ່ມແມ່ນຈຸດເລີ່ມຕົ້ນທີ່ສຳຄັນ. ແທນທີ່ຈະຖືກເບິ່ງວ່າເປັນໄພຄຸກຄາມ ຫຼື ແຫຼ່ງ 'ສ້າງບັນຫາ', ໄວໜຸ່ມຄວນຖືກເບິ່ງວ່າ ເປັນແຫຼ່ງຂໍ້ມູນ ແລະ ແນວຄວາມຄິດໃໝ່ໆທີ່ລ້ຳຄ່າ. ໃນຂະນະທີ່ໃຫ້ຄຸນຄ່າແກ່ທັດສະນະຂອງສະມາຊິກຊຸມຊົນທີ່ມີຄວາມອາວຸໂສກວ່າ ຫຼາຍກວ່າ ຄວາມຄິດເຫັນຂອງສະມາຊິກທີ່ອາຍຸນ້ອຍ, ແຕ່ກໍ່ສົ່ງເສີມໃຫ້ຄົນໜຸ່ມນ້ອຍໄດ້ສະແດງຄວາມຄິດເຫັນ ແລະ ປະກອບສ່ວນໃນການສົນທະນາທີ່ສຳຄັນໆ. ການປັບປ່ຽນທັດສະນະດັ່ງກ່າວ ອາດຊ່ວຍຊັກຈູງໃຫ້ບັນດາຄະນະລັດຖະບານເພີ່ມທະວີການມີສ່ວນຮ່ວມຂອງໄວໜຸ່ມໃນການວາງນະໂຍບາຍ, ຊ່ວຍໃຫ້ເຂົ້າໃຈກ່ຽວກັບບັນດາສິ່ງທ້າທາຍທີ່ຊາວໜຸ່ມປະເຊີນໜ້າຢ່າງເລິກ






ເຊິ່ງ ແລະ ໄດ້ຮູ້ແນວຄິດປະດິດສ້າງໃໝ່ໆສຳລັບບັນດານະໂຍບາຍທີ່ຍັງບໍ່ທັນບັນລຸໄດ້. ຜ່ານການເຂົ້າຮ່ວມໃນຂະບວນການດັ່ງກ່າວ ໄວໜຸ່ມຈະໄດ້ຮັບການສ້າງຄວາມເຂັ້ມແຂງ ແລະ ມີຄວາມໝັ້ນໃຈທີ່ຈະສືບຕໍ່ປະກອບສ່ວນເຂົ້າໃນການປຶກສາຫາລືດັ່ງກ່າວໃນອະນາຄົດ ແລະ ໃນການມີສ່ວນຮ່ວມແຕ່ລະຄັ້ງ, ພວກເຂົາຈະນຳເອົາປະສົບການ ແລະ ຂໍ້ມູນອັນລ້ຳຄ່າ ເພື່ອເພີ່ມທະວີນະໂຍບາຍໃຫ້ດີຂຶ້ນ.

ບາງກິດຈະກຳສະເພາະເພື່ອຊ່ວຍປ່ຽນແປງທັດສະນະດັ່ງກ່າວ  ລວມມີ ການເຮັດບົດຄົ້ນຄວ້າກ່ຽວກັບຜົນກະທົບທາງບວກຂອງການມີສ່ວນຮ່ວມຂອງໄວໜຸ່ມ ແລະ ການມີສ່ວນຮ່ວມຂອງຄົນໃນສັງຄົມ ໃນການພັດທະນາແບບຍືນຍົງໃນ ສປປ ລາວ, ລວມທັງ ການດຶງເອົາແນວທາງປະຕິບັດທີ່ດີໃນປັດຈຸບັນຂອງກຸ່ມໄວໜຸ່ມ ດັ່ງເຊັ່ນ ອົງການຈັດຕັ້ງຊັ້ນນຳທີ່ໄດ້ກ່າວມາຂ້າງເທິງ. ນອກນີ້, ບັນດາຜົນງານຂອງໄວໜຸ່ມທັງຫຼາຍຄວນໄດ້ຮັບການຍ້ອງຍໍລະດັບຊາດ ໂດຍຜ່ານການມອບລາງວັນ, ຄວນບັນທຶກເລື່ອງລາວອັນໜ້າປະທັບໃຈຂອງໄວໜຸ່ມ ແລະ ຍົກຍ້ອງຜົນງານຂອງໄວໜຸ່ມໃຫ້ເປັນທີ່ຮັບຮູ້ຂອງການນຳຂັ້ນສູງ. ສູນກາງຊາວໜຸ່ມລາວມີບົດບາດສຳຄັນໃນດ້ານນີ້ ໂດຍສະເພາະການສົ່ງເສີມຜົນສຳເລັດຂອງໄວໜຸ່ມຜ່ານການໂຄສະນາທາງອອນລາຍ, ງານສຳຄັນຕ່າງໆ ແລະ ການພົວພັນຂອງພວກເຂົາກັບບັນດາກະຊວງຕ່າງໆຂອງລັດຖະບານ.

ເພື່ອຮັບປະກັນວ່າໄວໜຸ່ມຈະສືບຕໍ່ເປັນຜູ້ນຳໃນການປ່ຽນແປງເລື່ອງລາວກ່ຽວກັບບົດບາດຂອງຕົນໃນການພັດທະນາ, ຄວນມີໂຄງການທີ່ມີຈຸດມຸ່ງໝາຍໃນການສ້າງຄວາມອາດສາມາດຂອງໄວໜຸ່ມ  ເພື່ອໃຫ້ມີສ່ວນຮ່ວມໃນການສົນທະນາ ແລະ ການຮ່ວມມືກັບລັດຖະບານ ຢ່າງມີປະສິດທິຜົນ. ສິ່ງໜຶ່ງທີ່ສາມາດເຮັດໄດ້ຄື ການນຳເອົາບັນດາກຸ່ມໄວໜຸ່ມຕ່າງໆມາເຕົ້າໂຮມກັນ ເພື່ອລະບຸສິ່ງທ້າທາຍທີ່ພວກເຂົາປະສົບຄືກັນ ແລະ ຫາວິທີແກ້ໄຂທີ່ເປັນໄປໄດ້ ເພື່ອບັນລຸບົດບາດເປັນຜູ້ນຳໃນການພັດທະນາ. ໄວໜຸ່ມຄວນໄດ້ຮັບການສົ່ງເສີມຕື່ມອີກ ເພື່ອໃຫ້ສາມາດເກັບກຳຂໍ້ມູນສະພາບຂອງໄວໜຸ່ມໃນປະເທດ, ແລ້ວຫັນການຄົ້ນຄວ້າດັ່ງກ່າວເປັນແຜນການທີ່ຈະແຈ້ງສຳລັບອະນາຄົດ ເພື່ອເສີມສ້າງການມີສ່ວນຮ່ວມຂອງໄວໜຸ່ມໃນການຕັດສິນໃຈ. ຕົວຢ່າງ ທີ່ປະເທດຫວຽດນາມ ໄດ້ດຳເນີນການສຳຫຼວດໄວໜຸ່ມກ່ຽວກັບເປົ້າໝາຍ SDG ເພື່ອຊຸກຍູ້ການເຂົ້າຮ່ວມຂອງຊາວໜຸ່ມໃນການປະຕິບັດບັນດາເປົ້າໝາຍ, ທີ່ນຳພາໂດຍອົງການພັດທະນາຊຸມຊົນໄວໜຸ່ມ (UNDP, 2018). ການເຊື່ອມໂຍງການມີສ່ວນຮ່ວມ ເຂົ້າໃນການສຶກສາພົນລະເມືອງ ໃນໂຮງຮຽນກໍ່ເປັນສິ່ງສຳຄັນ ເຊັ່ນດຽວກັນກັບການສຶກສາອົບຮົມຄູ, ພະນັກງານດ້ານສັງຄົມສົງເຄາະ ແລະ ຝ່າຍອື່ນໆ ທີ່ມີອິດທິພົນຕໍ່ໄວໜຸ່ມ ແລະ ສາມາດຊຸກຍູ້ການເຄື່ອນໄຫວຂອງພົນລະເມືອງ. ໃນນັ້ນ, ຄວນຍົກສູງຄວາມຮັບຮູ້ໃຫ້ບັນດາຜູ້ຕາງໜ້າລັດຖະບານ, ເພື່ອແນໃສ່ຍົກໃຫ້ເຫັນເຖິງບົດບາດທີ່ສຳຄັນຂອງໄວໜຸ່ມໃນການພັດທະນາ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດການະໂຍບາຍ ແລະ ການປະຕິບັດທີ່ດີ ເພື່ອໃຫ້ຜູ້ທີ່ມີອຳນາດຕັດສິນໃຈສາມາດມີສ່ວນຮ່ວມ ແລະ ເຮັດວຽກກັບໄວໜຸ່ມໄດ້, ລວມທັງຮູ້ນຳໃຊ້ວິທີການທີ່ເໝາະສົມເພື່ອຕິດຕໍ່ສື່ສານ ແລະ ປຶກສາຫາລືກັບໄວໜຸ່ມ.

ຍຸດທະສາດການພັດທະນາເຍົາວະຊົນ ແລະ ໄວໜຸ່ມຂອງ ສປປ ລາວ ໃຫ້ການຮັບໃນລະດັບນະໂຍບາຍ ເຖິງຄວາມສຳຄັນຂອງການມີສ່ວນຮ່ວມຂອງໄວໜຸ່ມ, ແຕ່ການຮັບຮູ້ໄວໜຸ່ມໃນຖານະທີ່ເປັນຜູ້ນຳ, ວັດທະນະທຳຂອງການຮັບປະກັນການມີສ່ວນຮ່ວມຂອງເຂົາເຈົ້າ ຍັງຊັກຊ້າກວ່າຄຳໝາຍໝັ້ນຂອງນະໂຍບາຍນີ້. ຈຳເປັນຕ້ອງມີການດຳເນີນການທີ່ເປັນຮູບປະທຳຫຼາຍຂຶ້ນ ເພື່ອຊຸກຍູ້ໃຫ້ໄວໜຸ່ມກ້າວໄປທາງໜ້າ ແລະ ມີບົດບາດໃນການເປັນຜູ້ນຳໃນການພັດທະນາ ແຕ່ຍັງລວມໄປເຖິງການມີແນວຄິດທີ່ເຫັນ ໄວໜຸ່ມທີ່ເປັນຜູ້ສ້າງການປ່ຽນແປງ, ບໍ່ແມ່ນຜູ້ສ້າງບັນຫາ. ໂດຍສະເພາະບັນດາຜູ້ຕາງຫນ້າຂອງລັດຖະບານທີ່ມີໜ້າທີ່ໃນການປົດລັອກການມີສ່ວນຮ່ວມໄວໜຸ່ມໃນການຕັດສິນໃຈ.

## ສ້າງກົນໄກຢ່າງເປັນທາງການ ເພື່ອໃຫ້ໄວໜຸ່ມມີສ່ວນຮ່ວມໃນບັນດາຂະແໜງການ, ນະໂຍບາຍ ແລະ ໂຄງການຕ່າງໆຂອງລັດ

ກ່ອງເນື້ອໃນ 5.5

ການສ້າງຕັ້ງເວທີທີ່ສະເພາະເຈາະຈົງ, ເໝາະສົມ ແລະ ເປັນເອກະພາບສຳລັບໄວໜຸ່ມ ເພື່ອໃຫ້ພວກເຂົາສາມາດປະກອບສ່ວນເຂົ້າໃນການພັດທະນາຢູ່ຂັ້ນທ້ອງຖິ່ນ ແລະ ລະດັບຊາດ ຈະເປັນຫົນທາງທີ່ສຳຄັນໃນການຮັບປະກັນໃຫ້ໄວໜຸ່ມໄດ້ຮັບການປະຕິບັດດັ່ງເຊັ່ນຄູ່ຮ່ວມມືໃນການພັດທະນາ ແລະ ບໍ່ພຽງແຕ່ຜູ້ໄດ້ຮັບຜົນປະໂຫຍດ. ຕ້ອງໄດ້ລົງທຶນໃນກົນໄກດັ່ງກ່າວໃນເບື້ອງຕົ້ນ ທັງດ້ານເວລາ ແລະ ທຶນຮອນ, ແຕ່ໃນໄລຍະຍາວ ຈະໃຫ້ຜົນຕອບແທນຢ່າງຫຼວງຫຼາຍ ທັງໃນດ້ານການກຳນົດ ແລະ ເສີມຂະຫຍາຍນະໂຍບາຍ, ລວມທັງການດຶງດູດແນວຄວາມຄິດໃໝ່ໆຈາກໄວ ໜຸ່ມ, ທັງຍັງສ້າງຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມ ດ້ວຍການສ້າງເວທີໃຫ້ພວກເຂົາໄດ້ແລກປ່ຽນກັບລັດຖະບານ ແລະ ຜູ້ນຳດ້ານການພັດທະນາອື່ນໆ. ຂັ້ນຕອນທີ່ຄ້າຍກັນໃນປະເທດອື່ນໆໃນພາກພື້ນອາຊີຕາເວັນອອກສຽງໃຕ້ໄດ້ສະແດງໃຫ້ເຫັນປະສິດທິຜົນຂອງວິທີການນີ້ (ກ່ອງເນື້ອໃນ 5.5). ຜົນສຳເລັດຂອງເວ

ທີ່ດັ່ງກ່າວແມ່ນຂຶ້ນກັບການຮັບປະກັນການມີສ່ວນຮ່ວມຂອງໄວໜຸ່ມຈາກບັນດາກຸ່ມຄົນດ້ອຍໂອກາດທີ່ສຸດຄື: ໄວໜຸ່ມຊົນນະບົດ, ໄວໜຸ່ມຊົນເຜົ່າ, ໄວໜຸ່ມຍິງ, ໄວໜຸ່ມຈາກກຸ່ມ LGBTQI+, ໄວໜຸ່ມຜູ້ອົບພະຍົບ ແລະ ໄວໜຸ່ມທີ່ມີຄວາມພິການ. ເວທີດັ່ງກ່າວຄວນມີການຮຽນຮູ້ຈາກກົນໄກອື່ນໆທີ່ຄ້າຍຄືກັນ ທີ່ສ້າງການມີສ່ວນຮ່ວມຂອງໄວໜຸ່ມ, ພິຈາລະນາເຖິງຄວາມບໍ່ເໝາະສົມຂອງຄວາມເປັນທາງການເກີນໄປ, ຫຼື ການນຳໃຊ້ພາສາທີ່ມີເຕັກນິກສູງ ຫຼື ເປັນທາງການ, ເຊິ່ງເຮັດໃຫ້ໄວໜຸ່ມຮູ້ສຶກສະບາຍໃຈທີ່ຈະສະແດງອອກຢ່າງເປີດເຜີຍ ແລະ ກົງໄປກົງມາ.

ມາດຕະການໜຶ່ງອາດຈະແມ່ນການນຳໃຊ້ໂຄງລ່າງພື້ນຖານທີ່ມີຢູ່ແລ້ວໂດຍສູນກາງຊາວໜຸ່ມເປັນຈຸດປະສານງານຂອງໄວໜຸ່ມໃນທຸກກະຊວງ ເພື່ອເຄື່ອນໄຫວວຽກງານຂອງຊາວໜຸ່ມຢ່າງຕັ້ງໜ້າ, ຮັບປະກັນການມີສ່ວນຮ່ວມຂອງຊາວໜຸ່ມຢ່າງກ້ວາງຂວາງ ນອກເໜືອຈາກການເປັນສະມາຊິກຂອງສູນກາງຊາວໜຸ່ມ, ໄວໜຸ່ມທີ່ດ້ອຍໂອກາດ ແລະ ມີຄວາມສ່ຽງ. ຄວນສ້າງຕັ້ງຄະນະກຳມະການທີ່ປຶກສາໄວໜຸ່ມຖາວອນທີ່ປະກອບດ້ວຍໄວໜຸ່ມເທົ່ານັ້ນ ທີ່ສາມາດໃຫ້ຄຳປຶກສາກ່ຽວກັບການຈັດຕັ້ງປະຕິບັດ SDG ແລະ NSEDP ຈາກທັດສະນະຂອງໄວໜຸ່ມ. ຄະນະດັ່ງກ່າວນີ້ ສາມາດສ້າງຕັ້ງຂຶ້ນຮ່ວມກັບສະພາແຫ່ງຊາດ ແລະ ສາມາດຖອດຖອນບົດຮຽນ ແລະ ປະກອບສ່ວນເຂົ້າໃນວຽກງານຂອງຄະນະກຳມາທິການທີ່ມີຢູ່ພາຍໃນສະພາແຫ່ງຊາດ ດ້ວຍຄວາມຮັບຜິດຊອບໃນການຕິດຕາມກວດກາການປະຕິບັດບັນດາຄາດໝາຍພັດທະນາປະເທດຊາດ. ກົນໄກທີ່ສະເພາະເຈາະຈົງຈະເສີມສ້າງການມີສ່ວນຮ່ວມຂອງໄວໜຸ່ມທີ່ລະບຸໄວ້ໃນຍຸດທະສາດການພັດທະນາເຍົາວະຊົນ ແລະ ໄວໜຸ່ມ. ບາດກ້າວດັ່ງກ່າວ ຈະມີຄວາມສຳຄັນຫຼາຍສຳລັບໄວໜຸ່ມ ທີ່ຈະຮູ້ສຶກວ່າເຂົາເຈົ້າສາມາດປະຕິບັດຕາມພັນທະດ້ານນະໂຍບາຍນີ້ ໄດ້ຢ່າງມີອິດສະລະ ແລະ ບັນລຸທີ່ວາງໄວ້ພາຍໃຕ້ຍຸດທະສາດ.

### ສົ່ງເສີມອົງການຈັດຕັ້ງ ທີ່ນຳພາໂດຍໄວໜຸ່ມ ແລະ ສຸມໃສ່ໄວໜຸ່ມ

ດ້ວຍຄວາມຮີບດ່ວນຂອງຄວາມໄດ້ປຽບດ້ານປະຊາກອນ, ການລະດົມໄວໜຸ່ມ ແລະ ການປູກຝັງຄວາມສາມາດໃນອົງການຈັດຕັ້ງທີ່ເປັນຕົວແທນຂອງໄວໜຸ່ມແມ່ນມີຄວາມຈຳເປັນ. ລະບົບການລົງທະບຽນໃນປັດຈຸບັນສຳລັບອົງການທີ່ບໍ່ຫວັງຜົນກຳໄລຄວນໄດ້ຮັບການປະຕິຮູບ ໂດຍເນັ້ນເຮັດໃຫ້ມັນເຂົ້າເຖິງບັນດາກຸ່ມທີ່ນຳພາໂດຍໄວໜຸ່ມ ແລະ ສຸມໃສ່ໄວໜຸ່ມຫຼາຍຂຶ້ນ. ການສະໜອງທຶນໃຫ້ແກ່ການເຄື່ອນໄຫວໃນລະດັບຮາກຖານ, ຊຸມຊົນ, ກຸ່ມທີ່ນຳພາໂດຍໄວໜຸ່ມ, ຈະມີຄວາມສຳຄັນໃນການພັດທະນາຄວາມສາມາດຂອງຜູ້ນຳໃນອະນາຄົດ, ໂດຍສະເພາະຈາກກຸ່ມທີ່ຍັງບໍ່ທັນໄດ້ຮັບການກ່າວເຖິງເທົ່າທີ່ຄວນ.

ເນື່ອງຈາກໄວໜຸ່ມມີແນວໂນ້ມທີ່ຈະບໍ່ມີເວລາ, ຄວາມອາດສາມາດ ແລະ ຊັບພະຍາກອນ ໃນການດຳເນີນງານຂອງອົງການຈັດຕັ້ງ, ໃນການປະຕິບັດຕາມຂໍ້ກຳນົດທັງໝົດສຳລັບການລົງທະບຽນ, ໃນການຄຸ້ມຄອງທາງດ້ານການເງິນ ແລະ ການລາຍງານ, ຈຶ່ງຄວນມີການຍອມຮັບ ແລະ ສະໜັບສະໜູນເຄືອຂ່າຍ ແລະ ຊຸມຊົນນຳພາໂດຍໄວໜຸ່ມທີ່ບໍ່ເປັນທາງການຫຼາຍຂຶ້ນ. ກຸ່ມດັ່ງກ່າວມີຄວາມສຳຄັນຢ່າງຍິ່ງສຳລັບໄວໜຸ່ມທີ່ພວກເຂົາຕາງໜ້າ ເຊັ່ນ: ໄວໜຸ່ມ LGBTIQ+ ຫຼື ໄວໜຸ່ມບັນດາຊົນເຜົ່າຕ່າງໆ ຍ້ອນໂດຍທົ່ວໄປແລ້ວ ການລະດົມໄວໜຸ່ມກໍ່ກຳເນີດຂຶ້ນຜ່ານເຄືອຂ່າຍທີ່ບໍ່ເປັນທາງການເຫຼົ່ານີ້. ການຮັບຮູ້ກຸ່ມເຫຼົ່ານີ້ອາດຈະຕ້ອງໄດ້ເຮັດຢ່າງຢ່າງເປັນທາງການໃນດ້ານກົດໝາຍ ຫຼື ນະໂຍບາຍ ຍ້ອນວ່າໄວໜຸ່ມຫຼາຍຄົນຈະໄດ້ໝັ້ນໃຈໃນການຈັດຕັ້ງ ແລະ ປະກອບສ່ວນໃນການສົນທະນາດ້ານການພັດທະນາ ຖ້າຫາກວ່າ ພວກເຂົາບໍ່ແນ່ໃຈ ແລະ ອາດຈະຢ້ານກົວຕໍ່ຜົນຕາມມາຈາກການເຮັດສິ່ງດັ່ງກ່າວນັ້ນ. ຄວນໃຫ້ທຶນໃນການເລີ່ມຕົ້ນແກ່ກຸ່ມດັ່ງກ່າວເພື່ອຊ່ວຍໃຫ້ເຂົາເຈົ້າລິເລີ່ມ ແລະ ເລີ່ມຕົ້ນກິດຈະກຳ, ເຊັ່ນດຽວກັນກັບໂຄງການພັດທະນາຄວາມສາມາດຕາມຈຸດປະສົງ ເພື່ອສະໜັບສະໜູນການມີສ່ວນຮ່ວມຂອງເຂົາເຈົ້າໃນຂະບວນການຕັດສິນໃຈ.

ສຳລັບອົງການຈັດຕັ້ງທີ່ໄດ້ລົງທະບຽນ ແລະ ສຸມໃສ່ການພັດທະນາໄວໜຸ່ມ, ຕ້ອງໄດ້ພະຍາຍາມຫຼາຍກວ່າເກົ່າເພື່ອດຶງພວກເຂົາໃຫ້ມີສ່ວນຮ່ວມໃນຂະບວນການຕັດສິນໃຈທີ່ເປັນທາງການໃນເລື່ອງທີ່ກ່ຽວຂ້ອງກັບການພັດທະນາແບບຍືນຍົງ. ອົງການຈັດຕັ້ງດັ່ງກ່າວ ຄວນຈະຖືກເຫັນວ່າເປັນຊັບສິນທີ່ສຳຄັນໃນການຖ່າຍທອດສຽງຂອງສະມາຊິກຊາວໜຸ່ມ, ໂດຍສະເພາະ ແມ່ນການສະໜັບສະໜູນລັດຖະບານໃນການລະດົມໄວໜຸ່ມ, ທັງໃນແບບເຊິ່ງໜ້າ ແລະ ອອນລາຍ, ແລະ ນຳໃຊ້ວິທີການທີ່ເໝາະສົມກັບໄວໜຸ່ມ ເພື່ອໃຫ້ໄວໜຸ່ມມີສ່ວນຮ່ວມໃນຂະບວນການຕັດສິນໃຈ. ໂດຍຮ່ວມກັບສູນກາງຊາວໜຸ່ມລາວ, ອົງການຈັດຕັ້ງເຫຼົ່ານີ້ຄວນມີສ່ວນຮ່ວມຢ່າງສະໝ່ຳສະເໝີໃນຂັ້ນຕອນການອອກແບບ, ການປະຕິບັດ ແລະ ການຕິດຕາມຜົນນະໂຍບາຍດ້ານການພັດທະນາ, ໂດຍເນັ້ນໜັກໃສ່ຂັ້ນຕອນການອອກແບບ ແລະ ການຕິດຕາມຜົນ ທີ່ເຖິງວ່າປະສົບການຂອງພວກເຂົາຈະໜ້ອຍ ແຕ່ມັນກໍ່ມີຄຸນຄ່າສູງ. ເພື່ອຊຸກຍູ້ໃຫ້ມີການສ້າງຕັ້ງບັນດາອົງການທີ່ສຸມໃສ່ພັດທະນາຊາວໜຸ່ມຫຼາຍຂຶ້ນ, ຄວນມີການສະໜອງທຶນໃຫ້ແກ່ບັນດາກຸ່ມ, ໂດຍສະເພາະແມ່ນກຸ່ມຕົວແທນຂອງຊາວໜຸ່ມທີ່ດ້ອຍໂອກາດ ແລະ ມີຄວາມສ່ຽງ, ເພື່ອຊ່ວຍໃຫ້ບັນດາອົງການນັ້ນໆສາມາດຄຸ້ມຄອງຂະບວນການດ້ານການຈົດທະບຽນ, ການເງິນ ແລະ ການລາຍງານ, ເພື່ອສົ່ງເສີມຄວາມສາມາດ ແລະ ຄວາມຍືນຍົງໃຫ້ດີຂຶ້ນ.

## 5.7 ບົດສະຫຼຸບ

ໃນທ້າຍທີ່ສຸດແລ້ວ, ການມີສ່ວນຮ່ວມຂອງໄວໜຸ່ມຈະຊ່ວຍໃຫ້ພວກເຂົາຮັບຮູ້ເຖິງຄວາມມຸ່ງຫວັງ ແລະ ເປົ້າໝາຍໃນຊີວິດ. ຜ່ານການມີສ່ວນຮ່ວມ, ໄວໜຸ່ມທັງໄດ້ປະກອບສ່ວນ ແລະ ໄດ້ຮັບຜົນປະໂຫຍດຈາກການພັດທະນາມະນຸດ, ໂດຍນຳເອົາແນວຄິດ ແລະ ມຸມມອງໃໝ່ໆ ເພື່ອຍົກລະດັບຄຸນນະພາບຊີວິດໃນຊຸມຊົນ ແລະ ປະເທດຂອງຕົນ. ການສຳຫຼວດ ແລະ ການສຳພາດໄວໜຸ່ມສະແດງໃຫ້ເຫັນວ່າ ພວກເຂົາຫຼາຍຄົນຕ້ອງການຢາກປະກອບສ່ວນ. ໂດຍຜ່ານຍຸດທະສາດການພັດທະນາເຍົາວະຊົນ ແລະ ໄວໜຸ່ມສະບັບໃໝ່, ລັດຖະບານແຫ່ງ ສປປ ລາວ ໄດ້ຮັບຮູ້ເຖິງຜົນປະໂຫຍດຈາກການມີສ່ວນຮ່ວມຂອງໄວໜຸ່ມ. ເຖິງຢ່າງໃດກໍ່ຕາມ, ໃນທຸກຂົງເຂດ, ຄວາມຮັບຮູ້ກ່ຽວຄວາມໝາຍຄວາມສຳຄັນຂອງການມີສ່ວນຮ່ວມຍັງຈຳກັດ, ໂດຍເນັ້ນໄວໜຸ່ມເປັນຜູ້ຮັບຄຳແນະນຳແທນທີ່ຈະເປັນຜູ້ນຳດ້ານການພັດທະນາ. ນອກນີ້, ລັດຖະບານຍັງບໍ່ທັນສ້າງກົນໄກທີ່ຮັບປະກັນໃຫ້ໄວໜຸ່ມມີສ່ວນຮ່ວມໃນການຕັດສິນໃຈ ກ່ຽວກັບການພັດທະນາ ຢ່າງເປັນລະບົບ ແລະ ເລິກເຊິ່ງ.

ເພື່ອນຳໃຊ້ປະໂຫຍດຈາກຄວາມໄດ້ປຽບທາງດ້ານປະຊາກອນ ແລະ ໂອກາດເພື່ອເສີມຂະຫຍາຍການພັດທະນາມະນຸດ, ລັດຖະບານສາມາດເລັ່ງລັດໃຫ້ບຸລິມະສິດນະໂຍບາຍທີ່ເສີມຂະຫຍາຍການມີສ່ວນຮ່ວມຂອງຊາວໜຸ່ມ ແລະ ນຳເອົາຍຸດທະສາດພັດທະນາເຍົາວະຊົນ ແລະ ໄວໜຸ່ມໄປສູ່ການຈັດຕັ້ງປະຕິບັດ. ການດຳເນີນການທີ່ຊັດເຈນຄວນມີ ກົນໄກທີ່ເປັນທາງການ, ລວມທັງໃນເວທີອອນລາຍ ເຊິ່ງເປັນບ່ອນທີ່ຊາວໜຸ່ມສາມາດແບ່ງປັນທັດສະນະຂອງເຂົາເຈົ້າ ແລະ ຜູ້ໃຫຍ່ທີ່ມີອຳນາດຕັດສິນໃຈສາມາດໄດ້ຍິນ ແລະ ສາມາດດຳເນີນການຕໍ່ສິ່ງເຫຼົ່ານີ້. ຄວາມໄດ້ປຽບທາງດ້ານປະຊາກອນຈະບໍ່ຄົງຢູ່ຕະຫຼອດການ. ຖ້າຫາກການດຳເນີນການເພື່ອຊຸກຍູ້ການມີສ່ວນຮ່ວມຂອງໄວໜຸ່ມບໍ່ເກີດຂຶ້ນ, ທ່າແຮງດ້ານປະຊາກອນຈະຜ່ານໄປພ້ອມກັບການສູນເສຍໂອກາດໃນການພັດທະນາຮຸ່ນຄົນທີ່ຈະເຕີບໃຫຍ່ເປັນຜູ້ນຳໜຸ່ມນ້ອຍ ທີ່ມີພະລັງ ແລະ ແຮງບັນດານໃຈໃນການຕັດສິນໃຈໃນສິ່ງທີ່ຈຳເປັນໃນຕອນນີ້ ແລະ ຈະມີຜົນຕໍ່ຄົນຮຸ່ນຫລັງ.



©UNFPA Laos

ຄຳສຸພາສິດທີ່ວ່າ
"ໄວໜຸ່ມແມ່ນຜູ້ນຳໃນອະນາຄົດ"
ຕ້ອງໄດ້ເຮັດໃຫ້ເປັນຈິງ ເພື່ອ
ສ້າງບົດບາດຜູ້ນຳທີ່ຊັດເຈນຫຼາຍ
ຂຶ້ນສຳລັບໄວໜຸ່ມໃນປັດຈຸບັນ.



©UNFPA Laos



# ເອກະສານອ້າງອີງ


Ary, D., T. Duncan and H. Hops. 1999. "Adolescent Problem Behavior: The influence of parents and peers." Behavior Research and Therapy 37: 217-230. https://pubmed.ncbi.nlm.nih.gov/10087640/

Barrett, M. 2018. "Young People's Civic and Political Engagement and Global Citizenship." UN Chronicle. https://www.un.org/en/chronicle/article/young-peoples-civic-and-political-engagement-and-global-citizenship

Christensen, L., N. Krogman and B. Parlee. 2010. "A Culturally Appropriate Approach to Civic Engagement: Addressing forestry and cumulative social impacts in southwest Yukon." Forestry Chronicle 88(6). https://pubs.cif-ifc.org/doi/pdf/10.5558/tfc86723-6

CIVICUS (Global Civil Society Alliance). 2022. CIVICUS Monitor: Tracking Civic Space. Johannesburg. https://www.civicus.org/index.php/

Connell, J., M. B. Spencer and J. L. Aber. 1994. "Educational Risk and Resilience in African-American Youth: Context, self, action, and outcomes in school." Child Development 65(2). https://srcd.onlinelibrary.wiley.com/doi/abs/10.1111/j.1467-8624.1994.tb00765.x

Drèze, J., and A. Sen. 2002. India: Development and Participation. Oxford: Oxford University Press.

Ertelt, M., and E. Hussey. 2020. "Pride Month Partner Spotlight: Proud to Be US Laos." Washington, DC: International Republican Institute. https://www.iri.org/news/pride-month-partner-spotlight-proud-to-be-us-laos/.

Freeman, J. 2013. "E-government in the Context of Monitory Democracy: Public participation and democratic reform." Media Asia 40(4). https://www.tandfonline.com/doi/abs/10.1080/01296612.2013.11689988

Government of Lao PDR. 2014. Decree 327 on Internet Based Information. Government Gazette.

———. 2015. Decree. 377 on Press Activities of Foreign Media Agencies, Diplomatic Missions, and International Organizations. Government Gazette

———. 2017. Penal Code (No. 13/2017). Government Gazette.
GIZ (Deutsche Gesellschaft für Internationale Zusammenarbeit). 2016. Study on the Expectations and Aspiration of the Lao Youth. Vientiane.

Henn, M., and M. Weinstein. 2006. "Young People and Political (In)activism: Why don't young people vote?" Policy and Politics 34(3): 517-537. http://dx.doi.org/10.1332/030557306777695316

Ho, E., A. Clarke and I. Dougherty. 2015. Youth-led Social Change: Topics, engagement types, organizational types, strategies, and impacts. Futures 67: 52-62. https://www.sciencedirect.com/science/article/pii/S0016328715000075#bbib0030

IPU (Inter-Parliamentary Union). 2012. Lao People's Democratic Republic: Youth in parliament. Geneva. https://www.ipu.org/parliament/LA.

———. 2021. Youth Participation in National Parliaments. Geneva. https://www.ipu.org/youth2021

Jahromi, P., E. Crocetti and C. Buchanan. 2012. "A Cross-Cultural Examination of Adolescent Civic Engagement: Comparing Italian and American community-oriented and political involvement." Journal of Prevention & Intervention in the Community 40(1). https://pubmed.ncbi.nlm.nih.gov/22242779/

Laos Australia Institute. 2021. "Khouanfa Siriphone—Empowers Youth to Build a Brighter Future for Lao Communities." Vientiane. https://www.laosaustraliainstitute.org/khouanfa-siriphone-empowers-youth-to-build-a-brigghter-futher-for-lao-communities/.

LYU (Lao People's Revolutionary Youth Union). 2021. Lao Youth and Adolescent Development Strategy 2021-2030. Vientiane.https://lao.unfpa.org/sites/default/files/pub-pdf/lao_youth_and_adolescent_development_strategy_2021-2030_eng_26nov21-final.pdf

LYU (Lao People's Revolutionary Youth Union), FAO (Food and Agriculture Organization) and UNESCO (United Nations Educational, Scientific and Cultural Organization). 2005. Report of the National Rural Youth Workshop on Rural Youth, Food Security and Sustainable Rural Development in the Lao People's Democratic Republic. Bangkok. https://www.youthpolicy.org/wp-content/uploads/library/Laos_2005_Youth_Workshop_Report.pdf

LYU (Lao People's Revolutionary Youth Union) and UNFPA (United Nations Population Fund). 2014. "Adolescent and Youth Situation Analysis, Lao People's Democratic Republic: Investing in young people is investing in the future. Vientiane. https://lao.unfpa.org/sites/default/files/pub-pdf/Final_Eng_AYSA%20Report.pdf

Maconachie, R. 2014. "Mining for Change? Youth livelihoods and extractive industry investment in Sierra Leone". Applied Geography 54: 275-282. https://www.sciencedirect.com/science/article/abs/pii/S0143622814001040

National Youth Commission. 2022. "13th National Youth Parliament". Manila. https://nyc.gov.ph/nyp/

O-In, Apichaya. 2019. "Youth Participation in Development." Medium. https://medium.com/intermingle-in-trang/youth-participation-in-development-southeast-asia-experience-and-thailand-perspective-804cbc282e01

Powers, T., and J. S. Tiffany. 2006. "Engaging Youth in Participatory Research and Evaluation." Journal of Public Health Management and Practice. Supplement: S79-87. https://pubmed.ncbi.nlm.nih.gov/17035908/

Saito, R., and T. K. Sullivan. 2011. "The Many Faces, Features and Outcomes of Youth Engagement." Journal of Youth Development 6(3). https://jyd.pitt.edu/ojs/jyd/article/view/178
Sen, A. 1985. Commodities and Capabilities. Amsterdam: North Holland.

———. 1999. Development as Freedom. Oxford: Oxford University Press.

Sitthirath, V. 2021. "Lao Youth Radio: Better than your average radio." Bangkok Post. https://www.bangkokpost.com/opinion/opinion/2091311/lao-youth-radio-better-than-your-average-radio.

United Nations. 1995. World Programme of Action for Youth. General Assembly resolution 50/81. New York. https://www.un.org/Docs/journal/asp/ws.asp?m=A/RES/50/81
———. 2015. Transforming Our World: The 2030 Agenda for Sustainable Development. General Assembly resolution 70/1. New York. https://sdgs.un.org/2030agenda

———. 2018. Youth 2030: Working with and for Young People: The UN Youth Strategy. New York. https://www.unyouth2030.com/_files/ugd/b1d674_9f63445fc59a41b6bb50cbd4f800922b.pdf.

———. 2020a. World Youth Report: Youth Social Entrepreneurship and the 2030 Agenda. New York. https://www.un.org/development/desa/youth/wp-content/uploads/sites/21/2020/07/2020-World-Youth-Report-FULL-FINAL.pdf

———2020b"United Nations Guidance Note: Protection and Promotion of Civic Space." https://www.ohchr.org/Documents/Issues/CivicSpace/UN_Guidance_Note.pdf

———. 2021. "If I Disappear: Global Report on Protecting Young People in Civic Space." New York. https://www.un.org/youthenvoy/wp-content/uploads/2021/06/Global-Report-on-Protecting.-Young-People-in-Civic-Space.pdf

UNDP (United Nations Development Programme). 2018. Viet Nam Youth Survey on the Sustainable Development Goals. Hanoi. https://www.undp.org/vietnam/publications/viet-nam-youth-survey-sdgs

UNECA (United Nations Economic Commission for Africa) and UNPY (United Nations Programme on Youth). Undated. "Regional Overview: The state of youth in Asia and the Pacific." https://social.un.org/youthyear/docs/ESCAPFinal5.pdf

UNECE (United Nations Economic Commission for Europe). 2011. "Joint Statement of the UN Inter-Agency Network on Youth Development". https://unece.org/media/press/1699
UN-Habitat (United Nations Human Settlement Programme) and UNDESA (United Nations Department of Economic and Social Affairs). Undated. "Youth Participation." https://www.un.org/esa/socdev/documents/youth/fact-sheets/youth-participation.pdf

UNICEF (United Nations Children's Fund). 2008. First National Young People's Planning Forum on HIV and AIDS: Unleashing the forces for change. Manila, 28-29 November. https://healtheducationresources.unesco.org/library/documents/1st-national-young-peoples-planning-forum-hiv-and-aids-unleashing-forces-change

———. 2020. "Rapid Analysis: Digital civic engagement by young people." New York. https://www.unicef.org/media/72436/file/Digital-civic-engagement-by-young-people-2020_4.pdf

Weinstock, H., S. Berman and W. Cates Jr. 2004. "Sexually Transmitted Diseases Among American Youth: Incidence and prevalence estimates, 2000." Perspectives on Sexual Reproductive Health 36(1). https://pubmed.ncbi.nlm.nih.gov/14982671/

Wilson, J. 2000. "Volunteering." Annual Review of Sociology 26: 215-240. https://www.annualreviews.org/doi/abs/10.1146/annurev.soc.26.1.215

World Bank. 2022. World Telecommunication/ICT Indicators Database: Lao PDR. Washington, DC. https://data.worldbank.org/indicator/IT.NET.USER.ZS?locations=LA





©UNFPA Laos

# ບົດທີ #6
## ໃຫ້ໄວໜຸ່ມເປັນຜູ້ຂັບເຄື່ອນ ການພັດທະນາມະນຸດທີ່ຍືນຍົງ

# ບົດທີ #6: ບົດສະຫຼູບ

## ໂອກາດໝູນໃຊ້ຄວາມໄດ້ປຽບທາງດ້ານປະຊາກອນ

ບົດລາຍງານການພັດທະນາມະນຸດແຫ່ງຊາດສະບັບນີ້ ໄດ້ຄົ້ນຄວ້າບົດບາດຂອງໄວໜຸ່ມທີ່ເປັນຜູ້ຂັບເຄື່ອນການພັດທະນາທີ່ ຍືນຍົງຢູ່ ສປປ ລາວ, ຜ່ານການຕັ້ງຄຳຖາມທີ່ວ່າ: ເປັນຫຍັງຕ້ອງແມ່ນໄວໜຸ່ມ? ເປັນຫຍັງຕ້ອງເລີ່ມຕອນນີ້? ແລະ ເປັນຫຍັງຕ້ອງແມ່ນການພັດທະນາມະນຸດ? ເພື່ອເປັນຕົວແທນໃນການສ້າງຄວາມປ່ຽນແປງ, ໄວໜຸ່ມຈຳເປັນຕ້ອງມີຂີດຄວາມສາມາດທີ່ເຂັ້ມແຂງ ພວກເຂົາຕ້ອງໄດ້ຮຽນຮູ້, ໄດ້ປະກອບສ່ວນເຂົ້າໃນວຽກງານທີ່ມີມູນຄ່າສູງ, ໄດ້ມີການຕັດສິນໃຈກ່ຽວກັບສຸຂະພາບ ແລະ ຊີວິດການເປັນຢູ່ຂອງພວກເຂົາເອງ ແລະ ມີສ່ວນຮ່ວມໃນການສົນທະນາກ່ຽວກັບອະນາຄົດຂອງປະເທດຕົນເອງ ພາຍໃຕ້ການສົ່ງເສີມການມີສ່ວນຮ່ວມ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ໄວໜຸ່ມ ເພື່ອຮັບປະກັນວ່າ ເຂົາເຈົ້າສາມາດນຳໃຊ້ຄວາມອາດສາມາດຂອງຕົນເອງໄດ້ຢ່າງເຕັມທີ່ ແລະ ສ້າງຊີວິດທີ່ມີຄວາມໝາຍ ແລະ ມີຄຸນຄ່າ.

## 6.1 ການພາດໂອກາດໝູນໃຊ້ຄວາມໄດ້ປຽບທາງດ້ານປະຊາກອນ:ບົດສະຫຼູບຕົ້ນຕໍຈາກບົດລາຍງານສະບັບນີ້

ອີງຕາມຜົນການຄົ້ນຄວ້າ, ບົດລາຍງານການພັດທະນາມະນຸດແຫ່ງຊາດສະບັບນີ້ ສະຫຼູບໄດ້ວ່າ: ສປປ ລາວ ອາດຈະພາດໂອກາດ ທີ່ຈະໄດ້ຮັບຜົນປະໂຫຍດຈາກທ່າແຮງໄດ້ປຽບທາງດ້ານປະຊາກອນ. ຊາວໜຸ່ມໃນປັດຈຸບັນ ຍັງຂາດປັດໄຈດ້ານການສຶກສາ, ດ້ານທັກສະ, ດ້ານສຸຂະພາບ ແລະ ດ້ານໂອກາດທີ່ເໝາະສົມໃນການມີສ່ວນຮ່ວມໃນການບັນລຸເປົ້າໝາຍການພັດທະນາໃນລະດັບຊາດ ແລະ ລະດັບສາກົນ. ໄວໜຸ່ມຈຳນວນຫຼາຍປະສົບບັນຫາ ດ້ານລະດັບການສຶກສາທີ່ຕ່ຳ, ອັດຕາການຫວ່າງງານທີ່ສູງ, ວຽກງານທີ່ບໍ່ເປັນທາງການ, ການເຄື່ອນຍ້າຍຖິ່ນຖານ ແລະ ຄວາມບໍ່ໝັ້ນຄົງດ້ານລາຍຮັບ. ຫາກເບິ່ງຈາກທ່າອ່ຽງດ້ານການສຶກສາ, ການພັດທະນາສີມືແຮງງານ ແລະ ດ້ານສຸຂະພາບໃນປັດຈຸບັນ, ອະນາຄົດຂອງຄົນຮຸ່ນຫຼັງ ຄົງຈະບໍ່ດີຂຶ້ນຈາກທີ່ເປັນຢູ່ຫຼາຍ. ເຖິງຢ່າງໃດກໍຕາມ, ສປປ ລາວ ຍັງພໍມີເວລາທີ່ຈະແກ້ໄຂບັນຫາດັ່ງກ່າວ ຫາກແຕ່ການປັບປ່ຽນຄັ້ງໃໝ່ນີ້ຕ້ອງໄດ້ມີແຜນດຳເນີນການທີ່ຮີບດ່ວນ, ສາມາດລົງມືປະຕິບັດໄດ້ແທ້ ແລະ ກວມເອົາທຸກພາກສ່ວນ.

## ນີ້ແມ່ນເວລາທີ່ເໝາະສົມທີ່ສຸດ

ການສ້າງປະໂຫຍດຈາກໂອກາດທາງດ້ານປະຊາກອນ ບໍ່ແມ່ນເລື່ອງໃໝ່ຂອງ ສປປ ລາວ. ການປ່ຽນແປງທາງດ້ານປະຊາກອນຄັ້ງທຳອິດເກີດຂຶ້ນໃນທ້າຍຊຸມປີ 1990. ການສຳຫຼວດພົນລະເມືອງ ປີ 2005 ແລະ 2015 ໄດ້ໃຫ້ຫຼັກຖານທີ່ຊັດເຈນກ່ຽວກັບທ່າອ່ຽງຄວາມເປັນໄປໄດ້ ຂອງການເກີດທ່າແຮງໄດ້ປຽບທາງດ້ານປະຊາກອນ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ແລະ IX ໄດ້ຮັບຮູ້ເຖິງທ່າແຮງດັ່ງກ່າວ ແລະ ຄວາມຈຳເປັນທີ່ຕ້ອງໄດ້ຊຸກຍູ້ການລົງທຶນໃນດ້ານການສຶກສາ ແລະ ສາທາລະນະສຸກ ເພື່ອຮັບປະກັນວ່າຈັງຫວະຂອງຂະບວນການຂະຫຍາຍຕົວທາງດ້ານປະຊາກອນດັ່ງກ່າວຈະບໍ່ສູນຫາຍ. ດ້ວຍອັດຕາສ່ວນຂອງຜູ້ສູງອາຍຸທີ່ຄາດວ່າຈະມີເພີ່ມຂຶ້ນຈາກປີ 2020 ເປັນຕົ້ນໄປ, ສປປ ລາວ ຈະກາຍເປັນສັງຄົມກ່ອນສັງຄົມຜູ້ສູງອາຍຸ (pre-aging society) ໃນປີ 2038 ແລະ ກາຍເປັນ ສັງຄົມຜູ້ສູງອາຍຸ (aging society) ໃນປີ 2059.

ເຖິງວ່າຈະມີຫຼັກຖານຢັ້ງຢືນມາເປັນເວລາຍາວນານ, ບົດລາຍງານສະບັບນີ້ ຊ້ຳພັດຊີ້ໃຫ້ເຫັນວ່າທ່າອ່ຽງທາງດ້ານການສຶກສາ, ທັກສະ, ສຸຂະພາບ ແລະ ການມີສ່ວນຮ່ວມຂອງກຳລັງແຮງງານໃນປັດຈຸບັນ ສົ່ງຜົນໃຫ້ ສປປ ລາວ ຕົກຢູ່ໃນຄວາມສ່ຽງທີ່ຈະບໍ່ໄດ້ຮັບຜົນປະໂຫຍດຈາກທ່າແຮງໄດ້ປຽບທາງດ້ານປະຊາກອນຢ່າງເຕັມທີ່. ເຫດການບໍ່ປາຖະໜາ ເຊັ່ນໄພພິບັດທາງທຳມະຊາດ, ການແຜ່ລະບາດຂອງພະຍາດ ແລະ ຄວາມຂັດແຍ່ງຢູ່ປະເທດອູແກຣນໃນປັດຈຸບັນ ອາດຍິ່ງສົ່ງຜົນໃຫ້ ສປປ ລາວ ຫ່າງໄກຜົນປະໂຫຍດດັ່ງກ່າວອອກໄປຕື່ມອີກ. ຫາກບໍ່ເລີ່ມຕັດສິນໃຈ ແລະ ລົງມືປະຕິບັດເພື່ອແກ້ໄຂບັນດາຊ່ອງຫວ່າງຕ່າງໆທີ່ບົດລາຍງານສະບັບນີ້ໄດ້ລະບຸໄວ້ຕັ້ງແຕ່ຕອນນີ້, ສປປ ລາວ ອາດຈະພາດການໝູນໃຊ້ໂອກາດທາງດ້ານປະຊາກອນຂອງຕົນຢ່າງສິ້ນເຊີງ ແລະ ຖາວອນ.

## ລົງມືຈັດຕັ້ງປະຕິບັດ,ຈັດຕັ້ງປະຕິບັດ ແລະ ຈັດຕັ້ງປະຕິບັດ

ບົດລາຍງານສະບັບນີ້ຊີ້ໃຫ້ເຫັນວ່າ ແຜນຍຸດທະສາດ ແລະ ກົດໝາຍແຫ່ງຊາດ ແລະ ຂະແໜງການຕ່າງໆ ໄດ້ກຳນົດຫຼາຍນະໂຍບາຍທີ່ແທດເໝາະ. ແຜນພັດທະນາ ແຫ່ງຊາດທີ່ຜ່ານມາໃນແຕ່ລະໄລຍະ ໄດ້ເອົາໃຈໃສ່ ແລະ ແນເຫັນຄວາມສຳຄັນຂອງການຮັບຮູ້ເຖິງຄວາມຕ້ອງການ, ສິດທິ ແລະ ຄວາມອາດສາມາດຂອງໄວໜຸ່ມ ໃນຖານະທີ່ປະຊາກອນສ່ວນໃຫຍ່ຂອງປະເທດ. ແຕ່ການຈັດຕັ້ງປະຕິບັດຕົວຈິງຕາມນະໂຍບາຍ ແລະ ແຜນການທີ່ວາງອອກ ພ້ອມທັງການຕິດຕາມກວດກາຜົນກະທົບຂອງວຽກງານດັ່ງກ່າວຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ ຍັງມີຈຸດຂາດເຂີນຢູ່ບາງປະການ. ສິ່ງດັ່ງກ່າວນີ້ ສົ່ງຜົນໃຫ້ແຜນການ ແລະ ບົດລາຍງານທີ່ຜ່ານໆມາ ໄດ້ໃຫ້ຂໍ້ສະຫຼູບດ້ານແນວທາງນະໂຍບາຍ ແລະ ຂໍ້ສະເໜີແນະທີ່ຄ້າຍຄືກັນ ເຊິ່ງເຮັດໃຫ້ບໍ່ສາມາດບັນລຸເປົ້າໝາຍການພັດທະນາໄດ້ຢ່າງຕໍ່ເນື່ອງໃນໄລຍະທີ່ຜ່ານມາ. ການປັບປ່ຽນວັດທະນະທຳດ້ານການບໍລິຫານຈັດການແມ່ນຈຳເປັນຢ່າງຍິ່ງ. ໝາຍຄວາມວ່າ ຕ້ອງຫັນປ່ຽນຈາກການສຸມໃສ່ຜູ້ກຳນົດນະໂຍບາຍ ແລະ ການບໍລິຫານລັດ (ລວມທັງບັນດາກະຊວງ ແລະ ອຳນາດການປົກຄອງຂັ້ນແຂວງ) ໄປສູ່ການເນັ້ນໜັກໃສ່ການຈັດຕັ້ງປະຕິບັດ ແລະ ການແຊກແຊງຊ່ວຍເຫຼືອອັນເປັນຮູບປະທຳ ທີ່ນຳມາເຊິ່ງຜົນໄດ້ຮັບທີ່ແທ້ຈິງ. ວິທີການນີ້ຄວນຊຸກຍູ້ການປະດິດສ້າງ ແລະ ການທົດລອງໃນການປະຕິບັດນະໂຍບາຍເພື່ອສົ່ງເສີມວັດທະນະທຳຂອງການດຳເນີນງານໂດຍມີການປະເມີນຜົນ ຄຽງຄູ່ກັນກັບການທົບທວນຄືນເຖິງສິ່ງທີ່ຈັດຕັ້ງປະຕິບັດຢ່າງທັນທ່ວງທີເພື່ອເລັ່ງລັດຂັ້ນຕອນການຮຽນຮູ້ ວ່າສິ່ງທີ່ໄດ້ຈັດຕັ້ງປະຕິບັດໄປນັ້ນໄດ້ຮັບຜົນດີ ຫຼື ບໍ່ດີຄືແນວໃດ. ນີ້ກໍເພື່ອໃຫ້ການຈັດຕັ້ງປະຕິບັດຕົວຈິງໄດ້ຮັບການປັບປຸງໃຫ້ດີຂຶ້ນຕາມລຳດັບ ເມື່ອເວລາຜ່ານໄປ, ບໍ່ແມ່ນມີພຽງແຕ່ການປະຕິຮູບນະໂຍບາຍ ຢ່າງດຽວເທົ່ານັ້ນ. ຊັບພະຍາກອນດ້ານການເງິນ ແລະ ຊັບພະຍາກອນມະນຸດລວມທັງ ການເຄື່ອນໄຫວຂອງບັນດາສະຖາບັນ ຕ້ອງສະໜັບສະໜູນນະໂຍບາຍ, ເປົ້າໝາຍ ແລະ ແຜນການທີ່ມີຢູ່ແລ້ວ. ການຕິດຕາມກວດກາຂັ້ນສູງສຸດ ທັງໃນຂັ້ນລັດຖະມົນຕີ ແລະ ລະດັບສະພາ ແມ່ນຈຳເປັນ. ທ້າຍທີ່ສຸດແລ້ວ, ຕ້ອງໄດ້ສຸມໃສ່ການພັດທະນານະໂຍບາຍ ຄວບຄູ່ກັບ ການທົບທວນຄືນວິທີການທີ່ນຳໃຊ້ໃນການຈັດຕັ້ງປະຕິບັດນະໂຍບາຍໃດໜຶ່ງ (ທັງວິທີທີ່ໄດ້ຜົນ ແລະ ບໍ່ໄດ້ຜົນດີ) ເພາະທັງສອງຢ່າງລ້ວນແຕ່ມີສ່ວນຕໍ່ຜົນທີ່ໄດ້ຮັບ. ຫາກປາສະຈາກການທົດລອງວິທີການໃໝ່ໆ ແລະ ຄວາມເປັນເຈົ້າການໃນການປັບປ່ຽນດັ່ງກ່າວນີ້, ນະໂຍບາຍສຳຄັນໆຫຼາຍຂໍ້ທີ່ຍົກໃຫ້ເຫັນຂ້າງເທິງນັ້ນ ຈະບໍ່ສາມາດສົ່ງເສີມໄວໜຸ່ມໃຫ້ສາມາດປະຕິບັດໜ້າທີ່ຂອງຕົນເອງ ໃນຖານະຜູ້ຂັບເຄື່ອນການພັດທະນາທີ່ຍືນຍົງໄດ້ຢ່າງເຕັມທີ່.

## ບໍ່ປະໃຫ້ໄວໜຸ່ມຄົນໃດຢູ່ຂ້າງຫຼັງ

ບົດລາຍງານສະບັບນີ້ ໄດ້ຍົກໃຫ້ເຫັນເຖິງຄວາມຫຼ້າຊ້າໃນການພັດທະນາມະນຸດໃນບັນດາຕ່າງແຂວງ, ກຸ່ມຊົນເຜົ່າ, ຄົນທີ່ມີຄວາມພິການ, ຊາວໜຸ່ມຜູ້ທີ່ມີຄວາມຫຼາກຫຼາຍທາງເພດ (LGBTQI+), ຄອບຄົວທີ່ມີລາຍຮັບຕ່ຳ ແລະ ແມ່ຍິງ. ໃນຕະຫຼາດແຮງງານ, ຊາວໜຸ່ມທີ່ມີຄວາມພິການ ແລະ ຜູ້ທີ່ມາຈາກຊຸມຊົນຫຼາກຫຼາຍທາງເພດ ປະເຊີນກັບອຸປະສັກໃນການຊອກຫາວຽກເຮັດງານທຳ. ບັນທັດຖານທາງເພດ, ການແຕ່ງງານ ແລະ ການຖືພາກ່ອນໄວອັນຄວນ ໄດ້ຈຳກັດການມີສ່ວນຮ່ວມຂອງໄວໜຸ່ມຍິງ. ສິ່ງກີດຂວາງຕໍ່ການເຂົ້າເຖິງການສຶກສາ ມີຫຼາຍເປັນພິເສດສຳລັບໄວໜຸ່ມທີ່ມາຈາກມາຊົນເຜົ່າ ແລະ ມີຕົ້ນທຶນທາງເສດຖະກິດສັງຄົມຕ່ຳ ແລະ ສຳລັບນັກຮຽນຊົນເຜົ່າທີ່ຕ້ອງຕໍ່ສູ້ກັບຄວາມແຕກຕ່າງທາງພາສາ ແລະ ການຖືກຂົ່ມເຫັງທາງວາຈາ (bully) ໃນໂຮງຮຽນ. ສິ່ງກີດຂວາງຕໍ່ການເຂົ້າເຖິງການບໍລິການດ້ານສຸຂະພາບຂອງໄວໜຸ່ມ ແມ່ນເກີດຂຶ້ນບົນພື້ນຖານທາງເພດ, ຄວາມພິການ ແລະ ເອກະລັກດ້ານຊົນເຜົ່າ ເປັນສາເຫດຂອງບັນຫາສຸຂະພາບຂອງໄວໜຸ່ມ. ໃນຂະນະທີ່ສຸຂະພາບຈິດມີຜົນກະທົບຕໍ່ບັນດາໄວໜຸ່ມຢ່າງຫຼວງຫຼາຍ, ກຸ່ມໄວໜຸ່ມທີ່ມີຄວາມຫຼາກຫຼາຍທາງເພດຕ້ອງປະສົບກັບຄວາມກັງວົນທີ່ຫຼາຍຍິ່ງຂຶ້ນ ຈາກການຖືກຈຳແນກ ແລະ ຖືກສັງຄົມລັງກຽດ. ການບັນລຸການພັດທະນາມະນຸດ ຈະຂຶ້ນກັບການຍຸຕິທຸກຮູບແບບຂອງຄວາມບໍ່ສະເໝີພາບ ແລະ ຄວາມບໍ່ເທົ່າທຽມກັນ ພ້ອມທັງສ້າງບັນດາຮູບແບບການບໍລິການທາງສັງຄົມ ແລະ ການເຕີບໂຕທາງເສດຖະກິດ ລະຫວ່າງຂົງເຂດຊົນນະບົດ ແລະ ຕົວເມືອງ ແລະ ຕ່າງແຂວງທີ່ເໝາະສົມ.

ຄວາມຕ້ອງການໃຫ້ມີວິທີແກ້ໄຂບັນຫາທີ່ເລັ່ງດ່ວນ ແລະ ມີສ່ວນຮ່ວມ ເພື່ອສົ່ງເສີມໄວໜຸ່ມ ໃນຖານະຜູ້ຂັບເຄື່ອນການພັດທະນາທີ່ຍືນຍົງ ແມ່ນມີໃຫ້ເຫັນໃນບົດຕ່າງໆຂ້າງເທິງ.

**ບົດທີ 2** ໄດ້ສຶກສາເບິ່ງສິ່ງທ້າທາຍດ້ານໂຄງສ້າງເສດຖະກິດ ທີ່ສົ່ງຜົນກະທົບຕໍ່ກຳລັງແຮງງານໂດຍລວມ. ເຖິງວ່າຂໍ້ມູນດ້ານຕະຫຼາດແຮງງານທີ່ມີຢູ່ຈຳນວນຫຼາຍແມ່ນຫຼ້າສະໄໝແລ້ວ ແຕ່ຂໍ້ມູນດັ່ງກ່າວໄດ້ຊີ້ໃຫ້ເຫັນເຖິງຂໍ້ເສຍປຽບທີ່ໄວໜຸ່ມຕ້ອງປະເຊີນໃນການເຂົ້າເຖິງວຽກເຮັດງານທຳ ໄດ້ຢ່າງຊັດເຈນ. ອັດຕາສ່ວນຂອງໄວໜຸ່ມທີ່ສູງເຖິງປະມານ 25% ທີ່ບໍ່ໄດ້ຢູ່ໃນການສຶກສາ, ການຈ້າງງານ ຫຼື ການຝຶກອົບຮົມ ເປັນອັດຕາທີ່ສູງທີ່ສຸດໃນບັນດາປະເທດໃນອາຊີຕາເວັນອອກສ່ຽງໃຕ້.

ສະພາບການດັ່ງກ່າວ ແມ່ນເກີດຈາກອັດຕາການອອກໂຮງຮຽນທີ່ສູງ, ການໃຫ້ຄຸນຄ່າກັບການສຶກສາສາຍວິຊາຊີບທີ່ຕ່ຳ, ການກຽມຄວາມພ້ອມດ້ານຕະຫຼາດແຮງງານທີ່ບໍ່ດີເທົ່າທີ່ຄວນ ແລະ ການຂາດວຽກເຮັດງານທຳທີ່ໝັ້ນຄົງໂດຍລວມຂອງໄວໜຸ່ມ. ບົດນີ້ໄດ້ວິເຄາະເບິ່ງວ່າ ການແຜ່ລະບາດຂອງພະຍາດ ແລະ ສະພາບເສດຖະກິດທີ່ຕົກຕ່ຳໃນປັດຈຸບັນນີ້ ໄດ້ເພີ່ມທະວີຄວາມຫຍຸ້ງຍາກລຳບາກທີ່ມີຢູ່ແລ້ວກ່ອນໜ້ານີ້ ໃນການຊອກວຽກເຮັດງານທຳ ແລະ ການສ້າງທຸລະກິດໃໝ່ຂອງໄວໜຸ່ມ ໃຫ້ຮ້າຍແຮງຂຶ້ນກວ່າເກົ່າ ຄືແນວໃດ. ບັນຫາຕົ້ນຕໍລວມມີ ວິກິດການດ້ານການສຶກສາ ແລະ ດ້ານທັກສະ ເຊິ່ງໄດ້ກົດໜ່ວງໂອກາດຂອງການຖືກຈ້າງງານຂອງໄວໜຸ່ມ; ການຂາດຄວາມສອດຄ່ອງລະຫວ່າງຫຼັກສູດການສຶກສາ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ສະພາບການອະນາຄົດຂອງວຽກງານຕ່າງໆ; ຂະບວນການຈັດຫາງານ ແລະ ການຈ້າງງານ ທັງໃນພາກລັດ ແລະ ເອກະຊົນ ທີ່ຍັງບໍ່ທ່ຽງທຳເທົ່າທີ່ຄວນ ເຊິ່ງມັນເຮັດໃຫ້ໄວໜຸ່ມໝົດກຳລັງໃຈໃນການຊອກວຽກຢ່າງຫ້າວຫັນ. ການບໍລິການຊ່ວຍຈັດຫາງານກໍມີຢູ່ຢ່າງຈຳກັດ. ບົດນີ້ ໄດ້ລະບຸໂອກາດໃນການຫັນປ່ຽນເສັ້ນທາງການເຕີບໂຕທາງເສດຖະກິດ ໃຫ້ກ້າວໄປສູ່ ການເຕີບໂຕສີຂຽວ ແລະ ເສດຖະກິດດີຈີຕອນ ເພື່ອສະໜັບສະໜູນອຸດສາຫະກຳຕ່າງໆທີ່ຫຼາກຫຼາຍ ສຳລັບການຈ້າງງານ ແລະ ການເປັນຜູ້ປະກອບການຂອງໄວໜຸ່ມ.

ສິ່ງທີ່ຕິດພັນກັບຄວາມສາມາດໃນການຊອກວຽກເຮັດງານທຳທີ່ຕ່ຳຂອງໄວໜຸ່ມ ແມ່ນການສຶກສາ ຍ້ອນວ່າການສຶກສາຍັງບໍ່ທັນສາມາດກະກຽມຄວາມພ້ອມໃຫ້ໄວໜຸ່ມເຂົ້າສູ່ຕະຫຼາດແຮງງານໄດ້ດີເທົ່າທີ່ຄວນ.

**ບົດທີ 3** ໃຫ້ຄວາມເຂົ້າໃຈກ່ຽວກັບຄວາມຄືບໜ້າທີ່ເກີດຂຶ້ນຕັ້ງແຕ່ຕົ້ນປີ 2000 ວ່າມັນກຳລັງທົດຖອຍ ເຊິ່ງທ່າອ່ຽງດັ່ງກ່າວມີມາກ່ອນຄວາມເສຍຫາຍຈາກຜົນກະທົບຂອງພະຍາດໂຄວິດ-19. ການເຂົ້າເຖິງການສຶກສາຍັງຄົງເປັນສິ່ງທ້າທາຍອັນໃຫຍ່ຫຼວງທີ່ມີຄວາມຄືບໜ້າພຽງເລັກໜ້ອຍໃນປີທີ່ຜ່ານມາ; ບັນຫາດັ່ງກ່າວແມ່ນທ້າທາຍທີ່ສຸດໃນຂົງເຂດຊົນນະບົດ. ບົດນີ້ໄດ້ກ່າວເຖິງຄວາມຈຳເປັນອັນສຳຄັນ ໃນການຜັນຂະຫຍາຍວຽກງານການສຶກສາກ່ອນໄວຮຽນ ເນື່ອງຈາກວ່າ ມັນໃຫ້ຜົນຕອບແທນທາງດ້ານເສດຖະກິດ ແລະ ສັງຄົມໄດ້ຫຼາຍທີ່ສຸດ ເຊິ່ງວຽກງານດັ່ງກ່າວໃນ ສປປ ລາວ ຖືວ່າມີການພັດທະນາທີ່ຫຼ້າຊ້າກວ່າບັນດາປະເທດອື່ນໆໃນອາຊີຕາເວັນອອກສຽງໃຕ້. ໃນດ້ານການສືບຕໍ່ຮຽນໜັງສືໃນໂຮງຮຽນ ອັດຕາການອອກໂຮງຮຽນມັດທະຍົມທີ່ສູງຂຶ້ນ ແມ່ນເກີດຈາກຄວາມກົດດັນຕໍ່ໄວໜຸ່ມທີ່ເພີ່ມຂຶ້ນ ທີ່ຕ້ອງຊອກຫາວຽກເຮັດງານທຳເພື່ອລ້ຽງດູຕົນເອງ ແລະ ສະມາຊິກໃນຄອບຄົວ. ໃນທຸກລະດັບການສຶກສາ, ຄຸນນະພາບແມ່ນສິ່ງທ້າທາຍຫຼັກທີ່ຕິດພັນກັບການຂາດແຄນ ແລະ ຄວາມບໍ່ເໝາະສົມຂອງອຸປະກອນການຮຽນ, ທັງສຳລັບນັກຮຽນ ແລະ ຄູອາຈານ. ດັ່ງນັ້ນ, ຜົນການຮຽນຂອງນັກຮຽນໃນບາງຊ່ວງອາຍຸ ແມ່ນຢູ່ໃນລະດັບຕ່ຳທີ່ສຸດໃນອາຊີຕາເວັນອອກສຽງໃຕ້. ໂດຍທົ່ວໄປແລ້ວ, ເປົ້າໝາຍການລົງທຶນໃນການສຶກສາແຫ່ງຊາດ ບໍ່ໄດ້ຮັບການບັນລຸຜົນໃນໄລຍະຜ່ານມາ ທ່າມກາງທ່າອ່ຽງທີ່ໜ້າເປັນຫ່ວງກ່ຽວກັບອັດຕາການອອກໂຮງຮຽນ, ຜົນການຮຽນ ແລະ ຈຳນວນປີການຮຽນທັງໝົດ. ການດຳເນີນການທີ່ຊັດເຈນ ແລະ ທັນທ່ວງທີ ແມ່ນຈຳເປັນ ເພື່ອຈັດຕັ້ງປະຕິບັດວຽກງານດ້ານນິຕິກຳ ແລະ ນະໂຍບາຍປັດຈຸບັນ. ຈາກສະພາບເສດຖະກິດໃນຂະນະນີ້, ອາດຈະຕ້ອງໄດ້ເອົາໃຈໃສ່ດ້ານ ‘ວິທີການ’ ແລະ ປະສິດທິພາບໃນການຈັດການດ້ານການສຶກສາໃຫ້ຖີ່ຖ້ວນຕື່ມອີກ. ການຮ່ວມມືກັບພາກເອກະຊົນ ສາມາດເສີມຂະຫຍາຍໄດ້ຫຼາຍກວ່ານີ້. ບັນຫາຄວາມແຕກໂຕນດ້ານການສຶກສາທີ່ເພີ່ມຂຶ້ນ ຫາກບໍ່ໄດ້ຮັບການແກ້ໄຂ ອາດສົ່ງຜົນໃຫ້ໄວໜຸ່ມຫຼາຍຄົນຕົກໄປຢູ່ໃນວົງຈອນຂອງຄວາມທຸກຍາກ, ການຫວ່າງງານ ແລະ ໄພຄຸກຄາມດ້ານສຸຂະພາບທີ່ເພີ່ມສູງຂຶ້ນ.

**ບົດທີ 4** ລະບຸວ່າ ໄວໜຸ່ມປະເຊີນກັບຄວາມສ່ຽງດ້ານສຸຂະພາບຄັ້ງໃຫຍ່ ເຊິ່ງສົ່ງຜົນກະທົບຕໍ່ການມີສ່ວນຮ່ວມ ໃນກຳລັງແຮງງານ, ຄວາມກະຕືລືລົ້ນໃນການດຳລົງຊີວິດ ແລະ ການປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ. ບັນຫາດ້ານສຸຂະພາບທີ່ພົ້ນເດັ່ນອັນໜຶ່ງແມ່ນ ການແຕ່ງງານ ແລະ ການຖືພາໄວກ່ອນໄວອັນຄວນ. ໃນ ສປປ ລາວ, ຄາດວ່າ 1 ໃນ 4 ຂອງໄວໜຸ່ມຍິງ ອາຍຸ 15-19 ປີ ແຕ່ງງານແລ້ວ, ເຊິ່ງອັດຕາດັ່ງກ່າວແມ່ນສູງກວ່ານີ້ອີກຢູ່ໃນເຂດຊົນນະບົດ. ບັນຫານີ້ເຮັດໃຫ້ເກີດອັນຕະລາຍຕໍ່ທັງສຸຂະພາບຂອງບັນດາແມ່ທີ່ຍັງເປັນໄວໜຸ່ມ ແລະ ລູກໆ, ເປັນຕົ້ນເຫດຂອງອັດຕາການຕາຍຂອງແມ່, ອັດຕາການຕາຍຂອງເດັກ ແລະ ອັດຕາການຂາດສານອາຫານທີ່ສູງ. ອີກໜຶ່ງຄວາມຈິງທີ່ໜ້າສະຫຼົດໃຈກໍຄືວ່າ 1 ໃນ 4 ຂອງໄວໜຸ່ມໃນ ສປປ ລາວ ໄດ້ລາຍງານວ່າ ຕົນເອງເຄີຍປະສົບກັບບັນຫາດ້ານສຸຂະພາບຈິດ. ເຖິງຢ່າງໃດກໍຕາມ, ປະຊາຊົນໃນເຂດຊົນນະບົດເຖິງ 75% ບໍ່ທັນໄດ້ຮັບການບໍລິການດ້ານສຸຂະພາບຈິດ. ການແຜ່ລະບາດຂອງພະຍາດໄດ້ເພີ່ມທະວີບັນຫາສຸຂະພາບຈິດ, ໂດຍສະເພາະໃນເຍົາວະຊົນ ແລະ ໄວໜຸ່ມ. ການສູບຢາ, ການນຳໃຊ້ຢາເສບຕິດ ແລະ ການບໍລິໂພກສິ່ງມຶນເມົາ ສົ່ງຜົນໃຫ້ໄວໜຸ່ມເສຍຊີວິດກ່ອນໄວອັນຄວນຈາກການປະສົບອຸບັດຕິເຫດທາງຖະໜົນ ແລະ ການຮ່ວມກິດຈະກຳທາງເພດທີ່ມີຄວາມສ່ຽງສູງ.



ໃນຂະນະທີ່ການປະຕິຮູບດ້ານການບໍລິການສາທາລະນະສຸກ, ການພັດທະນານະໂຍບາຍສາທາລະນະສຸກ ແລະ ການປັບປຸງການລົງທຶນໃນການບໍລິການສາທາລະນະສຸກ ພວມດຳເນີນໄປ, ການຈັດຕັ້ງປະຕິບັດວຽກງານກ່ຽວຂ້ອງກັບເຍົາວະຊົນ ແລະ ໄວໜຸ່ມ ທີ່ພວກເຂົາໄດ້ມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດໂດຍກົງ ຊ້ຳພັດຍັງບໍ່ສາມາດສ້າງຜົນກະທົບໄດ້ດີເທົ່າທີ່ຄວນ. ສະຖານທີ່ ແລະ ບຸກຄະລາກອນທີ່ໃຫ້ບໍລິການດ້ານສາທາລະນະສຸກຍັງບໍ່ມີຄວາມພ້ອມພຽງພໍທີ່ຈະແກ້ໄຂບັນຫາຕ່າງໆເຊັ່ນ: ອັດຕາການຖືພາໃນໄວໜຸ່ມທີ່ສູງ, ວິກິດການດ້ານສຸຂະພາບຈິດ ຫຼື ຄວາມສ່ຽງດ້ານສຸຂະພາບທີ່ປະຊາຊົນຜູ້ດ້ອຍໂອກາດຕ້ອງປະເຊີນ. ການເຮັດວຽກຮ່ວມກັນເພື່ອປ້ອງກັນການເສຍຊີວິດ ແລະ ຮັບປະກັນການເຂົ້າເຖິງການບໍລິການດ້ານສາທາລະນະສຸກສະເພາະທາງ ເຊັ່ນ: ສຸຂະພາບຈິດ, ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ມີຄວາມສຳຄັນຢ່າງຍິ່ງຕໍ່ສຸຂະພາບຂອງໄວໜຸ່ມ ກໍຄືການມີສ່ວນຮ່ວມຢ່າງຫ້າວຫັນຂອງພວກເຂົາໃນຕະຫຼາດແຮງງານ ແລະ ວຽກບ້ານການເມືອງ.

**ບົດທີ 5** ຮຽກຮ້ອງໃຫ້ຍຶດຖືເອົາໄວໜຸ່ມວ່າເປັນສະມາຊິກຂອງສັງຄົມໂດຍສົມບູນ ທີ່ເຕັມໄປດ້ວຍຄວາມສາມາດ ແລະ ມີເສລີພາບໃນການເຂົ້າຮ່ວມກິດຈະກຳດ້ານເສດຖະກິດ, ສັງຄົມ ແລະ ການເມືອງ. ພວກເຂົາຄວນມີສ່ວນຮ່ວມໃນການຕັດສິນໃຈໃນສິ່ງຕ່າງໆທີ່ຈະມີຜົນກະທົບຕໍ່ຊີວິດຂອງພວກເຂົາ ແລະ ມີຄວາມຮັບຜິດຊອບຕໍ່ການກະທຳຂອງພວກເຂົາເອງ. ການສຶກສາທີ່ມີຄຸນນະພາບ ແລະ ສຸຂະພາບທີ່ດີ ແມ່ນເງື່ອນໄຂເບື້ອງຕົ້ນທີ່ໄວໜຸ່ມຄວນມີ ເພື່ອໃຫ້ສາມາດມີສ່ວນຮ່ວມໃນການສ້າງການປ່ຽນແປງ ໃນຂະນະທີ່ການປະກອບສ່ວນໃນຕະຫຼາດແຮງງານ ກໍເປີດປະຕູໃຫ້ໄວໜຸ່ມ ໄດ້ກ້າວສູ່ການມີສ່ວນຮ່ວມໃນວຽກງານທາງສັງຄົມ ແລະ ການເມືອງຢ່າງຫ້າວຫັນ. ການທີ່ໄວໜຸ່ມຈະສາມາດເປັນຕົວແທນຂັບເຄື່ອນການປ່ຽນແປງໄດ້ ຫຼື ບໍ່ໄດ້ນັ້ນ ກໍ່ຂຶ້ນກັບການແກ້ໄຂຊ່ອງຫວ່າງທີ່ໄດ້ລະບຸໄວ້ໃນບົດທີ 2, 3 ແລະ 4. ການເພີ່ມທະວີການເຂົ້າຮ່ວມຂອງຊາວໜຸ່ມໃນການຕັດສິນໃຈ ຈະຊ່ວຍໃຫ້ຂະບວນການອອກແບບນະໂຍບາຍ ແລະ ກິດຈະກຳສົ່ງເສີມໄວໜຸ່ມໃຫ້ໄດ້ຮັບຜົນດີຂຶ້ນ ເພື່ອຮັບປະກັນວ່າ ວຽກງານຂອງໄວໜຸ່ມ ແມ່ນຖືກອອກແບບໂດຍໄວໜຸ່ມ ເພື່ອຮັບໃຊ້ໄວໜຸ່ມ ໂດຍແທ້ຈິງ. ນອກຈາກບົດບາດອັນຈຳກັດໃນຖານະອາສາສະໝັກແລ້ວ ໄວໜຸ່ມໃນ ສປປ ລາວ ໄດ້ຮັບໂອກາດໃນການມີສ່ວນຮ່ວມ ແລະ ເຄື່ອນໄຫວທາງສັງຄົມ ທີ່ບໍ່ເທົ່າທຽມກັນ. ວັດທະນະທຳໃນປະຈຸບັນຖືເອົາໄວໜຸ່ມເປັນພຽງແຕ່ພາກສ່ວນຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດເທົ່ານັ້ນ ບໍ່ແມ່ນພາກສ່ວນທີ່ຊ່ວຍກຳນົດທິດທາງ ແລະ ກໍຍັງບໍ່ທັນມີກົນໄກໃດທີ່ຊ່ວຍໃຫ້ໄວໜຸ່ມສາມາດສື່ສານກັບພາກສ່ວນທີ່ກ່ຽວຂ້ອງ, ມີບົດບາດ ແລະ ສະແດງຄຳຄິດເຫັນຕໍ່ກັບບັນດາບຸລິມະສິດດ້ານການພັດທະນາທີ່ວາງອອກ. ຊາວໜຸ່ມ ຍັງຄົງເປັນຊັບພະຍາກອນທີ່ບໍ່ຖືກໝູນໃຊ້ຢ່າງເຕັມປະສິດທິພາບ ໃນດ້ານແນວຄວາມຄິດໃໝ່ໆ ແລະ ການມີສ່ວນຮ່ວມຢ່າງມີຄວາມໝາຍຄວາມສຳຄັນໃນການຕັດສິນໃຈ, ທັງໃນເລື່ອງທີ່ມີຜົນຕໍ່ພວກເຂົາໃນປັດຈຸບັນ ແລະ ໃນອະນາຄົດ; ພວກເຂົາຈະຕ້ອງໄດ້ສືບທອດຮັບຜົນຈາກຄວາມທ້າທາຍດ້ານການພັດທະນາ ເຊິ່ງບໍ່ແມ່ນໝາກຜົນການກະທຳຂອງຄົນໃນຮຸ່ນເຂົາ.

# 6.2 ຂໍ້ສະເໜີແນະຫຼັກ

## ຂໍ້ສະເໜີແນະທີ 1. ເສີມສ້າງຄວາມເຂັ້ມແຂງດ້ານການປົກຄອງເສດຖະກິດ ແລະ ເພີ່ມທະວີການລົງທຶນໃນໄວໜຸ່ມ

ບົດລາຍງານສະບັບນີ້ ໄດ້ຍົກໃຫ້ເຫັນເຖິງຄວາມຈຳເປັນຢ່າງຍິ່ງ ໃນການເພີ່ມທະວີການລົງທຶນໃນດ້ານການສຶກສາ, ການພັດທະນາທັກສະທີ່ກຽມພ້ອມໃນອະນາຄົດ, ການບໍລິການດ້ານສາທາລະນະສຸກ ແລະ ການມີສ່ວນຮ່ວມ ເພື່ອແກ້ໄຂທ່າອ່ຽງທີ່ໜ້າເປັນຫ່ວງຂອງການພັດທະນາມະນຸດ ແລະ ບັນດາຕົວຊີ້ວັດອື່ນໆທີ່ກ່ຽວຂ້ອງ ຂອງ ສປປ ລາວ. ເວົ້າສະເພາະ, ບົດລາຍງານຮຽກຮ້ອງໃຫ້ມີການລົງທຶນທີ່ສະເພາະເຈາະຈົງແບບມີເປົ້າໝາຍ ເພື່ອແກ້ໄຂລະດັບການຫວ່າງງານທີ່ສູງຂຶ້ນ, ອັດຕາການອອກໂຮງຮຽນທີ່ຫຼາຍຂຶ້ນ, ບັນຫາສຸຂະພາບຈິດທີ່ເພີ່ມຂຶ້ນ ແລະ ຄວາມສ່ຽງດ້ານສຸຂະພາບທີ່ຕິດພັນກັບການຖືພາຂອງໄວໜຸ່ມທີ່ຍັງມີມາຢ່າງຕໍ່ເນື່ອງ.

ບົດທີ 1 ແລະ 2 ສະແດງໃຫ້ເຫັນຕື່ມອີກວ່າ ຮູບແບບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການລົງທຶນຂອງລັດໃນ ສປປ ລາວ ໃນທົດສະວັດທີ່ຜ່ານມາ ຍັງບໍ່ທັນໄດ້ເອື້ອຜົນປະໂຫຍດໃຫ້ແກ່ການພັດທະນາມະນຸດ. ອັດຕາການເຕີບໂຕທາງດ້ານເສດຖະກິດທີ່ສູງໃນໄລຍະເວລາສອງທົດສະວັດ ໄດ້ນຳໄປສູ່ການໃຫ້ທຶນທີ່ເພີ່ມຂຶ້ນຢ່າງວ່ອງໄວ ໃນວຽກງານພື້ນຖານໂຄງລ່າງທີ່ກ່ຽວຂ້ອງກັບຂະແໜງພະລັງງານໄຟຟ້ານ້ຳຕົກ ແລະ ການເຊື່ອມຕໍ່ສື່ສານ,ໃນຂະນະທີ່ການລົງທຶນຂອງລັດໃນຂະແໜງ ສາທາລະນະສຸກ ແລະ ການສຶກສາ ຕາມສັດສ່ວນຂອງ GDP ຊ້ຳພັດຢຸດສະງັກ ແລະ ຫຼຸດລົງ.

ໃນຂະນະດຽວກັນນັ້ນ, ຮູບແບບການຂະຫຍາຍຕົວຂອງ ສປປ ລາວ ໄດ້ນຳມາເຊິ່ງຄວາມສ່ຽງດ້ານງົບປະມານ. ບັນຫານີ້ມີມາກ່ອນການແຜ່ລະບາດຂອງພະຍາດແລ້ວ, ແຕ່ພະຍາດລະບາດ ປະກອບກັບ



ຫາກບໍ່ເລີ່ມຕັດສິນໃຈ ແລະ ລົງມືປະຕິບັດເພື່ອແກ້ໄຂບັນດາຊ່ອງຫວ່າງຕ່າງໆ ທີ່ບົດລາຍງານສະບັບນີ້ໄດ້ລະບຸໄວ້ຕັ້ງແຕ່ຕອນນີ້, ສປປ ລາວ ອາດຈະພາດການໝູນໃຊ້ໂອກາດທາງດ້ານປະຊາກອນຂອງຕົນຢ່າງສິ້ນເຊີງ ແລະ ຖາວອນ.



ການບັນລຸການພັດທະນາມະນຸດຈະຂຶ້ນກັບການຍຸຕິທຸກຮູບແບບຂອງຄວາມບໍ່ສະເໝີພາບ ແລະ ຄວາມບໍ່ເທົ່າທຽມກັນ ພ້ອມທັງສ້າງບັນດາຮູບແບບການບໍລິການທາງສັງຄົມ ແລະ ການເຕີບໂຕທາງເສດຖະກິດລະຫວ່າງຂົງເຂດຊົນນະບົດ ແລະ ຕົວເມືອງ ແລະ ຕ່າງແຂວງ ທີ່ເໝາະສົມ.





©UNFPA Laos

ຄວາມຂັດແຍ່ງໃນປະເທດອູແກຣນ ສິ່ງຜົນໃຫ້ບັນຫາດັ່ງກ່າວນັບມື້ນັບຮ້າຍແຮງໄປກວ່າເກົ່າ. ຄວາມສ່ຽງເຫຼົ່ານີ້ ປະກອບກັບ ການທີ່ຕ້ອງປະເຊີນກັບວິກິດການບໍ່ປາຖະໜາໄດ້ສືບຕໍ່ບັ່ນທອນການລົງທຶນໃນການສຶກສາ, ທັກສະ ແລະ ການບໍລິການດ້ານສາທາລະນະສຸກ. ປັດຈຸບັນນີ້, ສະຖານະການດ້ານການເງິນໄດ້ມີການປ່ຽນແປງຢູ່ທົ່ວໂລກ. ຄວາມບໍ່ແນ່ນອນທາງດ້ານເສດຖະກິດທີ່ເພີ່ມຂຶ້ນແມ່ນສິ່ງຜົນກະທົບຕໍ່ ທຶນການຊ່ວຍເຫຼືອເພື່ອການພັດທະນາຢ່າງເປັນທາງການ, ອັນເປັນສິ່ງທີ່ ສປປ ລາວ ໄດ້ເອື່ອຍອີງມາເປັນເວລາຫຼາຍປີ. ເງິນທຶນດັ່ງກ່າວຖືກນຳໄປໝູນໃຊ້ໃນວຽກງານຟື້ນຟູຫຼັງການແຜ່ລະບາດຂອງພະຍາດ, ວຽກງານບັນເທົາທຸກດ້ານມະນຸດສະທຳ ແລະ ການຕອບໂຕ້ຕໍ່ຄວາມຂັດແຍ່ງ. ຍ້ອນທ່າອ່ຽງດັ່ງກ່າວ ແລະ ການກ້າວອອກຈາກສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ ທີ່ຈະມາເຖິງນີ້, ການລົງທຶນໃນໄວໜຸ່ມທີ່ຫຼາຍຂຶ້ນ ໃນທຸກໆຂະແໜງການນັບຕັ້ງແຕ່ຂະແໜງສາທາລະນະສຸກ, ການສຶກສາ ແລະ ການພັດທະນາສີມືແຮງງານ ຍິ່ງຕ້ອງໄດ້ຮັບການອຸ້ມຊູ ໂດຍງົບປະມານຂອງລັດ.

ເຖິງວ່າສະພາບເສດຖະກິດມະຫາພາກໃນປັດຈຸບັນຈະເຮັດໃຫ້ລັດຖະບານມີຊັບພະຍາກອນສຳລັບການໃຊ້ຈ່າຍຫຼຸດລົງ, ແຕ່ການດຳເນີນການປະຕິຮູບໄລຍະກາງກຳລັງຈະເກີດຂຶ້ນ ເພື່ອປັບປຸງການລະດົມລາຍຮັບພາຍໃນ, ຄຸ້ມຄອງລາຍຈ່າຍ ແລະ ຄຸ້ມຄອງໜີ້ສິນ ໃຫ້ເສດຖະກິດມະຫາພາກມີຄວາມສະຖຽນລະພາບ. ລັດຖະບານຄວນເລັ່ງລັດການປະຕິຮູບດັ່ງກ່າວ ໂດຍອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ IX ແລະ ແຜນຍຸດທະສາດການເງິນ ພ້ອມກັບ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາດ້ານເສດຖະກິດ-ການເງິນ.

ອົງປະກອບສຳຄັນໃນການປົກປ້ອງ ແລະ ຄ່ອຍໆເລັ່ງຊຸກຍູ້ການລົງທຶນໃນການພັດທະນາມະນຸດ ທີ່ມີຜົນກະທົບຕໍ່ໄວໜຸ່ມ ໄດ້ແກ່:

— **ມີການປະຕິຮູບຂະແໜງອາກອນຢ່າງມີນະວັດຕະກຳ ແລະ ເປັນຮູບປະທຳ ເພື່ອສ້າງລາຍຮັບໃຫ້ເປັນທຶນຮອນສຳລັບ ການພັດທະນາການສຶກສາ, ພັດທະນາສີມືແຮງງານ ແລະ ການບໍລິການສາທາລະນະສຸກທີ່ສຸມໃສ່ໄວໜຸ່ມ.** ຄຽງຄູ່ໄປກັບການປະຕິຮູບອາກອນໃນວົງກວ້າງ ດັ່ງເຊັ່ນ ການຫັນລະບົບການເກັບອາກອນໃຫ້ເປັນທັນສະໄໝນັ້ນ, ສປປ ລາວ ສາມາດ ທົດລອງ ວິທີການແນວໃໝ່ໆ ໂດຍສະເພາະ ສິ່ງທີ່ໄດ້ຮັບການຈັດຕັ້ງປະຕິບັດ ແລະ ພິສູດແລ້ວວ່າມີປະສິດທິຜົນ ແລະ ຜົນສຳເລັດໃນປະເທດອື່ນໆ. ສາມາດເອົາວິທີການລິເລີ່ມທາງດ້ານເຕັກນິກວິຊາການທີ່ມີຢູ່ແລ້ວ ເຊັ່ນ: ນຳໃຊ້ການຊ່ວຍເຫຼືອດ້ານວິຊາການຈາກ ເຈົ້າໜ້າທີ່ກວດກາອາກອນແບບບໍ່ມີພົມແດນ (Tax Inspectors Without Borders). ລັດຖະບານສາມາດພິຈາລະນາເລີ່ມທົດລອງໂຄງການລິເລີ່ມຕ່າງໆ ທີ່ມີຢູ່ໃນພາກພື້ນອາຊີ ແລະ ປາຊີຟິກ ເຊັ່ນ: ໂຄງການລິເລີ່ມດ້ານອາກອນສຳລັບ SDGs ທີ່ວາງອອກໂດຍ UNDP. ການເກັບອາກອນຢາສູບ ກໍເປັນເຄື່ອງມືສຳຄັນໃນການແກ້ໄຂບັນຫາດ້ານສຸຂະພາບ ແລະ ການເງິນໄປພ້ອມໆກັນ. ວິທີດັ່ງກ່າວຖືກພິສູດແລ້ວວ່າ ສາມາດເພີ່ມລາຍຮັບຂອງລັດຖະບານໃນຟີລິບປິນ ແລະ ບັນດາປະເທດຕ່າງໆໄດ້.

— **ສ້າງ ແລະ ເພີ່ມຂີດຄວາມສາມາດໃຫ້ທີມງານດຳເນີນການຄົ້ນຄວ້າ ແລະ ປະເມີນຜົນພາຍໃນລັດຖະບານ ເພື່ອທົດສອບປະສິດທິພາບ ແລະ ປະສິດທິຜົນຂອງແຜນງານຢ່າງເປັນລະບົບ.** ຄຽງຄູ່ກັບການເພີ່ມທະວີການຈັດສັນງົບປະມານແຫ່ງຊາດ, ການເອົາໃຈໃສ່ຮັບປະກັນປະສິດທິຜົນການລົງທຶນກໍສຳຄັນ. ໃນການເລັ່ງລັດການລົງທຶນຂອງພາກລັດ, ຈຳເປັນຕ້ອງມີການອອກແບບ ແລະ ການປະເມີນຜົນໂຄງການຕ່າງໆຢ່າງຖີ່ຖ້ວນ ລວມທັງ ມີການເກັບກຳ-ບັນທຶກຜົນໄດ້ຮັບຂອງໂຄງການເຫຼົ່ານັ້ນອີກດ້ວຍ. ບົດທີ 3 ແລະ 4 ໄດ້ຍົກໃຫ້ເຫັນຄວາມຄືບໜ້າໃນການປັບປຸງລະບົບນິເວດດ້ານຂໍ້ມູນຂອງຂະແໜງສຶກສາ ແລະ ສາທາລະນະສຸກ. ເພື່ອນຳໃຊ້ຫຼັກຖານດັ່ງກ່າວ ແລະ ສ້າງວັດທະນະທຳຂອງການວາງແຜນໂຄງການໂດຍມີການອີງໃສ່ຫຼັກຖານ, ການຝຶກອົບຮົມຄວນຊ່ວຍໃຫ້ພາກສ່ວນພາຍໃນບັນດາບັນດາກະຊວງສາມາດວາງແຜນ-ຈັດສັນພະແນກຕ່າງໆຂອງຕົນ ແລະ ຊ່ວຍອົງການກວດກາແຫ່ງລັດ ໃນການປະເມີນຜົນ ແລະ ກວດສອບປະສິດທິພາບຂອງໂຄງການຢ່າງເປັນລະບົບ. ຄວນສືບຕໍ່ສ້າງຂີດຄວາມສາມາດຢ່າງຕໍ່ເນື່ອງ ແລະ ສົມທົບກັບສະຖາບັນການສຶກສາ ຫຼື ສະຖາບັນຄົ້ນຄວ້າທີ່ມີຄວາມຊຳນານລະດັບໂລກ ໃນການປະເມີນຜົນທັງດ້ານປະສິດທິພາບ ແລະ ປະສິດທິຜົນຂອງແຜນງານດ້ານຂະແໜງສັງຄົມ.

— **ເສີມຂະຫຍາຍບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນການເພີ່ມທະວີການລົງທຶນໃນໄວໜຸ່ມ ແລະ ເຍົາວະຊົນ .** ເພື່ອສະໜອງຄວາມຕ້ອງການດ້ານການລົງທຶນໃນສາທາລະນະສຸກ, ການສຶກສາ ແລະ ທັກສະຄວາມພ້ອມເພື່ອອະນາຄົດ; ຍົກສູງຄວາມສາມາດ ແລະ ມາດຕະຖານການບໍລິການຢູ່ເຂດຊົນນະບົດແບບກ້າວກະໂດດ; ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງສາມາດກວດກາຄືນຊ່ອງທາງການໃຫ້ຄຳເຫັນ-ຄຳຕິຊົມ ແລະ ການແລກປ່ຽນຂໍ້ມູນລະຫວ່າງບັນດາກະຊວງທີ່ກ່ຽວຂ້ອງ; ແຂວງທີ່ໄດ້ຄັດເລືອກ ແລະ ບັນດາອົງການປະສານງານສູນກາງດ້ານການເງິນ ເຊັ່ນ: ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ. ສະພາປະຊາຊົນ, ນຳພາໂດຍຄະນະກຳມະການແຜນການ, ການເງິນ ແລະ ກວດກາ ພ້ອມທັງ ຄະນະກຳມະການສັງຄົມ ແລະ ວັດທະນະທຳ, ສາມາດຮັບປະກັນແນວທາງປະສານສົມທົບ ເພື່ອຊຸກຍູ້ບັນດາກຳລະນີລົງທຶນເພື່ອການສຶກສາ, ການພັດທະນາສີມືແຮງງານ ແລະ ການບໍລິການດ້ານສາທາລະນະສຸກທີ່ສຸມໃສ່ໄວໜຸ່ມ. ມີການກຳນົດການຈັດສັນງົບປະມານຂອງລັດ ແລະ ຕິດຕາມຜົນຄັກແນ່. ໂດຍຜ່ານອົງການຈັດຕັ້ງທາງສັງຄົມ, ໄວໜຸ່ມຄວນມີໂອກາດເຂົ້າຮ່ວມສັງເກດການກອງປະຊຸມ ເພື່ອປຶກສາຫາລືບັນຫາດັ່ງກ່າວເຫຼົ່ານີ້.

— **ທົດລອງການຈັດສັນງົບປະມານໂດຍມີປະຊາຊົນ ແລະ ໄວໜຸ່ມເປັນໃຈກາງຢູ່ໃນລະດັບທ້ອງຖິ່ນ**. ວິທີການຈັດສັນງົບປະມານໂດຍມີປະຊາຊົນເປັນໃຈກາງ ໝາຍເຖິງ ການທີ່ໃຫ້ປະຊາຊົນມີສ່ວນຮ່ວມປະກອບເຂົ້າໃນການອະນຸມັດ,ການປະຕິບັດ, ການກວດສອບ ແລະ ການປະເມີນຜົນງົບປະມານ. ໂຄງການທົດລອງສາມາດໃຫ້ໄວໜຸ່ມຍິງ ແລະ ຊາຍລວມທັງໄວໜຸ່ມທີ່ດ້ອຍໂອກາດ ແລະ ມີຄວາມສ່ຽງ ມີສ່ວນຮ່ວມໃນການກະກຽມ ແລະ ສະໜອງງົບປະມານຢູ່ຂັ້ນແຂວງ ຊາວໜຸ່ມຄວນສາມາດໃຫ້ຄຳແນະນຳໃນການຕັດສິນໃຈຕໍ່ກັບການລົງທຶນໄດ້. ບົດລາຍງານການພັດທະນາມະນຸດໃນທົ່ວໂລກ ປະຈຳປີ 2021/2022 ຊີ້ໃຫ້ເຫັນ ກໍລະນີຂອງເມືອງຄຸດນາໂຮຣາ (Kutna Hora) ຂອງປະເທດເຊັກໂກ, ທີ່ລັດຖະບານທ້ອງຖິ່ນດຳເນີນການຈັດສັນງົບປະມານໃນປີ 2019 ໂດຍໃຫ້ໄວໜຸ່ມ ແລະ ເດັກນ້ອຍມີສ່ວນຮ່ວມ. ມີທັງນັກຮຽນປະຖົມ ແລະ ມັດທະຍົມຕອນປາຍໄດ້ເຂົ້າຮ່ວມ. ແຕ່ລະຊັ້ນຮຽນໄດ້ແຕ່ງຕັ້ງຜູ້ຕາງໜ້າຂຶ້ນນຳສະເໜີໂຄງການໃນນາມຂອງໂຮງຮຽນຂອງຕົນ ເພື່ອຂໍງົບປະມານຈາກຂັ້ນໂຮງຮຽນ ຈົນເຖິງຂັ້ນເທດສະບານ. ຊາວໜຸ່ມເອງກໍ່ຍັງເປັນຜູ້ປະສານງານໃນການຈັດສັນງົບປະມານທ້ອງຖິ່ນ. ບັນດານັກສຶກສາລ້ວນແຕ່ໄດ້ລົງມະຕິໃນການຈັດສັນງົບປະມານໃນຮອບສຸດທ້າຍ ແລະ ໄດ້ນຳໃຊ້ທັດສະນະແນວຄິດຂອງຕົນເອງໂດຍກົງ ເພື່ອປະກອບການຕັດສິນໃຈໃນວຽກງານພັດທະນາ.

## ຂໍ້ສະເໜີແນະທີ 2. ສ້າງການຮ່ວມມືເພື່ອສະໜອງການບໍລິການທີ່ມີຄຸນນະພາບ ແລະ ການແບ່ງປັນຄວາມຮູ້

ບົດລາຍງານສະບັບນີ້ໄດ້ລະບຸຄວາມທ້າທາຍໃນທົ່ວລະບົບ ແລະ ຊ່ອງຫວ່າງທີ່ພົ້ນເດັ່ນ ໃນການສະໜອງການບໍລິການໃນດ້ານການສຶກສາ, ການພັດທະນາສີມືແຮງງານ, ການບໍລິການດ້ານສາທາລະນະສຸກ ແລະ ການສົ່ງເສີມການຈ້າງງານໃຫ້ມີຄວາມພ້ອມໃນອະນາຄົດ. ສາເຫດຂອງຄວາມທ້າທ້າຍຕ່າງໆ ລວມມີ ຄວາມອາດສາມາດທີ່ຈຳກັດດ້ານເຕັກນິກ, ຊັບພະຍາກອນມະນຸດ ແລະ ສະຖາບັນ ລວມເຖິງ ຂໍ້ຈຳກັດທາງດ້ານການເງິນທີ່ຮ້າຍແຮງ. ເພື່ອແກ້ໄຂບັນດາສິ່ງທ້າທາຍດັ່ງກ່າວ, ຂໍ້ສະເໜີນີ້ ແນະນຳໃຫ້ຜັນຂະຫຍາຍບັນດາການຮ່ວມມືໃຫ້ຫຼາກຫຼາຍຂຶ້ນ ເພື່ອເພີ່ມທະວີການຮ່ວມມືກັບພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ, ແລະ ການມີສ່ວນຮ່ວມຂອງຊາວໜຸ່ມ ໃນການບໍລິການ, ຊຸກຍູ້ການປະຕິຮູບນະໂຍບາຍ ແລະ ຄວາມພະຍາຍາມເພື່ອແລກປ່ຽນຄວາມຮູ້ ແລະ ການຮຽນຮູ້ວິທີການແກ້ໄຂບັນຫາດ້ວຍການໃຊ້ທຶນຮອນຕໍ່າ.

— **ສ້າງຊ່ອງທາງໃນການຈັບຄູ່ການລົງທຶນເພື່ອດຶງດູດການມີສ່ວນຮ່ວມຂອງພາກເອກະຊົນໃນການສະໜອງການບໍລິການດ້ານການສຶກສາ, ສາທາລະນະສຸກ ແລະ ວຽກເຮັດງານທຳ**. ບົດລາຍງານສະບັບນີ້ເນັ້ນໜັກວ່າ ແຫຼ່ງທຶນຕົ້ນຕໍຂອງການ ສຶກສາ, ພັດທະນາສີມືແຮງງານ ແລະ ການສົ່ງເສີມສາທາລະນະສຸກຄວນມາຈາກພາກລັດ. ການມີສ່ວນຮ່ວມທີ່ເໝາະສົມຂອງພາກເອກະຊົນ ກໍສາມາດສະໜັບສະໜູນບາງຂົງເຂດບໍລິການໄດ້ ເມື່ອມີການປົກປ້ອງຄຸ້ມຄອງເພື່ອຮັບປະກັນການເຂົ້າເຖິງ ແລະ ຄຸນນະພາບ ແລະ ມີການກວດກາຄັກແນ່ ເພື່ອຫຼີກລ່ຽງບໍ່ໃຫ້ບັນຫາຄວາມບໍ່ເທົ່າທຽມແຜ່ລາມໄປຕື່ມ. ບົດທີ 2, 3 ແລະ 4 ໄດ້ຍົກໃຫ້ເຫັນບາງຂົງເຂດ ທີ່ມີທ່າແຮງສຳລັບການມີສ່ວນຮ່ວມຂອງພາກເອກະຊົນ ເຊັ່ນ: ການສຶກສາກ່ອນໄວຮຽນ, ການສຶກສາລະດັບຊັ້ນສູງ (ປະລິນຍາຕີ-ໂທ-ເອກ, ຯລຯ), ການພັດທະນາທັກສະ ແລະ ອະຊີວະສຶກສາ (TVET) ແລະ ການສະໜອງການບໍລິການດ້ານສາທາລະນະສຸກສະເພາະທາງ. ລັດຖະບານ ສາມາດຮ່ວມມືກັບບໍລິສັດເຕັກໂນໂລຊີ ແລະ ຜູ້ໃຫ້ບໍລິການດ້ານໂທລະຄົມເອກະຊົນ ເພື່ອເລັ່ງການຫັນປ່ຽນການບໍລິການໃຫ້ເປັນທັນສະໄໝ (ດິຈິຕອນ)ພ້ອມນັ້ນ ລັດຖະບານສາມາດສົ່ງເສີມຊ່ອງທາງການຮ່ວມມືລະຫວ່າງບັນດາຫົວໜ່ວຍທຸລະກິດເພື່ອກຳນົດຂະແໜງການທີ່ພ້ອມໃນການມີສ່ວນຮ່ວມ ເພື່ອຍົກລະດັບການລົງທຶນຂອງພາກເອກະຊົນ. ໃນປະຈຸບັນ, UNDP ກຳລັງທົດລອງ ໂຄງການສ້າງແຜນວາດຂອງຜູ້ລົງທຶນດ້ານການພັດທະນາແບບຍືນຍົງ ແລະ ຊ່ອງທາງທີ່ລັດຖະບານສາມາດນຳໃຊ້ເພື່ອດຶງດູດການລົງທຶນຂອງພາກເອກະຊົນ ໃນການພັດທະນາໄວໜຸ່ມ ລວມທັງ ການຫັນເປັນລະບົບທັນສະໄໝ (ດິຈິຕອນ). ລັດຖະບານຍັງສາມາດປັບມາດຕະຖານດ້ານຜົນກະທົບ

ຈາກການພັດທະນາແບບຍືນຍົງ ໃຫ້ແທດເໝາະກັບສະພາບການທ້ອງຖິ່ນ ແລະ ສົ່ງເສີມສິ່ງເຫຼົ່ານີ້ໃນຂະແໜງທຸລະກິດ ແລະ ສະຖາບັນການເງິນຢ່າງກວ້າງຂວາງ.

— **ສົ່ງເສີມເວທີການຮ່ວມມືແບບ ຂັ້ນເທິງ-ລົງ-ລຸ່ມ ແລະ ຈາກ ຂັ້ນລຸ່ມ-ຂຶ້ນ-ເທິງ ເພື່ອສະໜັບສະໜູນການປະຕິຮູບນະໂຍບາຍ ແລະ ວຽກງານສົ່ງເສີມ.** ໃນບົດລາຍງານສະບັບນີ້ມີຫຼາຍບົດ ທີ່ແນະນໍາກ່ຽວກັບການປະຕິຮູບນະໂຍບາຍ ທີ່ລ້ວນແຕ່ ຮຽກຮ້ອງໃຫ້ມີການປັບປ່ຽນບັນດາບັດທັດຖານທາງສັງຄົມ ແລະ ບັນທັດຖານດ້ານບົດບາດຍິງ-ຊາຍ, ລວມທັງ ການລຶບລ້າງທຸກຮູບການຈໍາແນກ. ການຮ່ວມມືຫຼາກຫຼາຍຮູບການ ສາມາດທົດລອງໄດ້ ເພື່ອໃຫ້ຄູ່ຮ່ວມງານພາຍນອກ ສາມາດເພີ່ມຄຸນຄ່າໃຫ້ກັບການປະຕິຮູບທີ່ໄດ້ແນະນໍາໄປຂ້າງຕົ້ນ ແລະ ກະຕຸ້ນຂະບວນການສ້າງຄວາມປ່ຽນແປງທາງສັງຄົມໃນວົງກວ້າງ. ໜຶ່ງຕົວຢ່າງໃນການປະຕິຮູບການສຶກສາແມ່ນ ເຄືອຂ່າຍການຮ່ວມມືລະຫວ່າງ ໂຮງຮຽນ-ທຸລະກິດ-ລັດຖະບານ ເພື່ອທົບທວນ ແລະ ດັດແກ້ຫຼັກສູດໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ອຸດສາຫະກໍາ; ແລະ ວຽກງານໃນອະນາຄົດທີ່ກ່ຽວຂ້ອງກັບ ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT), ທັກສະດິຈິຕອນ, ຂົງເຂດວິທະຍາສາດ, ເຕັກໂນໂລຊີ, ວິສະວະກໍາ ແລະ ຄະນິດສາດ (STEM) ແລະ ການຂະຫຍາຍຕົວສີຂຽວ, ເຊັ່ນດຽວກັນກັບ ການປິດຊ່ອງຫວ່າງທາງດ້ານພາສາ ແລະ ທັກສະຊີວິດ. ການສ້າງການຮ່ວມມືທີ່ແທດເໝາະກັບສະພາບການທ້ອງຖິ່ນ ໃນລະດັບແຂວງ ຫຼື ຂັ້ນເມືອງ ສາມາດເຊື່ອມໂຍງລັດຖະບານທ້ອງຖິ່ນ ເຂົ້າກັບອົງການຈັດຕັ້ງສັງຄົມ ແລະ ໄວໜຸ່ມ ເພື່ອສົ່ງເສີມຄຸນຄ່າຂອງການສຶກສາ ແລະ ການພັດທະນາສີມືແຮງງານ, ສົ່ງເສີມວິຖີຊີວິດທີ່ດີຕໍ່ສຸຂະພາບ ແລະ ລຶບລ້າງມົນທິນທີ່ຕິດພັນກັບສຸຂະພາບຈິດ. ການມີສ່ວນຮ່ວມຂອງຊຸມຊົນແມ່ນຫົວໃຈຫຼັກໃນການປ່ຽນແປງທັດສະນະຄະຕິ ແລະ ພຶດຕິກໍາການຈໍາແນກ.

— ອໍານວຍຄວາມສະດວກໃນການແລກປ່ຽນຄວາມຮູ້ດ້ານການພັດທະນາມະນຸດ ແລະ ການພັດທະນາໄວໜຸ່ມ ທີ່ໃຊ້ທຶນຕໍ່າ. ເນື່ອງຈາກມີຊ່ອງຫວ່າງຫຼາຍດ້ານໃນຄວາມຮູ້ທາງດ້ານວິຊາການ ແລະ ຄວາມອາດສາມາດຂອງສະຖາບັນ, ຄວນມີສູນລວມດ້ານຊັບພະຍາກອນ ເພື່ອອໍານວຍຄວາມສະດວກໃຫ້ແກ່ການແບ່ງປັນຄວາມຮູ້ ແລະ ການຮຽນຮູ້ພາກປະຕິບັດຮ່ວມກັນ. ສູນດັ່ງກ່າວສາມາດດໍາເນີນການໄດ້ໂດຍໄວໜຸ່ມດ້ວຍຄ່າໃຊ້ຈ່າຍທີ່ຕໍ່າ, ໂດຍການສະໜັບສະໜູນຂອງຄູ່ຮ່ວມພັດທະນາ, ສະຖາບັນການສຶກສາ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs) ແລະ ກຸ່ມອາສາສະໝັກ. ສູນດັ່ງກ່າວສາມາດເປັນແຫຼ່ງສໍາລັບການແບ່ງປັນເລື່ອງລາວ, ຂໍ້ມູນ, ວິທີການທີ່ເຮັດຕາມໄດ້ແທ້ ແລະ ໃຫ້ທິດທາງໃນການແກ້ໄຂບັນຫາສະເພາະໃຫ້ແກ່ອົງການຈັດຕັ້ງຂັ້ນແຂວງ. ນອກນັ້ນ, ສູນດັ່ງກ່າວຍັງສາມາດຂະຫຍາຍການແລກປ່ຽນຄວາມຮູ້ ໄປຍັງຜູ້ສະໜອງການບໍລິການ ແລະ ອໍານວຍຄວາມສະດວກລະຫວ່າງໂຮງຮຽນ, ສະຖານທີ່ບໍລິການດ້ານສາທາລະນະສຸກ, ຫນ່ວຍງານ TVET ແລະ ຜູ້ໃຫ້ບໍລິການດ້ານການຈ້າງງານ. ສູນດັ່ງກ່າວ ສາມາດເຮັດວຽກຮ່ວມກັບສະຖາບັນວິຊາການຢ່າງໃກ້ຊິດ ເພື່ອບັນທຶກວິທີການທີ່ໄດ້ຮັບຜົນສໍາເລັດດີ ແລະ ຊີ້ໃຫ້ເຫັນວ່າ ໜ່ວຍງານໃດທີ່ສາມາດສະໜອງການບໍລິການທີ່ມີຄຸນນະພາບ ແລະ ປັບປຸງຕົວຊີ້ວັດດ້ານການພັດທະນາມະນຸດຢູ່ຂັ້ນທ້ອງຖິ່ນໄດ້ຢ່າງພົ້ນເດັ່ນ. ການເຊື່ອມໂຍງກັບລັດຖະບານທ້ອງຖິ່ນ ແລະ ຜູ້ໃຫ້ບໍລິການໃນຕ່າງປະເທດທີ່ກໍາລັງຮັບມືກັບສິ່ງທ້າທາຍທີ່ຄ້າຍຄືກັນ ອາດຊ່ວຍນໍາເອົາທັດສະນະໃໝ່ໆມາສູ່ການພັດທະນານະໂຍບາຍ ແລະ ແນວທາງປະຕິບັດດ້ານການພັດທະນາ.

## ຂໍ້ສະເໜີແນະທີ3: ນໍາໃຊ້ວິທີແກ້ໄຂທີ່ນໍາພາໂດຍໄວໜຸ່ມເພື່ອການພັດທະນາມະນຸດທີ່ຍືນຍົງ

ບົດລາຍງານສະບັບນີ້ສະເໜີໃຫ້ສ້າງຊ່ອງທາງທີ່ມີຄວາມໝາຍ, ມີເປົ້າໝາຍທີ່ຊັດເຈນ ແລະ ກວມເອົາທຸກພາກສ່ວນ ໃຫ້ແກ່ ໄວໜຸ່ມ ເພື່ອໃຫ້ພວກເຂົາສາມາດເຂົ້າຮ່ວມໃນການພັດທະນາລະດັບທ້ອງຖິ່ນ ແລະ ລະດັບຊາດ. ສິ່ງນີ້ຈະເປັນແນວທາງຮັບປະກັນວ່າ ຊາວໜຸ່ມໄດ້ຮັບການປະຕິບັດໃນຖານະເປັນຄູ່ຮ່ວມພັດທະນາ ບໍ່ແມ່ນໃນຖານະເປັນຜູ້ໄດ້ຮັບຜົນປະໂຫຍດ ພຽງເທົ່ານັ້ນ. ໝາກຫົວໃຈຂອງຄວາມສໍາເລັດ ແມ່ນຂຶ້ນກັບຄວາມຄືບໜ້າໃນການສົ່ງເສີມການມີສ່ວນຮ່ວມຂອງບັນດາໄວໜຸ່ມທີ່ດ້ອຍໂອກາດ ຫຼື ມີຄວາມສ່ຽງ, ໄວໜຸ່ມຈາກຊົນນະບົດ ແລະ ຊົນເຜົ່າ, ໄວໜຸ່ມຍິງ,ໄວໜຸ່ມຈາກກຸ່ມທີ່ມີຄວາມຫຼາຍຫຼາຍທາງເພດ LGBTIQI+, ຜູ້ອົບພະຍົບ ລວມໄປເຖິງໄວໜຸ່ມທີ່ມີຄວາມພິການ. ແນວຄິດລິເລີ່ມທີ່ສະເພາະເຈາະຈົງ ເພື່ອສະໜັບສະໜູນການແກ້ໄຂບັນຫາໂດຍໄວໜຸ່ມ ມີດັ່ງຕໍ່ໄປນີ້:

— **ເປີດກວ້າງ ແລະ ເຜີຍແຜ່ ໂຄງການແຂ່ງຂັນນະວັດຕະກໍາໃໝ່ຂອງໄວໜຸ່ມໃຫ້ແກ່ໄວໜຸ່ມໃນທົ່ວທຸກແຂວງ ໂດຍສຸມໃສ່ກຸ່ມຄົນທີ່ດ້ອຍໂອກາດ.** ໂຄງການແຂ່ງຂັນນະວັດຕະກໍາໃຫມ່ຂອງໄວໜຸ່ມ ຊ່ວຍໃຫ້ໄວໜຸ່ມທົ່ວໂລກ ໄດ້ມີໂອກາດນໍາພາການແກ້ໄຂສິ່ງທ້າທາຍດ້ານການພັດທະນາ. ໂຄງການດັ່ງກ່າວບາງສ່ວນ ໄດ້ຖືກຈັດຕັ້ງປະຕິບັດຢູ່ ສປປ ລາວແລ້ວ ປະກອບມີ ໂຄງການການໃຫ້ຄໍາປຶກສາ ແລະ ການບົ່ມເພາະທຸລະກິດທີ່ໃຫ້ຄໍາປຶກສາ ແລະ ແນະນໍາທຸລະກິດໃໝ່ (incubation) ສໍາລັບໄວໜຸ່ມທີ່ມີຫົວຄິດປະດິດສ້າງ ພ້ອມທີມງານ ເພື່ອຜັນຂະຫຍາຍແນວຄວາມຄິດຂອງເຂົາເຈົ້າ ແລະ ນໍາສະເໜີມັນໃຫ້ກັບຜູ້ຊ່ຽວຊານ ແລະ ນັກລົງທຶນ. ຜູ້ຊະນະ ຫຼື ທີມທີ່ຊະນະການແຂ່ງຂັນ ຈະໄດ້ຮັບເງິນທຶນໃນການເລີ່ມຕົ້ນຈັດຕັ້ງປະຕິບັດແນວຄິດນະວັດຕະກໍາຂອງຕົນເອງ. ໂຄງການທີ່ເປັນລະບົບຫຼາຍຂຶ້ນ ສາມາດດຶງເອົາຊັບພະຍາກອນຈາກຄູ່ຮ່ວມພັດທະນາ, ຫົວໜ່ວຍທຸລະກິດ ແລະ ເສດຖີໃຈບຸນ (philanthropists) ມາ ເພື່ອຈັດການແຂ່ງຂັນປະຈໍາປີ, ຂະຫຍາຍການແຂ່ງຂັນໄປສູ່ທ້ອງຖິ່ນ ແລະ ເຂົ້າເຖິງກຸ່ມຜູ້ດ້ອຍໂອກາດ. ໂຈດການແຂ່ງຂັນສາມາດກວມເອົາຫົວຂໍ້ທີ່ລະບຸໃນບົດລາຍງານສະບັບນີ້ ເຊັ່ນ: ການສຶກສາທີ່ມີຄຸນນະພາບ, ການສົ່ງເສີມສຸຂະພາບຈິດ, ການຢຸຕິການໃຊ້ຢາເສບຕິດ ແລະ ການໂຄສະນາຫົວຂໍ້ຄວາມປອດໄພເທິງທ້ອງຖະໜົນ. ຫາກມີໂຄງການທີ່ມາຈາກການແຂ່ງຂັນດັ່ງກ່າວ ປະສົບຜົນສໍາເລັດໃນການຈັດຕັ້ງປະຕິບັດ ມັນມີໂອກາດທີ່ຈະຫັນໂຄງການນັ້ນໆເປັນການລົງທຶນ ໂດຍນໍາໃຊ້ວິທີການລະດົມທຶນຈາກສາທາລະນະຊົນ, ການແຂ່ງຂັນທຸລະກິດສະຕາດອັບ (Start-up) ແລະ ການລະດົມທຶນແບບດັ້ງເດີມຈາກສະຖາບັນການເງິນ ແລະ ນັກລົງທຶນ.

— **ຊຸກຍູ້ໃຫ້ຜູ້ປະກອບການໄວໜຸ່ມນໍາໃຊ້ຮູບແບບທຸລະກິດເພື່ອສັງຄົມ ໂດຍຜ່ານການປັບປຸງການເຂົ້າເຖິງແຫຼ່ງເງິນທຶນ ແລະ ທຸລະກິດສະຕາດອັບ** ວິສາຫະກິດຂະໜາດນ້ອຍ ກວມເຖິງ 90% ຂອງລະບົບນິເວດທຸລະກິດໃນ ສປປ ລາວ, ເຊິ່ງໄດ້ສະໜອງການບໍລິການ, ການຈ້າງງານ ແລະ ລາຍຮັບ ໃຫ້ແກ່ປະຊາກອນສ່ວນໃຫຍ່. ດ້ວຍການສະໜັບສະໜູນທີ່ເໝາະສົມ, ຊາວໜຸ່ມ ສາມາດໃຊ້ຄວາມຄິດສ້າງສັນ ແລະ ຄວາມມີຫົວຄິດປະດິດສ້າງນະວັດຕະກໍາໃໝ່ໆ ມາໃຊ້ສ້າງ ທຸລະກິດທີ່ປະສົບຜົນສໍາເລັດ ທີ່ສ້າງຜົນກະທົບຕໍ່ສັງຄົມ ແລະ ສາມາດແກ້ໄຂບັນດາສິ່ງທ້າທາຍຫຼາຍຢ່າງທີ່ໄດ້ອະທິບາຍໄວ້ໃນບົດລາຍງານສະບັບນີ້. ອີງຕາມບົດລາຍງານປີ 2017 ຂອງຄະນະກໍາມະການທຸລະກິດ ແລະ ການພັດທະນາແບບຍືນຍົງ, ຮູບແບບທຸລະກິດໃໝ່ໆທີ່ເນັ້ນຄວາມຍືນຍົງ ກໍ່ໃຫ້ເກີດມີນະວັດຕະກໍາ ແລະ ເຕັກໂນໂລຊີໃໝ່ໆໄດ້. ຮອດປີ 2030, ຄາດວ່າ ພວກເຂົາຈະສາມາດສ້າງໂອກາດທາງດ້ານເສດຖະກິດທີ່ມີມູນຄ່າເຖິງ 1.200 ຕື້ໂດລາສະຫະລັດ ແລະ ສ້າງວຽກເຮັດງານທໍາໃຫ້ແກ່ 380 ລ້ານຄົນ ໃນທົ່ວໂລກ, ເຊິ່ງ ສ່ວນໃຫຍ່ຈະຢູ່ໃນບັນດາປະເທດກໍາລັງພັດທະນາ. ໂຄງການທຸລະກິດສະຕາດອັບ (Start-up) ສາມາດຊ່ວຍໃຫ້ໄວໜຸ່ມ ປ່ຽນແນວຄວາມຄິດໃຫ້ກາຍເປັນໂຄງການທີ່ຈັດຕັ້ງໄດ້ແທ້ ບົນພື້ນຖານການໄດ້ຮັບຄໍາປຶກສາ, ການຝຶກອົບຮົມທີ່ຊ່ວຍບົ່ມເພາະພວກເຂົາຢ່າງເໝາະສົມ ແລະ ຄວາມສາມາດເຂົ້າເຖິງແຫຼ່ງທຶນ. ກອງທຶນວິສາຫະກິດຂະໜາດນ້ອຍ ແລະ ກາງຂອງລັດຖະບານ ແລະ ສະຖາບັນການເງິນທີ່ສົ່ງເສີມທຸລະກິດເພື່ອສັງຄົມ ສາມາດເປັນແຫຼ່ງທຶນໄດ້. ວຽກງານທຸລະກິດສະຕາດອັບ (Start-up) ສາມາດສຸມໃສ່ການສຶກສາ, ການພັດທະນາທັກສະ, ການບໍລິການດ້ານສາທາລະນະສຸກ ແລະ ການຈ້າງງານ ໂດຍມີເປົ້າໝາຍເພື່ອທົດສອບຮູບແບບທຸລະກິດ ສາມາດຂະຫຍາຍຕົວໃນວົງກວ້າງ ແລະ ເຂົ້າເຖິງເຂດຫ່າງໄກສອກຫຼີກ ແລະ ຊົນນະບົດ.

## ຂໍ້ສະເໜີແນະທີ 4: ຮັບປະກັນວ່າເຍົາວະຊົນ ແລະ ໄວໜຸ່ມ ສາມາດກ້າວໄປສູ່ການເປັນຜູ້ໃຫຍ່ໄດ້ທ່າມກາງ ເຫດການທີ່ບໍ່ປາຖະໜາ ແລະ ຄວາມບໍ່ແນ່ນອນ.

ເຫດການທີ່ບໍ່ປາຖະໜາຕ່າງໆ ສົ່ງຜົນກະທົບຕໍ່ໄວໜຸ່ມໃນ ສປປ ລາວ. ເຫດການເຫຼົ່ານັ້ນ ເຮັດໃຫ້ຄວາມແຕກໂຕນທາງດ້ານເສດຖະກິດ-ສັງຄົມ ແລະ ດ້ານການພັດທະນາມະນຸດ ລະຫວ່າງບັນດາແຂວງຕ່າງໆ, ລະຫວ່າງຊົນນະບົດ ແລະ ຕົວເມືອງ ທີ່ມີຢູ່ກ່ອນແລ້ວ ຍິ່ງເພີ່ມທະວີຄວາມຮຸນແຮງຂຶ້ນໄປອີກ; ເຊັ່ນດຽວກັບບັນຫາຄວາມເສຍປຽບຂອງໄວໜຸ່ມບັນດາເຜົ່າ, ໄວໜຸ່ມຍິງ, ກຸ່ມ LQBTQI+, ຜູ້ອົບພະຍົບ ແລະ ໄວໜຸ່ມທີ່ມີຄວາມພິການໄດ້ປະສົບ. ປະຊາຊົນມີຄວາມຮູ້ສຶກບໍ່ປອດໄພຫຼາຍຂຶ້ນຍ້ອນ "ຄວາມບໍ່ແນ່ນອນທີ່ຊັບຊ້ອນ" ທີ່ປະກົດຢູ່ໃນທົ່ວໂລກ. ບົດລາຍງານສະບັບນີ້ແນະນໍາໃຫ້ເພີ່ມທະວີການພັດທະນາມະນຸດໃຫ້ຫຼາຍຂຶ້ນເພື່ອໃຫ້ໝັ້ນໃຈວ່າ ໄວໜຸ່ມ ມີຄວາມສາມາດ ແລະ ຄວາມໂຢ່ນຍານ ໃນການຮັບມືກັບສະຖານະການທີ່ມີຄວາມຫຍຸ້ງຍາກນີ້.

— **ຄຸ້ມຄອງການຫັນເປັນທັນສະໄໝ ເພື່ອເສີມຂະຫຍາຍຄວາມສາມາດໃນການພັດທະນາມະນຸດຂອງເຍົາວະຊົນ ແລະ ໄວໜຸ່ມ.** ການຫັນເປັນທັນສະໄໝ ສາມາດຂະຫຍາຍຂອບເຂດຄວາມເປັນໄປໄດ້ຂອງໄວໜຸ່ມໂດຍສະເພາະໄວໜຸ່ມທີ່ດ້ອຍໂອກາດ. ໂດຍຜ່ານເຕັກໂນໂລຊີເພື່ອການສຶກສາ ແລະ ສຸຂະພາບອອນລາຍ (e-learning & e-health), ການພັດທະນາທັກສະອອນລາຍ, ການບໍລິການສຸຂະພາບຈິດຜ່ານຊ່ອງທາງດິຈິຕອນ, ການຄ້າທາງເອເລັກໂຕຣນິກ (e-commerce) ແລະ ການເຮັດວຽກທາງໄກ. ການຫັນເປັນທັນສະໄໝ ສາມາດຊ່ວຍສົ່ງເສີມຄວາມຫຼາກຫຼາຍ, ບົດບາດ ແລະ ສິດທິຂອງໄວໜຸ່ມ.ໃນເວລາດຽວກັນ, ຍຸກດິຈິຕອນໄດ້ສ້າງຄວາມແຕກແຍກດ້ານດິຈິຕອນ ລະຫວ່າງຜູ້ທີ່ເຂົ້າເຖິງ ແລະ ເຂົ້າບໍ່ເຖິງ; ຍັງມີການເປີດເຜີຍຂໍ້ມູນທີ່ບໍ່ຖືກຕ້ອງ ອັນສົ່ງຜົນກະທົບຕໍ່ທັດສະນະ


©UNFPA Laos



**ການປັບປ່ຽນວັດທະນະທຳດ້ານການບໍລິຫານຈັດການແມ່ນຈຳເປັນຢ່າງຍິ່ງ. ໝາຍຄວາມວ່າ ຕ້ອງຫັນປ່ຽນຈາກການສຸມໃສ່ຜູ້ກຳນົດນະໂຍບາຍ ແລະ ການບໍລິຫານລັດໄປສູ່ການເນັ້ນໜັກໃສ່ການຈັດຕັ້ງປະຕິບັດ ແລະ ການແຊກແຊງຊ່ວຍເຫຼືອອັນເປັນຮູບປະທຳທີ່ນຳມາເຊິ່ງຜົນໄດ້ຮັບທີ່ແທ້ຈິງ.**

ຄະຕິຕໍ່ການສຶກສາ, ສຸຂະພາບ, ການຈ້າງງານ ແລະທາງເລືອກດ້ານການເມືອງ. ບັນຫາເຫຼົ່ານີ້ ສາມາດນຳໄປສູ່ການເກີດບັນຫາສຸຂະພາບຈິດ ທີ່ເປັນໄພຄຸກຄາມ ຕໍ່ເຍົາວະຊົນ ແລະ ໄວໜຸ່ມຈຳນວນຫຼາຍ. ລັດຖະບານແຫ່ງ ສປປ ລາວ ຄວນຄຸ້ມຄອງການຫັນເປັນທັນສະໄໝ ຢ່າງລະມັດລະວັງ ໂດຍສຸມໃສ່ ດ້ານນະໂຍບາຍ, ລະບຽບການ ແລະ ແຮງຈູງໃຈທາງດ້ານດິຈິຕອນ ໃຫ້ເພີ່ມພູນຜົນກະທົບທາງບວກ ແລະ ຫຼຸດຜ່ອນຜົນກະທົບທາງລົບໃຫ້ໄດ້ຫຼາຍທີ່ສຸດ.

— **ສ້າງຄວາມຮັບຮູ້, ຄວາມຊ່ຽວຊານ ແລະ ຄວາມສາມາດໃນການກຽມຄວາມພ້ອມລ່ວງໜ້າ ພາຍໃນກົງຈັກລັດຖະບານ ເພື່ອຕອບສະໜອງຕໍ່ສະພາບການຄວາມບໍ່ແນ່ນອນທີ່ສະຫຼັບຊັບຊ້ອນ ແລະ ເຫດການທີ່ບໍ່ປາຖະໜາທີ່ຈະເກີດຂຶ້ນໃນອະນາຄົດ, ລວມທັງສິ່ງທີ່ກ່ຽວຂ້ອງກັບການປ່ຽນແປງທາງດິນຟ້າອາກາດ.** ໝາຍຄວາມວ່າ ປ່ຽນຈາກການນຳໃຊ້ຂະບວນການວາງແຜນແບບເກົ່າທີ່ໃຊ້ບໍ່ໄດ້ຜົນ ເມື່ອຕົກຢູ່ໃນຍາມວິກິດ ແລະ ຍາມປະເຊີນກັບໄພຂົ່ມຂູ່ ແລະ ນຳໃຊ້ການວິເຄາະຍຸດທະສາດໃນການວາງນະໂຍບາຍ ເພື່ອຄາດຄະເນທ່າອ່ຽງ ແລະ ກຽມພ້ອມຮັບມືການປ່ຽນແປງຢ່າງກະທັນຫັນ ທີ່ສົ່ງຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມ. ຜູ້ວາງນະໂຍບາຍຕ້ອງມີຄວາມຕື່ນຕົວຮັບຮູ້ເຖິງຂອບເຂດຂອງຄວາມບໍ່ແນ່ນອນທີ່ສະຫຼັບຊັບຊ້ອນ, ຄວາມປົກກະຕິໃນຮູບແບບໃໝ່ຂອງໂຄວິດ-19 ແລະ ຜົນກະທົບທີ່ຈະເກີດຂຶ້ນໃນອະນາຄົດທີ່ຕິດພັນກັບການປ່ຽນແປງຂອງດິນຟ້າອາກາດ. ປະຊາຊົນ ລວມທັງໄວໜຸ່ມ, ສາມາດຈະເລີນເຕີບໂຕໃນທ່າມກາງຄວາມບໍ່ແນ່ນອນໄດ້ ຖ້າຫາກວ່າ ມີຍຸດທະສາດທີ່ຊ່ວຍເລືອກຫົນທາງທີ່ເໝາະສົມສຳລັບອະນາຄົດ. ການຝຶກອົບຮົມ, ການເກັບກຳຂໍ້ມູນ ແລະ ຫຼັກຖານຢ່າງສະໝ່ຳສະເໝີ, ການເຜີຍແຜ່ຄວາມຮູ້ກ່ຽວກັບຄວາມສ່ຽງ ແລະ ຜົນກະທົບຂອງມັນຕໍ່ໄວໜຸ່ມແມ່ນສຳຄັນ ລວມທັງການຄາດການວຽກງານໃນອະນາຄົດທີ່ມີວິວັດທະນາການອັນວ່ອງໄວ.

— **ນຳໃຊ້ທ່າແຮງຂອງຜູ້ນຳໄວໜຸ່ມ ແລະ ການເຄື່ອນໄຫວໃນໂຮງຮຽນ, ຊຸມຊົນ ແລະ ບ່ອນເຮັດວຽກ.** ໂຄງການພັດທະນາໄວໜຸ່ມຄວນກຽມຄວາມພ້ອມໃຫ້ໄວໜຸ່ມເຂົ້າໃຈຄວາມເປັນຈິງໃນຮູບແບບໃຫມ່ ແລະ ມີຄວາມໂຍ່ນຍານເພື່ອໃຫ້ສາມາດຮັບມືກັບສະຖານະການບໍ່ປາຖະໜາ. ພວກເຂົາຕ້ອງການທັກສະແຫ່ງສະຕະວັດທີ 21 ເພື່ອຈັດການກັບຂໍ້ມູນຂ່າວສານ, ເປີດຮັບສື່ສັງຄົມອອນລາຍ, ຄິດໃນເຊີງວິເຄາະ, ແກ້ໄຂຂໍ້ຂັດແຍ່ງ, ຝຶກຝົນສະຕິປັນຍາທາງດ້ານສັງຄົມ ແລະ ຈິດໃຈ ໃຫ້ສະຫຼຽວສະຫຼາດ ແລະ ອື່ນໆ.

ບັນດາໂຄງການ ສາມາດສົ່ງເສີມບົດບາດຂອງໄວໜຸ່ມ ໂດຍຜ່ານການເຄື່ອນໄຫວທາງສັງຄົມ (ທາງແບບອອນລາຍ ແລະ ແບບເຊິ່ງໜ້າ), ຜ່ານການສົ່ງເສີມຄວາມຄິດສ້າງສັນ, ນະວັດຕະກຳ ແລະ ການຟື້ນຟູວັດທະນະທຳ. ຂັ້ນຕອນດັ່ງກ່າວນີ້ ສາມາດປະກອບສ່ວນເຂົ້າໃນການປ່ຽນແປງທັດສະນະຄະຕິຂອງສັງຄົມໃນວົງກວ້າງ ແລະ ກະກຽມສຳລັບທຸກໆຄວາມບໍ່ແນ່ນອນໃນອະນາຄົດ.



ສປປ ລາວ ຍັງພໍມີເວລາທີ່ຈະແກ້ໄຂ ບັນຫາດັ່ງກ່າວ ຫາກແຕ່ການປັບປຸງ ຄັ້ງໃໝ່ນີ້ ຕ້ອງໄດ້ມີແຜນດຳເນີນການ ທີ່ຮີບດ່ວນ, ສາມາດລົງມືປະຕິບັດ ໄດ້ແທ້ ແລະ ກວມເອົາທຸກພາກສ່ວນ.





# ເອກະສານ ຊ້ອນທ້າຍ

# ເອກະສານຊ້ອນທ້າຍ 1: ວິທີການວິທະຍາການສຳຫຼວດແບບຊ່ອງໜ້າ ແລະ ອອນລາຍ

## ການສຳຫຼວດແບບຊ່ອງໜ້າ

**1. ວິທີການກຳນົດກຸ່ມຕົວແທນ**
ໄດ້ດຳເນີນການສຳຫຼວດແບບຊ່ອງໜ້າ ກັບໄວໜຸ່ມໃນກຸ່ມອາຍຸ 15 ເຖິງ 24 ປີ ຈາກຈຳນວນ 1,200 ຄົວເຮືອນ ໃນທົ່ວທັງສາມພາກ ຄື: ພາກເໜືອ, ພາກກາງ ແລະ ພາກໃຕ້ຂອງລາວ ໃນໄລຍະເດືອນກຸມພາ ເຖິງ ເມສາ 2022. ສຳລັບການກຳນົດກຸ່ມຕົວແທນແຂວງຈາກທັງສາມພາກ, ການກຳນົດກຸ່ມຕົວແທນເມືອງຈາກແຂວງຕົວແທນ, ການກຳນົດກຸ່ມຕົວແທນບ້ານຈາກເມືອງຕົວແທນ, ການກຳນົດກຸ່ມຕົວແທນຄົວເຮືອນ ຕະຫຼອດເຖິງຜູ້ຕອບການສຳພາດ ຈາກບ້ານຕົວແທນ ແມ່ນໄດ້ນຳໃຊ້ເຕັກນິກຄວາມອາດເປັນໄປໄດ້ຕາມສັດສ່ວນຂະໜາດປະຊາກອນ (PPS) (ຕາຕະລາງ A.1).

ເຕັກນິກ PPS ເປັນຂັ້ນຕອນການກຳນົດກຸ່ມຕົວແທນ ເຊິ່ງຄວາມອາດເປັນໄປໄດ້ທີ່ຫົວໜ່ວຍໃດໜຶ່ງ ຈະຖືກຄັດເລືອກເຂົ້າໃນກຸ່ມຕົວແທນ ແມ່ນໄປຕາມສັດສ່ວນຂອງຂະໜາດຫົວໜ່ວຍສຸດທ້າຍ ໂດຍທີ່ວ່າ: ກຸ່ມຂະໜາດໃຫຍ່ກວ່າ ມີຄວາມອາດເປັນໄປໄດ້ສູງ ກ່ວາທີ່ຈະຖືກຄັດເລືອກ ແລະ ກຸ່ມຂະໜາດນ້ອຍກ່ວາ ມີຄວາມອາດເປັນໄປໄດ້ຕ່ຳກ່ວາທີ່ຈະຖືກຄັດເລືອກເຂົ້າໃນກຸ່ມຕົວແທນ.ຕົວຢ່າງ: ການຄັດເລືອກສອງແຂວງຕົວແທນຈາກແຕ່ລະພາກ ແມ່ນໄປຕາມຂັ້ນຕອນຄືດັ່ງຕໍ່ໄປນີ້:

1) ແຍກປະຊາກອນໄວໜຸ່ມລາວ ອອກເປັນສາມກຸ່ມ ຄື: ພາກເໜືອ, ພາກກາງ ແລະ ພາກໃຕ້. ຂັ້ນຕອນດັ່ງຕໍ່ໄປນີ້ ແມ່ນນຳໃຊ້ກັບແຕ່ລະພາກ.
2) ຂຶ້ນບັນຊີແຂວງ ແລະ ປະຊາກອນໄວໜຸ່ມຂອງແຂວງ ລົງໃສ່ຖັນແຍກກັນ.
3) ຄິດໄລ່ຊ່ອງວ່າງກຸ່ມຕົວແທນ (SI) ຂອງແຕ່ລະພາກ ດ້ວຍການຫານປະຊາກອນໄວໜຸ່ມໃນແຕ່ລະພາກ ໃຫ້ 2 – ສອງຄືຕົວເລກແຂວງຕົວແທນຈາກແຕ່ລະພາກ.
4) ຊຸ່ມເລືອກຕົວເລກເລີ່ມຕົ້ນ (RS) ລະຫວ່າງ 1 ຫາຄ່າ SI. ໃນຕາຕະລາງເອັກເຊວ, ສາມາດເຮັດໄດ້ໂດຍນຳໃຊ້ສູດ: = rand()*SI.
5) ຄິດໄລ່ສອງຊຸດຂໍ້ມູນ: ຊຸດຂໍ້ມູນ 1 = RS; ຊຸດຂໍ້ມູນ 2 = RS + SI.
6) ວາງຊຸດຂໍ້ມູນທີ່ຄິດໄລ່ແລ້ວ ທຽບໃສ່ຂະໜາດປະຊາກອນສະສົມໃກ້ຄຽງສຸດໃນແຕ່ລະແຂວງ.
7) ຄັດເລືອກສອງແຂວງຕົວແທນຈາກແຕ່ລະພາກ ບົນພື້ນຖານຂະໜາດປະຊາກອນສະສົມຂອງແຂວງທີ່ໃກ້ຄຽງສຸດກັບ ຊຸດຂໍ້ມູນ 1 ແລະ 2.

ສຳລັບການຄັດເລືອກເມືອງ ແລະ ບ້ານຕົວແທນ ກໍນຳໃຊ້ຂັ້ນຕອນດຽວກັນຂອງເຕັກນິກ PPS. ສ່ວນການຄັດເລືອກຄົວເຮືອນຕົວແທນ ປະກອບມີສອງຂັ້ນຕອນຄື: ຈຸດເລີ່ມຕົ້ນຂອງບ້ານ ແລະ ກົດມືຂວາ. ຈຸດເລີ່ມຕົ້ນຂອງບ້ານ ແມ່ນເອົາຕາມບັນດາຄຸນລັກສະ ນະເດັ່ນຂອງບ້ານ. ຕົວຢ່າງສົມມຸດວ່າ: ຄຸນລັກສະນະເດັ່ນຂອງບ້ານແມ່ນ ວັດ ແລະ ໃນບ້ານດັ່ງກ່າວ ມີວັດຫຼາຍແຫ່ງ ແມ່ນໃຫ້ເລືອກເອົາວັດໃຫຍ່ສຸດໃນບ້ານ ເປັນຈຸດເລີ່ມຕົ້ນຂອງບ້ານ. ແລ້ວຈາກນັ້ນ, ຜູ້ສຳພາດພາກສະໜາມ (FIs) ຈະດຳເນີນການເກັບກຳຂໍ້ມູນ ດ້ວຍການ

### ຕາຕະລາງ .1: ການແຈກຢາຍບ້ານ ແລະ ຄົວເຮືອນຕົວແທນຕາມພາກ

ແຫຼ່ງຂໍ້ມູນ: ບໍລິສັດ ອິນໂດຊາຍນາ ຣີເຊີດ ລາວ ຈຳກັດ (Indochina Research Laos Co. Ltd)

| | ຂະໜາດກຸ່ມຕົວແທນ | | | | |
|---|---|---|---|---|---|
| | ຕົວເມືອງ | ຊົນນະບົດ | ສອກຫຼີກ | ບ້ານ | ຄົວເຮືອນ |
| **ພາກເໜືອ** | 11 | 23 | 5 | 39 | 39*10 = 390 |
| **ພາກກາງ** | 21 | 32 | 2 | 55 | 55*10 = 550 |
| **ພາກໃຕ້** | 6 | 17 | 3 | 26 | 26*10 = 260 |
| **ທັງໝົດ** | 38 | 72 | 10 | 120 | 120*10 = 1.200 |

ເຄື່ອນຍ້າຍໄປອ້ອມໆບ້ານຕາມກົດມືຂວາ ຫຼື ເຄື່ອນໄປຕາມເບື້ອງຂວາມື ໂດຍອາໄສແຜນທີ່ບ້ານເປັນບ່ອນອີງ. ຖ້າຫາກບໍ່ມີແຜນທີ່ບ້ານ,ໃນຂະບວນການຈັດຕັ້ງປະຕິບັດການສຳຫຼວດ, ທາງ FIs ຈະສ້າງແຜນທີ່ເສັ້ນທາງເດີນສຳຫຼວດຂອງເຂົາເຈົ້າ. ແຜນທີ່ທີ່ຖືກສ້າງຂຶ້ນ ແມ່ນເອົາປະກອບສົມທົບໃສ່ວຽກຄວບຄຸມຄຸນນະພາບຂອງການສຳຫຼວດ ເຊັ່ນ: ການກວດຄືນຫຼັງ. ຫຼັງຄັດເລືອກຄົວເຮືອນຕົວແທນແລ້ວ, ທາງ FIs ກໍຈະດຳເນີນການສຳພາດສາມະຊິກຄົວເຮືອນໃນກຸ່ມອາຍຸ 15 ເຖິງ 24 ປີ ທີ່ມີໜ້າຢູ່ຄົວເຮືອນ ໃນເວລາຜູ້ສຳພາດເດີນທາງຮອດຄົວເຮືອນກ່ຽວຂ້ອງ. ອີກຢ່າງ, ການອອກແບບການສຳຫຼວດຄັ້ງນີ້ ແມ່ນຮັບປະກັນຈຳນວນຜູ້ຕອບສຳພາດເພດຍິງ ແລະ ຊາຍໃນຈຳນວນເທົ່າກັນ.

**2. ການກະກຽມວຽກສຳຫຼວດພາກສະໜາມ**
ອົງການ UNDP ໄດ້ປະສານສົມທົບ ກັບ ອົງການລັດທີຮັບຜິດຊອບ ເພື່ອອອກຂໍ້ຕົກລົງອະນຸຍາດໃຫ້ຈັດຕັ້ງປະຕິບັດການສຳຫຼວດດັ່ງກ່າວ. ຈາກນັ້ນ ແມ່ນສົ່ງຂໍ້ຕົກລົງອະນຸຍາດ ໃຫ້ຫ້ອງການປົກຄອງແຂວງ ເພື່ອແຈ້ງທຸກຂະແໜງການກ່ຽວຂ້ອງຂັ້ນແຂວງໃຫ້ຮັບຮູ້ກ່ຽວກັບການຈັດຕັ້ງປະຕິບັດການສຳຫຼວດຄັ້ງນີ້ (ຕ.ຢ: ແຈ້ງໃຫ້ຮູ້ກ່ຽວກັບຈຸດປະສົງການສຳຫຼວດ, ບັນຊີລາຍຊື່ແຂວງກຸ່ມຕົວແທນ, ເມືອງກຸ່ມຕົວແທນ ແລະ ບ້ານກຸ່ມຕົວແທນ, ຕະຫຼອດເຖິງວັນທີມື້ລົງສຳພາດ) ໂດຍຜູ້ຈັດຕັ້ງປະຕິບັດການສຳຫຼວດພາກສະໜາມແມ່ນ ບໍລິສັດ ອິນໂດຊາຍນາ ຣີເຊີດ ລາວ (IRL). ສຳລັບທຸກຂະແໜງການກ່ຽວຂ້ອງຂັ້ນແຂວງ ແມ່ນສືບຕໍ່ແຈ້ງໃຫ້ທຸກພາກສ່ວນພາຍໃນຂະແໜງການຂອງຕົນຢູ່ຂັ້ນເມືອງ ໄດ້ຮັບຮູ້ກ່ຽວກັບການຈັດຕັ້ງປະຕິບັດການສຳຫຼວດ. ຕໍ່ມາ ທີມເກັບກຳຂໍ້ມູນຂອງບໍລິສັດ IRL ຈິ່ງປະສານສົມທົບກັບອຳນາດການປົກຄອງເມືອງ ເພື່ອຂຶ້ນແຜນລົງສຳຫຼວດຢູ່ທຸກບ້ານເປົ້າໝາຍ. ສຸດທ້າຍ, ອຳນາດການປົກຄອງເມືອງໄດ້ແຈ້ງອຳນາດການປົກຄອງບ້ານ ໃຫ້ຮັບຮູ້ກ່ຽວກັບການຈັດຕັ້ງປະຕິບັດການສຳຫຼວດດັ່ງກ່າວ ພ້ອມທັງໄດ້ສົ່ງວິຊາການຂັ້ນເມືອງລົງສົມທົບທີມເກັບກຳຂໍ້ມູນຂອງບໍລິສັດ IRL ເພື່ອຊ່ວຍທີມເກັບກຳຂໍ້ມູນ ໃນການນັດໝາຍກັບບ້ານເປົ້າໝາຍກ່ຽວກັບເວລາເຮັດວຽກ ຕະຫຼອດເຖິງ ຊ່ວຍອຳນວຍຄວາມສະດວກໃຫ້ທີມເກັບກຳຂໍ້ມູນ ໃຫ້ສາມາດເຂົ້າເຖິງບ້ານເປົ້າໝາຍໃນເຂດຫ່າງໄກສອກຫຼີກ.

**3. ການຄວບຄຸມຄຸນນະພາບ**
ບໍລິສັດ IRL ໄດ້ດຳເນີນການຄວບຄຸມຄຸນນະພາບຂໍ້ມູນການສຳຫຼວດ ທັງຢູ່ຂັ້ນພາກສະໜາມ ແລະ ຂັ້ນຫ້ອງການຂອງບໍລິສັດ. ຢູ່ພາກສະໜາມໄດ້ນຳໃຊ້ສາມວິທີ ເພື່ອຄວບຄຸມຄຸນນະພາບຂໍ້ມູນ. ວິທີທີໜຶ່ງ, ວິຊາການຄຸ້ມຄອງການສຳຫຼວດພາກສະໜາມ ຊຸ່ມເຂົ້າຮ່ວມການສຳພາດ 10% ຂອງຈຳນວນການສຳພາດທັງໝົດ ທີ່ຈັດຕັ້ງປະຕິບັດໂດຍນັກເດີນສຳພາດແຕ່ລະຄົນພາຍໃນທີມຕົນເອງຄຸ້ມຄອງ, ພ້ອມທັງໃຫ້ຄຳຄິດເຫັນ ແລະ ແນະນຳນັກເດີນສຳພາດ ຕາມຄວາມເໝາະສົມ. ວິທີທີສອງ, ຫົວໜ້າໂຄງການ ແລະ ຫົວໜ້າຄຸ້ມຄອງການສຳຫຼວດພາກສະໜາມ ຍັງຊຸ່ມເຂົ້າຮ່ວມໄລຍະຕົ້ນ, ໄລຍະກາງ ແລະ ໄລຍະທ້າຍຂອງການສຳຫຼວດ ແລ້ວລາຍງານຜົນການລົງສັງເກດການສຳຫຼວດຢູ່ພາກສະໜາມ ໃຫ້ ອົງການ UNDP. ວິທີທີສາມ, ວິຊາການຄຸ້ມຄອງການສຳຫຼວດພາກສະໜາມ, ວິຊາການຄວບຄຸມຄຸນນະພາບຂໍ້ມູນ ແລະ ຫົວໜ້າຄຸ້ມຄອງການສຳຫຼວດພາກສະໜາມ ຍັງຕິດຕາມເສັ້ນທາງເດີນສຳຫຼວດ ແລະ ຈຸດພິກັດຂອງນັກເດີນສຳຫຼວດ ພາຍໃນສອງສາມມື້ຂອງການສຳຫຼວດ ໂດຍນຳໃຊ້ລະບົບຕິດຕາມ GPS ທີ່ມີໃນເຊີບເວີຄລາວ (ຮູບສະແດງ A.1). ການຕິດຕາມດັ່ງກ່າວ ມີເປົ້າໝາຍ ເພື່ອກວດເບິ່ງວ່າ: ການປະຕິບັດແຜນເກັບກຳຂໍ້ມູນພາກສະໜາມ ນັ້ນແມ່ນ ນັກເດີນສຳຫຼວດ ລົງບ້ານເປົ້າໝາຍແທ້, ບໍ່ໄດ້ຂ້າມ ຫຼື ປ່ຽນບ້ານເປົ້າໝາຍ.

ສ່ວນການຄວບຄຸບຄຸນນະພາບຂໍ້ມູນ ຢູ່ຂັ້ນຫ້ອງການບໍລິສັດ ແມ່ນນຳໃຊ້ສອງວິທີ. ວິທີທີໜຶ່ງ, ວິຊາການຄຸ້ມຄອງການສຳຫຼວດພາກສະໜາມ ກວດ 10% ຂອງທຸກຂໍ້ມູນບັນທຶກສຽງໃນໄລຍະການສຳພາດ. ວິທີທີສອງ, ທີມຄວບຄຸມຄຸນນະພາບຂໍ້ມູນຢູ່ຫ້ອງການ IRL ກວດ 30% ຂອງທຸກຂໍ້ມູນບັນທຶກສຽງທີ່ຕອບບາງຄຳຖາມໃນແບບສອບ

### ຮູບສະແດງ .1: ລະບົບຕິດຕາມຂອງນັກເດີນສຳຫຼວດ

ແຫຼ່ງຂໍ້ມູນ: ບໍລິສັດອິນໂດຊາຍນາ ຣີເຊີດ ລາວ ຈຳກັດ (Indochina Research Laos Co. Ltd)



ຖາມ. ທຸກຂໍ້ມູນບັນທຶກສຽງການສຳພາດ ແມ່ນມີພ້ອມສະໜອງໃຫ້ເພື່ອຮັດບໃຊ້ຈຸດປະສົງການທົບທວນ ຍ້ອນວ່າ ບໍລິສັດ IRL ນຳໃຊ້ລະບົບແທບແບັດເກັບກຳຂໍ້ມູນແບບທັນສະ ໄໝ (ລະບົບເຊີເວທູໂກ-SurveyToGo) ເຂົ້າໃນການເກັບກຳຂໍ້ມູນສຽງໃນໄລຍະສຳພາດ. ຟາຍຂໍ້ມູນບັນທຶກສຽງ ແລະ ຂໍ້ມູນການສຳພາດ ແມ່ນໄດ້ອັບໂລດເຂົ້າໃນເຊີເວີ້ຄລາວ ພາຍໃນສອງສາມມື້ ຫຼັງສິ້ນສຸດການສຳພາດ.

**4. ການທຳຄວາມສະອາດຂໍ້ມູນ ແລະ ຮູບແບບຂໍ້ມູນ**
ຂໍ້ມນທີ່ໄດ້ຈາກການສຳຫຼວດ ໄດ້ຮັບການກວດຜ່ານ ດ້ວຍການລະບຸຂໍ້ມູນທີ່ຂາດຫາຍ ຫຼື ຂໍ້ມູນທີ່ໄດ້ບາງສ່ວນ, ການວິເຄາະຂໍ້ມູນທີ່ຢູ່ນອກຂອບ ແລະ ເຮັດການສົມທຽບຫຼາຍຕົວປ່ຽນ. ສຳລັບຄຳຕອບສະເພາະຕໍ່ຄຳຖາມເປີດ ແມ່ນໄດ້ລົງລະຫັດເປັນຕົວເລກ ໂດຍລວມເອົາຄຳຕອບທີ່ຄ້າຍຄືກັນ ເຂົ້າເປັນກຸ່ມເປັນລະຫັດຕົວເລກດຽວ. ຊຸດຂໍ້ມູນທີ່ໄດ້ຮັບການທຳຄວາມສະອາດແລ້ວ ແມ່ນຢູ່ໃນຮູບແບບຂໍ້ມູນສະຕາຕາ (Stata), SPSS, ແລະ csv. ທຸກຕົວປ່ຽນ ແມ່ນກຳນົດຢູ່ໃນຮູບຕົວອັກສອນຂຽນນ້ອຍ ເພື່ອສະດວກໃນການວິເຄາະ.

## ການສຳຫຼວດອອນລາຍ

ໄດ້ເຮັດການສຳຫຼວດອອນລາຍກັບໄວໜຸ່ມຈຳນວນ 5,590 ຄົນ ຈາກ 17 ແຂວງ ໃນໄລຍະເດືອນກຸມພາ ເຖິງ ເດືອນເມສາ 2022. ການສຳຫຼວດດັ່ງກ່າວ ແມ່ນແນໃສ່ເກັບຂໍ້ມູນກ່ຽວກັບການມີວຽກເຮັດງານທຳ, ການເຂົ້າເຖິງບໍລິການສຶກສາ, ສາທາ ແລະ ການເຂົ້າຮ່ວມຊີວິດສັງຄົມຂອງໄວໜຸ່ມ. ການຄັດເລືອກຜູ້ເຂົ້າຮ່ວມການສຳຫຼວດ ແມ່ນຄັດເລືອກບົນພື້ນຖານທາງເລືອກການກຳນົດກຸ່ມເປົ້າໝາຍສະເພາະທີ່ສະໜອງໃຫ້ໂດຍບັນດາເວັບໄຊ້ໂຊສະນາຕ່າງໆ. ບາງຕົວຢ່າງທາງເລືອກກຳນົດກຸ່ມເປົ້າໝາຍສະເພາະທີ່ກ່າວເຖິງນີ້ ລວມເອົາ: ຂອບເຂດອາຍຸ (15 ເຖິງ 24 ປີ) ແລະ ສະຖານທີ່ຕັ້ງທາງພູມສາດ. ບາງຕົວຢ່າງຂອງເວັບໄຊ້ໂຊສະນາ ປະກອບມີຄື: ເຟດສບຸກ, ກູເກີນ, ອິນສະຕາກຣາມ ແລະ ບັນດາແອັບບຸກຄົນທີສີມ. ຂໍ້ມູນຂ່າວສານຜູ້ເຂົ້າຮ່ວມການສຳຫຼວດທີ່ເປັນກຸ່ມຕົວແທນ ແມ່ນຖືກຢັ້ງຢືນດ້ວຍສະຖານທີ່ຕັ້ງທາງພູມສາດ, ທີ່ຢູ່ IP, ID ຢູ່ສື່ສັງຄົມອອນລາຍຂອງເຂົາເຈົ້າ ແລະ ຂໍ້ມູນກຳນົດເຂດແດນໃນໂລກອອນລາຍ. ເມື່ອຜູ້ເຂົ້າຮ່ວມການສຳຫຼວດ ກົດເບິ່ງໂຄສະນາຂອງບໍລິສັດ, ຊຸດຄຳຖາມສຳຫຼວດ ຈະປະກົດຂຶ້ນ ເພື່ອເລີ່ມການສຳຫຼວດອອນລາຍ.

# ເອກະສານຊ້ອນທ້າຍ 2: ຄຳຖາມແນະນຳການສົນທະນາຄົ້ນຄ້ວາເປັນກຸ່ມຈຸດສຸມ (FGD)

ໃນການຈັດຕັ້ງການສົນທະນາຄົ້ນຄ້ວາເປັນກຸ່ມຈຸດສຸມກັບໄວໜຸ່ມຈຳນວນ 100 ຄົນ ເມື່ອເດືອນທັນວາ 2021 ແລະ ເມສາ 2022 ແມ່ນໄດ້ນຳໃຊ້ຄຳຖາມແນະນຳດັ່ງຕໍ່ໄປນີ້.

**ຊຸດຄຳຖາມພາກແນະນຳຕົນເອງ (ສ້າງຄວາມລຶ້ງເຄີຍ) ສຳລັບຜູ້ເຂົ້າຮ່ວມການສົນທະນາຄົ້ນຄ້ວາເປັນກຸ່ມຈຸດສຸມ (FGD):**

1) ເປັນຫຍັງ ນ້ອງ/ເຈົ້າ ຈິ່ງຕັດສິນໃຈເຂົ້າຮ່ວມການສົນທະນາເປັນກຸ່ມຈຸດສຸມໃນມື້ນີ້? ຊ່ວຍແລກປ່ຽນບາງດ້ານຂອງວຽກງານຕົນເອງ ຫຼື ປະສົບການຂອງຕົນເອງ ທີ່ນຳພາຕົນເອງເຂົ້າມາຮ່ວມການສົນທະນາໃນມື້ນີ້ ສູ່ຟັງແດ່?

2) ຊ່ວຍອະທິບາຍໃຫ້ຟັງແດ່ວ່າ ປະຈຸບັນນີ້ ຕົນເອງກຳລັງເຮັດຫຍັງຢູ່ ເຊັ່ນ: ດຽວນີ້ ຍັງເປັນນັກຮຽນ/ນັກສຶກສາ, ຫຼື ມີວຽກເຮັດງານທຳແລ້ວ? ຊ່ວຍແລກປ່ຽນສູ່ຟັງແດ່ວ່າ: ໜ້າທີ່ຮັບຜິດຊອບປະຈຳວັນຂອງຕົນ ມີຫຍັງແດ່?

3) ຕົນເອງ ນິຍາມຄວາມສຳເລັດໃນຊີວິດຄືແນວໃດ?

4) ໃນຄວາມຄິດຂອງຕົນເອງແລ້ວ, ສິ່ງທ້າທາຍຫຼັກຂອງໄວໜຸ່ມຢູ່ ສປປ ລາວ ໃນປະຈຸບັນນີ້ ມີຫຍັງແດ່? (ໝາຍເຫດສຳລັບຜູ້ອຳນວຍຄວາມສະດວກ: ບັນຫາການເຂົ້າເຖິງການສຶກສາ; ບັນຫາຂາດຂໍ້ມູນຂ່າວສານກ່ຽວກັບວຽກເຮັດງານທຳ/ຂາດໂອກາດ/ຂາດການຝຶກອົບຮົມວິຊາຊີບ; ບັນຫາການຫວ່າງງານທີ່ເພີ່ມສູງຂຶ້ນ; ຂາດວຽກເຮັດງານທຳພຽງພໍ; ບັນຫາການເຂົ້າເຖິງບໍລິການເບິ່ງແຍງສຸຂະພາບ; ບັນຫາຄ່າຕອບແທນແຮງງານຕໍ່າ; ຄ່າຄອງຊີບສູງ; ບັນຫາດ້ານສຸຂະພາບຈິດ; ບັນຫາການດື່ມເຫຼົ້າ ແລະ ໃຊ້ຢາເສບຕິດ; ບັນຫາການຈຳແນກຕໍ່ກຸ່ມຄົນສະເພາະໃດໜຶ່ງ (ຕ.ຢ: ການຈຳແນກບົນພື້ນຖານບົດບາດຍິງ-ຊາຍ,ບົນພື້ນຖານຊົນເຜົ່າ, ຄວາມພິການ, ອື່ນໆ); ອື່ນໆ.





**ຄຳຖາມເຈາະຈີ້ມ:**
ເປັນຫຍັງ ຈິ່ງຄິດວ່າ: ມີສິ່ງທ້າທາຍ ຫຼື ບັນຫາເຫຼົ່ານີ້? ຕົນເອງຄິດວ່າ: ສິ່ງທ້າທາຍເຫຼົ່ານີ້ເກີດມາຈາກໃສ? ຕົນເອງມີປະສົບການສ່ວນຕົວກ່ຽວກັບສິ່ງທ້າທາຍ ຫຼື ຄວາມຫຍຸ້ງຍາກເຫຼົ່ານີ້ບໍ? ຖ້າມີ, ຊ່ວຍເລົ່າປະສົບການສ່ວນຕົວທີ່ພົບສູ່ຟັງແດ່ ແລ້ວ ຕົນເອງ ໃຊ້ວິທີໃດ ຮັບມື ກັບ ໜຶ່ງ ຫຼື ຫຼາຍບັນຫາເຫຼົ່ານັ້ນ?

## FGD 1: ສ້າງຄວາມເຂັ້ມແຂງດ້ານວຽກເຮັດງານທຳ/ດ້ານເສດຖະກິດ

1. ການຊອກຫາວຽກເຮັດງານທຳຢູ່ ສປປ ລາວ ຄືຄວາມຍາກ ຫຼື ງ່າຍ ຄືແນວໃດ? ຊ່ວຍເລົ່າປະສົບການຂອງຕົນເອງ ໃນການຊອກຫາວຽກເຮັດງານທຳ ສູ່ຟັງແດ່ ? ມີສິ່ງທ້າທາຍຫຍັງແດ່ ທີ່ຕົນເອງຜະເຊີນ ໃນເວລາຊອກຫາວຽກເຮັດງານທຳ?

ຄຳຖາມເຈາະຈີ້ມ:
ມີຂໍ້ຈຳກັດຫຍັງແດ່ ໃນການຊອກ ແລະ ຮັກສາວຽກເຮັດງານທຳ ຢູ່ ປະເທດລາວ? ຄົນຮຸ່ນໄວນ້ອງ/ເຈົ້າ ມີທັດສະນະແນວໃດກ່ຽວກັບຕະຫຼາດແຮງງານຢູ່ລາວ?

2. ຢູ່ໂຮງຮຽນ/ມະຫາວິທະຍາໄລ ທີ່ຮຽນ ເຄີຍມີ ຫຼື ມີ ບໍລິການໃຫ້ຄຳປຶກສາດ້ານສາຍອາຊີບ ແນະນຳນັກຮຽນ ຫຼື ນັກສຶກສາ ບໍ? ຕົນເອງເຄີຍໄດ້ຮັບຂໍ້ມູນຂ່າວສານໃດໜຶ່ງບໍ ກ່ຽວກັບປະເພດວຽກເຮັດງານທຳ ທີ່ຜູ້ໃຊ້ແຮງງານພາຍໃນປະເທດຕ້ອງການຢາກຈ້າງ ຫຼື ກ່ຽວກັບປະເພດວຽກທີ່ມີອັດຕາການຈ້າງງານສູງ, ອື່ນໆ ໃນໄລຍະທີ່ຮຽນຢູ່ໂຮງຮຽນ ຫຼື ມະຫາວິທະຍາໄລດັ່ງກ່າວ? ຫຼັກໆແມ່ນໃຜ ເປັນຜູ້ແນະນຳ ນ້ອງ/ເຈົ້າ ກ່ຽວກັບວຽກເຮັດງານທຳ? ພໍ່ແມ່ຜູ້ປົກຄອງບໍ? ຄູອາຈານ? ອ້າຍເອື້ອຍນ້ອງ ? ຫຼື ໝູ່ເພື່ອນ?

3. ມີວຽກປະເພດໃດແດ່ໃນຕະຫຼາດແຮງງານປະຈຸບັນ ທີ່ຕົນຄິດວ່າ:ສະດວກທີ່ຈະຊອກວຽກເຮັດໄດ້ງ່າຍ? ເປັນປະເພດວຽກ ທີ່ຕົນຢາກເຮັດບໍ? ວຽກເຫຼົ່ານັ້ນ ສອດຄ່ອງກັບຄວາມຝັນຂອງຕົນ ບໍ?

4. ຕົນເອງ ຄິດວ່າ: ຢູ່ລາວ ມີໂອກາດໄດ້ວຽກເຮັດງານທຳ ຄືກັນກັບ ປະເພດວຽກທີ່ມີຢູ່ປະເທດບ້ານໃກ້ເຮືອນຄຽງບໍ? ຊ່ວຍອະທິບາຍເຫດຜົນຄຳຕອບຂອງຕົນເອງ ສູ່ຟັງແດ່?

5; ຕົນເອງ ມີຄວາມພໍໃຈກັບວຽກທີ່ຕົນເຮັດຢູ່ ບໍ? ຕົນເອງຄິດວ່າ: ໄວໜຸ່ມໂດຍລວມ ພໍໃຈກັບວຽກທີ່ເຂົາເຈົ້າ ກຳລັງເຮັດຢູ່ໃນລາວ ບໍ?

6. ຕົນເອງ ຄິດວ່າ: ການສຶກສາທີ່ຈົບມາ ກຽມພ້ອມຕົນເອງສຳລັບການເຂົ້າຮ່ວມໃນຕະຫຼາດແຮງງານບໍ? ເປັນຫຍັງຈິ່ງຄິດ ຫຼື ບໍ່ຄິດຈັ່ງຊັ້ນ? ຕ້ອງມີຫຍັງແດ່ ເພື່ອອັດຊ່ອງວ່າງທີ່ມີ?
7.ຕົນເອງ ຄິດວ່າ: ພະຍາດລະບາດໂຄວິດ 19 ສິ່ງຜົນກະທົບຄືແນວໃດ ຕໍ່ໂອກາດທີ່ຈະໄດ້ວຽກເຮັດງານທຳ?

8. ທີ່ຜ່ານມາ ເຄີຍມີປະສົບການຖືກຈຳແນກບໍ ໃນເວລາສະມັກເຮັດວຽກ ອາດຈະຖືກຈຳແນກຍ້ອນພື້ນຖານບົດບາດຍິງ-ຊາຍ, ຊົນເຜົ່າ, ວິຖີທາງເພດ, ຄວາມພິການ ຫຼື ແຫຼ່ງກຳເນີດ ຫຼື ແຫຼ່ງທີ່ມາຂອງຕົນ ຫຼື ຖືກຈຳແນກດ້ວຍເຫດຜົນອື່ນ? ຜູ້ໃຊ້ແຮງງານ ທີ່ສຳພາດ ນ້ອງ/ເຈົ້າ ເວົ້າຄືແນວໃດ ທີ່ເຮັດໃຫ້ຕົນເອງຮູ້ສຶກວ່າຖືກຈຳແນກ?

**ຄຳຖາມເຈາະຈີ້ມ:**
ຍົກຕົວຢ່າງ: ແມ່ຍິງໜຸ່ມໃນກຸ່ມສົນທະນານີ້, ຕົນເອງ ຄິດວ່າ: ການຊອກວຽກເຮັດງານທຳຂອງຕົນ ຍາກກ່ວາເພດຊາຍບໍ? ແລ້ວການຊອກຫາວຽກເຮັດງານທຳຂອງແມ່ຍິງ ຜູ້ທີ່ໄດ້ລູກແລ້ວ ເດເປັນແນວໃດ? ຫຼັງຈາກສ້າງຄອບຄົວແລ້ວ, ໂອກາດໃນການຊອກຫາວຽກເຮັດງານທຳຂອງແມ່ຍິງ ເປັນຄືແນວໃດ? ໃນຂະນະດຽວກັນ, ການເປັນຮັກຮ່ວມເພດ ຮັກສອງເພດ ກະເທີຍ ຫຼື ບໍ່ແນ່ໃຈໃນວິຖີທາງເພດຂອງຕົນ (LGBTQ) ສິ່ງຜົນກະທົບຕໍ່ໂອກາດມີວຽກເຮັດງານທຳຄືແນວໃດ? ຫຼື ກໍລະນີເປັນຄົນພິການເດ ເປັນແນວໃດ? ເກີດຫຍັງຂຶ້ນກັບການມີໂອກາດໄດ້ວຽກເຮັດງານທຳ ກໍລະນີຜູ້ສະມັກວຽກເປັນຄົນຊົນເຜົ່າສ່ວນນ້ອຍ? ແລ້ວປະສົບການຂອງໄວໜຸ່ມຕົວເມືອງທຽບໃສ່ ໄວໜຸ່ມຊົນນະບົດ ໃນການຊອກຫາວຽກເຮັດງານທຳ ເດເປັນແນວ? ນ້ອງ/ເຈົ້າ ຊ່ວຍເລົ່າປະສົບການທີ່ຕົນເອງຖືກຈຳແນກສູ່ຟັງແດ່ ໃນເວລາສະມັກວຽກເຮັດງານທຳ?

9. ຕົນເອງ ເຄີຍຄິດທີ່ຈະເຮັດທຸລະກິດ ຫຼື ສ້າງຕັ້ງວິສາຫະກິດຂອງຕົນເອງບໍ? ຖ້າເຄີຍ, ຕົນເອງຄິດວ່າ: ມີໂອກາດ ແລະ ອຸປະ ສັກກີດຂວາງຫຍັງແດ່? ເປັນຫຍັງຕົນເອງ ຈິ່ງເລືອກທີ່ຈະເຮັດທຸລະກິດສ່ວນຕົວ ແທນທີ່ຈະເຮັດວຽກໃນບໍລິສັດໃດໜຶ່ງ ຫຼື ເຮັດວຽກໃນກົງຈັກການຈັດຕັ້ງລັດ?

## FGD 2: ການສຶກສາ ແລະ ການພັດທະນາສີມືແຮງງານ

1. ຕົນເອງຕັ້ງໃຈຢາກເຮັດຫຍັງ ຢາກເປັນຫຍັງໃນເວລາທີ່ຍັງໜຸ່ມນ້ອຍ/ໃນເວລາເຂົ້າໂຮງຮຽນ? ໄດ້ບັນລຸເປົ້າໝາຍຂອງຕົນ ແລ້ວບໍ? ຕົນເອງ ໄດ້ຜະເຊີນອຸປະສັກກີດຂວາງຫຍັງແດ່?

2. ລະດັບການສຶກສາສູງສຸດ ທີ່ຕົນບັນລຸ ແມ່ນ

ຊັ້ນໃດ? ຕົນເອງ ພໍໃຈແລ້ວບໍກັບລະດັບການສຶກສາທີ່ຈົບມາ? ເປັນຫຍັງຈຶ່ງພໍໃຈ ຫຼື ເປັນຫຍັງຈຶ່ງບໍ່ພໍໃຈ? ຖ້າບໍ່ພໍໃຈ, ມີຫຍັງທີ່ຢາກກັບໄປປ່ຽນ - ມີຫຍັງທີ່ຄິດວ່າຕົນເອງຕ້ອງຮຽນໃນເວລານັ້ນ?

3. ຊ່ວຍເລົ່າປະສົບການຂອງຕົນເອງໃນໂຮງຮຽນ ສູ່ຟັງແດ່ວ່າເປັນຄືແນວໃດ? ຮຽນຢູ່ໂຮງຮຽນ (ກໍາລັງຮຽນຢູ່) ເພື່ອຢາກເປັນຫຍັງ ຫຼື ຢາກເຮັດວຽກຫຍັງ? ເປັນຫຍັງຈຶ່ງເລືອກຮຽນສາຂາດັ່ງກ່າວ? ຄິດແນວໃດຈຶ່ງເລືອກຮຽນສາຂາ ຫຼື ຂະແໜງດັ່ງກ່າວ?
ຄໍາຖາມເຈາະຈີ້ມ:
ກໍລະນີ ທີ່ນ້ອງ/ເຈົ້າ ຕັດສິນໃຈທີ່ຈະບໍ່ເຂົ້າການສຶກສາໃນໂຮງຮຽນ ຫຼື ຮຽນນອກໂຮງຮຽນ, ຊ່ວຍເລົ່າປະສົບການຂອງຕົນສູ່ຟັງແດ່? ເປັນແນວໃດ? ພໍໃຈກັບທາງເລືອກຂອງຕົນເອງບໍ?

4. ຕົນເອງຄິດວ່າ: ລະບົບການສຶກສາຢູ່ ສປປ ລາວ ສະໜອງໂອກາດທີ່ພຽງພໍໃຫ້ໄວໜຸ່ມ ສາມາດເຮັດໄດ້ຕາມຄວາມຝັນຂອງຕົນບໍ? ຊ່ວຍອະທິບາຍສູ່ຟັງແດ່ ວ່າ: ເປັນຫຍັງຈຶ່ງຄິດແນວນັ້ນ?
ຄໍາຖາມເຈາະຈີ້ມ:
ຄິດວ່າ: ຕ້ອງມີການປ່ຽນແປງຫຍັງແດ່ ຢູ່ ສປປ ລາວ ເພື່ອຮັບປະກັນໃຫ້ຫຼາຍຄົນໄດ້ຮັບການສຶກສາ? ສາມາດປັບປຸງຫຍັງແດ່ ເພື່ອໃຫ້ທຸກຄົນໄດ້ເຂົ້າໂຮງຮຽນ ແລະ ຮຽນຕໍ່ມະຫາວິທະຍາໄລ?

5. ມີອຸປະສັກກີດຂວາງສະເພາະໃດບໍ ທີ່ຈໍາກັດການໄດ້ຮັບການສຶກສາ ຢູ່ ສປປ ລາວ? ເຄີຍປະສົບພົບພໍ້ອຸປະສັກກີດຂວາງດັ່ງກ່າວດ້ວຍຕົນເອງບໍ? ຖ້າເຄີຍ, ຮັບມືກັບອຸປະສັກກີດຂວາງດັ່ງກ່າວດ້ວຍວິທີໃດ? ຊ່ວຍເລົ່າປະສົບການຂອງຕົນ ສູ່ຟັງແດ່? (ໝາຍເຫດເຕືອນຜູ້ອໍານວຍຄວາມສະດວກ: ບໍ່ມີອຸປະສັກກີດຂວາງ, ບັນຫາຕ້ອງຮຽນທາງໄກ ຫຼື ຮຽນອອນລາຍ ໃນໄລຍະເກີດພະຍາດລະ ບາດໂຄວິດ, ບັນຫາຂາດຊັບພະຍາກອນ ຫຼື ຂາດການເຂົ້າເຖິງອຸປະກອນການຮຽນການສອນ, ບັນຫາການຂົນສົ່ງເດີນທາງໄປໂຮງຮຽນ, ບົດຮຽນບໍ່ຈະແຈ້ງ, ຖືກໝູ່ຮານ,ຖືກນັກຮຽນຄົນອື່ນຄຸກຄາມ, ບໍ່ມີເວລາຮຽນ ຫຼື ບ່ອນຄົ້ນຄ້ວາຮໍ່າຮຽນ ໃນເວລານອກໂມງຮຽນ, ພໍ່ແມ່ ຫຼື ຜູ້ປົກຄອງ ບໍ່ສະໜັບສະໜູນໃຫ້ຮຽນ, ບັນຫາຂາດການສິດສອນທີ່ມີຄຸນນະພາບໃນເວລາຂຶ້ນຫ້ອງຮຽນ, ອຸປະສັກກີດຂວາງດ້ານພາສາ, ຖືກກົດດັນສູງວ່າຕ້ອງປະສົບຜົນສໍາເລັດ, ອື່ນໆ.)

6. ຕົນເອງ ຄິດວ່າ: ຕ້ອງປັບປຸງຫຍັງແດ່ ໃນລະບົບການສຶກສາລາວ ເພື່ອແກ້ໄຂອຸປະສັກກີດຂວາງເຫຼົ່ານັ້ນ?
(ໝາຍເຫດ: ບໍລິການໃຫ້ຄໍາປຶກສາດ້ານສາຍອາຊີບຫຼັງຈົບການສຶກສາ, ແຜນງານລ້ຽງເຂົ້າທ່ຽງຢູ່ໂຮງຮຽນ, ໂຮງຮຽນຢູ່ໃກ້ ບ້ານ, ອື່ນໆ.)

7. ພະຍາດລະບາດໂຄວິດ 19 ສົ່ງຜົນກະທົບຕໍ່ການສຶກສາຂອງຕົນເອງໃນປະຈຸບັນ ແລະ ແຜນການສຶກສາໃນອະນາຄົດຂອງຕົນ ຄືແນວໃດ? ງ່າຍຂຶ້ນ, ຫຍຸ້ງຍາກຂຶ້ນ ຫຼື ບໍ່ມີຫຍັງຕ່າງເກົ່າ ເມື່ອທຽບໃສ່ໄລຍະກ່ອນເກີດພະຍາດລະບາດໂຄວິດ?

## FGD 3: ສຸຂະພາບ, ຄວາມປອດໄພແຮງງານ ແລະ ຄ່ານິຍົມຂອງສັງຄົມ

1. ໃນຖານະເປັນໄວໜຸ່ມຜູ້ໜຶ່ງ, ຊ່ວຍເລົ່າສູ່ຟັງແດ່ວ່າ: ປະຈຸບັນນີ້ ຕົນເອງເຂົ້າເຖິງບໍລິການເບິ່ງແຍງສຸຂະພາບ ໄດ້ດ້ວຍວິທີໃດ? ເຂົ້າເຖິງໄດ້ຍ້ອນມີພໍ່ແມ່ຜູ້ປົກຄອງ ຊ່ວຍ ຫຼື ສາມາດໄປຫ້ອງກວດພະຍາດ ຫຼື ສະຖານບໍລິການສາທາລະນະສຸກໃດໜຶ່ງ ໄດ້ດ້ວຍຕົນເອງ ຫາກເກີດຄວາມຈໍາເປັນ? ຄິດວ່າ: ຕົນເອງ (ຫຼື ຄອບຄົວ) ສາມາດຈ່າຍຄ່າບໍລິການສາທາລະສຸກ ໄດ້ບໍ?
ຄໍາຖາມເຈາະຈີ້ມ:
ຄິດວ່າ: ຕົນເອງ ສາມາດເຂົ້າເຖິງບໍລິການເບິ່ງແຍງສຸຂະພາບໃນລະດັບທີ່ເໝາະສົມໄດ້ຢ່າງພຽງພໍ ແລ້ວບໍ? ມີບັນຫາຫຍັງແດ່ ທີ່ຕົນເອງຄິດວ່າ: ໄວໜຸ່ມ ຕ້ອງຜະເຊີນ ຫາກເຂົາເຈົ້າ ຢາກເຂົ້າເຖິງບໍລິການເບິ່ງແຍງສຸຂະພາບແບບສະເພາະ? ດ້ານການເຂົ້າເຖິງບໍລິການສາທາລະນະສຸກ, ດ້ານຄ່າໃຊ້ຈ່າຍ, ປະກົດການການຈໍາແນກ ຕົນເອງຄິດວ່າ:
ສິ່ງທີ່ກ່າວມານັ້ນ ເປັນບັນຫາບໍ ໃນເວລາຕ້ອງນໍາໃຊ້ບໍລິການເບິ່ງແຍງສຸຂະພາບ?

2. ຄິດວ່າ: ຕົນເອງ ມີຂໍ້ມູນຂ່າວສານຈໍາເປັນພຽງພໍແລ້ວບໍ ເພື່ອຕັດສິນໃຈກ່ຽວກັບດ້ານສຸຂະພາບ ແລະ ຊີວິດຂອງຕົນ?

3. ມີຫຍັງແດ່ ເປັນສິ່ງທ້າຍໃໝ່ ເຊິ່ງໄວໜຸ່ມ ກໍາລັງຜະເຊີນ ໃນດ້ານທີ່ພົວພັນກັບສຸຂະພາບ ແລະ ຄວາມປອດໄພຂອງເຂົາເຈົ້າ? (ຄໍາຕອບຈະເປັນໝາຍເຫດເຕືອນຜູ້ອໍານວຍຄວາມສະດວກ).
ຄໍາຖາມເຈາະຈີ້ມ:
ເປັນຫຍັງຈຶ່ງຄິດວ່າ: ບັນຫາ ຫຼື ສິ່ງທ້າທາຍເຫຼົ່ານີ້ຈຶ່ງມີແພ່ຫຼາຍ? ໄວໜຸ່ມເພດຊາດ, ເພດຍິງ, ກະເທີຍ ແລະ ໄວໜຸ່ມທີ່ບໍ່ແມ່ນເພດຍິງ ຫຼື ຊາຍເດ ເຂົາເຈົ້າມີຂໍ້ມູນຂ່າວສານຈໍາເປັນພຽງພໍແລ້ວບໍ ໃນດ້ານທີ່ພົວພັນກັບສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນຂອງເຂົາເຈົ້າ? ຖ້າເປັນໄປໄດ້, ຊ່ວຍເລົ່າປະສົບການສ່ວນຕົວໃນການເຂົ້າເຖິງປະເພດບໍລິການເບິ່ງແຍງສຸຂະພາບສະເພາະໃດໜຶ່ງ ສູ່ຟັງແດ່?

4. ໄວໜຸ່ມ ໄດ້ຮັບການເບິ່ງແຍງສຸຂະພາບທາງຈິດທີ່ພຽງພໍແລ້ວບໍ? ມີບັນຫາສຸຂະພາບທາງຈິດຫຍັງແດ່ ທີ່ໄວໜຸ່ມກໍາລັງຜະເຊີນຫຼື ຮັບມືຢູ່?

5. ຮູ້ສຶກແນວໃດກ່ຽວກັບນະໂຍບາຍແກ້ໄຂບັນຫາຢາເສບຕິດຂອງລັດ ຢູ່ໃນປະເທດຕົນ?

6. ຢູ່ ສປປ ລາວ ຕົນເອງຮູ້ສຶກ ປອດໄພບໍ? ມີກຸ່ມໄວໜຸ່ມສະເພາະໃດບໍ ທີ່ອາດຈະມີຄວາມສ່ຽງສູງດ້ານການຖືກກະທໍາຮຸນແຮງ ຫຼື ສ່ຽງສູງດ້ານບັນຫາສຸຂະພາບ ເມື່ອທຽບໃສ່ໄວໜຸ່ມກຸ່ມອື່ນໆ?
(ໝາຍເຫດເຕືອນຜູ້ອໍານວຍຄວາມສະດວກ: ໄວໜຸ່ມເພດຍິງ, ສາວບໍລິການ, ໄວໜຸ່ມທີ່ເປັນແຮງງານເຄື່ອນຍ້າຍ?)

7. ພະຍາດລະບາດໂຄວິດ 19 ໄດ້ປ່ຽນແປງຄວາມຕ້ອງການດ້ານການເບິ່ງແຍງສຸຂະພາບຂອງໄວໜຸ່ມບໍ?

## FGD 4: ການເຂົ້າຮ່ວມຊີວິດສັງຄົມ

2. ຮ່ວມຊີວິດສັງຄົມຄືແນວໃດ ໃນເວລາຫວ່າງຂອງຕົນ? ຫຼິ້ນກິລາຫຍັງ ຫຼື ມີກິດຈະກໍາເວລາຫວ່າງ ແບບໃດ ຫຼື ເຂົ້າຮ່ວມວຽກອາສາສະມັກ ຫຼື ວຽກຈິດອາສາໃດໜຶ່ງບໍ?

3. ເຂົ້າຮ່ວມ ຫຼື ເຄີຍເຂົ້າຮ່ວມກອງປະຊຸມວຽກອາສາສະມັກ, ວຽກກໍາມະບານ,
ກອງປະຊຸມທຸລະກິດໄວໜຸ່ມ, ງານສິນລະປະ, ກິລາ ຫຼື ກອງປະຊຸມໃດໜຶ່ງຂອງໄວໜຸ່ມບໍ?
(ໝາຍເຫດເຕືອນຜູ້ອໍານວຍຄວາມສະດວກ: ຕົວຢ່າງເຊັ່ນ: ວຽກສະມາຄົມ, ວຽກກໍາມະບານ, ວຽກອົງການຈັດຕັ້ງຊາວໜຸ່ມ, ກຸ່ມທຸລະກິດ, ກຸ່ມຫຼິ້ນກິລາ, ກຸ່ມສິນລະປະ/ກຸ່ມສະແດງລະຄອນ, ກອງປະຊຸມສົນທະນາຂັ້ນບ້ານ, ອື່ນໆ)

**ຄໍາຖາມເຈາະຈີ້ມ:**
ຊ່ວຍເລົ່າປະສົບການຂອງຕົນສູ່ຟັງແດ່ ກ່ຽວກັບການເຂົ້າຮ່ວມກອງປະຊຸມ ຫຼື ງານໃດໜຶ່ງ ຕາມທີ່ກ່າວເຖິງກ່ອນໜ້ານີ້? ເປັນຫຍັງ ຕົນເອງຈຶ່ງເຂົ້າຮ່ວມ? ບັນຍາກາດເປັນແນວໃດ? ເຫັນວ່າ: ເປັນປະໂຫຍດ ຫຼື ເຮັດໃຫ້ຕົນເອງເກີດແຮງບັນດານໃຈໃດໜຶ່ງ ບໍ? ຕົນເອງ ເຂົ້າຮ່ວມຢ່າງເປັນປະຈໍາປົກກະຕິ ບໍ? ຮູ້ສຶກວ່າ: ຕົນເອງມີສ່ວນຮ່ວມໃນບາງຢ່າງທີ່ສໍາຄັນ ຫຼື ສອດຄ່ອງ ບໍ? ຫຼື ໃນທາງກົງກັນຂ້າມ, ການເຂົ້າຮ່ວມດັ່ງກ່າວ ບໍ່ເຮັດໃຫ້ຕົນຮູ້ສຶກຫຍັງເລີຍ?

4. ເຄີຍອາສາສະມັກຊ່ວຍວຽກສັງຄົມ ຫຼື ເຮັດວຽກອາສາສະມັກ ຫຼື ຈິດອາສາໃດໜຶ່ງບໍ? ຊ່ວຍເລົ່າປະສົບການດັ່ງກ່າວສູ່ຟັງແດ່ ແລະ ແມ່ນຫຍັງເປັນແຮງບັນດານໃຈໃຫ້ຕົນເອງເຂົ້າຮ່ວມ?

**ຄໍາຖາມເຈາະຈີ້ມ:**
ສໍາລັບຜູ້ທີ່ບໍ່ເຄີຍເຮັດວຽກອາສາສະມັກ, ເຄີຍຄິດຈະເຂົ້າຮ່ວມວຽກອາສາສະມັກໃດໜຶ່ງບໍ ຫຼື ເຄີຍຄິດເຂົ້າຮ່ວມຊ່ວຍວຽກຊຸມໄຊົນຂອງຕົນບໍ? ເປັນຫຍັງຈຶ່ງຄິດຢາກເຂົ້າຮ່ວມ ຫຼື ເປັນຫຍັງຈຶ່ງຄິດບໍ່ຢາກເຂົ້າຮ່ວມ?

5. ຕົນເອງ ຮູ້ກ່ຽວກັບກົດໝາຍ ແລະ ນະໂຍບາຍສະເພາະຂອງລັດ ທີ່ມີກ່ຽວກັບໄວໜຸ່ມບໍ - ບໍ່ວ່າຈະເປັນຂົງເຂດການສຶກສາ, ການປະກອບອາຊີບ ຫຼື ວຽກເຮັດງານທໍາ (ສິດຢູ່ສະຖານທີ່ເຮັດວຽກ), ຂົງເຂດສຸຂະພາບ, ອື່ນໆ? ຕົນເອງ ຮູ້ບໍວ່າ: ສປປ ລາວ ຫາກໍເຜີຍແຜ່ນະໂຍບາຍກ່ຽວກັບໄວໜຸ່ມ?

6. ມີຫຍັງແດ່ ທີ່ເປັນແຫຼ່ງຂ່າວຫຼັກ ຫຼື ຊ່ອງທາງຫຼັກໃນການໄດ້ຮັບຂ່າວສານ ຂອງນ້ອງ/ເຈົ້າ? ໃຊ້ວິທີໃດຊອກຮູ້ກ່ຽວກັບເຫດ ການຕ່າງໆ ທີ່ເກີດຂຶ້ນພາຍໃນປະເທດ (ຫຼື ເກີດຢູ່ຕ່າງປະເທດ) ຫຼື ຊອກຮູ້ກ່ຽວກັບການປ່ຽນແປງນະໂຍບາຍຂອງລັດໄດ້ດ້ວຍວິທີໃດ? (ໝາຍເຫດເຕືອນຜູ້ອໍານວຍຄວາມສະດວກ: ໄດ້ຮັບຂ່າວຜ່ານຊ່ອງທາງເຜີຍແຜ່ຂ່າວແບບດັ້ງເດີມ, ຜ່ານສື່ສັງຄົມອອນລາຍ (ສື່ໃດ?), ວອດສ໌ແອບ, ອື່ນໆ.).
ຄໍາຖາມເຈາະຈີ້ມ:
ໃນຈໍານວນຊ່ອງທາງເຫຼົ່ານັ້ນ ຕົນເອງ ຄິດວ່າ: ຊ່ອງທາງໃດ ໜ້າເຊື່ອຖືທີ່ສຸດ ໃນການໄດ້ຮັບຂ່າວສານ? ຕົນເອງ ເຊື່ອທຸກຢ່າງທີ່ຕົນອ່ານບໍ? ບັນຫາ 'ຂ່າວປອມ' ຫຼື ຂ່າວສານບໍ່ຖືກຕ້ອງ ຕົນເອງຄິດວ່າ: ເປັນບັນຫາໃຫຍ່ຂະໜາດໃດ? ເປັນຫຍັງຈຶ່ງຄິດແນວນັ້ນ?

7. ຕົນເອງ ເຄີຍເຂົ້າຮ່ວມຂະບວນການຂໍຄໍາປຶກສາກ່ຽວກັບບັນຫາໃດໜຶ່ງ ທີ່ອໍານາດການປົກຄອງ ຫຼື ຂະແໜງການຂັ້ນທ້ອງຖິ່ນ/ສູນກາງ ພິຈາລະນາຄົ້ນຄ້ວາບໍ? ຖ້າເຄີຍ, ຊ່ວຍເລົ່າປະສົບການສູ່ຟັງແດ່?
ຄໍາຖາມເຈາະຈີ້ມ:
ຕົນເອງຄິດວ່າ: ຜູ້ສ້າງນະໂຍບາຍ ຮັບຟັງຄໍາເຫັນ ຫຼື ຂໍ້ກັງວົນຂອງກຸ່ມໄວໜຸ່ມບໍ? ຖ້າຄິດວ່າ: ເພິ່ນຮັບຟັງ, ເພິ່ນຮັບຟັງດ້ວຍວິທີໃດ? ຖ້າຄິດວ່າ: ເພິ່ນບໍ່ຮັບຟັງ, ເປັນຫຍັງ ຕົນເອງຈຶ່ງຄິດແນວນັ້ນ? ຕົນເອງຄິດວ່າ: ລັດ ມີນະໂຍບາຍພຽງພໍແລ້ວບໍ ໃນການສົ່ງເສີມການມີສ່ວນຮ່ວມຂອງໄວໜຸ່ມ? ໃນຂອບເຂດໃດ ທີ່ຕົນເອງຄິດວ່າ: ການເອົາໄວໜຸ່ມເຂົ້າມີສ່ວນຮ່ວມໃນການຕັດສິນບັນຫາຈະສ້າງຄວາມແຕກຕ່າງໃນທາງບວກ?

8. ຕົນເອງຄິດວ່າ: ໄວໜຸ່ມມີເວທີສະແດງຄວາມຄິດເຫັນ ຫຼື ຂໍ້ກັງວົນຂອງເຂົາເຈົ້າ ບໍ?
ຕົນເອງ ຢາກມີຊ່ອງທາງ ຫຼື ພື້ນທີ່ ຫຼື ບ່ອນ

ທີ່ຕົນສາມາດສະແດງຄວາມຄິດເຫັນໄດ້ ບໍ? ຫຼື ພໍໃຈແລ້ວກັບລະບົບທີ່ເປັນຢູ່?

9. ໃນຖານະເປັນໄວໜຸ່ມຊົນເຜົ່າ, ໄວໜຸ່ມເພດຍິງ, ຫຼື ພິການ, ອື່ນໆ, ຕົນເອງ ຄິດວ່າ: ເຂົາເຈົ້າ ມີກະບອກສຽງເຂົ້າຮ່ວມໃນການຕັດສິນບັນຫາໃນທຸກຂັ້ນບໍ - ບໍ່ວ່າຈະເປັນໃນເບື້ອງຂອງລັດຖະບານ, ພາກເອກະຊົນ, ອົງການຈັດຕັ້ງຂັ້ນຊຸມຊົນ, ອື່ນໆ? ຊ່ວຍເລົ່າປະສົບການສູ່ຟັງແດ່ ?

10. ໄດ້ເຂົ້າຮ່ວມໃນຂໍ້ລິເລີ່ມ ຫຼື ວຽກງານຕອບໂຕ້ພະຍາດລະບາດໂຄວິດ 19 ບໍ? ຖ້າໄດ້ເຂົ້າຮ່ວມ, ຊ່ວຍອະທິບາຍສູ່ຟັງແດ່?

**ຊຸດຄຳຖາມສຸດທ້າຍ (ໃນເວລາສະຫຼຸບ FGD) ສຳລັບທຸກຜູ້ເຂົ້າຮ່ວມກຸ່ມສົນທະນາຄົ້ນຄ້ວາເປັນຈຸດສຸມ**

1. ຖ້າຫາກຕົນເອງ ມີໄມ້ກະທາວິເສດ ທີ່ສາມາດເສກໃຫ້ມີການປ່ຽນແປງໃດໜຶ່ງຂຶ້ນໃນປະເທດຂອງຕົນໄດ້, ຢາກປ່ຽນຫຍັງ?

2. ມີຫຍັງແດ່ ທີ່ຜູ້ສ້າງນະໂຍບາຍ ຫຼື ແມ່ນແຕ່ກະໂຕໄວໜຸ່ມ ສາມາດເຮັດໄດ້ ເພື່ປັບປຸງສະພາບເງື່ອນໄຂເປັນຢູ່ ກ່ຽວກັບບັນຫາ ຫຼື ສິ່ງທ້າທາຍຕ່າງໆ ທີ່ເຮົາໄດ້ສົນທະນາກັນມາກ່ອນໜ້ານີ້ ? ມີຫຍັງແດ່ ທີ່ຈະຊ່ວຍນ້ອງ/ເຈົ້າ ໄດ້ຫຼາຍສຸດ ແລະ ເປັນຫຍັງຈິ່ງຄິດເຊັ່ນນັ້ນ? (ໝາຍເຫດເຕືອນຜູ້ອຳນວຍຄວາມສະດວກ: ສາມາດເຂົ້າເຖິງທຶນການສຶກສາ, ມີແຜນງານສົ່ງເສີມການເປັນຜູ້ປະກອບການຫຼາຍຂຶ້ນ, ມີສູນຝຶກອົບຮົມວິຊາຊີບຫຼາຍຂຶ້ນສຳລັບໄວໜຸ່ມ, ຢາກໃຫ້ມີການເຜີຍແຜ່ຂໍ້ມູນຂ່າວສານດີຂຶ້ນກ່ວາເດີມ, ມີການຊ່ວຍເຫຼືອແຮງງານເຄື່ອນຍ້າຍໄວໜຸ່ມ, ມີການຊ່ວຍເຫຼືອດ້ານການເງິນໃຫ້ຄອບຄົວທຸກຍາກ ເພື່ອຊ່ວຍໃຫ້ໄວໜຸ່ມສາມາດສືບ ຕໍ່ຮຽນໃນໂຮງຮຽນ, ສະໜອງເງິນກູ້ດອກເບ້ຍສູນ ຫຼື ເງິນຊ່ວຍເຫຼືອລ້າໃຫ້ໄວໜຸ່ມຜູ້ທີ່ມີແນວຄວາມຄິດທຸລະກິດດີ...)
ຄຳຖາມເຈາະຈົ້ມ:
ຕົນເອງ ເຄີຍໄດ້ຮັບຜົນປະໂຫຍດຈາກລະບົບຊ່ວຍເຫຼືອໃດໜຶ່ງທີ່ກ່າວມາຂ້າງເທິງບໍ - ອາດຈະໄດ້ຮັບການຊ່ວຍເຫຼືອຈາກສ່ວນບຸກຄົນ ຫຼື ຈາກລັດຖະບານ ຫຼື ໄດ້ຮັບການຊ່ວຍເຫຼືອຈາກພາກເອກຊົນ?

3. ນ້ອງ/ເຈົ້າ ມີຄຳເຫັນເພີ່ມເຕີມ ຫຍັງອີກບໍ ກ່ອນທີ່ຈະເຮົາຈະປິດການສົນທະນາ?

# ເອກະສານຊ້ອນທ້າຍ 3: ພາລະບົດບາດ ແລະ ໂຄງປະກອບສ້າງຂອງສະພາທີ່ປຶກສາແຫ່ງຊາດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງແຜນການ ແລະ ການລົງທຶນ
ສູນຄົ້ນຄ້ວານະໂຍບາຍເພື່ອການພັດທະນາ
ເລກທີ....../ກຜທ.ສຄພ.04
ນະຄອນຫຼວງວຽງຈັນ, ວັນທີ: ................

**ຂໍ້ຕົກລົງ**
ແຕ່ງຕັ້ງສະພາທີ່ປຶກສາແຫ່ງຊາດ ເພື່ອສ້າງບົດລາຍງານພັດທະນາທຶນມະນຸດແຫ່ງຊາດ (NHDR) ສະບັບທີ 6

— ອີງຕາມດຳລັດນາຍົກລັດຖະມົນຕີ ເລກທີ 201/ນຍ, ລົງວັນທີ 30 ກໍລະກົດ 2017 ວ່າດ້ວຍພາລະບົດບາດຂອງກະຊວງແຜນການ ແລະ ການລົງທຶນ.
—ອີງຕາມໂຄງການຮ່ວມມືລະຫວ່າງກະຊວງແຜນການ ແລະ ການລົງທຶນ ກັບ ກະຊວງການຕ່າງປະເທດ ປີ 2021 ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ປະກອບສ່ວນໃຫ້ການບັນລຸ ປພຍ ແລະ ນຳເອົາປະເທດຫຼຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາ.
— ອີງຕາມໜັງສືເລກທີ 0915/ກຜທ.ສຄພ ລົງວັນທີ 18 ພຶດສະພາ 2021 ຂອງກະຊວງແຜນການ ແລະ ການລົງທຶນ ວ່າດ້ວຍການແຕ່ງຕັ້ງພະນັກງານເຂົ້າໃນສະພາທີ່ປຶກສາແຫ່ງຊາດເພື່ອສ້າງບົດລາຍງານພັດທະນາທຶນມະນຸດແຫ່ງຊາດ (NHDR) ສະບັບທີ 6.
— ອີງຕາມຂໍ້ຕົກລົງຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ລົງວັນທີ 9 ພະຈິກ 2021.

**ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຕົກລົງເຫັນດີ:**

**ມາດຕາ 1:** ເຫັນດີສ້າງຕັ້ງສະພາທີ່ປຶກສາແຫ່ງຊາດ ເພື່ອສ້າງບົດລາຍງານ NHDR ສະບັບທີ 6 ທີ່ປະກອບດ້ວຍ:
1. ປອ ສີທີຣົດ ຣາດຊະພົນ, ຮັກສາການຫົວໜ້າສະຖາບັນຄົ້ນຄ້ວາເພື່ອການພັດທະນາ ກະຊວງແຜນການ ແລະ ການລົງທຶນ ເປັນປະທານສະພາທີ່ປຶກສາ;
2. ປອ ບົວວັນ ວິລະວົງ ຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງປະທານສະພາທີ່ປຶກສາ;
3. ທ່ານນາງ ສີສະຫວັນ ດີດາລາວົງ ຮອງຫົວໜ້າສະຖາບັນຄົ້ນຄ້ວາເພື່ອການພັດທະນາ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານສະພາທີ່ປຶກສາ;
4. ປອ ທະນົງໄຊ ສຸກຄຳທັດ ຮອງຫົວໜ້າສະຖາບັນຄົ້ນຄ້ວາເພື່ອການພັດທະນາ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານສະພາທີ່ປຶກສາ
5. ທ່ານ ສຸພິດ ດາລາຈັນທາ ທີ່ປຶກສາອາວຸໂສ ສະຖາບັນຄົ້ນຄ້ວາເພື່ອການພັດທະນາ ກະຊວງແຜນການ ແລະ ການລົງທຶນ ເປັນ ຄະນະ;
6. ທ່ານ ກາລຸນາ ນັນທະວົງດວງສີ ຮອງຫົວໜ້າກົມແຜນການ ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ;
7. ທ່ານ ວິໄລສຸກ ສີສຸລັດ ຮອງຫົວໜ້າກົມສະຖິຕິສັງຄົມ ສູນສະຖິຕິແຫ່ງຊາດ ເປັນຄະນະ;
8. ທ່ານນາງ ວັນເພັງ ຂຸນໂບໄລ ຮອງຫົວໜ້າກົມພັດທະນາສີມືແຮງງານ ອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຄະນະ;
9. ທ່ານ ວຽງຂົງ ອິນທະລັງສີ ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
10. ທ່ານ ສຸລິສັກ ສຸພົນທອງ ຮອງຫົວໜ້າກົມພັດທະນາສີມືແຮງງານແລະຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
11. ຮອງ ສາສະດາຈານ ປອ ລາວັນ ວົງຄຳສານ ຮອງຫົວກົມການສຶກສາຊັ້ນສູງ ກະຊວງສຶກສາທິການ ແລະ ກິລາ ເປັນຄະນະ;
12. ຮອງ ສາສະດາຈານ ປອ ບຸນທະວີ ສໍສຳພັນ ຮອງຫົວໜ້າຄະນະວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ ເປັນຄະນະ;
13. ທ່ານ ວັນນະເລກ ເລືອງ ຮອງຫົວໜ້າກົມອາຊີວະສຶກສາ ກະຊວງສຶກສາທິການ ແລະ ກິລາ ເປັນຄະນະ;
14. ທ່ານ ອຸດອນ ມະນີບຸດ ຮອງຫົວໜ້າກົມປົກປ້ອງແຮງງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
15. ທ່ານ ຄຳສອນວັນ ພຸດດາວົງ ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
16. ທ່ານ ກິແກ້ວ ຈັນທະລັງສີ ຮອງຫົວໜ້າກົມຕ້ານການຄ້າມະນຸດ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
17. ທ່ານນາງ ມະນີທອງ ລໍວົງຄຳ ຮອງຫົວໜ້າສະຖາບັນສາທາລະນະສຸກສາດ ກະຊວງສາທາເປັນຄະນະ;
18. ດຣ ວຽງຄຳ ພິໄຊ ຮອງຫົວໜ້າສູນສຸຂະພາບແມ່ ແລະ ເດັກ ກະຊວງສາທາເປັນຄະນະ;
19. ທ່ານ ບຸນເພັງ ອິນທະວົງ ຮອງຫົວໜ້າກົມປາບປາມຢາເສບຕິດ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
20. ທ່ານນາງ ສົມເພັດ ຈິດດາວັນ ຮອງຫົວໜ້າກົມ ຄະນະກຳມາທິການວັດທະນະທຳ ແລະ ສັງຄົມ ສະພາແຫ່ງຊາດ ເປັນຄະນະ;
21. ທ່ານນາງ ພອນສະຫວັນ ສີທິເດດ ຮອງຫົວໜ້າສູນຄົ້ນຄ້ວາ ແລະ ພັດທະນາວິສາຫະກິດ ສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດ ເປັນຄະນະ.

**ມາດຕາ 2**: ສິດ ແລະ ພັນທະຂອງສະພາທີ່ປຶກສາແຫ່ງຊາດ ມີຄືດັ່ງນີ້:
— ຊີ້ນຳນຳພາການຄົ້ນຄ້ວາແຕ່ລະຫົວຂໍ້ ເພື່ອປະກອບສ່ວນສ້າງບົດລາຍງານ NHDR ສະບັບທີ 6.
— ແລກປ່ຽນຄຳຄິດເຫັນ/ແນວຄວາມຄິດ ໃນຂະບວນການສ້າງບົດລາຍງານ NHDR ສະບັບທີ 6.
— ສ້າງກົນໄກແລກປ່ຽນຂໍ້ມູນຂ່າວສານພາຍໃນສະພາທີ່ປຶກສາແຫ່ງຊາດ ເພື່ອແລກປ່ຽນຂໍ້ມູນຂ່າວສານໃນລັກສະນະທັນການ ແລະ ມີປະສິດທິຜົນ ຮັບປະກັນເນື້ອໃນຄົບຖ້ວນຮອບດ້ານຂອງບົດລາຍງານ NHDR ສະບັບທີ 6.
— ສ້າງແຜນວຽກ ແລະ ມອບໝາຍໜ້າວຽກຕ່າງໆພາຍໃນຄະນະສະພາທີ່ປຶກສາແຫ່ງຊາດ ໃນຂະບວນການສ້າງບົດລາຍງານ NHDR ສະບັບທີ 6.
— ຈັດຕັ້ງປະຕິບັດໜ້າທີ່ຮັບຜິດຊອບອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 3:** ມອບໃຫ້ຫົວໜ້າສະຖາບັນຄົ້ນຄວ້າເພື່ອການພັດທະນາ ໃນຖານະເປັນປະທານສະພາທີ່ປຶກສາແຫ່ງຊາດ ສ້າງຕັ້ງຄະນະກຳມະການໃດໜຶ່ງຂຶ້ນມາ ເພື່ອຊ່ວຍວຽກການຄົ້ນຄວ້າ ແລະ ການປະສານງານ ໂດຍມີເປົ້າໝາຍແນໃສ່ສ້າງສຳເລັດບົດລາຍງານ NHDR ສະບັບທີ 6.

**ມາດຕາ 4:** ໃຫ້ສະພາທີ່ປຶກສາແຫ່ງຊາດ ນຳໃຊ້ງົບປະມານຂອງໂຄງການຮ່ວມມືລະຫວ່າງກະຊວງແຜນການ ແລະ ການລົງທຶນ ກັບ ກະຊວງການຕ່າງປະເທດ ທີ່ໄດ້ຮັບທຶນຊ່ວຍເຫຼືອຈາກອົງການສະຫະປະຊາຊາດເພື່ອການພັດທະນາ (UNDP’s MPI-MOFA Programme)

ເຂົ້າໃນຂະບວນການສ້າງບົດລາຍງານ NHDR ສະບັບທີ 6.

**ມາດຕາ 5:** ສະເໜີໃຫ້ ກະຊວງ, ອົງການທຽບເທົ່າກະຊວງ ແລະ ສ່ວນບຸກຄົນ ທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຄັ່ງຄັດ.

**ມາດຕາ 6:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮອງລັດຖະມົນຕີ





# ເອກະສານຊ້ອນທ້າຍ 4: ດັດຊະນີການພັດທະນາມະນຸດສໍາລັບແຂວງຕ່າງໆໃນ ສປປ ລາວ

ດັດຊະນີການພັດທະນາມະນຸດ (HDI) ຖືກຄິດໄລ່ຈາກລາຍຮັບທາງດ້ານສຸຂະພາບ, ການສຶກສາ, ວິທີການສໍາລັບການຄິດໄລ່ HDI ແມ່ນສະແດງໃຫ້ເຫັນຂ້າງລຸ່ມນີ້ .

ແບບຟອມການຄິດໄລ່:
ດັດຊະນີ HDI ແມ່ນຮາກຂັ້ນສາມຂອງຜະລິດຕະພັນທີ່ມີສຸຂະພາບ, ການສຶກສາ, ແລະ ລາຍຮັບຕາມທີ່ສະແດງຢູ່ຂ້າງລຸ່ມນີ້:

$$HDI_i = (Health\ index_i * Education\ index_i * Income\ index_i)^{1/3}$$

ບ່ອນທີ່ຊີ້ໃຫ້ເຫັນຂົງເຂດດັ່ງກ່າວໃນຂອບເຂດທົ່ວປະເທດ ແລະ ແຂວງດັ່ງກ່າວ. ການຄິດໄລ່ຂອງແຕ່ລະດັດຊະນີແມ່ນຢູ່ຂ້າງລຸ່ມນີ້. ດັດຊະນີສຸຂະພາບໃຊ້ອາຍຸການເປັນມາດຕະຖານສາກົນ.

$$Health\ index_i = \frac{Life\ expectancy_i - Life\ expectancy_{min}}{Life\ expectancy_{max} - Life\ expectancy_{min}}$$

ດັດຊະນີການສຶກສາແມ່ນຖືກຄິດໄລ່ຕາມຄວາມຫມາຍຂອງດັດຊະນີການຮຽນ ແລະ ດັດຊະນີການພັດທະນາທາງດ້ານການສຶກສາ.

$$Education\ index_i = \frac{Mean\ schooling\ index_i + Educational\ development\ index_i}{2}$$

$$Mean\ schooling\ index_i = \frac{Mean\ schooling_i - Mean\ schooling_{min}}{Mean\ schooling_{max} - Mean\ schooling_{min}}$$

ປົກກະຕິ, ຈໍານວນປີທີ່ຄາດຄະເນການຮຽນແມ່ນນໍາໃຊ້ແທນດັດຊະນີການພັດທະນາການສຶກສາ; ເຖິງຢ່າງໃດກໍ່ຕາມ, ຂໍ້ມູນຂອງປີທີ່ຄາດຫມາຍໄວ້ຂອງການຮຽນແມ່ນບໍ່ສາມາດໃຊ້ໄດ້ຈາກຫ້ອງການສະຖິຕິແຫ່ງຊາດ, ໂດຍສະເພາະແມ່ນຂໍ້ມູນສໍາລັບລະດັບແຂວງ. ດັ່ງນັ້ນ, t ລາວດັດຊະນີການພັດທະນາການສຶກສາ, ເຊິ່ງມາຈາກຜົນສະເລ່ຍຂອງດັດຊະນີການລົງທະບຽນທັງໝົດ ຕົ້ນຕໍແລະຂອງດັດຊະນີການສໍາເລັດຊັ້ນມັດທະຍົມຕໍ່າ, ແມ່ນມີການຈ້າງງານ.

$$\text{Educational development index}_i = \frac{(\text{Primary net enrollment}_i + \text{Lower secondary completion}_i)}{2}$$

ການສຶກສາຊັ້ນປະຖົມສຶກສາຂັ້ນຕົ້ນ ແລະ ຊັ້ນພື້ນຖານແມ່ນໄດ້ຖືກຄັດເລືອກໃຫ້ເປັນຕົວແທນໃຫ້ແກ່ການພັດທະນາດ້ານການສຶກສາ ເພາະວ່າເຂົາເຈົ້າເປັນການສຶກສາທີ່ຈຳເປັນໃນ ສປປ ລາວ. ດັດຊະນີການລົງທະບຽນທັງໝົດ ຕົ້ນຕໍແມ່ນຖືກຄິດໄລ່ຈາກອັດຕາການເຂົ້າຮຽນທັງໝົດ ຂອງການສຶກສາຊັ້ນປະຖົມ ແລະ ດັດຊະນີການສຳເລັດຊັ້ນມັດທະຍົມຕອນລຸ່ມແມ່ນຖືກຄິດໄລ່ຈາກອັດຕາການສຳເລັດການສຶກສາຊັ້ນມັດທະຍົມຕອນຕົ້ນພື້ນຖານ. ການຄິດໄລ່ແມ່ນສະແດງຢູ່ຂ້າງລຸ່ມນີ້:

$$\text{Primary net enrollment}_i = \frac{\text{Primary net enrollment ratio}_i - \text{Primary net enrollment ratio}_{min}}{\text{Primary net enrollment ratio}_{max} - \text{Primary net enrollment ratio}_{min}}$$

$$\text{Lower secondary completion}_i = \frac{\text{Lower secondary completion ratio}_i - \text{Lower secondary completion ratio}_{min}}{\text{Lower secondary completion ratio}_{max} - \text{Lower secondary completion ratio}_{min}}$$

ຫຼ້າສຸດ, ດັດຊະນີລາຍຮັບແມ່ນຖືກຄິດໄລ່ຈາກ ລາຍຮັບລວມຂອງຊາດ Gross National Income (GNI) ໃນມູນຄ່າທີ່ປັບຕົວຂອງອີງປະກອບພະລັງງານຊື້ (PPP) ສຳລັບລະດັບຊາດ. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນ GNI ແມ່ນບໍ່ສາມາດໃຊ້ໄດ້ສຳລັບລະດັບແຂວງ, ດັ່ງນັ້ນການບໍລິໂພກ disposable ຕໍ່ຄົວເຮືອນແມ່ນປ່ຽນເປັນແບບຟອມ PPP ແລະ ຈ້າງງານ.

$$\text{Income index}_i = \frac{\text{GNI PPP}_i - \text{GNI PPP}_{min}}{\text{GNI PPP}_{max} - \text{GNI PPP}_{min}}$$



## ເອກະສານຊ້ອນທ້າຍ

ແຫຼ່ງຂໍ້ມູນ:
ຂໍ້ມູນທີ່ໃຊ້ໃນການຄິດໄລ່ແມ່ນມາຈາກລາຍການແຫຼ່ງທີ່ແຕກຕ່າງກັນໃນຕາຕະລາງຂ້າງລຸ່ມນີ້:

| ຕົວຊີ້ວັດ | ມູນຄ່າ | ແຫຼ່ງຂໍ້ມູນ |
|---|---|---|
| ອາຍຸຍືນສະເລ່ຍ | ສູງສຸດ ແລະ ຕ່ຳສຸດ | UNDESA (2019) |
| | ສປປ ລາວ ແລະ ແຂວງຕ່າງໆ | LSB (2021) |
| ຈຳນວນປີການຮຽນສະເລ່ຍ | ສູງສຸດ ແລະ ຕ່ຳສຸດ | UNESCO ສະຖາບັນສະຖິຕິ (2020) |
| | ສປປ ລາວ ແລະ ແຂວງຕ່າງໆ | LSB (2015) |
| ອັດຕາສ່ວນການລົງທະບຽນເຂົ້າຮຽນຊັ້ນປະຖົມສຶກສາສຸດທິ | ສູງສຸດ ແລະ ຕ່ຳສຸດ | ທະນາຄານໂລກ (2021) |
| | ສປປ ລາວ ແລະ ແຂວງຕ່າງໆ | MOES (2021) |
| ອັດຕາສ່ວນການຮຽນຈົບຊັ້ນມັດທະຍົມຕອນຕົ້ນສຸດທິ | ສູງສຸດ ແລະ ຕ່ຳສຸດ | ທະນາຄານໂລກ (2021) |
| | ສປປ ລາວ ແລະ ແຂວງຕ່າງໆ | MOES (2021) |
| ລາຍໄດ້ລວມແຫ່ງຊາດ GNI (PPP) | ສູງສຸດ ແລະ ຕ່ຳສຸດ | ທະນາຄານໂລກ (2020), IMF (2020), UNSD (2020) |
| | ສປປລ ລາວ ແລະ ແຂວງຕ່າງໆ | ທະນາຄານໂລກ (2020), IMF (2020), UNSD (2020), LSB (2021) |

ໝາຍເຫດ: LSB ແມ່ນ ສູນສະຖິຕິແຫ່ງຊາດ, MOES ແມ່ນ ກະຊວງສຶກສາທິການ ແລະ ກິລາ. PPP ແຂວງ ແມ່ນໄດ້ມາຈາກຄ່າສະເລ່ຍຂອງການຊົມໃຊ້ຕໍ່ຫົວຄົນ ໃນການສຳຫຼວດລາຍຈ່າຍ ແລະ ການບໍລິໂພກ ໃນ ສປປ ລາວ (2021).

ບົດລາຍງານການພັດທະນາມະນຸດແຫ່ງຊາດ 2022

UNDP
ອົງການສະຫະປະຊາດ ເພື່ອການພັດທະນາ
ຖະໜົນລ້ານຊ້າງ ລະຫັດໄປສະນີ 345
ນະຄອນຫຼວງວຽງຈັນ, ສປປ ລາວ